ປຶ້ມພຣະໄຕຣປິດົກພາສາລາວ

ແປແລະລຽບລຽງຈາກປຶ້ມຂອງ ມຫາຈຸຣາລົງກອນຣາຊວິທຍາລັຍ

ໂດຍ ສົມສັກ ວົງອານິດ

ເຫລັ້ມທີ ໔

ວິ ນັຍ ປິ ດົກ

ມຫາ ວິ ພັງຄ໌

Tripitaka in Lao language Book 2

Translated and created by Somsak Chuck Vongvanith
from the Tripitaka books of MahaJuralonkorn Rajvithayalay

San Marcos, California, USA - August 1, 2017

ປື້ມພຣະໄຕຣປິດົກ ພາສາລາວ ເຫລັ້ມທີ ໔

ແປແລະລຽບລຽງຈາກປື້ມຂອງ ມຫາຈຸຣາລົງກອນຣາຊວິທຍາລັຍ ໂດຍ ສົມສັກ ວົງວານິດ
(ສະກົດຕາມຫລັກໄວຍາກອນລາວປັດຈຸບັນ)

Tri-Pitaka in Lao language Book 2

Translated from the Tripitaka of the MahaJuralonkorn Rajvithayalay
by Chuck Somsak Vongvanith

❀ ❀❀ ❀❀ ❀❀ ❀

ພຣະໄຕຣປິດົກເຫລັ້ມທີ ໐໔ ວິນັຍປິດົກທີ ໐໔ ມຫາວິພັງຄ໌ ພາຄ ໔
ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໑. ປຖມກຖິນສິກຂາບົທ
ນິທານວັຕຖຸ

ພຣະວິນັຍປິດົກ

ມຫາວິພັງຄ໌ ພາຄ ໔

Vinaya Pitaka part 2

□ □ ❀❀ □ □

ຂໍນອບນ້ອມພຣະຜູ້ມີພຣະພາຄອຣຫັນຕສັມມາສັມພຸທທເຈົ້າພຣະອົງຄ໌ນັ້ນ
໔. ນິສສັຄຄິຍກັນຫ໌

ທ່ານທັງຫລາຍ ທັມຄືນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທເຫລົ່ານີ້ ມາເຖິງອາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ໆຕາມລຳດັບ

໑. ຈີວອນວັຄ
ຫມວດວ່າດ້ວຍຈີວອນ

໑. ປຖມກຖິນສິກຂາບົທ

ວ່າດ້ວຍກຖິນເດາະຂໍ້ທີ ໑

ເຣື້ອງພຣະສັພພັຄຄີຍ໌

[໔໕໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ໂຄຕມກເຈດີຍ໌ ເຂຕກຸງເວສາລີ ຄັ້ງນັ້ນ ພຣະຜູ້ມີພຣະພາຄໄດ້ຊົງອນຸຍາຕ ໄຕຣຈີວອນ (ຄື ອັນຕຣວາສກ (ຜ້ານຸ່ງ) ອຸຕຕຣາສົງຄ໌ (ຜ້າຫົ່ມ) ສັງຂາຕີ (ຜ້າຫົ່ມ ຊ້ອນນອກ)) ເພື່ອພິກສຸທັງຫລາຍ ແລ້ວພວກພິກສຸສັພພັຄຄີຍ໌ຊາບວ່າ ພຣະຜູ້ມີພຣະພາຄຊົງອນຸຍາຕໄຕຣຈີວອນແລ້ວ ຈຶ່ງເຂົ້າໝູ່ບ້ານ ໂດຍຄອງໄຕຣຈີວອນ ໑ໄຕຣ ຢູ່ໃນອາຣາມອີກ ໑ ໄຕຣ ສົງນ້ຳອີກ ໑ ໄຕຣ ບັນດາພິກສຸຜູ້ມັກນ້ອຍ ສັນໂດສ ມີຄວາມລະອາຍ ມີຄວາມຣະມັດຣະວັງ ໄຝ່ການສຶກສາ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຊົງອຕິເຣກຈີວອນ໑ ລະ" ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຊົງອຕິເຣກຈີວອນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຣັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເໝາະສົມ ບໍ່ແມ່ນກິຈຂອງສມນ ໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດພວກທ່ານຈຶ່ງຊົງອຕິເຣກຈີວອນລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວ ໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ ຯລຯ" ແລ້ວຈຶ່ງຣັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໔໖໐] ກໍ ພິກສຸໃດຊົງອຕິເຣກຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌໔ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ອຕິເຣກຈີວອນ ຄືຜ້າສ່ວນເກີນທີ່ເຂົາຖວາຍພິກສຸເພີ້ມເຂົ້າມາຈາກຜ້າທີ່ອທິສຖານເປັນໄຕຣຈີວອນ

໔ ທີ່ແປວ່າ "ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌" ນີ້ເປັນໄປຕາມນັຍອທິບາຍແຫ່ງອັນຖະກຖາວ່າ "ນິສິສຄິຄິຍໍ ປາຈິຕິຕິຍໍ, ຕຢີຈ ຈີວຣໍ ນິສິສຄິຄິຍໍ ໂຫຕິ, ປາຈິຕິຕິຍາປຕິຕິ ຈສິສ ໂຫຕິ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ຄືຈີວອນເປັນນິສສັຄຄີຍ໌ຕ້ອງສລະ ພິກສຸຮູບນັ້ນຕ້ອງອາບັຕິປາຈິຕຕີຍ໌"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີວວັຄ ໑. ປຖມກຖິນສິກຂາບົທ ພຣະອນຸບັນຍັດ

ເຣື້ອງພຣະອານົນທ໌

[໔໖໑] ສມັຍນັ້ນ ອຕິເຣກຈີວອນເກີດຂຶ້ນແກ່ທ່ານພຣະອານົນທ໌ ທ່ານຕ້ອງກາຣຈະຖວາຍອຕິເຣກຈີວອນນັ້ນແກ່ທ່ານພຣະສາຣີບຸຕຣ ແຕ່ທ່ານພຣະສາຣີບຸຕຣຢູ່ທີ່ເມືອງສາເກຕ ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ມີຄວາມຄິດວ່າ "ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ 'ພິກສຸບໍ່ເພິງຊົງອຕິເຣກຈີວອນ' ກໍອຕິເຣກຈີວອນນີ້ເກີດຂຶ້ນແກ່ເຮົາ ເຮົາຕ້ອງກາຣຈະຖວາຍແກ່ທ່ານພຣະສາຣີບຸຕຣ ແຕ່ທ່ານຢູ່ທີ່ເມືອງສາເກຕ ເຮົາເພິງປະຕິບັດຢ່າງໃດຫນໍ" ຈຶ່ງໄດ້ນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຕຣັສຖາມວ່າ "ດົນປານໃດ ສາຣີບຸຕຣຈະກັບມາ" ພຣະອານົນທ໌ຂາບທູລວ່າ "ອີກ ໙ ຫລື ໑໐ ວັນຈຶ່ງຈະກັບມາ ພຣະພຸທທເຈົ້າຂ້າ"

ຊົງອນຸຍາຕອຕິເຣກຈີວອນ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍເຮົາອນຸຍາຕໃຫ້ຊົງອຕິເຣກຈີວອນໄດ້ ໑໐ ວັນເປັນຢ່າງຫລາຍ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໖໔] ເມື່ອຈີວອນຂອງພິກສຸສຳເຣັຈແລ້ວ ເມື່ອກຖິນເດາະແລ້ວ໑ ພິກສຸເພິງຊົງອຕິເຣກຈີວອນໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌໔

ເຣື້ອງພຣະອານົນທ໌ ຈົບ

ເຊີງອັນຖະ :

໑ ຄຳວ່າ "ກຖິນເດາະ" ໃນທີ່ນີ້ຕາມສັພທ໌ແປວ່າ ຮື້ໄມ້ສະດຶງ ຄືໄມ້ແບບສຳລັບຂຶງຜ້າ ຫມາຍເຖິງການຍົກເລີກອານິສົງສ໌

໔ ນິສສັຄຄິຍປາຈິຕຕີຍ໌ ຄືອາບັຕິປາຈິຕຕີຍ໌ທີ່ພິກສຸຜູ້ຕ້ອງແລ້ວເມື່ອຈະສະແດງເທສນາບັຕິ ຈະຕ້ອງທຳການສລະວັຕຖຸກ່ອນ ຈຶ່ງຈະຖືວ່າເປັນຜູ້ບໍຣິສຸດທ໌ຈາກອາບັຕິນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນທ໌] ໑. ຈີວັຣ ໑. ປຖມກຖິນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໔໖໖] ຄຳວ່າ ເມື່ອຈີວອນ. . . ສຳເຣັຈແລ້ວ ຫມາຍຄວາມວ່າ ຈີວອນຂອງພິກສຸຫມົດຄຸນແລ້ວ ສູນຫາຍແລ້ວ ຈົບຫາຍແລ້ວ ຖືກໄຟໄຫມ້ເສັງແລ້ວ ຫລືພິກສຸຫມົດຫວັງວ່າຈະໄດ້ຜ້າມາຍົບເປັນຈີວອນ

ຄຳວ່າ ເມື່ອກຖິນເດາະແລ້ວ ຫມາຍຄວາມວ່າ ກຖິນເດາະດ້ວຍມາຕິກາຢ່າງໃດຢ່າງນຶ່ງໃນມາຕິກາ ໘໑ ຫລືສົງຂ໌ເດາະກຖິນໃນຣະຫວ່າງ໔

ຄຳວ່າ ໑໐ ວັນເປັນຢ່າງຫລາຍ ຄື ຄອບຄອງໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ

ຊື່ວ່າ ອຕິເຣກຈີວອນ ໄດ້ແກ່ ຈີວອນທີ່ບໍ່ໄດ້ອທິສຖານ໓ ບໍ່ໄດ້ວິກັປ໔

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ໖ ຊນິດ໕ ຢ່າງໃດຢ່າງນຶ່ງຊຶ່ງມີຂນາດພໍທີ່ຈະທຳວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄວາມວ່າ ເມື່ອຣຸ່ງອຣຸນອັນທີ ໑໑ ຈີວອນຜືນນັ້ນເປັນນິສສັຄຄີຍ໌ ຄື ເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ມາຕິກາ ຄືຫົວຂໍ້ແຫ່ງການເດາະກຖິນ ໘ ປະການ ຄື (໑) ປັກກມນັນຕິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸຫລີກໄປ ບໍ່ຄິດຈະກັບ (໒) ນິຕຖານັນຕິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸນຳຜ້າໄປນອກສີມາແລ້ວຕັດຍິບຈີວອນ ບໍ່ຄິດຈະກັບ (໓) ສັນນິຕຖານັນຕິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸນຳຜ້າໄປນອກສີມາ ແລ້ວຕົກລົງໃຈຈະບໍ່ຕັດຍິບຈີວອນ ແລະບໍ່ຄິດຈະກັບ (໔) ນາສນັນຕິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸນຳຜ້າໄປນອກສີມາຕັດຍິບເປັນຈີວອນ ບໍ່ຄິດຈະກັບ ຜ້າທີ່ຕັດຍິບເປັນຈີວອນເສັຽຫາຍໄປ (໕) ສວນັນຕິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸນຳຜ້າໄປນອກສີມາ ຄິດວ່າຈະກັບ ຕັດຍິບຈີວອນເສັດແລ້ວໄດ້ຟັງຂ່າວວ່າ ກຖິນໃນວັດຂອງຕົນເດາະເສັຽແລ້ວ(໖) ອາສາວັຈເສທິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸຫລີກໄປນອກສີມາດ້ວຍຫວັງວ່າຈະໄດ້ຜ້າ ຣອຄອຍຜ້າຈນຫມົດຫວັງ (໗) ສີມາຕິກກັນຕິກາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸນຳຜ້າໄປຕັດຍິບຈີວອນຢູ່ນອກສີມາ ຄິດຈະກັບ ແຕ່ຢູ່ນອກສີມາຈົນເມື່ອກຖິນເດາະ (໘) ສຫຸພພາຣາ ກຖິນເດາະກຳຫນົດດ້ວຍການທີ່ພິກສຸນຳຜ້າໄປຕັດຍິບຈີວອນຢູ່ນອກສີມາຄິດວ່າ ຈະກັບ ຈະກັບ ແຕ່ສິງຂ໌ໃນວັດຂອງຕົນພ້ອມໃຈກັນເດາະກຖິນເສັຽກ່ອນ (ວິ. ມ. ໕/໓໑໐/໙໕)

໒ ສິງຂ໌ເດາະກຖິນໃນຣະຫວ່າງ ຄືສິງຂ໌ກຣານກຖິນແລ້ວ ຍັງບໍ່ພົ້ນເຂຕຈີວອນກາລ ມີທາຍົກຕ້ອງການຈະຖວາຍອກາລຈີວອນ ມາຂໍໃຫ້ສິງຂ໌ເດາະກຖິນ ຄືຍກເລີກອານິສິງສ໌ກຖິນໃນຣະຫວ່າງຈີວອນກາລ (ກ່ອນຫມົດເຂຕອານິສິງສ໌ກຖິນ) ພຣະພຸທທອົງຄ໌ຊົງອນຸຍາຕໃຫ້ເດາະກຖິນໄດ້ (ວິ. ພິກຂຸນີ. ໓/໙໒໕/໙໒໖/໑໒໑/໑໒໒)

໓ ອທິສຖານ ຄືການຕັ້ງເອົາໄວ້ຫລືຕັ້ງໃຈກຳຫນົດເອົາໄວ້ ໄດ້ແກ່ ຕັ້ງໃຈກຳຫນົດເອົາໄວ້ວ່າຈະເປັນຂອງປະຈຳຕົວຊນິດນັ້ນໆເຊັ່ນ ໄຕຣຈີວອນ ບາຕຣ ວິທີອທິສຖານ ໃຊ້ກາຍຄືມືອສັມຜັສຫລືເປັ່ງວາຈາກໍໄດ້ (ວິ. ປ. ໘/໓໒໒/໒໖໑, ວິ. ອ. ໒/໔໖໙/໑໔໗)

໔ ເຣື້ອງດຽວກັນ ຄຳວ່າ ວິກັປ ຄືເຮັດໃຫ້ເປັນຂອງສອງເຈົ້າຂອງ ຄືຂໍໃຫ້ພິກສຸສາມເນຣຮູບອື່ນຮ່ວມເປັນເຈົ້າຂອງສິ່ງທີ່ວິກັປນັ້ນ ເຮັດໃຫ້ບໍ່ຕ້ອງອາບັຕິ ແມ່ນຈະເກັບໄວ້ເກີນກຳຫນົດ

໕ ຈີວອນ ໖ ຊນິດ ຄື ໂຂມະ(ຈີວອນຜ້າເປືອກໄມ້) ກັປປາສິກະ (ຈີວອນຜ້າຝ້າຍ) ໂກເສຍຍະ (ຈີວອນຜ້າໄຫມ) ກັມພລະ (ຈີວອນຜ້າຂົນສັຕວ໌) ສານະ (ຈີວອນຜ້າປ່ານ) ພັງຄະ (ຈີວອນຜ້າຜສົມ) (ວິ. ອ. ໒/໔໖໒-໔໖໓/໑໔໒)

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າ ປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າເກີນກໍາຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ໑ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ

[໔໖໔] "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວເພິງຄືນຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

[໔໖໕] ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າເກີນກໍາຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ

[໔໖໖] "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

[໔໖໗] ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຂອງຜູ້ຂ້າເກີນກໍາຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ເຊີງອັນຖະ :

໑ ຄືຮັບການສະແດງອາບັຕິ ເພື່ອໃຫ້ພິກສຸຜູ້ຕ້ອງອາບັຕິພົ້ນຈາກອາບັຕິ

ບົທພາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໔໓໗] ຈີວອນເກີນກຳໜົດ ໑໐ ວັນ ພິກສຸສຳຄັນວ່າເກີນກຳໜົດແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນເກີນກຳໜົດ ໑໐ ວັນ ພິກສຸບໍ່ແນ່ໃຈ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນເກີນກຳໜົດ ໑໐ ວັນ ພິກສຸສຳຄັນວ່າຍັງບໍ່ເກີນກຳໜົດ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ອທິສຖານ ພິກສຸສຳຄັນວ່າອທິສຖານແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ວິກັປ ພິກສຸສຳຄັນວ່າວິກັປແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ສລະ ພິກສຸສຳຄັນວ່າສລະແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ສູນຫາຍ ພິກສຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ຈິບຫາຍ ພິກສຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກໄຟໄໝ້ ພິກສຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ຈີວອນທີ່ຍັງບໍ່ຖືກໂຈຣຊິງເອົາໄປ ພິກສຸສຳຄັນວ່າຖືກໂຈຣຊິງເອົາໄປແລ້ວ ຕ້ອງອາບັດນິສສັຄຄິຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໑. ປຖມກຖິນສິກຂາບົທ ອນາປັຕຕິວາຣ

ຕິກທຸກກຕ

ຈີວອນທີ່ເປັນນິສສັຄຄີຍ໌ ພິກສຸຍັງບໍ່ໄດ້ສລະ ໃຊ້ສອຍ ຕ້ອງອາບັດທຸກກຕ

ຈີວອນຍັງບໍ່ເກີນກຳໜົດ ໑໐ ວັນ ພິກສຸສຳຄັນວ່າເກີນກຳໜົດແລ້ວ ໃຊ້ສອຍ ຕ້ອງອາບັດທຸກກຕ

ຈີວອນຍັງບໍ່ເກີນກຳໜົດ ໑໐ ວັນ ພິກສຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັດທຸກກຕ

ຈີວອນຍັງບໍ່ເກີນກຳໜົດ ໑໐ ວັນ ພິກສຸສຳຄັນວ່າຍັງບໍ່ເກີນກຳໜົດ ບໍ່ຕ້ອງອາບັດ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໔໓໘] ໑. ພິກສຸຜູ້ອທິສຖານພາຍໃນ ໑໐ ວັນ

໒. ພິກສຸຜູ້ວິກັປໄວ້ພາຍໃນ ໑໐ ວັນ

໓. ພິກສຸຜູ້ສລະໃຫ້ໄປພາຍໃນ ໑໐ ວັນ
໔. ພິກສຸຜູ້ມີຈີວອນສູນຫາຍພາຍໃນ ໑໐ ວັນ
໕. ພິກສຸຜູ້ມີຈີວອນຈິບຫາຍພາຍໃນ ໑໐ ວັນ
໖. ພິກສຸຜູ້ມີຈີວອນຖືກໄຟໄໝ້ພາຍໃນ ໑໐ ວັນ
໗. ພິກສຸຜູ້ມີຈີວອນຖືກໂຈຣຊີງເອົາໄປພາຍໃນ ໑໐ ວັນ
໘. ພິກສຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະພາຍໃນ ໑໐ ວັນ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

[໔໗໐] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈິ່ງບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ລະ" ແລ້ວຈິ່ງນຳເອົ້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີວອັຄ ໑. ປຖມກຖິນສິກຂາບົທ ອນາປັຕຕິວາຣ

ຊົງສອບຖາມແລ້ວອນຸຍາຕໃຫ້ຄືນຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ຊາບວ່າພວກທ່ານບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ຈັ່ງໃດພວກທ່ານຈິ່ງບໍ່ຍອມຄືນຈີວອນທີ່ມີຜູ້ສລະໃຫ້ລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ທີ່ແມ່ນແທ້ກັບຈະເຮັດໃຫ້ຄົນທີ່ບໍ່ເຫລື້ອມໃສກໍບໍ່ເຫລື້ອມໃສໄປເລີຍ ຄົນທີ່ເຫລື້ອມໃສຢູ່ແລ້ວບາງພວກກໍຈະກາຍເປັນອື່ນໄປ ຯລຯ" ດັ່ງນີ້ ແລ້ວຊົງສະແດງທັມມີກຖາແກ່ພິກສຸທັງຫລາຍໃຫ້ເໝາະສົມກັບເອົ້ອງນັ້ນ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຈີວອນທີ່ພິກສຸສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ ຈະບໍ່ຄືນບໍ່ໄດ້ ພິກສຸໃດບໍ່ຄືນໃຫ້ ພິກສຸນັ້ນຕ້ອງອາບັຕິທຸກກຕ"

ປຖມກຖິນສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໔. ອຸທໂທສິຕສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໔. ອຸທໂທສິຕສິກຂາບົທ

ວ່າດ້ວຍພິກສຸເກັບຈີວອນໄວ້ໃນໂຮງເກັບຂອງ (ວ່າດ້ວຍກຖິນເດາະຂໍ້ທີ ໔)

ເຣື້ອງພິກສຸຫລາຍຮູບ

[໔໗໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸທັງຫລາຍຝາກສັງຂາຕິໄວ້ກັບພວກພິກສຸມີພຽງອຸຕຕ ຣາສົງຄ໌ກັບອັນຕຣວາສກອອກຈາຣິກໄປສູ່ຊົນບົທ ສັງຂາຕິເຫລົ່ານັ້ນເກັບໄວ້ນານຈຶ່ງຂຶ້ນຣາ ພິກສຸ ທັງຫລາຍຈຶ່ງນຳອອກມາຜຶ່ງແດດ ທ່ານພຣະອານົນທ໌ທຽວໄປຕາມເສນາສນະ ເຫັນພິກສຸກຳລັງຜຶ່ງ ສັງຂາຕິຢູ່ຈຶ່ງເຂົ້າໄປຖາມພິກສຸເຫລົ່ານັ້ນວ່າ "ທ່ານທັງຫລາຍ ສັງຂາຕິທີ່ຂຶ້ນຣາເຫລົ່ານີ້ເປັນຂອງ ໃຜ" ລຳດັບນັ້ນ ພິກສຸເຫລົ່ານັ້ນບອກເຣື້ອງນັ້ນໃຫ້ພຣະອານົນທ໌ຊາບ ທ່ານພຣະອານົນທ໌ຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງຝາກ ສັງຂາຕິໄວ້ກັບພວກພິກສຸ ມີພຽງອຸຕຕ ຣາສົງຄ໌ກັບອັນຕຣວາສກອອກຈາຣິກໄປສູ່ຊົນບົທລະ" ຄັນທ່ານຕຳໜິພິກສຸເຫລົ່ານັ້ນໂດຍປະການ ຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບຊົງປະຊຸມສົງຊ໌ບັນຍັດສິກຂາບົທ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍຊາບວ່າ ພວກພິກສຸ ຝາກສັງຂາຕິໄວ້ກັບພວກພິກສຸ ມີພຽງອຸຕຕຣາສົງຄ໌ກັບອັນຕຣວາສກ ອອກຈາຣິກໄປສູ່ຊົນບົທ ແມ່ນແທ້ບໍ່" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫ ເຈົ້າຊົງຕຳໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດພວກໂມຊບຸຣຸສເຫລົ່ານັ້ນຈຶ່ງຝາກຈີວອນໄວ້ກັບ ພວກພິກສຸ ມີພຽງອຸຕຕຣາສົງຄ໌ແລະອັນຕຣວາສກອອກຈາຣິກໄປສູ່ຊົນບົທລະພິກສຸທັງຫລາຍ ການ ກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມ ໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ດັ່ງນີ້ແລ້ວຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກ ຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໔] ເມື່ອຈີວອນຂອງພິກສຸສຳເລັດແລ້ວ ເມື່ອກຖິນເດາະແລ້ວ ຖ້າພິກສຸຢູ່ປາສຈາກໄຕຣຈີວອນ ແມ່ນສິ້ນຣາຕຣີນຶ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸຫລາຍຮູບ ຈົບ

ເຣື້ອງພິກສຸເປັນໄຂ້

[໔໗໕] ສມັຍນັ້ນ ພິກສຸຮູບນຶ່ງເປັນໄຂ້ຢູ່ກຸງໂກສັມພີ ພວກຍາຕສົ່ງທູຕໄປສຳນັກຂອງພິກສຸນັ້ນໃຫ້ແຈ້ງຂ່າວວ່າ "ນິມົນຕ໌ພຣະຄຸນທ່ານມາເຖີດ ພວກເຮົາຈະອຸປັຕຖາກ" ພິກສຸທັງຫລາຍກໍກ່າວຢ່າງນີ້ວ່າ "ທ່ານໄປເຖີດ ພວກຍາຕຈະອຸປັຕຖາກທ່ານເອງ" ພິກສຸນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ 'ພິກສຸບໍ່ເພິງຢູ່ປາສຈາກໄຕຣຈີວອນ' ຜູ້ຂ້າເປັນໄຂ້ບໍ່ສາມາດນຳໄຕຣຈີວອນໄປໄດ້ ຜູ້ຂ້າຈະບໍ່ໄປ" ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສົມມຸດຕິຈີວຣາວິປວາສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ເຮົາອນຸຍາຕໃຫ້ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ເພື່ອພິກສຸຜູ້ເປັນໄຂ້" ພິກສຸທັງຫລາຍ ສົງຂ໌ເພິງໃຫ້ສົມມຸດຢ່າງນີ້

ວິທີສົມມຸດຕິຈີວຣາວິປວາສ

ພິກສຸຜູ້ເປັນໄຂ້ນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າເປັນໄຂ້ບໍ່ສາມາດນຳໄຕຣຈີວອນໄປໄດ້ ຜູ້ຂ້າຂໍໃຫ້ສົງຂ໌ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ເພິງກ່າວຂໍຢ່າງນີ້ເປັນຄັ້ງທີ ໔ ເພິງກ່າວຂໍຢ່າງນີ້ເປັນຄັ້ງທີ ໕ ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມ ອາຈາວ່າ

[໔໗໔] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ເປັນໄຂ້ ບໍ່ສາມາດນຳໄຕຣຈີວອນໄປໄດ້ ທ່ານຂໍໃຫ້ສົງຄ໌ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ຖ້າສົງຄ໌ພ້ອມກັນແລ້ວເພິງໃຫ້ສົມມຸດ ເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນແກ່ພິກສຸຊື່ນີ້ ນີ້ເປັນຍັຕຕິ
ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ເປັນໄຂ້ບໍ່ສາມາດນຳໄຕຣຈີວອນໄປໄດ້ ທ່ານຂໍໃຫ້ສົງຄ໌ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ສົງຄ໌ໃຫ້ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນແກ່ພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບກາຣໃຫ້ສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນແກ່ພິກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍທ່ານຮູບນັ້ນເພິງທັກທ້ວງກາຣສົມມຸດເພື່ອບໍ່ເປັນກາຣຢູ່ປາສຈາກໄຕຣຈີວອນ ສົງຄ໌ໃຫ້ແກ່ພິກສຸຊື່ນີ້ແລ້ວ ສົງຄ໌ເຫັນຊອບເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໗໕] ເມື່ອຈີວອນຂອງພິກສຸສຳເຣັຈແລ້ວ ເມື່ອກຖິນເດາະແລ້ວ ຖ້າພິກສຸຢູ່ປາສຈາກໄຕຣຈີວອນແມ່ນສິ້ນຣາຕຣີນຶ່ງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ສິກຂາບົທວິພັງຄ໌

[໔໗໖] ຄຳວ່າ ເມື່ອຈີວອນ. . . ສຳເຣັຈແລ້ວ ຫມາຍຄວາມວ່າ ຈີວອນຂອງພິກສຸທຳເສັດແລ້ວ ສູນຫາຍແລ້ວ ຈິບຫາຍແລ້ວ ຖືກໄຟໄຫມ້ແລ້ວ ຫລືພິກສຸຫມົດຫວັງວ່າຈະໄດ້ຜ້າມາຍົບເປັນຈີວອນ
ຄຳວ່າ ເມື່ອກຖິນເດາະແລ້ວ ຫມາຍຄວາມວ່າ ກຖິນເດາະດ້ວຍມາຕິກາຢ່າງໃດຢ່າງນຶ່ງໃນມາຕິກາ ໘ ຫລືສົງຄ໌ເດາະພາຍໃນຣະຫວ່າງ
ຄຳວ່າ ຖ້າພິກສຸຢູ່ປາສຈາກໄຕຣຈີວອນແມ່ນສິ້ນຣາຕຣີນຶ່ງ ຄວາມວ່າ ພິກສຸຢູ່ປາສຈາກສັງຄາຕິ ອຸຕຕຣາສົງຄ໌ຫລືອັນຕຣວາສກ ຜືນໃດຜືນນຶ່ງ ແມ່ນຄືນດຽວ
ຄຳວ່າ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ ຄື ຍົກເວັ້ນພິກສຸຜູ້ໄດ້ຮັບສົມມຸດ
ຄຳວ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ຄື ຈີວອນເປັນນິສສັຄຄີຍ໌ພ້ອມກັບອຣຸນຂຶ້ນ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄນະຫລືແກ່ບຸຄຄົລພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັດຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າ ຢູ່ປຣາສແລ້ວລ່ວງຣາຕຣີ ເວັ້ນຈາກໄດ້ຮັບກາຣສົມມຸດ ເປັນນິສສັດຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມ ວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັດຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສແລ້ວລ່ວງຣາຕຣີ ເວັ້ນຈາກໄດ້ຮັບກາຣສົມມຸດ ເປັນນິສສັດຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັດຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສແລ້ວລ່ວງຣາຕຣີ ເວັ້ນຈາກໄດ້ຮັບກາຣ ສົມມຸດ ເປັນນິສສັດຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິ ແລ້ວເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ມາຕິກາ

[໔໗໗] ຫມູ່ບ້ານ ມີອຸປຈາຣດຽວກັນ໑ ຫມູ່ບ້ານ ມີອຸປຈາຣແຍກກັນ

ເຮືອນ ມີອຸປຈາຣດຽວກັນ ເຮືອນ ມີອຸປຈາຣແຍກກັນ

ໂຮງເກັບຂອງ ມີອຸປຈາຣດຽວກັນ ໂຮງເກັບຂອງ ມີອຸປຈາຣແຍກກັນ
ປ້ອມ ມີອຸປຈາຣດຽວກັນ ປ້ອມ ມີອຸປຈາຣແຍກກັນ
ເຮືອນຍອດດຽວ ມີອຸປຈາຣດຽວກັນ ເຮືອນຍອດດຽວ ມີອຸປຈາຣແຍກກັນ
ປຣາສາທ ມີອຸປຈາຣດຽວກັນ ປຣາສາທ ມີອຸປຈາຣແຍກກັນ
ເຮືອນໂລ້ນ໒ ມີອຸປຈາຣດຽວກັນ ເຮືອນໂລ້ນ ມີອຸປຈາຣແຍກກັນ
ເຮືອ ມີອຸປຈາຣດຽວກັນ ເຮືອ ມີອຸປຈາຣແຍກກັນ
ຫມູ່ກວຽນ ມີອຸປຈາຣດຽວກັນ ຫມູ່ກວຽນ ມີອຸປຈາຣແຍກກັນ
ນາ ມີອຸປຈາຣດຽວກັນ ນາ ມີອຸປຈາຣແຍກກັນ
ລານນວດເຂົ້າ ມີອຸປຈາຣດຽວກັນ ລານນວດເຂົ້າ ມີອຸປຈາຣແຍກກັນ
ສວນ ມີອຸປຈາຣດຽວກັນ ສວນ ມີອຸປຈາຣແຍກກັນ
ວິຫາຣ ມີອຸປຈາຣດຽວກັນ ວິຫາຣ ມີອຸປຈາຣແຍກກັນ
ເຫງົ້າໄມ້ ມີອຸປຈາຣດຽວກັນ ເຫງົ້າໄມ້ ມີອຸປຈາຣແຍກກັນ
ທີ່ກາງແຈ້ງ ມີອຸປຈາຣດຽວກັນ ທີ່ກາງແຈ້ງ ມີອຸປຈາຣແຍກກັນ

ເຊີງອັນຖະ :

໑ ຄຳວ່າ "ອຸປຈາຣ" ຄືທີ່ໃກ້ຄຽງກັນບໍຣິເວນຮອບໆຊານ ເຊັ່ນອຸປຈາຣເຮືອນຄືບໍຣິເວນຮອບໆ ເຮືອນ ຊຶ່ງກຳຫນົດຈຸດທີ່ຢູ່ນອກບໍຣິເວນຊາຍຄາຂອງຕົວເຮືອນອອກໄປເຖິງຈຸດທີ່ແມ່ບ້ານຢືນຢູ່ທີ່ ປະຕູເຮືອນສາດນ້ຳລ້າງພາຊນະອອກໄປຕົກ (ວິ. ອ. ໑/໙໒/໓໒໔)
໒ ທັມມິຍະ ເຮືອນໂລ້ນ ໄດ້ແກ່ ປຣາສາທຫລັງຄາໂລ້ນ ມີເຮືອນຍອດຕັ້ງຢູ່ທີ່ດາດຟ້າ ມີຊານຊົມ ແສງຈັນທຣ໌ (ວິ. ອ. ໒/໔໗໒-໗/໑໕໙, ວິ. ອ. ໓/໒໙໔/໓໑໙, ສາຣຕຸຖ. ຕີກາ ໓/໗໑-໗໓/ ໒໗໕, ວິມຕິ. ຕີກາ ໒/໗໑-໗໓/໑໓໕)

[໔໗໗] ທີ່ຊື່ວ່າ ຫມູ່ບ້ານມີອຸປຈາຣດຽວກັນ ຄື ຫມູ່ບ້ານຂອງຕະກູນນຶ່ງລ້ອມຮົ້ວໄວ້ດ້ວຍກັນ ພິກສຸ ເກັບຈີວອນໄວ້ພາຍໃນຫມູ່ບ້ານ ແລ້ວເພິ່ງຢູ່ພາຍໃນຫມູ່ບ້ານ ທີ່ຊື່ວ່າ ຫມູ່ບ້ານມີອຸປຈາຣແຍກກັນ ໑ ຄື ຫມູ່ບ້ານຂອງຕະກູນນຶ່ງບໍ່ມີຮົ້ວລ້ອມ ພິກສຸຕ້ອງຢູ່ໃນເຮືອນທີ່ຕົນເກັບຈີວອນໄວ້ຫລືບໍ່ລະ ຫັຕຖບາສ

[໔໗໙] ຫມູ່ບ້ານຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸຕ້ອງຢູ່ໃນເຮືອນ ທີ່ຕົນເກັບຈີວອນໄວ້ ໃນຫໍປະຊຸມຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖບາສ ເມື່ອໄປຫໍປະຊຸມຕ້ອງເກັບຈີວອນໄວ້ໃນຫັຕຖບາສແລ້ວຢູ່ໃນຫໍປະຊຸມຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖບາສ
ພິກສຸເກັບຈີວອນໃນຫໍປະຊຸມ ຕ້ອງຢູ່ໃນຫໍປະຊຸມຫລືທີ່ຮິມປະຕູຫລືບໍ່ລະຫັຕຖບາສ
ຫມູ່ບ້ານບໍ່ມີຮົ້ວລ້ອມ ພິກສຸຕ້ອງຢູ່ໃນເຮືອນ ທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັຕຖບາສ

[໔໘໐] ເຮືອນ ຂອງຕະກູນນຶ່ງລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸເກັບຈີວອນໄວ້ພາຍໃນເຮືອນ ຕ້ອງຢູ່ພາຍໃນເຮືອນ
ເຮືອນບໍ່ມີຮົ້ວລ້ອມ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັຕຖບາສ

[໔໘໑] ເຮືອນ ຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖບາສ
ເຮືອນບໍ່ມີຮົ້ວລ້ອມ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັຕຖບາສ

ເຊີງອັນຖະ :
໑ ຫມູ່ບ້ານທີ່ຈັດວ່າມີອຸປຈາຣດຽວກັນ ທ່ານກຳຫນົດດ້ວຍລ້ອມຮົ້ວໄວ້ດ້ວຍກັນ, ທີ່ຈັດວ່າມີປຈາຣແຍກກັນ ທ່ານກຳຫນົດດ້ວຍບໍ່ມີຮົ້ວລ້ອມ (ປຣິກຸຂິຕ ໂຕຕິ. . . ເອຕຸຕາວຕາ ເອກກຸລຄາມສຸສ ເອກູປຈາຣຕາ ທສຸສິຕາ. ອເປຯ ອປຣິກຸຂິຕ ໂຕຕິ ອິມິນາ ຕສຸເສວ ຄາມສຸສ ນານູປຈາຣຕາ ທສຸສິຕາ - ວິ. ອ. ໒/໔໗໗/໑໕໗)

[໔໘໔] ໂຮງເກັບຂອງ ຂອງຕະກູນນຶ່ງລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນໂຮງເກັບຂອງທີ່ຕົນເກັບຈີວອນໄວ້
ໂຮງເກັບຂອງບໍ່ມີຮົ້ວລ້ອມ ພິກສຸຕ້ອງຢູ່ໃນຫ້ອງເກັບຂອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັຕຖບາສ

[໔໘໕] ໂຮງເກັບຂອງ ຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ມີຫ້ອງໃຫຍ່ຫ້ອງເລັກຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖບາສ
ໂຮງເກັບຂອງບໍ່ມີຮົ້ວລ້ອມ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັຕຖບາສ

[໔໗໔] ປ້ອມ ຂອງຕະກູນນຶ່ງ ພິກສຸຕ້ອງຢູ່ພາຍໃນປ້ອມທີ່ຕົນເກັບຈີວອນໄວ້
ປ້ອມຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖຸບາສ

[໔໗໕] ເຮືອນຍອດດຽວ ຂອງຕະກູນນຶ່ງ ພິກສຸຕ້ອງຢູ່ພາຍໃນເຮືອນຍອດດຽວທີ່ຕົນເກັບຈີວອນໄວ້
ເຮືອນຍອດດຽວຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖຸບາສ

[໔໗໖] ປຣາສາທ ຂອງຕະກູນນຶ່ງ ພິກສຸຕ້ອງຢູ່ໃນປຣາສາທທີ່ຕົນເກັບຈີວອນໄວ້
ປຣາສາທຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖຸບາສ

[໔໗໗] ເຮືອນໂລ້ນ ຂອງຕະກູນນຶ່ງ ພິກສຸຕ້ອງຢູ່ພາຍໃນເຮືອນໂລ້ນທີ່ຕົນເກັບຈີວອນໄວ້
ເຮືອນໂລ້ນຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖຸບາສ

[໔໗໘] ເຮືອ ຂອງຕະກູນນຶ່ງ ພິກສຸຕ້ອງຢູ່ພາຍໃນເຮືອທີ່ຕົນເກັບຈີວອນໄວ້
ເຮືອຂອງຕ່າງຕະກູນ ມີຫ້ອງໃຫຍ່ຫ້ອງນ້ອຍຫລາຍຫ້ອງ ພິກສຸຕ້ອງຢູ່ໃນຫ້ອງທີ່ຕົນເກັບຈີວອນໄວ້ຫລືທີ່ຮິມປະຕູ ຫລືບໍ່ລະຫັຕຖຸບາສ

[໔໗໙] ຫມູ່ກອງງນ ຂອງຕະກູນນຶ່ງ ພິກສຸຕ້ອງບໍ່ລະອັພພັນດຣ໑ ດ້ານຫນ້າຫລືດ້ານຫລັງ ຂ້າງລະ ໗ ອັພພັນດຣ ດ້ານຂ້າງດ້ານລະ ໑ ອັພພັນດຣ
ຫມູ່ກອງງນຂອງຕ່າງຕະກູນ ພິກສຸເກັບຈີວອນໄວ້ໃນຫມູ່ກອງງນ ຕ້ອງບໍ່ລະຫັຕຖຸບາສ

[໔໘໐] ນາ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸຕ້ອງຢູ່ພາຍໃນນາທີ່ຕົນເກັບຈີວອນໄວ້ ນາບໍ່ມີຮົ້ວລ້ອມ ພິກສຸຕ້ອງບໍ່ລະຫັຕຖຸບາສ
ນາຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸເກັບຈີວອນໄວ້ພາຍໃນນາ ຕ້ອງຢູ່ທີ່ຮິມປະຕູ ຫລືບໍ່ລະຫັຕຖຸບາສ ນາທີ່ບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັຕຖຸບາສ

[໔໙໑] ລານນວດເຂົ້າ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸຕ້ອງຢູ່ພາຍໃນລານນວດເຂົ້າທີ່ຕົນເກັບຈີວອນໄວ້ ລານນວດເຂົ້າຂອງຕະກູນນຶ່ງບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ
ລານນວດເຂົ້າຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸເກັບຈີວອນໄວ້ພາຍໃນລານນວດເຂົ້າຕ້ອງຢູ່ທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ລານນວດເຂົ້າຂອງຕ່າງຕະກູນບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ

[໔໙໒] ສວນ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸເກັບຈີວອນໄວ້ພາຍໃນສວນ ຕ້ອງຢູ່ພາຍໃນສວນ ສວນທີ່ບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ
ສວນຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸເກັບຈີວອນໄວ້ພາຍໃນສວນ ຕ້ອງຢູ່ທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ສວນທີ່ບໍ່ມີຮົ້ວລ້ອມ ຕ້ອງບໍ່ລະຫັດຖຸບາສ

[໔໙໓] ວິຫານ ຂອງຕະກູນນຶ່ງແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸເກັບຈີວອນໄວ້ໃນວິຫານ ຕ້ອງຢູ່ພາຍໃນວິຫານ ວິຫານຂອງຕະກູນນຶ່ງບໍ່ມີຮົ້ວລ້ອມ ຕ້ອງຢູ່ໃນວິຫານທີ່ຕົນເກັບຈີວອນໄວ້ຫລືບໍ່ລະຫັດຖຸບາສ
ວິຫານຂອງຕ່າງຕະກູນແລະລ້ອມຮົ້ວໄວ້ດ້ວຍກັນ ພິກສຸຕ້ອງຢູ່ໃນວິຫານທີ່ຕົນເກັບຈີວອນໄວ້ ຫລືທີ່ຮິມປະຕູ ຫລືບໍ່ລະຫັດຖຸບາສ ວິຫານຂອງຕ່າງຕະກູນບໍ່ມີຮົ້ວລ້ອມ ຕ້ອງຢູ່ໃນວິຫານທີ່ຕົນເກັບຈີວອນໄວ້ ຫລືບໍ່ລະຫັດຖຸບາສ

[໔໙໔] ໂຫງົ້າໄມ້ຂອງຕະກູນນຶ່ງ ກຳຫນົດເຂດທີ່ເງົາແຜ່ໄປຮອບໆເວລາທ່ຽງວັນ ພິກສຸເກັບຈີວອນພາຍໃນເຂດເງົາ ຕ້ອງຢູ່ໃນເຂດເງົາ
ໂຫງົ້າໄມ້ຂອງຕ່າງຕະກູນ ຕ້ອງບໍ່ລະຫັດຖຸບາສ
ທີ່ຊື່ວ່າທີ່ກາງແຈ້ງມີອຸປຈາຣດຽວກັນ ຄື ປ່າບໍ່ມີບ້ານ ກຳຫນົດ ໗ ອັພພັນດຣ ໂດຍຮອບ ເປັນອຸປຈາຣດຽວ ພົ້ນກຳຫນົດນັ້ນເປັນອຸປຈາຣແຍກກັນ

ເຊີງອັນຖະ :

໑ ຄຳວ່າ "ອັພພັນດຣ" ເປັນມາຕຣາວັດໃນພາສາມຄທ ທຽບເທົ່າ ໒໘ ສອກ ຫລື ໗ ວາ (ເອຕໍ ອພພນຸຕຣໍ ອຕຸຖວິສຕີຫຕຸຖໍ ໂຫຕິ - ວິ. ອ. ໒/໔໗໙/໑໕໙)

ນິສສັຄຄິຍປາຈິຕຕີຍ໌

[໔໙໕] ຈີວອນຢູ່ປຣາສຼແລ້ວ ພິກສຸສຳຄັນວ່າຢູ່ປຣາສຼແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຢູ່ປຣາສຼແລ້ວ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຢູ່ປຣາສຼແລ້ວ ພິກສຸສຳຄັນວ່າບໍ່ຢູ່ປຣາສຼແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຍັງບໍ່ໄດ້ຖອນ ພິກສຸສຳຄັນວ່າຖອນແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ ພິກສຸໄດ້ຮັບສົມມຸດ

ຈີວອນຍັງບໍ່ໄດ້ສລະໃຫ້ ພິກສຸສຳຄັນວ່າສລະໃຫ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຍັງບໍ່ສູນຫາຍ ພິກສຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຍັງບໍ່ຈິບຫາຍ ພິກສຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຍັງບໍ່ຖືກໄຟໄຫມ້ ພິກສຸສຳຄັນວ່າຖືກໄຟໄຫມ້ແລ້ວ ຕ້ອງອາບັຕິນິສສັຄຄິຍ ປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ຈີວອນຍັງບໍ່ຖືກໂຈຣຊີງ ພິກສຸສຳຄັນວ່າຖືກໂຈຣຊີງໄປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນແຕ່ພິກສຸໄດ້ຮັບສົມມຸດ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໒. ອຸທໂທສິຕສິກຂາບົທ ອນາປັຕຕິວາຣ

ຕິກທຸກກຕ

ຈີວອນເປັນນິສສັຄຄີຍ໌ ພິກສຸຍັງບໍ່ສລະ ໃຊ້ສອຍ ຕ້ອງອາບັຕິທຸກກຕ

ຈີວອນບໍ່ຢູ່ປຣາສຼ ພິກສຸສຳຄັນວ່າຢູ່ປຣາສຼແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກຕ

ຈີວອນບໍ່ຢູ່ປຣາສຼ ພິກສຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິທຸກກຕ
ຈີວອນບໍ່ຢູ່ປຣາສຼ ພິກສຸສຳຄັນວ່າບໍ່ຢູ່ປຣາສຼ ໃຊ້ສອຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໙໖] ໑. ພິກສຸຜູ້ຖອນພາຍໃນອຣຸນ

໒. ພິກສຸຜູ້ສລະໃຫ້ໄປ

໓. ພິກສຸຜູ້ມີຈີວອນສູນຫາຍ

໔. ພິກສຸຜູ້ມີຈີວອນຈິບຫາຍ

໕. ພິກສຸຜູ້ມີຈີວອນຖືກໄຟໄຫມ້

໖. ພິກສຸຜູ້ມີຈີວອນຖືກໂຈຣຊີງເອົາໄປ

໗. ພິກສຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະ

໘. ພິກສຸໄດ້ຮັບສົມມຸດ

໙. ພິກສຸວິກົລຈິຕ

໑໐. ພິກສຸຕົ້ນບັນຍັດ

ອຸທໂທສິຕສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໓. ຕຕິຍກຖິນສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໓. ຕຕິຍກຖິນສິກຂາບົທ ວ່າດ້ວຍກຖິນເດາະຂໍ້ທີ ໓

ເຣື້ອງພິກສຸຮັບອກາລຈີວອນ

[໔໙໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອກາລຈີວອນ໑ ໄດ້ເກີດຂຶ້ນແກ່ພິກສຸຮູບນຶ່ງ ທ່ານຈະທຳຈີວອນແຕ່ຜ້າບໍ່ພໍ ຈຶ່ງພຍາຍາມດຶງຜ້ານັ້ນໃຫ້ຍືດແລ້ວຮີດເປັນຫລາຍຄັ້ງ ພຣະຜູ້ມີພຣະພາຄສເດັຈໄປ

ຕາມເສນາສນະ ທອດພຣະເນຕຣເຫັນທ່ານພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຣິດເປັນຫລາຍຄັ້ງ ຈຶ່ງສເດັຈເຂົ້າໄປຫາພິກສຸຮູບນັ້ນ ຄັນເຖິງແລ້ວຕຣັສຖາມວ່າ "ທ່ານພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຣິດເປັນຫລາຍຄັ້ງ ເພື່ອຫຍັງ" ພິກສຸນັ້ນຂາບທູລວ່າ "ຂ້າພຣະອົງຄ໌ໄດ້ຜ້າທີ່ເປັນອກາລຈີວອນ ຄັນຈະທຳຈີວອນຜ້າບໍ່ພໍ ດັ່ງນັ້ນຈຶ່ງພຍາຍາມດຶງຜ້ານັ້ນໃຫ້ຢືດແລ້ວຣິດເປັນຫລາຍຄັ້ງ ພຣະພຸທທເຈົ້າຂ້າ"

ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸ ທ່ານມີຄວາມຫວັງຈະໄດ້ຜ້າສຳລັບທຳຈີວອນອີກຫລື"

ພິກສຸນັ້ນຂາບທູລວ່າ "ມີຄວາມຫວັງ ພຣະພຸທທເຈົ້າຂ້າ"

ຊົງອນຸຍາຕອກາລຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ເຮົາອນຸຍາຕໃຫ້ຮັບຜ້າທີ່ເປັນອກາລຈີວອນແລ້ວເກັບໄວ້ໂດຍມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ"

ເຊີງອັນຖະ :

໑ ອກາລຈີວອນ ຫມາຍເຖິງຜ້າສຳລັບທຳຈີວອນທີ່ເກີດຂຶ້ນນອກຣະດູກາລ ຄືນອກກາລທີ່ພິກສຸຈະເພິ່ງຮັບຜ້າພືນທີ ໔ ນອກຈາກໄຕຣຈີວອນເກັບໄວ້ໄດ້ (ດູເຊີງອັນຖະ ຂໍ້ ໕໐໐ ຫນ້າ ໔໑ ໃນເຫລັ້ມນີ້)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນທ໌] ໑. ຈີວວັຄ ໓. ຕຕິຍກຖິນສິກຂາບົທ ພຣະບັນຍັດ

[໔໙໘] ຕໍ່ມາ ພິກສຸທັງຫລາຍຊາບວ່າ ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ຮັບຜ້າທີ່ເປັນອກາລຈີວອນເກັບໄວ້ໄດ້ໂດຍມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ຈຶ່ງຮັບຜ້າທີ່ເປັນອກາລຈີວອນເກັບໄວ້ເກີນ ໑ ເດືອນ ຜ້າເຫລົ່ານັ້ນຖືກມັດຮວມເປັນຫໍ່ໆແຂວນໄວ້ທີ່ຮາວ ທ່ານພຣະອານົນທ໌ທຽວໄປຕາມເສນາສນະ ເຫັນຜ້າເຫລົ່ານັ້ນຖືກມັດຮວມເປັນຫໍ່ໆແຂວນໄວ້ທີ່ຮາວ ຈຶ່ງຖາມພິກສຸທັງຫລາຍວ່າ "ຜ້າເຫລົ່ານັ້ນຖືກມັດຮວມເປັນຫໍ່ໆແຂວນໄວ້ທີ່ຮາວ ເປັນຂອງໃຜ" ພິກສຸທັງຫລາຍຕອບວ່າ "ຜ້າເຫລົ່ານີ້ເປັນອກາລຈີວອນ ພວກຜູ້ຂ້າເກັບໄວ້ໂດຍຄວາມຫວັງວ່າຈະໄດ້ຜ້າມາເພີ້ມ" ພຣະອານົນທ໌ຖາມວ່າ "ເກັບໄວ້ດົນເທົ່າໃດ" ພິກສຸທັງຫລາຍຕອບວ່າ "ເກັບໄວ້ເກີນ ໑ ເດືອນ ຂນ້ອຍ"

ພຣະອານົນທ໌ຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງຮັບຜ້າທີ່ເປັນອກາລຈີວອນເກັບໄວ້ເກີນ ໑ ເດືອນລະ" ຄັນທ່ານຕຳໜິພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫດຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພິກສຸທັງຫລາຍຮັບຜ້າທີ່ເປັນອກາລຈີວອນເກັບໄວ້ເກີນ ໑ ເດືອນ ແມ່ນແທ້ບໍ່" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງຮັບຜ້າທີ່ເປັນອກາລຈີວອນແລ້ວເກັບໄວ້ເກີນ ໑ ເດືອນລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງ ບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໙໙] ເມື່ອຈີວອນຂອງພິກສຸສຳເຣັຈແລ້ວ ເມື່ອກຖິນເດາະແລ້ວ ອກາລຈີວອນເກີດຂຶ້ນແກ່ພິກສຸ ພິກສຸຕ້ອງການກໍເພິ່ງຮັບໄວ້ໄດ້ ຄັນຮັບແລ້ວເພິ່ງຮີບໃຫ້ທຳເປັນຈີວອນ ຖ້າຜ້ານັ້ນມີບໍ່ພໍ ເມື່ອມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ພິກສຸນັ້ນເພິ່ງເກັບຜ້າສຳລັບທຳຈີວອນນັ້ນໄວ້ບໍ່ເກີນ ໑ ເດືອນ ເພື່ອເພີ້ມຜ້າສຳລັບທຳຈີວອນທີ່ຍັງຂາດໃຫ້ຄົບ ຖ້າເກັບເກີນກຳໜົດນັ້ນ ແມ່ນມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເອື້ອງພິກສຸຮັບອກາລຈີວອນ ຈົບ

ສິກຂາບົທວິພັງຄ໌

[໕໐໐] ຄຳວ່າ ເມື່ອຈີວອນ. . . ສຳເຣັຈແລ້ວ ໝາຍຄວາມວ່າ ຈີວອນຂອງພິກສຸທຳເສັດແລ້ວ ສູນຫາຍແລ້ວ ຈິບຫາຍແລ້ວ ຖືກໄຟໄໝ້ເສັງແລ້ວ ຫລືພິກສຸໝົດຫວັງວ່າຈະໄດ້ຜ້າມາຍິບເປັນຈີວອນ

ຄຳວ່າ ເມື່ອກຖິນເດາະແລ້ວ ໝາຍຄວາມວ່າ ກຖິນເດາະດ້ວຍມາຕິກາຢ່າງໃດຢ່າງນຶ່ງໃນມາຕິກາ ໘ ຫລືສົງຂ໌ເດາະກຖິນໃນຣະຫວ່າງ

ທີ່ຊື່ວ່າ ອກາລຈີວອນ ໄດ້ແກ່ ຜ້າທີ່ເກີດຂຶ້ນຕລອດ ໑໑ ເດືອນ ໃນເມື່ອບໍ່ໄດ້ກຣານກຖິນ ຜ້າທີ່

ເກີດຂຶ້ນຕລອດ ໗ ເດືອນ ໃນເມື່ອໄດ້ກຣານກຖິນແລ້ວ ແມ່ນຜ້າທີ່ເຂົາຖວາຍເຈາະຈົງໃນກາລ
ນີ້ຊື່ວ່າ ອກາລຈີວອນ໑

ຄຳວ່າ ເກີດຂຶ້ນ ຄື ເກີດຈາກສົງຂ໌ ຈາກຄນະ ຈາກຍາຕ ຈາກມິຕຣ ຫລືທີ່ເປັນຜ້າບັງສຸກຸລ ຫລືທີ່
ໄດ້ມາດ້ວຍຊັພຍ໌ຂອງຕົນ

ຄຳວ່າ ຕ້ອງກາຣ ຄື ເມື່ອຕ້ອງກາຣກໍຮັບໄວ້

ຄຳວ່າ ຄັນຮັບແລ້ວເພິງຮີບໃຫ້ທຳ ຄື ເພິງໃຫ້ທຳເສັດພາຍໃນ ໑໐ ວັນ

ຄຳວ່າ ຖ້າຜ້ານັ້ນມີບໍ່ພໍ ຄື ຜ້າບໍ່ພຽງພໍທີ່ຈະທຳເປັນໄຕຣຈີວອນຜືນໃດຜືນນຶ່ງ

ຄຳວ່າ ພິກສຸນັ້ນເພິງເກັບຜ້າສຳລັບທຳຈີວອນນັ້ນໄວ້ບໍ່ເກີນ ໑ ເດືອນ ຄື ເກັບໄວ້ໄດ້ ໑ ເດືອນ
ເປັນຢ່າງຫລາຍ

ຄຳວ່າ ເພື່ອເພີ້ມຜ້າສຳລັບທຳຈີວອນທີ່ຍັງຂາດໃຫ້ຄົບ ຄື ເພື່ອຈະໃຫ້ຜ້າທີ່ຍັງຂາດ ຄົບບໍຣິບູຣນ໌

ຄຳວ່າ ເມື່ອມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ຄື ມີຄວາມຫວັງວ່າຈະໄດ້ຈາກສົງຂ໌ ຈາກຄນະ ຈາກ
ຍາຕ ຈາກມິຕຣ ຫລືທີ່ເປັນຜ້າບັງສຸກຸລ ຫລືທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ

ເຊີງອັນຖະ :

*໑ ຄື (໑) ຕັ້ງແຕ່ ແຮມ ໑ ຄ່ຳ ເດືອນ ໑໔ ເຖິງຂຶ້ນ ໑໕ ຄ່ຳ ເດືອນ ໑໑ ຂອງປີຖັດໄປສຳລັບ
ຜູ້ບໍ່ໄດ້ກຣານກຖິນ ຮວມເປັນ ໑໑ ເດືອນ (໒) ຕັ້ງແຕ່ແຮມ ໑ ຄ່ຳ ເດືອນ ໔ ເຖິງ ຂຶ້ນ ໑໕
ຄ່ຳ ເດືອນ ໑໑ ໃນປີດຽວກັນ ສຳລັບຜູ້ໄດ້ກຣານກຖິນ ຮວມເປັນ ໗ ເດືອນ*

ຈີວອນທີ່ມີຄວາມຫວັງວ່າຈະໄດ້ມາ

ຄຳວ່າ ຖ້າເກັບເກີນກຳຫນົດນັ້ນ ແມ່ນມີຄວາມຫວັງວ່າຈະໄດ້ຜ້າມາເພີ້ມ ອທິບາຍວ່າ

ຈີວອນທີ່ຫວັງເກີດຂຶ້ນ ໃນວັນທີ່ຈີວອນຜືນເດີມເກີດຂຶ້ນແລ້ວ ເພິງເຮັດໃຫ້ເສັດໃນ ໑໐ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒ ວັນ . . . ໃນເມື່ອຈີວອນຜືນ
ເດີມເກີດຂຶ້ນແລ້ວໄດ້ ໓ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໔ ວັນ . . . ໃນ
ເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໕ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໖
ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໗ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນ
ແລ້ວໄດ້ ໘ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໙ ວັນ . . . ໃນເມື່ອຈີວອນ
ຜືນເດີມເກີດຂຶ້ນແລ້ວໄດ້ ໑໐ ວັນ ເພິງເຮັດໃຫ້ເສັດໃນ ໑໐ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໑ ວັນ . . . ໃນເມື່ອຈີວອນ

ຜືນເດີມເກີດຂຶ້ນແລ້ວໄດ້ ໑໔ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໓ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໔ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໕ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໖ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໗ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໘ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໑໙ ວັນ . . . ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໐ ວັນ ເພິ່ງເຮັດໃຫ້ເສັດໃນ ໑໐ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໑ ວັນ ເພິ່ງເຮັດໃຫ້ເສັດໃນ ໙ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໒ ວັນ ເພິ່ງເຮັດໃຫ້ເສັດໃນ ໘ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໓ ວັນ ເພິ່ງເຮັດໃຫ້ເສັດໃນ ໗ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໔ ວັນ ເພິ່ງເຮັດໃຫ້ເສັດໃນ ໖ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໕ ວັນ ເພິ່ງເຮັດໃຫ້ເສັດໃນ ໕ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໖ ວັນ ເພິ່ງເຮັດໃຫ້ເສັດໃນ ໔ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໗ ວັນ ເພິ່ງເຮັດໃຫ້ເສັດໃນ ໓ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໘ ວັນ ເພິ່ງເຮັດໃຫ້ເສັດໃນ ໒ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໒໙ ວັນ ເພິ່ງເຮັດໃຫ້ເສັດໃນ ໑ ວັນ

ຈີວອນທີ່ຫວັງເກີດຂຶ້ນ ໃນເມື່ອຈີວອນຜືນເດີມເກີດຂຶ້ນແລ້ວໄດ້ ໓໐ ວັນ ເພິ່ງອທິສຖານ ວິກັປ ສລະໃຫ້ຜູ້ອື່ນໃນມື້ນັ້ນ ຖ້າບໍ່ອທິສຖານ ບໍ່ວິກັປຫລືບໍ່ສລະໃຫ້ຜູ້ອື່ນ ເມື່ອຮຸ່ງອຣຸນວັນທີ ໓໑

ຈີວອນເປັນນິສສັຄຄີຍ໌ ຄື ເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ
ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ອກາລຈີວອນຜືນນີ້ຂອງຜູ້ຂ້າເກີນ ໑ ເດືອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະອກາລຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວ ເພິງສະແດງອາບັຕິ
ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັດຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ອກາລຈີວອນຜືນນີ້ຂອງຜູ້ຂ້າເກີນ ໑ ເດືອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະອກາລຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ
ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ອກາລຈີວອນຜືນນີ້ຂອງຜູ້ຂ້າເກີນ ໑ ເດືອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະອກາລຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ
ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ຈີວອນທີ່ຫວັງເກີດຂຶ້ນ ເນື້ອຜ້າບໍ່ເໝືອນກັບຈີວອນເດີມທີ່ເກີດຂຶ້ນແລ້ວ ແລະວັນຄືນກໍຍັງເຫລືອຢູ່ ເມື່ອບໍ່ຕ້ອງການຈະທຳ ກໍບໍ່ຕ້ອງທຳ

ບົທພາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໐໑] ຈີວອນເກັບໄວ້ເກີນ ໑ ເດືອນ ພິກສຸສຳຄັນວ່າເກີນແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນເກັບໄວ້ເກີນ ໑ ເດືອນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນເກັບໄວ້ເກີນ ໑ ເດືອນ ພິກສຸສຳຄັນວ່າຍັງບໍ່ເກີນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ອທິສຖານ ພິກສຸສຳຄັນວ່າອທິສຖານແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ວິກັປ ພິກສຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ສລະໃຫ້ ພິກສຸສຳຄັນວ່າສລະໃຫ້ແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ສູນຫາຍ ພິກສຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ຈິບຫາຍ ພິກສຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກໄຟໄໝ້ ພິກສຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຈີວອນຍັງບໍ່ຖືກໂຈຣຊິງ ພິກສຸສຳຄັນວ່າຖືກໂຈຣຊິງແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີວວັຄ ໓. ຕຕິຍກຖິນສິກຂາບົທ ອນາປັຕຕິວາຣ

ທຸກກຕ

ຈີວອນເປັນນິສສັຄຄີຍ໌ ພິກສຸບໍ່ສລະ ໃຊ້ສອຍ ຕ້ອງອາບັຕິທຸກກຕ

ຈີວອນຍັງບໍ່ເກີນ ໑ ເດືອນ ພິກສຸສຳຄັນວ່າເກີນແລ້ວ ຕ້ອງອາບັຕິທຸກກຕ

ຈີວອນທີ່ຍັງບໍ່ເກີນ ໑ ເດືອນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຈີວອນຍັງບໍ່ເກີນ ໑ ເດືອນ ພິກສຸສຳຄັນວ່າຍັງບໍ່ເກີນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໔] ໑. ພິກສຸອທິສຖານພາຍໃນ ໑ ເດືອນ

໔. ພິກສຸຜູ້ວິກັປໄວ້
໖. ພິກສຸຜູ້ສລະໃຫ້ໄປ
໔. ພິກສຸຜູ້ມີຈີວອນສູນຫາຍ
໕. ພິກສຸຜູ້ມີຈີວອນຈິບຫາຍ
໖. ພິກສຸຜູ້ມີຈີວອນຖືກໄຟໄຫມ້
໗. ພິກສຸຜູ້ມີຈີວອນຖືກໂຈຣຊິງເອົາໄປ
໘. ພິກສຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ຕຕິຍກຖິນສິກຂາບົທທີ່ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໔. ປຸຣານຈີວອນສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໔. ປຸຣານຈີວອນສິກຂາບົທ
ວ່າດ້ວຍການໃຫ້ຊັກຈີວອນເກົ່າ

ເຣື້ອງພຣະອຸທາຍີກັບອດີຕພັຣຍາ

[໕໐໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອດີຕພັຣຍາຂອງທ່ານພຣະອຸທາຍີບວຊຢູ່ໃນສຳນັກພິກສຸນີ ນາງມາຫາທ່ານພຣະອຸທາຍີຢູ່ສເມີ ແມ່ນທ່ານພຣະອຸທາຍີກໍໄປຫານາງຢູ່ສເມີ ກໍໃນສມັຍນັ້ນ ທ່ານພຣະອຸທາຍີກະທຳພັຕກິຈໃນທີ່ຢູ່ຂອງນາງ ເຊົ້າມື້ນຶ່ງ ທ່ານພຣະອຸທາຍີຄອງອັນຕຣວາສກຖືບາຕຣ ແລະຈີວອນໄປຫານາງເຖິງທີ່ຢູ່ ເມື່ອເຂົ້າໄປເຖິງແລ້ວກໍນັ່ງເທິງອາສນະເປີດອົງຄຊາຕຕໍ່ຫນ້າພິກສຸນີນັ້ນ ແມ່ນພິກສຸນີນັ້ນກໍນັ່ງເທິງອາສນະເປີດອົງຄ໌ກຳເນີດຕໍ່ຫນ້າທ່ານພຣະອຸທາຍີເຊັ່ນກັນ ທ່ານພຣະອຸທາຍີເກີດຄວາມກຳຫນັດເພ່ງເບິ່ງອົງຄ໌ກຳເນີດຂອງນາງ ນ້ຳອສຸຈິຂອງທ່ານພຣະອຸທາຍີນັ້ນເຄື່ອນ ຄັນແລ້ວທ່ານພຣະອຸທາຍີຈຶ່ງກ່າວກັບພິກສຸນີນັ້ນ ດັ່ງນີ້ວ່າ “ນ້ອງຍິງ ທ່ານຈົ່ງໄປຫານ້ຳ

ມາ ຂ້ອຍຈະຊັກອັນຕຣວາສກ” ນາງຕອບວ່າ “ໄປຣດສິ່ງມາເຖີດ ຂະນ້ອຍຈະຊັກໃຫ້” ຄັນແລ້ວ ນາງໃຊ້ປາກດູດອສຸຈິສ່ວນນຶ່ງ ແລະສອດອສຸຈິອີກສ່ວນນຶ່ງເຂົ້າໃນອົງຄ໌ກຳເນີດ ເພາະເຫຕຸນັ້ນນາງ ຈຶ່ງໄດ້ຕັ້ງຄັນພ໌ ພວກພິກສຸນີເວົ້າວ່າ “ພິກສຸນີນັ້ນບໍ່ໄດ້ປະພຶດພຣົມຈັນຍ໌ຈຶ່ງຕັ້ງຄັນພ໌” ນາງຕອບ ວ່າ “ແມ່ເຈົ້າ ບໍ່ແມ່ນວ່າຂະນ້ອຍບໍ່ໄດ້ປະພຶດພຣົມຈັນຍ໌” ແລ້ວບອກເຣື້ອງນັ້ນໃຫ້ພິກສຸນີທັງ ຫລາຍຊາບ

ພວກພິກສຸນີພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸທາຍີຈຶ່ງໃຫ້ພິກສຸນີຊັກຈີ ວອນເກົ່າໃຫ້ລະ” ແລ້ວນຳເຣື້ອງນີ້ໄປບອກໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸທາຍີຈຶ່ງໃຫ້ພິກສຸນີຊັກຈີວອນເກົ່າໃຫ້ ລະ” ຄັນພິກສຸເຫລົ່ານັ້ນຕຳໜິພຣະອຸທາຍີໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະ ຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸທາຍີວ່າ “ອຸທາຍີ ຊາບວ່າ ທ່ານໃຊ້ພິກສຸນີຊັກຈີວອນເກົ່າ ແມ່ນແທ້ບໍ່” ພຣະອຸທາຍີທູລຮັບ ວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະພຸທທອົງຄ໌ຊົງຖາມວ່າ “ອຸທາຍີ ນາງເປັນຍາຕຂອງທ່ານ ຫລືບໍ່ແມ່ນຍາຕ” ພຣະອຸທາຍີທູລຕອບວ່າ “ບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະ ພາຄຊົງຕຳໜິວ່າ “ໂມຄບຸຣຸສ ຊາຍຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມ ຫລືບໍ່ເໝາະສົມ ຄວາມໜ້າເຫລື້ອມໃສຫລືບໍ່ໜ້າເຫລື້ອມໃສຂອງຍິງຜູ້ບໍ່ແມ່ນຍາຕ ໂມຄບຸຣຸສທ່ານນັ້ນໆ ໃຊ້ ພິກສຸນີຜູ້ທີ່ບໍ່ແມ່ນຍາຕໃຫ້ຊັກຈີວອນເກົ່າ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໐໔] ກໍ ພິກສຸໃດໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ໃຫ້ຍ້ອມ ຫລືໃຫ້ທຸບຈີວອນເກົ່າ ຕ້ອງ ອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸທາຍີກັບອດີຕພັຣຍາ ຈົບ

ສິກຂາບົທວິພັງຄ໌

[໕໐໕] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ໔

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ທີ່ຊື່ວ່າ ຈີວອນເກົ່າ ໄດ້ແກ່ ຜ້າທີ່ນຸ່ງແລ້ວແມ່ນພຽງ ໑ ຄັ້ງ ຜ້າທີ່ຫົ່ມແລ້ວແມ່ນພຽງ ໑ ຄັ້ງ

ພິກສຸສັ່ງວ່າ "ຈົ່ງຊັກ" ຕ້ອງອາບັຕິທຸກກຕ ຈີວອນທີ່ພິກສຸນີຊັກແລ້ວເປັນນິສສັຄຄີຍ໌

ພິກສຸສັ່ງວ່າ "ຈົ່ງຍ້ອມ" ຕ້ອງອາບັຕິທຸກກຕ ຈີວອນທີ່ພິກສຸນີຍ້ອມແລ້ວເປັນນິສສັຄຄີຍ໌

ພິກສຸສັ່ງວ່າ "ຈົ່ງທຸບ" ຕ້ອງອາບັຕິທຸກກຕ ເມື່ອພິກສຸນີໃຊ້ມືຫລືຕະລຸມພຸກທຸບພຽງ ໑ ຄັ້ງ ຈີວອນເປັນນິສສັຄຄີຍ໌ ຄືເປັນຂອງຈໍາຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ຕຕິຖ ທ່ານນັ້ນ ນີ້ເປັນ ປຈຈຕຸຕກຕຸອຕຸຖ ຫລື ກຣນກຕຸອຕຸຖ ຄືມີອັນຖະເປັນປຖມາວິພັຕຕິ ຫລືຕຕິຍາວິພັຕຕິ (ຕຕຸຖນາມ ຕຸອນຸຕິ ໂສ ນາມ ຕຸອໍ, ຕາຍ ນາມ ຕຸອນຸຕິ ອາ ອຕຸໂຖ - ວິມຕິ. ຕີກາ ໑/໕໐໖-໕/໔໑໗ ແປວ່າ ທ່ານນັ້ນຫລືພິກສຸນີນັ້ນ ກໍໄດ້)

໔ ເຈັດຊົ່ວຄົນ ຄືວົງສ໌ສກຸລທີ່ສືບສາຍໂລຫິຕກັນມາ ນັບຕັ້ງແຕ່ຕົວພິກສຸຂຶ້ນໄປ ໓ ຊັ້ນ ຄືຊັ້ນພໍ່ ຊັ້ນປູ່ ແລະຊັ້ນທວດ ກັບນັບຈາກຕົວພິກສຸລົງມາອີກ ໓ ຊັ້ນ ຄືຊັ້ນລູກ ຊັ້ນຫລານ ແລະຊັ້ນເຫລນ ຮວມເປັນເຈັດຊົ່ວຄົນ (ວິ. ອ. ໔/໕໐໖-໕/໑໘໕-໑໘໘)

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນເກົ່າຜືນນີ້ ຜູ້ຂ້າໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານ

ຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຊ໌ ຖ້າສົງຊ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນເກົ່າຜືນນີ້ຜູ້ຂ້າໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນເກົ່າຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນເກົ່າຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນເກົ່າຜືນນີ້ຜູ້ຂ້າໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນເກົ່າຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ສໍາຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໑

[໕໐໖] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິທຸກກຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິທຸກກຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິທຸກກຕ ໒ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ๔

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິທຸກກຕກັບອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິທຸກກຕກັບອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ທຸບ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິທຸກກຕ ๔ ຕົວ ກັບອາບັຕິນິສສັຄຄິຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ๕

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບຈີວອນເກົ່າ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບ ໃຊ້ໃຫ້ຊັກຈີວອນເກົ່າ ຕ້ອງອາບັຕິທຸກກຕກັບອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິ ທຸກກຕກັບອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ທຸບ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຈີວອນເກົ່າ ຕ້ອງອາບັຕິທຸກກຕ ๔ ຕົວ ກັບອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸບໍ່ແນ່ໃຈ ฯລฯ

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າເປັນຍາຕ ฯລฯ

ທຸກກຕ

ພິກຂຸໃຊ້ພິກຂຸນີໃຫ້ຊັກຈີວອນເກົ່າຂອງພິກຂຸຮູບອື່ນ ຕ້ອງອາບັຕິທຸກກຕ

ພິກຂຸໃຊ້ພິກຂຸນີໃຫ້ຊັກຜ້າປູນັ່ງແລະຜ້າປູນອນ ຕ້ອງອາບັຕິທຸກກຕ

ພິກຂຸໃຊ້ພິກຂຸນີຜູ້ອຸປສົມບົທໃນສົງຄ໌ຝ່າຍດຽວໃຫ້ຊັກ ຕ້ອງອາບັຕິທຸກກຕ

ພິກຂຸນີທີ່ເປັນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ຕ້ອງອາບັຕິທຸກກຕ

ພິກສຸນີທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ພິກສຸນີທີ່ເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໗] ໑. ພິກສຸຜູ້ເປັນເຈົ້າຂອງຈີວອນທີ່ພິກສຸນີຜູ້ເປັນຍາຕຊັກໃຫ້ເອງ ໂດຍມີພິກສຸນີ ສະຫາຍຜູ້ບໍ່ແມ່ນຍາຕຄອຍຊ່ອຍເຫລືອ

໒. ພິກສຸບໍ່ໄດ້ໃຊ້ ພິກສຸນີບໍ່ແມ່ນຍາຕຊັກໃຫ້ເອງ

໓. ພິກສຸໃຊ້ຊັກຈີວອນທີ່ຍັງບໍ່ໄດ້ໃຊ້ສອຍ

໔. ພິກສຸໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກບໍຣິຂາຣຢ່າງອື່ນ ນອກຈາກຈີວອນ

໕. ພິກສຸໃຊ້ສິກຂມານາໃຫ້ຊັກ

໖. ພິກສຸໃຊ້ສາມເນຣີໃຫ້ຊັກ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ປຸຣານຈີວອນສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີວອັຄ ໕. ຈີວອນປຕິຄຄຫນສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໕. ຈີວອນປຕິຄຄຫນສິກຂາບົທ

ວ່າດ້ວຍການຮັບຈີວອນ

ເຣື້ອງພິກສຸນີອຸບົລວັນນາ

[໕໐໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພິກສຸນີອຸບົລວັນນາພັກຢູ່ ນະ ກຸງສາວັຕຖີ ເວລາເຊົ້າ ພິກສຸນີ

ອຸບົລວັນນາຄອງອັນຕຣວາສົກຖືບາຕຣແລະຈີວອນ໑ ເຂົ້າໄປບິນທຸບາຕໃນກຸງສາວັຕຖີ ກັບຈາກບິນທຸບາຕຫລັງຈາກສັນເສັດແລ້ວ ເຂົ້າໄປຍັງປ່າອັນທວັນ ເພື່ອພັກຜ່ອນກາງເວັນ ນັ່ງທີ່ເຫງົ້າໄມ້ຕົ້ນນຶ່ງ ສມັຍນັ້ນ ພວກໂຈຣລັກແມ່ໂຄມາຂ້າແລ້ວຖືເອົາຊີ້ນເຂົ້າປ່າອັນທວັນ ຫົວຫນ້າໂຈຣເບິ່ງເຫັນພິກສຸນີອຸບົລວັນນານັ່ງພັກກາງເວັນ ຄັນເຫັນແລ້ວຈຶ່ງຄິດວ່າ "ຫາກພວກລູກນ້ອງເຮົາພົບເຂົ້າຈະປະທຸສຮ້າຍນາງ" ຈຶ່ງລຽງຍ່າງໄປທາງອື່ນ ເມື່ອປີ້ງຊີ້ນສຸກ ຫົວຫນ້າໂຈຣເລືອກຊີ້ນດີງເອົາໃບໄມ້ຫໍ່ ແຂວນໄວ້ທີ່ຕົ້ນໄມ້ໃກ້ພິກສຸນີແລ້ວກ່າວວ່າ "ຊີ້ນຫໍ່ ນີ້ເຮົາໃຫ້ແລ້ວ ສມນະຫລືພຣາມນ໌ເຫັນແລ້ວຈົ່ງຖືເອົາໄປເຖີດ" ພິກສຸນີອອກຈາກສມາທິ ໄດ້ຍິນຄຳທີ່ຫົວຫນ້າໂຈຣເວົ້າ ຈຶ່ງຖືເອົາຊີ້ນໄປທີ່ພັກ ຄັນຣາຕຣີຜ່ານໄປ ນາງຈັດຊີ້ນຕ່ອນນັ້ນໃຫ້ຮຽບຮ້ອຍແລ້ວໃຊ້ອຸຕຕຣາສົງຄ໌ຫໍ່ ເຫາະໄປຍັງພຣະເວຣຸວັນວິຫາຣ

ເຊີງອັນຖະ :

໑ ຄຳວ່າ "ຄອງອັນຕຣວາສົກຖືບາຕຣແລະຈີວອນ" ນີ້ ບໍ່ແມ່ນວ່າ ກ່ອນຫນ້ານີ້ພິກສຸນີບໍ່ໄດ້ນຸ່ງອັນຕຣວາສົກ ບໍ່ແມ່ນວ່າ ທ່ານຖືບາຕຣແລະຈີວອນໄປໂດຍເປືອຍກາຍສ່ວນເທິງ ຄຳວ່າ "ຄອງອັນຕຣວາສົກ" ຫມາຍເຖິງທ່ານຜັດປ່ຽນສະບົງ ຫລືຍ້າຍສະບົງທີ່ນຸ່ງຢູ່ໃຫ້ແຫນ້ນ ຄຳວ່າ "ຖືບາຕຣແລະຈີວອນ" ຄື ຖືບາຕຣດ້ວຍມື ຖືຈີວອນດ້ວຍກາຍ ຫມາຍຄວາມວ່າ "ຫົ່ມຈີວອນອຸ້ມບາຕຣ" ນັ້ນເອງ (ນິວາເສຕ຺ວາຕິ ປຣິທຫິຕ຺ວາ, ວິຫາຣນິວາສນປຣິວຕ຺ຕນວເສເນຕໍ ເວທິຕພ຺ພໍ. ນ ຫິ ເຕ ຕໂຕ ປຸພ຺ເພ ອນິວຕ຺ຖາ ອເຫສ຺ໍ. ປຕ຺ຕຈີວອນມາທາຍາຕິ ປຕ຺ຕໍ ຫຕ຺ເຖຫິ, ຈີວຣໍ ກາເຍນ ອາທິຍິຕ຺ວາ, ສມ຺ປຕິຈ຺ສາເຫຕ຺ວາ ທາເຣຕ຺ວາຕິ ອຕ຺ໂຖ- ວິ. ອ. ໑/໑໗/໑໘໐, ວິຫາຣນິວາສນປຣິວຕ຺ຕນວເສນ ນິວາສນໍ ທຣ຺ຫໍ ນິວາເສຕ຺ວາ. . . . ຈີວຣໍ ປາຣຸປິຕ຺ວາ ປຕ຺ຕໍ ຫຕ຺ເຖນ ຄເຫຕ຺ວາ - ອຸທານ. ອ. ໗໕)

ເຊົ້າມື້ນັ້ນ ພຣະຜູ້ມີພຣະພາຄສເດັຈໄປບິນທຸບາຕໃນຫມູ່ບ້ານ ເຫລືອທ່ານພຣະອຸທາຍີ ຢູ່ເຝົ້າພຣະວິຫາຣ ພິກສຸນີອຸບົລວັນນາເຂົ້າໄປຫາແລ້ວຖາມວ່າ "ທ່ານຜູ້ຈະເຣີນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ທີ່ໃດ" ທ່ານພຣະອຸທາຍີຕອບວ່າ "ພຣະຜູ້ມີພຣະພາຄສເດັຈໄປບິນທຸບາຕໃນຫມູ່ບ້ານ" ພິກສຸນີກ່າວວ່າ "ໂປຣດຖວາຍຊີ້ນຕ່ອນນີ້ແດ່ພຣະຜູ້ມີພຣະພາຄ" ທ່ານພຣະອຸທາຍີກ່າວວ່າ "ນ້ອງຍິງ ພຣະຜູ້ມີພຣະພາຄຈະຊົງອີ່ມຫນຳດ້ວຍຊີ້ນທີ່ຖວາຍ ຖ້າທ່ານຖວາຍອັນຕຣວາສົກແກ່ອາຕມາ ອາຕມາ ກໍຈະອີ່ມຫນຳດ້ວຍອັນຕຣວາສົກເຊັ່ນກັນ" ພິກສຸນີກ່າວວ່າ "ພຣະຄຸນເຈົ້າ ຄວາມແມ່ນແທ້ຂະນ້ອຍເປັນມາຕຸຄາມຫາລາພໄດ້ຍາກ ທັງຜ້າຜືນນີ້ກໍເປັນຈີວອນຜືນສຸດທ້າຍທີ່ຈະຄົບ ໕ ຜືນ໑

ຂະນ້ອຍຖວາຍບໍ່ໄດ້" ທ່ານພຣະອຸທາຍີກ່າວວ່າ "ນ້ອງຍິງ ປຽບເໝືອນບຸຣຸສໃຫ້ຊ້າງແລ້ວກໍຄວຣສລະ

ສັປຄັບສຳລັບຊ້າງດ້ວຍ ທ່ານກໍເໝືອນກັນ ຖວາຍຕ່ອນຊິ້ນແດ່ພຣະຜູ້ມີພຣະພາຄແລ້ວກໍຈົ່ງສລະອັນຕຣວາສກແກ່ອາຕມາເຖີດ" ຄັນຖືກທ່ານພຣະອຸທາຍີເວົ້າລ້ຳໄລ ນາງຈຶ່ງຖວາຍອັນຕຣວາສກແລ້ວກັບທີ່ພັກ ພວກພິກສຸນີຜູ້ຄອຍຮັບບາຕຣແລະຈີວອນຖາມນາງວ່າ "ອັນຕຣວາສກຂອງເຈົ້າ ຢູ່ທີ່ໃດ" ນາງຈຶ່ງບອກເຣື້ອງນັ້ນໃຫ້ຊາບ ພິກສຸນີທັງຫລາຍຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງຮັບຈີວອນຈາກມືພິກສຸນີລະ ມາຕຸຄາມມີລາພນ້ອຍ" ແລ້ວບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງຮັບຈີວອນຈາກມືພິກສຸນີລະ" ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະອຸທາຍີ ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ພິກສຸນີໃຊ້ຜ້າກາສາຍະ ໕ ຜືນ ຄື (໑) ສັງຂາຕິ ຜ້າຫົ່ມຊ້ອນນອກ (໒) ອຸຕຕຣາສົງຄ໌ ຜ້າຫົ່ມ (໓) ອັນຕຣວາສກ ຜ້ານຸ່ງ

(໔) ອຸທກສາຕິກາ ຜ້າອາບນ້ຳ (໕) ສັງກັຈຈິກາ ຜ້າຮັດຖັນ (ກົງຂາ. ອ. ໓໗໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີວວັຄ ໕. ຈີວອນປຕິຄຄຫນສິກຂາບົທ ພຣະບັນຍັດ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານຮັບຈີວອນຈາກມືພິກສຸນີ ແມ່ນແທ້ບໍ່" ທ່ານພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າ" ພຣະພຸທທອົງຄ໌ຕຣັສຖາມວ່າ "ອຸທາຍີ ນາງເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ພຣະອຸທາຍີທູລຮັບວ່າ "ບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ" ພຣະພຸທທອົງຄ໌ຕຣັສວ່າ "ໂມຂບຸຣຸສ ບຸຣຸສຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມຫລືບໍ່ເໝາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງສຕຣີຜູ້ບໍ່ແມ່ນຍາຕ ທ່ານນັ້ນຮັບຈີວອນຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສ ຢູ່ແລ້ວໃຫ້

ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໐໙] ກໍ ພິກສຸໃດຮັບຈີວອນຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພິກສຸນີອຸບົລວັນນາ ຈົບ

ເຣື້ອງແລກປ່ຽນຈີວອນ

[໕໑໐] ສມັຍນັ້ນ ພວກພິກສຸກຽດຊັງບໍ່ຍອມຮັບຈີວອນແລກປ່ຽນຂອງພວກພິກສຸນີ ພວກພິກສຸນີຕໍາຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພຣະຄຸນເຈົ້າຈຶ່ງບໍ່ຍອມຮັບຈີວອນແລກປ່ຽນຂອງພວກເຮົາລະ” ພວກພິກສຸໄດ້ຍິນຄໍາຕໍາຫນິປະນາມໂພນທະນາຂອງພວກພິກສຸນີຈຶ່ງນໍາຄວາມນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໕. ຈີວອນປຕິຄຄຫນສິກຂາບົທ ສິກຂາບົທວິພັງຄ໌

ຊົງອນຸຍາຕໃຫ້ຮັບຈີວອນແລກປ່ຽນໄດ້

ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສຫທັມມິກ ໕ ຄື ພິກສຸ ພິກສຸນີ ສິກຂມານາ ສາມເນຣ ແລະສາມເນຣີ ແລກປ່ຽນຈີວອນກັນໄດ້ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຮັບສິ່ງຂອງແລກປ່ຽນຂອງສຫທັມມິກ ໕ ເຫລົ່ານີ້ໄດ້” ແລ້ວຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໑໑] ອີກຢ່າງນຶ່ງ ພິກສຸໃດຮັບຈີວອນຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນ

ເຣື້ອງແລກປ່ຽນຈີວອນ ຈົບ

ສິກຂາບົທວິພັງຄ໌

[໕໑໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໔ ຝ່າຍ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະທຳວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ເວັ້ນໄວ້ແຕ່ແລກປ່ຽນ ຄື ຍົກເວັ້ນແລກປ່ຽນກັນ

ພິກສຸຮັບ ຕ້ອງອາບັຕິທຸກກຕ ເພາະພຍາຍາມ໑ ຈີວອນເປັນນິສສັຄຄີຍ໌ ເພາະໄດ້ມາ ຄື ເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າຮັບມາຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ໂດຍບໍ່ໄດ້ແລກປ່ຽນກັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່

ພັນສູາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າຮັບມາຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ໂດຍບໍ່ໄດ້ແລກປ່ຽນກັນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢື້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າຮັບມາຈາກມືພິກສຸນີຜູ້ບໍ່ແມ່ນຍາຕ ໂດຍບໍ່ໄດ້ແລກປ່ຽນກັນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ເຊິງອັນຖະ :

໑ ເພາະຢຽດມືຮັບເປັນຕົ້ນ (ຄຫນຸຕຸຖາຍ ຫຕຸຖຸປຸປສາຣນາທີສຸ ທຸກຸກຕໍ - ວິ. ອ. ໔/໕໑໔/໑໗໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໕. ຈີວອນປຕິຄຄຫນສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ຕິກນິສສັຄຄິຍປາຈິຕຕີຍ໌

[໕໑໖] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຮັບຈີວອນຈາກມື ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຮັບຈີວອນຈາກມື ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ພິກຂຸນີທີ່ບໍ່ແມ່ນຍາຕ ພິກຂຸສຳຄັນວ່າເປັນຍາຕ ຮັບຈີວອນຈາກມື ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ຕິກທຸກກາຕ

ພິກຂຸນີຜູ້ອຸປສົມບົທໃນສົງຂ໌ຝ່າຍດຽວ ພິກຂຸຮັບຈີວອນຈາກມື ຕ້ອງອາບັຕິທຸກກາຕ ເວັ້ນໄວ້ແຕ່ແລກປ່ຽນກັນ

ພິກຂຸນີທີ່ເປັນຍາຕ ພິກຂຸສຳຄັນວ່າບໍ່ແມ່ນຍາຕ ຮັບຈີວອນຈາກມື ຕ້ອງອາບັຕິທຸກກາຕ

ພິກຂຸນີທີ່ເປັນຍາຕ ພິກຂຸບໍ່ແນ່ໃຈ ຮັບຈີວອນຈາກມື ຕ້ອງອາບັຕິທຸກກາຕ

ພິກຂຸນີທີ່ເປັນຍາຕ ພິກຂຸສຳຄັນວ່າເປັນຍາຕ ຮັບຈີວອນຈາກມື ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີວວັຄ ໕. ຈີວອນປຕິຄຄຫນສິກຂາບົທ ນິທານວັຕຖຸ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໑໔] ໑. ພິກຂຸຮັບຈີວອນຂອງພິກຂຸນີຜູ້ເປັນຍາຕ

໒. ພິກຂຸແລກປ່ຽນ ຄື ເອົາຂອງທີ່ມີຄ່ານ້ອຍແລກກັບຂອງມີຄ່າມາກ ຫລືເອົາຂອງທີ່ມີຄ່າມາກແລກກັບຂອງມີຄ່ານ້ອຍ

໓. ພິກຂຸຖືວິສາສະເອົາມາ

໔. ພິກຂຸຂໍຢືມຈີວອນ

໕. ພິກຂຸຮັບບໍຣິຂາຣອື່ນນອກຈາກຈີວອນ

໖. ພິກຂຸຮັບຈີວອນຂອງສິກຂມານາ

໗. ພິກຂຸຮັບຈີວອນຂອງສາມເນຣີ

໘. ພິກຂຸວິກົລຈິຕ

໙. ພິກຂຸຕົ້ນບັນຍັດ

ຈີວອນປຕິຄຄຫນສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີວຣວັຄ ໖. ອັຍຍາຕກວິຍັຕຕິສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໖. ອັຍຍາຕກວິຍັຕຕິສິກຂາບົທ

ວ່າດ້ວຍການອອກປາກຂໍຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ

ເຣື້ອງພຣະອຸປນັນທສັກຍບຸຕຣ

[໕໑໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສັກຍບຸຕຣ ຊ່ຽວຊານການສະແດງທັມມີກຖາ ບຸຕຣເສດຖີຄົນນຶ່ງເຂົ້າໄປຫາທ່ານເຖິງທີ່ຢູ່ ຄັນເຖິງແລ້ວຈຶ່ງໄຫວ້ທ່ານ ນັ່ງ ນະ ທີ່ສົມຄວຣ ລຳດັບນັ້ນ ທ່ານພຣະອຸປນັນທສັກຍບຸຕຣໄດ້ຊີ້ແຈງໃຫ້ບຸຕຣເສດຖີເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ໑ ບຸຕຣເສດຖີນັ້ນອັນທ່ານພຣະອຸປນັນທສັກຍບຸຕຣຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປຕິບຕິ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວຈຶ່ງປວາຣນາທ່ານພຣະອຸປນັນທສັກຍບຸຕຣວ່າ "ທ່ານຜູ້ຈະເຣີນ ພຣະຄຸນເຈົ້າເພິງບອກ ປັຈຈັຍ ໔ ຄື ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣທີ່ທ່ານຕ້ອງການ ຊຶ່ງຜູ້ຂ້າພໍຈະຈັດຫາມາຖວາຍໄດ້"

ເຊີງອັນຖະ :

໑ ຮຽກວ່າ ລີລາການສອນ ຫລື ເທສນາວິທີ ໔ ຄື (໑) ສັນທັສສນາ ຊີ້ແຈງໃຫ້ເຫັນແຈ້ງ (໒) ສມາທປນາ ຊວນໃຫ້ຢາກຮັບເອົາໄປປະຕິບັດ (໓) ສມຸຕເຕຊນາ ປຸກໃຈໃຫ້ອາຈຫານເກັ່ງກ້າ (໔) ສັມປຫັງສນາ ປອບປະໂລມໃຈໃຫ້ສົດຊື່ນເບີກບານ (ມາໃນບາລີມາກແຫ່ງ ວິ. ມຫາ. ໑/໒໒-໒໔,໒໗໐/໑໓-໔,໒໒໒, ວິ. ພິກຸຂຸນີ. ໓/໙໘໓/໙໒-໓, ວິ. ມ. ໔/໒໗,໘໗-໗໐,໑໐໕,໑໓໒,໑໓໙/໒໕,໑໐໖-໙,໑໒໐,໑໔໖,໑໕໐, ວິ. ມ. ໕/໒໙໐,໒໙໖,໒໘໐-໑, ໒໘໘, ໒໗໔,໒໗໘,໓໓໙/໓໘,໔໕,໕໐,໕໒,໖໕,໙໔,໘໑,໑໓໗, ວິ. ຈູ. ໖/໓໓,໑໗໒/໔໓-໔,໒໒໕, ວິ. ຈູ. ໙/໒໖໐, ໒໖໘-໗,໔໐໔,໔໔໕/໒໑,໓໓-໔,໒໓໙,໒໘໒, ທີ. ສີ. ໗/໓໔໔,໓໕໘/໑໔໐,໑໕໐,

ທີ. ມ. ໑໐/໑໖໑-໒, ໑໓໔/໘໗-໓,໑໑໗-໘, ທີ. ປາ. ໑໑/໓໔,໒໓໓/໒໒,໑໘໓, ມ. ມູ. ໑໒/໒໕໒,໒໕໕-໖,໒໘໓/໒໑໕-໒໑໗, ໒໕໓-໔, ມ. ມ. ໑໓/໒໒,໒໘໕,໓໗໑/໑໘,໒໖໑,໓໕໕, ສໍ. ສ. ໑໕/໑໕໒-໓,໑໕໕,໑໘໕,໒໔໑/໑໓໕-໘,໑໘໗, ໒໕໓, ສໍ. ນິ. ໑໖/໒໔໑/໒໖໕, ສໍ. ຂ. ໑໗/໘໑/໗໗, ສໍ. ສຬາ. ໑໘/໑໓໓/໑໑໔, ອງ. ອຕຸຖກ-ນວກ. ໒໓/໑໒,໒໔, ໗໘,໔/໑໕໖,໑໘໐,໒໗໓,໒໓໖, ອງ. ທສກ. ໒໔/໓໓/໑໕໒, ຂຸ. ອຸ. ໒໕/໖໑,໗໑-໕/໒໐໓,໒໑໒-໕, ຂຸ. ອິຕິ. ໒໕/໑໐໔/໓໒໓)

ທ່ານພຣະອຸປນັນທສັກຍບຸຕຣກ່າວວ່າ "ຖ້າໂຍມຕ້ອງການຖວາຍແກ່ອາຕມາ ກໍຈົ່ງຖວາຍຜ້າຜືນນຶ່ງຈາກຜ້າທີ່ໂຍມນຸ່ງຫົ່ມຢູ່ນີ້" ເຂົາກ່າວວ່າ "ຜູ້ຂ້າເປັນກຸລບຸຕຣ ຈະນຸ່ງຜ້າຜືນດຽວຍ່າງກັບບ້ານ ເບິ່ງຄືຈະບໍ່ເໝາະ ນິມົນຕ໌ຖ້າໃຫ້ຜູ້ຂ້າກັບໄປເຖິງບ້ານກ່ອນ ແລ້ວຜູ້ຂ້າຈະສົ່ງຜ້າ ໑ ຜືນຈາກ ໔ ຜືນນີ້
ຫລືຜ້າທີ່ດີກວ່ານີ້ມາຖວາຍ"

ທ່ານພຣະອຸປນັນທສັກຍບຸຕຣເວົ້າເປັນຄັ້ງທີ ໒ ວ່າ "ຖ້າໂຍມຕ້ອງການຖວາຍແກ່ອາຕມາ ກໍຈົ່ງຖວາຍຜ້າຜືນນຶ່ງຈາກຜ້າທີ່ໂຍມນຸ່ງຫົ່ມຢູ່ນີ້" ບຸຕຣເສດຖີກໍຍັງກ່າວປຕິເສທຢູ່ເໝືອນເດີມວ່າ "ຜູ້ຂ້າເປັນກຸລບຸຕຣ ຈະນຸ່ງຜ້າຜືນດຽວຍ່າງກັບບ້ານ ເບິ່ງຄືຈະບໍ່ເໝາະ ນິມົນຕ໌ທ່ານຖ້າໃຫ້ຜູ້ຂ້າກັບໄປເຖິງບ້ານກ່ອນ ແລ້ວຜູ້ຂ້າຈະສົ່ງຜ້າ ໑ ຜືນຈາກ ໔ ຜືນນີ້ ຫລືຜ້າທີ່ດີກວ່ານີ້ມາຖວາຍ" ທ່ານພຣະອຸປນັນທສັກຍບຸຕຣກໍເວົ້າລ້ຳໄລເປັນຄັ້ງທີ ໓ ວ່າ "ຖ້າໂຍມຕ້ອງການຖວາຍແກ່ອາຕມາ ກໍຈົ່ງຖວາຍຜ້າຜືນນຶ່ງຈາກຜ້າທີ່ໂຍມນຸ່ງຫົ່ມຢູ່ນີ້" ແຕ່ເຂົາກໍຄົງເວົ້າບ່າຍບ່ຽງຢູ່ເໝືອນເດີມວ່າ "ຜູ້ຂ້າເປັນກຸລບຸຕຣ ຈະນຸ່ງຜ້າຜືນດຽວຍ່າງກັບບ້ານ ເບິ່ງຄືຈະບໍ່ເໝາະ ນິມົນຕ໌ທ່ານຖ້າໃຫ້ຜູ້ຂ້າກັບໄປເຖິງບ້ານກ່ອນ ແລ້ວຜູ້ຂ້າຈະສົ່ງຜ້າ ໑ ຜືນຈາກ ໔ ຜືນນີ້ຫລືຜ້າທີ່ດີກວ່ານີ້ມາຖວາຍ" ທ່ານພຣະອຸປນັນທສັກຍບຸຕຣກ່າວວ່າ "ທ່ານບໍ່ຕ້ອງການຖວາຍ ກໍຈະປວາຣນາໄປເປັນຫຍັງ ປວາຣນາແລ້ວບໍ່ຖວາຍ ຈະມີປໂຍດຫຍັງ" ເມື່ອຖືກທ່ານພຣະອຸປນັນທສັກຍບຸຕຣເວົ້າລ້ຳໄລ ເຂົາຈຶ່ງຖວາຍຜ້າ ໑ ຜືນ ແລ້ວກັບໄປ ຖືກຊາວບ້ານຖາມວ່າ "ນາຍ ເປັນຫຍັງນຸ່ງຜ້າຜືນດຽວກັບມາລະ" ບຸຕຣເສດຖີນັ້ນຈຶ່ງບອກເຣື້ອງນັ້ນໃຫ້ຊາວບ້ານເຫລົ່ານັ້ນຊາບ ຊາວບ້ານພາກັນຕຳໜິ ປະນາມໂພນທະນາວ່າ "ພຣະສມນະເຊື້ອສາຍສັກຍບຸຕຣ ມັກມາກບໍ່ສັນໂດສ ສມນະເຫລົ່ານີ້ແມ່ນຈະນິມົນຕ໌ຕາມທັມມຽມ ກໍບໍ່ແມ່ນກະທຳໄດ້ງ່າຍ ຈັ່ງໃດເມື່ອບຸຕຣເສດຖີທຳການນິມົນຕ໌ຕາມທັມມຽມ ພຣະສມນະທັງຫລາຍ ກໍຍັງຈະຮັບເອົາຜ້າໄປລະ" ພວກພິກສຸໄດ້ຍິນຊາວບ້ານຕຳໜິ ປະນາມ

ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ສັນໂດສ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະອຸປນັນທສາກຍບຸຕຣຈຶ່ງອອກປາກຂໍຈີວອນຈາກບຸຕຣເສດຖີລະ" ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສາກຍບຸຕຣ ໂດຍປະການຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະບັນຍັດ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານອອກປາກຂໍຈີວອນຈາກບຸຕຣເສດຖີ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ອຸປນັນທະ ບຸຕຣເສດຖີເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ທ່ານພຣະອຸປນັນທ ສາກຍບຸຕຣ ທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ" ພຣະພຸທທອົງຄ໌ຊົງຕຳຫນິວ່າ "ໂມຂບຸຣຸສ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມຫລືບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງ ຄົນຜູ້ບໍ່ແມ່ນຍາຕ ໂມຂບຸຣຸສ ທ່ານນັ້ນອອກປາກຂໍຈີວອນຈາກບຸຕຣເສດຖີ ຜູ້ບໍ່ແມ່ນຍາຕພຸ້ນຫລື ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໑໖] ກໍ ພິກສຸໃດອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງ ຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ສິກຂາບົທນີ້ ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເລື້ອງພຣະອຸປນັນທສາກຍບຸຕຣ ຈົບ

ເລື້ອງພິກສຸຖືກຊິງຈີວອນ

[໕໑໗] ສມັຍນັ້ນ ພິກສຸຫລາຍຮູບຍ່າງທາງໄກຈາກເມືອງສາເກຕໄປກຸງສາວັຕຖີ ໃນຣະຫວ່າງທາງພວກໂຈຣອອກມາປຸ້ນພິກສຸເຫລົ່ານັ້ນ ພວກທ່ານຄິດວ່າ "ການອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງ ພຣະຜູ້ມີພຣະພາຄຊົງຫ້າມໄວ້ແລ້ວ" ຈຶ່ງກຽດຊັງ ບໍ່ຍອມອອກປາກຂໍຈີ

ອອນເລີຍ ເປືອຍກາຍໄປເຖິງກຸງສາວັດຖີ ໄຫວ້ພິກສຸທັງຫລາຍ ພວກພິກສຸຈຶ່ງກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກອາຊີວົກທີ່ພາກັນໄຫວ້ພິກສຸເຫລົ່ານີ້ ເປັນພວກອາຊີວົກທີ່ດີ"

ພຣະອນຸບັນຍັດ

ພິກສຸຊາວເມືອງສາເກຕກ່າວຢ່າງນີ້ວ່າ "ພວກຜູ້ຂ້າບໍ່ແມ່ນອາຊີວົກ ພວກຜູ້ຂ້າເປັນພິກສຸ" ພິກສຸຊາວກຸງສາວັດຖີໄດ້ກ່າວກັບພຣະອຸບາລີວ່າ "ທ່ານອຸບາລີ ນິມົນຕ໌ທ່ານໄຕ່ສວນພິກສຸເຫລົ່ານີ້ເຖີດ" ເມື່ອພິກສຸເຫລົ່ານັ້ນຖືກພຣະອຸບາລີໄຕ່ສວນ ຈຶ່ງເລົ່າເຣື້ອງນັ້ນໃຫ້ຊາບ ຄັນໄຕ່ສວນແລ້ວ ພຣະອຸບາລີແຈ້ງວ່າ "ພວກເປືອຍກາຍເຫລົ່ານີ້ເປັນພິກສຸ ຈົ່ງໃຫ້ຈີວອນແກ່ພວກທ່ານ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງເປືອຍກາຍຍ່າງມາລະ ຕາມທັມດາພິກສຸຕ້ອງໃຊ້ຫຍ້າຫລືໃບໄມ້ປົກປິດຍ່າງມາ ບໍ່ແມ່ນບໍ" ຄັນພິກສຸທັງຫລາຍຕຳໜິພິກສຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ຂໍຈີວອນໄດ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຖືກໂຈຣຊີງຈີວອນ ຫລືຈີວອນຫາຍ ອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕໄດ້ ຖ້າວັດທີ່ພິກສຸໄປເຖິງກ່ອນ ມີຈີວອນປະຈຳວິຫາຣ ຜ້າປູຕຽງ ຜ້າປູພື້ນຫລືຜ້າປອກເສື່ອຂອງສົງຂ໌ ກໍເພິ່ງຖືເອົາຜ້າຂອງສົງຂ໌ໄປຫົ່ມໂດຍຕັ້ງໃຈວ່າ 'ເມື່ອເຮົາໄດ້ຈີວອນແລ້ວຈະນຳມາຄືນ' ດັ່ງນີ້ກໍຄວຣ ຖ້າບໍ່ມີຈີວອນປະຈຳວິຫາຣ ຜ້າປູຕຽງ ຜ້າປູພື້ນຫລືຜ້າປອກເສື່ອຂອງສົງຂ໌ ຄວຣໃຊ້ຫຍ້າຫລືໃບໄມ້ປົກປິດມາ ອີກຢ່າງນຶ່ງ ພິກສຸບໍ່ເພິ່ງເປືອຍກາຍຍ່າງມາ ພິກສຸໃດເປືອຍກາຍຍ່າງມາ ຕ້ອງອາບັຕິທຸກກຕ" ແລ້ວຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໑໗] ອີກຢ່າງນຶ່ງ ພິກສຸໃດອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ສມັຍໃນຂໍ້ນັ້ນ ຄື ພິກສຸຖືກຊີງຈີວອນໄປ ຫລືຈີວອນສູນຫາຍ ນີ້ເປັນສມັຍໃນຂໍ້ນັ້ນ

ເຣື້ອງພິກສຸຖືກຊີງຈີວອນ ຈົບ

ສິກຂາບົທວິພັງຄ໌

[໕໑໙] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸສຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ພິກສຸຖືກຊົງຈີວອນໄປ ໄດ້ແກ່ ຈີວອນຂອງພິກສຸທີ່ພຣະຣາຊາ ໂຈຣ ນັກເລງຫລືຄົນບາງພວກຊົງເອົາໄປ

ທີ່ຊື່ວ່າ ຈີວອນສູນຫາຍ ໄດ້ແກ່ ຈີວອນຂອງພິກສຸຖືກໄຟໄຫມ້ ນ້ຳພັດ ຫນູຫລືປວກກັດ ຫລືທີ່ໃຊ້ສອຍຈົນເກົ່າ

ພິກສຸອອກປາກຂໍນອກສມັຍ ຕ້ອງອາບັຕິທຸກກຕເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າອອກປາກຂໍຈາກຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ນອກສມັຍ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າອອກປາກຂໍຈາກຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ນອກສມັຍ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າອອກປາກຂໍຈາກຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ນອກສມັຍ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີຣວັຄ ໖. ອັຢຢາຕກວິຢັຢຕິສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໔໐] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຂໍຈີວອນນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຂໍຈີວອນນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ຂໍຈີວອນນອກສມັຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກທຸກກຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຂໍຈີວອນນອກສມັຍ ຕ້ອງອາບັຕິທຸກກຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ຂໍຈີວອນນອກສມັຍ ຕ້ອງອາບັຕິທຸກກຕ
ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສໍາຄັນວ່າເປັນຍາຕ ຂໍຈີວອນນອກສມັຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໒໑] ໑. ພິກສຸອອກປາກຂໍໃນສມັຍ

໒. ພິກສຸອອກປາກຂໍຈາກຍາຕ

໓. ພິກສຸອອກປາກຂໍຈາກຄນປວາຣນາ

໔. ພິກສຸອອກປາກຂໍເພື່ອພິກສຸຮູບອື່ນ

໕. ພິກສຸຊື້ມາດ້ວຍຊັພຍ໌ຂອງຕົນ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ອັຍຍາຕກວິຍຍັຕຕິສິກຂາບົທທີ ໖ ຈົບ

ພຣະວິນັຍປີດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໗. ຕຕຸຕຕຣິສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໗. ຕຕຸຕຕຣິສິກຂາບົທ

ວ່າດ້ວຍການອອກປາກຂໍຈີວອນເກີນ

ເຣື້ອງພຣະສັພພັຄຄີຍ໌

[໕໒໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເຂົ້າໄປຫາພິກສຸທີ່ຖືກໂຈຣຊີງຈີວອນໄປແລ້ວກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ ພິກສຸທີ່ຖືກໂຈຣຊີງຈີວອນໄປຫລືຈີວອນສູນຫາຍ ອອກປາກຂໍຈີວອນຈາກຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕໄດ້ ພວກທ່ານຈົ່ງຂໍຈີວອນເຖີດ" ພິກສຸເຫລົ່ານັ້ນກ່າວວ່າ "ບໍ່ລະ ຂນ້ອຍ ພວກຜູ້ຂ້າໄດ້ຈີວອນຄືນແລ້ວ" ພວກພິກສຸສັພພັຄຄີຍ໌ກ່າວວ່າ "ພວກເຮົາຈະອອກປາກຂໍເພື່ອພວກທ່ານ" ພິກສຸເຫລົ່າ

ນັ້ນກ່າວວ່າ "ນິມົນຕ໌ອອກປາກຂໍເຖີດ ຂນ້ອຍ" ຕໍ່ຈາກນັ້ນ ພວກພິກສຸສັພພັຄຄີຍ໌ເຂົ້າໄປຫາພວກຄຣືຫັສຖ໌ກ່າວວ່າ "ທ່ານທັງຫລາຍ ພວກພິກສຸທີ່ຖືກໂຈຣຊີງຈີວອນໄປມາເຖີງແລ້ວ ພວກທ່ານຈົ່ງຖວາຍຈີວອນແກ່ພວກທ່ານ" ແລ້ວອອກປາກຂໍຈີວອນເປັນອັນມາກ

ກໍສມັຍນັ້ນ ຊາຍຄົນນຶ່ງນັ່ງຢູ່ໃນທີ່ປະຊຸມບອກຊາຍອີກຄົນນຶ່ງວ່າ "ພວກພຣະຄຸນເຈົ້າທີ່ຖືກໂຈຣຊີງຈີວອນໄປມາເຖີງແລ້ວ ຂ້າພະເຈົ້າໄດ້ຖວາຍຈີວອນທ່ານເຫລົ່ານັ້ນໄປແລ້ວ" ຊາຍແມ່ນນັ້ນຕອບວ່າ "ຂ້າພະເຈົ້າກໍໄດ້ຖວາຍໄປແລ້ວ" ຊາຍອີກຄົນນຶ່ງກໍກ່າວເຊັ່ນດຽວກັນວ່າ "ແມ່ນຂ້າພະເຈົ້າກໍໄດ້ຖວາຍໄປແລ້ວ" ພວກເຂົາຕຳໜິ ປະນາມ ໂພນທະນາວ່າ "ຈົ່ງໃດພຣະສມນະເຊື້ອສາຍສຸກາຍບຸຕຣຈຶ່ງ

ບໍ່ຮູ້ຈັກປະມານ ອອກປາກຂໍຈີວອນມາກມາຍລະ ພວກທ່ານຈະຄ້າຜ້າຫລືຈັດຕັ້ງຮ້ານຂາຍຜ້າຊັ້ນບໍ່" ພວກພິກສຸໄດ້ຍິນຄຳຕຳໜິ ປະນາມ ໂພນທະນາຂອງຊາວບ້ານ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈົ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງບໍ່ຮູ້ຈັກປະມານ ອອກປາກຂໍຈີວອນເປັນອັນມາກລະ" ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານບໍ່ຮູ້ຈັກປະມານ ຂໍຈີວອນເປັນອັນມາກແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈົ່ງໃດພວກທ່ານຈຶ່ງບໍ່ຮູ້ຈັກປະມານຂໍຈີວອນຈຳ ນວນຫລາຍລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໑] ຖ້າຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ນຳຈີວອນຈຳນວນຫລາຍມາປວາຣນາພິກສຸນັ້ນ໑ ພິກສຸນັ້ນເພິງຍິນດີຈີວອນມີອຸຕຕຣາສົງຄ໌ແລະອັນຕຣວາສກເປັນຢ່າງຫລາຍຈາກຈີວອນທີ່ເຂົານຳມານັ້ນ ຖ້າຍິນດີເກີນກວ່ານັ້ນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ພຫູຫີ ຈີວເຣຫີ ອພິຫຕຸຖຸໍ ປວາເຣຍຸຍ ທີ່ແປວ່າ "ນໍາຈີວອນຈໍານວນຫລາຍມາປວາຣນາ"
ເປັນໄປຕາມກົດນີ້ : ອພິຫຕຸຖຸໍ
ອພິ+ຫຣ+ຕຸວາ (ຕຸວາປັຈຈັຍ) ໂດຍສູຕຣວ່າ ກິຈຸຈຕກາຣຕຸໍຕຸວາຫິນຍຸຈ ຣຕຸຖຸຣຕຸຖຸໍຣຕຸຖາເຫສາ -
ຮູບ. ໕໐໑ (ແປງ ຕ ໃນກິຈຈປັຈຈັຍເປັນ ຕຸຖ ແປງ ຕຸໍ-ຕຸວາ ປັຈຈັຍເປັນຕົ້ນເປັນ ຕຸຖຸໍ ຕຸຖ)
ອັນຖະກຖາວິນັຍກໍອທິບາຍທໍານອງນີ້ວ່າ "ອພິຫຕຸຖຸໍ ປວາເຣຍຸຍາ"ຕິ ອພິຫຣິຕຸວາ ປວາເຣຍຸຍາຕິ
ອຕຸໂຖ. (ຄໍາວ່າ ອພິຫຕຸຖຸໍ ປວາເຣຍຸຍາ ມີອທິບາຍວ່ານໍາມາປວາຣນາ ວິ. ອ. ໒/໕໒໔-໔/໑໗໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີຣວັຄ ໗. ຕຕຸຕຣິສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໒໔] ຄໍາວ່າ ຖ້າ. . . ພິກສຸນັ້ນ ໄດ້ແກ່ ພິກສຸຜູ້ຖືກໂຈຣຊີງຈີວອນໄປ
ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ
ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸສຜູ້ຄອງເຮືອນ
ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ
ຄໍາວ່າ ຈີວອນຈໍານວນຫລາຍ ຄື ຈີວອນຫລາຍຜືນ
ຄໍາວ່າ ນໍາ. . . ມາປວາຣນາ ຄື ນໍາມາປວາຣນາວ່າ ທ່ານຈົ່ງຮັບຈີວອນຕາມທີ່ປຣາຖນາເຖີດ
ຄໍາວ່າ ພິກສຸນັ້ນເພິງຍິນດີຈີວອນມີອຸຕຕຣາສົງຄ໌ແລະອັນຕຣວາສກເປັນຢ່າງຫລາຍຈາກຈີວອນທີ່ເຂົາ ນໍາມານັ້ນ ຄວາມວ່າ ຖ້າຈີວອນຫາຍ ໓ ຜືນ ທ່ານເພິງຍິນດີ ໒ ຜືນ ຈີວອນຫາຍ ໒ ຜືນ ເພິງ ຍິນດີ ໑ ຜືນ ຫາຍຜືນດຽວບໍ່ເພິງຍິນດີ
ຄໍາວ່າ ຖ້າຍິນດີເກີນກວ່ານັ້ນ ຄວາມວ່າ ພິກສຸອອກປາກຂໍເກີນກວ່ານັ້ນ ຕ້ອງອາບັຕິທຸກກຕເພາະ ພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈໍາຕ້ອງສລະແກ່ສົງຂ໌ ແກ່ຄນະ ຫລືແກ່ ບຸຄຄົລ
ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ແລ້ວອອກປາກຂໍເກີນກຳຫນົດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍ ຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ແລ້ວອອກປາກຂໍເກີນກຳຫນົດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ແລ້ວອອກປາກຂໍເກີນກຳຫນົດ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໔໕] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຂໍຈີວອນເກີນກຳຫນົດຕ້ອງອາບັຕິນິສ

ສັຄຄີຍປາຈິຕຕີຍ໌
ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າເປັນຍາຕ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິນິສສັຄຄີຍ ປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີວຣວັຄ ໗. ຕຕຸຕຕຣິສິກຂາບົທ ອນາປັຕຕິວາຣ

ທຸກກຸກຕ
ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິທຸກກຕ
ຄຣືຫັສຖ໌ທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ຂໍຈີວອນເກີນກໍາຫນົດ ຕ້ອງອາບັຕິທຸກກຕ
ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສໍາຄັນວ່າເປັນຍາຕ ຂໍຈີວອນເກີນກໍາຫນົດ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໖] ໑. ພິກສຸທີ່ຮັບເອົາໄປເພາະຄິດວ່າ ຈະນໍາຈີວອນທີ່ເຫລືອມາຄືນ
໒. ພິກສຸທີ່ຄຣືຫັສຖ໌ຖວາຍດ້ວຍຖ້ອຍຄໍາວ່າ "ຈີວອນທີ່ເຫລືອເປັນຂອງທ່ານຮູບດຽວ"
໓. ພິກສຸທີ່ຄຣືຫັສຖ໌ບໍ່ໄດ້ຖວາຍເພາະຈີວອນຖືກຊີງໄປ
໔. ພິກສຸທີ່ຄຣືຫັສຖ໌ບໍ່ໄດ້ຖວາຍເພາະຈີວອນສູນຫາຍ
໕. ພິກສຸຜູ້ຍິນດີຈີວອນທີ່ຍາຕຖວາຍ
໖. ພິກສຸຜູ້ຍິນດີຈີວອນທີ່ທາຍົກປວາຣນາຖວາຍ
໗. ພິກສຸຜູ້ຍິນດີຈີວອນທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ
໘. ພິກສຸວິກົລຈິຕ
໙. ພິກສຸຕົ້ນບັນຍັດ

ຕຕຸຕຕຣິສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີວຣວັຄ ໘. ອຸປັກຂຕສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

ໆ. ອຸປັກຂຕສິກຂາບົທ

ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນ

ເຣື້ອງພຣະອຸປນັນທສູາກຍບຸຕຣ

[໕໔ໆ] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ຊາຍຄົນນຶ່ງກ່າວກັບພັຣຍາວ່າ "ຂ້ອຍຈະນິມົນຕ໌ພຣະຄຸນເຈົ້າ ອຸປນັນທະໃຫ້ຄອງຈີວອນ" ພິກສຸຜູ້ຖືທຽວບິນທບາຕເປັນວັຕຣຮູບນຶ່ງໄດ້ຍິນຊາຍຄົນນັ້ນກ່າວ ຈຶ່ງ ເຂົ້າໄປຫາທ່ານພຣະອຸປນັນທສູາກຍບຸຕຣເຖິງທີ່ຢູ່ແລ້ວກ່າວວ່າ "ທ່ານອຸປນັນທະ ທ່ານມີບຸນມາກ ຊາຍຄົນນຶ່ງໃນທີ່ພຸ້ນກ່າວກັບພັຣຍາວ່າ 'ຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ທ່ານ ພຣະອຸປນັນທະກ່າວວ່າ "ແມ່ນແລ້ວ ຂນ້ອຍ ເຂົາເປັນອຸປັຕຖາກຂອງຜູ້ຂ້າເອງ" ຕໍ່ມາ ທ່ານພຣະ ອຸປນັນທສູາກຍບຸຕຣໄດ້ເຂົ້າໄປຫາຜູ້ນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວວ່າ "ໄດ້ຊາບວ່າ ໂຍມຕ້ອງ ກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນແມ່ນແທ້ບໍ" ເຂົາຕອບວ່າ "ຈິງຄຮັບທ່ານ ຜູ້ຂ້າມີຄວາມຄິດ ວ່າຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ທ່ານພຣະອຸປນັນທະກ່າວວ່າ "ຫາກທ່ານ ຕ້ອງ ກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນ ກໍຈົ່ງໃຫ້ຄອງຈີວອນຊນິດນີ້ ຈີວອນທີ່ອາຕມາບໍ່ໃຊ້ ແມ່ນນິມົນຕ໌ອາຕມາໃຫ້ຄອງກໍຈະມີປໂຍດຫຍັງ" ເທື່ອນັ້ນ ບຸຣຸສູນັ້ນຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສູາກຍບຸຕຣມັກມາກ ບໍ່ສັນໂດສູ ຈະນິມົນຕ໌ໃຫ້ຄອງຈີວອນ ບໍ່ ແມ່ນຈະເຮັດໄດ້ງ່າຍ ຈັ່ງໃດພຣະຄຸນເຈົ້າອຸປນັນທສູາກຍບຸຕຣ ຊຶ່ງເຮົາບໍ່ໄດ້ປວາຣນາໄວ້ກ່ອນຈຶ່ງ ເຂົ້າມາກໍາ ຫນົດຊນິດຈີວອນລະ" ພວກພິກສຸໄດ້ຍິນຄໍາຕຳຫນິ ປະນາມ ໂພນທະນາຂອງ ຊາວບ້ານ ບັນດາພິກສຸຜູ້ມັກນ້ອຍ ສັນໂດສູ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດ ທ່ານພຣະອຸປນັນທ ສູາກຍບຸຕຣ ຊຶ່ງເຂົາບໍ່ໄດ້ປວາຣນາໄວ້ກ່ອນຈຶ່ງເຂົ້າໄປຫາຄຣືຫັສຖ໌ກໍາຫນົດ ຊນິດຈີວອນລະ" ຄັນພິກ ສຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສູາກຍບຸຕຣໂດຍປະກາຣຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສູາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ແຕ່ທ່ານເຂົ້າໄປ ຫາຄຣືຫັສຖ໌ແລ້ວກໍາຫນົດຊນິດຈີວອນ ແມ່ນແທ້ບໍ" ພຣະອຸປນັນທສູາກຍບຸຕຣທູລຮັບວ່າ "ແມ່ນ

ແທ້ພຣະພຸທ໌ເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ອຸປນັນທະ ເຂົາເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ທ່ານພຣະອຸປນັນທະທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທ໌ເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳໜິວ່າ "ໂມຂບຸຣຸສ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມຫລືບໍ່ເໝາະສົມຂອງທີ່ມີຢູ່ຫລືບໍ່ມີຂອງຄົນຜູ້ບໍ່ແມ່ນຍາຕ ໂມຂບຸຣຸສທ່ານນັ້ນ ຊຶ່ງພວກເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວກຳໜົດຊນິດຈີວອນ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໗] ກໍ ຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ກະກຽມຊັພຍ໌ເປັນຄ່າຈີວອນ ເຈາະຈົງພິກສຸວ່າ "ເຮົາຈະຊື້ຈີວອນດ້ວຍຊັພຍ໌ເປັນຄ່າຈີວອນນີ້ແລ້ວ ນິມົນຕ໌ພິກສຸຊື່ນີ້ໃຫ້ຄອງຈີວອນ" ຖ້າພິກສຸນັ້ນຊຶ່ງເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປກຳໜົດຊນິດຈີວອນໃນທີ່ທີ່ເຂົາຕຽມຈີວອນໄວ້ເພາະຕ້ອງການຈີວອນດີວ່າ "ດີລະ ທ່ານຈົ່ງຊື້ຈີວອນເຊັ່ນນັ້ນເຊັ່ນນີ້ດ້ວຍຊັພຍ໌ເປັນຄ່າຈີວອນນີ້ແລ້ວໃຫ້ອາຕມາຄອງເຖີດ" ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີວອັຄ ໗. ອຸປັກຂຕສິກຂາບົທ ສິກຂາ ບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໔໘] ຄຳວ່າ ກໍ. . . ເຈາະຈົງພິກສຸ ໄດ້ແກ່ ເພື່ອປໂຍດຂອງພິກສຸ ຄື ມຸ່ງສະເພາະພິກສຸປຣາຖນາຈະໃຫ້ພິກສຸຄອງຈີວອນ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸສຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຊັພຍ໌ເປັນຄ່າຈີວອນ ໄດ້ແກ່ ເງິນ ທອງ ແກ້ວມຸກດາ ແກ້ວມະນີ ແກ້ວຕາແມວ ແກ້ວຜລຶກ

ຜ້າ ດ້າຍຫລືຝ້າຍ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ໃຫ້. . . ຄອງ ຄື ຖວາຍ

ຄຳວ່າ ຖ້າພິກສຸນັ້ນ. . . ໃນທີ່ທີ່ເຂົາຕຽມຈີວອນໄວ້ ໄດ້ແກ່ ພິກສຸຮູບທີ່ເຂົາກະກຽມຊັພຍ໌ເປັນຄ່າຈີວອນໄວ້ຖວາຍໂດຍສະເພາະ

ຄຳວ່າ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຄື ທາຍົກບໍ່ໄດ້ກ່າວໄວ້ກ່ອນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈີວອນຊນິດໃດ ຜູ້ຂ້າຈະຊື້ຈີວອນຊນິດໃດຖວາຍທ່ານ"

ຄຳວ່າ ເຂົ້າໄປ ຄື ໄປເຖິງເຮືອນແລ້ວເຂົ້າໄປຫາທີ່ໃດທີ່ນຶ່ງ

ຄຳວ່າ ກຳຫນົດຊນິດຈີວອນ ຄື ກຳຫນົດວ່າ ຂໍໃຫ້ເປັນຜ້າຍາວ ກວ້າງ ເນື້ອແໜ້ນຫລືເນື້ອລະອຽດ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ເຊັ່ນນັ້ນເຊັ່ນນີ້ ຄື ຍາວຫລືກວ້າງ ເນື້ອແໜ້ນຫລືເນື້ອລະອຽດ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ຈົ່ງໃຫ້ຄອງ ຄື ຈົ່ງຖວາຍ

ຄຳວ່າ ເພາະຕ້ອງການຈີວອນດີ ຄື ຕ້ອງການຜ້າເນື້ອດີຫລືຜ້າທີ່ມີຣາຄາແພງ ເຂົາຊື້ຈີວອນຜືນຍາວກວ້າງ ເນື້ອແໜ້ນຫລືເນື້ອລະອຽດຕາມຄຳຂອງພິກສຸນັ້ນ ຕ້ອງອາບັຕິທຸກກຕເພາະພຍາຍາມ ຈີວອນເປັນນິສສັຄຄິຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄິຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄິຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະ

ໃຫ້ດ້ວຍປັຕຕິກັມວາຈາ ວ່າ "ທ່ານ ຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກໍາຫນົດຂໍນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກໍາຫນົດຂໍນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍ ກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໖໐] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ແລ້ວກໍາຫນົດຂໍນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ແລ້ວກໍາຫນົດຂໍນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສໍາຄັນວ່າເປັນຍາຕ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ແລ້ວກໍາຫນົດຂໍນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ທຸກກຸກົຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສໍາຄັນວ່າບໍ່ແມ່ນຍາຕ ເຂົ້າໄປກໍາຫນົດຂໍນິດຈີວອນ ຕ້ອງອາບັຕິທຸກກົຕ

ຄຣືຫັສຖ໌ທີ່ເປັນຍາດ ພິກສຸບໍ່ແນ່ໃຈ ເຂົ້າໄປກຳຫນົດຊນິດຈີວອນ ຕ້ອງອາບັຕິທຸກກດ
ຄຣືຫັສຖ໌ທີ່ເປັນຍາດ ພິກສຸສຳຄັນວ່າເປັນຍາດ ເຂົ້າໄປກຳຫນົດຊນິດຈີວອນ ບໍ່ຕ້ອງອາບັຕິ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໓໑] ໑. ພິກສຸຂໍຈາກຄຣືຫັສຖ໌ທີ່ເປັນຍາດ

໒. ພິກສຸຂໍຈາກຄຣືຫັສຖ໌ທີ່ປວາຣນາ

໓. ພິກສຸຂໍເພື່ອພິກສຸຮູບອື່ນ

໔. ພິກສຸຊື້ມາດ້ວຍຊັພຍ໌ຂອງຕົນ

໕. ພິກສຸຜູ້ເມື່ອຄຣືຫັສຖ໌ຜູ້ຕ້ອງກາຣຊື້ຈີວອນຣາຄາແພງ ຕົນເອງກັບໃຫ້ຊື້ຈີວອນຣາຄາຖືກ

໖. ພິກສຸວິກົລຈິດ

໗. ພິກສຸຕົ້ນບັນຍັດ

ອຸປັກຂຕສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໘. ທຸຕິຍອຸປັກຂຕສິກຂາບົທ ນິທານວັຕຖຸ

໑. ຈີຣວັຄ

໘. ທຸຕິຍອຸປັກຂຕສິກຂາບົທ

ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນ ຂໍ້ທີ ໔

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໓໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ບຸຣຸສຄົນນຶ່ງກ່າວກັບບຸຣຸສອີກຄົນນຶ່ງວ່າ "ຜູ້ຂ້າຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ແມ່ນບຸຣຸສຄົນນັ້ນກໍກ່າວວ່າ "ຜູ້ຂ້າກໍຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ພິກສຸຜູ້ຖືທຽວບິນທບາຕເປັນວັຕຣຮູບນຶ່ງໄດ້ຍິນກາຣສົນທນາຂອງບຸຣຸສເຫລົ່ານັ້ນຈຶ່ງເຂົ້າໄປຫາທ່ານພຣະອຸປນັນທະເຖິງທີ່ຢູ່ແລ້ວກ່າວວ່າ "ທ່ານອຸປນັນທະ ທ່ານມີບຸນ

ມາກ ບຸຣຸສຄົນນຶ່ງໃນທີ່ພຸ້ນກ່າວກັບບຸຣຸສອີກຄົນນຶ່ງວ່າ 'ຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ' ແມ່ນບຸຣຸສຄົນນັ້ນກໍກ່າວວ່າ 'ຜູ້ຂ້າກໍຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ທ່ານພຣະອຸປນັນທະກ່າວວ່າ "ແມ່ນແລ້ວ ຂນ້ອຍ ບຸຣຸສທັງສອງເປັນອຸປັຕຖາກຂອງຜູ້ຂ້າເອງ" ຕໍ່ມາ ທ່ານພຣະອຸປນັນທສາກຍບຸຕຣໄປຫາບຸຣຸສທັງສອງເຖິງທີ່ຢູ່ຄັນເຖິງແລ້ວຈຶ່ງກ່າວວ່າ "ໄດ້ຊາບວ່າ ໂຍມທັງສອງຕ້ອງກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນຫລາຍຜືນ ແມ່ນແທ້ບໍ່" ບຸຣຸສທັງສອງຕອບວ່າ "ຈິງຄຣັບທ່ານ ພວກຜູ້ຂ້າມີຄວາມຄິດຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະ ໃຫ້ຄອງຈີວອນ"

ທ່ານພຣະອຸປນັນທະກ່າວວ່າ "ຖ້າທ່ານທັງສອງຕ້ອງກາຣຈະນິມົນຕ໌ອາຕມາໃຫ້ຄອງຈີວອນ ກໍຈົ່ງໃຫ້ຄອງຈີວອນຊນິດນີ້ ຈີວອນທີ່ອາຕມາບໍ່ໃຊ້ແມ່ນນິມົນຕ໌ອາຕມາໃຫ້ຄອງກໍຈະມີປໂຍດຫຍັງ" ບຸຣຸສທັງສອງຕໍາໜິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສາກຍບຸຕຣ ມັກມາກ ບໍ່ສັນໂດສຈະນິມົນຕ໌ໃຫ້ຄອງຈີວອນ ກໍເຮັດໄດ້ຍາກ ຈັ່ງໃດພຣະຄຸນເຈົ້າອຸປນັນທະ ຊຶ່ງພວກເຮົາບໍ່ໄດ້ປວາຣນາໄວ້ກ່ອນຈຶ່ງມາກໍາໜົດຊນິດຈີວອນລະ" ພວກພິກສຸໄດ້ຍິນບຸຣຸສທັງສອງຕໍາໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣຊຶ່ງເຂົາບໍ່ໄດ້ປວາຣນາໄວ້ກ່ອນຈຶ່ງເຂົ້າໄປຫາພວກຄຣືຫັສຖ໌ກໍາໜົດຈີວອນລະ" ຄັນພິກສຸເຫລົ່ານັ້ນ ຕໍາໜິທ່ານອຸປນັນທສາກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ແຕ່ທ່ານໄປກໍາໜົດຊນິດຈີວອນ ແມ່ນແທ້ບໍ່" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ອຸປນັນທະ ຄົນເຫລົ່ານັ້ນເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ພຣະອຸປນັນທະທູລຕອບວ່າ "ຄົນເຫລົ່ານັ້ນບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕໍາໜິວ່າ "ໂມຂບຸຣຸສ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມຫລືບໍ່ເໝາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງຄົນຜູ້ບໍ່ແມ່ນຍາຕ ໂມຂບຸຣຸສ ທ່ານນັ້ນຊຶ່ງເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວກໍາໜົດຊນິດຈີວອນໂມຂບຸຣຸສ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໖໖] ກໍ ຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ໔ ຄົນ ກະກຽມຊັພຍ໌ເປັນຄ່າຈີວອນຄົນລະຜືນ ເຈາະຈົງພິກສຸວ່າ "ພວກເຮົາຈະຊື້ຈີວອນຄົນລະຜືນດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ແລ້ວນີມົນຕ໌ພິກສຸຊື່ນີ້ໃຫ້ຄອງຈີວອນຫລາຍຜືນ" ຖ້າພິກສຸນັ້ນຊຶ່ງພວກເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປກຳຫນົດຊນິດຈີວອນໃນທີ່ທີ່ເຂົາຕຽມຈີວອນໄວ້ ເພາະຕ້ອງການຈີວອນດີ ວ່າ "ດີລະ ທ່ານທັງສອງຈົ່ງຮວມກັນຊື້ຈີວອນເຊັ່ນນັ້ນເຊັ່ນນີ້ ດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ ແລ້ວນິມົນຕ໌ອາຕມາ ໃຫ້ຄອງເຖີດ" ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສູາກຍບຸຕຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໙. ທຸຕິຍອຸປັກຂຕສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໖໔] ຄຳວ່າ ກໍ. . . ເຈາະຈົງພິກສຸ ໄດ້ແກ່ ເພື່ອປໂຍດຂອງພິກສຸ ຄື ມຸ່ງສະເພາະພິກສຸ ປຣາຖນາຈະໃຫ້ພິກສຸຄອງຈີວອນ

ຄຳວ່າ ໔ ຄົນ ຄື ມີ ໔ ຄົນ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາ ຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸສູຜູ້ຄອງເຮືອນ

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ

ທີ່ຊື່ວ່າ ຊັພຍ໌ເປັນຄ່າຈີວອນ ໄດ້ແກ່ ເງິນ ທອງ ແກ້ວມຸກດາ ແກ້ວມນີ ແກ້ວຕາແມວ ແກ້ວຜລຶກ ຜ້າ ດ້າຍຫລືຝ້າຍ

ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ

ຄຳວ່າ ໃຫ້. . . ຄອງ ຄື ຖວາຍ

ຄຳວ່າ ຖ້າພິກສຸນັ້ນ. . . ໃນທີ່ທີ່ເຂົາຕຽມຈີວອນໄວ້ ໄດ້ແກ່ ພິກສຸຮູບທີ່ເຂົາທັງສອງກະກຽມຊັພຍ໌ເປັນຄ່າຈີວອນໄວ້ຖວາຍໂດຍສະເພາະ

ຄຳວ່າ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຄື ທາຍົກທັງສອງບໍ່ໄດ້ກ່າວໄວ້ກ່ອນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈີວອນຊນິດໃດ ພວກເຮົາຈະຊື້ຈີວອນຊນິດໃດຖວາຍທ່ານ"
ຄຳວ່າ ເຂົ້າໄປ ຄື ໄປເຖິງເຮືອນແລ້ວເຂົ້າໄປຫາທີ່ໃດທີ່ນຶ່ງ
ຄຳວ່າ ກຳຫນົດຊນິດຈີວອນ ຄື ກຳຫນົດວ່າ ຂໍໃຫ້ເປັນຜ້າຍາວ ກວ້າງ ເນື້ອແຫນ້ນ ຫລືເນື້ອລະອຽດ
ຄຳວ່າ ດ້ວຍຊັພຍ໌ເປັນຄ່າຈີວອນຄົນລະຜືນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ
ຄຳວ່າ ເຊັ່ນນັ້ນເຊັ່ນນີ້ ຄື ຍາວຫລືກວ້າງ ເນື້ອແຫນ້ນຫລືເນື້ອລະອຽດ
ຄຳວ່າ ຊື້ ໄດ້ແກ່ ແລກປ່ຽນ
ຄຳວ່າ ຈົ່ງໃຫ້ຄອງ ຄື ຈົ່ງຖວາຍ
ຄຳວ່າ ທ່ານທັງສອງຈງຮວມກັນ ຄື ຄົນ ໔ ຄົນຮ່ວມກັນ
ຄຳວ່າ ເພາະຕ້ອງການຈີວອນດີ ຄື ຕ້ອງການຜ້າເນື້ອດີ ຫລືຜ້າຣາຄາແພງ ເຂົາຊື້ຈີວອນຜືນຍາວກວ້າງ ເນື້ອແຫນ້ນຫລືເນື້ອລະອຽດຕາມຄຳພິກສຸນັ້ນ ຕ້ອງອາບັຕິທຸກກຕເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຊ໌ ແກ່ຄນະຫລືແກ່ບຸຄຄົລ
ພິກສຸທັງຫລາຍ ພິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຊ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຊ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ ສົງຊ໌"
ຄັນສລະແລ້ວເພິ່ງສະແດງອາບັຕິ
ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຊ໌ ຖ້າສົງຊ໌ພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ

ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ
ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຂນ້ອຍ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໖໕] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາພວກຄຣືຫັສຖ໌ແລ້ວກຳຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາພວກຄຣືຫັສຖ໌ແລ້ວກຳຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາພວກຄຣືຫັສຖ໌ແລ້ວກຳຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ເຂົ້າໄປກຳຫນົດຊນິດຈີວອນ ຕ້ອງອາບັຕິທຸກກຕ
ຄຣືຫັສຖ໌ທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ເຂົ້າໄປກຳຫນົດຊນິດຈີວອນ ຕ້ອງອາບັຕິທຸກກຕ
ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ເຂົ້າໄປກຳຫນົດຊນິດຈີວອນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີວອັຄ ໘. ທຸຕິຍອຸປັກຂຕສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໖໘] ໑. ພິກສຸຂໍຈາກຄຣືຫັສຖ໌ທີ່ເປັນຍາຕ

໒. ພິກສຸຂໍຈາກຄຣືຫັສຖ໌ທີ່ປວາຣນາ

໓. ພິກສຸຂໍເພື່ອພິກສຸຮູບອື່ນ

໔. ພິກສຸຊື້ມາດ້ວຍຊັພຍ໌ຂອງຕົນ

໕. ພິກສຸຜູ້ເມື່ອພວກຄຣືຫັສຖ໌ຕ້ອງການຊື້ຈີວອນຣາຄາແພງ ຕົນເອງກັບໃຫ້ຊື້ຈີວອນຣາຄາຖືກ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ທຸຕິຍອຸປັກຂຕສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີວວັຄ ໑໐. ຣາຊສິກຂາບົທ ນິທານວັຕຖຸ

໑. ຈີວອນວັຄ

໑໐. ຣາຊສິກຂາບົທ

ວ່າດ້ວຍຊັພຍ໌ເປັນຄ່າຈີວອນທີ່ພຣະຣາຊາເປັນຕົ້ນໃຫ້ທູຕນຳມາຖວາຍ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໕໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ມຫາອມາຕຍ໌ອຸປັຕຖາກຂອງທ່ານພຣະອຸປນັນທສາກຍບຸຕຣສົ່ງທູຕໄປຖວາຍຊັພຍ໌ເປັນຄ່າຈີວອນ ແລະສັ່ງວ່າ "ທ່ານຈົ່ງເອົາຊັພຍ໌ ເປັນຄ່າຈີວອນນີ້ຊື້ຈີວອນແລ້ວນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງ" ຕໍ່ມາ ທູຕນັ້ນໄດ້ເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານວ່າ "ທ່ານຜູ້ຈະເຣີນ ຜູ້ຂ້ານຳຊັພຍ໌ເປັນຄ່າຈີວອນມາເຈາະຈົງທ່ານ ນິມົນຕ໌ທ່ານຮັບຊັພຍ໌ເປັນຄ່າຈີວອນເຖີດ ຂນ້ອຍ" ເມື່ອທູຕກ່າວຢ່າງນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ກ່າວວ່າ "ອາຕມາຮັບຊັພຍ໌ເປັນຄ່າຈີວອນບໍ່ໄດ້ ຮັບສະເພາະຈີວອນທີ່ສົມຄວຣຕາມການ" ເມື່ອທ່ານກ່າວຢ່າງນັ້ນ ທູຕຖາມວ່າ "ມີໃຜຜູ້ເປັນໄວຍາວັຈກອນຂອງທ່ານ

ແດ່" ຂນະນັ້ນ ອຸບາສິກ ຄົນນຶ່ງມີທຸຣະໄປທີ່ວັດ ທ່ານພຣະອຸປນັນທສາກຍບຸດຣຈຶ່ງກ່າວກັບທູດວ່າ "ອຸບາສິກນີ້ເປັນໄວຍາວັຈກອນຂອງພິກສຸທັງຫລາຍ" ທູດນັ້ນຈຶ່ງຕົກລົງ ກັບອຸບາສິກແລ້ວເຂົ້າໄປຫາທ່ານພຣະອຸປນັນທສາກຍບຸດຣເຖິງທີ່ຢູ່ ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າຕົກລົງ ກັບອຸບາສິກທີ່ທ່ານແນະນຳວ່າເປັນໄວຍາວັຈກອນແລ້ວ ທ່ານຈົ່ງໄປຫາໃນເວລາອັນສົມຄວຣ ເຂົາຈັກນິມົນຕ໌ທ່ານໃຫ້ຄອງຈີວອນ" ຕໍ່ມາ ມຫາອມາຕຍ໌ສົ່ງທູດໃຫ້ໄປຫາທ່ານພຣະອຸປນັນທສາກຍບຸດຣໃຫ້ຂາບຮຽນວ່າ "ຂໍໃຫ້ພຣະ ຄຸນເຈົ້າຈົ່ງໃຊ້ສອຍຈີວອນເຖີດ ຜູ້ຂ້າຕ້ອງກາຣຈະໃຫ້ພຣະຄຸນເຈົ້າໃຊ້ຈີວອນນັ້ນ" ທ່ານພຣະອຸປນັນທສາກຍບຸດຣບໍ່ກ່າວຫຍັງກັບອຸບາສິກນັ້ນ ແມ່ນຄັ້ງທີ ໔ ມຫາອມາຕຍ໌ກໍສົ່ງທູດໃຫ້ໄປຫາທ່ານພຣະອຸປນັນທສາກຍບຸດຣ ໃຫ້ຂາບຮຽນວ່າ "ຂໍໃຫ້ພຣະຄຸນເຈົ້າຈົ່ງໃຊ້ສອຍຈີວອນເຖີດ ຜູ້ຂ້າຕ້ອງ ກາຣຈະໃຫ້ພຣະຄຸນເຈົ້າໃຊ້ຈີວອນນັ້ນ"

ແມ່ນຄັ້ງທີ ໔ ທ່ານພຣະອຸປນັນທສາກຍບຸດຣກໍຍັງບໍ່ກ່າວຫຍັງກັບອຸບາສິກນັ້ນ

ແມ່ນຄັ້ງທີ ໖ ມຫາອມາຕຍ໌ກໍສົ່ງທູດໄປຫາທ່ານພຣະອຸປນັນທສາກຍບຸດຣ ໃຫ້ຂາບຮຽນວ່າ "ຂໍໃຫ້ພຣະຄຸນເຈົ້າຈົ່ງໃຊ້ສອຍຈີວອນເຖີດ ຜູ້ຂ້າຕ້ອງກາຣຈະໃຫ້ພຣະຄຸນເຈົ້າໃຊ້ສອຍຈີວອນນັ້ນ" ສມັຍນັ້ນເປັນຄາວປະຊຸມຂອງຊາວນິຄົມ ກໍຊາວນິຄົມໄດ້ຕັ້ງກຕິກາໄວ້ວ່າ ຜູ້ມາປະຊຸມລ່າຊ້າຕ້ອງຖືກປັບ ໕໐ ກຫາປນະ ຕໍ່ມາ ທ່ານພຣະອຸປນັນທສາກຍບຸດຣໄປຫາອຸບາສິກເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວວ່າ "ອາຕມາຕ້ອງກາຣຈີວອນ" ອຸບາສິກກ່າວວ່າ "ໂປຣດຖ້າຈັກມື້ນຶ່ງເຖີດ ຂນ້ອຍ ມື້ນີ້ເປັນຄາວປະຊຸມຂອງຊາວນິຄົມ ແລະຊາວນິຄົມໄດ້ຕັ້ງກຕິກາວ່າ ຜູ້ມາປະຊຸມລ່າຊ້າຕ້ອງຖືກປັບ ໕໐ ກຫາປນະ" ທ່ານພຣະອຸປນັນທສາກຍບຸດຣກ່າວວ່າ "ຈົ່ງຖວາຍຈີວອນອາຕມາມື້ນີ້ແຫລະ" ແລ້ວຍຶດ

ຊາຍພກໄວ້ ອຸບາສິກຖືກທ່ານພຣະອຸປນັນທສາກຍບຸດຣລົ້າໄລຂໍຢູ່ ຈຶ່ງໄດ້ຊື້ຈີວອນຖວາຍທ່ານພຣະອຸປນັນທສາກຍບຸດຣແລ້ວໄປປະຊຸມລ່າຊ້າ ຊາວບ້ານຖາມວ່າ "ເຫດຸໃດທ່ານມາລ່າຊ້າ ທ່ານຕ້ອງເສັຽຄ່າປັບ ໕໐ ກຫາປນະ"

ເທື່ອນັ້ນ ອຸບາສິກຈຶ່ງເລົ່າເຣື່ອງນັ້ນໃຫ້ຊາວບ້ານເຫລົ່ານັ້ນຊາບ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສາກຍບຸດຣເຫລົ່ານີ້ມັກມາກ ບໍ່ສັນໂດສ ຍາກທີ່ໃຜໆຈະໃຫ້ຄວາມຊ່ອຍເຫລືອສມນະເຫລົ່ານັ້ນໄດ້ ຈົ່ງໃດທ່ານພຣະອຸປນັນທສາກຍບຸດຣ ເມື່ອອຸບາ ສິກກ່າວວ່າ 'ໂປຣດຖ້າຈັກມື້ນຶ່ງເຖີດ ຂນ້ອຍ' ກໍບໍ່ຍອມຖ້າ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານອຸປນັນທສາກຍບຸດຣຜູ້ຊຶ່ງອຸບາສິກຂໍຮ້ອງຢູ່ວ່າ 'ທ່ານຜູ້ຈະເຣີນ ໂປຣດຖ້າຈັກມື້ນຶ່ງ' ກໍບໍ່

ຍອມຖ້າ" ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະອຸປນັນທສູາກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໑. ຈີຣວັຄ ໑໐. ຣາຊສິກຂາບົທ ພຣະບັນຍັດ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສູາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ອຸບາສົກກ່າວກັບທ່ານວ່າ 'ໂປຣດຖ້າຈັກນ້ອຍນຶ່ງເຖີດຂນ້ອຍ' ທ່ານກໍບໍ່ຍອມຖ້າ ແມ່ນແທ້ບໍ" ທ່ານພຣະອຸປນັນທສູາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ฯລฯ ໂມຊບຸຣຸສ ຈັ່ງໃດທ່ານຜູ້ຊຶ່ງອຸບາສົກກ່າວວ່າ 'ທ່ານຜູ້ຈະເຣີນ ທ່ານຈົ່ງຖ້າຈັກນ້ອຍນຶ່ງເຖີດ ຂນ້ອຍ' ກໍບໍ່ຍອມຖ້າລະ ໂມຊບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ฯລฯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໓໗] ກໍ ພຣະຣາຊາ ຣາຊອມາຕຍ໌ ພຣາມນ໌ຫລືຄຫບໍດີຜູ້ໃດຜູ້ນຶ່ງສົ່ງທູຕມາຖວາຍຊັພຍ໌ເປັນຄ່າຈີວອນເຈາະຈົງພິກສຸພ້ອມກັບສັ່ງວ່າ "ທ່ານຈົ່ງເອົາຊັພຍ໌ເປັນຄ່າຈີວອນນີ້ຊື້ຈີວອນ ແລ້ວນິມົນຕ໌ພິກສຸຊື່ນີ້ໃຫ້ຄອງຈີວອນ" ຖ້າທູຕນັ້ນເຂົ້າໄປຫາພິກສຸນັ້ນກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້ານຳຊັພຍ໌ເປັນຄ່າຈີວອນນີ້ມາເຈາະຈົງພຣະຄຸນເຈົ້າ ພຣະຄຸນເຈົ້າຈົ່ງຮັບຊັພຍ໌ເປັນຄ່າຈີວອນເຖີດ" ພິກສຸນັ້ນເພິງກ່າວກັບທູຕນັ້ນຢ່າງນີ້ວ່າ "ພວກອາຕມາຮັບຊັພຍ໌ເປັນຄ່າຈີວອນບໍ່ໄດ້ ຮັບສະເພາະຈີວອນທີ່ສົມຄວຣຕາມກາລ" ຖ້າທູຕນັ້ນເພິງກ່າວກັບພິກສຸນັ້ນຢ່າງນີ້ວ່າ "ກໍມີໃຜຜູ້ເປັນໄວຍາວັຈກອນຂອງທ່ານແດ່ໄຫມ" ພິກສຸຜູ້ຕ້ອງການຈີວອນເພິງສະແດງຄົນວັດຫລືອຸບາສົກໃຫ້ເປັນໄວຍາວັຈກອນວ່າ "ຜູ້ນີ້ເປັນໄວຍາວັຈກອນຂອງພິກສຸທັງຫລາຍ" ຖ້າທູຕຕົກລົງ ກັບໄວຍາວັຈກອນແລ້ວເຂົ້າໄປຫາພິກສຸນັ້ນ ກ່າວຢ່າງນີ້ວ່າ "ຂ້າພະເຈົ້າຕົກລົງ ກັບຄົນທີ່ທ່ານແນະນຳວ່າເປັນໄວຍາວັຈກອນແລ້ວທ່ານຈົ່ງໄປຫາໃນເວລາອັນສົມຄວຣ ເຂົາຈະນິມົນຕ໌ທ່ານໃຫ້ຄອງຈີວອນ" ພິກສຸທັງຫລາຍ ພິກສຸຕ້ອງການຈີວອນເພິງເຂົ້າໄປຫາໄວຍາວັຈກອນແລ້ວທວງຫລືເຕືອນ ໒-໓ ຄັ້ງວ່າ "ອາຕມາ

ຕ້ອງການຈີວອນ" ເມື່ອທວງຫລືເຕືອນ ໔-໖ ຄັ້ງ ໃຫ້ເຂົາຈັດຈີວອນສຳເຣັຈໄດ້ ນັ້ນເປັນການດີ ຖ້າບໍ່ສຳເຣັຈ ເພິງໄປ ຢືນສະແດງຕົນຢູ່ຊື່ໆເຖິງ ໔ ຄັ້ງ ໕ ຄັ້ງ ຫລື ໖ ຄັ້ງ ເປັນຢ່າງຫລາຍ ເມື່ອຢືນສະແດງ ຕົນຢູ່ຊື່ໆເຖິງ ໔ ຄັ້ງ ໕ ຄັ້ງ ຫລື ໖ ຄັ້ງເປັນຢ່າງຫລາຍແລ້ວໃຫ້ເຂົາຈັດຈີວອນ ສຳເຣັຈໄດ້ ນັ້ນເປັນການດີ ຖ້າພຍາຍາມເກີນກວ່ານັ້ນ ໃຫ້ເຂົາຈັດຈີວອນສຳເຣັຈໄດ້ ຕ້ອງອາບັຕິ ນິສສັຄຄິຍປາຈິຕ ຕີຍ໌ ຖ້າບໍ່ສຳເຣັຈ ເພິງໄປເອງຫລືສົ່ງທູຕໄປໃນສຳນັກທີ່ເຂົາສົ່ງຊັພຍ໌ເປັນຄ່າຈີ ວອນມາ ກ່າວວ່າ "ຊັພຍ໌ເປັນຄ່າຈີວອນທີ່ທ່ານສົ່ງໄປ ເຈາະຈົງພິກສຸຮູບໃດບໍ່ໄດ້ອຳນວຍປໂຍດ ຫຍັງແກ່ພິກສຸຮູບນັ້ນເລີຍ ທ່ານຈົ່ງທວງຊັພຍ໌ຂອງທ່ານຄືນມາ ຊັພຍ໌ຂອງທ່ານຢ່າເສັຽຫາຍເລີຍ" ນີ້ເປັນການທຳທີ່ສົມ ຄວຣໃນເຣື້ອງນັ້ນ

ເຣື້ອງພຣະອຸປນັນທສກຍບຸດຣ ຈົບ

ສິກຂາບົທວິພັງຄ໌

[໕໖໙] ຄຳວ່າ ກໍ. . . ເຈາະຈົງພິກສຸ ໄດ້ແກ່ ເພື່ອປໂຍດຂອງພິກສຸ ຄື ມຸ່ງສະເພາະພິກສຸ ປຣາຖນາຈະໃຫ້ພິກສຸຄອງຈີວອນ

ທີ່ຊື່ວ່າ ພຣະຣາຊາ ໄດ້ແກ່ ຜູ້ຄອງຣາຊສົມບັດ

ທີ່ຊື່ວ່າ ຣາຊອມາຕຍ໌ ໄດ້ແກ່ ຂ້າຣາຊການທີ່ພຣະຣາຊາຊົງຊຸບລ້ຽງ

ທີ່ຊື່ວ່າ ພຣາມນ໌ ໄດ້ແກ່ ພຣາມນ໌ໂດຍກຳເນີດ

ທີ່ຊື່ວ່າ ຄຫບໍດີ ໄດ້ແກ່ ຄົນທີ່ເຫລືອ ຍົກເວັ້ນພຣະຣາຊາ ຣາຊອມາຕຍ໌ ພຣາມນ໌ຊື່ວ່າຄຫບໍດີ

ທີ່ຊື່ວ່າ ຊັພຍ໌ເປັນຄ່າຈີວອນ ໄດ້ແກ່ ເງິນ ທອງ ແກ້ວມນີ ແກ້ວມຸກດາ (ແກ້ວຕາແມວ ຫລືແກ້ວ ຜລຶກ)

ຄຳວ່າ ຊັພຍ໌ເປັນຄ່າຈີວອນນີ້ ຄື ຊັພຍ໌ທີ່ເຂົາຈັດຫາໄວ້ສະເພາະ

ຄຳວ່າ ຊື້ ຄື ແລກປ່ຽນ

ຄຳວ່າ ນິມົນຕ໌ໃຫ້ຄອງ ຄື ຈົ່ງຖວາຍ

ຖ້າທູຕນັ້ນເຂົ້າໄປຫາພິກສຸຮູບນັ້ນເພິງກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້ານຳຊັພຍ໌ເປັນຄ່າຈີວອນນີ້ມາ ເຈາະຈົງທ່ານ ທ່ານຈົ່ງຮັບຊັພຍ໌ເປັນຄ່າຈີວອນນີ້ເຖີດ" ພິກສຸນັ້ນເພິງກ່າວກັບທູຕນັ້ນຢ່າງນີ້ວ່າ "ພວກອາຕມາຮັບຊັພຍ໌ເປັນຄ່າຈີວອນບໍ່ໄດ້ ຮັບສະເພາະຈີວອນທີ່ສົມຄວຣຕາມກາລ" ຖ້າທູຕກ່າວ ກັບພິກສຸນັ້ນຢ່າງນີ້ວ່າ "ມີໃຜຜູ້ເປັນໄວຍາວັຈກອນຂອງທ່ານແດ່ບໍ" ພິກສຸຜູ້ຕ້ອງການຈີວອນເພິງ ສະແດງຄົນວັດຫລືອຸບາສົກໃຫ້ເປັນໄວຍາວັຈກອນວ່າ "ຜູ້ນັ້ນເປັນໄວຍາວັຈກອນຂອງພິກສຸທັງ

ຫລາຍ" ບໍ່ເພິງກ່າວວ່າ "ຈົ່ງໃຫ້ແກ່ຜູ້ນັ້ນ" ຫລືວ່າ "ຜູ້ນັ້ນຈະເກັບໄວ້" ຫລື "ຜູ້ນັ້ນຈະແລກ" ຫລື "ຜູ້ນັ້ນຈັກຊື້" ຖ້າທູຕຕົກລົງ ກັບໄວຍາວັຈກອນແລ້ວເພິງເຂົ້າໄປຫາພິກສຸກ່າວຢ່າງນີ້ວ່າ "ຜູ້ຂ້າຕົກ ລົງ ກັບຄົນທີ່ທ່ານແນະວ່າເປັນໄວຍາວັຈກອນແລ້ວ ທ່ານຈົ່ງໄປຫາໃນເວລາອັນສົມຄວຣ ເຂົາຈະນິມົນຕ໌ ທ່ານໃຫ້ຄອງຈີວອນ" ພິກສຸທັງຫລາຍ ພິກສຸຕ້ອງການຈີວອນເພິງເຂົ້າໄປຫາໄວຍາວັຈກອນແລ້ວທວງຫລືເຕືອນ ໒-໓ ຄັ້ງວ່າ "ອາຕມາຕ້ອງການຈີວອນ" ບໍ່ເພິງກ່າວກັບເຂົາວ່າ "ທ່ານ ຈົ່ງໃຫ້ຈີວອນແກ່ອາຕມາ ນໍາຈີວອນມາໃຫ້ອາຕມາ ແລກຈີວອນໃຫ້ອາຕມາ ຫລືຈງຊື້ຈີວອນໃຫ້ອາຕມາ"

ແມ່ນຄັ້ງທີ ໒ ກໍເພິງກ່າວກັບເຂົາ ແມ່ນຄັ້ງທີ ໓ ກໍເພິງກ່າວກັບເຂົາ ຖ້າໃຫ້ເຂົາຈັດການສໍາເຣັຈໄດ້ ນັ້ນເປັນການດີ ຖ້າບໍ່ສໍາເຣັຈ ເພິງໄປຢືນສະແດງຕົນຢູ່ຊື່ໆໃນທີ່ນັ້ນ ບໍ່ເພິງນັ່ງເທິງອາສນະ ບໍ່ເພິງຮັບອາມິສ ບໍ່ເພິງກ່າວທັມ ເມື່ອເຂົາຖາມວ່າ "ມາທຸຣະຫຍັງ" ເພິງກ່າວກັບເຂົາວ່າ "ທ່ານຈົ່ງຮູ້ເອງເຖີດ" ຖ້ານັ່ງເທິງອາສນະ ຫລືຮັບອາມິສ ຫລືກ່າວທັມ ຊື່ວ່າຕັດໂອກາສ໑ ແມ່ນຄັ້ງທີ ໒ ກໍເພິງຢືນ ແມ່ນຄັ້ງທີ ໓ ກໍເພິງຢືນ ທວງ ໔ ຄັ້ງເພິງຢືນໄດ້ ໔ ຄັ້ງ ທວງ ໕ ຄັ້ງເພິງຢືນໄດ້ ໔ ຄັ້ງ ທວງ ໖ ຄັ້ງແລ້ວບໍ່ເພິງໄປຢືນ໔ ຖ້າທ່ານພຍາຍາມຍິ່ງກວ່ານັ້ນ ໃຫ້ເຂົາຈັດຈີວອນສໍາເຣັຈຕ້ອງອາບັຕິທຸກກຕເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈໍາຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ເຂົາຈັດສໍາເຣັຈດ້ວຍອາການທວງເກີນ ໓ ຄັ້ງ ຢືນເກີນ ໖ ຄັ້ງ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່

ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ເຂົາຈັດສຳເຣັຈດ້ວຍອາກາຣທອງເງິນ ໑ ຄັ້ງ ຢືນເງິນ ໒ ຄັ້ງ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າໃຫ້ເຂົາຈັດສຳເຣັຈດ້ວຍອາກາຣທອງເງິນ ໑ ຄັ້ງ ຢືນເງິນ ໒ ຄັ້ງ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ" ຖ້າທຳບໍ່ສຳເຣັຈ ເພິງໄປເອງຫລືສົ່ງທູຕໄປໃນສຳນັກທີ່ເຂົາສົ່ງຊັພຍ໌ເປັນຄ່າຈີວອນມາ ກ່າວວ່າ "ຊັພຍ໌ທີ່ທ່ານສົ່ງໄປເຈາະຈົງພິກສຸຮູບໃດ ບໍ່ໄດ້ອຳນວຍປໂຍດຫຍັງແກ່ພິກສຸຮູບນັ້ນ ເລີຍ ທ່ານຈົ່ງທວງຊັພຍ໌ຂອງທ່ານຄືນມາ ຊັພຍ໌ຂອງທ່ານຢ່າຈິບຫາຍເລີຍ" ຄຳວ່າ ນີ້ເປັນກາຣທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ຈີຣວັຄ ໑໐. ຣາຊສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໔໐] ທອງເງິນ ໑ ຄັ້ງ ຢືນເງິນ ໒ ຄັ້ງ ພິກສຸສຳຄັນວ່າເກີນ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທອງເງິນ ໑ ຄັ້ງ ຢືນເງິນ ໒ ຄັ້ງ ພິກສຸບໍ່ແນ່ໃຈ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທອງເງິນ ໑ ຄັ້ງ ຢືນເງິນ ໒ ຄັ້ງ ພິກສຸສຳຄັນວ່າຫນ້ອຍກວ່າ ໃຫ້ເຂົາຈັດຈີວອນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຕ

ທອງໜ້ອຍກວ່າ ໓ ຄັ້ງ ຢືນໜ້ອຍກວ່າ ໖ ຄັ້ງ ພິກສຸສໍາຄັນວ່າເກີນ ຕ້ອງອາບັຕິທຸກກຕ
ທອງໜ້ອຍກວ່າ ໓ ຄັ້ງ ຢືນໜ້ອຍກວ່າ ໖ ຄັ້ງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ທອງໜ້ອຍກວ່າ ໓ ຄັ້ງ ຢືນໜ້ອຍກວ່າ ໖ ຄັ້ງ ພິກສຸສໍາຄັນວ່າໜ້ອຍກວ່າ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໑] ໑. ພິກສຸທອງ ໓ ຄັ້ງ ຢືນ ໖ ຄັ້ງ
໒. ພິກສຸທອງໜ້ອຍກວ່າ ໓ ຄັ້ງ ຢືນໜ້ອຍກວ່າ ໖ ຄັ້ງ
໓. ພິກສຸບໍ່ໄດ້ທອງ ໄອຍາອັຈກອນຈັດຖວາຍເອງ
໔. ພິກສຸຮັບຈີວອນທີ່ເຈົ້າຂອງທອງມາຖວາຍ
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ຣາຊສິກຂາບົທທີ ໑໐ ຈົບ
ຈີວອນວັຄທີ ໑ ຈົບ

ຣວມສິກຂາບົທທີ່ມີໃນຈີວອນວັຄ

ຈີວອນວັຄມີ ໑໐ ສິກຂາບົທ ຄື
໑. ປຖມກຖິນສິກຂາບົທ ວ່າດ້ວຍກຖິນເດາະຂໍ້ທີ ໑
໒. ອຸທໂທສິຕສິກຂາບົທ ວ່າດ້ວຍພິກສຸເກັບຈີວອນໄວ້ໃນໂຮງເກັບຂອງ (ວ່າດ້ວຍກຖິນເດາະຂໍ້ທີ ໒)
໓. ຕຕິຍກຖິນສິກຂາບົທ ວ່າດ້ວຍກຖິນເດາະຂໍ້ທີ ໓
໔. ປຸຣານຈີວອນສິກຂາບົທ ວ່າດ້ວຍການໃຫ້ຊັກຈີວອນເກົ່າ
໕. ຈີວອນປຕິຄຄຫນສິກຂາບົທ ວ່າດ້ວຍການຮັບຈີວອນ
໖. ອັຍຍາຕກວິຍັຕຕິສິກຂາບົທ ວ່າດ້ວຍການອອກປາກຂໍຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ
໗. ຕຕຸຕຕຣິສິກຂາບົທ ວ່າດ້ວຍການອອກປາກຂໍຈີວອນເກີນ
໘. ອຸປັກຂຕສິກຂາບົທ ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນ

໙. ທຸຕິຍອຸປັກຂຕູສິກຂາບົທ ວ່າດ້ວຍຄນກະກຽມຊັພຍ໌ເປັນຄ່າຈີວອນຂໍ້ທີ ໔
໑໐. ຣາຊສິກຂາບົທ ວ່າດ້ວຍຊັພຍ໌ເປັນຄ່າຈີວອນທີ່ພຣະຣາຊາເປັນຕົ້ນ ໃຫ້ທູຕນຳມາຖວາຍ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໔. ໂກສິຍວັຄ ໑. ໂກສິຍສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

ຫມວດວ່າດ້ວຍສັນຖັດໃຍໄຫມ

໑. ໂກສິຍສິກຂາບົທ

ວ່າດ້ວຍການທຳສັນຖັດໃຍໄຫມ

ເຣື້ອງພຣະສັພພັຄຄີຍ໌

[໕໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ອັຄຄາຣູວເຈດີຍ໌ ເຂຕເມືອງອາຣູວີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເຂົ້າໄປຫາພວກຊ່າງຕ່ຳຜ້າໄຫມແລ້ວກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄຫມຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດຜສົມໃຍໄຫມ" ພວກຊ່າງຕ່ຳຜ້າໄຫມຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣເຂົ້າມາຫາພວກເຮົາແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄຫມຈຳນວນຫລາຍໃຫ້ແກ່ອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດຜສົມໃຍໄຫມ' ດັ່ງນີ້ລະ ອີກຢ່າງນຶ່ງ ບໍ່ແມ່ນລາພຂອງພວກເຮົາ ພວກເຮົາໄດ້ບໍ່ດີທີ່ຕ້ອງຂ້າສັຕວ໌ເລັກສັຕວ໌ນ້ອຍເປັນຈຳນວນຫລາຍ ເພາະການຄອງຊີພ ເພາະຕ້ອງລ້ຽງດູບຸຕຣພັຣຍາ" ພິກສຸໄດ້ຍິນພວກຊ່າງຕ່ຳຜ້າໄຫມຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງເຂົ້າໄປຫາຊ່າງຕ່ຳຜ້າໄຫມແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕົ້ມຕົວໄຫມຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັດຜສົມໃຍໄຫມ' ດັ່ງນີ້ລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປຣະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າພວກທ່ານເຂົ້າໄປຫາຊ່າງຕ່ຳຜ້າໄຫມແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕັ້ມຕົວໄຫມຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາ ຕ້ອງການຈະທຳສັນຖັຕຜສົມໃຍໄຫມ' ດັ່ງນີ້ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໄປຫາຊ່າງຕ່ຳຜ້າໄຫມແລ້ວກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ພວກທ່ານຈົ່ງຕັ້ມຕົວໄຫມຈຳນວນຫລາຍໃຫ້ແກ່ພວກອາຕມາແດ່ ພວກອາຕມາຕ້ອງການຈະທຳສັນຖັຕຜສົມໃຍໄຫມ' ດັ່ງນີ້ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໓] ກໍ ພິກສຸໃດໃຊ້ໃຫ້ທຳສັນຖັຕຜສົມໃຍໄຫມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໔໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ສັນຖັຕ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕ່ຳໍ

ຄຳວ່າ ໃຊ້ໃຫ້ທຳ ຄວາມວ່າ ພິກສຸທຳເອງຫລືໃຊ້ໃຫ້ທຳ ແຊມດ້ວຍເສັ້ນໄຫມແມ່ນເສັ້ນດຽວ ຕ້ອງອາບັຕິທຸກກຕເພາະພຍາຍາມ ສັນຖັຕເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຊ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸພຶງສລະສັນຖັຕທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ວິທີຫລໍ່ສັນຖັດ ໃຊ້ຍາງຫມຽວເຊັ່ນນ້ຳເຂົ້າເຫລົງເທິງພື້ນທີ່ຮາບແລ້ວເອົາຂົນໂປຍລາດລົງເທິງ ຍາງຫມຽວ (ວິ. ອ. ໔/໕໔໔/໑໙໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໔. ໂກສິຍວັຄ ໑. ໂກສິຍສິກຂາບົທ ສິກຂາບົທວິພັງຄ໌

ວິທີສລະສັນຖັຕທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຜສົມໃຍໄຫມຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຜສົມໃຍໄຫມຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັຕຜືນນີ້ຜູ້ຂ້າໃຊ້ໃຫ້ທຳເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່

ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັຕຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນ຺ຫ໌] ໒. ໂກສິຍວັຄ ໑. ໂກສິຍສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໔໕] ພິກສຸທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກສຸທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຸກຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍຄແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ

ພິກສຸໄດ້ສັນຖັຕທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໔໖] ໑. ພິກສຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກໝອນ

໒. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັດ

ໂກສິຍສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນ຺ຫ໌] ໒. ໂກສິຍວັຄ ໒. ສຸທທກາລກສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໙. ສຸຫຄຸກາຽກສິກຂາບົທ

ວ່າດ້ວຍການທຳສັນຖັດໂດຍໃຊ້ຂົນຈຽມດຳລ້ວນ

ເຣື້ອງພຣະສັພພັຄຄີຍ໌

[໕໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫຸເຈົ້າປະທັບຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນ໑ ພວກຊາວບ້ານທຽວໄປຕາມວິຫານເຫັນເຂົ້າຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸດຣ ຈຶ່ງໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນເຫມືອນຄຣືຫັສຖ໌ທີ່ຍັງບໍຣິໂພຄການລະ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຫຸເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫຸເຈົ້າ ຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ໃຫ້ທຳສັນຖັດຂົນຈຽມດຳລ້ວນລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ຄຳວ່າ "ຂົນຈຽມ" ໃນທີ່ນີ້ຄືຂົນແພະຫລືຂົນແກະ (ເອຊກໂລມ)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໑. ໂກສິຍວັຄ ໙. ສຸທຫຸກາຽກສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໕໔໗] ກໍ ພິກສຸໃດໃຊ້ໃຫ້ທໍາສັນຖັດຂົນຈຽມດໍາລ້ວນ ຕ້ອງອາບັດນິສສັຄຄີຍປາຈິດຕີຍ໌

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໔໘] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ສີດໍາ ມີ ໔ ຊນິດ ຄື ດໍາຕາມທັມຊາຕິ ຫລືດໍາເພາະຍ້ອມ

ທີ່ຊື່ວ່າ ສັນຖັຕ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕໍ່າ

ຄໍາວ່າ ໃຊ້ໃຫ້ທໍາ ຄວາມວ່າ ພິກສຸທໍາເອງຫລືໃຊ້ໃຫ້ທໍາ ຕ້ອງອາບັຕິທຸກກຕເພາະພຍາຍາມ ສັນຖັຕເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈໍາຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ ພິກສຸທັງຫລາຍ ພິກສຸເພິ່ງສລະສັນຖັຕທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັຕທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ສັນຖັຕຂົນຈຽມດໍາລ້ວນຜືນນີ້ຜູ້ຂ້າໃຊ້ໃຫ້ທໍາ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຂົນຈຽມດໍາລ້ວນຜືນນີ້ແກ່ສົງຂ໌” ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ “ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສັນຖັຕຂົນຈຽມດໍາລ້ວນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິ່ງໃຫ້ສັນຖັຕຂົນຈຽມດໍາລ້ວນຜືນນີ້ແກ່ພິກສຸຊື່ນີ້”

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ສັນຖັຕຂົນຈຽມດໍາລ້ວນຜືນນີ້ຜູ້ຂ້າໃຊ້ໃຫ້ທໍາ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຂົນຈຽມດໍາລ້ວນຜືນນີ້ແກ່ທ່ານທັງຫລາຍ” ຄັນສລະແລ້ວ

ເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວອ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສັນຖັດຂົນຈຽມດຳລ້ວນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັດຄີຍ໌ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັດຂົນຈຽມດຳລ້ວນຜືນນີ້ຜູ້ຂ້າໃຊ້ໃຫ້ທຳ ເປັນນິສສັດຄີຍ໌ ຜູ້ຂ້າສລະສັນຖັດຂົນຈຽມດຳລ້ວນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວອ່າ "ຜູ້ຂ້າຄືນສັນຖັດຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ນິສສັດຄີຍປາຈິຕຕີຍ໌

[໕໕໐] ພິກສຸທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌
ພິກສຸທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັດຄີຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັດຄີຍກັນຖ໌] ໒. ໂກສິຍວັຄ ໔. ສຸທທກາຬກສິກຂາບົທ ອນາປັຕຕິວາຣ

ທຸກກຸກກຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ
ພິກສຸໄດ້ສັນຖັດທີ່ຜູ້ອື່ນທຳໄວ້ແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໑] ໑. ພິກສຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກຫມອນ

໔. ພິກສຸວິກົລຈິຕ
໕. ພິກສຸຕົ້ນບັນຍັດ

ສຸທທກາຣກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໔. ໂກສິຍວັຄ ໕. ເທຸວພາຄສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

໕. ເທຸວພາຄສິກຂາບົທ

ວ່າດ້ວຍການທຳສັນຖັດໂດຍໃຊ້ຂົນຈຽມດຳ ໔ ສ່ວນ

ເຣື້ອງພຣະສັພພັຄຄີຍ໌

[໕໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຊາບວ່າ “ພຣະຜູ້ມີພຣະພາຄຊົງຫ້າມການ ທຳສັນຖັຕຂົນຈຽມດຳລ້ວນ” ຈຶ່ງໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ຊາຍສັນຖັຕ ແລ້ວທຳສັນ ຖັຕຂົນຈຽມດຳລ້ວນຢ່າງເດີມນັ້ນແຫລະ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ຊາຍສັນຖັຕ ແລ້ວທຳສັນຖັຕຂົນຈຽມດຳລ້ວນຢ່າງເດີມລະ” ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ ໂດຍ
ປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ ຊາຍສັນຖັຕ ແລ້ວທຳສັນຖັຕຂົນຈຽມດຳລ້ວນຢ່າງເດີມ ແມ່ນແທ້ບໍ່” ພວກພິກສຸສັພພັຄຄີຍ໌ທູລຮັບ ວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ໂມຄບຸຣຸສທັງ ຫລາຍ ຈັ່ງໃດພວກທ່ານຈຶ່ງໃຫ້ເອົາຂົນຈຽມຂາວໜ້ອຍນຶ່ງປົນໄວ້ທີ່ຊາຍສັນຖັຕ ແລ້ວທຳສັນຖັຕ

ຂົນຈຽມດຳລ້ວນຢ່າງເດີມລະ ໂມຊບຸຣຸສຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ໓. ເທົວພາຄສິກຂາບົທ

ສິກຂາບົທວິພັງຄ໌

ພຣະບັນຍັດ

[໕໕໓] ກໍ ພິກສຸຜູ້ໃຊ້ໃຫ້ທຳສັນຖັຕໃຫມ່ ເພິ່ງເອົາຂົນຈຽມດຳລ້ວນ ໒ ສ່ວນ ຂົນຈຽມຂາວເປັນສ່ວນທີ ໓ ຂົນຈຽມແດງເປັນສ່ວນທີ ໔ ຖ້າທ່ານບໍ່ເອົາຂົນຈຽມດຳລ້ວນ ໒ ສ່ວນ ຂົນຈຽມຂາວເປັນສ່ວນທີ ໓ ຂົນຈຽມແດງເປັນສ່ວນທີ ໔ ແລ້ວໃຫ້ທຳສັນຖັຕໃຫມ່ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໕໔] ທີ່ຊື່ວ່າ ໃຫມ່ ພຣະອົງຄ໌ຕຣັສມຸ່ງເອົາກາຣກະທຳ
ທີ່ຊື່ວ່າ ສັນຖັຕ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນທໍ
ຄຳວ່າ ຜູ້ໃຊ້ໃຫ້ທຳ ຄື ຜູ້ທຳເອງຫລືໃຊ້ໃຫ້ທຳ
ຄຳວ່າ ເອົາຂົນຈຽມດຳລ້ວນ ໒ ສ່ວນ ຄວາມວ່າ ຊັ່ງແລ້ວເອົາຂົນຈຽມດຳລ້ວນ ໒ ຊັ່ງ
ຄຳວ່າ ຂົນຈຽມຂາວເປັນສ່ວນທີ ໓ ຄື ຂົນຈຽມຂາວ ໑ ຊັ່ງ
ຄຳວ່າ ຂົນຈຽມແດງເປັນສ່ວນທີ ໔ ຄື ຂົນຈຽມແດງ ໑ ຊັ່ງ
ຄຳວ່າ ຖ້າທ່ານບໍ່ເອົາຂົນຈຽມດຳລ້ວນ ໒ ສ່ວນ ຂົນຈຽມຂາວເປັນສ່ວນທີ ໓ ຂົນຈຽມແດງເປັນສ່ວນທີ ໔ ຄວາມວ່າ ບໍ່ເອົາຂົນຈຽມດຳລ້ວນ ໒ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ທຳເອງຫລືໃຊ້ໃຫ້ທຳສັນຖັຕໃຫມ່ ຕ້ອງອາບັຕິທຸກກຕເພາະພຍາຍາມ ສັນຖັຕເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ
ພິກສຸທັງຫລາຍ ພິກສຸເພິ່ງສລະສັນຖັຕທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັຕທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຜືນນີ້ຜູ້ຂ້າບໍ່ໄດ້ເອົາຂົນຈຽມດຳລ້ວນ ໔ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຜືນນີ້ຜູ້ຂ້າບໍ່ໄດ້ເອົາຂົນຈຽມດຳລ້ວນ ໔ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວວ່າ "ທ່ານຂນ້ອຍ ສັນຖັຕຜືນນີ້ຜູ້ຂ້າບໍ່ໄດ້ເອົາຂົນຈຽມດຳລ້ວນ ໔ ຊັ່ງ ຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ໃຊ້ໃຫ້ທຳເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັຕຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໔. ໂກສິຍວັຄ ໖. ເທຳວພາຄສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໕໕] ພິກສຸທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ

ພິກສຸໄດ້ສັນຖັຕທີ່ຜູ້ອື່ນທຳໄວ້ ໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໖] ໑. ພິກສຸເອົາຂົນຈຽມຂາວ ໑ ຊັ່ງ ຂົນຈຽມແດງ ໑ ຊັ່ງ ປົນແລ້ວທຳ

໒. ພິກສຸເອົາຂົນຈຽມຂາວຫລາຍກວ່າ ຂົນຈຽມແດງຫລາຍກວ່າ ປນແລ້ວທຳ

໓. ພິກສຸເອົາຂົນຈຽມຂາວລ້ວນ ຂົນຈຽມແດງລ້ວນ ປນແລ້ວທຳ

໔. ພິກສຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລື ປອກຫມອນ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ເທວພາຄສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໒. ໂກສິຍວັຄ ໔. ສັພພັສສສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໔. ສັພພັສສສິກຂາບົທ

ວ່າດ້ວຍການເກັບສັນຖັດໄວ້ ໖ ປີ

ເຣື້ອງພິກສຸຫລາຍຮູບ

[໕໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸທັງຫລາຍໃຊ້ໃຫ້ທຳສັນຖັຕທຸກໆປີ ພິກສຸເຫລົ່ານັ້ນເປັນ ຜູ້ມາກໄປດ້ວຍການຂໍວ່າ "ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ" ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງ ໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍ ກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ' ດັ່ງນີ້ລະ ສັນຖັຕຂອງ ພວກເຮົາທີ່ທຳຄັ້ງດຽວ ຖືກເດັກນ້ອຍຖ່າຍອຸຈຈາຣະຮົດແດ່ ປັສສາວະຮົດແດ່ ຫນູກັດເສັ່ງແດ່ ກໍຍັງ ໃຊ້ສອຍໄດ້ເຖິງ ໕ ປີແດ່ ໖ ປີແດ່ ແຕ່ພິກສຸເຫລົ່ານີ້ໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປ ດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງ ຫລາຍຈຶ່ງໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກ ປາກຂໍ ດ້ວຍກ່າວ ວ່າ 'ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ' ດັ່ງນີ້ລະ" ຄັນພິກສຸທັງຫລາຍຕຳຫນິພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີ ພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ ເຫລົ່ານັ້ນວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປດ້ວຍ ການຂໍ ເປັນຜູ້ມາກໄປດ້ວຍການອອກປາກຂໍດ້ວຍກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກ ອາຕມາຕ້ອງການຂົນຈຽມ' ດັ່ງນີ້ ແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທ ເຈົ້າຂ້າ" ພຣະຜູ້ມີພຣະພາຄພຣະພຸທທເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສ ເຫລົ່ານັ້ນຈຶ່ງໃຊ້ໃຫ້ທຳສັນຖັຕທຸກໆປີ ເປັນຜູ້ມາກໄປດ້ວຍການຂໍ ເປັນຜູ້ມາກໄປດ້ວຍການອອກ ປາກຂໍດ້ວຍກ່າວວ່າ 'ທ່ານທັງຫລາຍຈົ່ງໃຫ້ຂົນຈຽມ ພວກອາຕມາຕ້ອງການຂົນຈຽມ' ດັ່ງນີ້ລະ

ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ”
ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໕໕໗] ກໍ ພິກສຸໃຊ້ໃຫ້ທຳສັນຖັດໃຫມ່ແລ້ວເພິງໃຊ້ສອຍໃຫ້ໄດ້ ໒ ປີ ຖ້າຕ່ຳກວ່າ ໒ ປີ ທ່ານຈະສລະຫລືບໍ່ສລະສັນຖັດນັ້ນກໍຕາມ ໃຊ້ໃຫ້ທຳສັນຖັດອື່ນໃຫມ່ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພິກສຸຫລາຍຮູບ ຈົບ

ເຣື່ອງພິກສຸເປັນໄຂ້

[໕໕໘] ສມັຍນັ້ນ ພິກສຸຮູບນຶ່ງເປັນໄຂ້ຢູ່ກຸງໂກສັມພີ ພວກຍາຕສົ່ງທູຕໄປສຳນັກຂອງພິກສຸນັ້ນໃຫ້ແຈ້ງຂ່າວວ່າ “ນິມົນຕ໌ພຣະຄຸນທ່ານມາເຖີດ ພວກເຮົາຈັກອຸປັຕຖາກ” ພິກສຸທັງຫລາຍກ່າວຢ່າງນີ້ວ່າ “ໄປເຖີດ ທ່ານ ພວກຍາຕຈະອຸປັຕຖາກທ່ານເອງ” ພິກສຸນັ້ນກ່າວຢ່າງນີ້ວ່າ “ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ ‘ພິກສຸໃຊ້ໃຫ້ທຳສັນຖັດໃຫມ່ແລ້ວເພິງໃຊ້ສອຍໃຫ້ໄດ້ ໒ ປີ’ ຜູ້ຂ້າກໍເປັນໄຂ້ຢູ່ ບໍ່ສາມາດນຳສັນຖັດໄປໄດ້ ຖ້າຂາດສັນຖັດເສັຽແລ້ວຜູ້ຂ້າຈະບໍ່ຜາສຸກ ຜູ້ຂ້າຈະບໍ່ໄປ”
ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສົມມຸດສັນຖັດ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສົມມຸດສັນຖັດເພື່ອພິກສຸຜູ້ເປັນໄຂ້ ພິກສຸທັງຫລາຍສົງຂ໌ເພິງໃຫ້ສົມມຸດສັນຖັດຢ່າງນີ້”

ວິທີສົມມຸດສັນຖັດ

ພິກສຸຜູ້ເປັນໄຂ້ຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ ‘ທ່ານຜູ້ຈະເຣີນ ຜູ້ຂ້າເປັນໄຂ້ບໍ່ສາມາດນຳສັນຖັດຕິດຕົວ

ໄປໄດ້ ຜູ້ຂ້າຂໍສົມມຸດສັນຖັດກະສົງຂ໌' ເພິງຂໍສົມມຸດສັນຖັດແມ່ນຄັ້ງທີ ໔ ເພິງຂໍສົມມຸດສັນຖັດແມ່ນຄັ້ງທີ ໓ ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໕໘໐] 'ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ເປັນໄຂ້ບໍ່ສາມາດນຳສັນຖັດຕິດຕົວໄປໄດ້ ພິກສຸນັ້ນຂໍສົມມຸດສັນຖັດຈາກສົງຂ໌ ຖ້າສົງຂ໌ພ້ອມແລ້ວກໍເພິງໃຫ້ສົມມຸດສັນຖັດແກ່ພິກສຸຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ເປັນໄຂ້ບໍ່ສາມາດນຳສັນຖັດຕິດຕົວໄປໄດ້ ພິກສຸນັ້ນຂໍສົມມຸດສັນຖັດຈາກສົງຂ໌ ຖ້າສົງຂ໌ພ້ອມແລ້ວກໍເພິງໃຫ້ສົມມຸດສັນຖັດແກ່ພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການໃຫ້ສົມມຸດສັນຖັດແກ່ພິກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍທ່ານຮູບນັ້ນເພິງທັກທ້ວງ ການສົມມຸດສັນຖັດສົງຂ໌ໃຫ້ແລ້ວແກ່ພິກສຸຊື່ນີ້ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຈະຂໍ ຖືຄວາມນິ່ງນັ້ນເປັນມຕິຢ່າງນີ້"

ແລ້ວຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໘໑] ອີກຢ່າງນຶ່ງ ພິກສຸໃຊ້ໃຫ້ທຳສັນຖັດໃຫມ່ແລ້ວເພິງໃຊ້ສອຍໃຫ້ໄດ້ ໖ ປີ ຖ້າຕ່ຳກວ່າ ໖ ປີ ທ່ານຈະສລະຫລືບໍ່ສລະສັນຖັດນັ້ນກໍຕາມ ໃຊ້ໃຫ້ທຳສັນຖັດອື່ນໃຫມ່ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸຜູ້ໄດ້ສົມມຸດ

ເຣື່ອງພິກສຸເປັນໄຂ້ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ໂກສິຍວັຄ ໔. ສັພພັສສສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໘໔] ທີ່ຊື່ວ່າ ໃຫມ່ ພຣະອົງຄ໌ຕຣັສມຸ່ງເອົາການກະທຳ

ທີ່ຊື່ວ່າ ສັນຖັດ ໄດ້ແກ່ ຜ້າຮອງນັ່ງທີ່ຫລໍ່ ບໍ່ແມ່ນຕ່ຳ

ຄຳວ່າ ໃຊ້ໃຫ້ທຳແລ້ວ ຄື ທຳເອງຫລືໃຊ້ໃຫ້ທຳແລ້ວ

ຄຳວ່າ ເພິງໃຊ້ສອຍໃຫ້ໄດ້ ໖ ປີ ຄື ເພິງໃຊ້ສອຍໃຫ້ໄດ້ ໖ ປີເປັນຢ່າງຫນ້ອຍ

ຄຳວ່າ ຖ້າຕ່ຳກວ່າ ໖ ປີ ຄື ຫນ້ອຍກວ່າ ໖ ປີ

ຄໍາວ່າ ສລະສັນຖັດນັ້ນ ຄື ໃຫ້ແກ່ຜູ້ອື່ນ

ຄໍາວ່າ ບໍ່ສລະ ຄື ຍັງບໍ່ໃຫ້ແກ່ຜູ້ອື່ນ

ຄໍາວ່າ ເວັ້ນໄວ້ແຕ່ພິກສຸຜູ້ໄດ້ສົມມຸດ ຄື ຍົກເວັ້ນພິກສຸຜູ້ໄດ້ຮັບສົມມຸດ

ພິກສຸທໍາເອງຫລືໃຊ້ໃຫ້ທໍາສັນຖັດໃຫມ່ ຕ້ອງອາບັຕິທຸກກຕເພາະພຍາຍາມ ສັນຖັດເປັນນິສສັຄຄິຍ໌ ເພາະໄດ້ມາ ຄືເປັນຂອງຈໍາຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະສັນຖັດທີ່ເປັນນິສສັຄຄິຍ໌ຢ່າງນີ້

ວິທີສລະສັນຖັດທີ່ເປັນນິສສັຄຄິຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜືນນີ້ຂອງຜູ້ຂ້າໃຊ້ໃຫ້ທໍາ ຫນ້ອຍກວ່າ ຝ ປີ ເປັນນິສສັຄຄິຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ ຜູ້ຂ້າສລະສັນຖັດຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍຍັຕຕິກັມ ອາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິ່ງໃຫ້ສັນຖັດຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັດຜືນນີ້ຜູ້ຂ້າໃຊ້ໃຫ້ທໍາ ຫນ້ອຍກວ່າ ຝ ປີ ເປັນນິສສັຄຄິຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິ່ງໃຫ້ສັນຖັດຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ່ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັດຜືນນີ້ຜູ້ຂ້າໃຊ້ໃຫ້ທໍາ ຫນ້ອຍກວ່າ ຝ ປີ ເປັນນິສສັຄຄິຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ ຜູ້ຂ້າສລະສັນຖັດຜືນນີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້

ຣັບສລະນັ້ນເພິງຣັບອາບັຕິແລ້ວຄືນສັນຖັດທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສັນຖັດຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໖໓] ພິກສຸທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກສຸທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັດທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ໔. ສັພພັສສສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໖໔] ໑. ພິກສຸທຳໃຫມ່ ເມື່ອໃຊ້ຄົບ ໖ ປີ

໒. ພິກສຸທຳໃຫມ່ ເມື່ອໃຊ້ເກີນ ໖ ປີ

໓. ພິກສຸທຳເອງຫລືໃຊ້ໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ

໔. ພິກສຸໄດ້ສັນຖັດທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ

໕. ພິກສຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກຫມອນ

໖. ພິກສຸຜູ້ໄດ້ສົມມຸດ

໗. ພິກສຸວິກລຈິຕ

໘. ພິກສຸຕົ້ນບັນຍັດ

ສັພພັສສສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໔. ໂກສິຍວັຄ ໕. ນິສີທນສັນຖຕສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

໕. ນິສີທນສັນຖຕສິກຂາບົທ

ວ່າດ້ວຍການທຳສັນຖັດສຳລັບຮອງນັ່ງ

ເຣື້ອງພຣະອຸປເສນວັງຄັນຕບຸຕຣ

[໕໖໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຮັບສັ່ງວ່າ "ພິກສຸທັງຫລາຍ ເຮົາປຣາຖນາ ຈະຫລີກຫລີບຢູ່ຜູ້ດຽວຕລອດໄຕຣມາສ ໃຜໆຢ່າເຂົ້າໄປຫາເຮົາ ຍົກເວັ້ນພິກສຸຜູ້ນຳພັຕຕາຫາຣເຂົ້າ ໄປໃຫ້ຮູບດຽວ" ພິກສຸທັງຫລາຍຮັບສນອງພຣະພຸທທດຳຣັສວ່າ "ໄດ້ ພຣະພຸທທເຈົ້າຂ້າ" ບໍ່ ມີໃຜເຂົ້າໄປເຝົ້າພຣະຜູ້ມີພຣະພາຄເລີຍ ນອກຈາກພິກສຸຜູ້ນຳພັຕຕາຫາຣເຂົ້າໄປຖວາຍພຽງຮູບດຽວ ສມັຍນັ້ນ ສົງຂ໌ໃນກຸງສາວັຕຖີຕັ້ງກຕິກາກັນວ່າ "ພຣະຜູ້ມີພຣະພາຄມີພຣະປະສົງຄ໌ສເດັຈຫລີກຫລີບ ຢູ່ຕລອດໄຕຣມາສ ໃຜໆຢ່າເຂົ້າໄປເຝົ້າພຣະອົງຄ໌ ຍົກເວັ້ນພິກສຸຜູ້ນຳພັຕຕາຫາຣເຂົ້າໄປຖວາຍຮູບ ດຽວ ພິກສຸຮູບໃດເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເພິ່ງໃຫ້ພິກສຸຮູບນັ້ນສະແດງອາບັຕິປາຈິຕຕີຍ໌" ຕໍ່ມາ ທ່ານພຣະອຸປເສນວັງຄັນຕບຸຕຣພ້ອມດ້ວຍບໍຣິສັດເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຖວາຍອພິວາທແລ້ວນັ່ງ ນະ ທີ່ສົມຄວຣ

ພຸທທປະເພນີ

ອັນການທີ່ພຣະຜູ້ມີພຣະພາຄພຸທທເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍນັ້ນ ເປັນ ພຸທທປະເພນີ ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ອຸປ ເສນະ ທ່ານທັງຫລາຍຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ຍ່າງທາງມາໂດຍບໍ່ລຳບາກຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ສະບາຍດີ ພຣະພຸທທເຈົ້າຂ້າ ພໍເປັນຢູ່ໄດ້ ພຣະພຸທທ ເຈົ້າຂ້າ ຂ້າພຣະພຸທທເຈົ້າຍ່າງທາງມາໂດຍບໍ່ລຳບາກ ພຣະພຸທທເຈົ້າຂ້າ"

ຂນະນັ້ນ ພິກສຸສັທທິວິຫາຣິກຂອງທ່ານພຣະອຸປເສນວັງຄັນຕບຸຕຣນັ່ງຢູ່ບໍ່ຫ່າງ ພຣະຜູ້ມີພຣະພາຄ ຕຣັສຖາມພິກສຸນັ້ນວ່າ "ພິກສຸ ຜ້າບັງສຸກຸລຂອງທ່ານຫນ້າພໍໃຈຫລື" ພິກສຸນັ້ນຂາບທູລວ່າ "ຜ້າບັງ

ສຸກຸລຂອງຂ້າພຣະພຸທທເຈົ້າບໍ່ໜ້າພໍໃຈ ພຣະພຸທທຂນ້ອຍ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸ ແລ້ວເປັນຫຍັງທ່ານຊົງຜ້າບັງສຸກຸລລະ" ພິກສຸນັ້ນຂາບທູລວ່າ "ພຣະອຸປັຊຊາຍ໌ຂອງຂ້າພຣະພຸທທເຈົ້າເປັນຜູ້ຊົງຜ້າບັງສຸກຸລ ແມ່ນຂ້າພຣະພຸທທເຈົ້າກໍຕ້ອງເປັນຜູ້ຊົງຜ້າບັງສຸກຸລຕາມ ພຣະພຸທທເຈົ້າຂ້າ" ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຖາມທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ອຸປເສນະ ບໍຣິສັດນີ້ຂອງທ່ານໜ້າເຫລື້ອມໃສ ທ່ານແນະນຳບໍຣິສັດຢ່າງໃດ" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ຂ້າພຣະພຸທທເຈົ້າບອກຜູ້ມາຂໍອຸປສົມບົທກັບຂ້າພຣະພຸທທເຈົ້າວ່າ 'ຂ້ອຍຖືຢູ່ປ່າເປັນວັຕຣ ຖື ທ່ຽວບິນທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ຖ້າທ່ານຈັກຖືຢູ່ປ່າເປັນວັຕຣ ຖືທ່ຽວບິນ ທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ຂ້າກໍຈະໃຫ້ທ່ານອຸປສົມບົທ' ຖ້າເຂົາຮັບຄຳຂອງຂ້າພຣະພຸທທເຈົ້າ ຂ້າພຣະພຸທທເຈົ້າກໍໃຫ້ອຸປສົມບົທ ຖ້າບໍ່ຮັບຄຳ ກໍຈະບໍ່ໃຫ້ອຸປສົມບົທ ຂ້າພຣະພຸທທເຈົ້າບອກພິກສຸທີ່ມາຂໍນິສັຍວ່າ 'ຂ້າຖືຢູ່ປ່າເປັນວັຕຣ ຖືທ່ຽວບິນທບາຕເປັນວັຕຣ ຖືຊົງຜ້າ

ບັງສຸກຸລເປັນວັຕຣ ຖ້າທ່ານຈັກຖືຢູ່ປ່າເປັນວັຕຣ ຖືທ່ຽວບິນທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣແດ່ ຂ້າກໍຈະໃຫ້ນິສັຍແກ່ທ່ານ' ຖ້າພິກສຸນັ້ນຮັບຄຳຂອງຂ້າພຣະພຸທທເຈົ້າ ຂ້າພຣະພຸທທເຈົ້າກໍຈະໃຫ້ນິສັຍ ຖ້າບໍ່ຮັບຄຳ ກໍຈະບໍ່ໃຫ້ນິສັຍ ຂ້າພຣະພຸທທເຈົ້າແນະນຳບໍຣິສັດຢ່າງນີ້ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສວ່າ "ອຸປເສນະ ດີແລ້ວໆອຸປເສນະ ທ່ານແນະນຳບໍຣິສັດດີແລ້ວ ທ່ານຮູ້ກຕິກາສົງຂ໌ໃນກຸງສາວັຕຖີຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຂາບທູລວ່າ "ຂ້າພຣະພຸທທເຈົ້າບໍ່ຮູ້ກຕິກາຂອງສົງຂ໌ໃນກຸງສາວັຕຖີ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສວ່າ "ສົງຂ໌ໃນກຸງສາວັຕຖີຕັ້ງກຕິກາກັນວ່າ ພຣະຜູ້ມີພຣະພາຄມີພຣະປະສົງຄ໌ຈະສເດັຈຫລີກຫລີບຢູ່ຕລອດໄຕຣມາສ ໃຜໆຢ່າເຂົ້າໄປເຝົ້າພຣະອົງຄ໌ ຍົກເວັ້ນພິກສຸຜູ້ນຳພັຕຕາຫາຣເຂົ້າໄປຖວາຍຮູບດຽວ ພິກສຸຮູບໃດເຂົ້າໄປເຝົ້າພຣະຜູ້ມີພຣະພາຄເພິ່ງໃຫ້ພິກສຸຮູບນັ້ນສະແດງອາບັຕິປາຈິຕຕີຍ໌" ທ່ານພຣະອຸປເສນວັງຄັນຕບຸຕຣ ຂາບທູລວ່າ "ສົງຂ໌ໃນກຸງສາວັຕຖີຈະເປີດເຜີຍຕົນເອງອອກມາດ້ວຍກຕິກາຂອງຕົນ ຂ້າພຣະພຸທທເຈົ້າຈະບໍ່ບັນຍັດສິ່ງທີ່ພຣະອົງຄ໌ບໍ່ໄດ້ຊົງບັນຍັດໄວ້ ແລະບໍ່ເພີກຖອນສິ່ງທີ່ຊົງບັນຍັດໄວ້ແລ້ວ ຈະສມາທານປະພຶດໃນສິກຂາບົທຕາມທີ່ຊົງບັນຍັດໄວ້"

ພຣະຜູ້ມີພຣະພາຄຕຣັສວ່າ "ອຸປເສນະ ດີແລ້ວໆສົງຂ໌ບໍ່ບັນຍັດສິ່ງທີ່ເຮົາບໍ່ໄດ້ບັນຍັດ ແລະບໍ່ເພິ່ງເພີກຖອນສິ່ງທີ່ເຮົາບັນຍັດໄວ້ ເພິ່ງສມາທານປະພຶດໃນສິກຂາບົທຕາມທີ່ເຮົາບັນຍັດໄວ້ ອຸປເສນະ ເຮົາອນຸຍາຕໃຫ້ພິກສຸຜູ້ຖືຢູ່ປ່າເປັນວັຕຣ ຖືບິນທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ເຂົ້າມາຢ້ຽມເຮົາໄດ້ຕາມສະດວກ"

[໕໘໘] ສມັຍນັ້ນ ພິກສຸຫລາຍຮູບຢືນຖ້າຢູ່ນອກຊຸ້ມປະຕູ ເພາະຕັ້ງໃຈວ່າ "ພວກເຮົາຈະໃຫ້ທ່ານພຣະອຸປເສນວັງຄັນຕບຸຕຣສະແດງອາບັຕິປາຈິຕຕີຍ໌" ຄັນທ່ານພຣະອຸປເສນວັງຄັນຕບຸຕຣພ້ອມກັບບໍຣິສັດລຸກຂຶ້ນຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄ ທຳປະທັກສິນຈາກໄປ ພິກສຸເຫລົ່ານັ້ນໄດ້ກ່າວກັບທ່ານພຣະອຸປເສນວັງຄັນຕບຸຕຣວ່າ "ທ່ານຊາບກຕິກາຂອງສົງຊ໌ໃນກຸງສາວັຕຖີຫລື" ທ່ານພຣະອຸປເສນວັງຄັນຕບຸຕຣຕອບວ່າ "ແມ່ນພຣະຜູ້ມີພຣະພາຄກໍຕຣັສເຊັ່ນນີ້ກັບຂະນ້ອຍຢ່າງນີ້ເຫມືອນກັນວ່າ 'ອຸປເສນະ ທ່ານຮູ້ກຕິກາຂອງສົງຊ໌ໃນກຸງສາວັຕຖີຫລື' ຂະນ້ອຍກໍທູລຕອບວ່າ 'ຂ້າພຣະພຸທຫເຈົ້າບໍ່ຮູ້ກຕິກາສົງຊ໌ໃນກຸງສາວັຕຖີ ພຣະພຸທຫເຈົ້າຂ້າ' ພຣະຜູ້ມີພຣະພາຄຕຣັສວ່າ 'ອຸປເສນະ ກໍກຕິກາທີ່ສົງຊ໌ໃນກຸງສາວັຕຖີທຳໄວ້ວ່າ 'ພຣະຜູ້ມີພຣະພາຄຊົງປະສົງຄ໌ຈະສເດັຈຫລີກຫລີບ ຢູ່ພຣະອົງຄ໌ດຽວຕລອດໄຕຣມາສ ໃຜໆຢ່າເຂົ້າໄປເຝົ້າພຣະອົງຄ໌ ຍົກເວັ້ນພິກສຸຜູ້ນຳພັຕຕາຫາຣໄປຖວາຍ ພິກສຸໃດເຂົ້າໄປເຝົ້າພຣະຜູ້ມີພຣະພາຄ ເພິ່ງໃຫ້ພິກສຸຮູບນັ້ນສະແດງອາບັຕິປາຈິຕຕີຍ໌' ຂະນ້ອຍກໍຂາບທູລວ່າ 'ພຣະສົງຊ໌ໃນກຸງສາວັຕຖີຈະເປີດເຜີຍຕົນເອງອອກມາດ້ວຍກຕິກາຂອງຕົນ ຂ້າພຣະພຸທຫເຈົ້າຈະບໍ່ບັນຍັດສິ່ງທີ່ພຣະພຸທຫອົງຄ໌ບໍ່ໄດ້ຊົງບັນຍັດ ແລະຈະບໍ່ຖອນສິ່ງທີ່ພຣະພຸທຫອົງຄ໌ຊົງບັນຍັດໄວ້ແລ້ວ ຈະສມາທານປະພຶດໃນສິກຂາບົທທີ່ພຣະພຸທຫອົງຄ໌ຊົງບັນຍັດໄວ້ແລ້ວ ດັ່ງນີ້' ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງອນຸຍາຕໄວ້ແລ້ວວ່າ 'ພິກສຸຜູ້ຖືຢູ່ປ່າເປັນວັຕຣ ຖືບິນທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ເຂົ້າຢັ້ງມເຮົາໄດ້ຕາມສະດວກ" ຄັ້ງນັ້ນ ພິກສຸເຫລົ່ານັ້ນກ່າວວ່າ "ທ່ານພຣະອຸປເສນວັງຄັນຕບຸຕຣກ່າວແມ່ນແທ້ ພຣະສົງຊ໌ບໍ່ຄວຣບັນຍັດສິ່ງທີ່ພຣະພຸທຫເຈົ້າຍັງບໍ່ໄດ້ຊົງບັນຍັດໄວ້ ບໍ່ຄວຣເພີກຖອນສິ່ງທີ່ພຣະອົງຄ໌ຊົງບັນຍັດໄວ້ ເພິ່ງສມາທານປະພຶດໃນສິກຂາບົທທີ່ພຣະພຸທຫອົງຄ໌ຊົງບັນຍັດໄວ້" ພິກສຸທັງຫລາຍພໍຊາບຂ່າວວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ພິກສຸຜູ້ຖືຢູ່ປ່າເປັນວັຕຣ ຖືບິນທບາຕເປັນວັຕຣ ຖືຊົງຜ້າບັງສຸກຸລເປັນວັຕຣ ເຂົ້າເຝົ້າໄດ້ຕາມສະດວກ" ຈຶ່ງປຣາຖນາເຂົ້າເຝົ້າ ໄດ້ລະຖິ້ມສັນທັຕພາກັນສມາທານອາຣັຍ ຍົກທຸດົງຄ໌ ປິນທປາຕິກທຸດົງຄ໌ແລະບັງສຸກູລິກທຸດົງຄ໌໑

ຕໍ່ມາ ພຣະຜູ້ມີພຣະພາຄພ້ອມພິກສຸຈຳນວນຫລາຍສເດັຈປຣະພາສຕາມເສນາສນະ ທອດພຣະເນຕຣເຫັນສັນທັຕຖືກທອດຖິ້ມໄວ້ໃນທີ່ນັ້ນໆຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ສັນທັຕທີ່ຖືກທອດຖິ້ມໄວ້ໃນທີ່ນັ້ນໆເປັນຂອງໃຜ" ພິກສຸເຫລົ່ານັ້ນໄດ້ຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ພິກສຸທັງຫລາຍໂດຍອາສັຍອຳນາຈປໂຍດ ໑໐ ປະການ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຂ໌

໒. ເພື່ອຄວາມຜາສຸກແຫ່ງສົງຂ໌

໓. ເພື່ອຂົ່ມບຸຄຄົລຜູ້ເກີ້ອກູນຍາກ

໔. ເພື່ອຄວາມຢູ່ຜາສຸກແຫ່ງເຫລົ່າພິກສຸຜູ້ມີສີລດີງາມ

໕. ເພື່ອປິດກັ້ນອາສວະທັງຫລາຍອັນຈະບັງເກີດໃນປັຈຈຸບັນ

໖. ເພື່ອກຳຈັດອາສວະທັງຫລາຍອັນຈະບັງເກີດໃນອນາຄຕ

໗. ເພື່ອຄວາມເຫລື້ອມໃສຂອງຄົນທີ່ຍັງບໍ່ເຫລື້ອມໃສ

໘. ເພື່ອຄວາມເຫລື້ອມໃສຍິ່ງຂຶ້ນໄປຂອງຄົນທີ່ເຫລື້ອມໃສແລ້ວ

໙. ເພື່ອຄວາມຕັ້ງໝັ້ນແຫ່ງສັທທັມ

໑໐. ເພື່ອເອື້ອເຟື້ອວິນັຍ"

ແລ້ວຈຶ່ງຣັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ "ອາຣັຍຍິກທຸດົງຄ໌" ຄືຂໍ້ປະຕິບັດຂັດເກົາກິເລສຂອງຜູ້ຖືຢູ່ໃນປ່າ ຫ່າງຈາກໝູ່ບ້ານຢ່າງໜ້ອຍ ໕໐໐ ຊົ່ວທນູ ຄືປະມານ ໒໕ ເສັ້ນ (ເບິ່ງຂໍ້ ໖໕໔ ໜ້າ ໑໗໔) "ບິນທຸປາຕິກທຸດົງຄ໌" ຖືບິນທຸບາຕເປັນວັຕຣ ບໍ່ຮັບນິມົນຕ໌

"ປັງສຸກຸລິກທຸດົງຄ໌" ຖືຜ້າບັງສຸກຸລເປັນວັຕຣ ບໍ່ຮັບຖວາຍຈີວອນ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນທ໌] ໑. ໂກສິຍວັຄ ໕. ນິສີທນສັນຖຕສິກຂາບົທ
ສິກຂາບົທວິພັງຄ໌

ພຣະບັນຍັດ

[໕໒໗] ກໍ ພິກສຸຜູ້ໃຊ້ໃຫ້ທຳສັນຖັດຂອງນັ່ງ ເພິງເອົາສັນຖັດເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ເພື່ອເຮັດໃຫ້ເສັ່ງສີ ຖ້າບໍ່ເອົາສັນຖັດເກົ່າ ໑ ຄືບສຸຄຕໂດຍຮອບມາປົນໃຊ້ໃຫ້ທຳສັນຖັດຂອງນັ່ງ ໃຫມ່ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະອຸປເສນວັງຄັນຕບຸຕຣ ຈົບ

ສິກຂາບົທວິພັງຄ໌

[໕໒໘] ທີ່ຊື່ວ່າ ຂອງນັ່ງ ພຣະອົງຄ໌ຕຣັສມຸ່ງເອົາຜ້າມີຂາຍ

ທີ່ຊື່ວ່າ ສັນຖັດ ໄດ້ແກ່ ຜ້າຂອງນັ່ງທີ່ຫລໍ່ ບໍ່ແມ່ນຕ່ຳ

ຄຳວ່າ ຜູ້ໃຊ້ໃຫ້ທຳ ຄື ທຳເອງຫລືໃຊ້ໃຫ້ທຳ

ທີ່ຊື່ວ່າ ສັນຖັດເກົ່າ ຄື ທີ່ໃຊ້ປູນັ່ງແດ່ ໃຊ້ປູນອນແດ່ ແມ່ນຄາວດຽວ

ຄຳວ່າ ເພິງເອົາສັນຖັດເກົ່າ ໑ ຄືບສຸຄຕໂດຍຮອບມາປນເພື່ອເຮັດໃຫ້ເສັ່ງສີ ຄື ຕັດເປັນຮູບຊົງ ກລມ ຫລືຮູບສີ່ເຫລີ່ຍມ ແລ້ວຈຶ່ງລາດໃນສ່ວນນຶ່ງ ຫລືສາງອອກແລ້ວຈຶ່ງລາດເພື່ອຄວາມຄົງທົນ

ຄຳວ່າ ຖ້າບໍ່ເອົາສັນຖັດເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ຄວາມວ່າ ບໍ່ຖືເອົາສັນຖັດເກົ່າ ໑ ຄືບ ສຸຄຕໂດຍຮອບ ທຳເອງຫລືໃຊ້ໃຫ້ຜູ້ອື່ນທຳສັນຖັດຂອງນັ່ງໃຫມ່ ຕ້ອງອາບັຕິທຸກກຕເພາະພຍາ ຍາມ ສັນຖັດເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄນະຫລືແກ່ບຸຄຄົລ ພິກສຸທັງຫລາຍ ພິກສຸເພິງສລະສັນຖັດທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະສັນຖັດທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸ ເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ສັນຖັດຂອງນັ່ງຜືນນີ້ ຜູ້ຂ້າບໍ່ໄດ້ເອົາສັນຖັດເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ໃຊ້ໃຫ້ທຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະສັນຖັດຜືນນີ້ແກ່ສົງຄ໌” ຄັນສລະ ແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັດທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ “ທ່ານຜູ້ ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສັນຖັດຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິງໃຫ້ສັນຖັດຜືນນີ້ແກ່ພິກສຸຊື່ນີ້”

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ສັນຖັຕຮອງນັ່ງຜືນນີ້ຜູ້ຂ້າບໍ່ໄດ້ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ໃຊ້ໃຫ້ທຳ ເປັນນິສສັຄຄິຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ສັນຖັຕຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສັນຖັຕຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ສັນຖັຕຮອງນັ່ງຜືນນີ້ ຜູ້ຂ້າບໍ່ໄດ້ເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາປົນ ໃຊ້ໃຫ້ທຳ ເປັນນິສສັຄຄິຍ໌ ຜູ້ຂ້າສລະສັນຖັຕຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນສັນຖັຕທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າ ຄືນສັນຖັຕຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນ຺ຫ໌] ໔. ໂກສິຍວັຄ ໕. ນິສີທນສັນຖຕສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໖໙] ພິກສຸທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຕົນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກສຸທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳສັນຖັຕທີ່ຜູ້ອື່ນທຳຄ້າງໄວ້ຈົນສຳເຣັຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍຄແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໗໐] ໑. ພິກສຸເອົາສັນຖັຕເກົ່າ ໑ ຄືບສຸຄຕໂດຍຮອບມາທຳ

໒. ພິກສຸຫາສັນຖັຕເກົ່າບໍ່ໄດ້ຈຶ່ງເອົາແຕ່ນ້ອຍມາທຳ

໓. ພິກສຸຫາສັນຖັຕເກົ່າບໍ່ໄດ້ເລີຍບໍ່ເອົາມາທຳ

໔. ພິກສຸໄດ້ສັນຖັຕທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ

໕. ພິກສຸທຳເປັນເພດານ ເຄື່ອງລາດພື້ນ ມ່ານ ເປືອກເສື່ອ ຫລືປອກຫມອນ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ນິສີທນສັນຖຕສິກຂາບົທທີ 5 ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ໖. ເອຣູກໂລມສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໖. ເອຣູກໂລມສິກຂາບົທ

ວ່າດ້ວຍການຮັບຂົນຈຽມ໑

ເລື້ອງພິກສຸຮູບໃດຮູບນຶ່ງຮັບຂົນຈຽມຣະຫວ່າງທາງ

[໕໗໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຮູບນຶ່ງຍ່າງທາງໄປກຸງສາວັຕຖີໃນຊົນບົທແຄວ້ນໂກສົລ ຣະຫວ່າງທາງ ຂົນຈຽມເກີດຂຶ້ນ ທ່ານຈຶ່ງໃຊ້ອຸຕຕຣາສົງຄ໌ຫໍ່ ຂົນຈຽມໄປ ພວກຊາວບ້ານເຫັນທ່ານຈຶ່ງເວົ້າສັພຍອກວ່າ "ທ່ານຊື້ຂົນຈຽມມາຣາຄາເທົ່າໃດ ຈະຂາຍມີກຳໄຣເທົ່າໃດ" ທ່ານຖືກຊາວບ້ານເວົ້າສັພຍອກຈຶ່ງເກີ້ເຂີນ ຄັນເຖິງກຸງສາວັຕຖີ ໄດ້ໂຍນຂົນຈຽມເຫລົ່ານັ້ນຖິ້ມໄປ ທັງທີ່ຢືນຢູ່ນັ້ນແຫລະ ພິກສຸທັງຫລາຍກ່າວກັບທ່ານຢ່າງນີ້ວ່າ "ເປັນຫຍັງທ່ານຈຶ່ງໂຍນຂົນຈຽມເຫລົ່ານັ້ນຖິ້ມທັງທີ່ຢືນຢູ່ລະ" ທ່ານຕອບວ່າ "ຈິງຢ່າງນັ້ນ ທ່ານທັງຫລາຍ ຜູ້ຂ້າຖືກພວກຊາວບ້ານເວົ້າສັພຍອກເພາະຂົນຈຽມເຫລົ່ານີ້" ພິກສຸທັງຫລາຍຖາມວ່າ "ທ່ານນຳຂົນຈຽມເຫລົ່ານີ້ມາໄກເທົ່າໃດ" ພິກສຸ

ຮູບນັ້ນຕອບວ່າ "ເກີນ ໖ ໂຍຊນ໌ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງນຳຂົນຈຽມມາໄກເກີນ ໖ ໂຍຊນ໌ລະ" ຄັນພິກສຸທັງຫລາຍຕຳໜິ ພິກສຸຮູບນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ຂົນຈຽມ ຄື ເອຍກໂລມ ຂົນແກະ ຂົນແພະ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໔. ໂກສິຍວັຄ ໓. ເອຍກໂລມສິກຂາບົທ ສິກຂາບົທວິພັງຄ໌

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ ນັ້ນວ່າ "ພິກສຸ ຊາບວ່າທ່ານນຳຂົນຈຽມມາໄກເກີນ ໖ ໂຍຊນ໌ ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສ ຈັ່ງ ໃດທ່ານຈຶ່ງນຳຂົນຈຽມມາໄກເກີນ ໖ ໂຍຊນ໌ລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໗໔] ກໍ ຂົນຈຽມເກີດຂຶ້ນແກ່ພິກສຸຜູ້ຍ່າງທາງໄກ ພິກສຸຕ້ອງການກໍເພິ່ງຮັບໄດ້ ຄັນຮັບແລ້ວ ເມື່ອບໍ່ມີຄົນນຳໄປໃຫ້ ເພິ່ງນຳໄປເອງຕລອດຣະຍະ ໖ ໂຍຊນ໌ເປັນຢ່າງຫລາຍ ຖ້າເມື່ອບໍ່ມີຄົນ ນຳໄປໃຫ້ ນຳໄປໄກກວ່ານັ້ນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ເອື້ອງພິກສຸຮູບໃດຮູບນຶ່ງຮັບຂົນຈຽມຣະຫວ່າງທາງ ຈົບ

ສິກຂາບົທວິພັງຄ໌

[໕໗໖] ຄຳວ່າ ກໍ. . . ແກ່ພິກສຸຜູ້ຍ່າງທາງໄກ ໄດ້ແກ່ ພິກສຸຜູ້ຍ່າງທາງ

ຄຳວ່າ ຂົນຈຽມເກີດຂຶ້ນ ຄື ເກີດຈາກສົງຂ໌ ຈາກຄນະ ຈາກຍາຕ ຈາກມິຕຣຫລືທີ່ເປັນຂອງ ບັງສຸກຸລ ຫລືທີ່ໄດ້ມາດ້ວຍຊັພຍ໌ຂອງຕົນ

ຄໍາວ່າ ຕ້ອງການ ຄື ເມື່ອຕ້ອງການກໍຮັບໄວ້ໄດ້

ຄໍາວ່າ ຄັນຮັບແລ້ວ. . . ເພິ່ງນໍາໄປເອງຕລອດຣະຍະ ៣ ໂຍຊນ໌ເປັນຢ່າງຫລາຍ ຄື ນໍາໄປເອງໄດ້ ៣ ໂຍຊນ໌

ຄໍາວ່າ ເມື່ອບໍ່ມີຄົນນໍາໄປໃຫ້ ຄວາມວ່າ ບໍ່ມີຄົນອື່ນ ຄື ສຕຣີ ບຸຣຸສ ຄຣືຫັສຖ໌ຫລືບັພຊິຕ ຄອຍຊ່ວຍນໍາໄປ

ຄໍາວ່າ ຖ້າເມື່ອບໍ່ມີຄົນນໍາໄປໃຫ້ ນໍາໄປໄກກວ່ານັ້ນ ອທິບາຍວ່າ ພິກສຸຢ່າງຕີນທີ ໑ ຜ່ານ ៣ ໂຍຊນ໌ໄປ ຕ້ອງອາບັຕິທຸກກຕ ຢ່າງຕີນທີ ໔ ຜ່ານໄປ ຂົນຈຽມທັງຫລາຍເປັນນິສສັຄຄີຍ໌ ພິກສຸຢືນຢູ່ພາຍໃນຣະຍະ ៣ ໂຍຊນ໌ ໂຍນຂົນຈຽມອອກນອກຣະຍະ ៣ ໂຍຊນ໌ ຂົນຈຽມທັງຫລາຍເປັນນິສສັຄຄີຍ໌ ພິກສຸລັກຂົນຈຽມໃນຍານພາຫນະຫລືໃນຫໍ່ຂອງຂອງຜູ້ອື່ນທີ່ເຂົາບໍ່ຮູ້ ຢ່າງຕີນໄປເກີນ ៣ ໂຍຊນ໌ ຂົນຈຽມທັງຫລາຍເປັນນິສສັຄຄີຍ໌ ຄືເປັນຂອງຈໍາຕ້ອງສລະແກ່ສົງຄ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຂົນຈຽມທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຂົນຈຽມທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ ຜູ້ຂ້ານໍາໄປເກີນ ៣ ໂຍຊນ໌ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຂົນຈຽມເຫລົ່ານີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ຂົນຈຽມເຫລົ່ານີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ ຜູ້ຂ້ານໍາໄປເກີນ ៣ ໂຍຊນ໌ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງ

ຫລາຍຈຶ່ງຟັງຂ້າພະເຈົ້າ ຂົນຈຽມເຫລົ່ານີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິ່ງໃຫ້ຂົນຈຽມເຫລົ່ານີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຂົນຈຽມເຫລົ່ານີ້ ຜູ້ຂ້ານຳໄປເກີນ ໓ ໂຍຊນ໌ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິ່ງຮັບອາບັຕິ ແລ້ວຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຂົນຈຽມເຫລົ່ານີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໗໔] ເກີນຣະຍະ ໓ ໂຍຊນ໌ ພິກສຸສຳຄັນວ່າເກີນ ນຳໄປເກີນ ໓ ໂຍຊນ໌ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກີນຣະຍະ ໓ ໂຍຊນ໌ ພິກສຸບໍ່ແນ່ໃຈ ນຳໄປເກີນ ໓ ໂຍຊນ໌ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເກີນຣະຍະ ໓ ໂຍຊນ໌ ພິກສຸສຳຄັນວ່າຫນ້ອຍກວ່າ ນຳໄປເກີນ ໓ ໂຍຊນ໌ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກກຕ

ຫນ້ອຍກວ່າ ໓ ໂຍຊນ໌ ພິກສຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຕ

ຫນ້ອຍກວ່າ ໓ ໂຍຊນ໌ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຫນ້ອຍກວ່າ ໓ ໂຍຊນ໌ ພິກສຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໗໕] ໑. ພິກສຸນຳໄປພຽງ ໓ ໂຍຊນ໌

໒. ພິກສຸນຳໄປຫນ້ອຍກວ່າ ໓ ໂຍຊນ໌

໓. ພິກສຸນຳໄປກໍດີ ນຳກັບກໍດີ ພຽງຣະຍະ ໓ ໂຍຊນ໌

໔. ພິກສຸນຳໄປພຽງຣະຍະ ໓ ໂຍຊນ໌ ປະສົງຄ໌ຈະພັກອາສັຍ ແລ້ວນຳໄປຈາກທີ່ນັ້ນ໑

໕. ພິກສຸໄດ້ຂົນຈຽມທີ່ຖືກຊິງໄປຄືນມາ ແລ້ວນຳໄປອີກ

໘. ພິກສຸໄດ້ຂົນຈຽມທີ່ສລະໄປຄືນມາ ແລ້ວນຳໄປອີກ
໗. ພິກສຸໃຊ້ໃຫ້ຜູ້ອື່ນຊ່ອຍນຳໄປ
໗. ພິກສຸນຳຂົນຈຽມທີ່ທຳເປັນສິ່ງຂອງໄປ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ເອຣູກໂລມສິກຂາບົທທີ ໘ ຈົບ

ເຊີງອັນຖະ :
໑ ປະສົງຄ໌ຈະພັກອາສັຍຢູ່ ເພື່ອສຶກສາຮ່ຳຮຽນ ສອບຖາມ ຫລືເພື່ອໄດ້ປັຈຈັຍເຄື່ອງອາສັຍ ແຕ່ເພາະບໍ່ໄດ້ສິ່ງເຫລົ່ານັ້ນ ຈຶ່ງຈາກທີ່ນັ້ນໄປ (ວິ. ອ. ໒/໕໗໕/໑໙໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ໗. ເອຣູກໂລມໂທອາປນສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ

໗. ເອຣູກໂລມໂທອາປນສິກຂາບົທ

ວ່າດ້ວຍການໃຫ້ຊັກຂົນຈຽມ

ເຣື້ອງພຣະສັພພັຄຄີຍ໌

[໕໗໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ນິໂຄຣທາຣາມ ເຂຕກຸງກບິລພັສດຸ໌ ແຄວັນສັກກະ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໃຊ້ພວກພິກສຸນີໃຫ້ຊັກແດ່ ໃຫ້ຍ້ອມແດ່ ສາງແດ່ ຊຶ່ງຂົນຈຽມ ພວກພິກສຸນີຊັກ ຍ້ອມ ສາງ ຊຶ່ງຂົນຈຽມ ຈຶ່ງລະເລີຍອຸທເທສ ປຣິປຸຈສາ ອທິສີລ ອທິຈິຕ ອທິປັນຍາປັນຍາ
ສມັຍນັ້ນ ພຣະນາງມຫາປຊາບດີໂຄຕມີ ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອພິວາທ ແລ້ວປະທັບຢືນ ນະ ທີ່ສົມຄວຣ ພຣະຜູ້ມີພຣະພາຄໄດ້ຕຣັສກັບພຣະນາງມຫາປຊາບດີໂຄຕມີ ຜູ້ຢືນຢູ່ວ່າ “ໂຄຕມີ ພວກພິກສຸນີບໍ່ປມາດ ຍັງມີຄວາມພຽນ ມີຄວາມມຸ່ງຫມັ້ນຢູ່ຫລື”

ພຣະນາງຂາບທູລວ່າ "ພຣະພຸທຫຼເຈົ້າຂ້າ ພິກສຸນີທັງຫລາຍຈະມີຄວາມບໍ່ປມາດແຕ່ທີ່ໃດ ພວກພິກສຸສັພພັຄຄີຍ໌ໃຊ້ພວກພິກສຸນີໃຫ້ຊັກແດ່ ໃຫ້ຍ້ອມແດ່ ໃຫ້ສາງແດ່ ຊຶ່ງຂົນຈຽມ ພວກພິກສຸນີນັ້ນຊັກ ຍ້ອມ ສາງ ຊຶ່ງຂົນຈຽມຢູ່ ຈຶ່ງລະເລີຍອຸທເທສ ປຣິປຸຈສາ ອທິສີລ ອທິຈິຕ ອທິປັນຍາ" ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພຣະນາງມຫາປຊາບດີເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ລຳດັບນັ້ນ ພຣະນາງມຫາປຊາບດີໂຄຕມີ ຄັນພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນ ເບີກບານດ້ວຍທັມມີກຖາແລ້ວ ຈຶ່ງຖວາຍອພິວາທພຣະຜູ້ມີພຣະພາຄ ທຳປຣະທັກສີນ(ວຽນໄປທາງຂວາ)ແລ້ວຈາກໄປ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໔. ໂກສີຍວັຄ ໗. ເອຼກໂລມໂທອາປນ ສິກຂາບົທ ສິກຂາບົທວິພັງຄ໌

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ພິກສຸນີໃຫ້ຊັກແດ່ ໃຫ້ຍ້ອມແດ່ ໃຫ້ສາງແດ່ ຊຶ່ງຂົນຈຽມ ແມ່ນແທ້ບໍ່" ພຣະສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທຫຼເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງຫລາຍ ພິກສຸນີເຫລົ່ານັ້ນ ເປັນຍາຕຂອງພວກທ່ານຫລືວ່າບໍ່ແມ່ນຍາຕ" ພວກພິກສຸສັພພັຄຄີຍ໌ຂາບທູລວ່າ "ບໍ່ແມ່ນຍາຕ ພຣະພຸທຫຼເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ໂມຂບຸຣຸສທັງຫລາຍ ບຸຄຄົລຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມຫລືບໍ່ເຫມາະສົມ ຄວາມຫນ້າເຫລື້ອມໃສຫລືບໍ່ຫນ້າເຫລື້ອມໃສຂອງບຸຄຄົລຜູ້ບໍ່ແມ່ນຍາຕ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ພິກສຸນີໃຫ້ຊັກແດ່ ໃຫ້ຍ້ອມແດ່ ໃຫ້ສາງແດ່ຊຶ່ງຂົນຈຽມລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໗໗] ກໍ ພິກສຸໃດໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ໃຫ້ຍ້ອມ ຫລືໃຫ້ສາງຂົນຈຽມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເລື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໗໗] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໘ ຝ່າຍ

ພິກສຸສັ່ງວ່າ "ຈົງຊັກ" ຕ້ອງອາບັຕິທຸກກຕ ຂົນຈຽມທີ່ຊັກແລ້ວ ເປັນນິສສັຄຄີຍ໌

ພິກສຸສັ່ງວ່າ "ຈົງຍ້ອມ" ຕ້ອງອາບັຕິທຸກກຕ ຂົນຈຽມທີ່ຍ້ອມແລ້ວ ເປັນນິສສັຄຄີຍ໌

ພິກສຸສັ່ງວ່າ "ຈົງສາງ" ຕ້ອງອາບັຕິທຸກກຕ ຂົນຈຽມທີ່ສາງແລ້ວ ເປັນນິສສັຄຄີຍ໌ ຄື ເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິງຮັບສລະຂົນຈຽມທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຂົນຈຽມທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ ຜູ້ຂ້າໃຊ້ໃຫ້ພິກສຸນີຜູ້ບໍ່ແມ່ນຍາຕຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຂົນຈຽມທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຂົນຈຽມເຫລົ່ານີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຂົນຈຽມເຫລົ່ານີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຂົນຈຽມເຫລົ່ານີ້ຜູ້ຂ້າໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ຂ້າສລະຂົນຈຽມເຫລົ່ານີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຂີນຈຽນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງ ຫລາຍຈົ່ງຟັງຂ້າພະເຈົ້າ ຂີນຈຽນເຫລົ່ານີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງ ຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິ່ງໃຫ້ຂີນຈຽນເຫລົ່ານີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢັ້ງປະນົມມື ກ່າວ ຢ່າງນີ້ວ່າ "ທ່ານຂນ້ອຍ ຂີນຈຽນເຫລົ່ານີ້ຜູ້ຂ້າໃຊ້ພິກສຸນີຜູ້ບໍ່ແມ່ນຍາຕໃຫ້ຊັກ ເປັນນິສສັຄຄີຍ໌ ຜູ້ ຂ້າສລະຂີນຈຽນເຫລົ່ານີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິ່ງຮັບ ອາບັຕິ ແລ້ວຄືນຂີນຈຽນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຂີນຈຽນເຫລົ່ານີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໑

[໕໗໙] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກຂີນຈຽນ ຕ້ອງອາບັຕິນິສ ສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຂີນຈຽນ ຕ້ອງອາບັຕິ ທຸກກຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ສາງຂີນຈຽນ ຕ້ອງອາບັຕິທຸກ ກຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ສາງຂີນຈຽນ ຕ້ອງອາບັຕິທຸກກຕ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໔

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມຂີນຈຽນ ຕ້ອງອາບັຕິນິສສັຄຄີຍ ປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ສາງຂີນຈຽນ ຕ້ອງອາບັຕິ ທຸກກຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ຊັກຂີນຈຽນ ຕ້ອງອາບັຕິ ທຸກກຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ຍ້ອມ ໃຊ້ໃຫ້ສາງ ໃຊ້ໃຫ້ຊັກຂົນຈຽມ ຕ້ອງອາບັຕິທຸກກົຕ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ສຳຄັນວ່າບໍ່ແມ່ນຍາຕ ຈຕຸກກະທີ ໓

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງຂົນຈຽມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງ ໃຊ້ໃຫ້ຊັກຂົນຈຽມ ຕ້ອງອາບັຕິທຸກກົຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງ ໃຊ້ໃຫ້ຍ້ອມຂົນຈຽມ ຕ້ອງອາບັຕິທຸກກົຕກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຊ້ໃຫ້ສາງ ໃຊ້ໃຫ້ຊັກ ໃຊ້ໃຫ້ຍ້ອມຂົນຈຽມ ຕ້ອງອາບັຕິທຸກກົຕ ໔ ຕົວ ກັບອາບັຕິນິສສັຄຄີຍປາຈິຕຕີຍ໌

ບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ

[໕໗໐] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຯລຯ ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ຯລຯ

ພິກສຸໃຊ້ພິກສຸນີໃຫ້ຊັກຂົນຈຽມຂອງພິກສຸອື່ນ ຕ້ອງອາບັຕິທຸກກົຕ

ພິກສຸໃຊ້ພິກສຸນີຜູ້ອຸປສົມບົທຈາກສົງຂ໌ຝ່າຍດຽວໃຫ້ຊັກ ຕ້ອງອາບັຕິທຸກກົຕ

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ຕ້ອງອາບັຕິທຸກກົຕ

ພິກສຸນີທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ

ພິກສຸນີທີ່ເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໗໑] ໑. ພິກສຸນີຜູ້ເປັນຍາຕຊັກໃຫ້ ໂດຍມີເພື່ອນພິກສຸນີຜູ້ບໍ່ແມ່ນຍາຕຄອຍຊ່ວຍເຫລືອ

໒. ພິກສຸເຈົ້າຂອງຂົນຈຽມທີ່ພິກສຸນີອາສາຊັກໃຫ້

໓. ພິກສຸໃຊ້ໃຫ້ຊັກຂົນຈຽມທີ່ທຳເປັນສິ່ງຂອງຊຶ່ງບໍ່ໄດ້ໃຊ້ສອຍ

໔. ພິກສຸໃຊ້ໃຫ້ສິກຂມານາຊັກ

໕. ພິກສຸໃຊ້ໃຫ້ສາມເນຣຊັກ
໖. ພິກສຸວິກົລຈິຕ
໗. ພິກສຸຕົ້ນບັນຍັດ

ເອຣກໂລມໂທອາປນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໔. ໂກສິຍວັຄ ໗. ຣູປິຍສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

໗. ຣູປິຍສິກຂາບົທ

ວ່າດ້ວຍການຮັບຣູປິຍະ

ເຣື້ອງພຣະອຸປນັນທສຸກຍບຸຕຣ

[໕໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະອຸປນັນທສຸກຍບຸຕຣເປັນພຣະປະຈຳຕະກູນຂອງຕະກູນນຶ່ງ ຮັບພັຕຕາຫາຣຢູ່ເປັນປະຈຳ ຫາກຂອງຄ້ຽວຂອງສັນອັນໃດເກີດຂຶ້ນໃນຕະກູນນັ້ນ ເຂົາກໍຈະເກັບຂອງຄ້ຽວຂອງສັນອັນນັ້ນໄວ້ເພື່ອທ່ານສ່ວນນຶ່ງ ສມັຍນັ້ນ ໃນເວລາເຢັນ ເນື້ອເກີດຂຶ້ນໃນຕະກູນນັ້ນ ເຂົາໄດ້ເກັບເນື້ອນັ້ນໄວ້ເພື່ອທ່ານພຣະອຸປນັນທສຸກຍບຸຕຣສ່ວນນຶ່ງ ເດັກໃນຕະກູນນັ້ນຕື່ນເຊົ້າມືດ ຮ້ອງໄຫ້ອ້ອນວອນວ່າ "ພວກທ່ານໂປຣດໃຫ້ເນື້ອແກ່ຜູ້ຂ້າ" ເທື່ອນັ້ນ ສາມີສັ່ງພັຣຍາວ່າ "ທ່ານຈົ່ງໃຫ້ເນື້ອສ່ວນຂອງພຣະຄຸນເຈົ້າແກ່ເດັກ ເຮົາຈະຊື້ຂອງອື່ນຖວາຍທ່ານ" ລຳດັບນັ້ນ ທ່ານພຣະອຸປນັນທສຸກຍບຸຕຣຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປເຖິງຕະກູນນັ້ນ ນັ່ງເທິງອາສນະທີ່ເຂົາປູລາດໄວ້ ຊາຍຜູ້ນັ້ນເຂົ້າໄປຫາທ່ານພຣະອຸປນັນທສຸກຍບຸຕຣເຖິງອາສນະຄັນເຖິງແລ້ວໄຫວ້ທ່ານແລ້ວນັ່ງລົງ ນະ ທີ່ສົມຄວຣ ກ່າວວ່າ "ທ່ານຜູ້ຈະເຣີນ ເມື່ອວັນວານໃນເວລາເຢັນ ໄດ້ມີເນື້ອເກີດຂຶ້ນ ພວກຂ້າພະເຈົ້າໄດ້ເກັບເນື້ອນັ້ນໄວ້ເພື່ອພຣະຄຸນເຈົ້າສ່ວນນຶ່ງ ເດັກຄືນນີ້ຕື່ນເຊົ້າມືດ ຮ້ອງໄຫ້ອ້ອນວອນວ່າ 'ພວກທ່ານໂປຣດໃຫ້ເນື້ອແກ່ຜູ້ຂ້າ' ພວກເຮົາຈຶ່ງໃຫ້ສ່ວນຂອງພຣະຄຸນເຈົ້າແກ່ເດັກ ພຣະຄຸນເຈົ້າຈະໃຫ້ຜູ້ຂ້ານຳ ກຫາປນະ ໄປແລກຫຍັງມາຂນ້ອຍ" ທ່ານພຣະອຸປນັນທສຸກຍບຸຕຣຖາມວ່າ "ທ່ານບໍຣິຈາຄຊັພຍ໌ ໑ ກຫາປນະ ແກ່

ອາຕມາຫລື” ເຂົາຕອບວ່າ “ແມ່ນແລ້ວ ຂນ້ອຍ” ທ່ານພຣະອຸປນັນທສ຺າກຍບຸຕຣກ່າວວ່າ “ທ່ານຈົ່ງຖວາຍກຫາປນ຺ະນັ້ນແກ່ອາຕມາເຖີດ” ເທື່ອນັ້ນ ເຂົາຖວາຍກຫາປນ຺ະແກ່ທ່ານພຣະອຸປນັນທສ຺າກຍບຸຕຣແລ້ວຕຳຫນິ ປະນາມ ໂພນທະນາວ່າ “ພຣະສມນ຺ະເຊື້ອສາຍສ຺າກຍບຸຕຣເຫລົ່ານີ້ຮັບຣູປິຍະ໑ ເຫມືອນພວກເຮົາ” ພວກພິ຺ກສຸໄດ້ຍິນບຸຣຸສ຺ນັ້ນຕຳຫນິ ປະນາມ ໂພນທະນາ ບັນດາພິ຺ກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈົ່ງໃດທ່ານພຣະອຸປນັນທສ຺າກຍບຸຕຣ ຈຶ່ງຮັບຣູປິຍະ ລະ” ຄັ້ນພິ຺ກສຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສ຺າກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພ຺າຄໃຫ້ຊົງຊາບ

ຊົງປະຊຸມສົງຂ຺ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພ຺າຄຮັບສັ່ງໃຫ້ປະຊຸມສົງຂ຺ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສ຺າກຍບຸຕຣວ່າ “ອຸປນັນທະ ຊາບວ່າ ທ່ານຮັບຣູປິຍະແມ່ນແທ້ບໍ” ທ່ານພຣະອຸປນັນທສ຺າກຍບຸຕຣທູລຮັບວ່າ “ແມ່ນແທ້ພຣະພຸທທ຺ເຈົ້າຂ້າ” ພຣະຜູ້ມີພຣະພ຺າຄພຸທທ຺ເຈົ້າຊົງຕຳຫນິວ່າ “ຯລຯ ໂມຂ຺ບຸຣຸສ຺ ຈົ່ງໃດທ່ານຈຶ່ງຮັບຣູປິຍະລະ ໂມຂ຺ບຸຣຸສ຺ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິ຺ກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໗໓] ກໍ ພິ຺ກສຸໃດຮັບຫລືໃຊ້ໃຫ້ຜູ້ອື່ນຮັບທອງແລະເງິນ ຫລືຍິນດີທອງແລະເງິນທີ່ເຂົາເກັບໄວ້ໃຫ້ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ເຣື້ອງພຣະອຸປນັນທສ຺າກຍບຸຕຣ ຈົບ

ສິກຂາບົທວິພັ຺ງຄ໌

[໕໗໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພ຺າຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິ຺ກສຸ ມີອທິ຺ບາຍວ່າ ຊື່ວ່າພິ຺ກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພ຺າຄຊົງປະສົງຄ໌ເອົາວ່າ ພິ຺ກສຸ ໃນຄວາມຫມາຍນີ້

ເຊິງອັນຖະ :

໑ ຄຳວ່າ "ຣູປິຍະ" ຫມາຍເຖິງທອງແລະເງິນ (ວິ. ອ. ໒/໕ກ໘/໔໐໗)

ທີ່ຊື່ວ່າ ທອງ ພຣະອົງຄ໌ຕຣັສຫມາຍເຖິງວັຕຖຸທີ່ມີສີດຸຈພຣະສຸວັນຂອງພຣະສາສດາ
ທີ່ຊື່ວ່າ ເງິນ ໄດ້ແກ່ ກຫາປນະ ມາສກທີ່ເຮັດດ້ວຍໂລຫະ ມາສກທີ່ເຮັດດ້ວຍໄມ້ ມາສກທີ່ເຮັດດ້ວຍຄັ່ງ ທີ່ໃຊ້ເປັນອັຕຣາສຳລັບແລກປ່ຽນຊື້ຂາຍກັນ
ຄຳວ່າ ຮັບ ຄື ພິກສຸຮັບເອງ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຄຳວ່າ ໃຊ້ໃຫ້ຜູ້ອື່ນຮັບ ຄື ພິກສຸໃຫ້ຄົນອື່ນຮັບແທນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຄຳວ່າ ຫລືຍິນດີທອງແລະເງິນທີ່ເຂົາເກັບໄວ້ໃຫ້ ຄວາມວ່າ ພິກສຸຍິນດີຣູປິຍະທີ່ເຂົາເກັບໄວ້ໃຫ້ ໂດຍບອກວ່າ "ສິ່ງນີ້ເປັນຂອງທ່ານ" ດັ່ງນີ້ ຣູປິຍະນັ້ນເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະໃນທ່າມກາງສົງຂ໌
ພິກສຸທັງຫລາຍ ພິກສຸພຶງສລະຣູປິຍະທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຣູປິຍະທີ່ເປັນນິສສັຄຄີຍ໌

ພິກສຸຮູບນັ້ນພຶງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າຮັບຣູປິຍະໄວ້ ຣູປິຍະນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະຣູປິຍະນີ້ແກ່ສົງຂ໌" ຄັນສລະແລ້ວພຶງສະແດງອາບັຕິ ພິກສຸຜູ້ສລາດສາມາດພຶງຮັບອາບັຕິ ຖ້າຄົນງານວັດຫລືອຸບາສິກຜ່ານມາ ພຶງບອກເຂົາວ່າ "ທ່ານຈົ່ງຮູ້ສິ່ງນີ້" ຖ້າເຂົາກ່າວວ່າ "ຈະໃຫ້ຜູ້ຂ້ານຳສິ່ງນີ້ໄປແລກຫຍັງມາ" ບໍ່ຄວຣບອກເຂົາວ່າ "ຈົ່ງນຳຂອງນີ້ໆມາ" ຄວຣບອກແຕ່ຂອງທີ່ເປັນກັປປິຍະ ເຊັ່ນ ເນີຍໃສ ນ້ຳມັນ ນ້ຳເຜິ້ງ ຫລືນ້ຳອ້ອຍ ຖ້າເຂົານຳຣູປິຍະນັ້ນໄປແລກຂອງທີ່ເປັນກັປປິຍະມາຖວາຍ ຍົກເວັ້ນພິກສຸຜູ້ຮັບຣູປິຍະ ນອກນັ້ນທຸກຮູປສັນໄດ້ ຖ້າເຮັດໄດ້ຢ່າງນີ້ ນັ້ນເປັນການດີ ຖ້າທຳບໍ່ໄດ້ ພຶງບອກເຂົາວ່າ "ທ່ານໂປຣດຖິ້ມຂອງນີ້" ຖ້າເຂົາຖິ້ມໃຫ້ ນັ້ນເປັນການດີ ຖ້າບໍ່ຖິ້ມໃຫ້ ພຶງແຕ່ງຕັ້ງພິກສຸຜູ້ປະກອບດ້ວຍຄຸນສົມບັຕ ໕ ຢ່າງໃຫ້ເປັນຜູ້ຖິ້ມຣູປິຍະ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໒. ໂກສິຍວັຄ ກ. ຣູປິຍສິກຂາບົທ ບົທພາຊນີຍ໌

ຄຸນສົມບັດຂອງພິກສຸຜູ້ຖິ້ມຣູປິຍະ ໕ ຢ່າງ

໑. ບໍ່ລໍາອຽງເພາະຊອບ

໒. ບໍ່ລໍາອຽງເພາະຊັງ

໓. ບໍ່ລໍາອຽງເພາະຫລົງ

໔. ບໍ່ລໍາອຽງເພາະຢ້ານ

໕. ຮູ້ວິທີວ່າເປັນອັນຖິ້ມຫລືບໍ່ເປັນອັນຖິ້ມຣູປິຍະ

ວິທີແຕ່ງຕັ້ງພິກສຸຜູ້ຖິ້ມຣູປິຍະ ແລະຄໍາແຕ່ງຕັ້ງພິກສຸທັງຫລາຍ ສົງຊ໌ເພິງແຕ່ງຕັ້ງຢ່າງນີ້ ຄື ເບື້ອງຕົ້ນເພິງຂໍໃຫ້ພິກສຸຮັບ ຄັນແລ້ວພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຊ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໕໗໕] ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຊ໌ພ້ອມກັນແລ້ວເພິງແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ສົງຊ໌ແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ພິກສຸຊື່ນີ້ສົງຊ໌ແຕ່ງຕັ້ງໃຫ້ເປັນຜູ້ຖິ້ມຣູປິຍະ ສົງຊ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ພິກສຸຜູ້ໄດ້ຮັບແຕ່ງຕັ້ງນັ້ນເພິງຖິ້ມຣູປິຍະໄປ ຢ່າກໍາຫນົດທີ່ຕົກ ຖ້າຖິ້ມໂດຍກໍາຫນົດທີ່ຕົກ ຕ້ອງອາບັຕິທຸກກຏ

ບົທພາຊນີຍ໌

ຕິກນິສສັຄຄິຍປາຈິຕຕີຍ໌

[໕໗໖] ຣູປິຍະ ພິກສຸສໍາຄັນວ່າເປັນຣູປິຍະ ຮັບຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣູປິຍະ ພິກສຸບໍ່ແນ່ໃຈ ຮັບຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣູປິຍະ ພິກສຸສໍາຄັນວ່າບໍ່ແມ່ນຣູປິຍະ ຮັບຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ໗. ຣູປິຍສິກຂາບົທ ອນາປັຕຕິວາຣ

ທຸກກຸກກຕ

ສິ່ງທີ່ບໍ່ແມ່ນຣູປິຍະ ພິກສຸສຳຄັນວ່າເປັນຣູປິຍະ ຕ້ອງອາບັຕິທຸກກຕ

ສິ່ງທີ່ບໍ່ແມ່ນຣູປິຍະ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ສິ່ງທີ່ບໍ່ແມ່ນຣູປິຍະ ພິກສຸສຳຄັນວ່າບໍ່ແມ່ນຣູປິຍະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸຫຍິບເອງຫລືໃຊ້ໃຫ້ຄົນອື່ນຫຍິບຣູປິຍະຕກໃນວັດຫລືໃນທີ່ຢູ່ ເກັບໄວ້ດ້ວຍຕັ້ງໃຈວ່າເຈົ້າຂອງຈະມາເອົາໄປ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ຣູປິຍສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໔. ໂກສິຍວັຄ ໘. ຣູປິຍສັງໂວຫາຣສິກຂາບົທ ນິທານວັຕຖຸ

໔. ໂກສິຍວັຄ

໘. ຣູປິຍສັງໂວຫາຣສິກຂາບົທ

ວ່າດ້ວຍການແລກປ່ຽນຣູປິຍະ

ເຣື້ອງພຣະສັພພັຄຄີຍ໌

[໕໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ທຳການແລກປ່ຽນກັນດ້ວຍຣູປິຍະຊນິດຕ່າງໆພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງທຳການແລກປ່ຽນກັນດ້ວຍຣູປິຍະຊນິດຕ່າງໆເຫມືອນພວກຄຣຶຫັສຖ໌ທີ່ຍັງບໍຣິໂພຄກາມລະ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງທຳການແລກປ່ຽນກັນດ້ວຍຣູປິຍະ

ຊນິດຕ່າງໆລະ” ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານທຳການແລກປ່ຽນກັນດ້ວຍຣູປິຍະຊນິດຕ່າງໆແມ່ນແທ້ບໍ” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ຈິງພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ “ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງທຳການແລກປ່ຽນຣູປິຍະຊນິດຕ່າງໆລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໔. ໂກສິຍວັຄ ໙. ຣູປິຍສັງໂວຫາຣສິກຂາບົທ
ສິກຂາບົທວິພັງຄ໌

ພຣະບັນຍັດ

[໕໗໗] ກໍ ພິກສຸໃດທຳການແລກປ່ຽນກັນດ້ວຍຣູປິຍະຊນິດຕ່າງໆຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໗໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຄື ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຊນິດຕ່າງໆຄື ເປັນຣູປພັນແດ່ ບໍ່ເປັນຣູປພັນແດ່ ເປັນທັງຣູປພັນແລະບໍ່ເປັນຣູປພັນແດ່

ທີ່ຊື່ວ່າ ເປັນຣູປພັນະ ໄດ້ແກ່ ເຄື່ອງປະດັບສີສະ ເຄື່ອງປະດັບຄອ ເຄື່ອງປະດັບມື ເຄື່ອງປະດັບຕີນ ເຄື່ອງປະດັບແອວ

ທີ່ຊື່ວ່າ ບໍ່ເປັນຮູປພັນະ ພຣະອົງຄ໌ຕຣັສເຖິງຣູປິຍະທີ່ທຳເປັນແທ່ງ
ທີ່ຊື່ວ່າ ເປັນທັງຮູປພັນແລະບໍ່ເປັນຮູປພັນະ ໄດ້ແກ່ ເຄື່ອງປະດັບທັງ ໔ ປະເພດນັ້ນ
ທີ່ຊື່ວ່າ ຣູປິຍະ ໄດ້ແກ່ ວັຕຖຸທີ່ມີສີດຸຈພຣະສວີຂອງພຣະສາສດາ ກຫາປນະ ມາສກ ທີ່ເຮັດດ້ວຍໂລຫະ ມາສກທີ່ເຮັດດ້ວຍໄມ້ ມາສກທີ່ເຮັດດ້ວຍຄັ່ງ ທີ່ໃຊ້ເປັນອັຕຣາສຳລັບແລກປ່ຽນຊື້ຂາຍກັນ
ຄຳວ່າ ທຳກາຣ ຄື ເອົາຣູປິຍະທີ່ເປັນຮູປພັນແລກປ່ຽນກັບຣູປິຍະທີ່ເປັນຮູປພັນ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ເປັນຮູປພັນແລກປ່ຽນກັບຣູປິຍະທີ່ບໍ່ເປັນຮູປພັນະ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ເປັນຮູປພັນແລກປ່ຽນກັບຣູປິຍະທີ່ເປັນທັງຮູປພັນແລະບໍ່ເປັນຮູປພັນະ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ບໍ່ເປັນຮູປພັນ ແລກປ່ຽນກັບຣູປິຍະທີ່ເປັນຮູປພັນະ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ບໍ່ເປັນຮູປພັນ ແລກປ່ຽນກັບຣູປິຍະທີ່ບໍ່ເປັນຮູປພັນະ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ບໍ່ເປັນຮູປພັນແລກປ່ຽນກັບຣູປິຍະທີ່ເປັນທັງຮູປພັນແລະບໍ່ເປັນຮູປພັນ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ເປັນທັງຮູປພັນແລະບໍ່ເປັນຮູປພັນແລກປ່ຽນກັບຣູປິຍະທີ່ເປັນຮູປພັນ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ເປັນທັງຮູປພັນແລະບໍ່ເປັນຮູປພັນ ແລກປ່ຽນກັບຣູປິຍະທີ່ບໍ່ເປັນຮູປພັນ ເປັນນິສສັຄຄີຍ໌
ເອົາຣູປິຍະທີ່ເປັນທັງຮູປພັນແລະບໍ່ເປັນຮູປພັນ ແລກປ່ຽນກັບຣູປິຍະທີ່ເປັນທັງຮູປພັນແລະບໍ່ເປັນຮູປພັນ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະໃນທ່າມກາງສົງຄ໌
ພິກສຸທັງຫລາຍ ພິກສຸເພິງສລະຣູປິຍະທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຣູປິຍະທີ່ເປັນນິສສັຄຄີຍ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຄ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າທຳກາຣແລກປ່ຽນຣູປິຍະຊນິດຕ່າງໆຣູປິຍະນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະຣູປິຍະນີ້ແກ່ສົງຄ໌" ຄັນສລະແລ້ວເພິງສະແດງອາບັຕິ
ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ຖ້າຄົນວັດຫລືອຸບາສົກຜ່ານມາ ເພິງບອກເຂົາວ່າ "ທ່ານຈົ່ງຮູ້ຂອງນີ້" ຖ້າເຂົາຖາມວ່າ "ຈະໃຫ້ຜູ້ຂ້ານຳສິ່ງນີ້ໄປແລກຫຍັງມາ" ບໍ່ຄວຣບອກເຂົາວ່າ "ຈົ່ງນຳຂອງນີ້ຫລືຂອງນີ້ມາ" ຄວຣບອກສະເພາະຂອງທີ່ເປັນກັປປິຍະ ເຊັ່ນ ເນີຍໃສ ນ້ຳມັນ ນ້ຳເຜິ້ງ ຫລືນ້ຳອ້ອຍ ຖ້າເຂົານຳຣູປິຍະນັ້ນໄປແລກຂອງທີ່ເປັນກັປປິຍະມາຖວາຍ ຍົກເວັ້ນພິກສຸຜູ້ແລກປ່ຽນຣູປິ ຍະ ພິກສຸນອກນັ້ນທຸກຮູປສັນໄດ້ ຖ້າເຮັດໄດ້ຢ່າງນີ້ ນັ້ນເປັນກາຣດີ ຖ້າທຳບໍ່ໄດ້ ເພິງບອກເຂົາວ່າ "ໂປຣດຖິ້ມຂອງນີ້" ຖ້າເຂົາຖິ້ມໃຫ້ ນັ້ນເປັນກາຣດີ ຖ້າບໍ່ຖິ້ມໃຫ້ ເພິງແຕ່ງຕັ້ງພິກສຸຜູ້ປະກອບດ້ວຍຄຸນສົມບັຕ ໕ ຢ່າງໃຫ້ເປັນຜູ້ຖິ້ມຣູປິຍະ ຄື

ຄຸນສົມບັດຂອງພິກສຸຜູ້ຖິ້ມຣູປິຍະ ៥ ຢ່າງ

໑. ບໍ່ລຳອຽງເພາະຊອບ

໒. ບໍ່ລຳອຽງເພາະຊັງ

໓. ບໍ່ລຳອຽງເພາະຫລົງ

໔. ບໍ່ລຳອຽງເພາະຢ້ານ

໕. ຮູ້ວິທີວ່າເປັນອັນຖິ້ມຫລືບໍ່ເປັນອັນຖິ້ມ

ວິທີແຕ່ງຕັ້ງພິກສຸຜູ້ຖິ້ມຣູປິຍະ ແລະຄຳແຕ່ງຕັ້ງ

ສົງຂ໌ເພິງແຕ່ງຕັ້ງຢ່າງນີ້ ຄື ເບື້ອງຕົ້ນເພິງຂໍໃຫ້ພິກສຸຮັບ ຄັນແລ້ວພິກສຸຜູ້ສລາດ ສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໕໙໐] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມກັນແລ້ວເພິງແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສົງຂ໌ແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ຖິ້ມຣູປິຍະ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ພິກສຸຊື່ນີ້ສົງຂ໌ແຕ່ງຕັ້ງໃຫ້ເປັນຜູ້ຖິ້ມຣູປິຍະ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້ ພິກສຸຜູ້ໄດ້ຮັບແຕ່ງຕັ້ງນັ້ນເພິງຖິ້ມຣູປິຍະໄປ ຢ່າກຳຫນົດທີ່ຕົກ ຖ້າຖິ້ມໂດຍກຳຫນົດທີ່ຕົກ ຕ້ອງອາບັຕິທຸກກົຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຖ໌] ໒. ໂກສິຍວັຄ ៩. ຣູປິຍສັງໂວຫາຣສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໙໑] ຣູປິຍະ ພິກສຸສຳຄັນວ່າເປັນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣູປິຍະ ພິກສຸບໍ່ແນ່ໃຈ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຣູປິຍະ ພິກສຸສຳຄັນວ່າບໍ່ແມ່ນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ສິ່ງທີ່ບໍ່ແມ່ນຣູປິຍະ ພິກສຸສຳຄັນວ່າເປັນຣູປິຍະ ແລກປ່ຽນຣູປິຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ສິ່ງທີ່ບໍ່ແມ່ນຣູປີຍະ ພິກສຸບໍ່ແນ່ໃຈ ແລກປ່ຽນຣູປີຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ສິ່ງທີ່ບໍ່ແມ່ນຣູປີຍະ ພິກສຸສໍາຄັນວ່າບໍ່ແມ່ນຣູປີຍະ ແລກປ່ຽນຣູປີຍະ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຸກກຕ
ສິ່ງທີ່ບໍ່ແມ່ນຣູປີຍະ ພິກສຸສໍາຄັນວ່າເປັນຣູປີຍະ ຕ້ອງອາບັຕິທຸກກຕ
ສິ່ງທີ່ບໍ່ແມ່ນຣູປີຍະ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ສິ່ງທີ່ບໍ່ແມ່ນຣູປີຍະ ພິກສຸສໍາຄັນວ່າບໍ່ແມ່ນຣູປີຍະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໘໔] ໑. ພິກສຸວິກົລຈິຕ
໔. ພິກສຸຕົ້ນບັນຍັດ

ຣູປີຍສັງໂວຫາຣສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ໑໐. ກຍວິກກຍສິກຂາບົທ ນິທານວັຕຖຸ

໒. ໂກສິຍວັຄ
໑໐. ກຍວິກກຍສິກຂາບົທ
ວ່າດ້ວຍການຊື້ຂາຍ

ເຣື້ອງພຣະອຸປນັນທສກຍບຸຕຣ
[໕໘໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສກຍບຸຕຣ ຊໍານານການຕັດຍິບຈີວອນ ທ່ານໄດ້ເອົາຜ້າເກົ່າໆທໍາສັງຂາຕິແລ້ວຍ້ອມ ຈັດແຕ່ງຢ່າງດີແລ້ວໃຊ້ຫົ່ມ ສມັຍນັ້ນ ປຣິພາຊກຜູ້ນຶ່ງ ຫົ່ມຜ້າຣາຄາແພງເຂົ້າໄປຫາທ່ານພຣະອຸປນັນທສກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານ ວ່າ "ສັງຂາຕິຂອງທ່ານງາມແມ່ນແທ້ໆແລກກັບຜ້າຂອງເຮົາເຖີດ" ທ່ານພຣະອຸປນັນທສກຍ ບຸຕຣກ່າວວ່າ "ທ່ານຈົ່ງຮູ້ເອງເຖີດ" ປຣິພາຊກ ຕອບວ່າ "ຂ້າພະເຈົ້າຮູ້ ຂນ້ອຍ" ທ່ານພຣະ

ອຸປນັນທສັກຍບຸຕຣຕົກລົງໃຫ້ໄປ ປຣິພາຊກທັ່ມສັງຂາຕີຜືນນັ້ນໄປປຣິພາຊກາຣາມ ປຣິພາຊກທັງຫລາຍ ຖາມປຣິພາຊກນັ້ນວ່າ "ສັງຂາຕີຂອງທ່ານງາມແມ່ນແທ້ໆທ່ານໄດ້ມາແຕ່ໃດ" ເຂົາຕອບວ່າ "ຂ້າພະເຈົ້າເອົາຜ້ານັ້ນແລກມາ" ພວກປຣິພາຊກກ່າວວ່າ "ສັງຂາຕີຜືນນີ້ຈະທົນຢູ່ໄດ້ຈັກນີ້ ຜ້າຜືນນັ້ນດີກວ່າ" ສມັຍນັ້ນ ປຣິພາຊກນັ້ນຄິດວ່າ "ປຣິພາຊກທັງຫລາຍກ່າວແມ່ນແທ້ສັງຂາຕີຜືນນີ້ຈະທົນຢູ່

ໄດ້ຈັກນີ້ ຜ້າຜືນນັ້ນດີກວ່າ" ຈຶ່ງກັບໄປຫາທ່ານພຣະອຸປນັນທສັກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານວ່າ "ເອົາສັງຂາຕີຂອງທ່ານໄປ ຈົ່ງໃຫ້ຜ້າຂອງເຮົາຄືນມາ" ທ່ານພຣະອຸປນັນທສັກຍບຸຕຣກ່າວວ່າ "ເຮົາກ່າວກັບທ່ານແລ້ວບໍ່ແມ່ນບໍວ່າ 'ທ່ານຈົ່ງຮູ້ເອງເຖີດ' ເຮົາຈະບໍ່ໃຫ້" ປຣິພາຊກນັ້ນຕໍາຫນິ ປະນາມ ໂພນທະນາວ່າ "ແມ່ນພວກຄຣິຫັສຖ໌ຍັງຄືນຂອງໃຫ້ຄຣິຫັສຖ໌ຜູ້ເດືອດຮ້ອນ ບັພຊິຕບໍ່ຍອມຄືນຂອງໃຫ້ບັພຊິຕດ້ວຍກັນຫລື" ພວກພິກສຸໄດ້ຍິນປຣິພາຊກນັ້ນຕໍາຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈົ່ງໃດທ່ານພຣະອຸປນັນທສັກຍບຸຕຣຈຶ່ງທໍາການຊື້ຂາຍກັບປຣິພາຊກລະ" ຄັນພິກສຸເຫລົ່ານັ້ນຕໍາຫນິທ່ານພຣະອຸປນັນທສັກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນໍາເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສັກຍບຸຕຣວ່າ "ອຸປນັນທະ ຊາບວ່າທ່ານທໍາການຊື້ຂາຍກັບປຣິພາຊກ ແມ່ນແທ້ບໍ" ທ່ານພຣະອຸປນັນທສັກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ໂມຂບຸຣຸສ ຈົ່ງໃດທ່ານຈຶ່ງທໍາການຊື້ຂາຍກັບປຣິພາຊກລະ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໘໔] ກໍ ພິກສຸໃດທໍາການຊື້ຂາຍມີປະການຕ່າງໆຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເອື້ອງພຣະອຸປນັນທສັກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໕໔໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ມີປະກາຣຕ່າງໆໄດ້ແກ່ ຈີວອນ ບິນທບາຕ ເສນາສນະແລະຄິລານປັຈຈັຍເພສັຊບໍຣິຂາຣ ໂດຍທີ່ສຸດຈົນເມື່ອກ້ອນຈຸຣນະ ໄມ້ຊຳຣະແຂ້ວຫລືດ້າຍຊາຍຜ້າ

ຄຳວ່າ ທຳກາຣຊື້ຂາຍ ຄື ພິກສຸເວົ້າເປັນເຊີງບັງຄັບວ່າ "ທ່ານຈົ່ງໃຫ້ຂອງສິ່ງນີ້ ດ້ວຍຂອງນີ້ ນຳຂອງສິ່ງນີ້ມາດ້ວຍຂອງນີ້ ແລກປ່ຽນຂອງສິ່ງນີ້ດ້ວຍຂອງນີ້ ຈ່າຍຂອງສິ່ງນີ້ດ້ວຍຂອງນີ້" ດັ່ງນີ້ເປັນຕົ້ນ ຕ້ອງອາບັຕິທຸກກຕ ກໍຕໍ່ເມື່ອສິ່ງຂອງຂອງຕົ**ນຕກ**ໄປຢູ່ໃນມືຂອງຄົນອື່ນ ແລະສິ່ງຂອງຂອງຄົນອື່ນຕົກມາຢູ່ໃນມືຂອງຕົນຈັດເປັນກາຣຊື້ຂາຍກັນ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຄ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຂອງທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຂອງທີ່ເປັນນິສສັຄຄີຍ໌

ສລະແກ່ສົງຄ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຄ໌ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າໄດ້ທຳກາຣຊື້ຂາຍມີປະກາຣຕ່າງໆສິ່ງຂອງນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະສິ່ງຂອງນີ້ແກ່ສົງຄ໌" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ຄັນຮັບອາບັຕິແລ້ວ ເພິ່ງຄືນສິ່ງຂອງທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສິ່ງຂອງນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ທ່ານສລະແກ່ສົງຄ໌ ຖ້າສົງຄ໌ພ້ອມກັນແລ້ວກໍເພິ່ງໃຫ້ສິ່ງຂອງນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ທົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າທຳກາຣຊື້ຂາຍມີປະກາຣຕ່າງໆສິ່ງຂອງນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະສິ່ງຂອງນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນສິ່ງຂອງທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານ

ທັງຫລາຍ ຈົ່ງຟັງຂ້າພະເຈົ້າ ສິ່ງຂອງນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ສິ່ງຂອງນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ງງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຜູ້ຂ້າທຳການຊື້ຂາຍມີປະການຕ່າງໆສິ່ງຂອງນີ້ຂອງຜູ້ຂ້າເປັນນິສສັຄຄີຍ໌ ຜູ້ຂ້າສລະສິ່ງຂອງນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບເພິງຮັບອາບັຕິແລ້ວຄືນສິ່ງຂອງທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນສິ່ງຂອງນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໕໒໖] ເປັນການຊື້ຂາຍ ພິກສຸສຳຄັນວ່າເປັນການຊື້ຂາຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເປັນການຊື້ຂາຍ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເປັນການຊື້ຂາຍ ພິກສຸສຳຄັນວ່າບໍ່ໄດ້ເປັນການຊື້ຂາຍ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກທຸກກຕ

ບໍ່ໄດ້ເປັນການຊື້ຂາຍ ພິກສຸສຳຄັນວ່າເປັນການຊື້ຂາຍ ຕ້ອງອາບັຕິທຸກກຕ

ບໍ່ໄດ້ເປັນການຊື້ຂາຍ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ໄດ້ເປັນການຊື້ຂາຍ ພິກສຸສຳຄັນວ່າບໍ່ໄດ້ເປັນການຊື້ຂາຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໒໗] ໑. ພິກສຸຖາມຣາຄາ

໒. ພິກສຸບອກກັປປິຍການກ

໓. ພິກສຸກ່າວວ່າ "ເຮົາມີຂອງນີ້ ແຕ່ເຮົາຕ້ອງການຂອງນີ້ ແລະນີ້"

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ກຍວິກກຍສິກຂາບົທທີ ໑໐ ຈົບ
ໂກສິຍວັຄທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໒. ໂກສິຍວັຄ ຮວມສິກຂາບົທທີ່ມີໃນໂກສິຍວັຄ

ຮວມສິກຂາບົທທີ່ມີໃນໂກສິຍວັຄ

ໂກສິຍວັຄມີ ໑໐ ສິກຂາບົທ ຄື

໑. ໂກສິຍສິກຂາບົທ ວ່າດ້ວຍການທຳສັນຖັຕໃຍໄໝ

໒. ສຸທທກາລກສິກຂາບົທ ວ່າດ້ວຍການທຳສັນຖັຕໂດຍໃຊ້ຂົນຈຽມດຳລ້ວນ

໓. ເທວພາຄສິກຂາບົທ ວ່າດ້ວຍການທຳສັນຖັຕໂດຍໃຊ້ຂົນຈຽມດຳ ໒ ສ່ວນ

໔. ສັພພັສສສິກຂາບົທ ວ່າດ້ວຍການເກັບສັນຖັຕໄວ້ ໖ ປີ

໕. ນິສີທນສັນຖຕສິກຂາບົທ ວ່າດ້ວຍການທຳສັນຖັຕສຳລັບຮອງນັ່ງ

໖. ເອຣກໂລມສິກຂາບົທ ວ່າດ້ວຍການຮັບຂົນຈຽມ

໗. ເອຣກໂລມໂທວາປນສິກຂາບົທ ວ່າດ້ວຍການໃຫ້ຊັກຂົນຈຽມ

໘. ຣູປິຍສິກຂາບົທ ວ່າດ້ວຍການຮັບຣູປິຍະ

໙. ຣູປິຍສັງໂວຫາຣສິກຂາບົທ ວ່າດ້ວຍການແລກປ່ຽນຣູປິຍະ

໑໐. ກຍວິກກຍສິກຂາບົທ ວ່າດ້ວຍການຊື້ຂາຍ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໑. ປັຕຕິສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

ໝວດວ່າດ້ວຍບາຕຣ

໑. ປັຕຕສິກຂາບົທ

ວ່າດ້ວຍບາຕຣ

ເຣື້ອງພຣະສັພພັຄຄີຍ໌

[໕ລ໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂດກຸງສາວັດຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ທຳການສະສົມບາຕຣໄວ້ເປັນອັນມາກ ພວກຊາວບ້ານຍ່າງທ່ຽວຕາມວິຫາຣເຫັນເຂົ້າຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະ ເຊື້ອສາຍສາກຍບຸຕຣຈຶ່ງທຳການສະສົມບາຕຣໄວ້ເປັນອັນມາກ ຈະຂາຍບາຕຣຫລືຕັ້ງຮ້ານຂາຍ ພາຊນະດິນເຜົາຫລື" ພິກສຸທັງຫລາຍໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຊົງອຕິ ເຣກບາຕຣ໑ ລະ" ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າພວກທ່ານຊົງອຕິເຣກບາຕຣແມ່ນແທ້ບໍ" ພວກ ພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິ ວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຊົງອຕິເຣກບາຕຣໄວ້ລະ ໂມຂບຸຣຸສທັງ ຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົ ກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ອຕິເຣກບາຕຣ ຄືບາຕຣນອກຈາກບາຕຣອທິຕຖານທີ່ພິກສຸຕັ້ງໄວ້ເປັນບໍຣິຂາຣໃຊ້ບິນທບາຕພຽງ ໃບດຽວ (ເບິ່ງຂໍ້ ຝ໐໔ ໜ້າ ໑໔໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນທ໌] ໓. ປັຕຕວັຄ ໑. ປັຕຕີສິກຂາບົທ ພຣະ ອນຸບັນຍັດ

ພຣະບັນຍັດ

[໕໙໙] ກໍ ພິກສຸໃດຊົງອຕິເຣກບາຕຣ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຣື້ອງພຣະອານົນທ໌

[໖໐໐] ສມັຍນັ້ນ ອຕິເຣກບາຕຣເກີດຂຶ້ນແກ່ທ່ານພຣະອານົນທ໌ ທ່ານພຣະອານົນທ໌ຕ້ອງການຈະຖວາຍອຕິເຣກບາຕຣນັ້ນແກ່ທ່ານພຣະສາຣີບຸຕຣ ແຕ່ທ່ານພຣະສາຣີບຸຕຣຢູ່ທີ່ເມືອງສາເກຕ ເທື່ອນັ້ນທ່ານພຣະອານົນທ໌ໄດ້ມີຄວາມຄິດວ່າ "ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ 'ພິກສຸບໍ່ເພິງຊົງອຕິເຣກບາຕຣ' ກໍອຕິເຣກບາຕຣນີ້ເກີດຂຶ້ນແກ່ເຮົາ ເຮົາຕ້ອງການຈະຖວາຍທ່ານພຣະສາຣີບຸຕຣແຕ່ທ່ານຢູ່ທີ່ເມືອງສາເກຕ ເຮົາຈະເພິງປະຕິບັດຢ່າງໃດນໍ" ຈຶ່ງໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຕຣັສຖາມວ່າ "ອີກດົນປານໃດ ສາຣີບຸຕຣຈະກັບມາ" ພຣະອານົນທ໌ຂາບທູລວ່າ "ອີກ ໙ ຫລື ໑໐ ວັນຈຶ່ງຈະກັບມາ ພຣະພຸທທເຈົ້າຂ້າ"

ຊົງອນຸຍາຕອຕິເຣກບາຕຣ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຊົງອຕິເຣກບາຕຣໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະອນຸບັນຍັດ

[໖໐໑] ພິກສຸເພິງຊົງອຕິເຣກບາຕຣໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ ໃຫ້ເກີນກຳໜົດນັ້ນໄປຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອານົນທ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນທ໌] ໓. ປັຕຕວັຄ ໑. ປັຕຕິສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໐໔] ຄຳວ່າ ໑໐ ວັນເປັນຢ່າງຫລາຍ ຄື ຄອບຄອງໄວ້ໄດ້ ໑໐ ວັນເປັນຢ່າງຫລາຍ
ທີ່ຊື່ວ່າ ອຕິເຣກບາຕຣ ໄດ້ແກ່ ບາຕຣທີ່ບໍ່ໄດ້ອທິສຖານ ບໍ່ໄດ້ວິກັປ
ທີ່ຊື່ວ່າ ບາຕຣ ໄດ້ແກ່ບາຕຣ ໒ ຊນິດ ຄື ບາຕຣເຫລັກ ແລະບາຕຣດິນເຜົາ

ຂນາດບາຕຣ

ບາຕຣມີ ໓ ຂນາດ ຄື (໑) ບາຕຣຂນາດໃຫຍ່ (໒) ບາຕຣຂນາດກາງ (໓) ບາຕຣຂນາດນ້ອຍ
ທີ່ຊື່ວ່າ ບາຕຣຂນາດໃຫຍ່ ຈຸເຂົ້າສຸກຈາກເຂົ້າສາຣ ໒ ທະນານ ຈຸຂອງຄ້ຽວເສູສນຶ່ງສ່ວນສີ່໑ ຈຸກັບເຂົ້າພໍ່ອສົມຄວຣແກ່ເຂົ້າສຸກນັ້ນ
ທີ່ຊື່ວ່າ ບາຕຣຂນາດກາງ ຈຸເຂົ້າສຸກຈາກເຂົ້າສາຣ ໑ ທະນານ ຈຸຂອງຄ້ຽວເສູສນຶ່ງສ່ວນສີ່ ຈຸກັບເຂົ້າພໍສົມຄວຣແກ່ເຂົ້າສຸກນັ້ນ
ທີ່ຊື່ວ່າ ບາຕຣຂນາດນ້ອຍ ຈຸເຂົ້າສຸກຈາກເຂົ້າສາຣເຄິ່ງທະນານ ຈຸຂອງຄ້ຽວເສູສນຶ່ງສ່ວນສີ່ ຈຸກັບເຂົ້າພໍສົມຄວຣແກ່ເຂົ້າສຸກນັ້ນ
ບາຕຣມີຂນາດໃຫຍ່ກວ່ານັ້ນເປັນບາຕຣທີ່ໃຊ້ບໍ່ໄດ້ ບາຕຣມີຂນາດນ້ອຍກວ່ານັ້ນກໍເປັນບາຕຣທີ່ໃຊ້ບໍ່ໄດ້
ຄຳວ່າ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ຄວາມວ່າ ເມື່ອຮຸ່ງອຣຸນວັນທີ ໑໑ ບາຕຣນ່ອຍນັ້ນ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິງສລະບາຕຣທີ່ເປັນນິສສັຄຄີຍ໌ຢ່າງນີ້

ເຊີງອັນຖະ :

໑ ຄືເສູສນຶ່ງສ່ວນສີ່ຂອງເຂົ້າສຸກ (ວິ. ອ. ໒/໕໐໔/໑໑໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໑. ປັຕຕີສິກຂາບົທ ສິກຂາບົທວິພັງຄ໌

ວິທີສລະບາຕຣທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຊ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ບາຕຣນ່ອຍນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ສົງຊ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນບາຕຣທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ

[໕໐໓] "ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ບາຕຣນ່ອຍນີ້ຂອງພິກສຸຊື່ນີ້ ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຊ໌ ຖ້າສົງຊ໌ພ້ອມກັນແລ້ວເພິງໃຫ້ບາຕຣນ່ອຍນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

[໕໐໔] ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນບາຕຣນ່ອຍນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນບາຕຣທີ່ທ່ານສລະໃຫ້ດ້ວຍກ່າວວ່າ

[໕໐໕] "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ບາຕຣນ່ອຍນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແລ້ວແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ບາຕຣນ່ອຍນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

[໕໐໖] ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ບາຕຣນ່ອຍນີ້ຂອງຜູ້ຂ້າເກີນກຳຫນົດ ໑໐ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນບາຕຣທີ່ສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າໃຫ້ບາຕຣນ່ອຍນີ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໑. ປັຕຕສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໕໐໗] ບາຕຣທີ່ເກີນກຳຫນົດ ໑໐ ວັນ ພິກສຸສຳຄັນວ່າເກີນກຳຫນົດແລ້ວ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ເກີນກຳຫນົດ ໑໐ ວັນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣທີ່ເກີນກຳຫນົດ ໑໐ ວັນ ພິກຂຸສຳຄັນວ່າຍັງບໍ່ເກີນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣທີ່ຍັງບໍ່ໄດ້ອທິຊຖານ ພິກຂຸສຳຄັນວ່າອທິຊຖານແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣທີ່ຍັງບໍ່ໄດ້ວິກັປ ພິກຂຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣຍັງບໍ່ໄດ້ສລະ ພິກຂຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣຍັງບໍ່ສູນຫາຍ ພິກຂຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣຍັງບໍ່ຈິບຫາຍ ພິກຂຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣຍັງບໍ່ແຕກ ພິກຂຸສຳຄັນວ່າບາຕຣແຕກແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ບາຕຣຍັງບໍ່ຖືກໂຈຣຊິງເອົາໄປ ພິກຂຸສຳຄັນວ່າຖືກຊິງເອົາໄປ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຕິກທຸກກຕ

ບາຕຣທີ່ເປັນນິສສັຄຄີຍ໌ ພິກຂຸຍັງບໍ່ສລະ ໃຊ້ສອຍ ຕ້ອງອາບັຕິທຸກກຕ
ບາຕຣທີ່ຍັງບໍ່ເກີນກຳຫນົດ ໑໐ ວັນ ພິກຂຸສຳຄັນວ່າເກີນກຳຫນົດແລ້ວ ໃຊ້ສອຍ ຕ້ອງອາບັຕິທຸກກຕ
ບາຕຣທີ່ຍັງບໍ່ເກີນກຳຫນົດ ໑໐ ວັນ ພິກຂຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິທຸກກຕ
ບາຕຣທີ່ຍັງບໍ່ເກີນກຳຫນົດ ໑໐ ວັນ ພິກຂຸສຳຄັນວ່າຍັງບໍ່ເກີນກຳຫນົດ ໃຊ້ສອຍ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໑. ປັຕຕສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໖໐໗] ໑. ພິກຂຸຜູ້ອທິຊຖານພາຍໃນ ໑໐ ວັນ
໒. ພິກຂຸຜູ້ວິກັປໄວ້ພາຍໃນ ໑໐ ວັນ
໓. ພິກຂຸຜູ້ສລະໃຫ້ໄປພາຍໃນ ໑໐ ວັນ
໔. ພິກຂຸຜູ້ມີບາຕຣສູນຫາຍພາຍໃນ ໑໐ ວັນ
໕. ພິກຂຸຜູ້ມີບາຕຣຈິບຫາຍພາຍໃນ ໑໐ ວັນ

໗. ພິກສຸຜູ້ມີບາຕຣແຕກພາຍໃນ ໑໐ ວັນ
໘. ພິກສຸຜູ້ມີບາຕຣຖືກໂຈຣຊິງເອົາໄປພາຍໃນ ໑໐ ວັນ
໙. ພິກສຸຜູ້ມີບາຕຣຖືກຖືເອົາໄປໂດຍວິສາສະພາຍໃນ ໑໐ ວັນ
໙. ພິກສຸວິກິລຈິຕ
໑໐. ພິກສຸຕິ້ນບັນຍັດ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ບໍ່ຍອມຄືນບາຕຣທີ່ມີຜູ້ສລະໃຫ້ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະອົງຄ໌ຮັບສັ່ງວ່າ "ພິກສຸທັງຫລາຍ ບາຕຣທີ່ພິກສຸສລະໃຫ້ແລ້ວ ຈະບໍ່ຄືນໃຫ້ບໍ່ໄດ້ ພິກສຸໃດບໍ່ຄືນ ຕ້ອງອາບັຕິທຸກກຕ"

ປັຕຕສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຖ໌] ໓. ປັຕຕວັຄ ໔. ອູນປັຢຈພັນທນສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໔. ອູນປັຢຈພັນທນສິກຂາບົທ

ວ່າດ້ວຍບາຕຣມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ

ເຣື້ອງພິກສຸຫລາຍຮູບ

[໗໐໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ນິໂຄຣທາຣາມ ເຂຕກຸງກບິລພັສດຸ໌ແຄວ້ນສັກກະ ຄັ້ງນັ້ນ ນາຍຊ່າງຫມໍ້ຄົນນຶ່ງປວາຣນາພິກສຸທັງຫລາຍໄວ້ວ່າ "ຜູ້ຂ້າຈະຖວາຍບາຕຣແກ່ພຣະຄຸນເຈົ້າຜູ້ຕ້ອງການບາຕຣ"

ສມັຍນັ້ນ ພິກສຸທັງຫລາຍບໍ່ຮູ້ປະມານ ອອກປາກຂໍບາຕຣເປັນອັນມາກ ພວກພິກສຸຜູ້ມີບາຕຣຂນາດນ້ອຍກໍອອກປາກຂໍບາຕຣຂນາດໃຫຍ່ ພວກພິກສຸຜູ້ມີບາຕຣຂນາດໃຫຍ່ກໍອອກປາກຂໍບາຕຣຂນາດນ້ອຍ ນາຍຊ່າງມົວເຮັດບາຕຣເປັນອັນມາກໃຫ້ພິກສຸທັງຫລາຍ ຈົນບໍ່ສາມາດທຳການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປນຳດ້ວຍ ພວກຊາວບ້ານຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມນະເຊື້ອສາຍສັກຍບຸຕຣຈຶ່ງບໍ່ຮູ້ປະມານ ອອກປາກຂໍ

ບາຕຣເປັນອັນມາກລະ ນາຍຊ່າງມົວເຮັດບາຕຣເປັນອັນມາກໃຫ້ພິກສຸທັງຫລາຍຈົນບໍ່ສາມາດທຳກາຣຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປດ້ວຍ” ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທນາວ່າ “ຈັ່ງໃດພິກສຸທັງຫລາຍຈຶ່ງບໍ່ຮູ້ປະມານອອກປາກຂໍບາຕຣເປັນອັນມາກລະ” ຄັນພິກສຸທັງຫລາຍຕຳຫນິພິກສຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງຫ້າມຂໍບາຕຣ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸວ່າ “ພິກສຸທັງຫລາຍ ຊາບວ່າ ພວກພິກສຸບໍ່ຮູ້ປະມານ ອອກປາກຂໍບາຕຣເປັນອັນມາກ ແມ່ນແທ້ບໍ່” ພິກສຸທັງຫລາຍທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ “ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຊບຸຣຸສເຫລົ່ານັ້ນຈຶ່ງບໍ່ຮູ້ປະມານ ອອກປາກຂໍບາຕຣລະ ພິກສຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ຄັນຕຳຫນິແລ້ວຈຶ່ງຊົງສະແດງທັມມີກຖາແລ້ວຕຣັສກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ພິກສຸບໍ່ເພິງອອກປາກຂໍບາຕຣຮູບໃດຂໍ ຕ້ອງອາບັຕິທຸກກຕ”

ເຣື່ອງພິກສຸຫລາຍຮູບ ຈົບ

ຊົງອນຸຍາຕໃຫ້ຂໍບາຕຣໄດ້

[ຝ໑໐] ສມັຍນັ້ນ ບາຕຣຂອງພິກສຸຮູບນຶ່ງແຕກ ທ່ານມີຄວາມຢຳເກງວ່າ “ພຣະຜູ້ມີພຣະພາຄຊົງຫ້າມກາຣອອກປາກຂໍບາຕຣ” ຈຶ່ງບໍ່ອອກປາກຂໍບາຕຣ ທຽວຮັບບິນທບາຕດ້ວຍມືທັງສອງ ພວກຊາວບ້ານຈຶ່ງຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພຣະສມນະເຊື້ອສາຍສກຍບຸຕຣຈຶ່ງທຽວຮັບບິນທບາຕດ້ວຍມືທັງສອງເຫມືອນພວກເດັຽຣະຖີຍ໌ລະ” ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ມີບາຕຣເສັຽຫລືບາຕຣແຕກ ອອກປາກຂໍບາຕຣໄດ້”

ເຣື້ອງພຣະສັພພັຄຄີຍ໌

[ຝ໑໑] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ພິກສຸຜູ້ມີບາຕຣ ເສັງຫລືບາຕຣແຕກອອກປາກຂໍບາຕຣໄດ້" ພວກທ່ານມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣໄຂະ ລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ໄຂະລ່ອນ ອອກປາກຂໍບາຕຣມາ ເປັນອັນມາກ

ສມັຍນັ້ນ ນາຍຊ່າງຫມໍ້ມິວເຮັດບາຕຣເປັນອັນມາກໃຫ້ພິກສຸທັງຫລາຍຢູ່ຢ່າງນັ້ນ ຈິນບໍ່ສາມາດ ຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປດ້ວຍ ພວກຊາວບ້ານ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງບໍ່ຮູ້ປະມານ ອອກປາກຂໍບາຕຣເປັນອັນມາກລະ ນາຍຊ່າງຫມໍ້ມິວແຕ່ເຮັດບາຕຣເປັນອັນມາກໃຫ້ພິກສຸທັງຫລາຍ ຈິນບໍ່ສາມາດທຳການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປ ດ້ວຍ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາ ກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣໄຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ອອກປາກຂໍບາຕຣມາ ເປັນອັນມາກລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳ ເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານມີບາຕຣແຕກພຽງເລັກນ້ອຍແດ່ ບາຕຣ ໄຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ກໍອອກປາກຂໍບາຕຣມາເປັນ ອັນມາກ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະ ພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານທັງທີ່ມີບາຕຣແຕກພຽງ ເລັກນ້ອຍແດ່ ບາຕຣໄຂະລ່ອນພຽງເລັກນ້ອຍແດ່ ບາຕຣມີຮອຍຂູດຂີດພຽງເລັກນ້ອຍແດ່ ອອກ ປາກຂໍບາຕຣມາເປັນອັນມາກລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[ຝ໑໔] ກໍ ພິກສຸໃດມີບາຕຣທີ່ມີຮອຍສ້ອມຫນ້ອຍກວ່າ ໕ ບ່ອນ໑ ຂໍບາຕຣໃຫມ່ນ່ອຍອື່ນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ພິກສຸນັ້ນເພິງສລະບາຕຣນ່ອຍນັ້ນໃນພິກສຸບໍຣິສັດ ບາຕຣນ່ອຍສຸດທ້າຍອັນພິກສຸບໍຣິສັດນັ້ນເພິງມອບໃຫ້ພິກສຸນັ້ນດ້ວຍສັ່ງວ່າ "ພິກສຸ ບາຕຣນີ້ເປັນຂອງທ່ານ ເພິງໃຊ້ຈົນກວ່າຈະແຕກ" ນີ້ເປັນການທຳທີ່ສົມຄວນໃນເຣື່ອງນັ້ນ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ອູນປຢ່ຈພນຸຫເນນ ມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ ຄືບາຕຣແຫງແລ້ວໃຊ້ເຫລັກເຈາະບາຕຣ ແລ້ວເອົາເຊືອກດ້າຍຫລືລວດຍືບຜູກແລ້ວອັດດ້ວຍດີບຸກຫລືຢາງ (ວິ. ອ. ໔/ຝ໑໔-໓/໔໔໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໔. ອູນປັຢ່ຈພັນທູນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[ຝ໑໓] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ບາຕຣທີ່ຊື່ວ່າ ມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ ຄື ບາຕຣບໍ່ມີຮອຍສ້ອມ ຫລືມີຮອຍສ້ອມແປງພຽງ ໑ ບ່ອນ ມີຮອຍສ້ອມພຽງ ໔ ບ່ອນ ມີຮອຍສ້ອມພຽງ ໓ ບ່ອນ ມີຮອຍສ້ອມແປງພຽງ ໔ ບ່ອນ

ບາຕຣທີ່ຊື່ວ່າ ບໍ່ມີຮອຍສ້ອມແປງ ໄດ້ແກ່ ບາຕຣບໍ່ມີຮອຍແຫງເຖິງ ໔ ນິ້ວ

ບາຕຣທີ່ຊື່ວ່າ ມີຮອຍສ້ອມແປງ ໄດ້ແກ່ ບາຕຣມີຮອຍແຫງຍາວ ໔ ນິ້ວ

ບາຕຣທີ່ຊື່ວ່າ ໃຫມ່ ພຣະຜູ້ມີພຣະພາຄຕຣັສມຸ່ງເອົາການອອກປາກຂໍມາ

ຄຳວ່າ ຂໍ ຄື ອອກປາກຂໍ ຕ້ອງອາບັຕິທຸກກຕເພາະພຍາຍາມ ບາຕຣເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະໃນທ່າມກາງສົງຂ໌

ພິກສຸທຸກຣູປເພິງຖືບາຕຣທີ່ອທິສຖານໄປປະຊຸມ ບໍ່ຄວຣອທິສຖານບາຕຣຄຸນພາພບໍ່ດີ ດ້ວຍຄິດວ່າ "ເຮົາຈະເອົາບາຕຣມີຄ່າມາກ" ຖ້າອທິສຖານບາຕຣຄຸນພາພບໍ່ດີດ້ວຍຄິດວ່າ "ເຮົາຈະເອົາບາຕຣມີຄ່າມາກ" ຕ້ອງອາບັຕິທຸກກຕ

ພິກສຸທັງຫລາຍ ພິກສຸເພິງສລະບາຕຣທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະບາຕຣທີ່ເປັນນິສສັຄຄີຍ໌

ພິກສຸຣູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜູ້ຂ້າມີບາຕຣມີຮອຍສ້ອມແປງຫນ້ອຍກວ່າ ໕ ບ່ອນ ຂໍບາຕຣນ່ອຍນີ້ມາ ເປັນນິສສັຄຄີຍ໌ ຜູ້ຂ້າສລະບາຕຣນ່ອຍນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ສົງຂ໌ເພິງແຕ່ງຕັ້ງພິກສຸຜູ້ປະກອບດ້ວຍຄຸນສົມບັຕ ໕ ຢ່າງໃຫ້ເປັນຜູ້ປ່ຽນບາຕຣ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໔. ອູນປັຢຈພັນທນສິກຂາບົທ ສິກຂາບົທວິພັງຄ໌

ຄຸນສົມບັຕຂອງພິກສຸຜູ້ປ່ຽນບາຕຣ ໕ ຢ່າງ

໑. ບໍ່ລໍາອຽງເພາະຊອບ

໒. ບໍ່ລໍາອຽງເພາະຊັງ

໓. ບໍ່ລໍາອຽງເພາະຫລົງ

໔. ບໍ່ລໍາອຽງເພາະຢ້ານ

໕. ຮູ້ຈັກວິທີວ່າເປັນອັນປ່ຽນຫລືບໍ່ເປັນອັນປ່ຽນ

ວິທີແຕ່ງຕັ້ງພິກສຸຜູ້ປ່ຽນບາຕຣ ແລະກັມວາຈາແຕ່ງຕັ້ງ

ສົງຂ໌ເພິງແຕ່ງຕັ້ງຢ່າງນີ້ ຄືເບື້ອງຕົ້ນ ເພິງຂໍໃຫ້ພິກສຸຮັບ ຄັນແລ້ວພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

[໖໑໔] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຂ໌ພ້ອມແລ້ວເພິ່ງສົມມຸດພິກສຸນີ້ໃຫ້ເປັນຜູ້ປ່ຽນບາດຣ ນີ້ເປັນຍັດຕິ
ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ສົງຂ໌ແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ປ່ຽນບາດຣ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ປ່ຽນບາດຣ ທ່ານຮູບນັ້ນເພິ່ງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິ່ງທັກທ້ວງ
ພິກສຸຊື່ນີ້ສົງຂ໌ແຕ່ງຕັ້ງໃຫ້ເປັນຜູ້ປ່ຽນບາດຣ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມະຕິຢ່າງນີ້

[໖໑໕] ພິກສຸຜູ້ໄດ້ຮັບແຕ່ງຕັ້ງເພິ່ງໃຫ້ປ່ຽນບາດຣ ເພິ່ງຮຽນພຣະເຖຣະວ່າ "ທ່ານຜູ້ຈະເຣີນ ທ່ານຈົ່ງປ່ຽນບາດຣ" ຖ້າພຣະເຖຣະປ່ຽນ ກໍເພິ່ງຖວາຍບາດຣຂອງພຣະເຖຣະໃຫ້ພຣະເຖຣະຮູບທີ ໔ ປ່ຽນ ພິກສຸຈະບໍ່ປ່ຽນເພາະຄວາມສົງສານທ່ານບໍ່ໄດ້ ພິກສຸໃດບໍ່ຍອມປ່ຽນ ຕ້ອງອາບັດທຸກກົດ ບໍ່ຄວນໃຫ້ພິກສຸຜູ້ບໍ່ມີບາດຣປ່ຽນ ຄວນໃຫ້ປ່ຽນເລື່ອນລົງມາໂດຍວິທີນີ້ຈົນເຖິງພິກສຸໃຫມ່ໃນສົງຂ໌ ບາດຣນ່ອຍສຸດທ້າຍທ່າມກາງສົງຂ໌ຄວນມອບແກ່ພິກສຸນັ້ນດ້ວຍສັ່ງວ່າ "ບາດຣນີ້ເປັນຂອງທ່ານເພິ່ງໃຊ້ຈົນກວ່າຈະແຕກ"
ພິກສຸນັ້ນບໍ່ຄວນເກັບບາດຣໄວ້ໃນທີ່ບໍ່ຄວນ ບໍ່ຄວນໃຊ້ສອຍໂດຍວິທີບໍ່ເຫມາະ ແລະບໍ່ຄວນທອດຖິ້ມໂດຍຄິດວ່າ 'ເຮັດຢ່າງໃດບາດຣນ່ອຍນີ້ຈະເສັ່ງໄປ ຈົບຫາຍຫລືແຕກ' ຖ້າທ່ານເກັບໄວ້ໃນທີ່ທີ່ບໍ່ເຫມາະສົມ ໃຊ້ສອຍບໍ່ຖືກວິທີຫລືປ່ອຍຖິ້ມ ຕ້ອງອາບັດທຸກກົດ
ຄຳວ່າ ນີ້ເປັນການທຳທີ່ສົມຄວນໃນເຣື່ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື່ອງນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໖. ປັດຕວັຄ ໔. ອູນປັຍຈພັນທນສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ບາດຣທີ່ບໍ່ມີຮອຍສ້ອມ

[໖໑໖] ພິກສຸມີບາດຣທີ່ບໍ່ມີຮອຍສ້ອມແປງ ຂໍບາດຣທີ່ບໍ່ມີຮອຍສ້ອມແປງ ຕ້ອງອາບັດນິສສັຄຄິຍປາຈິດຕີຍ໌
ພິກສຸມີບາດຣທີ່ບໍ່ມີຮອຍສ້ອມ ຂໍບາດຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັດນິສສັຄຄິຍປາຈິດຕີຍ໌

ພິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໑ ບ່ອນ

ພິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມ ໒ ບ່ອນ

ພິກຂຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌
ພິກຂຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໓ ບ່ອນ

ພິກຂຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໔ ບ່ອນ

ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ບໍ່ມີຮອຍສ້ອມແປງ

ພິກສຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ພິກສຸມີບາຕຣທີ່ບໍ່ມີຮອຍສ້ອມແປງ ຂໍບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ບໍ່ມີຮອຍສ້ອມ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໑ ບ່ອນ

ພິກສຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ

. . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີຮອຍສ້ອມ ໑ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໒ ບ່ອນ

ພິກສຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີຮອຍສ້ອມ ໒ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມ ໓ ບ່ອນ

ພິກສຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີຮອຍສ້ອມ ໓ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີຮອຍສ້ອມແປງ ໔ ບ່ອນ

ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ຍັງບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ຍັງບໍ່ມີທີ່ສ້ອມແປງ

ພິກສຸມີບາຕຣທີ່ຍັງບໍ່ມີທີ່ສ້ອມ ຂໍບາຕຣທີ່ບໍ່ມີຮອຍສ້ອມ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ພິກສຸມີບາຕຣທີ່ຍັງບໍ່ມີທີ່ສ້ອມ ຂໍບາຕຣມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ຍັງບໍ່ມີທີ່ສ້ອມ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມ ໑ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ . . . ບາຕຣທີ່ມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໒ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໒ ບ່ອນ ຂໍບາຕຣບໍ່ມີຮອຍສ້ອມ . . . ບາຕຣທີ່ມີຮອຍສ້ອມ ໑ ບ່ອນ ແຫ່ງ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກສຸມີ ບາຕຣທີ່ມີທີ່

ສ້ອມ ໒ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໓ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣບໍ່ມີຮອຍສ້ອມ . . . ບາຕຣມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໔ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີຮອຍສ້ອມ . . . ບາຕຣທີ່ມີຮອຍສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຂໍບາຕຣທີ່ມີຮອຍສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ບໍ່ມີທີ່ສ້ອມແປງ

ພິກສຸມີບາຕຣທີ່ບໍ່ມີທີ່ສ້ອມ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີຮອຍສ້ອມ ໒ ບ່ອນ . . . ບາຕຣມີຮອຍສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ບໍ່ມີທີ່ສ້ອມ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໑ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີທີ່ສ້ອມ ໑ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ບາຕຣທີ່ມີທີ່ສ້ອມແປງ ໒ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໒ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . .

ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີທີ່ສ້ອມ ໒ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ມີທີ່ສ້ອມແປງ ໓ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີທີ່ສ້ອມ ໓ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ບາຕຣທີ່ມີທີ່ສ້ອມແປງ ໔ ບ່ອນ

ພິກສຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ບໍ່ມີທີ່ສ້ອມ . . . ບາຕຣທີ່ມີທີ່ສ້ອມ ໑ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໒ ບ່ອນ . . . ບາຕຣທີ່ມີທີ່ສ້ອມ ໓ ບ່ອນ . . . ພິກສຸມີບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຂໍບາຕຣທີ່ມີທີ່ສ້ອມ ໔ ບ່ອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໑໗] ໑. ພິກສຸມີບາຕຣສູນຫາຍ

໒. ພິກສຸມີບາຕຣແຕກ

໓. ພິກສຸຂໍຈາກຍາຕ

໔. ພິກສຸຂໍຈາກຜູ້ປວາຣນາ

໕. ພິກສຸຂໍເພື່ອພິກສຸອື່ນ

໖. ພິກສຸຊື້ມາດ້ວຍຊັພຍ໌ຂອງຕົນ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ອູນປັຢຈພັນຫນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໓. ພສັຊຊສິກຂາບົທ ນິທານວັຕຖຸ

໖. ປັຕຕວັຄ

໖. ເພສັຊຊສິກຂາບົທ

ວ່າດ້ວຍເພສັຊ

ເຣື້ອງພຣະປິລິນທວັຈສະ

[ຝ໑໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະປິລິນທວັຈສະປະສົງຄ໌ຈະທຳທີ່ຫລົບ ຈຶ່ງໃຫ້ພິກສຸທັງຫລາຍທຳຄວາມສະອາດເງື້ອມເຂົາໃນກຸງຣາຊຄືຫ໌ ສມັຍນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖໄດ້ສເດັຈເຂົ້າໄປຫາທ່ານພຣະປິລິນທວັຈສະເຖິງທີ່ພັກ ຄັນເຖິງແລ້ວໄດ້ຊົງອພິວາທແລ້ວປະທັບນັ່ງ ນະ ທີ່ສົມຄວຣ ພຣະເຈົ້າພິມພິສາຣຈອມທັພມຄທຣັຖຜູ້ປະທັບນັ່ງ ນະ ທີ່ສົມຄວຣແລ້ວໄດ້ຕຣັສຖາມທ່ານພຣະປິລິນທວັຈສະວ່າ "ພຣະຄຸນເຈົ້າໃຫ້ພິກສຸທັງຫລາຍເຮັດຫຍັງ" "ຂໍຖວາຍພຣະພອນ ອາຕມພາພປະສົງຄ໌ຈະທຳທີ່ຫລົບ ຈຶ່ງໃຫ້ພິກສຸທັງຫລາຍທຳຄວາມສະອາດເງື້ອມເຂົາ" "ພຣະຄຸນເຈົ້າຕ້ອງການຄົນວັດແດ່ບໍ"

"ຂໍຖວາຍພຣະພອນ ພຣະຜູ້ມີພຣະພາຄບໍ່ຊົງອນຸຍາຕໃຫ້ມີຄົນວັດ"

"ຖ້າເຊັ່ນນັ້ນ ພຣະຄຸນເຈົ້າເພິງທູລຖາມພຣະຜູ້ມີພຣະພາຄແລ້ວບອກໂຍມດ້ວຍ"

ທ່ານພຣະປິລິນທວັຈສະທູລສນອງພຣະດຳຣັສວ່າ "ຂໍຖວາຍພຣະພອນ ອາຕມພາພຈະທຳຢ່າງນັ້ນ" ສມັຍນັ້ນ ທ່ານພຣະປິລິນທວັຈສະໄດ້ຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄທຣັຖເຫັນແຈ້ງຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ຈາກນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖຊຶ່ງທ່ານພຣະປິລິນທວັຈສະໄດ້ຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວ ໄດ້ສເດັຈລຸກຈາກຣາຊອາສນ໌ ຊົງອພິວາທພຣະເຖຣະທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວສເດັຈກັບໄປ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນທ໌] ໖. ປັຕຕວັຄ ໖. ເພສັຊຊສິກຂາບົທ ນິທານວັຕຖຸ

ຊົງອນຸຍາຕໃຫ້ມີຄົນເຮັດວຽກວັດ

[ຝ໑໘] ສມັຍນັ້ນ ທ່ານພຣະປິລິນທວັຈສະສົ່ງທູຕໄປຍັງສຳນັກພຣະຜູ້ມີພຣະພາຄ ໃຫ້ຂາບທູລວ່າ

"ພຣະພຸທທູເຈົ້າຂ້າ ພຣະເຈົ້າພິມພິສາຣຈອມທັພມຄທູຣັຖມີພຣະຣາຊປະສົງຄ໌ຈະຊົງຖວາຍຄົນວັດ ຂ້າພຣະພຸທທູເຈົ້າຈະເພິ່ງປະຕິບັດຢ່າງໃດ" ລຳດັບນັ້ນ ພຣະຜູ້ມີພຣະພາຄ ຮັບສັ່ງໃຫ້ປະຊຸມສົງຄ໌ ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສະແດງທັມມີກຖາ ຮັບສັ່ງກັບພິກສຸທັງຫລາຍວ່າ "ເຮົາອນຸຍາຕໃຫ້ມີຄົນວັດ" ແມ່ນຄັ້ງທີ ໔ ພຣະເຈົ້າພິມພິສາຣຈອມທັພມຄທູຣັຖ ສເດັຈເຂົ້າໄປຫາທ່ານພຣະປິລິນທວັຈສະເຖິງທີ່ພັກ ຄັນເຖິງແລ້ວໄດ້ຊົງອພິວາທທ່ານພຣະປິລິນທວັຈສະແລ້ວປະທັບນັ່ງ ນະ ທີ່ສົມຄວຣ ພຣະເຈົ້າພິມພິສາຣຈອມທັພມຄທູຣັຖຜູ້ປະທັບນັ່ງ ນະ ທີ່ສົມຄວຣແລ້ວ ໄດ້ຕຣັສຖາມທ່ານພຣະປິລິນທວັຈສະວ່າ "ພຣະຄຸນເຈົ້າ ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ມີຄົນວັດແລ້ວຫລື" "ຂໍຖວາຍພຣະພອນ ຊົງອນຸຍາຕແລ້ວ" "ຖ້າເຊັ່ນນັ້ນ ໂຍມຈະຖວາຍຄົນວັດແກ່ພຣະຄຸນເຈົ້າ" ທ້າວທ່ານຊົງໃຫ້ສັນຍາທີ່ຈະຖວາຍຄົນວັດແກ່ພຣະເຖຣະແຕ່ຊົງລືມ ເມື່ອເວລາຜ່ານໄປນານຊົງຣະນຶກໄດ້ ຕຣັສຖາມມຫາອມາຕຍ໌ຜູ້ສນອງຣາຊກິຈຄົນນຶ່ງວ່າ "ເຮົາຖວາຍຄົນວັດທີ່ໃຫ້ສັນຍາໄວ້ແກ່ພຣະຄຸນເຈົ້າແລ້ວຫລື"

ມຫາອມາຕຍ໌ຂາບທູລວ່າ "ຂໍເດຊະ ຍັງບໍ່ໄດ້ຖວາຍຄົນວັດແກ່ພຣະຄຸນເຈົ້າເລີຍ" "ຜ່ານມາຈັກມື້ແລ້ວ" ມຫາອມາຕຍ໌ນັບຣາຕຣີແລ້ວຂາບທູລວ່າ "ຂໍເດຊະ ຜ່ານມາ ໕໐໐ ຣາຕຣີ" ພຣະເຈົ້າພິມພິສາຣຈອມທັພມຄທູຣັຖຮັບສັ່ງວ່າ "ຖ້າຢ່າງນັ້ນ ຈົ່ງຖວາຍຄົນວັດ ໕໐໐ ຄົນ ແກ່ພຣະຄຸນເຈົ້າ" ມຫາອມາຕຍ໌ຮັບພຣະຣາຊໂອງການແລ້ວຈັດຄົນວັດໄປຖວາຍທ່ານພຣະປິລິນທວັຈສະ ຈຳນວນ ໕໐໐ ຄົນ ຕັ້ງໝູ່ບ້ານຂຶ້ນ ມາຕ່າງຫາກມີຊື່ຮຽກວ່າອາຣາມີກຄາມແດ່ ປິລິນທວັຈສຄາມແດ່

[ຝ໌໔໐] ສມັຍນັ້ນ ທ່ານພຣະປິລິນທວັຈສະເປັນພຣະປະຈຳຕະກູນໃນໝູ່ບ້ານນັ້ນ ເຊົ້າມື້ນຶ່ງ ທ່ານຊົງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປບິນທູບາຕໃນໝູ່ບ້ານປິລິນທວັຈສະ ສມັຍນັ້ນ ໃນໝູ່ບ້ານນັ້ນກຳລັງມີມຫໍຣສົພ ພວກເດັກຍິງແຕ່ງກາຍປະດັບດອກໄມ້ຫລິ້ນຢູ່ ພໍດີທ່ານພຣະປິລິນທວັຈສະທຽວບິນທູບາຕມາຕາມລຳດັບໃນໝູ່ບ້ານປິລິນທວັຈສະ ມາເຖິງເຮືອນຄົນວັດຄົນນຶ່ງ ຄັນເຖິງແລ້ວໄດ້ນັ່ງເທິງອາສນະທີ່ເຂົາຈັດຖວາຍ ຂນະນັ້ນ ທິດາຂອງສຕຣີຄົນວັດເຫັນພວກເດັກອື່ນແຕ່ງກາຍປະດັບດອກໄມ້ຈຶ່ງຮ້ອງໄຫ້ ຂໍວ່າ "ພໍ່ແມ່ໂປຣດໃຫ້ດອກໄມ້ ໂປຣດໃຫ້ເຄື່ອງປະດັບແກ່ຂນ້ອຍດ້ວຍ" ພຣະເຖຣະຖາມສຕຣີນັ້ນວ່າ "ເດັກຄົນນີ້ຢາກໄດ້ຫຍັງ" ນາງຕອບວ່າ "ທ່ານຜູ້ຈະເຣີນ ເດັກ ນ້ອຍຄົນນີ້ເຫັນພວກເດັກນ້ອຍອື່ນແຕ່ງກາຍປະດັບດອກໄມ້ ຈຶ່ງຮ້ອງໄຫ້ ຂໍພວງດອກໄມ້ແລະ ເຄື່ອງປະດັບວ່າ 'ພໍ່ແມ່ໂປຣດໃຫ້ດອກໄມ້ ໂປຣດໃຫ້ເຄື່ອງປະດັບແກ່ຂນ້ອຍດ້ວຍ' ເຮົາຄົນທຸກຈະເອົາດອກໄມ້ແລະເຄື່ອງປະດັບມາຈາກໃສກັນ" ທ່ານພຣະປິລິນທວັຈສະຈຶ່ງຫຍິບສວຽນຫຍ້າ໑ ອັນນຶ່ງສົ່ງໃຫ້ ພ້ອມທັງກ່າວວ່າ "ທ່ານຈົ່ງສວມສວຽນຫຍ້າອັນນີ້ທີ່ສີສະເດັກ

ຍິງນັ້ນ” ຍິງຄົນວັດຫຍິບ ສວຽນຫຍ້າສອມທີ່ສີສູະເດັກຍິງ ສວຽນຫຍ້າກາຍເປັນພວງດອກໄມ້ທອງຄຳງົດງາມຫນ້າເບິ່ງຫນ້າ ຊົມ ພວງດອກໄມ້ທອງຄຳຢ່າງນີ້ແມ່ນໃນພຣະຣາຊຖານກໍຍັງບໍ່ມີ ພວກຊາວບ້ານຂາບທູລພຣະເຈົ້າ ພິມພິສາຣວ່າ “ຂໍເດຊະ ທີ່ເຮືອນຄົນວັດພຸ້ນມີພວງດອກໄມ້ທອງຄຳງົດງາມຫນ້າເບິ່ງຫນ້າຊົມ ພວງ ດອກໄມ້ທອງຄຳຢ່າງນີ້ແມ່ນໃນພຣະຣາຊຖານກໍຍັງບໍ່ມີ ເຂົາເປັນຄົນເຂັນໃຈຈະໄດ້ມາຈາກໃສ ຫລືອາດຈະໄດ້ມາເພາະທຳໂຈຣກັມເປັນແນ່ແທ້” ພຣະເຈົ້າພິມພິສາຣຮັບສັ່ງໃຫ້ຈອງຈຳຕະກູນຄົນວັດນັ້ນ ຕໍ່ມາ ເຊົ້າວັນທີ ໔ ທ່ານພຣະປິລິນທວັຈສະຊົງອັນຕຣອາສກຖືບາຕຣແລະຈີວອນໄປບິນຫູ ບາຕທີ່ ປິລິນທວັຈສຄາມອີກ ເມື່ອທຽວບິນຫູບາຕໄປຕາມລຳດັບໃນຫມູ່ບ້ານປິລິນທວັຈສະ ຍ່າງຜ່ານໄປທາງທີ່ຢູ່ຄົນວັດຄົນນັ້ນ ຖາມຄົນຄຸ້ນເຄີຍວ່າ “ຄອບຄົວຄົນວັດນີ້ໄປໃດ” ຊາວບ້ານຕອບວ່າ “ຄອບຄົວນີ້ ຖືກຈອງຈຳເພາະເລື້ອງພວງດອກໄມ້ທອງຄຳ ຂນ້ອຍ”

[ຝ໔໑] ສມັຍນັ້ນ ທ່ານພຣະປິລິນທວັຈສະເຂົ້າໄປເຖິງພຣະຣາຊນິເວສູນ໌ຂອງພຣະເຈົ້າພິມພິສາຣຈອມທັພມຄທະຣັຖ ຄັນເຖິງແລ້ວໄດ້ນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທະຣັຖສເດັຈເຂົ້າໄປຫາພຣະເຖຣະຈົນເຖິງທີ່ນັ່ງ ຊົງອພິວາທແລ້ວປະທັບນັ່ງ ນະ ທີ່ສົມຄວຣ ທ່ານພຣະປິລິນທວັຈສະທູລຖາມພຣະເຈົ້າພິມພິສາຣຈອມທັພມຄທະຣັຖວ່າ “ຂໍຖວາຍພຣະພອນ ຄອບຄົວຄົນວັດຖືກຈອງຈຳເພາະເລື້ອງຫຍັງ” ພຣະເຈົ້າພິມພິສາຣຈອມທັພມຄທະຣັຖຕຣັສວ່າ “ທີ່ບ້ານ ເຂົາມີພວງດອກໄມ້ທອງຄຳງົດງາມຫນ້າເບິ່ງຫນ້າຊົມ ພວງດອກໄມ້ທອງຄຳຢ່າງນີ້ແມ່ນໃນວັງກໍຍັງບໍ່ມີ ເຂົາເປັນຄົນຈົນຈະໄດ້ມາຈາກໃດ ຫລືອາດຈະໄດ້ມາເພາະທຳໂຈຣກັມເປັນແນ່ແທ້”

ເຊີງອັນຖະ :

໑ “ສວຽນ” ຄືຂອງເປັນວົງກົມສຳລັບຮອງກົ້ນໝໍ້ ເຮັດດ້ວຍຫຍ້າຫລືຫວາຍເປັນຕົ້ນ, ຂອງທີ່ເຮັດເປັນວົງກົມສຳລັບຮອງຫລືຮັບສິ່ງຕ່າງໆເບິ່ງ ພົຈນານຸກົມ ແປແລະຮຽບຮຽງຈາກ ສະບັບຣາຊບັນຫິຕຍສຖານ ໒໕໔໕, ຫນ້າ ໗໔໑

ເທື່ອນັ້ນທ່ານພຣະປິລິນທວັຈສະໄດ້ອທິສູຖານໃຫ້ປຣາສາທຂອງພຣະເຈົ້າພິມພິສາຣຈອມທັພມຄທະຣັຖເປັນທອງຄຳ ປຣາສາທກາຍເປັນທອງຄຳໄປທັງຫລັງ ແລ້ວທ່ານກໍຖວາຍພຣະພອນວ່າ “ທອງຄຳມາກມາຍ ມຫາບໍພິຕຣໄດ້ມາຈາກໃດ” ພຣະເຈົ້າພິມພິສາຣຈອມທັພມຄທະຣັຖຕຣັສວ່າ “ໂຍມ

ຊາບແລ້ວ ນີ້ເປັນຣິທທານຸພາພຂອງພຣະຄຸນເຈົ້າ" ແລ້ວຮັບສັ່ງໃຫ້ປ່ອຍຄອບຄົວນັ້ນ ພວກຊາວບ້ານຊາບຂ່າວວ່າ "ພຣະຄຸນເຈົ້າປິລິນທວັຈສະສະແດງອິທທິປາຕິຫາຣິຍ໌ອັນເປັນອຸຕຕຣິມນຸສສທັມໃນທ່າມກາງຣາຊບໍຣິສັດ" ພາກັນພໍໃຈເຫລື້ອມໃສນໍາເພສັຊ ໕ ຄື ເນີຍໃສ ເນີຍຂຸ້ນ ນໍ້າມັນ ນໍ້າເຜີ້ງ ນໍ້າອ້ອຍ ມາຖວາຍຕາມປົກຕິ ທ່ານພຣະປິລິນທວັຈສະກໍໄດ້ເພສັຊ ໕ ຢູ່ສເມີ ທ່ານຈຶ່ງແບ່ງເພສັຊໃຫ້ບໍຣິສັດຂອງທ່ານ ແຕ່ບໍຣິສັດຂອງທ່ານມັກມາກ ບັນຈຸເພສັຊທີ່ໄດ້ມາແລ້ວໆໄວ້ໃນຕຸ່ມແດ່ ໃນໝໍ້ນໍ້າແດ່ຈົນເຕັມແລ້ວເກັບໄວ້ບັນຈຸລົງໃນໝໍ້ກອງນໍ້າແດ່ ໃນຖົງຍ່າມແດ່ ແລ້ວແຂວນໄວ້ທີ່ປ່ອງຢ້ຽມ ເພສັຊເຫລົ່ານັ້ນໄຫລຍ້ອຍຊຶມ ຈຶ່ງມີສັຕວ໌ຈໍາພວກໜູ ຊຸກຊຸມທີ່ວິຫາຣ ພວກຊາວ ບ້ານທຽວໄປວິຫາຣພົບເຂົ້າ ຈຶ່ງພາກັນຕໍາໜິປະນາມ ໂພນທະນາວ່າ "ພວກພຣະສມນະເຊື້ອສາຍສັກຍບຸຕຣເຫລົ່ານີ້ ມີເຮືອນຄັງເກັບຂອງເຫມືອນພຣະເຈົ້າພິມພິສາຣຈອມທັພມຄທຣັຖ" ພວກພິກສຸໄດ້ຍິນຊາວບ້ານຕໍາໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາໜິ
ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງຄິດເພື່ອຄວາມມັກມາກເຊັ່ນນີ້ລະ" ຄັນພິກສຸທັງຫລາຍຕໍາໜິພິກສຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າພວກພິກສຸຄິດເພື່ອຄວາມມັກມາກແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕໍາໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຊບຸຣຸສເຫລົ່ານັ້ນຈຶ່ງຄິດເພື່ອຄວາມມັກມາກລະ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນທ໌] ໓. ປັຕຕວັຄ ໓. ເພສັຊຊສິກຂາບົທ ສິກຂາບົທວິພັງຄ

ພຣະບັນຍັດ

[໓໔໔] ກໍ ເພສັຊໃດຄວຣລິ້ມສຳລັບພິກສຸຜູ້ເປັນໄຂ້ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ພິກສຸຮັບປະເຄນເພສັຊນັ້ນແລ້ວເກັບໄວ້ສັນໄດ້ ໗ ວັນເປັນຢ່າງຫລາຍ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະປິລິນທວັຈສະ ຈົບ

ສິກຂາບົທວິພັງຄ໌

[໓໔໕] ຄຳວ່າ ເພສັຊໃດຄວຣລິ້ມສຳລັບພິກສຸຜູ້ເປັນໄຂ້ ມີອທິບາຍດັ່ງນີ້

ທີ່ຊື່ວ່າ ເນີຍໃສ ໄດ້ແກ່ ເນີຍໃສທຳຈາກນ້ຳນົມໂຄແດ່ ເນີຍໃສທຳຈາກນ້ຳນົມແພະແດ່ ເນີຍໃສທຳຈາກນ້ຳນົມກະບືແດ່ ຫລືເນີຍໃສທຳຈາກນ້ຳນົມສັຕວ໌ທີ່ມີມັງສະເປັນກັປປິຍະ

ທີ່ຊື່ວ່າ ເນີຍຂຸ້ນ ໄດ້ແກ່ ເນີຍຂຸ້ນທຳຈາກນ້ຳນົມສັຕວ໌ເຫລົ່ານັ້ນ ແຫລະ

ທີ່ຊື່ວ່າ ນ້ຳມັນ ໄດ້ແກ່ ນ້ຳມັນທີ່ສກັດຈາກເມັດງາ ນ້ຳມັນທີ່ສກັດຈາກເມັດຜັກກາດ ນ້ຳມັນທີ່ສກັດຈາກເມັດມະຊາງ ນ້ຳມັນທີ່ສກັດຈາກເມັດລະຫຸ່ງ ຫລືນ້ຳມັນໄຂສັຕວ໌

ທີ່ຊື່ວ່າ ນ້ຳເຜີ້ງ ໄດ້ແກ່ ນ້ຳຣົສຫວານທີ່ແມງເຜີ້ງທຳ

ທີ່ຊື່ວ່າ ນ້ຳອ້ອຍ ໄດ້ແກ່ ນ້ຳຣົສຫວານທີ່ເກີດຈາກອ້ອຍ

ຄຳວ່າ ພິກສຸຮັບປະເຄນເພສັຊນັ້ນແລ້ວເກັບໄວ້ສັນໄດ້ ໗ ວັນເປັນຢ່າງຫລາຍ ຄື ພິກສຸເພິ່ງສັນໄດ້ ໗ ວັນເປັນຢ່າງຫລາຍ

ຄຳວ່າ ໃຫ້ເກີນກຳຫນົດນັ້ນໄປ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຄວາມວ່າ ເມື່ອຣຸ່ງອຣຸນວັນທີ ໘ ເພສັຊນັ້ນເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະເພສັຊທີ່ເປັນນິສສັຄຄີຍ໌ຢ່າງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໓. ເພສັຊຊສິກຂາບົທ ສິກຂາບົທວິພັງຄ໌

ວິທີສລະເພສັຊທີ່ເປັນນິສສັຄຄີຍ໌

ສລະແກ່ສົງຊ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຊ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ເພສັຊຂອງຜູ້ຂ້ານີ້ເກີນກຳໜົດ ໆ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະເພສັຊນີ້ແກ່ສົງຊ໌" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນເພສັຊທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຊ໌ຈົ່ງຟັງຂ້າພະເຈົ້າ ເພສັຊຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຊ໌ ຖ້າສົງຊ໌ພ້ອມກັນແລ້ວກໍເພິງໃຫ້ເພສັຊນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ເພສັຊຂອງຜູ້ຂ້ານີ້ເກີນກຳໜົດ ໆ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະເພສັຊນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນເພສັຊທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ເພສັຊຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ເພສັຊນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ເພສັຊຂອງຜູ້ຂ້ານີ້ເກີນກຳໜົດ ໆ ວັນ ເປັນນິສສັຄຄີຍ໌ ຜູ້ຂ້າສລະເພສັຊນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນເພສັຊທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນເພສັຊນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໑. ເພສັຊຊສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໖໔] ເພສັຊທີ່ເກີນກຳໜົດ ໗ ວັນ ພິກສຸສຳຄັນວ່າເກີນກຳໜົດແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊເກີນກຳໜົດ ໗ ວັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊເກີນກຳໜົດ ໗ ວັນ ພິກສຸສຳຄັນວ່າຍັງບໍ່ເກີນກຳໜົດ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊຍັງບໍ່ໄດ້ອທິສຖານ ພິກສຸສຳຄັນວ່າອທິສຖານແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊຍັງບໍ່ໄດ້ສລະ ພິກສຸສຳຄັນວ່າໄດ້ສລະແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊຍັງບໍ່ສູນຫາຍ ພິກສຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊຍັງບໍ່ຈິບຫາຍ ພິກສຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊຍັງບໍ່ຖືກໄຟໄໝ້ ພິກສຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊຍັງບໍ່ຖືກຍາດຊີງໄປ ພິກສຸສຳຄັນວ່າຖືກຍາດຊີງໄປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເພສັຊທີ່ສລະແລ້ວ ພິກສຸໄດ້ຄືນມາ ບໍ່ເພິງໃຊ້ດ້ວຍກິຈທີ່ກ່ຽວກັບຮ່າງກາຍແລະບໍ່ຄວຣສັນ ເພິງນ້ອມເຂົ້າໄປໃນການຕາມປະທີປຫລືການຜສົມສີ ພິກສຸອື່ນຈະໃຊ້ດ້ວຍກິຈທີ່ກ່ຽວກັບຮ່າງກາຍກໍໄດ້ແຕ່ບໍ່ຄວຣສັນ

ທຸກກຸກກົຕ

ເພສັຊຍັງບໍ່ເກີນກຳໜົດ ໗ ວັນ ພິກສຸສຳຄັນວ່າເກີນກຳໜົດແລ້ວ ຕ້ອງອາບັຕິທຸກກົຕ

ເພສັຊຍັງບໍ່ເກີນກຳໜົດ ໗ ວັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ

ເພສັຊຍັງບໍ່ເກີນກຳໜົດ ໗ ວັນ ພິກສຸສຳຄັນວ່າຍັງບໍ່ເກີນກຳໜົດ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໕] ໑. ພິກສຸອທິສຖານພາຍໃນ ໗ ວັນ

໒. ພິກສຸສລະໃຫ້ໄປ

໓. ພິກສຸຜູ້ມີເພສັຊສູນຫາຍພາຍໃນ ໗ ວັນ

໔. ພິກສຸຜູ້ມີເພສັຊຈິບຫາຍພາຍໃນ ໗ ວັນ

໕. ພິກສຸຜູ້ມີເພສັຊຖືກໄຟໄໝ້ພາຍໃນ ໗ ວັນ

໖. ພິກສຸຜູ້ມີເພສັຊຖືກໂຈຣຍາດຊີງໄປພາຍໃນ ໗ ວັນ

໗. ພິກສຸຜູ້ມີເພສັຊຖືກຖືເອົາໄປໂດຍວິສາສະພາຍໃນ ໗ ວັນ

໘. ພິກສຸຜູ້ບໍ່ເຍື່ອໃຍ ໃຫ້ແກ່ອນຸປສັມບັນດ້ວຍຈິຕສລະລະອາງແລ້ວກັບໄດ້ຂອງນັ້ນມາສັນອີກ

໙. ພິກສຸວິກິລຈິຕ

໑໐. ພິກສຸຕົ້ນບັນຍັດ

ເພສັຊຊສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໔. ວັສສິກສາຕິກສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໔. ວັສສິກສາຕິກສິກຂາບົທ

ວ່າດ້ວຍຜ້າອາບນໍ້າຝົນ

ເຣື້ອງພຣະສັພພັຄຄີຍ໌

[໒໔໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າອາບນໍ້າຝົນແກ່ພິກສຸທັງຫລາຍ ພວກພິກສຸສັພພັຄຄີຍ໌ຊາບວ່າ ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າອາບນໍ້າຝົນ ຈຶ່ງແສວງຫາຜ້າອາບນໍ້າຝົນກ່ອນແດ່ ທຳນຸ່ງກ່ອນແດ່ ເມື່ອຜ້າອາບນໍ້າຝົນເກົ່າໂດກຂາດໄປແລ້ວຈຶ່ງເປືອຍກາຍອາບນໍ້າຝົນ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງແສວງຫາຜ້າອາບນໍ້າຝົນກ່ອນແດ່ ທຳນຸ່ງລ່ວງຫນ້າກ່ອນແດ່ ເມື່ອຜ້າອາບນໍ້າຝົນເກົ່າໂດກຂາດ ໄປແລ້ວຈຶ່ງເປືອຍກາຍອາບນໍ້າຝົນລະ” ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານແສວງຫາຜ້າອາບນໍ້າຝົນກ່ອນແດ່ ທຳນຸ່ງກ່ອນແດ່ ເມື່ອຜ້າອາບນໍ້າຝົນເກົ່າໂດກຂາດໄປແລ້ວ ໄດ້ເປືອຍກາຍອາບນໍ້າຝົນ ແມ່ນແທ້ບໍ່” ພວກ

ພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງແສວງຫາຜ້າອາບນ້ຳຝົນກ່ອນແດ່ ທຳນຸ່ງລ່ວງຫນ້າກ່ອນແດ່ ເມື່ອຜ້າອາບນ້ຳຝົນເກົ່າໂດກຂາດ ໄປແລ້ວໄດ້ເປືອຍກາຍອາບນ້ຳຝົນລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໔. ວັສສິກສາຕິກສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໓໒໗] ພິກສຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກ ໑ ເດືອນ" ເພິງແສວງຫາຈີວອນຄືຜ້າອາບນ້ຳຝົນໄດ້ ຮູ້ວ່າ "ຣະດູຮ້ອນຍັງເຫລືອອີກເຄິ່ງເດືອນ" ເພິງທຳນຸ່ງໄດ້ ຖ້າຮູ້ວ່າ "ຍັງບໍ່ເຖິງເດືອນສຸດທ້າຍແຫ່ງຣະດູຮ້ອນ" ເພິງແສວງຫາຈີວອນຄືຜ້າອາບນ້ຳຝົນ ຮູ້ວ່າ "ຍັງບໍ່ເຖິງເຄິ່ງເດືອນສຸດທ້າຍແຫ່ງຣະດູຮ້ອນ" ເພິງທຳນຸ່ງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໒໘] ຄຳວ່າ ພິກສຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກ ໑ ເດືອນ" ເພິງແສວງຫາຈີວອນຄືຜ້າອາບນ້ຳຝົນໄດ້ ອະທິບາຍວ່າ ພິກສຸເຂົ້າໄປຫາພວກຊາວບ້ານທີ່ເຄີຍຖວາຍຜ້າອາບນ້ຳຝົນເພິງກ່າວຢ່າງນີ້ວ່າ "ເຖິງເວລາຜ້າອາບນ້ຳຝົນແລ້ວ ເຖິງຄາວຜ້າອາບນ້ຳຝົນແລ້ວ ພວກຊາວບ້ານແມ່ນອື່ນກໍພາກັນຖວາຍຜ້າອາບນ້ຳຝົນ" ແຕ່ບໍ່ຄວຣກ່າວວ່າ "ທ່ານທັງຫລາຍຈົ່ງຖວາຍຜ້າອາບນ້ຳຝົນແກ່ອາຕມາ ຈົ່ງນຳຜ້າອາບນ້ຳຝົນມາໃຫ້ອາຕມາ ຈົ່ງແລກປ່ຽນຜ້າອາບນ້ຳຝົນມາໃຫ້ອາຕມາ ຈົ່ງຊື້ຜ້າອາບນ້ຳຝົນມາໃຫ້ອາຕມາ"

ຄຳວ່າ ຮູ້ວ່າ "ຣະດູຮ້ອນຍັງເຫລືອອີກເຄິ່ງເດືອນ" ເພິງທຳນຸ່ງໄດ້ ຄື ເມື່ອຣະດູຮ້ອນຍັງເຫລືອຢູ່ເຄິ່ງເດືອນ ພິກສຸເພິງທຳຜ້າອາບນ້ຳຝົນນຸ່ງໄດ້

ຄຳວ່າ ຖ້າຮູ້ວ່າ "ຍັງບໍ່ເຖິງເດືອນສຸດທ້າຍແຫ່ງຣະດູຮ້ອນ" ຄື ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ໑ ເດືອນ ພິກສຸແສວງຫາຜ້າອາບນ້ຳຝົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌
ຄຳວ່າ ຮູ້ວ່າ "ຍັງບໍ່ເຖິງເຄິ່ງເດືອນສຸດທ້າຍແຫ່ງຣະດູຮ້ອນ" ຄື ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ເຄິ່ງເດືອນ ພິກສຸທຳຜ້າອາບນ້ຳຝົນນຸ່ງ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ
ພິກສຸທັງຫລາຍ ພິກສຸພຶງສລະຜ້າອາບນ້ຳຝົນທີ່ເປັນນິສສັຄຄີຍ໌ຢ່າງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໖. ປັຕຕວັຄ ໔. ວັສສິກສາຕິກສິກຂາບົທ ສິກຂາບົທວິພັງຄ໌

ວິທີສລະຜ້າອາບນ້ຳຝົນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນພຶງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອາບນ້ຳຝົນຜືນນີ້ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ໑ ເດືອນ ຜູ້ຂ້າແສວງຫາແລ້ວ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ທຳນຸ່ງແລ້ວ ເປັນນິສສັຄຄີຍ໌ ຜູ້ຂ້າສລະຜ້າອາບນ້ຳຝົນຜືນນີ້ແກ່ສົງຂ໌" ຄັນສລະແລ້ວພຶງສະແດງອາບັຕິ
ພິກສຸຜູ້ສລາດສາມາດພຶງຮັບອາບັຕິ ພຶງຄືນຜ້າອາບນ້ຳຝົນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຜ້າອາບນ້ຳຝົນຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍພຶງໃຫ້ຜ້າອາບນ້ຳຝົນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນພຶງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອາບນ້ຳຝົນຜືນນີ້ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າ ໑ ເດືອນ ຜູ້ຂ້າແສວງຫາແລ້ວ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ທຳນຸ່ງແລ້ວ ເປັນນິສສັຄຄີຍ໌ ຜູ້ຂ້າສລະຜ້າອາບນ້ຳຝົນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວພຶງສະແດງອາບັຕິ ພິກສຸຜູ້ສລາດສາມາດພຶງຮັບອາບັຕິ ພຶງຄືນຜ້າອາບນ້ຳຝົນທີ່ທ່ານສລະໃຫ້ດ້ວຍກ່າວ

ວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຜ້າອາບນ້ຳຝົນຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຜ້າອາບນ້ຳຝົນຜືນນີ້ແກ່ພິກສຸຊື່ນີ້"

ເຫລືອເກີນກວ່າ ໑ ເດືອນ ຜູ້ຂ້າແສວງຫາແລ້ວ ເມື່ອຣະດູຮ້ອນຍັງເຫລືອເກີນກວ່າເຄິ່ງເດືອນ ທຳນຸ່ງແລ້ວ ເປັນນິສສັຄຄີຍ໌ ຜູ້ຂ້າສລະຜ້າອາບນ້ຳຝົນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຜ້າອາບນ້ຳຝົນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຜ້າອາບນ້ຳຝົນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[ຝ໒໔ລ] ຣະດູຮ້ອນຍັງເຫລືອເກີນ ໑ ເດືອນ ພິກສຸສຳຄັນວ່າເກີນ ແສວງຫາຜ້າອາບນ້ຳຝົນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນ ໑ ເດືອນ ພິກສຸບໍ່ແນ່ໃຈ ແສວງຫາຜ້າອາບນ້ຳຝົນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນ ໑ ເດືອນ ພິກສຸສຳຄັນວ່າຫນ້ອຍກວ່າ ແສວງຫາຜ້າອາບນ້ຳຝົນຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນເຄິ່ງເດືອນ ພິກສຸສຳຄັນວ່າເກີນ ທຳນຸ່ງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນເຄິ່ງເດືອນ ພິກສຸບໍ່ແນ່ໃຈ ທຳນຸ່ງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ຣະດູຮ້ອນຍັງເຫລືອເກີນເຄິ່ງເດືອນ ພິກສຸສຳຄັນວ່າຫນ້ອຍກວ່າ ທຳນຸ່ງ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຕ

ເມື່ອມີຜ້າອາບນ້ຳຝົນ ພິກສຸເປືອຍກາຍອາບນ້ຳຝົນ ຕ້ອງອາບັຕິທຸກກຕ

ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ ພິກສຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຕ

ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ ພິກສຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ຣະດູຮ້ອນຍັງເຫລືອຫນ້ອຍກວ່າເຄິ່ງເດືອນ ພິກສຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຕ

ຣະດູຮ້ອນທີ່ຍັງເຫລືອຫນ້ອຍກວ່າເຄິ່ງເດືອນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ຣະດູຮ້ອນຍັງເຫລືອຫນ້ອຍກວ່າເຄິ່ງເດືອນ ພິກສຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໓໐] ໑. ພິກສຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກ ໑ ເດືອນ" ແສວງຫາຜ້າອາບນ້ຳຝົນ

໒. ພິກສຸຮູ້ວ່າ "ຣະດູຮ້ອນຍັງເຫລືອອີກເຄິ່ງເດືອນ" ທຳຜ້າອາບນ້ຳຝົນນຸ່ງ

໓. ພິກສຸຮູ້ວ່າ "ຣະດູຮ້ອນຍັງເຫລືອຫນ້ອຍກວ່າ ໑ ເດືອນ" ແສວງຫາຜ້າອາບນ້ຳຝົນ

໔. ພິກສຸຮູ້ວ່າ "ຣະດູຮ້ອນຍັງເຫລືອຫນ້ອຍກວ່າເຄິ່ງເດືອນ" ທຳຜ້າອາບນ້ຳຝົນນຸ່ງ ເມື່ອພິກສຸແສວງຫາໄດ້ຜ້າອາບນ້ຳຝົນແລ້ວ ຣະດູຝົນເລື່ອນອອກໄປ ເມື່ອພິກສຸທຳຜ້າອາບນ້ຳຝົນນຸ່ງແລ້ວຣະດູຝົນເລື່ອນອອກໄປ ຄວຣຊັກເກັບໄວ້ ເພິ່ງນຸ່ງໃນສມັຍ

໕. ພິກສຸຖືກໂຈຣຍາດຊີງຈີວອນໄປ

໖. ພິກສຸຈີວອນສູນຫາຍ

໗. ພິກສຸຜູ້ຕກຢູ່ໃນອັນຕຣາຍ

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ວັສສິກສາຕິກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຖ໌] ໓. ປັຕຕວັຄ ໕. ຈີວອນອັຈສີນທນສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໕. ຈີວອນອັຈສີນທນສິກຂາບົທ

ວ່າດ້ວຍການໃຫ້ຈີວອນແລ້ວຍາດຊີງເອົາຄືນ

ເຣື້ອງພຣະອຸປນັນທສູາກຍບຸຕຣ

[໖໓໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ

ຫຼີກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສັກຍບຸຕຣ ກ່າວຊັກຊວນສັທທິວິຫາຣິກ ຂອງພິກສຸຜູ້ເປັນອ້າຍວ່າ “ມານີ້ເຖີດ ທ່ານ ພວກເຮົາຈັກໄປທຽວຊົນບົທດ້ວຍກັນ” ພິກສຸນັ້ນກ່າວ ຕອບວ່າ “ຜູ້ຂ້າບໍ່ໄປ ຜູ້ຂ້າມີຈີວອນຂາດເພ” ທ່ານພຣະອຸປນັນທສັກຍບຸຕຣກ່າວວ່າ “ໄປເຖີດ ທ່ານ ຂະນ້ອຍຈະຖວາຍຈີວອນແກ່ທ່ານ” ແລ້ວຖວາຍຈີວອນແກ່ພິກສຸນັ້ນ ພິກສຸນັ້ນຊາບຂ່າວວ່າ “ພຣະຜູ້ມີພຣະພາຄຈັກສເດັຈຈາຣິກໄປໃນຊົນບົທ” ເທື່ອນັ້ນ ທ່ານໄດ້ມີຄວາມຄິດວ່າ ‘ບັດນີ້ເຮົາ ຈັກບໍ່ໄປທຽວຊົນບົທກັບທ່ານພຣະອຸປນັນທສັກຍບຸຕຣ ແຕ່ຈະໄປທຽວຊົນບົທກັບພຣະຜູ້ມີພຣະ ພາຄ’ ຄັນທ່ານພຣະອຸປນັນທສັກຍບຸຕຣກ່າວຊັກຊວນພິກສຸນັ້ນວ່າ “ມາເຖີດ ທ່ານ ບັດນີ້ພວກເຮົາ ຈະໄປທຽວຊົນບົທດ້ວຍກັນ” ພິກສຸນັ້ນປຕິເສທວ່າ “ຜູ້ຂ້າບໍ່ໄປທຽວຊົນບົທກັບທ່ານລ່ະ ຜູ້ຂ້າຈະ ໄປທຽວຊົນບົທກັບພຣະຜູ້ມີພຣະພາຄ” ທ່ານພຣະອຸປນັນທສັກຍບຸຕຣກ່າວວ່າ “ເຮົາຖວາຍຈີວອນ ທ່ານເພາະຕັ້ງໃຈວ່າ ‘ຈະໄປທຽວຊົນບົທດ້ວຍກັນ” ຈຶ່ງໂກດ ບໍ່ພໍໃຈ ຍາດຊິງເອົາຈີວອນຄືນ ຕໍ່ ມາ ພິກສຸນັ້ນໄດ້ເລົ່າເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸປນັນທສັກຍບຸຕຣໃຫ້ຈີວອນພິກສຸເອງແລ້ວໂກດ ບໍ່ພໍ ໃຈ ຍາດຊິງເອົາຄືນມາລະ” ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະອຸປນັນທສັກຍບຸຕຣ ໂດຍປະ ການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສັກຍບຸຕຣວ່າ “ອຸປນັນທະ ຊາບວ່າ ທ່ານໃຫ້ຈີວອນພິກສຸເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາ ແມ່ນແທ້ບໍ” ທ່ານພຣະອຸປນັນທສັກຍບຸຕຣທູລຮັບວ່າ “ຈິງພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ໂມຂບຸຣຸສ ຈັ່ງໃດທ່ານໃຫ້ຈີວອນພິກສຸເອງແລ້ວ ໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໓໔] ກໍ ພິກສຸໃດໃຫ້ຈີວອນແກ່ພິກສຸເອງແລ້ວໂກດ ບໍ່ພໍໃຈ ຍາດຊິງເອົາຄືນມາຫລືໃຊ້ໃຫ້ ຍາດຊິງຊິງເອົາ**ຄືນ**ມາ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໓໖໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ແກ່ພິກສຸ ຄື ແກ່ພິກສຸຮູບອື່ນ

ຄຳວ່າ ເອງ ຄື ໃຫ້ດ້ວຍຕົນເອງ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ໖ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ໂກດ ບໍ່ພໍໃຈ ຄື ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ

ຄຳວ່າ ຍາດຊີງເອົາມາ ຄື ຍື້ແຍ່ງເອົາມາດ້ວຍຕົນເອງ ຈີວອນນັ້ນເປັນນິສສັຄຄີຍ໌

ຄຳວ່າ ໃຊ້ໃຫ້ຍາດຊີງເອົາມາ ຄື ສັ່ງຜູ້ອື່ນ ຕ້ອງອາບັຕິທຸກກຕ

ພິກສຸຜູ້ຮັບຄຳສັ່ງຄັ້ງດຽວແຕ່ຍາດຊີງເອົາມາຫລາຍຄັ້ງ ຈີວອນນັ້ນເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ພິກສຸເອງແລ້ວຍາດຊີງຄືນມາເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ

ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິ່ງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່

ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າໃຫ້ພິກສຸເອງແລ້ວຍາດ ຊີງຄືນມາ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງ ອາບັຕິ

ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງ ຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າ ທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວ ຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າໃຫ້ພິກສຸເອງແລ້ວຍາດຊີງຄືນມາ ເປັນນິສສັຄຄີຍ໌ ຜູ້ຂ້າ ສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ

ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນ ນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໕. ຈີວອນອັຈສິນທນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໘໓໔] ອຸປສັມບັນ໑ ພິກສຸສຳຄັນວ່າເປັນອຸປສັມບັນ ໃຫ້ຈີວອນເອງແລ້ວໂກດ ບໍ່ພໍໃຈ ຍາດຊີງ ເອົາຄືນມາຫລືໃຊ້ໃຫ້ຍາດຊີງເອົາມາ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ໃຫ້ຈີວອນເອງແລ້ວໂກດ ບໍ່ພໍໃຈ ຍາດຊີງເອົາມາຫລືໃຊ້ໃຫ້ຍາດຊີງ ເອົາຄືນມາ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ໃຫ້ຈີວອນເອງແລ້ວໂກດ ບໍ່ພໍໃຈ ຍາດຊີງເອົາຄືນມາ ຫລືໃຊ້ໃຫ້ຍາດຊີງເອົາມາ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຕ

ພິກສຸໃຫ້ບໍຣິຂາຣຢ່າງອື່ນແລ້ວໂກດ ບໍ່ພໍໃຈ ຍາດຊີງເອົາມາຫລືໃຊ້ໃຫ້ຍາດຊີງເອົາມາ ຕ້ອງອາບັຕິ

ທຸກກຕ
ພິກສຸໃຫ້ຈີວອນຫລືບໍ່ຣິຂາຣຢ່າງອື່ນແກ່ອນຸປສັມບັນແລ້ວໂກດ ບໍ່ພໍໃຈ ຍາດຊີງເອົາຄືນມາຫລືໃຊ້ໃຫ້ຍາດຊີງເອົາມາ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໖໕] ໑. ພິກສຸຜູ້ເປັນເຈົ້າຂອງເດີມຮັບຈີວອນທີ່ເຂົາໃຫ້ຄືນເອງ ຫລືຖືເອົາໂດຍວິສາສະກັບພິກສຸຜູ້ຮັບໄປ
໔. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ຈີວອນອັຈສິນທນສິກຂາບົທທີ ៥ ຈົບ

ເຊີງອັນຖະ :
໑ ອຸປສັມບັນ ຜູ້ໄດ້ຮັບອຸປສົມບົທດ້ວຍຍັຕຕິຈຕຸຕຖກັມແລ້ວ ຫມາຍເຖິງພິກສຸ (ວິ. ອ. ໑/໔໕/໔໕໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໖. ປັຕຕວັຄ ໖. ສຸຕຕວິຢຍັຕຕິສິກຂາບົທ ນິທານວັຕຖຸ

໖. ປັຕຕວັຄ

໖. ສຸຕຕວິຢຍັຕຕິສິກຂາບົທ
ວ່າດ້ວຍການອອກປາກຂໍດ້າຍ

ເລື້ອງພຣະສັພພັຄຄີຍ໌

[໕໓໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ບ່ອນໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄືຫ໌ ຄັ້ງນັ້ນ ເມື່ອເຖີງຄາວທຳຈີວອນ ພວກພິກສຸສັພພັຄຄີຍ໌ອອກປາກຂໍດ້າຍມາເປັນອັນມາກ ຄັນທຳຈີວອນເສັດແລ້ວ ດ້າຍເຫລືອຢູ່ເປັນອັນມາກ ເທື່ອນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ມີຄວາມຄິດວ່າ “ເອົາເຖີດ ພວກເຮົາຈະອອກປາກຂໍດ້າຍອື່ນມາໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ” ຕໍ່ມາ ພວກພິກສຸສັພພັຄຄີຍ໌ໄດ້ໄປຂໍດ້າຍເປັນອັນມາກມາໃຊ້ຊ່າງຕ່ຳຫູກຕ່ຳຈີວອນ ເມື່ອຕ່ຳຈີວອນແລ້ວ ດ້າຍກໍຍັງເຫລືອອີກຫລາຍ ແມ່ນຄັ້ງທີ ໔ ພວກພິກສຸສັພພັຄຄີຍ໌ໄດ້ໄປອອກປາກຂໍດ້າຍອື່ນອີກເປັນອັນມາກມາໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ ເມື່ອຕ່ຳຈີວອນແລ້ວ ດ້າຍກໍຍັງເຫລືອຢູ່ຫລາຍ ແມ່ນຄັ້ງທີ ໕ ພວກພິກສຸສັພພັຄຄີຍ໌ໄດ້ໄປຂໍດ້າຍອື່ນອີກເປັນອັນມາກມາໃຫ້ຊ່າງຕ່ຳຫູກຕ່ຳຈີວອນ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງອອກປາກຂໍດ້າຍມາເອງ ແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນລະ” ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງອອກປາກຂໍດ້າຍມາເອງ ແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນລະ” ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ ແມ່ນແທ້ບໍ່” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ຈິງພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄຊົງຕຳຫນິວ່າ “ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນລະ ໂມຄບຸຣຸສທັງຫລາຍການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໓໗] ກໍ ພິກສຸໃດອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳຈີວອນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[ຝັລັງ] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ເອງ ຄື ອອກປາກຂໍເຂົາມາດ້ວຍຕົນເອງ

ທີ່ຊື່ວ່າ ດ້າຍ ໄດ້ແກ່ ດ້າຍ ໒ ຊນິດ ຄື (໑) ດ້າຍທີ່ເຮັດດ້ວຍເປືອກໄມ້ (໔) ດ້າຍທີ່ເຮັດດ້ວຍຝ້າຍ (໓) ດ້າຍທີ່ເຮັດດ້ວຍໄໝ (໔) ດ້າຍທີ່ເຮັດດ້ວຍຂົນສັຕວ໌ (໕) ດ້າຍທີ່ເຮັດດ້ວຍປ່ານ (໒) ດ້າຍທີ່ເຮັດດ້ວຍວັຕຖຸທັງ ໕ ຊນິດຜສົມກັນ

ຄຳວ່າ ຊ່າງຕ່ຳຫູກ ຄື ໃຊ້ຊ່າງຕ່ຳຫູກໃຫ້ຕ່ຳ

ຕ້ອງອາບັຕິທຸກກຕທຸກຂນະທີ່ພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກຕ່ຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ຜູ້ຂ້າອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະ

ແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢອງຢື້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ຜູ້ຂ້າອອກປາກຂໍດ້າຍມາເອງແລ້ວໃຊ້ຊ່າງຕ່ຳຫູກໃຫ້ຕ່ຳເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນຫ໌] ໓. ປັຕຕວັຄ ໖. ສຸຕຕວິຍັປັຕຕິສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໖໓໙] ຈີວອນທີ່ໃຊ້ເຂົາໃຫ້ຕ່ຳ ພິກສຸສຳຄັນວ່າໃຊ້ເຂົາໃຫ້ຕ່ຳ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ຈີວອນທີ່ໃຊ້ເຂົາໃຫ້ຕ່ຳ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌ ຈີວອນທີ່ໃຊ້ເຂົາໃຫ້ຕ່ຳ ພິກສຸສຳຄັນວ່າບໍ່ໄດ້ໃຊ້ເຂົາໃຫ້ຕ່ຳ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ທຸກກຸກາຕ

ຈີວອນທີ່ບໍ່ໄດ້ໃຊ້ເຂົາໃຫ້ຕ່ຳ ພິກສຸສຳຄັນວ່າໃຊ້ເຂົາໃຫ້ຕ່ຳ ຕ້ອງອາບັຕິທຸກກາຕ
ຈີວອນທີ່ບໍ່ໄດ້ໃຊ້ເຂົາໃຫ້ຕ່ຳ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກາຕ
ຈີວອນທີ່ບໍ່ໄດ້ໃຊ້ເຂົາໃຫ້ຕ່ຳ ພິກສຸສຳຄັນວ່າບໍ່ໄດ້ໃຊ້ເຂົາໃຫ້ຕ່ຳ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໔໐] ໑. ພິກສຸຂໍດ້າຍມາຍິບຈີວອນ

໔. ພິກສຸຂໍດ້າຍມາທຳຜ້າຮັດເຂົ່າ
໖. ພິກສຸຂໍດ້າຍມາທຳປຣະຄົດແອວ
໔. ພິກສຸຂໍດ້າຍມາທຳຜ້າອັງສະ
໕. ພິກສຸຂໍດ້າຍມາທຳຖົງບາຕຣ
໖. ພິກສຸຂໍດ້າຍມາທຳຜ້າກອງນ້ຳ
໗. ພິກສຸຂໍຈາກຍາຕ
໗. ພິກສຸຂໍຈາກຄົນປວາຣນາ
໙. ພິກສຸຂໍເພື່ອພິກສຸອື່ນ
໑໐. ພິກສຸຊື້ມາດ້ວຍຊັພຍ໌ຂອງຕົນ
໑໑. ພິກສຸວິກົລຈິຕ
໑໔. ພິກສຸຕົ້ນບັນຍັດ

ສຸຕຕວິຢຢັຕຕິສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໖. ປັຕຕວັຄ ໗. ມຫາເປສກາຣສິກຂາບົທ

ນິທານວັຕຖຸ

໖. ປັຕຕວັຄ

໗. ມຫາເປສກາຣສິກຂາບົທ

ວ່າດ້ວຍກາຣສັ່ງຊ່າງຕ່ຳຫູກຕ່ຳຈີວອນ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໖໔໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ຊາຍຄົນນຶ່ງຈະໄປຄ້າງຄືນຕ່າງຖິ່ນ ກ່າວກັບພັຣຍາວ່າ "ທ່ານຈົ່ງກະດ້າຍແລ້ວມອບໃຫ້ຊ່າງຕ່ຳຫູກຊື່ພຸ້ນ ຂໍໃຫ້ເຂົາຕ່ຳຈີວອນເກັບໄວ້ສັນກັບມາແລ້ວຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ພິກສຸຜູ້ຖືທຽວບິນທບາຕເປັນວັຕຣຮູບນຶ່ງໄດ້ຍິນຊາຍຄົນນັ້ນ ກ່າວ ຈຶ່ງເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວວ່າ "ທ່ານອຸປນັນທະ ທ່ານມີບຸນມາກ ຊາຍຄົນນຶ່ງໃນທີ່ພຸ້ນເມື່ອຈະໄປຄ້າງຄືນຕ່າງຖິ່ນ ກ່າວກັບພັຣຍາວ່າ

'ທ່ານຈົ່ງ
ກະດ້າຍແລ້ວມອບໃຫ້ຊ່າງຕ່ຳຫູກຊື່ພຸ້ນ ຂໍໃຫ້ເຂົາຕ່ຳຈີວອນເກັບໄວ້ ຂ້ອຍກັບມາແລ້ວຈະນິມົນຕ໌ພຣະຄຸນເຈົ້າອຸປນັນທະໃຫ້ຄອງຈີວອນ" ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ "ແມ່ນແລ້ວຂນ້ອຍ ເຂົາເປັນອຸປັຕຖາກຂອງຜູ້ຂ້າ" ແມ່ນຊ່າງຕ່ຳຫູກນັ້ນກໍເປັນອຸປັຕຖາກຂອງທ່ານພຣະອຸປນັນທສາກຍບຸຕຣ ຕໍ່ມາ ທ່ານພຣະອຸປນັນທສາກຍບຸຕຣໄດ້ເຂົ້າໄປຫາຊ່າງຕ່ຳຫູກນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບຊ່າງຕ່ຳຫູກວ່າ "ຈີວອນຜືນນີ້ເຂົາໃຫ້ທ່ານຕ່ຳເຈາະຈົງອາຕມາ ທ່ານຈົ່ງເຮັດໃຫ້ຍາວ ໃຫ້ກວ້າງ ໃຫ້ເນື້ອແໜ້ນ ຂຶງໃຫ້ດີ ຕ່ຳໃຫ້ດີ ສາງໃຫ້ດີ ແລະກຣີດໃຫ້ດີ" ຊ່າງຕ່ຳຫູກກ່າວວ່າ "ພຣະຄຸນເຈົ້າ ເຂົາກະດ້າຍສົ່ງມາໃຫ້ເທົ່ານີ້ ທັງສັ່ງກຳຊັບວ່າ ຈົ່ງເອົາດ້າຍນີ້ຕ່ຳຈີວອນ' ຜູ້ຂ້າບໍ່ສາມາດຈະເຮັດໃຫ້ຍາວ ໃຫ້ກວ້າງ ຫລືໃຫ້ເນື້ອແໜ້ນໄດ້ ແຕ່ຈະຂຶງໃຫ້ດີ ຕ່ຳໃຫ້ດີ ສາງໃຫ້ດີ ແລະຮີດໃຫ້ດີໄດ້ ຂນ້ອຍ" ທ່ານພຣະອຸປນັນທສາກຍບຸຕຣກ່າວວ່າ "ເອົາເຖາະ ທ່ານຈົ່ງເຮັດໃຫ້ຍາວ ໃຫ້ກວ້າງ ແລະໃຫ້ເນື້ອແໜ້ນເຖີດ ບໍ່ຕ້ອງກັງວົລເຣື່ອງດ້າຍ" ຄັນຊ່າງຕ່ຳຫູກນຳດ້າຍຕາມທີ່ເຂົາສົ່ງມາເຂົ້າເຄື່ອງຕ່ຳ ຈຶ່ງເຂົ້າໄປຫາຍິງນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບຍິງນັ້ນວ່າ "ຜູ້ຂ້າຕ້ອງການດ້າຍ ຂນ້ອຍ" ຍິງນັ້ນກ່າວວ່າ "ຂະນ້ອຍສັ່ງທ່ານແລ້ວບໍ່ແມ່ນບໍ ວ່າ 'ຈົ່ງເອົາດ້າຍນີ້ຕ່ຳຈີວອນ" ຊ່າງຕ່ຳຫູກຕອບວ່າ "ແມ່ນແທ້ຂນ້ອຍແມ່ເຈົ້າ ທ່ານສັ່ງຜູ້ຂ້າວ່າ 'ຈົ່ງເອົາດ້າຍນີ້ຕ່ຳຈີວອນ' ແຕ່ພຣະຄຸນເຈົ້າອຸປນັນທສາກຍບຸຕຣກ່າວຢ່າງນີ້ວ່າ 'ເອົາເຖາະ ທ່ານຈົ່ງເຮັດໃຫ້ຍາວໃຫ້ກວ້າງແລະໃຫ້ເນື້ອແໜ້ນ ບໍ່ຕ້ອງກັງວົລເຣື່ອງດ້າຍ" ຍິງນັ້ນຈຶ່ງໃຫ້ດ້າຍເພີ້ມເທົ່າກັບທີ່ໃຫ້ຄາວທຳອິດ ທ່ານພຣະອຸປນັນທສາກຍບຸຕຣຊາບວ່າ "ຊາຍຄົນນັ້ນກັບມາຈາກການຄ້າງຄືນຕ່າງຖິ່ນ" ຈຶ່ງເຂົ້າໄປຫາເຖິງທີ່ຢູ່ ຄັນເຖິງແລ້ວຈຶ່ງນັ່ງເທິງອາສນະທີ່ເຂົາຈັດໄວ້ ຊາຍນັ້ນເຂົ້າໄປຫາທ່ານພຣະອຸປນັນທສາກຍບຸຕຣເຖິງທີ່ນັ່ງ ຄັນເຖິງແລ້ວຈຶ່ງໄຫວ້ແລ້ວນັ່ງ ນະ ທີ່ສົມຄວຣ ຖາມພັຣຍາວ່າ "ຈີວອນຕ່ຳແລ້ວ ແລ້ວຫລື" ພັຣຍາຕອບວ່າ "ເສັດແລ້ວ" ເຂົາສັ່ງວ່າ "ທ່ານຈົ່ງນຳມາ ຂ້ອຍຈະນິມົນຕ໌ ພຣະຄຸນເຈົ້າອຸປນັນທສາກຍບຸຕຣໃຫ້ຄອງຈີວອນ" ພັຣຍານຳຈີວອນຜືນນັ້ນອອກມາໃຫ້ສາມີແລ້ວເລົ່າເຣື່ອງໃຫ້ຊາບ ຊາຍນັ້ນຖວາຍຈີວອນນັ້ນແກ່ທ່ານພຣະອຸປນັນທສາກຍບຸຕຣແລ້ວຕຳໜິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສາກຍບຸຕຣເຫລົ່ານີ້ມັກມາກ ບໍ່ສັນໂດສ ຈະນິມົນຕ໌ໃຫ້ຄອງຈີວອນ ບໍ່ແມ່ນຈະເຮັດໄດ້ງ່າຍ ຈັ່ງໃດພຣະຄຸນເຈົ້າອຸປນັນທສາກຍບຸຕຣ ທີ່ເຮົາບໍ່ໄດ້ປວາຣນາໄວ້ກ່ອນ ຈຶ່ງເຂົ້າໄປຫາຊ່າງຕ່ຳຫູກແລ້ວກຳໜົດຈີວອນລະ" ພິກສຸທັງຫລາຍໄດ້ຍິນບຸຣຸສນັ້ນຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣທີ່ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຈຶ່ງເຂົ້າໄປຫາ

ຊ່າງຕໍ່າຫູກແລ້ວກໍາຫນົດຈີວອນລະ" ຄັນພິກສຸເຫລົ່ານັ້ນຕໍາຫນິທ່ານອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ແຕ່ທ່ານເຂົ້າໄປຫາຊ່າງຕໍ່າຫູກຂອງຄຣືຫັສຖ໌ແລ້ວກໍາຫນົດຈີວອນ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ"ອຸປນັນທະ ເຂົາເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ທ່ານພຣະອຸປນັນທສາກຍບຸຕຣທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕໍາຫນິວ່າ "ໂມຂບຸຣຸສ ຄຣືຫັສຖ໌ຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມ ຫລື ບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຂອງຜູ້ບໍ່ແມ່ນຍາຕ ທ່ານນັ້ນ໑ ຊຶ່ງເຂົາບໍ່ໄດ້ປວາຣນາໄວ້ກ່ອນເຂົ້າ ໄປຫາຊ່າງຕໍ່າຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕແລ້ວ ກໍາຫນົດຈີວອນລະ ໂມຂບຸຣຸສ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະບັນຍັດ

[໕໔໔] ກໍຄຣືຫັສຖ໌ຊາຍຫລືຄຣືຫັສຖ໌ຍິງຜູ້ບໍ່ແມ່ນຍາຕ ສັ່ງຊ່າງຕໍ່າຫູກໃຫ້ຕໍ່າຈີວອນເຈາະຈົງພິກສຸ ຖ້າພິກສຸນັ້ນເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຊ່າງຕໍ່າຫູກແລ້ວກໍາຫນົດຊນິດຈີວອນໃນສໍານັກຂອງເຂົາວ່າ "ທ່ານ ຈີວອນຜືນນີ້ເຂົາໃຫ້ຕໍ່າເຈາະຈົງອາຕມາ ທ່ານຈົ່ງເຮັດໃຫ້ຍາວ ທ່ານຈົ່ງເຮັດໃຫ້ກວ້າງ ໃຫ້ເນື້ອແໜ້ນ ຂຶງໃຫ້ດີ ຕໍ່າໃຫ້ດີ ສາງໃຫ້ດີ ແລະຮີດໃຫ້ດີ ເອົາເຖາະ ອາຕມາຈະໃຫ້ຂອງເລັກນ້ອຍເປັນຣາງວັນແກ່ທ່ານ" ຄັນກ່າວຢ່າງນີ້ແລ້ວ ຖ້າພິກສຸນັ້ນໃຫ້ຂອງເລັກນ້ອຍເປັນຣາງວັນ ໂດຍທີ່ສຸດແມ່ນແຕ່ອາຫາຣບິນທບາຕ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໕໔໕] ຄໍາວ່າ ກໍ. . . ເຈາະຈົງພິກສຸ ຄວາມວ່າ ເພື່ອປໂຍດຂອງພິກສຸ ຄື ມຸ່ງສະເພາະພິກສຸ ປຣາຖນາຈະໃຫ້ພິກສຸຄອງຈີວອນ

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ
ທີ່ຊື່ວ່າ ຄຣືຫັສຖ໌ຊາຍ ໄດ້ແກ່ ບຸຣຸສຜູ້ຄອງເຮືອນ

ເຊີງອັນຖະ :

໑ ຕຕ຺ຖ ທ່ານນັ້ນນີ້ເປັນ ປຈ຺ຈຕ຺ຕກຕ຺ອຕ຺ຖ ຄືມີອັນຖະເປັນກັຕຕາ ຜູ້ກະທຳ ປຖມາວິພ຺ຕຕິ (ຕຕ຺ຖ ນາມ ຕ຺ອນ຺ຕິ
ໂສ ນາມ ຕ຺ອໍ - ວິມຕິ. ຕີກາ ໑/໕໐໖-໕/໔໑໗)

ທີ່ຊື່ວ່າ ຄຣືຫັສຖ໌ຍິງ ໄດ້ແກ່ ສຕຣີຜູ້ຄອງເຮືອນ
ທີ່ຊື່ວ່າ ຊ່າງຕ່ຳຫູກ ໄດ້ແກ່ ຄົນຕ່ຳຜ້າ
ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງຊຶ່ງມີຂນາດພໍທີ່ຈະທຳວິກັປໄດ້ເປັນຢ່າງຕ່ຳ
ຄຳວ່າ ສັ່ງ. . . ໃຫ້ຕ່ຳ ຄື ໃຊ້ໃຫ້ຕ່ຳ
ຄຳວ່າ ຖ້າພິກສຸນັ້ນ. . . ໃນສຳນັກຂອງເຂົາ ໄດ້ແກ່ ພິກສຸທີ່ເຂົາສັ່ງໃຫ້ຊ່າງຕ່ຳຫູກຕ່ຳຈີວອນເຈາະຈົງ
ຄຳວ່າ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຄື ທາຍົກບໍ່ໄດ້ກ່າວໄວ້ກ່ອນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈີວອນຊນິດໃດ ຜູ້ຂ້າຈະໃຫ້ຕ່ຳຈີວອນຊນິດໃດຖວາຍທ່ານ"
ຄຳວ່າ ເຂົ້າໄປຫາຊ່າງຕ່ຳຫູກ ຄື ໄປເຖິງເຮືອນແລ້ວເຂົ້າໄປຫາທີ່ໃດທີ່ນຶ່ງ
ຄຳວ່າ ກຳຫນົດຊນິດຈີວອນ ຄື ກຳຫນົດວ່າ "ຈີວອນຜືນນີ້ຕ່ຳເຈາະຈົງອາຕມາ ທ່ານຈົ່ງເຮັດໃຫ້ຍາວ ໃຫ້ກວ້າງ ໃຫ້ເນື້ອແໜ້ນ ຂຶງໃຫ້ດີ ຕ່ຳໃຫ້ດີ ສາງໃຫ້ດີ ແລະຮີດໃຫ້ດີ ເອົາເຖາະອາຕມາຈະໃຫ້ຂອງເລັກນ້ອຍເປັນຣາງວັນແກ່ທ່ານ"
ຄຳວ່າ ຄັນກ່າວຢ່າງນີ້ແລ້ວ ຖ້າພິກສຸນັ້ນໃຫ້ຂອງເລັກນ້ອຍເປັນຣາງວັນໂດຍທີ່ສຸດ ແມ່ນແຕ່ອາຫາຣບິນທບາຕ ມີຄວາມວ່າ ທີ່ຊື່ວ່າບິນທບາຕ ໄດ້ແກ່ ເຂົ້າຕົ້ມ ເຂົ້າສວຍ ຂອງຄ້ຽວ ກ້ອນຈຸຣນະໄມ້ຊຳຣະແຂ້ວ ຫລືດ້າຍຊາຍຜ້າ ໂດຍທີ່ສຸດຈົນເນື່ອກ່າວທັມ ຊ່າງຕ່ຳຫູກເຮັດໃຫ້ຍາວ ໃຫ້ກວ້າງ ໃຫ້ເນື້ອແໜ້ນຕາມຄຳພິກສຸ ຕ້ອງອາບັຕິທຸກກຕເພາະພຍາຍາມ ຈີວອນເປັນນິສສັຄຄີຍ໌ເພາະໄດ້ມາຄືເປັນຂອງຈຳຕ້ອງສລະຈີວອນແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ
ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຈີວອນຜືນນີ້ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍ ຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ້ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຂນ້ອຍ ຈີວອນຜືນນີ້ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ຜູ້ຂ້າເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ຜູ້ບໍ່ແມ່ນຍາຕ ກຳຫນົດຊນິດຈີວອນ ເປັນນິສສັຄຄີຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິງສະແດງອາບັຕິພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ຕິກນິສສັຄຄີຍປາຈິຕຕີຍ໌

[໖໔໔] ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ກຳຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ກຳຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຄຣືຫັສຖ໌ທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ເຂົາບໍ່ໄດ້ປວາຣນາໄວ້ກ່ອນ ເຂົ້າໄປຫາຊ່າງຕ່ຳຫູກຂອງຄຣືຫັສຖ໌ກຳຫນົດຊນິດຈີວອນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຸກາຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ເຂົ້າໄປກຳຫນົດຊນິດຈີວອນ ຕ້ອງອາບັຕິທຸກກາຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ເຂົ້າໄປກຳຫນົດຊນິດຈີວອນ ຕ້ອງອາບັຕິທຸກກາຕ

ຄຣືຫັສຖ໌ທີ່ເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ເຂົ້າໄປກຳຫນົດຊນິດຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໔໕] ໑. ພິກສຸກຳຫນົດຊນິດຈີວອນກັບຊ່າງຕ່ຳຫູກຂອງຍາຕ

໒. ພິກສຸກຳຫນົດຊນິດຈີວອນກັບຊ່າງຕ່ຳຫູກຂອງຄນປວາຣນາ

໓. ພິກສຸກຳຫນົດຊນິດຈີວອນເພື່ອພິກສຸອື່ນ

໔. ພິກສຸກຳຫນົດຊນິດຈີວອນດ້ວຍຊັພຍ໌ຂອງຕົນ

໕. ຄຣືຫັສຖ໌ຈະໃຫ້ທອຈີວອນຣາຄາແພງແຕ່ພິກສຸໃຫ້ທອຈີວອນຣາຄາຖືກ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ມຫາເປສກາຣສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໗. ອັຈເຈກຈີວອນສິກຂາບົທ ນິທານວັຕຖຸ

໖. ປັຕຕວັຄ

໗. ອັຈເຈກຈີວອນສິກຂາບົທ

ວ່າດ້ວຍອັຈເຈກຈີວອນ

ເລື່ອງມຫາອມາຕຍ໌ຖວາຍຜ້າຈຳນຳພັນສາ

[໓໔໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ມຫາອມາຕຍ໌ຄົນນຶ່ງຈະໄປຄ້າງຄືນຕ່າງຖິ່ນ ສົ່ງທູຕໄປຫາພິກສຸວ່າ "ຂໍພຣະຄຸນເຈົ້າທັງຫລາຍມາເຖີດ ຜູ້ຂ້າຈະຖວາຍຜ້າຈຳນຳພັນສາ໑" ພິກສຸທັງຫລາຍກຽດຊັງວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າຈຳນຳພັນສາ ແກ່ພິກສຸຜູ້ຢູ່ຈຳພັນສາ" ຈຶ່ງບໍ່ໄປ ມຫາອມາຕຍ໌ ຕຳຫນິ ປະນາມ ໂພນທະນາວ່າ "ເປັນຫຍັງພຣະຄຸນເຈົ້າທັງຫລາຍ ເມື່ອເຮົາສົ່ງທູຕໄປຈຶ່ງບໍ່ມາລະ ເຮົາຈະຍ່າງທາງໄປຣົບ ຈະເປັນຈະຕາຍກໍຍາກຈະຮູ້ໄດ້" ພວກພິກສຸໄດ້ຊາບຂ່າວທີ່ມຫາອມາຕຍ໌ຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕອັຈເຈກຈີວອນ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເລື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຮັບອັຈເຈກຈີວອນ໔ ເກັບໄວ້ໄດ້"

[໓໔໗] ສມັຍນັ້ນ ພິກສຸທັງຫລາຍຊາບວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ຮັບອັຈເຈກຈີວອນເກັບໄວ້ໄດ້" ຈຶ່ງຮັບອັຈເຈກຈີວອນເກັບໄວ້ຈົນເກີນສມັຍຈີວອນກາລ ຈີວອນເຫລົ່ານັ້ນພິກສຸທັ່ງແຂວນໄວ້ທີ່ສາຍຣະດຽງ ທ່ານພຣະອານົນທ໌ທຽວຈາຣິກໄປຕາມເສນາສນະເຫັນຈີວອນເຫລົ່ານັ້ນແຂວນຢູ່ທີ່ສາຍຣະດຽງ ຈຶ່ງກ່າວກັບພິກສຸທັງຫລາຍວ່າ "ຈີວອນເຫລົ່ານີ້ຂອງໃຜແຂວນໄວ້ທີ່ສາຍຣະດຽງ"

ເຊີງອັນຖະ :

໑ ຜ້າຈຳນຳພັນສາ ຄືຜ້າທີ່ທາຍົກຖວາຍແກ່ພຣະສົງຂ໌ຜູ້ຢູ່ຈຳພັນສາແລ້ວ (ເບິ່ງຂໍ້ ໓໔໙ ໜ້າ ໑໓໙ ປະກອບ)

໔ ອັຈເຈກຈີວອນ ຫມາຍເຖິງຈີວອນຮີບຮ້ອນຫລືຜ້າຈຳນຳພັນສາທີ່ທາຍົກຜູ້ມີເຫຕຸຮີບຮ້ອນຂໍ

ຖວາຍກ່ອນກຳຫນົດເວລາປົກຕິ ມີພຸທທານຸຍາຕໃຫ້ພິກສຸຮັບເກັບໄວ້ໄດ້ ແຕ່ຕ້ອງຮັບກ່ອນວັນປວາຣນາບໍ່ເກີນ ໑໐ ວັນ (ເບິ່ງຂໍ້ ໕໔໙ ຫນ້າ ໑໕໙)

ພິກສຸທັງຫລາຍຕອບວ່າ "ອັຈເຈກຈີວອນຂອງພວກຜູ້ຂ້າ" ທ່ານພຣະອານົນທ໌ຖາມວ່າ "ທ່ານທັງຫລາຍ ພວກທ່ານເກັບຈີວອນເຫລົ່ານີ້ໄວ້ນານຈັກນໍ້ແລ້ວ" ພິກສຸເຫລົ່ານັ້ນບອກພຣະອານົນທ໌ຕາມທີ່ໄດ້ເກັບໄວ້ ທ່ານພຣະອານົນທ໌ຕຳຫນິ ປະນາມ ໂພນທະນາວ່າ "ເປັນຫຍັງພິກສຸທັງຫລາຍຮັບອັຈເຈກຈີວອນແລ້ວເກັບໄວ້ຈົນເກີນສມັຍຈີວອນກາລະ" ຄັນພຣະອານົນທ໌ຕຳຫນິພວກພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພວກພິກສຸຮັບອັຈເຈກຈີວອນເກັບໄວ້ຈົນເກີນສມັຍຈີວອນກາລແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕຳຫນິວ່າ "ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຮັບອັຈເຈກຈີວອນເກັບໄວ້ຈົນເກີນສມັຍຈີວອນກາລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້
ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໗] ກໍ ເມື່ອຍັງເຫລືອອີກ ໑໐ ວັນຈຶ່ງຈະເຖິງວັນເພັງເດືອນ ໑໑ ຊຶ່ງເປັນວັນຄົບໄຕຣມາສ໑ ອັຈເຈກຈີວອນເກີດຂຶ້ນແກ່ພິກສຸ ພິກສຸຮູ້ຢູ່ວ່າເປັນອັຈເຈກຈີວອນເພິງຮັບໄວ້ ຄັນຮັບໄວ້ແລ້ວຄວຣເກັບໄວ້ໄດ້ຊົ່ວສມັຍທີ່ເປັນຈີວອນກາລ ຖ້າເກັບໄວ້ເກີນກຳຫນົດນັ້ນ ຕ້ອງອາບັຕິນິສສັຄຄິຍປາຈິດຕີຍ໌

ເອື້ອງມຫາອມາຕຍ໌ຖວາຍຜ້າຈຳນຳພັນສາ ຈົບ

ເຊີງອັນຖະ :

໑ ໝາຍເຖິງ ວັນຂຶ້ນ ໑໕ ຄ່ຳ ເດືອນ ໑໑ ຊຶ່ງເປັນວັນທີ່ຄົບ ໓ ເດືອນ ນັບແຕ່ວັນເຂົ້າພັນສາ (ເບິ່ງຂໍ້ ໓໔໘ ໜ້າ ໑໓໘)

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໆ. ອັຈເຈກຈີວອນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໓໔໘] ຄຳວ່າ ເມື່ອຍັງເຫລືອອີກ ໑໐ ວັນ ຄື ອີກ ໑໐ ວັນຈະເຖິງວັນປວາຣນາ

ຄຳວ່າ ວັນເພັງເດືອນ ໑໑ ຊຶ່ງເປັນວັນຄົບໄຕຣມາສ ທ່ານກ່າວໝາຍເອົາວັນປວາຣນາເດືອນ ໑໑

ທີ່ຊື່ວ່າ ອັຈເຈກຈີວອນ ອທິບາຍວ່າ ຜູ້ປະສົງຄ໌ຈະໄປໃນກອງທັພ ປະສົງຄ໌ຈະໄປພັກແຮມຕ່າງຖິ່ນ ເຈັບໄຂ້ ສຕຣີມີຄັນພ໌ ຜູ້ບໍ່ມີສັດທາໄດ້ເກີດສັດທາຂຶ້ນຫລືຜູ້ບໍ່ເຫລື້ອມໃສໄດ້ເກີດຄວາມເຫລື້ອມໃສຂຶ້ນ ຖ້າເຂົາສົ່ງທູຕໄປເຖິງພິກສຸວ່າ "ນິມົນຕ໌ພຣະຄຸນເຈົ້າທັງຫລາຍມາເຖີດ ຂ້າພະເຈົ້າຈະຖວາຍຜ້າຈຳນຳພັນສາ" ຜ້າເຊັ່ນນີ້ຊື່ວ່າອັຈເຈກຈີວອນ

ຄຳວ່າ ຮູ້ຢູ່ວ່າເປັນອັຈເຈກຈີວອນເພິງຮັບໄວ້ ຄັນຮັບໄວ້ແລ້ວຄວຣເກັບໄວ້ໄດ້ຊົ່ວສມັຍທີ່ເປັນຈີວອນກາລ ຄື ພິກສຸເພິງທຳເຄື່ອງໝາຍວ່າ "ນີ້ຄືອັຈເຈກຈີວອນ" ແລ້ວເກັບໄວ້

ທີ່ຊື່ວ່າ ສມັຍທີ່ເປັນຈີວອນກາລ ຄື ເມື່ອຍັງບໍ່ໄດ້ກຣານກຖິນມີເວລາທ້າຍຣະດູຝົນ ໑ ເດືອນ ເມື່ອກຣານກຖິນແລ້ວ ຂຍາຍເວລາອອກໄປອີກເປັນ ໕ ເດືອນ

ຄຳວ່າ ຖ້າເກັບໄວ້ເກີນກຳໜົດນັ້ນ ຄື ເມື່ອບໍ່ກຣານກຖິນ ໃຫ້ເກີນວັນສຸດທ້າຍຣະດູຝົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ເມື່ອໄດ້ກຣານກຖິນແລ້ວເກັບໄວ້ເລີຍວັນກຖິນເດາະ ເປັນນິສສັຄຄີຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິງສລະອັຈເຈກຈີວອນທີ່ເປັນນິສສັຄຄີຍ໌ຢ່າງນີ້

ວິທີສລະອັຈເຈກຈີວອນທີ່ເປັນນິສສັຄຄີຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອັຈເຈກຈີວອນຜືນນີ້ ຜູ້ຂ້າເຮັດໃຫ້ເກີນສມັຍທີ່

ເປັນຈີວອນກາລ ເປັນນິສສັຄຄີຍ໌ ຜູ້ຂ້າສລະອັຈເຈກຈີວອນຜືນນີ້ແກ່ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນອັຈເຈກຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ອັຈເຈກຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິ່ງໃຫ້ອັຈເຈກຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອັຈເຈກຈີວອນຜືນນີ້ຜູ້ຂ້າເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ເປັນນິສສັຄຄີຍ໌ ຜູ້ຂ້າສລະອັຈເຈກຈີວອນຜືນນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ຄັນຮັບອາບັຕິແລ້ວ ເພິ່ງຄືນອັຈເຈກຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ອັຈເຈກຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄີຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິ່ງໃຫ້ອັຈເຈກຈີວອນຜືນນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິ່ງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ຜ້າອັຈເຈກຈີວອນຜືນນີ້ຜູ້ຂ້າເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ເປັນນິສສັຄຄີຍ໌ ຜູ້ຂ້າສລະອັຈເຈກຈີວອນຜືນນີ້ແກ່ທ່ານ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິ່ງຮັບອາບັຕິ ແລ້ວຄືນອັຈເຈກຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນອັຈເຈກຈີວອນຜືນນີ້ໃຫ້ແກ່ທ່ານ"

ບົທພາຊນີຍ໌

ນິສສັຄຄີຍປາຈິຕຕີຍ໌

[໖໕໐] ອັຈເຈກຈີວອນ ພິກສຸສໍາຄັນວ່າອັຈເຈກຈີວອນ ເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ອັຈເຈກຈີວອນ ພິກສຸບໍ່ແນ່ໃຈ ເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ອັຈເຈກຈີວອນ ພິກຂຸສຳຄັນວ່າບໍ່ແມ່ນອັຈເຈກຈີວອນ ເຮັດໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໗. ອັຈເຈກຈີວອນສິກຂາບົທ ອນາປັຕຕິວາຣ

ຈີວອນທີ່ຍັງບໍ່ໄດ້ອທິສຖານ ພິກຂຸສຳຄັນວ່າອທິສຖານແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ໄດ້ວິກັປ ພິກຂຸສຳຄັນວ່າວິກັປແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ໄດ້ສລະ ພິກຂຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ສູນຫາຍ ພິກຂຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຈິບຫາຍ ພິກຂຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຖືກໄຟໄໝ້ ພິກຂຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌
ຈີວອນທີ່ຍັງບໍ່ຖືກໂຈຣຍາດຊີງໄປ ພິກຂຸສຳຄັນວ່າຖືກໂຈຣຍາດຊີງໄປແລ້ວ ໃຫ້ເກີນສມັຍທີ່ເປັນຈີວອນກາລ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຕິກທຸກກຕ

ພິກຂຸຍັງບໍ່ໄດ້ສລະຈີວອນທີ່ເປັນນິສສັຄຄີຍ໌ ໃຊ້ສອຍ ຕ້ອງອາບັຕິທຸກກຕ
ຈີວອນທີ່ບໍ່ແມ່ນອັຈເຈກຈີວອນ ພິກຂຸສຳຄັນວ່າອັຈເຈກຈີວອນ ຕ້ອງອາບັຕິທຸກກຕ
ຈີວອນທີ່ບໍ່ແມ່ນອັຈເຈກຈີວອນ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ຈີວອນທີ່ບໍ່ແມ່ນອັຈເຈກຈີວອນ ພິກຂຸສຳຄັນວ່າບໍ່ແມ່ນອັຈເຈກຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໖໕໑] ໑. ພິກຂຸອທິສຖານພາຍໃນເວລາທີ່ກຳຫນົດ
໒. ພິກຂຸວິກັປໄວ້ພາຍໃນເວລາທີ່ກຳຫນົດ
໓. ພິກຂຸສລະໃຫ້ໄປພາຍໃນເວລາທີ່ກຳຫນົດ
໔. ພິກຂຸທີ່ມີຈີວອນສູນຫາຍພາຍໃນເວລາທີ່ກຳຫນົດ
໕. ພິກຂຸທີ່ມີຈີວອນຈິບຫາຍພາຍໃນເວລາທີ່ກຳຫນົດ

໖. ພິກສຸທີ່ມີຈີວອນຖືກໄຟໄຫມ້
໗. ພິກສຸທີ່ມີຈີວອນຖືກໂຈຣຍາດຊີງເອົາໄປ
໘. ພິກສຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະ
໙. ພິກສຸວິກົລຈິດ
໑໐. ພິກສຸຕົ້ນບັນຍັດ

ອັຈເຈກຈີວອນສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ໓. ປັຕຕວັຄ ໙. ສາສັງກສິກຂາບົທ ນິທານວັຕຖຸ

໓. ປັຕຕວັຄ

໙. ສາສັງກສິກຂາບົທ

ວ່າດ້ວຍເສນາສນະປ່າທີ່ຫນ້າຫວາດຣະແວງ

ເຣື້ອງພິກສຸຫລາຍຣູບ

[໖໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸທັງຫລາຍເມື່ອອອກພັນສາປວາຣນາແລ້ວຍັງຢູ່ໃນເສນາສນະປ່າ ກຸ່ມກັຕຕິກໂຈຣ໑ ເຂົ້າໃຈວ່າ "ພວກພິກສຸມີລາພ" ຈຶ່ງເຂົ້າປຸ້ນ ພວກພິກສຸໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕພິກສຸໃຫ້ເກັບຈີວອນໄວ້ໃນບໍຣິເວນບ້ານ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ຢູ່ໃນເສນາສນະປ່າເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານໄດ້"

ສມັຍນັ້ນ ພວກພິກສຸຊາບວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ພິກສຸຜູ້ຢູ່ໃນເສນາສນະປ່າເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານໄດ້" ຈຶ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນ

ບ້ານຢູ່ປຣາສເກີນ ໖ ຄືນ ຈີວອນເຫລົ່ານັ້ນສູນຫາຍແດ່ ຈິບຫາຍແດ່ ຖືກໄຟໄຫມ້ແດ່ ຖືກຫນູກັດແດ່ ພິກສຸເຫລົ່ານັ້ນມີຜ້າບໍ່ດີ ມີແຕ່ຈີວອນເກົ່າໆພິກສຸທັງຫລາຍກ່າວຢ່າງນີ້ວ່າ "ເຫຕຸໃດພວກທ່ານມີຜ້າບໍ່ດີ ມີແຕ່ຈີວອນເກົ່າໆ" ເທື່ອນັ້ນ ພິກສຸເຫລົ່ານັ້ນຈຶ່ງບອກເຣື້ອງນັ້ນໃຫ້ຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານ ແລ້ວຢູ່ປຣາສເກີນ ໖ ຄືນລະ" ຄັນພິກສຸທັງຫລາຍຕຳຫນິພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ກຕຸຕິກໂຈຣກາຕິ ກຕຸຕິກມາເສ ໂຈຣາ ຫມາຍເຖິງພວກໂຈຣເດືອນ ໑໒ (ວິ. ອ. ໒/໖໕໒/໒໕໗)

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານແລ້ວຢູ່ປຣາສເກີນ ໖ ຄືນ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານແລ້ວຢູ່ປຣາສເກີນ ໖ ຄືນ ພິກສຸທັງຫລາຍການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໖໕໓] ກໍ ພິກສຸຈຳພັນສາແລ້ວຫວັງຈະຢູ່ໃນເສນາສນະປ່າທີ່ຮູ້ກັນວ່າຫນ້າຫວາດຣະແວງ ມີພັຍຫນ້າຢ້ານເຊັ່ນນັ້ນ ຈົນເຖິງວັນເພັງເດືອນ ໑໒ ເພິງເກັບໄຕຣຈີວອນຜືນໃດຜືນນຶ່ງໄວ້ໃນບໍຣິເວນບ້ານໄດ້ ແລະພິກສຸນັ້ນຄວຣມີປັຈຈັຍບາງຢ່າງເພື່ອການຢູ່ປຣາສຈາກຈີວອນນັ້ນ ພິກສຸນັ້ນເພິງຢູ່ປາສຈາກຈີວອນນັ້ນໄດ້ ໖ ຄືນເປັນຢ່າງຫລາຍ ຖ້າຢູ່ປຣາສເກີນກວ່າກຳຫນົດນັ້ນ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌ ເວັ້ນໄວ້ແຕ່ພິກສຸຜູ້ໄດ້ຮັບສົມມຸດ

ເຣື້ອງພິກສຸຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

[໘໕໔] ຄຳວ່າ ກໍ. . . ຈຳພັນສາແລ້ວ ຄື ອອກພັນສາແລ້ວ

ຄຳວ່າ ອັນເພັງເດືອນ ໑໔ ພຣະຜູ້ມີພຣະພາຄຕຣັສວ່າຕຣິງກັບວັນປຸຣນມີດິຖີທີ ໔ ໃນກັຕຕິກາມາສ

ຄຳວ່າ ເສນາສນະປ່າ ຄວາມວ່າ ເສນາສນະທີ່ຊື່ວ່າປ່າ ມີຣະຍະ ໕໐໐ ຊົ່ວທນູ ເປັນຢ່າງຕ່ຳ

ທີ່ຊື່ວ່າ ຫນ້າຫວາດຣະແວງ ຄື ໃນອາຣາມ ອຸປຈາຣແຫ່ງອາຣາມ ປາກົດທີ່ຢູ່ ປາກົດທີ່ກິນ ປາກົດທີ່ຢືນ ປາກົດທີ່ນັ່ງ ປາກົດທີ່ນອນຂອງພວກໂຈຣ

ທີ່ຊື່ວ່າ ມີພັຍຫນ້າຢ້ານ ຄື ໃນອາຣາມ ອຸປຈາຣແຫ່ງອາຣາມ ປາກົດມີມນຸສຍ໌ຖືກພວກໂຈຣຂ້າ ປາກົດມີມນຸສຍ໌ຖືກປຸ້ນ ປາກົດມີມນຸສຍ໌ຖືກທຸບຕີ

ຄຳວ່າ ພິກສຸ. . . ຈະຢູ່ໃນເສນາສນະປ່າເຊັ່ນນັ້ນ ຄວາມວ່າ ພິກສຸຍັບຍັ້ງຢູ່ໃນເສນາສນະເຊັ່ນນັ້ນ

ຄຳວ່າ ຫວັງ ຄື ປຣາຖນາ

ຄຳວ່າ ໄຕຣຈີວອນຜືນໃດຜືນນຶ່ງ ໄດ້ແກ່ ສັງຂາຕີ ອຸຕຕຣາສົງຄ໌ຫລືອັນຕຣວາສກ

ຄຳວ່າ ເພິງເກັບໄວ້ໃນບໍຣິເວນບ້ານໄດ້ ຄື ເກັບໄວ້ໃນໂຄຈຣຄາມໂດຍຮອບ

ຄຳວ່າ ພິກສຸນັ້ນຄວຣມີປັຈຈັຍບາງຢ່າງເພື່ອກາຣຢູ່ປາສຈາກຈີວອນນັ້ນ ຄື ມີເຫຕຸຜົລຫລືກໍຣນີຍກິຈ

ຄຳວ່າ ພິກສຸເພິງຢູ່ປາສຈາກຈີວອນນັ້ນໄດ້ ໖ ຄືນເປັນຢ່າງຫລາຍ ຄວາມວ່າ ຢູ່ປຣາສໄດ້ພຽງ ໖ ຄືນເປັນຢ່າງຫລາຍ

ຄຳວ່າ ເວັ້ນໄວ້ແຕ່ພິກສຸຜູ້ໄດ້ຮັບສົມມຸດ ຄື ຍົກເວັ້ນພິກສຸທີ່ໄດ້ຮັບສົມມຸດ

ຄຳວ່າ ຖ້າຢູ່ປຣາສເກີນກວ່າກຳຫນົດນັ້ນ ຄວາມວ່າ ເມື່ອຣຸ່ງອຣຸນວັນທີ ໗ ມາເຖິງ ຈີວອນນັ້ນເປັນນິສສັຄຄິຍ໌ ຄືເປັນຂອງຈຳຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິງສລະຈີວອນທີ່ເປັນນິສສັຄຄິຍ໌ຢ່າງນີ້

ວິທີສລະຈີວອນທີ່ເປັນນິສສັຄຄິຍ໌

ສລະແກ່ສົງຂ໌

ພິກສຸຮູບນັ້ນເພິງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສເກີນ ໖ ຄືນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ສົງຂ໌” ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາວ່າ “ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງ

ຟັງຂ້າພະເຈົ້າ ຈີວອນຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍ ເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້”

ສລະແກ່ຄນະ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຫລາຍຮູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ “ທ່ານຜູ້ຈະເຣີນ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສເກີນ ຝ ຄືນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານທັງຫລາຍ” ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິງຮັບອາບັຕິ ເພິງຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ “ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ຈີວອນຜືນນີ້ຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວກໍເພິງໃຫ້ຈີວອນຜືນນີ້ແກ່ພິກສຸຊື່ນີ້”

ສລະແກ່ບຸຄຄົລ

ພິກສຸຮູບນັ້ນເພິງເຂົ້າໄປຫາພິກສຸຮູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວຢ່າງນີ້ວ່າ “ທ່ານຂນ້ອຍ ຈີວອນຜືນນີ້ຂອງຜູ້ຂ້າຢູ່ປຣາສເກີນ ຝ ຄືນ ເປັນນິສສັຄຄິຍ໌ ຜູ້ຂ້າສລະຈີວອນຜືນນີ້ແກ່ທ່ານ” ຄັນສລະແລ້ວເພິງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິງຮັບອາບັຕິແລ້ວຄືນຈີວອນທີ່ທ່ານສລະໃຫ້ດ້ວຍກ່າວວ່າ “ຜູ້ຂ້າຄືນຈີວອນຜືນນີ້ໃຫ້ແກ່ທ່ານ”

ບົທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[ຝ໕໕] ຈີວອນເກີນ ຝ ຄືນ ພິກສຸສຳຄັນວ່າເກີນ ຢູ່ປຣາສ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ

ຈີວອນເກີນ ຝ ຄືນ ພິກສຸບໍ່ແນ່ໃຈ ຢູ່ປຣາສ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ

ຈີວອນເກີນ ຝ ຄືນ ພິກສຸສຳຄັນວ່າຫນ້ອຍກວ່າ ຢູ່ປຣາສ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ

ຈີວອນຍັງບໍ່ໄດ້ຖອນ ພິກສຸສຳຄັນວ່າຖອນແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ໄດ້ສລະ ພິກສຸສຳຄັນວ່າສລະແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ສູນຫາຍ ພິກສຸສຳຄັນວ່າສູນຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ຈີວອນຍັງບໍ່ຈິບຫາຍ ພິກສຸສຳຄັນວ່າຈິບຫາຍແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌
ຈີວອນຍັງບໍ່ຖືກໄຟໄໝ້ ພິກສຸສຳຄັນວ່າຖືກໄຟໄໝ້ແລ້ວ ຕ້ອງອາບັຕິນິສສັຄຄິຍປາຈິຕຕິຍ໌
ຈີວອນຍັງບໍ່ຖືກຍາດຊິງເອົາໄປ ພິກສຸສຳຄັນວ່າຖືກໂຈຣຍາດຊິງເອົາໄປແລ້ວ ຢູ່ປຣາສູ ຕ້ອງອາບັຕິ
ນິສສັຄຄິຍປາຈິຕຕິຍ໌ ເວັ້ນໄວ້ແຕ່ພິກສຸໄດ້ສົມມຸດ

ຕິກທຸກກຕ

ພິກສຸບໍ່ໄດ້ສລະຈີວອນເປັນນິສສັຄຄິຍ໌ ໃຊ້ສອຍ ຕ້ອງອາບັຕິທຸກກຕ
ຈີວອນຫນ້ອຍກວ່າ ໖ ຣາຕຣີ ພິກສຸສຳຄັນວ່າເກີນແລ້ວ ຕ້ອງອາບັຕິທຸກກຕ
ຈີວອນຫນ້ອຍກວ່າ ໖ ຣາຕຣີ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ຈີວອນຫນ້ອຍກວ່າ ໖ ຣາຕຣີ ພິກສຸສຳຄັນວ່າຫນ້ອຍກວ່າ ໃຊ້ສອຍ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໖໕໖] ໑. ພິກສຸຢູ່ປຣາສູ ໖ ຣາຕຣີ
໒. ພິກສຸຢູ່ປຣາສູຫນ້ອຍກວ່າ ໖ ຣາຕຣີ
໓. ພິກສຸຢູ່ປຣາສູ ໖ ຣາຕຣີ ແລ້ວກັບມາຄາມສີມາແລ້ວຈາກໄປ
໔. ພິກສຸຖອນຜ້າພາຍໃນ ໖ ຣາຕຣີ
໕. ພິກສຸສລະໃຫ້ພາຍໃນ ໖ ຣາຕຣີ
໖. ພິກສຸທີ່ມີຈີວອນສູນຫາຍພາຍໃນ ໖ ຣາຕຣີ
໗. ພິກສຸທີ່ມີຈີວອນຈິບຫາຍພາຍໃນ ໖ ຣາຕຣີ
໘. ພິກສຸທີ່ມີຈີວອນຖືກໄຟໄໝ້ພາຍໃນ ໖ ຣາຕຣີ
໙. ພິກສຸທີ່ມີຈີວອນຖືກໂຈຣຍາດຊິງເອົາໄປພາຍໃນ ໖ ຣາຕຣີ
໑໐. ພິກສຸຜູ້ມີຈີວອນຖືກຖືເອົາໄປໂດຍວິສາສະພາຍໃນ ໖ ຣາຕຣີ
໑໑. ພິກສຸໄດ້ສົມມຸດ
໑໒. ພິກສຸວິກົລຈິຕ
໑໓. ພິກສຸຕົ້ນບັນຍັດ

ສາສັງກສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄີຍກັນທ໌] ໓. ປັຕຕວັຄ ໑໐. ປຣິນຕສິກຂາບົທ ນິທານ ວັຕຖຸ

໓. ປັຕຕວັຄ

໑໐. ປຣິນຕສິກຂາບົທ

ວ່າດ້ວຍການນ້ອມລາພ

ເຣື່ອງພຣະສັພພັຄຄີຍ໌

[໒໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ສມາຄົມ໑ ນຶ່ງໃນກຸງສາວັຕຖີຕຽມພັຕຕາຫານພ້ອມຈີວອນໄວ້ຖວາຍສົງຂ໌ດ້ວຍຕັ້ງໃຈວ່າ "ພວກເຮົາຈັກນິມົນຕ໌ພິກສຸໃຫ້ສັນແລ້ວໃຫ້ຄອງຈີວອນ" ຕໍ່ມາ ພວກພິກສຸສັພພັຄຄີຍ໌ໄດ້ເຂົ້າໄປຫາສມາຄົມນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບສມາຄົມນັ້ນດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດຖວາຍຈີວອນແກ່ພວກອາຕມາ" ສມາຄົມນັ້ນກ່າວວ່າ "ທ່ານຜູ້ຈະເຣີນ ພວກເຮົາຈະບໍ່ຖວາຍ ພວກເຮົາຈັດພິກສາຫານພ້ອມກັບຈີວອນໄວ້ຖວາຍສົງຂ໌ເປັນປະຈຳທຸກປີ" ພວກພິກສຸສັພພັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ທາຍົກຂອງສົງຂ໌ມີຫລາຍຄົນ ພັຕຕາຫານຂອງສົງຂ໌ກໍມີຈຳນວນຫລາຍ ພວກອາຕມາອາສັຍພວກທ່ານ ເຫັນແກ່ພວກທ່ານຈຶ່ງຢູ່ທີ່ນີ້ ຖ້າພວກທ່ານບໍ່ຖວາຍແກ່ພວກອາຕມາ ຄາວນີ້ ໃຜລະຈະຖວາຍແກ່ພວກອາຕມາ ພວກທ່ານໂປຣດຖວາຍຈີວອນແກ່ພວກອາຕມາເຖີດ"

ລຳດັບນັ້ນ ເມື່ອຖືກພວກພິກສຸສັພພັຄຄີຍ໌ລົ້າໄລ ສມາຄົມນັ້ນຈຶ່ງຖວາຍຈີວອນຕາມທີ່ຈັດໄວ້ແລ້ວແກ່ພວກພິກສຸສັພພັຄຄີຍ໌ແລ້ວປະເຄນສົງຂ໌ສະເພາະພັຕຕາຫານ ພວກພິກສຸທີ່ຊາບວ່າ "ສມາຄົມຈັດອາຫານແລະຈີວອນໄວ້ຖວາຍສົງຂ໌" ແຕ່ບໍ່ຮູ້ວ່າ "ພວກເຂົາຖວາຍພວກພິກສຸສັພພັຄຄີຍ໌ໄປແລ້ວ" ຈຶ່ງກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຈົ່ງຖວາຍຈີວອນແກ່ສົງຂ໌"

ເຊີງອັນຖະ :

໑ ປູຄສີສາຕິ ສມູຫສຸສ, ຫມຸມຄນສຸສ ຫມູ່ຊົນ ຄືຄນະຜູ້ປະຕິບັດທັມ ໝາຍເຖິງສມາຄົມ (ວິ. ອ. ໒/໒໕໗/໒໔໙)

ສມາຄົມນັ້ນກ່າວວ່າ "ທ່ານຜູ້ຈະເຣີນ ບໍ່ມີຈີວອນຕາມທີ່ເຄີຍຈັດໄວ້ ພຣະຄຸນເຈົ້າສັພພັຄຄີຍ໌ນ້ອມໄປເພື່ອຕົນແລ້ວ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຮູ້ຢູ່ຈຶ່ງນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນລະ" ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ ນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ຈຶ່ງນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໘໕໗] ກໍ ພິກສຸໃດຮູ້ຢູ່ ນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຄ໌ມາເພື່ອຕົນ ຕ້ອງອາບັຕິນິສສັຄຄີຍປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໘໕໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ນິອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ ຫລືຄົນນັ້ນບອກທ່ານ

ທີ່ຊື່ວ່າ ເປັນຂອງຈະຖວາຍສົງຄ໌ ໄດ້ແກ່ ເປັນຂອງທີ່ເຂົາຖວາຍຫລືບໍຣິຈາຄແລ້ວແກ່ສົງຄ໌

ທີ່ຊື່ວ່າ ລາພ ໄດ້ແກ່ ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ໂດຍທີ່ສຸດ

ຈີນເມື່ອກ້ອນຈຸຣນະ ໄມ້ຊໍາຣະແຂ້ວ ຫລືດ້າຍຊາຍຜ້າ

ທີ່ຊື່ວ່າ ນ້ອມໄວ້ ຄື ເຂົາເປັ່ງອາຈາວ່າ "ເຮົາຈະຖວາຍ ຈະກະທໍາ" ພິກສຸນ້ອມມາເພື່ອຕົນ ຕ້ອງອາບັຕິທຸກກາຕເພາະພຍາຍາມ ເປັນນິສສັຄຄິຍ໌ເພາະໄດ້ມາ ຄືເປັນຂອງຈໍາຕ້ອງສລະແກ່ສົງຂ໌ ແກ່ຄນະຫລືແກ່ບຸຄຄົລ

ພິກສຸທັງຫລາຍ ພິກສຸເພິ່ງສລະລາພທີ່ເປັນນິສສັຄຄິຍ໌ຢ່າງນີ້

ວິທີສລະລາພທີ່ເປັນນິສສັຄຄິຍ໌

ສລະແກ່ສົງຂ໌

ພິກສຸຣູບນັ້ນເພິ່ງເຂົ້າໄປຫາສົງຂ໌ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ລາພນີ້ເຂົານ້ອມໄວ້ເປັນຂອງຈະຖວາຍສົງຂ໌ ຜູ້ຂ້າຮູ້ຢູ່ ນ້ອມມາເພື່ອຕົນ ເປັນນິສສັຄຄິຍ໌ ຜູ້ຂ້າສລະລາພນີ້ແກ່ສົງຂ໌" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນລາພທີ່ທ່ານສລະໃຫ້ດ້ວຍຍັຕຕິກັມວາຈາ ວ່າ "ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ລາພນີ້ຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ສົງຂ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິ່ງໃຫ້ລາພນີ້ແກ່ພິກສຸຊື່ນີ້"

ສລະແກ່ຄນະ

ພິກສຸຣູບນັ້ນເພິ່ງເຂົ້າໄປຫາພິກສຸຫລາຍຣູບ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ຂາບຕີນພິກສຸຜູ້ແກ່ພັນສາ ນັ່ງຄຸເຂົ່າປະນົມມື ກ່າວຢ່າງນີ້ວ່າ "ທ່ານຜູ້ຈະເຣີນ ລາພນີ້ເຂົານ້ອມໄວ້ເປັນຂອງຈະຖວາຍສົງຂ໌ ຜູ້ຂ້າຮູ້ຢູ່ ນ້ອມມາເພື່ອຕົນ ເປັນນິສສັຄຄິຍ໌ ຜູ້ຂ້າສລະລາພນີ້ແກ່ທ່ານທັງຫລາຍ" ຄັນສລະແລ້ວເພິ່ງສະແດງອາບັຕິ ພິກສຸຜູ້ສລາດສາມາດເພິ່ງຮັບອາບັຕິ ເພິ່ງຄືນລາພທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ທ່ານທັງຫລາຍຈົ່ງຟັງຂ້າພະເຈົ້າ ລາພຂອງພິກສຸຊື່ນີ້ເປັນນິສສັຄຄິຍ໌ ທ່ານສລະແກ່ທ່ານທັງຫລາຍ ຖ້າທ່ານທັງຫລາຍພ້ອມກັນແລ້ວເພິ່ງໃຫ້ລາພນີ້ແກ່ພິກສຸຊື່ນີ້"

ສລະແກ່ບຸຄຄົລ

ພິກສຸຣູບນັ້ນເພິ່ງເຂົ້າໄປຫາພິກສຸຣູບນຶ່ງ ຫົ່ມອຸຕຕຣາສົງຄ໌ບ່ຽງບ່າຂ້າງນຶ່ງ ນັ່ງຢ່ອງຢໍ້ປະນົມມື ກ່າວວ່າ "ທ່ານຂນ້ອຍ ລາພນີ້ເຂົານ້ອມໄວ້ເປັນຂອງຈະຖວາຍສົງຂ໌ ຜູ້ຂ້າຮູ້ຢູ່ ນ້ອມມາເພື່ອຕົນ ເປັນນິສສັຄຄິຍ໌ ຜູ້ຂ້າສລະລາພນີ້ແກ່ທ່ານ" ຄັນສລະແລ້ວ ເພິ່ງສະແດງອາບັຕິ ພິກສຸຜູ້ຮັບສລະນັ້ນເພິ່ງຮັບອາບັຕິແລ້ວຄືນລາພທີ່ທ່ານສລະໃຫ້ດ້ວຍກ່າວວ່າ "ຜູ້ຂ້າຄືນລາພນີ້ໃຫ້ແກ່ທ່ານ"

ບິທພາຊນີຍ໌

ນິສສັຄຄິຍປາຈິຕຕີຍ໌

[໕໕໐] ລາພທີ່ເຂົານ້ອມໄວ້ແລ້ວ ພິກສຸສຳຄັນວ່າເຂົານ້ອມໄວ້ແລ້ວ ນ້ອມມາເພື່ອຕົນ ຕ້ອງອາບັຕິນິສສັຄຄິຍປາຈິຕຕີຍ໌

ທຸກກຕ

ລາພທີ່ເຂົານ້ອມໄວ້ແລ້ວ ພິກສຸບໍ່ແນ່ໃຈ ນ້ອມມາເພື່ອຕົນ ຕ້ອງອາບັຕິທຸກກຕ

ລາພທີ່ເຂົານ້ອມໄວ້ແລ້ວ ພິກສຸສຳຄັນວ່າເຂົາບໍ່ໄດ້ນ້ອມໄວ້ ນ້ອມມາເພື່ອຕົນ ບໍ່ຕ້ອງອາບັຕິ

ລາພທີ່ເຂົານ້ອມໄວ້ເພື່ອສົງຄ໌ ພິກສຸນ້ອມມາເພື່ອສົງຄ໌ອື່ນ ຫລືເພື່ອເຈດີຍ໌ ຕ້ອງອາບັຕິທຸກກຕ

ລາພທີ່ເຂົານ້ອມໄວ້ເພື່ອເຈດີຍ໌ ພິກສຸນ້ອມມາເພື່ອເຈດີຍ໌ອື່ນ ເພື່ອສົງຄ໌ ເພື່ອຄນະຫລືເພື່ອບຸຄຄົລ ຕ້ອງອາບັຕິທຸກກຕ

ລາພທີ່ເຂົານ້ອມໄວ້ເພື່ອບຸຄຄົລ ພິກສຸນ້ອມມາເພື່ອບຸຄຄົລອື່ນ ເພື່ອສົງຄ໌ ເພື່ອຄນະຫລືເພື່ອເຈດີຍ໌ຕ້ອງອາບັຕິທຸກກຕ

ລາພທີ່ເຂົາບໍ່ໄດ້ນ້ອມໄວ້ ພິກສຸສຳຄັນວ່າເຂົານ້ອມໄວ້ ຕ້ອງອາບັຕິທຸກກຕ

ລາພທີ່ເຂົາບໍ່ໄດ້ນ້ອມໄວ້ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ລາພທີ່ເຂົາບໍ່ໄດ້ນ້ອມໄວ້ ພິກສຸສຳຄັນວ່າເຂົາບໍ່ໄດ້ນ້ອມໄວ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໑] ໑. ພິກສຸຖືກທາຍົກຖາມວ່າ "ຈະຖວາຍທີ່ໃດ" ຈຶ່ງແນະນຳວ່າ "ໄທຍທັມຂອງພວກທ່ານເພິງໄດ້ຮັບກາຣໃຊ້ສອຍ ໄດ້ຮັບກາຣປຕິສັງຂຣນ໌ ຫລືຢູ່ໄດ້ດົນໃນທີ່ໃດ ຫລືທ່ານມີຈິຕເຫລື້ອມໃສໃນທີ່ໃດ ຈົ່ງຖວາຍໃນທີ່ນັ້ນເຖີດ"

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ປຣິນຕສິກຂາບົທທີ ໑໐ ຈົບ

ປັຕຕວັຄທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໔. ນິສສັຄຄິຍກັນຫ໌] ບົທສຣຸປ

ຮວມສິກຂາບົທທີ່ມີໃນປັຕຕວັຄ ຄື

ປັຕຕວັຄມີ ໑໐ ສິກຂາບົທ ຄື

໑. ປັຕຕສິກຂາບົທ ວ່າດ້ວຍບາຕຣ

໒. ອູນປັປຈພັນທນສິກຂາບົທ ວ່າດ້ວຍບາຕຣມີຮອຍສ້ອມຫນ້ອຍກວ່າ ໕ ບ່ອນ

໓. ເພສັຊຊສິກຂາບົທ ວ່າດ້ວຍເພສັຊ

໔. ວັສສິກສາຕິກສິກຂາບົທ ວ່າດ້ວຍຜ້າອາບນ້ຳຝົນ

໕. ຈີວອນອັຈສິນທນສິກຂາບົທ ວ່າດ້ວຍການໃຫ້ຈີວອນແລ້ວຍາດຊິງເອົາຄືນ

໖. ສຸຕຕວິຢັຕຕິສິກຂາບົທ ວ່າດ້ວຍການອອກປາກຂໍດ້າຍ

໗. ມຫາເປສກາຣສິກຂາບົທ ວ່າດ້ວຍການສັ່ງຊ່າງຕ່ຳຫູກທໍຈີວອນ

໘. ອັຈເຈກຈີວອນສິກຂາບົທ ວ່າດ້ວຍອັຈເຈກຈີວອນ

໙. ສາສັງກສິກຂາບົທ ວ່າດ້ວຍເສນາສນະປ່າທີ່ຫນ້າຫວາດຣະແວງ

໑໐. ປຣິນຕສິກຂາບົທ ວ່າດ້ວຍການນ້ອມລາພ

ບົທສຣຸບ

[໖໖໔] ທ່ານທັງຫລາຍ ທັມຄືນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທ ຂ້າພະເຈົ້າ ຍົກຂຶ້ນສະແດງ ແລ້ວ

ຂ້າພະເຈົ້າຂໍຖາມທ່ານທັງຫລາຍໃນນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທເຫລົ່ານັ້ນວ່າທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

ທ່ານທັງຫລາຍບໍຣິສຸດທ໌ແລ້ວໃນນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ນິສສັຄຄິຍກັນທ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໑. ມຸສາວາທສິກຂາບົທ ນິທານວັຕຖຸ

໕. ປາຈິຕຕິຍກັນຫ໌

ທ່ານທັງຫລາຍ ທັມຄືປາຈິຕຕີຍ໌ ໙໒ ສິກຂາບົທເຫລົ່ານີ້ ມາເຖິງວາຣະທີ່ຈະຍົກຂຶ້ນ ສະແດງເປັນຂໍ້ໆຕາມລຳດັບ

໑. ມຸສາວາທວັຄ

ຫມວດວ່າດ້ວຍການກ່າວເທັຈ

໑. ມຸສາວາທສິກຂາບົທ

ວ່າດ້ວຍການກ່າວເທັຈ

ເຣື້ອງພຣະຫັຕຖກສັກຍບຸຕຣ

[໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກ ເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ພຣະຫັຕຖກສັກຍບຸຕຣເປັນນັກໂຕ້ວາທະ໑ ເມື່ອທ່ານເຈຣຈາກັບພວກເດັຽຣະຖີຍ໌ ປຕິເສທແລ້ວຮັບ ຮັບແລ້ວປຕິເສທ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນ ພວກເດັຽຣະຖີຍ໌ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຫັຕຖກສັກຍບຸຕຣ ເມື່ອເຈຣຈາກັບພວກເຮົາ ຈຶ່ງປຕິເສທແລ້ວຮັບ ຮັບແລ້ວປຕິເສທ ເອົາເຣື້ອງນຶ່ງມາກ່າວກົບເກື່ອນອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດຫມາຍແລ້ວເຮັດໃຫ້ຄາດເຄື່ອນລະ" ພວກພິກສຸໄດ້ຍິນພວກເດັຽຣະຖີຍ໌ຕຳຫນິ ປະນາມ ໂພນທະນາ ຈຶ່ງເຂົ້າໄປຫາພຣະຫັຕຖກສັກຍບຸຕຣເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບພຣະຫັຕຖກສັກຍບຸຕຣດັ່ງນີ້ວ່າ "ທ່ານຫັຕຖກະ ໄດ້ຊາບວ່າ ເມື່ອທ່ານເຈຣຈາກັບພວກເດັຽຣະຖີຍ໌ ປຕິເສທແລ້ວຮັບ ຮັບແລ້ວ

ເຊີງອັນຖະ :

໑ ວາທກ຺ຂິຕ຺ຕ ທີ່ແປວ່າ "ເປັນນັກໂຕ້ວາທະ" ນັ້ນ ຕາມອທິບາຍແຫ່ງອັນຖະກຖາວ່າ "ວາທໍ ກຣິສ຺ສາມີ"ຕິ ເອວໍ ປຣິວິຕກ຺ກິເຕນ ວາເທນ ປຣວາທີສມ຺ຕີກໍ ຂິຕ຺ໂຕ ປກ຺ຂິຕ຺ໂຕ, ປຫິໂຕ ເປສິໂຕຕິ ອຕ຺ໂຖ ວາທມ຺ຫິ ວາ ສເກນ ຈິຕ຺ເຕນ ຂິຕ຺ໂຕ, ຍຕ຺ຣ ຍຕ຺ຣ ວາໂທ ຕຕ຺ຣ ຕຕ຺ເຣວ ສນ຺ທິສ຺ສຕີຕິປິ ວາທກ຺ຂິຕ຺ໂຕ ຖືກວາທະທີ່ກຳຫນົດໄວ້ວ່າ ເຮົາຈັກໂຕ້ວາທະແກວ່ງໄປ ໄສໄປ ສົ່ງ

ໄປຍັງສຳ ນັກປຣອາທິ ອີກປະການໜຶ່ງ ຄືຖືກຈິດຂອງຕົນສົ່ງໄປໃນສຖານທີ່ໂຕ້ອາທະ ຄືໃນທີ່ໃດໆ ມີການໂຕ້ອາທະກັນ ຍ່ອມໄປປາກົດຕົວໃນທີ່ນັ້ນໆ(ວິ. ອ. ໔/໑/໔໕໖)

ປຕິເສທ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດໝາຍແລ້ວເຮັດໃຫ້ ຄາດເຄື່ອນ ແມ່ນແທ້ບໍ"ພຣະຫັຕຖກສາກຍບຸຕຣຕອບວ່າ "ເຮົາຕ້ອງເອົາຊນະພວກເດັຽຣະຖີຍ໌ເຫລົ່າ ນັ້ນດ້ວຍວິທີໃດວິທີນຶ່ງ ພວກເຮົາບໍ່ຄວຣໃຫ້ຊັຍຊນະແກ່ພວກເດັຽຣະຖີຍ໌ເຫລົ່ານັ້ນ" ບັນດາພິກສຸ ຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຫັຕຖກສາກຍບຸຕຣເມື່ອ ເຈຣຈາກັບພວກເດັຽຣະຖີຍ໌ ຈຶ່ງປຕິເສທແລ້ວຮັບ ຮັບແລ້ວປຕິເສທ ເອົາເຣື້ອງນຶ່ງມາກ່າວປິດບັງ ອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດໝາຍແລ້ວເຮັດໃຫ້ຄາດເຄື່ອນລະ" ຄັນພິກສຸເຫລົ່ານັ້ນ ຕຳໜິພຣະຫັຕຖກສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫດ ຊົງສອບຖາມພຣະ ຫັຕຖກສາກຍບຸຕຣວ່າ "ຫັຕຖກະ ຊາບວ່າ ເມື່ອທ່ານເຈຣຈາກັບພວກເດັຽຣະຖີຍ໌ ປຕິເສທແລ້ວຮັບ ຮັບແລ້ວປຕິເສທ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈທັງທີ່ຮູ້ ນັດໝາຍແລ້ວເຮັດ ໃຫ້ຄາດເຄື່ອນ ແມ່ນແທ້ບໍ" ພຣະຫັຕຖກສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ໂມຄບຸຣຸສ ຈັ່ງໃດທ່ານ ເມື່ອເຈຣຈາກັບພວກເດັຽຣະ ຖີຍ໌ ຈຶ່ງປຕິເສທແລ້ວຮັບ ຮັບແລ້ວປຕິເສທ ເອົາເຣື້ອງນຶ່ງມາກ່າວປິດບັງອີກເຣື້ອງນຶ່ງ ກ່າວເທັຈ ທັງທີ່ຮູ້ ນັດໝາຍແລ້ວເຮັດໃຫ້ຄາດເຄື່ອນລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວເທັຈທັງທີ່ຮູ້

ເຣື້ອງພຣະຫັຕຖກສາກຍບຸຕຣ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໑. ມຸສາວາທສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໓] ທີ່ຊື່ວ່າ ກ່າວເທັຈທັງທີ່ຮູ້ ໄດ້ແກ່ ວາຈາ ສຽງທີ່ເປັ່ງອອກ ຄຳເປັນທາງວຈີເພທ ເຈຕນາທີ່ໃຫ້ຮູ້ທາງວາຈາຂອງຜູ້ມຸ່ງຈະກ່າວໃຫ້ຄາດຄວາມແມ່ນແທ້ໄດ້ແກ່ ຖ້ອຍຄຳຂອງອນາຣຍຊົນ ໘ ຢ່າງ ຄື

໑. ບໍ່ໄດ້ເຫັນ ແຕ່ກ່າວວ່າ ຂ້າພະເຈົ້າໄດ້ເຫັນ

໒. ບໍ່ໄດ້ຍິນ ແຕ່ກ່າວວ່າ ຂ້າພະເຈົ້າໄດ້ຍິນ

໓. ບໍ່ຊາບ ແຕ່ກ່າວວ່າ ຂ້າພະເຈົ້າຊາບ

໔. ບໍ່ຮູ້ ແຕ່ກ່າວວ່າ ຂ້າພະເຈົ້າຮູ້

໕. ໄດ້ເຫັນ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ໄດ້ເຫັນ

໖. ໄດ້ຍິນ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ໄດ້ຍິນ

໗. ຊາບ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ຊາບ

໘. ຮູ້ ແຕ່ກ່າວວ່າ ຂ້າພະເຈົ້າບໍ່ຮູ້

ບົທພາຊນີຍ໌

໑. ທີ່ຊື່ວ່າ ບໍ່ໄດ້ເຫັນ ຄື ບໍ່ໄດ້ເຫັນດ້ວຍຕາ

໒. ທີ່ຊື່ວ່າ ບໍ່ໄດ້ຍິນ ຄື ບໍ່ໄດ້ຍິນດ້ວຍຫູ

໓. ທີ່ຊື່ວ່າ ບໍ່ຮູ້ ຄື ບໍ່ໄດ້ສູດດົມດ້ວຍດັງ ບໍ່ໄດ້ລີ້ມດ້ວຍລີ້ນ ບໍ່ໄດ້ສັມຜັສດ້ວຍກາຍ

໔. ທີ່ຊື່ວ່າ ບໍ່ຮູ້ ຄື ບໍ່ຮູ້ດ້ວຍໃຈ

໕. ທີ່ຊື່ວ່າ ໄດ້ເຫັນ ຄື ໄດ້ເຫັນດ້ວຍຕາ

໖. ທີ່ຊື່ວ່າ ໄດ້ຍິນ ຄື ໄດ້ຍິນດ້ວຍຫູ

໗. ທີ່ຊື່ວ່າ ຊາບ ຄື ໄດ້ສູດດົມດ້ວຍດັງ ໄດ້ລີ້ມດ້ວຍລີ້ນ ໄດ້ສັມຜັສດ້ວຍກາຍ

໘. ທີ່ຊື່ວ່າ ຮູ້ ຄື ຮູ້ດ້ວຍໃຈ

ອາກາຣກ່າວເທັຈທັງທີ່ຮູ້

໑. ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ

[໔] ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍ່ຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍ່ຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໔ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍ່ຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍ່ຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໕ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍ່ຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍ່ຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໖ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍ່ຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍ່ຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ ຕ້ອງອາບັຕິປາຈິຕຕິຍ໌

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍ່ຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍ່ຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕິຍ໌

໒. ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ

[໕] ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

໓. ບໍ່ຊາບ ແຕ່ກ່າວວ່າຊາບ

ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

໔. ບໍ່ຮູ້ ແຕ່ກ່າວວ່າຮູ້

ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌

ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນແລະໄດ້ຍິນ

[໖] ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນແລະຊາບ

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນແລະຮູ້

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນ ແລະຊາບ

ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນ ແລະຮູ້
ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ໄດ້ເຫັນ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນ ຊາບ ແລະຮູ້
ບໍ່ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ຊາບແລ້ວແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນແລະຊາບ
ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນແລະຮູ້
ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ
ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນແລະໄດ້ເຫັນ
ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ ຊາບ ແລະຮູ້
ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ ຊາບແລ້ວ ແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ ຊາບ ແລະໄດ້ເຫັນ
ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ ຊາບແລ້ວ ແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ໄດ້ຍິນ ແຕ່ກ່າວວ່າໄດ້ຍິນ ຊາບ ຮູ້ ແລະໄດ້ເຫັນ
ບໍ່ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນ ຊາບແລ້ວ ຮູ້ແລ້ວ ແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ฯລฯ

ບໍ່ຮູ້ ແຕ່ກ່າວວ່າຊາບແລະຮູ້
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວແລະຮູ້ແລ້ວ” ດ້ວຍອາກາຣ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບແລະໄດ້ເຫັນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວແລະໄດ້ເຫັນແລ້ວ” ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບແລະໄດ້ຍິນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວແລະໄດ້ຍິນແລ້ວ” ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບ ຮູ້ ແລະໄດ້ເຫັນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວ ແລະໄດ້ເຫັນແລ້ວ” ດ້ວຍອາກາຣ ໓ ຢ່າງ ຯລຯ ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບ ຮູ້ ແລະໄດ້ຍິນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວ ແລະໄດ້ຍິນແລ້ວ” ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຊາບ ຮູ້ ເຫັນ ແລະໄດ້ຍິນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວ ໄດ້ເຫັນແລ້ວ ແລະໄດ້ຍິນແລ້ວ” ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ແລະໄດ້ເຫັນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຮູ້ແລ້ວແລະໄດ້ເຫັນແລ້ວ” ດ້ວຍອາກາຣ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ແລະໄດ້ຍິນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ແລະຊາບ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ ໄດ້ເຫັນ ແລະໄດ້ຍິນ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ ໄດ້ເຫັນ ແລະຊາບ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບໍ່ຮູ້ ແຕ່ກ່າວວ່າຮູ້ ໄດ້ເຫັນ ໄດ້ຍິນແລະຊາບ
ບໍ່ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

໕. ໄດ້ເຫັນ ແຕ່ກ່າວວ່າບໍ່ໄດ້ເຫັນ

[໗] ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌
ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າບໍ່ໄດ້ເຫັນແລ້ວ" ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

໖. ໄດ້ຍິນ ແຕ່ກ່າວວ່າບໍ່ໄດ້ຍິນ

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າບໍ່ໄດ້ຍິນແລ້ວ” ດ້ວຍອາການ ໓ ຢ່າງ . . . ຕ້ອງອາ ບັຕິປາຈິຕຕີຍ໌ ຯລຯ

໗. ຊາບ ແຕ່ກ່າວວ່າບໍ່ຮູ້

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າບໍ່ຮູ້ແລ້ວ” ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

໘. ຮູ້ ແຕ່ກ່າວວ່າບໍ່ຮູ້

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າບໍ່ຮູ້ແລ້ວ” ດ້ວຍອາການ ໓ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າບໍ່ຮູ້ແລ້ວ” ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື

(໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໒) ກຳລັງກ່າວກໍຮູ້ວ່າກຳລັງກ່າວເທັຈ (໓) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອຳພາງຄວາມເຫັນ (໕) ອຳພາງຄວາມເຫັນຊອບ (໖) ອຳພາງຄວາມພໍໃຈ (໗) ອຳພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕີຍ໌

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນ

[໘] ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າໄດ້ຍິນແລ້ວ” ດ້ວຍອາການ ໓ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າຊາບ

ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຊາບແລ້ວ” ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າຮູ້

ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ “ຂ້າພະເຈົ້າຮູ້ແລ້ວ” ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນແລະຊາບ

ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນແລະຮູ້

ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ເຫັນ ແຕ່ກ່າວວ່າໄດ້ຍິນ ຊາບແລະຮູ້

ໄດ້ເຫັນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ຊາບແລ້ວແລະຮູ້ແລ້ວ ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບ

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຮູ້

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າໄດ້ເຫັນ

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບແລະຮູ້

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບແລະໄດ້ເຫັນ

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ ແຕ່ກ່າວວ່າຊາບ ຮູ້ ແລະໄດ້ເຫັນ

ໄດ້ຍິນ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ ຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າໄດ້ເຫັນ

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າໄດ້ຍິນ

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້ແລະໄດ້ເຫັນ

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້ແລະໄດ້ຍິນ

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໓ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ຊາບ ແຕ່ກ່າວວ່າຮູ້ ໄດ້ເຫັນ ແລະໄດ້ຍິນ

ຊາບ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນ

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ຍິນ

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ຍິນແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຮູ້ ແຕ່ກ່າວວ່າຊາບ

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຊາບແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນແລະໄດ້ຍິນ

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນແລະຊາບ

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະຊາບແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ຮູ້ ແຕ່ກ່າວວ່າໄດ້ເຫັນ ໄດ້ຍິນແລະຊາບ

ຮູ້ ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວແລະຊາບແລ້ວ" ດ້ວຍອາການ ໕ ຢ່າງ . . . ຕ້ອງອາບັຕິປາຈິຕຕິຍ໌ ຯລຯ

ໄດ້ເຫັນ - ແຕ່ບໍ່ແນ່ໃຈ

[໙] ພິກສຸບໍ່ແນ່ໃຈສິ່ງທີ່ໄດ້ເຫັນ ກໍາຫນົດສິ່ງທີ່ໄດ້ເຫັນບໍ່ໄດ້ ຈໍາສິ່ງທີ່ໄດ້ເຫັນບໍ່ໄດ້ ຫລົງລືມ

ສິ່ງທີ່ໄດ້ເຫັນ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວແລະໄດ້ຍິນແລ້ວ" ດ້ວຍອາການ ៣ ຢ່າງ . . . ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ພິກສຸກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າໄດ້ເຫັນແລ້ວ ໄດ້ຍິນແລ້ວ ຊາບແລ້ວ ແລະຮູ້ແລ້ວ" ຕ້ອງອາ ບັຕິປາຈິຕຕີຍ໌ ຯລຯ

ໄດ້ຍິນ - ແຕ່ບໍ່ແນ່ໃຈ

ພິກສຸບໍ່ແນ່ໃຈສິ່ງທີ່ໄດ້ຍິນ ກໍາຫນົດສິ່ງທີ່ໄດ້ຍິນບໍ່ໄດ້ ຈໍາສິ່ງທີ່ໄດ້ຍິນບໍ່ໄດ້ ຫລົງລືມສິ່ງທີ່ໄດ້ຍິນ ຯລຯ

ຊາບ - ແຕ່ບໍ່ແນ່ໃຈ

ພິກສຸບໍ່ແນ່ໃຈສິ່ງທີ່ໄດ້ຊາບ ກໍາຫນົດສິ່ງທີ່ໄດ້ຊາບບໍ່ໄດ້ ຈໍາສິ່ງທີ່ໄດ້ຊາບບໍ່ໄດ້ຫລົງລືມສິ່ງທີ່ໄດ້ຊາບ ຯລຯ

ຮູ້ - ແຕ່ບໍ່ແນ່ໃຈ ເປັນຕົ້ນ

ພິກສຸບໍ່ແນ່ໃຈສິ່ງທີ່ໄດ້ຮູ້ ກໍາຫນົດສິ່ງທີ່ໄດ້ຮູ້ບໍ່ໄດ້ ຈໍາສິ່ງທີ່ໄດ້ຮູ້ບໍ່ໄດ້ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ເຫັນແລ້ວ" ດ້ວຍອາການ ៣ ຢ່າງ ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະໄດ້ຍິນແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວແລະຊາບແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະໄດ້ຍິນແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ແລະຊາບແລ້ວ" ຯລຯ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ" ດ້ວຍອາການ ៣ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໔) ກໍາລັງກ່າວກໍຮູ້ວ່າກໍາລັງກ່າວເທັຈ (៣) ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ ຕ້ອງອາບັຕິປາຈິຕຕີຍ໌

[໑໐] ພິກສຸບໍ່ແນ່ໃຈສິ່ງທີ່ໄດ້ຮູ້ ກໍາຫນົດສິ່ງທີ່ໄດ້ຮູ້ບໍ່ໄດ້ ຈໍາສິ່ງທີ່ໄດ້ຮູ້ບໍ່ໄດ້ ຫລົງລືມສິ່ງທີ່ໄດ້ຮູ້ ກ່າວເທັຈທັງທີ່ຮູ້ວ່າ "ຂ້າພະເຈົ້າຮູ້ແລ້ວ ໄດ້ເຫັນແລ້ວ ໄດ້ຍິນແລ້ວ ແລະຊາບແລ້ວ" ດ້ວຍອາການ ໔ ຢ່າງ ຯລຯ ດ້ວຍອາການ ໕ ຢ່າງ ຯລຯ ດ້ວຍອາການ ໖ ຢ່າງ ຯລຯ ດ້ວຍອາການ ໗ ຢ່າງ ຄື (໑) ເບື້ອງຕົ້ນທ່ານຮູ້ວ່າຈັກກ່າວເທັຈ (໔) ກໍາລັງກ່າວກໍຮູ້ວ່າກໍາລັງກ່າວເທັຈ (៣)

ຄັນກ່າວແລ້ວກໍຮູ້ວ່າກ່າວເທັຈແລ້ວ (໔) ອໍາພາງຄວາມເຫັນ (໕) ອໍາພາງຄວາມເຫັນຊອບ (໖) ອໍາພາງຄວາມພໍໃຈ (໗) ອໍາພາງຄວາມປະສົງຄ໌ ຕ້ອງອາບັຕິປາຈິຕຕິຍ໌

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໑] ໑. ພິກສຸກ່າວພັ້ງໄປ

໒. ພິກສຸກ່າວພາດໄປ

໓. ພິກສຸວິກົລຈິຕ

໔. ພິກສຸຕົ້ນບັນຍັດ

ມຸສາວາທສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໒. ໂອມສວາທສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໒. ໂອມສວາທສິກຂາບົທ

ວ່າດ້ວຍການກ່າວສຽດສີ

ເຣື້ອງພຣະສັພພັຄຄີຍ໌

[໑໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຜິດຖຽງກັບພວກພິກສຸຜູ້ມີສີລດີງາມ ກ່າວສຽດສີພິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ວຍຊາຕິກໍາເນີດແດ່ ດ້ວຍຊື່ແດ່ ດ້ວຍຕະກູນແດ່ ດ້ວຍໜ້າທີ່ການງານແດ່ ດ້ວຍສິລປວິທຍາແດ່ ດ້ວຍຄວາມເຈັບໄຂ້ແດ່ ດ້ວຍຣູປລັກສນ໌ແດ່ ດ້ວຍກິເລສແດ່ ດ້ວຍອາບັຕິແດ່ ດ້ວຍຄໍາດ່າທີ່ຫຍາບແດ່ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຜິດຖຽງກັບພວກພິກສຸຜູ້ມີສີລດີງາມ ກ່າວສຽດສີພິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ວຍຊາຕິກໍາເນີດແດ່ ດ້ວຍຊື່ແດ່ ດ້ວຍຕະກູນແດ່ ດ້ວຍໜ້າທີ່ການງານແດ່ ດ້ວຍສິລປວິທຍາແດ່ ດ້ວຍຄວາມເຈັບໄຂ້ແດ່ ດ້ວຍຣູປລັກສນ໌ແດ່ ດ້ວຍ

ກິເລສແດ່ ດ້ວຍອາບັຕິແດ່ ດ້ວຍຄຳດ່າທີ່ຫຍາບແດ່ລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຜິດຖຽງກັບພວກພິກສຸຜູ້ມີສີລດີງາມ ກ່າວສຽດສີພິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ວຍຊາຕິກຳເນີດແດ່ ດ້ວຍຊື່ແດ່ ດ້ວຍຕະກູນແດ່ ດ້ວຍຫນ້າທີ່ການງານແດ່ ດ້ວຍສີລປວິທຍາແດ່ ດ້ວຍຄວາມເຈັບໄຂ້ແດ່ ດ້ວຍຣູປລັກສນ໌ແດ່ ດ້ວຍກິເລສແດ່ ດ້ວຍອາບັຕິແດ່ ດ້ວຍຄຳດ່າທີ່ຫຍາບແດ່ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຜິດຖຽງກັບພວກພິກສຸຜູ້ມີສີລດີງາມ ກ່າວສຽດສີພິກສຸຜູ້ມີສີລດີງາມ ດ່າ ສົບປມາດດ້ວຍຊາຕິກຳເນີດແດ່ ດ້ວຍຊື່ແດ່ ດ້ວຍຕະກູນແດ່ ດ້ວຍຫນ້າທີ່ການງານແດ່ ດ້ວຍສີລປວິທຍາແດ່ ດ້ວຍຄວາມເຈັບໄຂ້ແດ່ ດ້ວຍຣູປລັກສນ໌ແດ່ ດ້ວຍກິເລສແດ່ ດ້ວຍອາບັຕິແດ່ ດ້ວຍຄຳດ່າທີ່ຫຍາບແດ່ລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳຫນິແລ້ວຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ

ໂຄນັນທິວິສາລ

[໑໖] ພິກສຸທັງຫລາຍ ເຣື້ອງເຄີຍມີມາແລ້ວ ພຣາມນ໌ຄົນນຶ່ງໃນເມືອງຕັກກສິລາ ມີໂຄເຖິກຊື່ ນັນທິວິສາລ ພິກສຸທັງຫລາຍ ຄັ້ງນັ້ນແລ ໂຄເຖິກຊື່ນັນທິວິສາລໄດ້ກ່າວກັບພຣາມນ໌ນັ້ນດັ່ງນີ້ວ່າ "ທ່ານພຣາມນ໌ ທ່ານຈົ່ງໄປທຳການພນັນເອົາຊັພຍ໌ ໑,໐໐໐ ກຫາປນະກັບເສດຖີວ່າ ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້" ພິກສຸທັງຫລາຍ ເທື່ອນັ້ນ ພຣາມນ໌ໄດ້ໄປທຳການພນັນເອົາຊັພຍ໌ ໑,໐໐໐ ກຫາປນະ ກັບເສດຖີດ້ວຍກ່າວວ່າ "ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້" ພິກສຸທັງຫລາຍ ຄັນແລ້ວພຣາມນ໌ນັ້ນກໍຜູກກວຽນ ໑໐໐ ເຫລັ້ມທຽມໂຄເຖິກນັນທິວິສາລ ແລ້ວຈຶ່ງໄດ້ກ່າວດັ່ງນີ້ວ່າ "ເຈົ້າໂຄໂກງ ເຈົ້າຈົ່ງດຶງ ເຈົ້າໂຄໂກງ ເຈົ້າຈົ່ງລາກໄປ" ຄັ້ງນັ້ນແລ ໂຄເຖິກນັນທິວິສາລໄດ້ຢືນນິ່ງເສີຍຢູ່ ນະ ທີ່ນັ້ນເອງ ພຣາມນ໌ນັ້ນເສັຽພນັນ ເສັຽຊັພຍ໌ ໑,໐໐໐ ກຫາປນະ ເສົ້າຊຶມໄປ ຕໍ່ມາ ໂຄເຖິກນັນທິວິສາລໄດ້ກ່າວກັບພຣາມນ໌ນັ້ນດັ່ງນີ້ວ່າ "ທ່ານພຣາມນ໌ ເຫຕຸໃດທ່ານຈຶ່ງເສົ້າຊຶມ" ພຣາມນ໌ຕອບວ່າ "ກໍເພາະເຈົ້າເຮັດ

ໃຫ້ເຮົາຕ້ອງເສັຽຊັພຍ໌ໄປເຖິງ ໑,໐໐໐ ກະຫາປະນະ" ໂຄເຖິກນັນທິວິສາລກ່າວວ່າ "ທ່ານພຣາມນ໌ ທ່ານຮຽກຂ້າພະເຈົ້າຜູ້ບໍ່ໂກງດ້ວຍຄຳວ່າໂກງເປັນຫຍັງລະ ທ່ານຈົ່ງໄປທຳການພນັນເອົາຊັພຍ໌ ໔,໐໐໐ ກະຫາປະນະ ກັບເສດຖີດ້ວຍກ່າວວ່າ 'ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້' ແຕ່ທ່ານຢ່າຮຽກຂ້າພະເຈົ້າຜູ້ບໍ່ໂກງດ້ວຍຄຳວ່າໂກງ" ພຣາມນ໌ຈຶ່ງໄປພນັນເອົາຊັພຍ໌ ໔,໐໐໐ ກະຫາປະນະກັບເສດຖີດ້ວຍກ່າວວ່າ "ໂຄເຖິກຂອງເຮົາຈະລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປໄດ້" ພິກສຸທັງຫລາຍ ຄັນແລ້ວພຣາມນ໌ນັ້ນກໍຜູກກວຽນ ໑໐໐ ເຫລັ້ມ ທຽມໂຄນັນທິວິສາລແລ້ວ ຈຶ່ງໄດ້ກ່າວດັ່ງນີ້ວ່າ "ເຈົ້າມຫາຈຳເຣີນ ເຊີນດຶງໄປ ເຈົ້າມຫາຈຳເຣີນ ເຊີນລາກໄປເຖີດ" ຄັ້ງນັ້ນແລ ໂຄເຖິກນັນທິວິສາລໄດ້ລາກກວຽນ ໑໐໐ ເຫລັ້ມທີ່ຜູກຕິດກັນໄປແລ້ວ ບຸຄຄົລເພິງກ່າວຄຳມ່ວນ ບໍ່ເພິງກ່າວຄຳບໍ່ມ່ວນ ບໍ່ວ່າໃນກາລໃດໆເມື່ອພຣາມນ໌ກ່າວຄຳມ່ວນ ໂຄເຖິກໂຄນັນທິວິ ສາລ ກໍລາກກວຽນຫນັກໄປໄດ້ ເຮັດໃຫ້ພຣາມນ໌ໄດ້ຊັພຍ໌ ຕົນເອງກໍດີໃຈທີ່ພຣາມນ໌ໄດ້ຊັພຍ໌

ເພາະການກະທຳຂອງຕົນນັ້ນ໑

ພິກສຸທັງຫລາຍ ຄຳດ່າ ຄຳສົບປມາດບໍ່ເປັນທີ່ພໍໃຈຂອງເຮົາແມ່ນໃນກາລນັ້ນ ຈັ່ງໃດບັດນີ້ ຄຳດ່າຄຳສົບປມາດຈະເປັນທີ່ພໍໃຈລະ ພິກສຸທັງຫລາຍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວສຽດສີ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ຂຸ. ຊາ. ໒໗/໒໘/໗

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໑. ມຸສາວາທວັຄ ໔. ໂອມສວາທສິກຂາບົທ ບົທພາຊນີຍ໌

ສິກຂາປົທວິພັງຄ໌

[໑໕] ທີ່ຊື່ວ່າ ກ່າວສຽດສີ ໄດ້ແກ່ ພິກສຸກ່າວສຽດສີດ້ວຍອາການ ໑໐ ຢ່າງ ຄື (໑) ຊາຕິກຳເນີດແດ່ (໒) ຊື່ແດ່ (໓) ຕະກູນແດ່ (໔) ຫນ້າທີ່ການງານແດ່ (໕) ສິລປວິທຍາແດ່ (໖) ຄວາມເຈັບໄຂ້ແດ່ (໗) ຮູບລັກສນ໌ແດ່ (໘) ກິເລສແດ່ (໙) ອາບັຕິແດ່ (໑໐) ຄຳດ່າແດ່

ບົທພາຊນີຍ໌

ທີ່ຊື່ວ່າ ຊາຕິກຳເນີດ ໄດ້ແກ່ ຊາຕິກຳເນີດ ໒ ຢ່າງ ຄື (໑) ຊາຕິກຳເນີດຕ່ຳ (໒) ຊາຕິກຳເນີດສູງ
ທີ່ຊື່ວ່າ ຊາຕິກຳເນີດຕ່ຳ ໄດ້ແກ່ ຊາຕິກຳເນີດຄົນຈັນທາລ ຊາຕິກຳເນີດຄົນຈັກສານ ຊາຕິກຳເນີດນາຍພານ ຊາຕິກຳເນີດຊ່າງອິຖ ຊາຕິກຳເນີດຄົນເທຂີ້ເທຍື້ອ໑ ນີ້ຈັດເປັນຊາຕິກຳເນີດຕ່ຳ
ທີ່ຊື່ວ່າ ຊາຕິກຳເນີດສູງ ໄດ້ແກ່ ຊາຕິກຳເນີດກສັຕຣິຍ໌ ຊາຕິກຳເນີດພຣາມນ໌ນີ້ ຈັດເປັນຊາຕິກຳເນີດສູງ
ທີ່ຊື່ວ່າ ຊື່ ໄດ້ແກ່ ຊື່ ໒ ຢ່າງ ຄື (໑) ຊື່ທີ່ເລວ (໒) ຊື່ທີ່ດີ
ທີ່ຊື່ວ່າ ຊື່ທີ່ເລວ ໄດ້ແກ່ ຊື່ອວກັນນກະ ຊື່ອຊວກັນນກະ ຊື່ອຫນິຕຖກະ
ຊື່ອສວິຕຖກະ ຊື່ອກຸລວັທທກະ໒ ອີກຢ່າງນຶ່ງ ຊື່ທີ່ເຂົາເຍີ້ຍຫຍັນ ຢຽດຫຍາມ ກຽດຊັງ ດູຫມິ່ນ ບໍ່ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນຊື່ທີ່ເລວ

ເຊີງອັນຖະ :

໑ ປຸກກຸສ ຄົນເທຂີ້ເທຍື້ອ ໃນໂຍຊນາວ່າ "ຄົນເທອຸຈຈາຣະ" (ປຸ ອຸຈຈາຕິ ກຣີສໍ, ຕໍ ກຸສຕິ ອປເນຕີຕິ ປຸກກຸໂສ, ປຸປຸຜໍ ອຸຈຈຕິ ກຣີສໍ, ກຸສຸມໍ ວາ, ຕໍ ສທຸເທຕີຕິ ປຸປຸຜສທຸທໂກ ອຸຈຈາຣະ ທ່ານຮຽກວ່າ "ປຸ" ຜູ້ທີ່ນຳປຸ ຄືອຸຈຈາຣະນັ້ນໄປຖິ້ມ ຊື່ວ່າ ປຸກກຸສະ ອຸຈຈາຣະທ່ານຮຽກວ່າ ປຸປຜະ (ດອກໄມ້) ຜູ້ທີ່ຂົນດອກໄມ້ຄືອຸຈຈາຣະນັ້ນຖິ້ມ ຊື່ວ່າ ປຸປຜສັທທກະ (ປາຈິຕຸຍາທິໂຍນາ ໔ ມ.) ໃນທີ່ນີ້ ປຸກກຸສສັພທ໌ເປັນໄວພົຈນ໌ຂອງປຸປຜສັທທກສັພທ໌ (ປຸກກຸສຊາຕິຕິ ປຸປຸຜສທຸທກຊາຕິ - ວິ. ອ. ໒/໑໕/໔໕໗) ຈະແປວ່າ "ຄົນເທອຸຈຈາຣະ" ກໍໄດ້

໒ ຊື່ທັງ ໕ ນີ້ ຄື (໑) ອວກັນນກະ (໒) ຊວກັນນກະ (໓) ຫນິຕຖກະ (໔) ສວິຕຖກະ (໕) ກຸລວັທທກະ ເປັນຊື່ຂອງພວກທາສຖືເປັນຊື່ຊັ້ນຕ່ຳ ເປັນຊື່ທີ່ເລວ (ວິ. ອ. ໒/໑໕/໔໕໗)

ທີ່ຊື່ວ່າ ຊື່ທີ່ດີ ໄດ້ແກ່ ຊື່ທີ່ກ່ຽວກັບພຣະພຸທທ ທີ່ກ່ຽວກັບພຣະທັມ ທີ່ກ່ຽວກັບພຣະສົງຂ໌ ອີກຢ່າງໜຶ່ງ ຊື່ທີ່ເຂົາບໍ່ເຍີ້ຍຫຍັນ ບໍ່ຢຽດຫຍາມ ບໍ່ກຽດຊັງ ບໍ່ດູຫມິ່ນ ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນຊື່ທີ່ດີ

ທີ່ຊື່ວ່າ ຕະກູນ ໄດ້ແກ່ ຕະກູນ ໒ ຢ່າງ ຄື (໑) ຕະກູນຊັ້ນຕ່ຳ (໒) ຕະກູນຊັ້ນສູງ

ທີ່ຊື່ວ່າ ຕະກູນຊັ້ນຕ່ຳ ໄດ້ແກ່ ຕະກູນໂກສີຍະ ຕະກູນພາຣທວາຊະ ອີກຢ່າງໜຶ່ງ ຕະກູນທີ່ເຂົາເຍີ້ຍຫຍັນ ຢຽດຫຍາມ ກຽດຊັງ ດູຫມິ່ນ ບໍ່ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນຕະກູນຊັ້ນຕ່ຳ

ທີ່ຊື່ວ່າ ຕະກູນຊັ້ນສູງ ໄດ້ແກ່ ຕະກູນໂຄຕມະ ຕະກູນໂມຄັລລານະ ຕະກູນກັຈຈາຍນະ ຕະກູນວາເສຕຖະ ອີກຢ່າງໜຶ່ງ ຕະກູນທີ່ເຂົາບໍ່ເຍີ້ຍຫຍັນ ບໍ່ຢຽດຫຍາມ ບໍ່ກຽດຊັງ ບໍ່ດູຫມິ່ນ ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນຕະກູນຊັ້ນສູງ

ທີ່ຊື່ວ່າ ຫນ້າທີ່ກາຣງານ ໄດ້ແກ່ ຫນ້າທີ່ກາຣງານ ໒ ຢ່າງ ຄື (໑) ຫນ້າທີ່ກາຣງານຊັ້ນຕ່ຳ (໒) ຫນ້າທີ່ກາຣງານຊັ້ນສູງ

ທີ່ຊື່ວ່າ ຫນ້າທີ່ກາຣງານຊັ້ນຕ່ຳ ໄດ້ແກ່ ງານຊ່າງຖາກໄມ້ ງານເທຂີ້ເທຍື້ອ໑ ອີກຢ່າງໜຶ່ງ ກາຣງານທີ່ເຂົາເຍີ້ຍຫຍັນ ຢຽດຫຍາມ ກຽດຊັງ ດູຫມິ່ນ ບໍ່ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນກາຣງານຊັ້ນຕ່ຳ

ທີ່ຊື່ວ່າ ຫນ້າທີ່ກາຣງານຊັ້ນສູງ ໄດ້ແກ່ ທຳນາ ຄ້າຂາຍ ລ້ຽງໂຄ ອີກຢ່າງໜຶ່ງ ກາຣງານທີ່ເຂົາບໍ່ເຍີ້ຍຫຍັນ ບໍ່ຢຽດຫຍາມ ບໍ່ກຽດຊັງ ບໍ່ດູຫມິ່ນ ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນກາຣງານຊັ້ນສູງ

ທີ່ຊື່ວ່າ ສິລປວິທຍາ ໄດ້ແກ່ ສິລປວິທຍາ ໒ ຢ່າງ ຄື (໑) ສິລປວິທຍາຊັ້ນຕ່ຳ (໒) ສິລປວິທຍາຊັ້ນສູງ

ທີ່ຊື່ວ່າ ສິລປວິທຍາຊັ້ນຕ່ຳ ໄດ້ແກ່ ວິຊາຊ່າງຈັກສານ ວິຊາຊ່າງຫມໍ້ ວິຊາຊ່າງຕ່ຳຫູກ ວິຊາຊ່າງຫນັງ ວິຊາຊ່າງກັລບກ ອີກຢ່າງໜຶ່ງ ສິລປວິທຍາທີ່ເຂົາເຍີ້ຍຫຍັນ ຢຽດຫຍາມ ກຽດຊັງ ດູຫມິ່ນ ບໍ່ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນສິລປວິທຍາຊັ້ນຕ່ຳ

ເຊີງອັນຖະ :

໑ ປຸປ຺ຜສ຺ທ຺ທກມ຺ມໍ ງານເທຂີ້ເທຍື້ອ ຫລືເທອຸຈຈາຣະ (ດູເຊີງອັນຖະ ຂໍ້ ໑໕ ຫນ້າ ໒໐໒)

ທີ່ຊື່ວ່າ ສິລປວິທຍາຊັ້ນສູງ ໄດ້ແກ່ ວິຊານັບ ວິຊາຄຳນວນ ວິຊາຂຽນ ອີກຢ່າງໜຶ່ງ ສິລປວິທຍາທີ່ເຂົາບໍ່ເຍີ້ຍຫຍັນ ບໍ່ຢຽດຫຍາມ ບໍ່ກຽດຊັງ ບໍ່ດູຫມິ່ນ ນັບຖືກັນໃນທ້ອງຖິ່ນນັ້ນໆນີ້ຈັດເປັນ

ສິລປວິທຍາຊັ້ນສູງ ຄວາມເຈັບໄຂ້ ທຸກຂນິດຈັດເປັນສິ່ງທີ່ເລວ ສ່ວນໂຣຄເບົາຫວານ໑ ຈັດເປັນໂຣຄທີ່ດີ

ທີ່ຊື່ວ່າ ຮູບລັກສູນ໌ ໄດ້ແກ່ ຮູບລັກສູນ໌ ໒ ຢ່າງ ຄື (໑) ຮູບລັກສູນ໌ທີ່ເລວ (໒) ຮູບລັກສູນ໌ທີ່ດີ

ທີ່ຊື່ວ່າ ຮູບລັກສູນ໌ທີ່ເລວ ຄື ສູງເກີນໄປ ເຕັ້ຽເກີນໄປ ດຳເກີນໄປ ຂາວເກີນໄປ ນີ້ ຈັດເປັນຮູປລັກສູນ໌ທີ່ເລວ

ທີ່ຊື່ວ່າ ຮູບລັກສູນ໌ທີ່ດີ ຄື ບໍ່ສູງນັກ ບໍ່ເຕັ້ຽນັກ ບໍ່ດຳນັກ ບໍ່ຂາວນັກ ນີ້ຈັດເປັນຮູປລັກສູນ໌ທີ່ດີ

ກິເລສ ທັງປວງ ຊື່ວ່າເລວ

ອາບັຕິ (ໂທສູທາງພຣະວິນັຍ) ທຸກຢ່າງເປັນເຣື້ອງທີ່ເລວ ແຕ່ໂສດາບັຕິ (ການເຂົ້າເຖິງກະແສທັມ) ສມາບັຕິ (ການເຂົ້າຢານ) ເປັນເຣື້ອງທີ່ດີ

ທີ່ຊື່ວ່າ ຄຳດ່າ ໄດ້ແກ່ ຄຳດ່າ ໒ ຢ່າງ ຄື (໑) ຄຳດ່າຫຍາບ (໒) ຄຳດ່າສຸພາພ

ທີ່ຊື່ວ່າ ຄຳດ່າຫຍາບ ໄດ້ແກ່ ຄຳດ່າວ່າ ທ່ານເປັນອູຖ ທ່ານເປັນແພະ ທ່ານເປັນໂຄ ທ່ານເປັນລາ ທ່ານເປັນສັຕວ໌ເດັ່ງຣະສານ ທ່ານເປັນສັຕວ໌ນຣົກ ທ່ານບໍ່ມີສຸຄຕິ ຫວັງໄດ້ແຕ່ທຸຄຕິເທົ່ານັ້ນ ຄຳດ່າທີ່ກ່ຽວກັບການຮ່ວມປະເວນີ໒ ຫລືຄຳດ່າທີ່ກ່ຽວກັບອວັຍວະຂອງຊາຍຍິງ ນີ້ຈັດເປັນຄຳດ່າຫຍາບ

ທີ່ຊື່ວ່າ ຄຳດ່າສຸພາພ ໄດ້ແກ່ ຄຳດ່າວ່າ ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມກຖຶກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ ນີ້ຈັດເປັນຄຳດ່າສຸພາ

ເຊີງອັນຖະ :

໑ ມທຸເມໂຫ ອາພາໂຫ ໂຣຄເບົາຫວານ ບາງອາຈາຣຍ໌ວ່າໂຣຄອ້ວນ (ຖູລກາຍສຸສ ມໍສູປຈໂຍຕິ ເອເກ-ວຊິຣ. ຕີກາ ໓໗໐)

໒ ຄຳວ່າ "ການຮ່ວມປະເວນີ" ແປມາຈາກຄຳວ່າ ຍກາເຣນ ພກາເຣນ (ຍພ ເມຖຸເນ. ນິຖຸນສີສ ຊນທຸວຍສຸສ ອິທໍ ກມຸມໍ ເມຖຸນໍ, ຕສຸມີ ເມຖຸເນ ຍພທາຕຸ ວຕຸຕຕິ ຍພ-ທາຕຸໃຊ້ໃນຄວາມຫມາຍວ່າເມຖຸນທັມ ຄືດ່າດ້ວຍຄຳວ່າ ຍພ ຫມາຍເຖິງດ່າເຖິງເຣື້ອງຂອງຄົນ ໒ ຄົນ ຄືຊາຍກັບຍິງມີເພສສັມພັນທ໌ກັນ (ນິຕິທາຕຸ ໑໕໙, ວຊິຣ. ຕີກາ ໓໗໐, ສາຣຕິຖ. ຕີກາ ໓/໑໕/໔, ວິມຕິ. ຕີກາ ໒/໑໕/໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໔. ໂອມສວາທສິກຂາບົທ ບົທພາຊນີຍ໌

ອຸປສັມບັນກ່າວສຽດສີອຸປສັມບັນ

໑. ກ່າວສຽດສີດ້ວຍຊາຕິກຳເນີດຕ່ຳ

[໑໙] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຊາຕິກຳເນີດຕ່ຳດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດຕ່ຳ ຄື ກ່າວກັບອຸປສັມບັນຜູ້ເປັນຄົນຈັນທາລ ກັບອຸປສັມບັນຜູ້ເປັນຄົນຈັກສານ ກັບອຸປສັມບັນຜູ້ເປັນນາຍພານ ກັບອຸປສັມບັນຜູ້ເປັນຊ່າງຣົຖ ກັບອຸປສັມບັນຜູ້ເປັນຄົນເທຂີ້ເຫຍື້ອວ່າ "ທ່ານເປັນຄົນຈັນທາລ ທ່ານເປັນຄົນຈັກສານ ທ່ານເປັນນາຍພານ ທ່ານເປັນຊ່າງຣົຖ ທ່ານເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຊາຕິກຳເນີດສູງດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດຕ່ຳ ຄື ກ່າວກັບອຸປສັມບັນຜູ້ເປັນກສັຕຣິຍ໌ ກັບອຸປສັມບັນຜູ້ເປັນພຣາມນ໌ວ່າ "ທ່ານເປັນຄົນຈັນທາລ ທ່ານເປັນຄົນຈັກສານ ທ່ານເປັນນາຍພານ ທ່ານເປັນຊ່າງຣົຖ ທ່ານເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສຽດສີດ້ວຍຊາຕິກຳເນີດສູງ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຊາຕິກຳເນີດຕ່ຳດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດສູງ ຄື ກ່າວກັບອຸປສັມບັນຜູ້ເປັນຈັນທາລ ກັບອຸປສັມບັນຜູ້ເປັນຄົນຈັກສານ ກັບອຸປສັມບັນຜູ້ເປັນນາຍພານ ກັບອຸປສັມບັນຜູ້ເປັນຊ່າງຣົຖ ກັບອຸປສັມບັນຜູ້ເປັນຄົນເທຂີ້ເຫຍື້ອວ່າ "ທ່ານກສັຕຣິຍ໌ ທ່ານພຣາມນ໌" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຊາຕິກຳເນີດສູງດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດສູງ ຄື ກ່າວກັບອຸປສັມບັນຜູ້ເປັນກສັຕຣິຍ໌ ກັບອຸປສັມບັນຜູ້ເປັນພຣາມນ໌ວ່າ "ທ່ານກສັຕຣິຍ໌ ທ່ານພຣາມນ໌" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໔. ກ່າວສຽດສີດ້ວຍຊື່ທີ່ບໍ່ດີ

[໑໗] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຊື່ອເລວດ້ວຍຊື່ທີ່**ບໍ່ດີ** ຄື ກ່າວກັບອຸປສັມບັນຊື່ອອກັນນກະ ກັບອຸປສັມບັນຊື່ຊວກັນນກະ ກັບອຸປສັມບັນຊື່ຫນິຕຖກະ ກັບອຸປສັມບັນຊື່ສວິຕຖກະ ກັບອຸປສັມບັນຊື່ກຸລວັຫຫກະ ວ່າ "ທ່ານອວກັນນກະ ທ່ານຊວກັນນກະ ທ່ານຫນິຕຖກະ ທ່ານສວິຕຖກະ ທ່ານກຸລວັຫຫກະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຊື່ທີ່ດີດ້ວຍຊື່ທີ່**ບໍ່ດີ** ຄື ກ່າວກັບອຸປສັມບັນຊື່ພຸທຫຮັກຂິຕ ກັບອຸປສັມບັນຊື່ທັມມຮັກຂິຕ ກັບອຸປສັມບັນຊື່ສັງຂຮັກຂິຕວ່າ "ທ່ານອວກັນນກະ ທ່ານຊວກັນນກະ ທ່ານຫນິຕຖກະ ທ່ານສວິຕຖກະ ທ່ານກຸລວັຫຫກະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສຽດສີດ້ວຍຊື່ທີ່ດີ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຊື່ທີ່ບໍ່ດີດ້ວຍຊື່ທີ່ດີ ຄື ກ່າວກັບອຸປສັມບັນຊື່ອອກັນນກະ ກັບອຸປສັມບັນຊື່ຊວກັນນກະ ກັບອຸປສັມບັນຊື່ອຫນິຕຖກະ ກັບອຸປສັມບັນຊື່ສວິຕຖກະ ກັບອຸປສັມບັນຊື່ກຸລວັຫຫກະວ່າ "ທ່ານພຸທຫຮັກຂິຕ ທ່ານທັມມຮັກຂິຕ ທ່ານສັງຂຮັກຂິຕ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ
ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຊື່ທີ່ດີດ້ວຍຊື່ທີ່ດີ ຄື ກ່າວກັບອຸປສັມບັນຊື່ພຸທຫຮັກຂິຕ ກັບອຸປສັມບັນຊື່ທັມມຮັກຂິຕ ກັບອຸປສັມບັນຊື່ສັງຂຮັກຂິຕວ່າ "ທ່ານພຸທຫຮັກຂິຕ ທ່ານທັມມຮັກຂິຕ ທ່ານສັງຂຮັກຂິຕ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໓. ກ່າວສຽດສີດ້ວຍຕະກູນຊັ້ນຕ່ຳ

[໑໘] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີຕະກູນຊັ້ນຕ່ຳດ້ວຍ(ຄຳບົ່ງເຖິງ)ຕະກູນຊັ້ນຕ່ຳ ຄື ກ່າວກັບອຸປສັມບັນຕະກູນໂກສິຍະ ກັບອຸປສັມບັນຕະກູນພາຣທວາຊະວ່າ "ທ່ານເປັນຄົນຕະກູນໂກສິຍະ ທ່ານເປັນຄົນຕະກູນພາຣທວາຊະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ
ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວ

ກັບອຸປສັມບັນຕະກູນຊັ້ນສູງດ້ວຍ(ຄຳປິ່ງເຖິງ)ຕະກູນຊັ້ນຕ່ຳ ຄື ກ່າວກັບອຸປສັມບັນຕະກູນໂຄຕມະ ກັບອຸປສັມບັນຕະກູນໂມຄຄັລລານະ ກັບອຸປສັມບັນຕະກູນກັຈຈາຍນະ ກັບອຸປສັມບັນຕະກູນອາເສຕຖຸະອ່າ "ທ່ານເປັນຄົນຕະກູນໂກສິຍະ ທ່ານເປັນຄົນຕະກູນພາຣທວາຊະ" ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄຳເວົ້າ

ກ່າວສຽດສີດ້ວຍຕະກູນຊັ້ນສູງ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີຕະກູນຊັ້ນຕ່ຳດ້ວຍ(ຄຳປິ່ງເຖິງ)ຕະກູນຊັ້ນສູງ ຄື ກ່າວກັບອຸປສັມບັນຕະກູນໂກສິຍະ ກັບອຸປສັມບັນຕະກູນພາຣທວາຊະອ່າ "ທ່ານເປັນຄົນຕະກູນໂຄຕມະ ທ່ານເປັນຄົນຕະກູນໂມຄຄັລລານະ ທ່ານເປັນຄົນຕະກູນກັຈຈາຍນະ ທ່ານເປັນຄົນຕະກູນອາເສຕຖຸະ" ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີຕະກູນຊັ້ນສູງດ້ວຍ(ຄຳປິ່ງເຖິງ)ຕະກູນຊັ້ນສູງ ຄື ກ່າວກັບອຸປສັມບັນຕະກູນໂຄຕມະ ກັບອຸປສັມບັນຕະກູນໂມຄຄັລລານະ ກັບອຸປສັມບັນຕະກູນກັຈຈາຍນະ ກັບອຸປສັມບັນຕະກູນອາເສຕຖຸະອ່າ "ທ່ານເປັນຄົນຕະກູນໂຄຕມະ ທ່ານເປັນຄົນຕະກູນໂມຄຄັລລານະ ທ່ານເປັນຄົນຕະກູນກັຈຈາຍນະ ທ່ານເປັນຄົນຕະກູນອາເສຕຖຸະ" ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄຳເວົ້າ

໔. ກ່າວສຽດສີດ້ວຍໜ້າທີ່ການງານຊັ້ນຕ່ຳ

[໑໘] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີໜ້າທີ່ການງານຊັ້ນຕ່ຳດ້ວຍ(ຄຳປິ່ງເຖິງ)ໜ້າທີ່ການງານຊັ້ນຕ່ຳ ຄື ກ່າວກັບອຸປສັມບັນຜູ້ເປັນຊ່າງຖາກໄມ້ ກັບອຸປສັມບັນຜູ້ເປັນຄົນເທຂີ້ເຫຍື້ອ ອ່າ "ທ່ານເປັນຊ່າງຖາກໄມ້ ທ່ານເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີໜ້າທີ່ການງານຊັ້ນສູງດ້ວຍ(ຄຳປິ່ງເຖິງ)ໜ້າທີ່ການງານຊັ້ນຕ່ຳ ຄື ກ່າວກັບອຸປສັມບັນຜູ້ເປັນຊາວນາ ກັບອຸປສັມບັນຜູ້ເປັນພໍ່ຄ້າ ກັບອຸປສັມບັນຜູ້ເປັນຄົນລ້ຽງໂຄອ່າ "ທ່ານເປັນຊ່າງຖາກໄມ້ ທ່ານເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິປາຈິຕຕິຍ໌ທຸກໆຄຳເວົ້າ

ກ່າວສຽດສີດ້ວຍຫນ້າທີ່ການງານຊັ້ນສູງ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຫນ້າທີ່ການງານຊັ້ນຕ່ຳດ້ວຍ(ຄຳບົ່ງເຖິງ)ຫນ້າທີ່ການງານຊັ້ນສູງ ຄື ກ່າວກັບອຸປສັມບັນຜູ້ເປັນຊ່າງຖາກໄມ້ ກັບອຸປສັມບັນຜູ້ເປັນຄົນເທຂີ້ເຫຍື້ອວ່າ "ທ່ານເປັນຊາວນາ ທ່ານເປັນພໍ່ຄ້າ ທ່ານເປັນຄົນລ້ຽງໂຄ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຫນ້າທີ່ການງານຊັ້ນສູງດ້ວຍ(ຄຳບົ່ງເຖິງ)ຫນ້າທີ່ການງານຊັ້ນສູງ ຄື ກ່າວກັບອຸປສັມບັນຜູ້ເປັນຊາວນາ ກັບອຸປສັມບັນຜູ້ເປັນພໍ່ຄ້າ ກັບອຸປສັມບັນຜູ້ເປັນຄົນລ້ຽງໂຄວ່າ "ທ່ານເປັນຊາວນາ ທ່ານເປັນພໍ່ຄ້າ ທ່ານເປັນຄົນລ້ຽງໂຄ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໕. ກ່າວສຽດສີດ້ວຍສິລປວິທຍາຊັ້ນຕ່ຳ

[໔໐] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີສິລປວິທຍາຊັ້ນຕ່ຳດ້ວຍ(ຄຳບົ່ງເຖິງ)ສິລປວິທຍາຊັ້ນຕ່ຳ ຄື ກ່າວກັບອຸປສັມບັນຜູ້ເປັນຊ່າງຈັກສານ ກັບອຸປສັມບັນຜູ້ເປັນຊ່າງຫມໍ້ ກັບອຸປສັມບັນຜູ້ເປັນຊ່າງຕ່ຳຫູກ ກັບອຸປສັມບັນຜູ້ເປັນຊ່າງຫນັງ ກັບອຸປສັມບັນຜູ້ເປັນຊ່າງກັລບກວ່າ "ທ່ານເປັນຊ່າງຈັກສານ ທ່ານເປັນຊ່າງຫມໍ້ ທ່ານເປັນຊ່າງຕ່ຳຫູກ ທ່ານເປັນຊ່າງຫນັງ ທ່ານເປັນຊ່າງກັລບກ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີສິລປວິທຍາຊັ້ນສູງດ້ວຍ(ຄຳບົ່ງເຖິງ)ສິລປວິທຍາຊັ້ນຕ່ຳ ຄື ກ່າວກັບອຸປສັມບັນຜູ້ເປັນຊ່າງນັບ ກັບອຸປສັມບັນຜູ້ເປັນນັກຄຳນວນ ກັບອຸປສັມບັນຜູ້ເປັນນັກຂຽນວ່າ "ທ່ານເປັນຊ່າງຈັກສານ ທ່ານເປັນຊ່າງຫມໍ້ ທ່ານເປັນຊ່າງຕ່ຳຫູກ ທ່ານເປັນຊ່າງຫນັງ ທ່ານເປັນຊ່າງກັລບກ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສຽດສີດ້ວຍສິລປວິທຍາຊັ້ນສູງ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີສິລປວິທຍາຊັ້ນຕ່ຳດ້ວຍ(ຄຳບົ່ງເຖິງ)ສິລປວິທຍາຊັ້ນສູງ ຄື ກ່າວກັບອຸປສັມບັນຜູ້ເປັນຊ່າງຈັກສານ ກັບອຸປສັມບັນຜູ້ເປັນຊ່າງຫມໍ້ ກັບອຸປສັມບັນຜູ້ເປັນຊ່າງຕ່ຳຫູກ ກັບອຸປສັມບັນຜູ້ເປັນຊ່າງຫນັງ ກັບອຸປສັມບັນຜູ້ເປັນຊ່າງກັລບກວ່າ "ທ່ານເປັນຊ່າງນັບ ທ່ານເປັນນັກຄຳນວນ ທ່ານ

ເປັນນັກຂຽນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີສິ້ລປວິທຍາຊັ້ນສູງດ້ວຍ(ຄຳບົ່ງເຖິງ)ສິ້ລປວິທຍາຊັ້ນສູງ ຄື ກ່າວກັບອຸປສັມບັນຜູ້ເປັນຊ່າງນັບ ກັບອຸປສັມບັນຜູ້ເປັນນັກຄຳນວນ ກັບອຸປສັມບັນຜູ້ເປັນນັກຂຽນວ່າ "ທ່ານເປັນຊ່າງນັບ ທ່ານເປັນນັກຄຳນວນ ທ່ານເປັນນັກຂຽນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ຝ. ກ່າວສຽດສີດ້ວຍຄວາມເຈັບໄຂ້

[໔໑] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ເປັນໂຣຄທີ່ເລວດ້ວຍ(ຄຳບົ່ງເຖິງ)ໂຣຄທີ່ເລວ ຄື ກ່າວກັບອຸປສັມບັນຜູ້ເປັນໂຣຄເຮື້ອນ ກັບອຸປສັມບັນຜູ້ເປັນໂຣຄຝີ ກັບອຸປສັມບັນຜູ້ເປັນໂຣຄກາກ ກັບອຸປສັມບັນຜູ້ເປັນໂຣຄຄໍ່ ກັບອຸປສັມບັນຜູ້ເປັນໂຣຄລົມບ້າຫມູວ່າ "ທ່ານເປັນໂຣຄເຮື້ອນ ທ່ານເປັນໂຣຄຝີ ທ່ານເປັນໂຣຄກາກ ທ່ານເປັນໂຣຄຄໍ່ ທ່ານເປັນໂຣຄລົມບ້າຫມູ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ເປັນໂຣຄທີ່ດີດ້ວຍ(ຄຳບົ່ງເຖິງ)ໂຣຄທີ່ເລວ ຄື ກ່າວກັບອຸປສັມບັນຜູ້ເປັນໂຣຄເບົາຫວານວ່າ "ທ່ານເປັນໂຣຄເຮື້ອນ ທ່ານເປັນໂຣຄຝີ ທ່ານເປັນໂຣຄກາກ ທ່ານເປັນໂຣຄຄໍ່ ທ່ານເປັນໂຣຄລົມບ້າຫມູ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ເປັນໂຣຄທີ່ເລວດ້ວຍ(ຄຳບົ່ງເຖິງ)ໂຣຄທີ່ດີ ຄື ກ່າວກັບອຸປສັມບັນຜູ້ເປັນໂຣຄເຮື້ອນ ກັບອຸປສັມບັນຜູ້ເປັນໂຣຄຝີ ກັບອຸປສັມບັນຜູ້ເປັນໂຣຄກາກ ກັບອຸປສັມບັນຜູ້ເປັນໂຣຄຄໍ່ ກັບອຸປສັມບັນຜູ້ເປັນໂຣຄລົມບ້າຫມູວ່າ "ທ່ານເປັນໂຣຄເບົາຫວານ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ເປັນໂຣຄທີ່ດີດ້ວຍ(ຄຳບົ່ງເຖິງ)ໂຣຄທີ່ດີ ຄື ກ່າວກັບອຸປສັມບັນຜູ້ເປັນໂຣຄເບົາຫວານວ່າ "ທ່ານເປັນໂຣຄເບົາຫວານ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ໆ. ກ່າວສຽດສີດ້ວຍຮູປລັກສູນ໌ທີ່ບໍ່ດີ

[໔໔] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຮູປລັກສູນ໌ທີ່ບໍ່ດີດ້ວຍ(ຄຳບິ່ງເຖິງ)ຮູປລັກສູນ໌ທີ່ບໍ່ດີ ຄື ກ່າວກັບອຸປສັມບັນຜູ້ສູງເກີນໄປ ກັບອຸປສັມບັນຜູ້ເຕັ້ງເກີນໄປ ກັບອຸປສັມບັນຜູ້ດຳເກີນໄປ ກັບອຸປສັມບັນຜູ້ຂາວເກີນໄປວ່າ "ທ່ານເປັນຄົນສູງເກີນໄປ ທ່ານເປັນຄົນເຕັ້ງເກີນໄປ ທ່ານເປັນຄົນດຳເກີນໄປ ທ່ານເປັນຄົນຂາວເກີນໄປ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຮູປລັກສູນ໌ທີ່ດີດ້ວຍ(ຄຳບິ່ງເຖິງ)ຮູປລັກສູນ໌ທີ່ບໍ່ດີ ຄື ກ່າວກັບອຸປສັມບັນຜູ້ບໍ່ສູງຫລາຍ ກັບອຸປສັມບັນຜູ້ບໍ່ເຕັ້ງຫລາຍ ກັບອຸປສັມບັນຜູ້ບໍ່ດຳຫລາຍ ກັບອຸປສັມບັນຜູ້ບໍ່ຂາວຫລາຍວ່າ "ທ່ານເປັນຄົນສູງເກີນໄປ ທ່ານເປັນຄົນເຕັ້ງເກີນໄປ ທ່ານເປັນຄົນດຳເກີນໄປ ທ່ານເປັນຄົນຂາວເກີນໄປ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສຽດສີດ້ວຍຮູປລັກສູນ໌ທີ່ດີ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຮູປລັກສູນ໌ທີ່ບໍ່ດີດ້ວຍ(ຄຳບິ່ງເຖິງ)ຮູປລັກສູນ໌ທີ່ດີ ຄື ກ່າວກັບອຸປສັມບັນຜູ້ສູງເກີນໄປ ກັບອຸປສັມບັນຜູ້ເຕັ້ງເກີນໄປ ກັບອຸປສັມບັນຜູ້ດຳເກີນໄປ ກັບອຸປສັມບັນຜູ້ຂາວເກີນໄປວ່າ "ທ່ານເປັນຄົນບໍ່ສູງຫລາຍ ທ່ານເປັນຄົນບໍ່ເຕັ້ງຫລາຍ ທ່ານເປັນຄົນບໍ່ດຳຫລາຍ ທ່ານເປັນຄົນບໍ່ຂາວຫລາຍ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຮູປລັກສູນ໌ທີ່ດີດ້ວຍ(ຄຳບິ່ງເຖິງ)ຮູປລັກສູນ໌ທີ່ດີ ຄື ກ່າວກັບອຸປສັມບັນຜູ້ບໍ່ສູງເກີນໄປ ກັບອຸປສັມບັນຜູ້ບໍ່ເຕັ້ງເກີນໄປ ກັບອຸປສັມບັນຜູ້ບໍ່ດຳເກີນໄປ ກັບອຸປສັມບັນຜູ້ບໍ່ຂາວເກີນໄປວ່າ "ທ່ານເປັນຄົນບໍ່ສູງຫລາຍ ທ່ານເປັນຄົນບໍ່ເຕັ້ງຫລາຍ ທ່ານເປັນຄົນບໍ່ດຳຫລາຍ ທ່ານເປັນຄົນບໍ່ຂາວຫລາຍ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ໆ. ກ່າວສຽດສີດ້ວຍກິເລສ

[໔໕] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີກິເລສທີ່ບໍ່ດີດ້ວຍ(ຄຳບິ່ງເຖິງ)ກິເລສທີ່ບໍ່ດີ ຄື ກ່າວກັບອຸປສັມບັນຜູ້ຖືກຣາຄະ

ຫຸ້ມລ້ອມ ກັບອຸປສັມບັນຜູ້ຖືກໂທສະຫຸ້ມລ້ອມ ກັບອຸປສັມບັນຜູ້ຖືກໂມຫະຫຸ້ມລ້ອມວ່າ "ທ່ານເປັນຜູ້ຖືກຣາຄະຫຸ້ມລ້ອມ ທ່ານເປັນຜູ້ຖືກໂທສະຫຸ້ມລ້ອມ ທ່ານເປັນຜູ້ຖືກໂມຫະຫຸ້ມລ້ອມ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີພາອະໄຮ້ກິເລສດ້ວຍ(ຄຳບົ່ງເຖິງ)ກິເລສທີ່ບໍ່ດີ ຄື ກ່າວກັບອຸປສັມບັນຜູ້ປາສຈາກຣາຄະ ກັບອຸປສັມບັນຜູ້ປາສຈາກໂທສະ ກັບອຸປສັມບັນຜູ້ປາສຈາກໂມຫະວ່າ "ທ່ານເປັນຜູ້ຖືກຣາຄະຫຸ້ມລ້ອມ ທ່ານເປັນຜູ້ຖືກໂທສະຫຸ້ມລ້ອມ ທ່ານເປັນຜູ້ຖືກໂມຫະຫຸ້ມລ້ອມ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີກິເລສທີ່ບໍ່ດີດ້ວຍ(ຄຳບົ່ງເຖິງ)ພາອະໄຮ້ກິເລສ ຄື ກ່າວກັບອຸປສັມບັນຜູ້ຖືກຣາຄະຫຸ້ມລ້ອມ ກັບອຸປສັມບັນຜູ້ຖືກໂທສະຫຸ້ມລ້ອມ ກັບອຸປສັມບັນຜູ້ຖືກໂມຫະຫຸ້ມລ້ອມວ່າ "ທ່ານເປັນຜູ້ປາສຈາກຣາຄະ ທ່ານເປັນຜູ້ປາສຈາກໂທສະ ທ່ານເປັນຜູ້ປຣາສຈາກໂມຫະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີພາອະໄຮ້ກິເລສດ້ວຍ(ຄຳບົ່ງເຖິງ)ພາອະໄຮ້ກິເລສ ຄື ກ່າວກັບອຸປສັມບັນຜູ້ປາສຈາກຣາຄະ ກັບອຸປສັມບັນຜູ້ປາສຈາກໂທສະ ກັບອຸປສັມບັນຜູ້ປາສຈາກໂມຫະວ່າ "ທ່ານເປັນຜູ້ປາສຈາກຣາຄະ ທ່ານເປັນຜູ້ປາສຈາກໂທສະ ທ່ານເປັນຜູ້ປາສຈາກໂມຫະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໙. ກ່າວສຽດສີດ້ວຍອາບັຕິ

[໒໔] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນທີ່ບໍ່ດີດ້ວຍເຣື້ອງທີ່ບໍ່ດີ ຄື ກ່າວກັບອຸປສັມບັນຜູ້ຕ້ອງອາບັຕິປາຣາຊິກ ກັບອຸປສັມບັນຜູ້ຕ້ອງອາບັຕິສັງຊາທິເສສ ກັບອຸປສັມບັນຜູ້ຕ້ອງອາບັຕິຖຸລລັຈຈັຍ ກັບອຸປສັມບັນຜູ້ຕ້ອງອາບັຕິປາຈິຕຕີຍ໌ ກັບອຸປສັມບັນຜູ້ຕ້ອງອາບັຕິປາຕິເທສນີຍະ ກັບອຸປສັມບັນຜູ້ຕ້ອງອາບັຕິທຸກກົຕ ກັບອຸປສັມບັນຜູ້ຕ້ອງອາບັຕິທຸພພາສິຕວ່າ "ທ່ານຕ້ອງອາບັຕິປາຣາຊິກ ທ່ານຕ້ອງອາບັຕິສັງຊາທິເສສ

ທ່ານຕ້ອງອາບັຕິຖຸລລັຈຈັຍ ທ່ານຕ້ອງອາບັຕິປາຈິຕຕີຍ໌ ທ່ານຕ້ອງອາບັຕິປາຕິເທສນີຍະ ທ່ານຕ້ອງອາບັຕິທຸກກຕ ທ່ານຕ້ອງອາບັຕິທຸພພາສິຕ” ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີຄຸນທັມສູງດ້ອຍເຣື້ອງທີ່ບໍ່ດີ ຄື ກ່າວກັບອຸປສັມບັນຜູ້ເປັນໂສດາບັນວ່າ “ທ່ານຕ້ອງອາບັຕິປາຣາຊິກ ຯລຯ ທ່ານຕ້ອງອາບັຕິທຸພພາສິຕ” ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນທີ່ບໍ່ດີດ້ອຍ(ຄຳບົ່ງເຖິງ)ຄຸນທັມສູງ ຄື ກ່າວກັບອຸປສັມບັນຜູ້ຕ້ອງອາບັຕິປາຣາຊິກ ຯລຯ ອຸປສັມບັນຜູ້ຕ້ອງອາບັຕິທຸພພາສິຕວ່າ “ທ່ານເປັນໂສດາບັນ”ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີຄຸນທັມຊັ້ນສູງດ້ອຍ(ຄຳບົ່ງເຖິງ)ຄຸນທັມຊັ້ນສູງ ຄື ກ່າວກັບອຸປສັມບັນຜູ້ເປັນໂສດາບັນວ່າ “ທ່ານເປັນໂສດາບັນ” ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໑໐. ກ່າວສຽດສີດ້ອຍຄຳດ່າຫຍາບ

[໔໕] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນມີຄວາມປະພຶດເລວດ້ອຍຄຳດ່າທີ່ຫຍາບ ຄື ກ່າວກັບອຸປສັມບັນຜູ້ມີຄວາມປະພຶດດັ່ງອູຖ ກັບອຸປສັມບັນຜູ້ມີຄວາມປະພຶດດັ່ງແພະ ກັບອຸປສັມບັນຜູ້ມີຄວາມປະພຶດດັ່ງໂຄ ກັບອຸປສັມບັນຜູ້ມີຄວາມປະພຶດດັ່ງລາ ກັບອຸປສັມບັນຜູ້ມີຄວາມປະພຶດດັ່ງສັຕວ໌ເດັຽຣະສານ ກັບອຸປສັມບັນຜູ້ມີຄວາມປະພຶດດັ່ງສັຕວ໌ນຣົກ ວ່າ “ທ່ານເປັນອູຖ ທ່ານເປັນແພະ ທ່ານເປັນໂຄ ທ່ານເປັນລາ ທ່ານເປັນສັຕວ໌ເດັຽຣະສານ ທ່ານເປັນສັຕວ໌ນຣົກ ທ່ານບໍ່ມີສຸຄຕິ ຫວັງໄດ້ພຽງທຸຄຕິເທົ່ານັ້ນ” ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວກັບອຸປສັມບັນຜູ້ມີຄຸນສົມບັຕຊັ້ນສູງດ້ອຍຄຳດ່າທີ່ຫຍາບ ຄື ກ່າວກັບອຸປສັມບັນຜູ້ເປັນບັນທິຕ ກັບອຸປສັມບັນຜູ້ສລາດ ກັບອຸປສັມບັນຜູ້ເປັນນັກປຣາຊຍ໌ ກັບອຸປສັມບັນຜູ້ເປັນພຫູສູຕ ກັບອຸປສັມບັນຜູ້ເປັນທັມກຖຶກວ່າ “ທ່ານເປັນອູຖ ທ່ານເປັນແພະ ທ່ານເປັນໂຄ ທ່ານເປັນລາ ທ່ານເປັນສັຕວ໌ເດັຽ

ຣະສານ ທ່ານເປັນສັຕວ໌ນຣົກ ທ່ານບໍ່ມີສຸຄຕິ ຫວັງໄດ້ພຽງທຸຄຕິເທົ່ານັ້ນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສຽດສີເຍາະເຍີ້ຍດ້ວຍຄຳດ່າສຸພາບ

ອຸປສົມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສົມບັນເກີ້ເຂີນ ກ່າວກັບອຸປສົມບັນຜູ້ມີຄວາມປະພຶດເລວດ້ວຍຄຳດ່າສຸພາບ ຄື ກ່າວກັບອຸປສົມບັນຜູ້ມີຄວາມປະພຶດດັ່ງອູຖ ກັບອຸປສົມບັນຜູ້ມີຄວາມປະພຶດດັ່ງແພະ ກັບອຸປສົມບັນຜູ້ມີຄວາມປະພຶດດັ່ງໂຄ ກັບອຸປສົມບັນຜູ້ມີຄວາມປະພຶດດັ່ງລາ ກັບອຸປສົມບັນຜູ້ມີຄວາມປະພຶດດັ່ງສັຕວ໌ເດັຽຣະສານ ກັບອຸປສົມບັນຜູ້ມີຄວາມປະພຶດດັ່ງສັຕວ໌ນຣົກ ວ່າ "ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມກຖຶກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສົມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສົມບັນເກີ້ເຂີນ ກ່າວກັບອຸປສົມບັນຜູ້ມີຄຸນສົມບັຕສູງດ້ວຍຄຳດ່າສຸພາບ ຄື ກ່າວກັບອຸປສົມບັນຜູ້ເປັນບັນທິຕ ກັບອຸປສົມບັນຜູ້ສລາດ ກັບອຸປສົມບັນຜູ້ເປັນນັກປຣາຊຍ໌ ກັບອຸປສົມບັນຜູ້ເປັນພຫູສູຕ ກັບອຸປສົມບັນຜູ້ເປັນທັມກຖຶກວ່າ "ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມກຖຶກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດຕ່ຳ

[໔໓] ອຸປສົມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສົມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣົຖ ເປັນຄົນເທຂີ້ເທຍື້ອ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

ກ່າວສຽດສີດ້ວຍຊາຕິກຳເນີດສູງ

ອຸປສົມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສົມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນກສັຕຣິຍ໌ ເປັນພຣາມນ໌" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

໔. ກ່າວສຽດສີດ້ວຍຊື່ທີ່ເລວ

[໔໗] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປະມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກຊື່ອວກັນນກະ ຊື່ຊວກັນນກະ ຊື່ທນິຕຖກະ ຊື່ສວິຕຖກະ ຊື່ກຸລວັທທກະ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ ຯລຯ

ກ່າວສຽດສີດ້ວຍຊື່ທີ່ດີ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກຊື່ພຸທທຣັກຂິຕ ຊື່ທັມມຣັກຂິຕ ຊື່ສັງຄຣັກຂິຕ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ ຯລຯ

໕. ກ່າວສຽດສີດ້ວຍຕະກູນຊັ້ນຕ່ຳ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກຕະກູນໂກສິຍະ ຕະກູນພາຣທວາຊະ ຯລຯ"

ກ່າວສຽດສີດ້ວຍຕະກູນຊັ້ນສູງ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກຕະກູນໂຄຕມະ ຕະກູນໂມຄຄັລລານະ ຕະກູນກັຈຈາຍນະ ຕະກູນວາເສຕຖະ ຯລຯ"

໔. ກ່າວສຽດສີດ້ວຍຫນ້າທີ່ການງານຊັ້ນຕ່ຳ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຊ່າງຖາກໄມ້ ເປັນຄົນເທຂີ້ເຫຍື້ອ ຯລຯ"

ກ່າວສຽດສີດ້ວຍຫນ້າທີ່ການງານຊັ້ນສູງ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຊາວນາ ເປັນພໍ່ຄ້າ ເປັນຄົນລ້ຽງໂຄ ຯລຯ"

໕. ກ່າວສຽດສີດ້ວຍສິລປວິທຍາຊັ້ນຕ່ຳ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຊ່າງຈັກສານ ເປັນຊ່າງຫມໍ້ ເປັນຊ່າງຕ່ຳຫູກ ເປັນຊ່າງຫນັງ ເປັນຊ່າງກັລບກ ຯລຯ"

ກ່າວສຽດສີດ້ວຍສິລປວິທຍາຊັ້ນສູງ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຊ່າງນັບ ເປັນນັກຄຳນວນ ເປັນນັກຂຽນ ຯລຯ"

໘. ກ່າວສຽດສີດ້ວຍຄວາມເຈັບໄຂ້

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນໂຣຄເຮື້ອນ ເປັນໂຣຄຝີ ເປັນໂຣຄກາກ ເປັນໂຣຄຄໍ່ ເປັນໂຣຄລົມບ້າໝູ ຯລຯ"

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນໂຣຄເບົາຫວານ ຯລຯ"

໗. ກ່າວສຽດສີດ້ວຍຮູບລັກສນ໌ທີ່ບໍ່ດີ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຄົນສູງເກີນໄປ ເປັນຄົນເຕັ້ຽເກີນໄປ ເປັນຄົນດຳເກີນໄປ ເປັນຄົນຂາວເກີນໄປ ຯລຯ"

ກ່າວສຽດສີດ້ວຍຮູບລັກສນ໌ທີ່ດີ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຄົນບໍ່ສູງນັກ ເປັນຄົນບໍ່ເຕັ້ຽນັກ ເປັນຄົນບໍ່ດຳນັກ ເປັນຄົນບໍ່ຂາວນັກ ຯລຯ"

໘. ກ່າວສຽດສີດ້ວຍກິເລສ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກຖືກຣາຄະຫຸ້ມລ້ອມ ຖືກໂທສະຫຸ້ມລ້ອມ ຖືກໂມຫະຫຸ້ມລ້ອມ ຯລຯ"

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກທີ່ປາສຈາກຣາຄະ ປຣາສຈາກໂທສະ ປາສຈາກໂມຫະ ຯລຯ"

໙. ກ່າວສຽດສີດ້ວຍອາບັຕິ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກຕ້ອງອາບັຕິປາຣາຊິກ ຯລຯ ຕ້ອງອາບັຕິທຸພພາສິຕ ຯລຯ" ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນໂສດາບັນ ຯລຯ"

໑໐. ກ່າວສຽດສີດ້ວຍຄຳດ່າທີ່ຫຍາບ

ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກມີຄວາມປະພຶດດັ່ງອູຖ ມີຄວາມປະພຶດດັ່ງແພະ ມີຄວາມປະພຶດດັ່ງໂຄ ມີຄວາມປະພຶດດັ່ງລາ ມີຄວາມປະພຶດດັ່ງສັຕວ໌ເດັຽຣະສານ ມີຄວາມປະພຶດດັ່ງສັຕວ໌ນຣົກ ພິກສຸເຫລົ່ານັ້ນບໍ່ມີສຸຄຕິ ຫວັງໄດ້ພຽງທຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

ກ່າວສຽດສີດ້ວຍຄຳດ່າທີ່ສຸພາພ

[໔໗] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກ ເປັນບັນທິດ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນທັມກຖິກ ພິກສຸເຫລົ່ານັ້ນບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດຕ່ຳ

[໔໘] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ພິກສຸພວກໃດກັນແນ່ເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣົຖ ເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ ຯລຯ໑

໑໐. ກ່າວສຽດສີດ້ວຍຄຳດ່າທີ່ສຸພາພ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ພິກສຸພວກໃດກັນແນ່ເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນທັມກຖິກ ພິກສຸເຫລົ່ານັ້ນບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດຕ່ຳ

[໕໐] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ພວກເຮົາບໍ່ແມ່ນຄົນຈັນທາລ ຄົນຈັກສານ ນາຍພານ ຊ່າງຣົຖ ຄົນເທຂີ້ເຫຍື້ອ ຯລຯ໑

໑໐. ກ່າວສຽດສີດ້ວຍຄຳດ່າທີ່ສຸພາພ

"ພວກເຮົາບໍ່ແມ່ນບັນທິຕ ຄນສລາດ ນັກປຣາຊຍ໌ ພຫູສູຕ ທັມກຖິກ ພວກເຮົາບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

ເຊີງອັນຖະ :

໑ ດູຄວາມພິສດານ ຂໍ້ ໑໓-໔໕ ໜ້າ ໔໐໕-໔໑໔

ອຸປສັມບັນກ່າວສຽດສີອນຸປສັມບັນ໑

໑. ກ່າວສຽດສີດ້ວຍຊາຕິກຳເນີດ

[໓໑] ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອນຸປສັມບັນເກີ້ເຂີນ ກ່າວກັບອນຸປສັມບັນຊາຕິກຳເນີດຕ່ຳດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດຕ່ຳ ຯລຯ ກ່າວກັບອນຸປສັມບັນຊາຕິກຳເນີດສູງດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດຕ່ຳ ຯລຯ ກ່າວກັບອນຸປສັມບັນຊາຕິກຳເນີດຕ່ຳດ້ວຍ(ຄຳບົ່ງເຖິງ)ຊາຕິກຳເນີດສູງ ຯລຯ

໑໐. ກ່າວສຽດສີດ້ວຍຄຳດ່າ

ກ່າວກັບອນຸປສັມບັນຜູ້ມີຄຸນສົມບັດສູງດ້ວຍຄຳດ່າສຸພາພ ຄື ກ່າວກັບອນຸປສັມບັນຜູ້ເປັນບັນທິຕ ກັບອນຸປສັມບັນຜູ້ສລາດ ກັບອນຸປສັມບັນຜູ້ເປັນນັກປຣາຊຍ໌ ກັບອນຸປສັມບັນຜູ້ເປັນພຫູສູຕ ກັບອນຸປສັມບັນຜູ້ເປັນທັມກຖຶກວ່າ "ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມກຖຶກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດຕ່ຳ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອນຸປສັມບັນເກີ້ເຂີນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີອນຸປສັມບັນບາງພວກເປັນ ຄົນຈັນທາລເປັນຄົນຈັກສານ ເປັນນາຍພານ ເປັນຊ່າງອິຖ ເປັນຄົນເທຂີ້ເຫຍື້ອ ຯລຯ"

໑໐. ກ່າວສຽດສີດ້ວຍຄຳດ່າ

"ໃນພຣະທັມວິນັຍນີ້ ມີອນຸປສັມບັນບາງພວກເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນທັມກຖຶກ ພວກເຂົາບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

ເຊີງອັນຖະ :

໑ ອນຸປສັມບັນຂອງພິກສຸ ຄືຜູ້ບໍ່ໄດ້ອຸປສົມບົທເປັນພິກສຸ ໄດ້ແກ່ ພິກສຸນີ ສາມເນຣ ສາມເນຣີ ສິກຂມານາ ຄຣືຫັສຖ໌ຊາຍ-ຍິງ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອນຸປສັມບັນເກີ້ເຂີນ ກ່າ ວຢ່າງນີ້ວ່າ "ອນຸປສັມບັນພວກໃດກັນແນ່ເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນ ຊ່າງຣົຖ ເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິທຸກກຕທຸກໆຄໍາເວົ້າ ຯລຯ

"ອນຸປສັມບັນພວກໃດກັນແທ້ເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນທັມກຖຶກ" ຕ້ອງອາບັຕິທຸກກຕ ທຸກໆຄໍາເວົ້າ

ອຸປສັມບັນຕ້ອງການຈະດ່າ ຕ້ອງການຈະສົບປມາດ ຕ້ອງການຈະເຮັດໃຫ້ອນຸປສັມບັນເກີ້ເຂີນ ກ່າວ ຢ່າງນີ້ວ່າ "ພວກເຮົາບໍ່ແມ່ນຄົນຈັນທາລ ຄົນຈັກສານ ນາຍພານ ຊ່າງຣົຖ ຄົນເທຂີ້ເຫຍື້ອ ຯລຯ ພວກເຮົາບໍ່ແມ່ນບັນທິຕ ຄົນສລາດ ນັກປຣາຊຍ໌ ພຫູສູຕ ທັມກຖຶກ ພວກເຮົາບໍ່ມີທຸຄຕິ ຫວັງໄດ້ ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸກກຕທຸກໆຄໍາເວົ້າ

໑. ກ່າວສຽດສີດ້ວຍຊາຕິກໍາເນີດຕໍ່າ

[໓໔] ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມ ບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວກັບອຸປສັມບັນຊາຕິກໍາເນີດຕໍ່າດ້ວຍ(ຄໍາບົ່ງເຖິງ)ຊາຕິກໍາເນີດ ຕໍ່າ ຄື ກ່າວກັບອຸປສັມບັນຜູ້ເປັນຄົນຈັນທາລ ກັບອຸປສັມບັນຜູ້ເປັນຄົນຈັກສານ ກັບອຸປສັມບັນຜູ້ ເປັນນາຍພານ ກັບອຸປສັມບັນຜູ້ເປັນຊ່າງຣົຖ ກັບອຸປສັມບັນຜູ້ເປັນຄົນເທຂີ້ເຫຍື້ອວ່າ "ທ່ານ ເປັນຄົນຈັນທາລ ທ່ານເປັນຄົນຈັກສານ ທ່ານເປັນນາຍພານ ທ່ານເປັນຊ່າງຣົຖ ທ່ານເປັນຄົນເທຂີ້ ເຫຍື້ອ" ຕ້ອງອາບັຕິທຸພພາສິຕທຸກໆຄໍາເວົ້າ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວກັບອຸປສັມບັນຊາຕິກໍາເນີດສູງດ້ວຍ(ຄໍາບົ່ງເຖິງ)ຊາຕິກໍາເນີດຕໍ່າ ຄື ກ່າວ ກັບອຸປສັມບັນຊາຕິກໍາເນີດກສັຕຣິຍ໌ ຊາຕິກໍາເນີດພຣາມນ໌ວ່າ "ທ່ານເປັນຄົນຈັນທາລ ທ່ານເປັນຄົນ ຈັກສານ ທ່ານເປັນນາຍພານ ທ່ານເປັນຊ່າງຣົຖ ທ່ານເປັນຄົນເທຂີ້ເຫຍື້ອ" ຕ້ອງອາບັຕິທຸພພາສິຕ ທຸກໆຄໍາເວົ້າ

ກ່າວສຽດສີດ້ວຍຊາຕິກໍາເນີດສູງ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວກັບອຸປສັມບັນຊາຕິກໍາເນີດຕໍ່າດ້ວຍ(ຄໍາບົ່ງເຖິງ)ຊາຕິກໍາເນີດສູງ ຄື ກ່າວ

ກັບອຸປສັມບັນຜູ້ເປັນຈັນທາລ ກັບອຸປສັມບັນຜູ້ເປັນຄົນຈັກສານ ກັບອຸປສັມບັນຜູ້ເປັນນາຍພານ ກັບອຸປສັມບັນຜູ້ເປັນຊ່າງຣົຖ ກັບອຸປສັມບັນຜູ້ເປັນຄົນເທຂີ້ເຫຍື້ອວ່າ "ທ່ານເປັນກສັຕຣິຍ໌ ທ່ານເປັນພຣາມນ໌" ຕ້ອງອາບັຕິທຸພພາສິຕທຸກໆຄຳເວົ້າ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວກັບອຸປສັມບັນຊາຕິກຳເນີດສູງດ້ອຍ(ຄຳບົ່ງເຖິງ)ຊາຕິກຳເນີດສູງ ຄື ກ່າວກັບອຸປສັມບັນຜູ້ເປັນກສັຕຣິຍ໌ ກັບອຸປສັມບັນຜູ້ເປັນພຣາມນ໌ວ່າ "ທ່ານເປັນກສັຕຣິຍ໌ ທ່ານເປັນພຣາມນ໌" ຕ້ອງອາບັຕິທຸພພາສິຕທຸກໆຄຳເວົ້າ

໙. ກ່າວສຽດສີດ້ອຍຊື່

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວກັບອຸປສັມບັນມີຊື່ອເລວດ້ອຍຊື່ທີ່ເລວ ຯລຯ ກ່າວກັບອຸປສັມບັນມີຊື່ອດີດ້ອຍຊື່ທີ່ເລວ ຯລຯ ກ່າວກັບອຸປສັມບັນມີຊື່ທີ່ເລວດ້ອຍຊື່ທີ່ດີ ຯລຯ ກ່າວກັບອຸປສັມບັນມີຊື່ອດີດ້ອຍຊື່ທີ່ດີ ຯລຯ

໑໐. ກ່າວສຽດສີດ້ອຍຄຳດ່າ

ກ່າວກັບອຸປສັມບັນຜູ້ເປັນບັນທິຕ ກັບອຸປສັມບັນຜູ້ສລາດ ກັບອຸປສັມບັນຜູ້ເປັນນັກປຣາຊຍ໌ ກັບອຸປສັມບັນຜູ້ເປັນພຫູສູຕ ກັບອຸປສັມບັນຜູ້ເປັນທັມກຖຶກວ່າ "ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມກຖຶກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸພພາສິຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ອຍຊາຕິກຳເນີດຕ່ຳ

[໓໓] ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະທຳໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣົຖ ເປັນຄົນເທຂີ້ເຫຍື້ອ" ຯລຯ

໑໐. ກ່າວສຽດສີດ້ອຍຄຳດ່າ

"ໃນພຣະທັມວິນັຍນີ້ ມີພິກສຸບາງພວກເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ

ເປັນຫັ຺ມກຖຶກ ພວກທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ” ຕ້ອງອາບັຕິທຸພພາສິຕທຸກໆຄໍາເວົ້າ

໑. ກ່າວສຽດສີດ້ວຍຊາຕິກໍາເນີດຕໍ່າ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສີບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລີ້ນ ກ່າວຢ່າງນີ້ວ່າ “ພິກສຸພວກໃດກັນແນ່ເປັນຄົນຈັນຫາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣົຖ ເປັນຄົນເທຂີ້ເຫຍື້ອ” ຯລຯ

໑໐. ກ່າວສຽດສີດ້ວຍຄໍາດ່າ

“ພິກສຸພວກໃດກັນແນ່ເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນຫັມກຖຶກ” ຕ້ອງອາບັຕິທຸພພາສິຕທຸກໆຄໍາເວົ້າ

໑. ກ່າວສຽດສີດ້ວຍຊາຕິກໍາເນີດ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສີບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລີ້ນ ກ່າວຢ່າງນີ້ວ່າ “ພວກເຮົາບໍ່ແມ່ນຄົນຈັນທາລ ຄົນຈັກສານ ນາຍພານ ຊ່າງຣົຖ ຄົນເທຂີ້ເຫຍື້ອ” ຯລຯ

໑໐. ກ່າວສຽດສີດ້ວຍຄໍາດ່າ

“ພວກເຮົາບໍ່ແມ່ນບັນທິຕ ຄົນສລາດ ນັກປຣາຊຍ໌ ພຫູສູຕ ຫັມກຖຶກ ພວກເຮົາບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ” ຕ້ອງອາບັຕິທຸພພາສິຕທຸກໆຄໍາເວົ້າ

ອຸປສັມບັນກ່າວສຽດສີອນຸປສັມບັນ

໑. ກ່າວສຽດສີດ້ວຍຊາຕິກໍາເນີດ

[໓໔] ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສີບປມາດ ບໍ່ຕ້ອງການຈະເຮັດໃຫ້ອນຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລີ້ນ ກ່າວກັບອນຸປສັມບັນຊາຕິກໍາເນີດຕໍ່າດ້ວຍ(ຄໍາບົ່ງເຖິງ)ຊາຕິກໍາເນີດຕໍ່າ ຯລຯ ກ່າວກັບອນຸປສັມບັນຊາຕິກໍາເນີດສູງດ້ວຍຊາຕິກໍາເນີດຕໍ່າ ຯລຯ ກ່າວກັບອນຸປສັມບັນຊາຕິກໍາເນີດຕໍ່າດ້ວຍຊາຕິກໍາເນີດສູງ ຯລຯ ກ່າວກັບອນຸປສັມບັນຊາຕິກໍາເນີດສູງດ້ວຍຊາຕິກໍາເນີດສູງ ຯລຯ

໑໐. ກ່າວສຽດສີດ້ວຍຄຳດ່າ

ກ່າວກັບອຸປສັມບັນຜູ້ມີຄຸນສົມບັດສູງດ້ວຍຄຳດ່າສຸພາພ ຄື ກ່າວກັບອຸປສັມບັນຜູ້ເປັນບັນດິດ ກັບອຸປສັມບັນຜູ້ເປັນຄົນສລາດ ກັບອຸປສັມບັນຜູ້ເປັນນັກປຣາຊຍ໌ ກັບອຸປສັມບັນຜູ້ເປັນພຫູສູຕ ກັບອຸປສັມບັນຜູ້ເປັນທັມມກຖຶກວ່າ "ທ່ານເປັນບັນດິດ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມມກຖຶກ ທ່ານບໍ່ມີທຸຄຕິຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸພພາສິຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວຢ່າງນີ້ວ່າ "ໃນພຣະທັມວິນັຍນີ້ ມີອຸປສັມບັນບາງພວກເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣົຖ ເປັນຄົນເທຂີ້ເຫຍື້ອ" ຯລຯ

໑໐. ກ່າວສຽດສີດ້ວຍຄຳດ່າ

"ໃນພຣະທັມວິນັຍນີ້ ມີອຸປສັມບັນບາງພວກເປັນບັນດິດ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນທັມມກຖຶກ ພວກເຂົາບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸພພາສິຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ ແຕ່ຕ້ອງການຈະຫລິ້ນ ກ່າວຢ່າງນີ້ວ່າ "ອຸປສັມບັນພວກໃດກັນແນ່ເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣົຖ ເປັນຄົນເທຂີ້ເຫຍື້ອ" ຯລຯ

໑໐. ກ່າວສຽດສີດ້ວຍຄຳດ່າ

"ອຸປສັມບັນພວກໃດກັນແນ່ເປັນບັນດິດ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕເປັນທັມມກຖຶກ" ຕ້ອງອາບັຕິທຸພພາສິຕທຸກໆຄຳເວົ້າ

໑. ກ່າວສຽດສີດ້ວຍຊາຕິກຳເນີດ

ອຸປສັມບັນບໍ່ຕ້ອງການຈະດ່າ ບໍ່ຕ້ອງການຈະສົບປມາດ ບໍ່ຕ້ອງການຈະເຮັດໃຫ້ອຸປສັມບັນເກີ້ເຂີນ

ແຕ່ຕ້ອງກາຣຈະຫລິ້ນ ກ່າວຢ່າງນີ້ວ່າ "ພວກເຮົາບໍ່ແມ່ນຄົນຈັນທາລຄົນຈັກສານ ນາຍພານ ຊ່າງຣົຖ ຄົນເທຂີ້ເທຍື້ອ" ຯລຯ

໑໐. ກ່າວສຽດສີດ້ວຍຄໍາດ່າ

"ພວກເຮົາບໍ່ແມ່ນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕ ເປັນທັມກຖິກພວກເຮົາບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິທຸພພາສິຕທຸກໆຄໍາເວົ້າ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໕] ໑. ພິກສຸມຸ່ງອັນຖະ

໒. ພິກສຸມຸ່ງທັມ

໓. ພິກສຸມຸ່ງພໍ່າສອນ

໔. ພິກສຸວິກົລຈິຕ

໕. ພິກສຸຜູ້ມີຈິຕປັ່ນປ່ວງ

໖. ພິກສຸຜູ້ກະວົນກະວາຍເພາະເວທນາ

໗. ພິກສຸຕົ້ນບັນຍັດ

ໂອມສວາທສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໑. ມຸສາວາທວັຄ ໓. ເປສຸຍຍສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໓. ເປສຸຍຍສິກຂາບົທ

ວ່າດ້ວຍກາຣກ່າວສໍ່ສຽດ

ເຣື້ອງພຣະສັພພັຄຄີຍ໌

[໖໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ໄປຍຸແຍ່ພວກພິກສຸຜູ້ບາດໝາງກັນ ຜິດຖຽງກັນ ວິວາທກັນ ຄືຟັງເຣື່ອງຂ້າງນີ້ແລ້ວໄປບອກຂ້າງພຸ້ນເພື່ອທຳລາຍຂ້າງນີ້ ຟັງເຣື່ອງຂ້າງພຸ້ນແລ້ວມາບອກຂ້າງນີ້ເພື່ອທຳລາຍຂ້າງພຸ້ນ ດ້ວຍເຫຕຸນັ້ນ ຄວາມບາດໝາງທີ່ຍັງບໍ່ເກີດກໍເກີດຂຶ້ນ ແລະຄວາມບາດໝາງທີ່ເກີດຂຶ້ນແລ້ວກໍຮຸນແຮງຍິ່ງຂຶ້ນພິກສຸຜູ້ມັກນ້ອຍສັນໂດສ ຯລຯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໄປຍຸແຍ່ພວກພິກສຸຜູ້ບາດໝາງກັນ ຜິດຖຽງກັນ ວິວາທກັນ ຄືຟັງເຣື່ອງຂ້າງນີ້ແລ້ວໄປບອກຂ້າງພຸ້ນເພື່ອທຳລາຍຂ້າງນີ້ ຟັງເຣື່ອງຂ້າງພຸ້ນແລ້ວມາບອກຂ້າງນີ້ເພື່ອທຳລາຍຂ້າງພຸ້ນ ດ້ວຍເຫຕຸນັ້ນ ຄວາມບາດໝາງທີ່ຍັງບໍ່ເກີດກໍເກີດຂຶ້ນ ແລະຄວາມບາດໝາງທີ່ເກີດຂຶ້ນແລ້ວກໍຮຸນແຮງຍິ່ງຂຶ້ນ” ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານໄປຍຸແຍ່ພວກພິກສຸຜູ້ບາດໝາງກັນ ຜິດຖຽງກັນ ວິວາທກັນ ຄືຟັງເຣື່ອງຂ້າງນີ້ແລ້ວໄປບອກຂ້າງພຸ້ນເພື່ອທຳລາຍຂ້າງນີ້ ຟັງເຣື່ອງຂ້າງພຸ້ນແລ້ວມາບອກຂ້າງນີ້ເພື່ອທຳລາຍຂ້າງພຸ້ນ ດ້ວຍເຫຕຸນັ້ນຄວາມບາດໝາງທີ່ຍັງບໍ່ເກີດກໍເກີດຂຶ້ນ ແລະຄວາມບາດໝາງທີ່ເກີດຂຶ້ນແລ້ວກໍຮຸນແຮງຍິ່ງຂຶ້ນ ແມ່ນແທ້ບໍ” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໄປຍຸແຍ່ພວກພິກສຸຜູ້ບາດໝາງກັນ ຜິດຖຽງກັນ ວິວາທກັນ ຄືຟັງເຣື່ອງຂ້າງນີ້ແລ້ວໄປບອກຂ້າງພຸ້ນເພື່ອທຳລາຍຂ້າງນີ້ ຟັງເຣື່ອງຂ້າງພຸ້ນແລ້ວມາບອກຂ້າງນີ້ເພື່ອທຳລາຍຂ້າງພຸ້ນ ດ້ວຍເຫຕຸນັ້ນ ຄວາມບາດໝາງທີ່ຍັງບໍ່ເກີດກໍເກີດຂຶ້ນ ແລະຄວາມບາດໝາງທີ່ເກີດຂຶ້ນແລ້ວກໍຮຸນແຮງຍິ່ງຂຶ້ນໂມຄບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໖໗] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສໍ່ສຽດພິກສຸ

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໗] ທີ່ຊື່ວ່າ ສໍ່ສຽດ ໄດ້ແກ່ ຄໍາສໍ່ສຽດດ້ວຍອາການ ໒ ຢ່າງ ຄື (໑) ຕ້ອງການໃຫ້ຜູ້ອື່ນຊອບຕົນ (໒) ຕ້ອງການໃຫ້ຜູ້ອື່ນແຕກກັນພິກສຸກ່າວສໍ່ສຽດດ້ວຍອາການ ໑໐ ຢ່າງ ຄື (໑) ຊາຕິກໍາເນີດແດ່ (໒) ຊື່ແດ່ (໓) ຕະກູນແດ່ (໔) ຫນ້າທີ່ການງານແດ່ (໕) ສິລປວິທຍາແດ່ (໖) ຄວາມເຈັບໄຂ້ແດ່ (໗) ຮູບລັກສນ໌ແດ່ (໘) ກິເລສແດ່ (໙) ອາບັຕິແດ່ (໑໐) ຄໍາດ່າແດ່

ບົທພາຊນີຍ໌

ທີ່ຊື່ວ່າ ຊາຕິກໍາເນີດ ໄດ້ແກ່ ຊາຕິກໍາເນີດ ໒ ຢ່າງ ຄື (໑) ຊາຕິກໍາເນີດຕໍ່າ(໒) ຊາຕິກໍາເນີດສູງ

ທີ່ຊື່ວ່າ ຊາຕິກໍາເນີດຕໍ່າ ໄດ້ແກ່ ຊາຕິກໍາເນີດຄົນຈັນທາລ ຊາຕິກໍາເນີດຄົນຈັກສານຊາຕິກໍາເນີດນາຍພານ ຊາຕິກໍາເນີດຊ່າງຣົຖ ຊາຕິກໍາເນີດຄົນເທຂີ້ເຫຍື້ອ໑ ນີ້ຈັດເປັນຊາຕິກໍາເນີດຕໍ່າ

ທີ່ຊື່ວ່າ ຊາຕິກໍາເນີດສູງ ໄດ້ແກ່ ຊາຕິກໍາເນີດກສັຕຣິຍ໌ ຊາຕິກໍາເນີດພຣາມນ໌ ນີ້ຈັດເປັນຊາຕິກໍາເນີດສູງ ຯລຯ ໒

ທີ່ຊື່ວ່າ ຄໍາດ່າ ໄດ້ແກ່ ຄໍາດ່າ ໒ ຢ່າງ ຄື (໑) ຄໍາດ່າຫຍາບ (໒) ຄໍາດ່າສຸພາພ

ທີ່ຊື່ວ່າ ຄໍາດ່າຫຍາບ ໄດ້ແກ່ ຄໍາດ່າວ່າ ທ່ານເປັນອູຖ ທ່ານເປັນແພະ ທ່ານເປັນໂຄທ່ານເປັນລາ ທ່ານເປັນສັຕວ໌ເດັຽຣະສານ ທ່ານເປັນສັຕວ໌ນຣົກ ທ່ານບໍ່ມີສຸຄຕິ ຫວັງໄດ້ແຕ່ທຸຄຕິເທົ່ານັ້ນ ຄໍາດ່າທີ່ກ່ຽວກັບການຮ່ວມປະເວນີ ຫລືຄໍາດ່າທີ່ກ່ຽວກັບອວັຍວະຂອງຊາຍຍິງນີ້ຈັດເປັນຄໍາດ່າຫຍາບ

ທີ່ຊື່ວ່າ ຄໍາດ່າສຸພາພ ໄດ້ແກ່ ຄໍາດ່າວ່າ ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມມກຖິກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ ນີ້ຈັດເປັນຄໍາດ່າສຸພາພ

ອຸປສັມບັນກ່າວສໍ່ສຽດອຸປສັມບັນ

໑. ກ່າວສໍ່ສຽດດ້ວຍຊາຕິກໍາເນີດຕໍ່າ

[໓໙] ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ຄົນຈັນທາລ ຄົນຈັກສານ ນາຍພານ ຊ່າງຣົຖ ຄົນເທຂີ້ເຫຍື້ອ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

ກ່າວສໍ່ສຽດດ້ວຍຊາຕິກໍາເນີດສູງ

ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ ພິກສຸຊື່ນີ້ກ່າວເຖິງທ່ານວ່າ "ທ່ານກສັຕຣິຍ໌ ທ່ານພຣາມນ໌" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

ເຊີງອັນຖະ :

໑ ຄົນເຫຼັກເຫຼື້ອ ຫລືຄົນເທອຸຈຈາຣະ ດູເຊີງອັນຖະ ຂໍ້ ໑໕ ຫນ້າ ໒໐໔

໒ ດູຄວາມພິສດານ ຂໍ້ ໑໕ ຫນ້າ ໒໐໔-໒໐໔

໒. ກ່າວສໍ່ສຽດດ້ວຍຊື່ທີ່ເລວ

ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານອວກັນນກະ ທ່ານຊວກັນນກະ ທ່ານທນິຕຖກະ ທ່ານສວິຕຖກະ ທ່ານກຸລວັທທກະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

ກ່າວສໍ່ສຽດດ້ວຍຊື່ທີ່ດີ

ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານພຸທທຣັກຂິຕ ທ່ານທັມມຣັກຂິຕ ທ່ານສັງຂຣັກຂິຕ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

໓. ກ່າວສໍ່ສຽດດ້ວຍຕະກູນຊັ້ນຕໍ່າ

ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຄົນຕະກູນໂກສິຍະ ທ່ານເປັນຄົນຕະກູນພາຣທວາຊະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

ກ່າວສໍ່ສຽດດ້ວຍຕະກູນຊັ້ນສູງ

ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຄົນຕະກູນໂຄຕມະ ທ່ານເປັນຄົນຕະກູນໂມຄຄັລລານະ ທ່ານເປັນຄົນຕະກູນກັຈຈາຍນະ ທ່ານເປັນຄົນຕະກູນວາເສຕຖະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

໔. ກ່າວສໍ່ສຽດດ້ວຍຫນ້າທີ່ການງານຊັ້ນຕໍ່າ

ອຸປສັມບັນຟັງຄໍາຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຊ່າງຖາກໄມ້ ທ່ານເປັນຄົນເຫຼັກເຫຼື້ອ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາເວົ້າ

ກ່າວສໍ່ສຽດດ້ວຍຫນ້າທີ່ການງານຊັ້ນສູງ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຊາວນາ ທ່ານເປັນພໍ່ຄ້າ ທ່ານເປັນຄົນລ້ຽງໂຄ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າ

໕. ກ່າວສໍ່ສຽດດ້ວຍສິລປວິທຍາຊັ້ນຕ່ຳ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຊ່າງຈັກສານ ທ່ານເປັນຊ່າງຫມໍ້ ທ່ານເປັນຊ່າງຕ່ຳຫູກ ທ່ານເປັນຊ່າງຫນັງ ທ່ານເປັນຊ່າງກັລບກ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສໍ່ສຽດດ້ວຍສິລປວິທຍາຊັ້ນສູງ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຊ່າງນັບ ທ່ານເປັນນັກຄຳນວນ ທ່ານເປັນນັກຂຽນ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າ

໖. ກ່າວສໍ່ສຽດດ້ວຍຄວາມເຈັບໄຂ້

[໔໐] ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນໂຣຄເຮື້ອນ ທ່ານເປັນໂຣຄຝີ ທ່ານເປັນໂຣຄກາກ ທ່ານເປັນໂຣຄຄໍ່ ທ່ານເປັນໂຣຄລົມບ້າຫມູ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນໂຣຄເບົາຫວານ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າ

໗. ກ່າວສໍ່ສຽດດ້ວຍຮູປລັກສູນ໌ທີ່ເລວ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຄົນສູງເກີນໄປ ທ່ານເປັນຄົນເຕັ້ຍເກີນໄປ ທ່ານເປັນຄົນດຳເກີນໄປທ່ານເປັນຄົນຂາວເກີນໄປ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສໍ່ສຽດດ້ວຍຮູປລັກສູນ໌ທີ່ດີ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຄົນບໍ່ສູງນັກ ທ່ານເປັນຄົນບໍ່ເຕັ້ຍນັກ ທ່ານເປັນຄົນບໍ່ດຳນັກທ່ານເປັນຄົນບໍ່ຂາວນັກ" ຕ້ອງອາບັດປາຈິຕຕີຍ໌ທຸກໆຄຳເວົ້າ

໗. ກ່າວສໍ່ສຽດດ້ວຍກິເລສ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຜູ້ຖືກຣາຄະຫຸ້ມລ້ອມ ທ່ານເປັນຜູ້ຖືກໂທສະຫຸ້ມລ້ອມ ທ່ານເປັນຜູ້ຖືກໂມຫະຫຸ້ມລ້ອມ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນຜູ້ປາສຈາກຣາຄະ ທ່ານເປັນຜູ້ປາສຈາກໂທສະ ທ່ານເປັນຜູ້ປາສຈາກໂມຫະ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໘. ກ່າວສໍ່ສຽດດ້ວຍອາບັຕິ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານຕ້ອງອາບັຕິປາຣາຊິກ ທ່ານຕ້ອງອາບັຕິສັງຂາທິເສສ ທ່ານຕ້ອງອາບັຕິຖຸລລັຈຈັຍ ທ່ານຕ້ອງອາບັຕິປາຈິຕຕີຍ໌ ທ່ານຕ້ອງອາບັຕິປາຕິເທສນີຍະ ທ່ານຕ້ອງອາບັຕິທຸກກຕ ທ່ານຕ້ອງອາບັຕິທຸພພາສິຕ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນໂສດາບັນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໑໐. ກ່າວສໍ່ສຽດດ້ວຍຄຳດ່າຫຍາບ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນອູຖ ທ່ານເປັນແພະ ທ່ານເປັນໂຄ ທ່ານເປັນລາ ທ່ານເປັນສັຕວ໌ເດັ່ງຣະສານ ທ່ານເປັນສັຕວ໌ນຣົກ ທ່ານບໍ່ມີສຸຄຕິ ຫວັງໄດ້ແຕ່ທຸຄຕິເທົ່ານັ້ນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ກ່າວສໍ່ສຽດດ້ວຍຄຳດ່າສຸພາພ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວເຖິງທ່ານວ່າ ທ່ານເປັນບັນທິຕ ທ່ານເປັນຄົນສລາດ ທ່ານເປັນນັກປຣາຊຍ໌ ທ່ານເປັນພຫູສູຕ ທ່ານເປັນທັມກຖຶກ ທ່ານບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ" ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

໑. ກ່າວສໍ່ສຽດດ້ວຍຊາຕິກຳເນີດຊັ້ນຕ່ຳ

[໔໑] ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວວ່າ ໃນພຣະທັມວິນັຍ ມີພິກສຸບາງພວກເປັນຄົນຈັນທາລ ເປັນຄົນຈັກສານເປັນນາຍພານ ເປັນຊ່າງອິຖ

ເປັນຄົນເຫຼົ້າເຫຼື້ອ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ" ຕ້ອງອາບັຕິທຸກກຕຸທຸກໆຄຳເວົ້າ

ກ່າວສໍ່ສຽດດ້ອຍຊາຕິກຳເນີດຊັ້ນສູງ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວວ່າ ໃນພຣະທັມວິນັຍ ມີພິກສຸບາງພວກເປັນກສັຕຣິຍ໌ ເປັນພຣາມນ໌ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ" ຕ້ອງອາບັຕິທຸກກຕຸທຸກໆຄຳເວົ້າ ຯລຯ໑

໑໐. ກ່າວສໍ່ສຽດດ້ອຍຄຳດ່າສຸພາພ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວວ່າ ໃນພຣະທັມວິນັຍ ມີພິກສຸບາງພວກເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ເປັນພຫູສູຕ ເປັນທັມກຖິກ ພິກສຸເຫລົ່ານັ້ນບໍ່ມີທຸຄຕິ ຫວັງສຸຄຕິແນ່ນອນ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ" ຕ້ອງອາບັຕິທຸກກຕຸທຸກໆຄຳເວົ້າ

໑. ກ່າວສໍ່ສຽດດ້ອຍຊາຕິກຳເນີດຕ່ຳ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ອນີ້ກ່າວວ່າ ພິກສຸພວກໃດກັນແນ່ເປັນຄົນຈັນທາລ ເປັນຄົນຈັກສານ ເປັນນາຍພານ ເປັນຊ່າງຣິຖ ເປັນຄົນເຫຼົ້າເຫຼື້ອ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ" ຕ້ອງອາບັຕິທຸກກຕຸທຸກໆຄຳເວົ້າ ຯລຯ

ເຊີງອັນຖະ :

໑ ດູຄວາມພິສດາຣ ຂໍ້ ໓໙-໔໐ ຫນ້າ ໔໔໗-໔໓໐

໑໐. ກ່າວສໍ່ສຽດດ້ອຍຄຳດ່າສຸພາພ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວວ່າ ພິກສຸພວກໃດກັນແນ່ເປັນບັນທິຕ ເປັນຄົນສລາດ ເປັນນັກປຣາຊຍ໌ ເປັນພຫູສູຕເປັນທັມກຖິກ ພວກທ່ານບໍ່ມີທຸຄຕິ ຫວັງສຸຄຕິໄດ້ແນ່ນອນ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ" ຕ້ອງອາບັຕິທຸກກຕຸທຸກໆຄຳເວົ້າ

໑. ກ່າວສໍ່ສຽດດ້ວຍຊາຕິກຳເນີດຊັ້ນຕ່ຳ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວວ່າ ພວກເຮົາບໍ່ແມ່ນຄນຈັນທາລ ຄນຈັກສານ ນາຍພານ ຊ່າງອິຖ ຄົນເທຂີ້ເທຍື້ອ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ" ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ ฯລฯ

໑໐. ກ່າວສໍ່ສຽດດ້ວຍຄຳດ່າສຸພາພ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນວ່າ "ພິກສຸຊື່ນີ້ກ່າວວ່າ ພວກເຮົາບໍ່ແມ່ນບັນທິຕ ຄນສລາດ ນັກປຣາຊຍ໌ ເປັນພຫູສູຕ ເປັນທັມກຖຶກພວກເຮົາບໍ່ມີທຸຄຕິ ຫວັງໄດ້ແຕ່ສຸຄຕິເທົ່ານັ້ນ ພິກສຸນັ້ນບໍ່ກ່າວເຖິງຄົນອື່ນແຕ່ກ່າວເຖິງທ່ານ "ຕ້ອງອາບັຕິທຸກກຕທຸກໆຄຳເວົ້າ

ເປັນອາບັຕິຕາມວັຕຖຸ

[໔໘] ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳເວົ້າ

ອຸປສັມບັນຟັງຄຳຂອງອຸປສັມບັນ ແລ້ວໄປກ່າວຍຸແຍ່ອນຸປສັມບັນ ຕ້ອງອາບັຕິທຸກກຕ

ອຸປສັມບັນຟັງຄຳຂອງອນຸປສັມບັນ ແລ້ວໄປກ່າວຍຸແຍ່ອຸປສັມບັນ ຕ້ອງອາບັຕິທຸກກຕ

ອຸປສັມບັນຟັງຄຳຂອງອນຸປສັມບັນ ແລ້ວໄປກ່າວຍຸແຍ່ອນຸປສັມບັນ ຕ້ອງອາບັຕິທຸກກຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໑. ມຸສາວາທວັຄ ໓. ເປສຸຍຍສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໓] ໑. ພິກສຸບໍ່ຕ້ອງກາຣໃຫ້ຜູ້ອື່ນຊອບຕນ

໒. ພິກສຸບໍ່ຕ້ອງກາຣໃຫ້ຜູ້ອື່ນແຕກກັນ

໓. ພິກສຸວິກົລຈິຕ

໔. ພິກສຸຕົ້ນບັນຍັດ

ເປສຸຍປສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໔. ປທໂສທັມມສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໔. ປທໂສທັມມສິກຂາບົທ

ວ່າດ້ວຍການໃຫ້ກ່າວທັມເປັນບົທໆ

ເລື້ອງພຣະສັພພັຄຄີຍ໌

[໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ສອນອຸບາສົກໃຫ້ກ່າວທັມແຂ່ງກັນເປັນບົທໆພວກອຸບາສົກຈຶ່ງບໍ່ເຄົາຣົພ ບໍ່ຢຳເກງ ບໍ່ປະຕິບັດໃຫ້ເໝາະສົມໃນພິກສຸທັງຫລາຍພິກສຸຜູ້ມັກນ້ອຍສັນໂດສ ຯລຯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງສອນອຸບາສົກໃຫ້ກ່າວທັມແຂ່ງກັນເປັນບົທໆລະ ພວກອຸບາສົກຈຶ່ງບໍ່ເຄົາຣົພ ບໍ່ຢຳເກງ ບໍ່ປະຕິບັດໃຫ້ເໝາະສົມໃນພິກສຸທັງຫລາຍ” ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເລື້ອງນີ້ເປັນຕົ້ນເຫດຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານສອນອຸບາສົກໃຫ້ກ່າວທັມແຂ່ງກັນເປັນບົທໆພວກອຸບາສົກຈຶ່ງບໍ່ເຄົາຣົພ ບໍ່ຢຳເກງ ບໍ່ປະຕິບັດໃຫ້ເໝາະສົມໃນພິກສຸທັງຫລາຍ ແມ່ນແທ້ບໍ” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ພິກສຸທັງຫລາຍ ຈັ່ງໃດພວກທ່ານຈຶ່ງສອນອຸບາສົກໃຫ້ກ່າວທັມແຂ່ງກັນເປັນບົທໆລະ ພວກອຸບາສົກຈຶ່ງບໍ່ເຄົາຣົພ ບໍ່ຢຳເກງບໍ່ປະຕິບັດໃຫ້ເໝາະສົມໃນພິກສຸທັງຫລາຍ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໔. ປທໂສທັມມສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໔໕] ກໍ ພິກສຸໃດສອນອນຸປສັມບັນໃຫ້ກ່າວທັມເປັນບົທໆຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄ ຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ອນຸປສັມບັນ ຄື ຍົກເວັ້ນພິກສຸແລະພິກສຸນີ ນອກນັ້ນຊື່ວ່າອນຸປສັມບັນ

ທີ່ຊື່ວ່າ ເປັນບົທໆໄດ້ແກ່ ກ່າວເປັນບົທ ກ່າວເປັນອນຸບົທ ກ່າວເປັນອນຸອັກຂຣະກ່າວເປັນອນຸພຍັນຊນະ

ທີ່ຊື່ວ່າ ກ່າວເປັນບົທ ຄື ພິກສຸກັບອນຸປສັມບັນເລີ້ມສວດພ້ອມກັນ ຈົບລົງພ້ອມກັນ

ທີ່ຊື່ວ່າ ກ່າວເປັນອນຸບົທ ຄື ເລີ້ມສວດແຍກກັນ ແຕ່ຈົບລົງພ້ອມກັນ

ທີ່ຊື່ວ່າ ກ່າວເປັນອນຸອັກຂຣະ ຄື ເມື່ອພິກສຸສອນວ່າ “ຣູປໍ ອນິຈຸຈໍ” ແຕ່ອນຸປສັມບັນສວດພ້ອມກັນວ່າ໑ “ຣູ” ແລ້ວຢຸດ

ທີ່ຊື່ວ່າ ກ່າວເປັນອນຸພຍັນຊນະ ຄື ພິກສຸສອນໃຫ້ວ່າ “ຣູປໍ ອນິຈຸຈໍ” ແຕ່ອນຸປສັມບັນເປັ່ງສຽງຮັບພ້ອມກັນ໑ວ່າ “ເວທນາ ອນິຈຸຈາ”

ບົທ ອນຸບົທ ອນຸອັກຂຣະ ອນຸພຍັນຊນະ ທັງຫມົດນີ້ຊື່ວ່າທັມເປັນບົທໆ

ທີ່ຊື່ວ່າ ທັມ ໄດ້ແກ່ ພຸທຫພາສິຕ ສາວົກພາສິຕ ຣືສີພາສິຕ ເທວດາພາສິຕ ທີ່ປະກອບດ້ວຍອັນຖະທີ່ປະກອບດ້ວຍທັມ

ເຊີງອັນຖະ :
໑ ຄືເປັ່ງສຽງຮັບພ້ອມກັນກັບພິກສຸຜູ້ສອນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໔. ປທໂສທັມມສິກຂາບົທ ອນາປັຕຕິວາຣ

ຄຳວ່າ ສອນໃຫ້ກ່າວ ຄື ສອນໃຫ້ກ່າວເປັນບົທໆຕ້ອງອາບັຕິປາຈິຕຕິຍ໌ທຸກໆບົທ ສອນໃຫ້ກ່າວເປັນອັກສຣໆຕ້ອງອາບັຕິປາຈິຕຕິຍ໌ທຸກໆອັກສຣ

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[໔໗] ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ສອນໃຫ້ກ່າວທັມເປັນບົທໆຕ້ອງອາບັຕິປາຈິຕຕິຍ໌

ອນຸປສັມບັນ ພິກສຸບໍ່ແນ່ໃຈ ສອນໃຫ້ກ່າວທັມເປັນບົທໆຕ້ອງອາບັຕິປາຈິຕຕິຍ໌

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ສອນໃຫ້ກ່າວທັມເປັນບົທໆຕ້ອງອາບັຕິປາຈິຕຕິຍ໌

ທຸກທຸກກຕ

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ສອນໃຫ້ກ່າວທັມເປັນບົທໆຕ້ອງອາບັຕິທຸກກຕ

ອຸປສັມບັນ ພິກສຸບໍ່ແນ່ໃຈ ສອນໃຫ້ກ່າວທັມເປັນບົທໆຕ້ອງອາບັຕິທຸກກຕ

ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ສອນໃຫ້ກ່າວທັມເປັນບົທໆບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໘] ໑. ພິກສຸຜູ້ຮຽນພຣະພຸທທພຈນະທີ່ອາຈາຣຍ໌ສອນໃຫ້ວ່າພຣະພຸທທວຈນະພ້ອມກັນກັບອນຸປສັມບັນ

໔. ພິກສຸຜູ້ສາທຍາຍພ້ອມກັນ

໖. ພິກສຸຜູ້ຊ່ວຍອນຸປສັມບັນຜູ້ສວດຄັມພີຣ໌ທີ່ຄ່ອງສ່ວນຫລາຍ໑ ສວດ(ສ່ວນທີ່ບໍ່ຄ່ອງ)ພ້ອມກັນກັບຕົນ

໔. ພິກສຸຜູ້ໃຫ້ອຸປສົມບັນທີ່ສວດຄາດເຄື່ອນໄປສວດໃຫມ່ພ້ອມກັນກັບຕົນ
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ປທໂສທັມມສິກຂາບົທທີ ໔ ຈົບ

ເຊີງອັນຖະ :
໑ ເຍພຸຍຸເຍນ ປຄຸນໍ ຄນິຖໍ ຄັມພີຣ໌ທີ່ຄ່ອງສ່ວນຫລາຍ ຫມາຍເຖິງວ່າ "ຖ້າຄາຖາ ໑ ຄາຖາ ຈຳບໍ່ໄດ້ເສັງ ໑ ບາທ
ສ່ວນບາທທີ່ເຫລືອຈຳໄດ້" (ສເຈ ເອກຄາຖາຍ ເອໂກ ປາໂທ ນາຄຈຸສຕິ, ອວເສສາ ອາຄຈຸສນຸຕິ, ອຍໍ ເຍພຸຍຸເຍນ ປຄຸນຄນຸໂຖ ນາມ - ກງຂາ. ຕີກາ ໓໗໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໕. ສຫເສຍຍສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໕. ສຫເສຍຍສິກຂາບົທ

ວ່າດ້ວຍການນອນຮ່ວມກັນ

ເຣື້ອງພິກສຸບວຊໃຫມ່

[໔໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ອັຄຄາຣູວເຈດີຍ໌ ເຂຕເມືອງອາຣູວີ ສມັຍນັ້ນ ພວກອຸບາສິກມາຟັງທັມທີ່ອາຣາມ ເມື່ອພຣະທັມກຖຶກສະແດງທັມແລ້ວ ພຣະພິກສຸເຖຣະທັງຫລາຍກັບໄປທີ່ຢູ່ ພວກພິກສຸບວຊໃຫມ່ນອນຮ່ວມກັນກັບອຸບາສິກໃນໂຮງສັນ ຂາດສຕິສັມປຊັຍປະເປືອຍກາຍ ເຫລີ ໂກນ ພວກອຸບາສິກພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍຈຶ່ງນອນຂາດສຕິສັມປຊັຍປະເປືອຍກາຍເຫລີ ໂກນ ລະ"ພິກສຸທັງຫລາຍໄດ້ຍິນພວກອຸບາສິກຕຳຫນິ ປະນາມ ໂພນທະນາແລ້ວ ບັນດາພິກສຸຜູ້ມັກນ້ອຍສັນໂດສ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸຈຶ່ງນອນຂາດສຕິສັມປຊັຍປະເປືອຍກາຍ

ລະເນອ ກຣນ ລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸບວຊໃຫມ່ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັ້ງຫລາຍວ່າ "ພິກສຸທັ້ງຫລາຍ ຊາບວ່າ ພວກພິກສຸນອນຮ່ວມກັນກັບອນຸປສັມບັນແມ່ນແທ້ບໍ່" ພິກສຸທັ້ງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ຯລຯ ພິກສຸທັ້ງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງນອນຮ່ວມກັບອນຸປສັມບັນລະພິກສຸທັ້ງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງ ໃຫ້ພິກສຸທັ້ງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດນອນຮ່ວມກັນກັບອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັ້ງຫລາຍຢ່າງນີ້

ເຣື່ອງພິກສຸບວຊໃຫມ່ ຈົບ

ເຣື້ອງສາມເນຣຣາຫຸລ

[໕໐] ຄັນພຣະຜູ້ມີພຣະພາຄປະທັບຢູ່ ນະ ເມືອງອາລະວີ ຕາມພຣະອັທຍາສັຍແລ້ວໄດ້ສເດັຈຈາຣິກໄປທາງກຸງໂກສັມພີ ສເດັຈຈາຣິກໄປໂດຍລຳດັບຈົນເຖິງກຸງໂກສັມພີ ຊາບວ່າພຣະອົງຄ໌ປະທັບຢູ່ ນະ ພທຣິກາຣາມ ເຂຕກຸງໂກສັມພີນັ້ນພິກສຸທັ້ງຫລາຍໄດ້ກ່າວກັບທ່ານຣາຫຸລ໑ ດັ່ງນີ້ວ່າ "ທ່ານພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ ພິກສຸບໍ່ເພິ່ງນອນຮ່ວມກັນກັບອນຸປສັມບັນ ທ່ານຣາຫຸລ ທ່ານຈົ່ງຫາທີ່ນອນ"ຄືນນັ້ນ ທ່ານຣາຫຸລຫາທີ່ນອນບໍ່ໄດ້ຈຶ່ງໄປນອນໃນວັຈກຸຕິ໔ຄັນເວລາໃກ້ຮຸ່ງ ພຣະຜູ້ມີພຣະພາຄຊົງຕື່ນບັນທົມສເດັຈໄປວັຈກຸຕິ ຄັນເຖິງແລ້ວຈຶ່ງຊົງພຣະກາສະ ແມ່ນທ່ານຣາຫຸລກໍກະແຮມຮັບ "ໃຜຢູ່ໃນທີ່ນີ້" "ຂ້າພຣະພຸທທເຈົ້າຣາຫຸລ ພຣະພຸທທເຈົ້າຂ້າ" "ຣາຫຸລ ທ່ານມານອນທີ່ນີ້ເຮັດຫຍັງ" ເທື່ອນັ້ນ ທ່ານຣາຫຸລຈຶ່ງຂາບທູລເຣື່ອງນັ້ນໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັ້ງຫລາຍວ່າ "ພິກສຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກສຸນອນຮ່ວມກັນກັບອນຸປສັມບັນໄດ້ ໔-໓ ຄືນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັ້ງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ພຣະຣາຫຸລຍັງບໍ່ອຸເປັນສາມເນນຣຢູ່

໔ "ວັຈກຸຕີ" ຄືຫ້ອງສຸຂາ

ພຣະອນຸບັນຍັດ

[໕໑] ອີກຢ່າງນຶ່ງ ພິກສຸໃດນອນຮ່ວມກັນກັບອນຸປສັມບັນເກີນ ໒-໓ ຄືນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງສາມເນນຣຣາຫຸລ ຈົບ

ສິກຂາບົທວິພັງຄ໌

[໕໒] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ອນຸປສັມບັນ ຄື ຍົກເວັ້ນພິກສຸ ນອກນັ້ນຊື່ວ່າອນຸປສັມບັນ

ຄຳວ່າ ເກີນ ໒-໓ ຄືນ ຄື ຫລາຍກວ່າ ໒-໓ ຄືນ

ຄຳວ່າ ຮ່ວມກັນ ຄື ດ້ວຍກັນ

ທີ່ຊື່ວ່າ ທີ່ນອນ ໄດ້ແກ່ ທີ່ນອນມີເຄື່ອງມຸງທັງຫມົດ ມີເຄື່ອງບັງທັງຫມົດ ຫລືມີເຄື່ອງມຸງສ່ວນຫລາຍ ມີເຄື່ອງບັງສ່ວນຫລາຍ

ຄຳວ່າ ນອນ ຄວາມວ່າ ເມື່ອດວງອາທິຕຍ໌ອັສດົງໃນວັນທີ ໔ ເມື່ອອນຸປສັມບັນນອນພິກສຸກໍນອນ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອພິກສຸນອນອນຸປສັມບັນກໍນອນ ຕ້ອງອາບັຕິປາຈິຕຕີຍ໌ຫລືທັງພິກສຸແລະອນຸປສັມບັນນອນ ຕ້ອງອາບັຕິປາຈິຕຕີຍ໌ ພິກສຸລຸກຂຶ້ນແລ້ວກັບໄປນອນອີກ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໕໓] ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ນອນຮ່ວມກັນເກີນ ໒-໓ຄືນ ຕ້ອງອາບັຕິປາຈິຕຕີຍ໌

ອນຸປສັມບັນ ພິກສຸບໍ່ແນ່ໃຈ ນອນຮ່ວມກັນເກີນ ໒-໓ ຄືນ ຕ້ອງອາບັຕິປາຈິຕຕີຍ໌

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ນອນຮ່ວມກັນເກີນ ໔-໓ ຄືນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ທີ່ນອນມີເຄື່ອງມຸງເຄິ່ງດຽວ ມີເຄື່ອງບັງເຄິ່ງດຽວ ຕ້ອງອາບັຕິທຸກກຕ

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອຸປສັມບັນ ພິກສຸບໍ່ແນ່ໃຈ ນອນຮ່ວມກັນເກີນ ໔-໓ ຄືນ ຕ້ອງອາບັຕິທຸກກຕ

ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ນອນຮ່ວມກັນເກີນ ໔-໓ ຄືນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໔] ໑. ພິກສຸນອນພັກ ໔-໓ ຄືນ

໔. ພິກສຸພັກຕ່ຳກວ່າ ໔-໓ ຄືນ

໓. ພິກສຸພັກ ໔ ຄືນ ພອຄືນທີ ໓ ອອກໄປກ່ອນອຣຸນຂຶ້ນແລ້ວກັບເຂົ້າມາ

໔. ພິກສຸນອນຮ່ວມກັນໃນທີ່ນອນມີເຄື່ອງມຸງທັງໝົດ ແຕ່ບໍ່ມີເຄື່ອງບັງທັງໝົດ

໕. ພິກສຸນອນຮ່ວມກັນໃນທີ່ນອນມີເຄື່ອງບັງທັງໝົດ ແຕ່ບໍ່ມີເຄື່ອງມຸງທັງໝົດ

໖. ພິກສຸນອນຮ່ວມກັນໃນທີ່ນອນບໍ່ມີເຄື່ອງມຸງສ່ວນຫລາຍ ບໍ່ມີເຄື່ອງບັງສ່ວນຫລາຍ

໗. ພິກສຸນັ່ງໃນເມື່ອອນຸປສັມບັນນອນ

໘. ພິກສຸນອນ ອນຸປສັມບັນນັ່ງ

໙. ພິກສຸນັ່ງແລະອນຸປສັມບັນກໍນັ່ງ

໑໐. ພິກສຸວິກົລຈິຕ

໑໑. ພິກສຸຕົ້ນບັນຍັດ

ສຫເສຍຍສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໑. ມຸສາວາທວັຄ ໖. ທຸຕິຍສຫເສຍຍສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໕. ກຸຕິສຫເສຍຍສິກຂາບົທ
ວ່າດ້ວຍການນອນຮ່ວມກັນຂໍ້ທີ ໔

ເຣື້ອງພຣະອນຸຣຸທທະ
[໕໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ທ່ານພຣະອນຸຣຸທທະຍ່າງທາງໄປກຸງສາວັຕຖີແຄວ້ນໂກສົລເຖິງຫມູ່ບ້ານຕາແສງນຶ່ງໃນເວລາເຢັນ ສມັຍນັ້ນ ມີຍິງຄົນນຶ່ງຈັດສ້າງເຮືອນພັກແຮມໄວ້ໃນຫມູ່ບ້ານນັ້ນ ຄັ້ງນັ້ນ ທ່ານພຣະອນຸຣຸທທະເຂົ້າໄປຫາຍິງນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບຍິງນັ້ນດັ່ງນີ້ວ່າ "ນ້ອງຍິງ ຖ້າທ່ານບໍ່ລຳບາກໃຈ ອາຕມາຂໍພັກໃນເຮືອນພັກແຮມຈັກ ໑ ຄືນ "ນາງກ່າວວ່າ "ນິມົນຕ໌ທ່ານພັກເຖີດ ຂນ້ອຍ" ຝ່າຍພວກຄົນຍ່າງທາງເຫລົ່າອື່ນກໍໄດ້ເຂົ້າໄປຫາຍິງນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບຍິງນັ້ນດັ່ງນີ້ວ່າ "ຍານາງຂນ້ອຍ ຫາກຍານາງບໍ່ລຳບາກໃຈ ພວກເຮົາຂໍພັກໃນເຮືອນພັກແຮມຈັກ ໑ ຄືນ" ນາງກ່າວວ່າ "ຫາກພຣະຄຸນເຈົ້າຜູ້ເຂົ້າມາກ່ອນອນຸຍາຕກໍເຊີນພວກທ່ານພັກແຮມໄດ້" ພວກຄົນຍ່າງທາງຈຶ່ງເຂົ້າໄປຫາທ່ານພຣະອນຸຣຸທທະເຖິງທີ່ພັກ ຄັນເຖິງແລ້ວຈຶ່ງກ່າວກັບທ່ານພຣະອນຸຣຸທທະດັ່ງນີ້ວ່າ "ທ່ານຂນ້ອຍ ຖ້າທ່ານບໍ່ລຳບາກໃຈ ພວກຜູ້ຂ້າຂໍພັກໃນເຮືອນພັກແຮມຈັກ ໑ ຄືນ" ທ່ານພຣະອນຸຣຸທທະກ່າວວ່າ "ເຊີນທ່ານທັງຫລາຍພັກເຖີດ" ຄັ້ງນັ້ນແລ ຍິງນັ້ນມີຈິຕຮັກໃຄ່ໃນທ່ານພຣະອນຸຣຸທທະຕັ້ງແຕ່ແຣກເຫັນ ດັ່ງນັ້ນ ນາງຈຶ່ງເຂົ້າໄປຫາພຣະເຖຣະເຖິງທີ່ພັກ ຄັນເຖິງແລ້ວຈຶ່ງກ່າວກັບທ່ານວ່າ "ພຣະຄຸນເຈົ້າຢູ່ປະປົນກັບຄົນພວກນີ້ບໍ່ສະ ດວກ ທາງທີ່ດີ ຂະນ້ອຍຄວຣຈັດຕຽງຂ້າງໃນຫ້ອງຖວາຍພຣະຄຸນເຈົ້າ "ທ່ານພຣະອນຸຣຸທທະຮັບນິມົນຕ໌ໂດຍດຸສນີພາພ ຄັນແລ້ວ ນາງຈຶ່ງຈັດຕຽງຂ້າງໃນຫ້ອງຖວາຍດ້ວຍຕົນເອງແລ້ວແຕ່ງຕົວ ປະພົມດ້ວຍເຄື່ອງຫອມ ເຂົ້າໄປຫາພຣະເຖຣະເຖິງທີ່ພັກ ຄັນເຖິງແລ້ວຈຶ່ງກ່າວກັບທ່ານພຣະອນຸຣຸທທະນັ້ນດັ່ງນີ້ວ່າ "ພຣະຄຸນເຈົ້າ ພຣະຄຸນເຈົ້າຮູບງາມ ຫນ້າເບິ່ງ ຫນ້າຊົມ ສ່ວນຂະນ້ອຍກໍຮູບງາມ ຫນ້າເບິ່ງ ຫນ້າຊົມ ທາງທີ່ດີ ຂະນ້ອຍຄວຣເປັນພັຣຍາຂອງພຣະຄຸນເຈົ້າ" ເມື່ອນາງກ່າວຢ່າງນີ້ ທ່ານພຣະອນຸຣຸທທະໄດ້ນິ່ງເສັຽ ແມ່ນຄັ້ງທີ ໔ ຯລຯ ແມ່ນຄັ້ງທີ ໖ ຍິງນັ້ນກໍກ່າວກັບທ່ານ ພຣະອນຸຣຸທທະນັ້ນດັ່ງນີ້ວ່າ "ພຣະຄຸນເຈົ້າ ພຣະຄຸນເຈົ້າຮູບງາມ ຫນ້າເບິ່ງ ຫນ້າຊົມ ສ່ວນຂະນ້ອຍ

ກໍຮູບງາມ ຫນ້າເບິ່ງ ຫນ້າຊົມ ທາງທີ່ດີ ຂໍໃຫ້ພຣະຄຸນເຈົ້າຮັບຕົວຂະນ້ອຍແລະສົມບັຕທັງປວງເຖີດ"

ແມ່ນຄັ້ງທີ ໖ ທ່ານພຣະອນຸຣຸທທະກໍໄດ້ນິ່ງເສັຽ

ລຳດັບນັ້ນ ນາງຈຶ່ງເປື້ອງຜ້າອອກ ຍ່າງແດ່ ຢືນແດ່ ນັ່ງແດ່ ນອນແດ່ຕໍ່ໜ້າພຣະເຖຣະ ເທື່ອນັ້ນ ພຣະເຖຣະສຳຣວມອິນທຣີຍ໌ ບໍ່ແລດູ ບໍ່ເວົ້າກັບນາງ ຍິງນັ້ນຄິດວ່າ ໜ້າອັສຈັນ ບໍ່ເຄີຍມີຄົນສ່ອນຫລາຍສິ່ງຊັພຍ໌ມາໃຫ້ເຮົາ ໑໐໐ ກຫາປ<u>ນ</u>ະແດ່ ໑,໐໐໐ ກຫາປ<u>ນ</u>ະແດ່ ແຕ່ພຣະສມ<u>ນ</u>ະຮູບນີ້ເຮົາອ້ອນວອນ ກໍຍັງບໍ່ປຣາຖນາທີ່ຈະຮັບຕົວເຮົາແລະສົມບັຕທັງປວງ ຈຶ່ງນຸ່ງຜ້າແລ້ວນ້ອມສີ<u>ສ</u>ະລົງແທບຕີນທ່ານພຣະອນຸຣຸທ<u>ທ</u>ະຂໍຂມາວ່າ "ພຣະຄຸ<u>ນ</u>ເຈົ້າ ຂະນ້ອຍໄດ້ກະທຳຄວາມຜິດເພາະຄວາມໂງ່ເຂົາເບົາປັນຍາ ທີ່ໄດ້ກະທຳຢ່າງນີ້ ຂໍພຣະຄຸ<u>ນ</u>ເຈົ້າຈົ່ງໃຫ້ອ<u>ພັ</u>ຍໂທ<u>ສ</u>ແກ່ຂະນ້ອຍເພື່ອສຳຣວມຕໍ່ໄປ" ພຣະເຖຣະກ່າວວ່າ "ນ້ອງຍິງ ເອົາເຖິດ ກາຣທີ່ທ່ານໄດ້ທຳຄວາມຜິດໄປເພາະຄວາມໂງ່ເຂົາເບົາປັນຍາ ທີ່ໄດ້ກະທຳຢ່າງນີ້ເພາະເຫຕຸທີ່ເຫັນຄວາມຜິດເປັນຄວາມຜິດ ແລ້ວແກ້ໄຂໃຫ້ ຖືກຕ້ອງ ຂໍ້ນັ້ນອາຕມາຍອມຮັບ ເພາະກາຣທີ່ບຸຄຄົລເຫັນຄວາມຜິດເປັນຄວາມຜິດແລ້ວແກ້ໄຂໃຫ້ ຖືກຕ້ອງແລະສຳຣວມຕໍ່ໄປ ນີ້ເປັນຄວາມຈະເຣີນໃນວິນັຍຂອງພຣະອຣິຍະ"

ຄັນຣາຕຣີນັ້ນຜ່ານພົ້ນໄປ ຍິງນັ້ນໄດ້ເອົາຂອງຄ້ຽວຂອງ<u>ສັ</u>ນຢ່າງດີປະເຄນທ່ານພຣະອນຸຣຸທ<u>ທ</u>ະດ້ວຍຕົນເອງ ຈົນເມື່ອທ່ານພຣະອນຸຣຸທ<u>ທ</u>ະສັນເສັດແລ້ວ ລະມືຈາກບາຕຣ ຈຶ່ງອ<u>ພິ</u>ວາທແລ້ວນັ່ງ <u>ນ</u>ະ ທີ່ສົມຄວຣ ທ່ານພຣະອນຸຣຸທ<u>ທ</u>ະໄດ້ຊີ້ແຈງໃຫ້ຍິງນັ້ນຜູ້ນັ່ງຢູ່ <u>ນ</u>ະ ທີ່ສົມຄວຣເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍ<u>ທັ</u>ມມີກຖາ ລຳດັບນັ້ນ ຍິງນັ້ນຊຶ່ງທ່ານພຣະອນຸຣຸທ<u>ທ</u>ະໄດ້ຊີ້ແຈງໃຫ້ເຫັນຊັດ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍ<u>ທັ</u>ມມີກຖາແລ້ວ ໄດ້ກ່າວກັບທ່ານພຣະອນຸຣຸທ<u>ທ</u>ະວ່າ "ພຣະຄຸ<u>ນ</u>ເຈົ້າ <u>ພ</u>າ<u>ສິ</u>ຕຂອງທ່ານຊັດແຈ້ງມ່ວນຍິ່ງນັກ ພຣະຄຸ<u>ນ</u>ເຈົ້າ <u>ພ</u>າ<u>ສິ</u>ຕຂອງທ່ານຊັດແຈ້ງມ່ວນຍິ່ງນັກ ພຣະຄຸ<u>ນ</u>ເຈົ້າປະກາດ<u>ທັ</u>ມແຈ່ມແຈ້ງໂດຍປະກາຣຕ່າງໆປຽບເໝືອນບຸຄຄົລຫງາຍຂອງທີ່ຄວ້ຳ ເປີດຂອງທີ່ປິດ ບອກທາງແກ່ຜູ້ຫລົງທາງ ຫລືຕາມປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຕາດີຈັກເຫັນຮູບ ພຣະຄຸ<u>ນ</u>ເຈົ້າ ຂະນ້ອຍນີ້ຂໍເຖິງພຣະຜູ້ມີພຣະ<u>ພ</u>າຄພຣະອົງຄ໌ນັ້ນພ້ອມທັງພຣະ<u>ທັ</u>ມແລະພຣະສົງ<u>ຄ໌</u>ເປັນສຣ<u>ນ</u>ະ ຂໍພຣະຄຸ<u>ນ</u>ເຈົ້າຈົ່ງຊົງຈຳຂະນ້ອຍວ່າເປັນອຸບາສິກາຜູ້ເຖິງສຣ<u>ນ</u>ະ ຕັ້ງແຕ່ວັນນີ້ເປັນຕົ້ນໄປຈົນຕລອດຊີວິຕ"

ຈາກນັ້ນພຣະເຖຣະຍ່າງທາງໄປກຸງສາວັຕຖີແລ້ວແຈ້ງເຣື້ອງນັ້ນໃຫ້<u>ພິ</u>ກ<u>ສຸ</u>ທັງຫລາຍຊາບ ບັນດາ<u>ພິ</u>ກ<u>ສຸ</u>ຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອນຸຣຸທ<u>ທ</u>ະຈຶ່ງນອນຮ່ວມກັບມາຕຸຄາມລະ" ຄັນ<u>ພິ</u>ກ<u>ສຸ</u>ເຫລົ່ານັ້ນຕຳໜິທ່ານພຣະອນຸຣຸທ<u>ທ</u>ະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະ<u>ພ</u>າຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອນຸຣຸທທະວ່າ "ອນຸຣຸທທະ ຊາບວ່າ ທ່ານນອນຮ່ວມກັບມາຕຸຄາມ ຈິງຫລື" ທ່ານພຣະອນຸຣຸທທະ ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕຳຫນິວ່າ "ຯລຯ ອນຸຣຸທທະ ຈັ່ງໃດທ່ານຈຶ່ງນອນຮ່ວມກັບມາຕຸຄາມລະ ອນຸຣຸທທະ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໘] ກໍ ພິກສຸໃດນອນຮ່ວມກັນກັບມາຕຸຄາມ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອນຸຣຸທທະ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໑. ມຸສາວາທວັຄ ໖. ທຸຕິຍສຫເສຍຍສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໕໗] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານ ໂຕແມ່ ຍິງມນຸສຍ໌ນັ້ນໂດຍທີ່ສຸດຈົນເມື່ອເດັກຍິງຊຶ່ງເກີດໃນມື້ນັ້ນ ຍິງໂຕກວ່ານີ້ບໍ່ຕ້ອງກ່າວເຖິງ

ຄຳວ່າ ຮ່ວມກັນ ຄື ດ້ວຍກັນ

ທີ່ຊື່ວ່າ ທີ່ນອນ ໄດ້ແກ່ ທີ່ນອນມີເຄື່ອງມຸງທັງຫມົດ ມີເຄື່ອງບັງທັງຫມົດ ຫລືມີເຄື່ອງມຸງສ່ວນຫລາຍ ມີເຄື່ອງບັງສ່ວນຫລາຍ

ຄຳວ່າ ນອນ ຄວາມວ່າ ເມື່ອດວງອາທິຕຍ໌ອັສດົງ ເມື່ອມາຕຸຄາມນອນ ພິກສຸກໍນອນ

ຕ້ອງອາບັຕິປາຈິຕຕີຍ໌ ເມື່ອພິກສຸນອນ ມາຕຸຄາມກໍນອນ ຕ້ອງອາບັຕິປາຈິຕຕີຍ໌ ຫລືທັງພິກສຸແລະມາຕຸຄາມນອນ ຕ້ອງອາບັຕິປາຈິຕຕີຍ໌ ພິກສຸລຸກຂຶ້ນແລ້ວກັບໄປນອນອີກ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໕໗] ມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ນອນຮ່ວມກັນ ຕ້ອງອາບັຕິປາຈິຕຕີຍ໌

ມາຕຸຄາມ ພິກສຸບໍ່ແນ່ໃຈ ນອນຮ່ວມກັນ ຕ້ອງອາບັຕິປາຈິຕຕີຍ໌

ມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ນອນຮ່ວມກັນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກົຕ

ທີ່ນອນມີເຄື່ອງມຸງເຄິ່ງດຽວ ມີເຄື່ອງບັງເຄິ່ງດຽວ ພິກສຸນອນຮ່ວມກັນ ຕ້ອງອາບັຕິທຸກກົຕ

ພິກສຸນອນຮ່ວມກັນກັບນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານໂຕແມ່ ຕ້ອງອາບັຕິທຸກກົຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກົຕ

ບໍ່ແມ່ນມາຕຸຄາມ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໘] ໑. ພິກສຸນອນຮ່ວມກັນໃນທີ່ນອນມີເຄື່ອງມຸງທັງຫມົດ ແຕ່ບໍ່ມີເຄື່ອງບັງທັງຫມົດ

໒. ພິກສຸນອນຮ່ວມກັນໃນທີ່ນອນມີເຄື່ອງບັງທັງຫມົດ ແຕ່ບໍ່ມີເຄື່ອງມຸງທັງຫມົດ

໓. ພິກສຸນອນຮ່ວມກັນໃນທີ່ນອນບໍ່ມີເຄື່ອງມຸງສ່ວນຫລາຍ ບໍ່ມີເຄື່ອງບັງສ່ວນຫລາຍ

໔. ພິກສຸນັ່ງ ໃນເມື່ອມາຕຸຄາມນອນ

໕. ພິກສຸນອນ ມາຕຸຄາມນັ່ງ

໖. ພິກສຸນັ່ງແລະມາຕຸຄາມກໍນັ່ງ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ທຸຕິຍສຫເສຍຍສິກຂາບົທທີ ຝ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໗. ທັມມເທສນາສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໗. ທັມມເທສນາສິກຂາບົທ

ວ່າດ້ວຍການສະແດງທັມ

ເຣື້ອງພຣະອຸທາຍີ

[ຝ໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ທ່ານພຣະອຸທາຍີເປັນພຣະປະຈຳຕະກູນໃນກຸງສາວັຕຖີເຂົ້າໄປຫາຕະກູນຫລາຍຕະກູນ ເຊົ້າມື້ນຶ່ງ ທ່ານຄອງອັນຕຣວາສກ ຖືບາຕຣຈີວອນເຂົ້າໄປຍັງຕະກູນນຶ່ງ ສມັຍນັ້ນ ຍິງແມ່ເຮືອນນັ່ງຢູ່ທີ່ປະຕູເຮືອນ ລູກໃພ້ນັ່ງຢູ່ທີ່ປະຕູຫ້ອງນອນ ທ່ານພຣະອຸທາຍີເຂົ້າໄປຫາຍິງແມ່ເຮືອນນັ້ນເຖິງຕົວ ຄັນເຖິງແລ້ວໄດ້ສະແດງທັມໃກ້ຫູນາງ

ຂນະນັ້ນລູກໃພ້ເກີດຄວາມຄິດຂຶ້ນມາວ່າ ສມນະຮູບນີ້ເປັນຊາຍຊູ້ຂອງແມ່ຍ່າ ຫລືເວົ້າກ້ຽວແມ່ຍ່າ ຄັນທ່ານພຣະອຸທາຍີສະແດງທັມໃກ້ຫູຍິງແມ່ເຮືອນແລ້ວ ຈຶ່ງເຂົ້າໄປຫາລູກໃພ້ເຖິງຕົວ ຄັນເຖິງແລ້ວຈຶ່ງສະແດງທັມໃກ້ຫູນາງ ຂນະນັ້ນ ຍິງແມ່ເຮືອນເກີດຄວາມຄິດຂຶ້ນມາວ່າ ສມນະຮູບນີ້ເປັນຊາຍຊູ້ຂອງລູກໃພ້ ຫລືເວົ້າກ້ຽວລູກໃພ້

ຄັນທ່ານພຣະອຸທາຍີສະແດງທັມໃກ້ຫູລູກໃພ້ແລ້ວກໍຈາກໄປ ເທື່ອນັ້ນ ຍິງແມ່ເຮືອນໄດ້ກ່າວກັບລູກໃພ້ວ່າ "ນີ້ແນ່ນາງຕົວດີ ສມນະຮູບນັ້ນກ່າວຫຍັງກັບເຈົ້າ" ລູກໃພ້ຍິງຕອບວ່າ "ທ່ານສະແດງທັມຂະນ້ອຍ ແລ້ວແມ່ລ່ະ ພຣະຄຸນເຈົ້າເວົ້າຫຍັງ" ຍິງແມ່ເຮືອນຕອບວ່າ "ທ່ານກໍສະແດງທັມແກ່ແມ່ເຫມືອນກັນ" ຍິງແມ່ເຮືອນກັບລູກໃພ້ນັ້ນຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າອຸທາຍີຈຶ່ງສະແດງທັມໃກ້ຫູມາຕຸຄາມລະ ທີ່ຖືກ ຄວຣສະແດງທັມສຽງຊັດແຈ້ງເປີດເຜີຍ ບໍ່ແມ່ນບໍ" ພວກພິກສຸໄດ້ຍິນຍິງທັງສອງຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງສະແດງທັມແກ່ມາຕຸຄາມລະ" ຄັນ

ພິກສຸເຫລົ່ານັ້ນຕຳໜິທ່ານພຣະອຸທາຍີໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານສະແດງທັມແກ່ມາຕຸຄາມ ແມ່ນແທ້ບໍ" ທ່ານພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິ ວ່າ "ຯລຯ ໂມຊບຸຣຸສ ຈັ່ງໃດທ່ານຈຶ່ງສະແດງທັມແກ່ມາຕຸຄາມລະ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດສະແດງທັມແກ່ມາຕຸຄາມ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະອຸທາຍີ ຈົບ

ເຣື້ອງອຸບາສິກາ

[໕໑] ສມັຍນັ້ນ ພວກອຸບາສິກາພົບພິກສຸແລ້ວນິມົນຕ໌ວ່າ "ພຣະຄຸນເຈົ້າ ຂໍນິມົນຕ໌ພຣະຄຸນເຈົ້າສະແດງທັມເຖີດ" ພິກສຸທັງຫລາຍກ່າວວ່າ "ນ້ອງຍິງ ການສະແດງທັມແກ່ມາຕຸຄາມບໍ່ເໝາະ"

ພຣະອນຸບັນຍັດ

ພວກອຸບາສິກາກ່າວວ່າ "ຂໍນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດສະແດງທັມຈັກ ໕-໖ ຄຳກໍໄດ້ ແມ່ນ ພຽງເທົ່ານີ້ ພວກຂະນ້ອຍອາຈເຂົ້າໃຈທັມໄດ້" ພວກພິກສຸກໍຍັງປຕິເສທວ່າ "ນ້ອງຍິງ ການສະແດງ ທັມ ແກ່ມາຕຸຄາມບໍ່ເໝາະ" ພາກັນຢຳເກງຢູ່ຈຶ່ງບໍ່ຍອມສະແດງທັມ ພວກອຸບາສິກາຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍພວກເຮົາອາຣາທນາຢູ່ຍັງບໍ່ຍອມສະແດງທັມ"

ພວກພິກສຸໄດ້ຍິນອຸບາສິກາຕຳໜິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ

ແລ້ວ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສະແດງທັມແກ່ມາຕຸຄາມໄດ້ ໕-໖ ຄຳ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງອຸບາສິກາ ຈົບ

ເຣື້ອງພຣະສັພພັຄຄີຍ໌

[໖໔] ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ ຊາບວ່າ ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ສະແດງທັມແກ່ມາຕຸຄາມໄດ້ ໕-໖ ຄຳ ຈຶ່ງໃຫ້ບຸຣຸສບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ພວກພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຫ້ບຸຣຸສບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸພຣະສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຫ້ບຸຣຸສບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິ ວ່າ "ໂມຂບຸຣສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຫ້ບຸຣຸສບໍ່ຮູ້ດຽງສານັ່ງໃກ້ໆແລ້ວສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໖໕] ອີກຢ່າງນຶ່ງ ພິກສຸໃດສະແດງທັມແກ່ມາຕຸຄາມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີບຸຣຸສຮູ້ດຽງສາຢູ່

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໘໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໄຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸພາສິຕແລະຄຳທຸພພາສິຕ ຄຳຫຍາບແລະຄຳສຸພາພ

ທີ່ຊື່ວ່າ ເກີນ ໕-໖ ຄຳ ໄດ້ແກ່ ເກີນກວ່າ ໕-໖ ຄຳ

ທີ່ຊື່ວ່າ ທັມ ໄດ້ແກ່ ພຸທທພາສິຕ ສາວົກພາສິຕ ຣືສີພາສິຕ ເທວດາພາສິຕ ທີ່ປະກອບດ້ວຍອັນຖະທີ່ປະກອບດ້ວຍທັມ

ຄຳວ່າ ສະແດງ ຄື ສະແດງເປັນບົທ ຕ້ອງອາບັຕິປາຈິຕຕີຍ໌ທຸກໆບົທ ສະແດງເປັນອັກສຣ ຕ້ອງອາບັຕິປາຈິຕຕີຍ໌ທຸກໆອັກສຣ

ຄຳວ່າ ເວັ້ນໄວ້ແຕ່ມີບຸຣຸສຮູ້ດຽງສາຢູ່ ຄື ຍົກເວັ້ນໄວ້ແຕ່ມີບຸຣຸສຜູ້ຮູ້ຄວາມຢູ່ດ້ວຍບຸຣຸສທີ່ຊື່ວ່າ ເປັນຜູ້ຮູ້ດຽງສາ ຄື ສາມາດຮັບຮູ້ຖ້ອຍຄຳສຸພາສິຕ ທຸພພາສິຕ ຄຳຫຍາບແລະຄຳສຸພາພ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໘໕] ມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ສະແດງທັມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ເວັ້ນໄວ້ແຕ່ມີບຸຣຸສຮູ້ດຽງສາຢູ່

ມາຕຸຄາມ ພິກສຸບໍ່ແນ່ໃຈ ສະແດງທັມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ເວັ້ນໄວ້ແຕ່ມີບຸຣຸສຮູ້ດຽງສາຢູ່

ມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ສະແດງທັມເກີນ ໕-໖ ຄຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີບຸຣຸສຮູ້ດຽງສາຢູ່

ຕິກທຸກກຕ

ພິກສຸສະແດງທັມແກ່ນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຣະສານໂຕແມ່ຊຶ່ງແປງຮ່າງເປັນ ຍິງຫລາຍກວ່າ ໕-໖ ຄຳ ຕ້ອງອາບັຕິທຸກກຕ ເວັ້ນໄວ້ແຕ່ມີບຸຣຸສຮູ້ດຽງສາຢູ່

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າມາຕຸຄາມ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໖] ໑. ພິກສຸທີ່ສະແດງທັມໂດຍມີບຸຣຸສຮູ້ດຽງສາຢູ່ດ້ວຍ

໔. ພິກສຸສະແດງທັມພຽງ ໕-໖ ຄຳ

໓. ພິກສຸສະແດງທັມຕ່ຳກວ່າ ໕-໖ ຄຳ

໔. ພິກສຸລຸກຂຶ້ນແລ້ວມານັ່ງສະແດງທັມຕໍ່ໄປອີກ

໕. ພິກສຸສະແດງທັມໃນທີ່ທີ່ມາຕຸຄາມລຸກຂຶ້ນແລ້ວນັ່ງລົງອີກ

໖. ພິກສຸສະແດງທັມແກ່ມາຕຸຄາມອື່ນຕໍ່

໗. ພິກສຸຖືກຖາມບັນຫາແລ້ວສະແດງທັມແກ່ມາຕຸຄາມຜູ້ຖາມ

໘. ພິກສຸສະແດງທັມເພື່ອຄົນອື່ນແຕ່ມີມາຕຸຄາມຟັງຢູ່ດ້ວຍ

໙. ພິກສຸວິກົລຈິຕ

໑໐. ພິກສຸຕົ້ນບັນຍັດ

ທັມມເທສນາສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໑. ມຸສາວາທວັຄ ໘. ພູຕາໂຣຈນສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

ໆ. ພູຕາໂຣຈນສິກຂາບົທ
ວ່າດ້ວຍການບອກອຸຕຕຣິມນຸສສທັມທີ່ມີຈິງ

ເຣື້ອງພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາ໑

[ຝົໆ] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ກູຕາຄາຣສາລາປ່າມຫາວັນ ເຂຕ ເມືອງເວສາລີ ຄັ້ງນັ້ນ ພິກສຸຈຳນວນຫລາຍເປັນເພື່ອນເຄີຍເຫັນເຄີຍຄົບກັນມາຈຳພັນສາຢູ່ໃກ້ຝັ່ງ ແມ່ນ້ຳວັຄຄຸມຸທາ ຄາວນັ້ນ ແຄວ້ນວັຊຊີເກີດເຂົ້າຍາກຫມາກແພງ ປະຊາຊົນມີຄວາມເປັນຢູ່ຍາກ ແຄ້ນ ໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ພຣະອຣິຍະຈະບິນທບາຕ ຍັງຊີພໄດ້ ພິກສຸເຫລົ່ານັ້ນໄດ້ມີຄວາມຄິດວ່າ "ບັດນີ້ແຄວ້ນວັຊຊີເກີດເຂົ້າຍາກຫມາກແພງ ປະ ຊາຊົນມີຄວາມເປັນຢູ່ຍາກແຄ້ນ ໃຊ້ສລາກປັນສ່ວນຊື້ອາຫານ ລົ້ມຕາຍກັນກະດູກຂາວເກື່ອນ ຍາກທີ່ ພຣະອຣິຍະຈະບິນທບາຕຍັງຊີພໄດ້ ທຳຢ່າງໃດຫນໍ ພວກເຮົາຈຶ່ງຈະພ້ອມພຽງກັນ ຮ່ວມໃຈກັນ ບໍ່ ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກ ແລະບິນທບາຕບໍ່ລຳບາກ" ພິກສຸບາງພວກສເນີວ່າ "ທ່ານທັງ ຫລາຍ ຖ້າເຊັ່ນນັ້ນ ພວກເຮົາມາຊ່ວຍກັນເຮັດວຽກຂອງພວກຄຣືຫັສຖ໌ ເມື່ອຊ່ວຍເຮັດວຽກ ພວກ ເຂົາກໍຄົງຈະພໍໃຈຖວາຍບິນທບາຕແກ່ພວກເຮົາໂດຍວິທີນີ້ແຫລະ ພວກເຮົາກໍຈະພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຢ່າງຜາສຸກ ແລະບິນທບາຕບໍ່ລຳບາກ" ພິກສຸອີກພວກສ ເນີວ່າ "ຢ່າເລີຍ ທ່ານທັງຫລາຍ ເປັນຫຍັງພວກເຮົາຈະຕ້ອງໄປຊ່ວຍກັນເຮັດວຽກຂອງພວກຄຣື ຫັສຖ໌ ຂໍໃຫ້ພວກເຮົາມາຊ່ວຍກັນທຳຫນ້າທີ່ທູຕນຳຂ່າວສານໃຫ້ພວກຄຣືຫັສຖ໌ຈະດີກວ່າ ເມື່ອ ເຮັດຢ່າງນີ້ ພວກຄຣືຫັສຖ໌ກໍຄົງຈະພໍໃຈຖວາຍບິນທບາຕແກ່ພວກເຮົາ ໂດຍວິທີນີ້ແຫລະພວກ ເຮົາກໍຈະພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳ ພັນສາຢ່າງຜາສຸກ ແລະບິນທບາຕບໍ່ ລຳບາກ"

ເຊີງອັນຖະ :

໑ ພຣະວິນັຍປິດົກ ມຫາວິພັງຄ໌ແປລ ເຫລັ້ມ ໑ ຂໍ້ ໑໙໓ ຫນ້າ ໑ໆໆ ວ່າດ້ວຍການອວດອຸຕຕ ຣິມນຸສສທັມທີ່ບໍ່ມີໃນຕົນ

ພິກສຸອີກພວກສເນີວ່າ "ຢ່າເລີຍ ທ່ານທັງຫລາຍ ເປັນຫຍັງພວກເຮົາຈະຕ້ອງໄປຊ່ວຍກັນເຮັດ ວຽກຫລືທຳຫນ້າທີ່ທູຕນຳຂ່າວສານໃຫ້ພວກຄຣືຫັສຖ໌ ທາງທີ່ດີ ພວກເຮົາມາກ່າວອວດອຸຕຕຣິມ ນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງວ່າ 'ພິກສຸຮູບພຸ້ນໄດ້ປຖົມຍານ ຮູບພຸ້ນໄດ້ທຸຕິຍ

ຍານ ຮູບພຸ້ນໄດ້ຕຕິຍຍານ ຮູບພຸ້ນໄດ້ຈຕຸຕຖຍານ ຮູບພຸ້ນເປັນພຣະໂສດາບັນຮູບພຸ້ນເປັນພຣະສກທາຄາມີ ຮູບພຸ້ນເປັນພຣະອນາຄາມີ ຮູບພຸ້ນເປັນພຣະອຣຫັນຕ໌ ຮູບພຸ້ນໄດ້ວິຊຊາ ໓ ຮູບພຸ້ນໄດ້ອພິຍຍາ ໖' ເມື່ອເວົ້າຢ່າງນີ້ ພວກຄຣືຫັສຖ໌ກໍຄົງຈະພໍໃຈຖວາຍບິນທະບາຕແກ່ພວກເຮົາ ໂດຍວິທີນີ້ ພວກເຮົາຈະພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນຢູ່ຈຳພັນສາຢ່າງຜາສຸກ ແລະບິນທະບາຕບໍ່ລຳບາກ" ໃນທີ່ສຸດ ພິກສຸເຫລົ່ານັ້ນທັງຫມົດຕົກລົງ ກັນວ່າ "ທ່ານທັງຫລາຍ ວິທີທີ່ພວກເຮົາພາກັນ

ກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງເປັນວິທີທີ່ດີກວ່າວິທີອື່ນ" ຕໍ່ມາ ພິກສຸເຫລົ່ານັ້ນໄດ້ພາກັນກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງວ່າ "ພິກສຸຮູບພຸ້ນໄດ້ປຖົມຍານ ຯລຯ ຮູບພຸ້ນໄດ້ຈຕຸຕຖຍານ ຮູບພຸ້ນເປັນພຣະໂສດາບັນ ຯລຯ ຮູບພຸ້ນໄດ້ອພິຍຍາ ໖" ຄັ້ງນັ້ນແລ ປະຊາຊົນກໍພາກັນຍິນດີວ່າ "ເປັນລາພຂອງພວກເຮົາຫນໍ ພວກເຮົາໄດ້ດີແລ້ວຫນໍທີ່ມີພິກສຸທັງຫລາຍເຊັ່ນນີ້ມາຢູ່ຈຳພັນສາ ເພາະແຕ່ກ່ອນນີ້ພວກເຮົາບໍ່ມີພິກສຸທັງຫລາຍ ທີ່ມີຄຸນສົມບັຕເຫມືອນຢ່າງພິກສຸຜູ້ມີສີລມີກັລຍານທັມເຫລົ່ານີ້ມາຢູ່ຈຳພັນສາເລີຍ" ໂພຊນະ (ອາຫາຣ) ... ຂາທນີຍະ (ຂອງຄ້ຽວ) ... ສາຍນີຍະ (ຂອງລິ້ມ) ... ປານະ(ເຄື່ອງດື່ມ) ຊນິດທີ່ພວກເຂົາຈະຖວາຍແກ່ພິກສຸເຫລົ່ານັ້ນ ພວກເຂົາບໍ່ຮັບປະທານ ບໍ່ຂົບຄ້ຽວ ບໍ່ລິ້ມ ບໍ່ດື່ມດ້ວຍຕົນ ເອງ ທັງບໍ່ໃຫ້ແກ່ມາຣດາບິດາ ບຸຕຣ ພັຣຍາ ຄົນຮັບໃຊ້ ກັມກອນ ມິຕຣ ອມາຕຍ໌ຍາຕ ສາໂລ ຫິຕ ພິກສຸເຫລົ່ານັ້ນຈຶ່ງເປັນຜູ້ມີນ້ຳມີນວລ ມີອິນທຣີຍ໌ຜ່ອງໃສ ມີໃບຫນ້າເອີບອີ່ມ ມີຜິວພັນຜຸດຜ່ອງ

[ຝັກ] ມີປະເພນີຢູ່ວ່າ ເມື່ອພິກສຸທັງຫລາຍອອກພັນສາແລ້ວຈະໄປເຂົ້າເຝົ້າພຣະຜູ້ມີພຣະພາຄ ຄັ້ນພິກສຸເຫລົ່ານັ້ນຈຳພັນສາຄົບ ໓ ເດືອນແລ້ວຈຶ່ງເກັບເສນາສນະ ຖືບາຕຣແລະຈີວອນອອກຍ່າງທາງມຸ່ງໄປສູ່ກຸງເວສາລີ ຈາຣິກໄປໂດຍລຳດັບ ເຖິງກຸງເວສາລີ ຜ່ານປ່າມຫາວັນ ໄປເຖິງກູຕາຄາຣສາລາ ແລ້ວເຂົ້າເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັ້ນເຖິງແລ້ວຈຶ່ງຖວາຍອພິວາທ ແລ້ວນັ່ງລົງຢູ່ນະ ທີ່ສົມຄວຣ

ພິກສຸຕ່າງທິສມາເຂົ້າເຝົ້າ

ສມັຍນັ້ນ ພິກສຸທັງຫລາຍທີ່ຈຳພັນສາຢູ່ໃນທິສຕ່າງໆເບິ່ງຈ່ອຍຜອມ ຊອມຊໍ່ ມີຜິວພັນຫມອງເສົ້າຊີດ ເຫລືອງ ເສັ້ນເອັນຂຶ້ນເຕັມໄປຫມົດ ສ່ວນພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາກັບມີນ້ຳມີນວລ ມີອິນທຣີຍ໌ຜ່ອງໃສ ມີໃບຫນ້າເອີບອີ່ມ ມີຜິວພັນຜຸດຜ່ອງ ອີກຢ່າງນຶ່ງ ກາຣທີ່ພຣະຜູ້ມີພຣະພາຄ

ພຸທຫຼເຈົ້າທັງຫລາຍຊົງປາສັຍກັບພຣະອາຄັນຕຸກະທັງຫລາຍ ນັ້ນກໍເປັນພຸທຫຼປະເພນີ ລຳດັບນັ້ນ ພຣະຜູ້ມີພຣະພາຄຕຣັສຖາມພວກພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາວ່າ "ພິກສຸທັງຫລາຍ ທ່ານທັງຫລາຍຍັງສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື ພວກທ່ານເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກຫລື ແລະບິນທຫບາຕບໍ່ລຳບາກຫລື" ພິກສຸເຫລົ່ານັ້ນຂາບທູລວ່າ "ຍັງສະບາຍດີ ພຣະພຸທຫຼເຈົ້າຂ້າ ຍັງພໍເປັນຢູ່ໄດ້ພຣະພຸທຫຼເຈົ້າຂ້າ ອີກຢ່າງນຶ່ງ ພວກຂ້າພຣະພຸທຫຼເຈົ້າເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາເປັນຜາສຸກ ແລະບິນທຫບາຕບໍ່ລຳບາກ ພຣະພຸທຫຼເຈົ້າຂ້າ"

ພຸທຫຼປະເພນີ

ພຣະຕຖາຄົຕເຈົ້າທັງຫລາຍຊົງຊາບເຣື່ອງ ຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຊົງຊາບກາລອັນຄວຣຕຣັສຖາມກໍມີ ບໍ່ຕຣັສຖາມກໍມີ ຕຣັສຖາມເຣື່ອງທີ່ເປັນປໂຍດ ບໍ່ຕຣັສຖາມເຣື່ອງທີ່ບໍ່ເປັນປໂຍດ ເພາະພຣະຕຖາຄົຕເຈົ້າທັງຫລາຍຊົງຂຈັດເຣື່ອງທີ່ບໍ່ເປັນປໂຍດເສັຽດ້ວຍອຣິຍມັຄ ແລ້ວພຣະຜູ້ມີພຣະພາຄພຸທຫຼເຈົ້າທັງຫລາຍສອບຖາມພິກສຸທັງຫລາຍດ້ວຍເຫຕຸ ໔ ປະກາຣ ຄື ຈະຊົງສະແດງທັມຢ່າງນຶ່ງ ຈະຊົງບັນຍັດສິກຂາບົທແກ່ພຣະສາວົກຢ່າງນຶ່ງ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໑. ມຸສາວາທວັຄ ໗. ພູຕາໂຣຈນສິກຂາບົທ ສິກຂາບົທວິພັງຄ໌

ລຳດັບນັ້ນ ພຣະຜູ້ມີພຣະພາຄຈຶ່ງໄດ້ຕຣັສຖາມພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາວ່າ "ເຮັດຢ່າງໃດ ທ່ານທັງຫລາຍຈຶ່ງພ້ອມພຽງກັນ ຮ່ວມໃຈກັນ ບໍ່ຜິດຖຽງກັນ ຢູ່ຈຳພັນສາຜາສຸກແລະບິນທຫບາຕບໍ່ລຳບາກ" ລຳດັບນັ້ນ ພິກສຸເຫລົ່ານັ້ນຈຶ່ງໄດ້ຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງຫລາຍ ພວກທ່ານມີຄຸນວິເສສນັ້ນ ແມ່ນແທ້ບໍ" ພິກສຸເຫລົ່ານັ້ນຂາບທູລວ່າ "ມີແມ່ນແທ້ພຣະພຸທຫຼເຈົ້າຂ້າ"

ຊົງບັນຍັດສິກຂາບົທ

ພຣະຜູ້ມີພຣະພາຄພຸທຫຼເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດພວກທ່ານຈຶ່ງພາກັນກ່າວອວດອຸຕຕຣິມນຸສສທັມຂອງກັນແລະກັນໃຫ້ພວກຄຣືຫັສຖ໌ຟັງເພາະເຫັນແກ່ປາກແກ່ທ້ອງລະ ພິກສຸ

ທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒໙໑] ກໍ ພິກສຸໃດບອກອຸຕຕຣິມນຸສສທັມທີ່ມີຈິງແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພິກສຸຊາວຝັ່ງແມ່ນ້ຳວັຄຄຸມຸທາ ຈົບ

ສິກຂາບົດວິພັງຄ໌

[໒໐] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ອນຸປສັມບັນ ໄດ້ແກ່ ຍົກເວັ້ນພິກສຸ ພິກສຸນີ ນອກນັ້ນຊື່ວ່າອນຸປສັມບັນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໑. ມຸສາວາທວັຄ ໘. ພູຕາໂຣຈນສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ທີ່ຊື່ວ່າ ອຸຕຕຣິມນຸສສທັມ ໄດ້ແກ່ ຢານ ວິໂມກຂ໌ ສມາທິ ສມາບັຕິ ຢານທັສສນະ ມັຄພາວນາ ການທຳຜົລໃຫ້ແຈ້ງ ການລະກິເລສ ພາວະທີ່ຈິຕປອດຈາກກິເລສ ຄວາມຍິນດີໃນເຮືອນວ່າງ
ຄຳວ່າ ຢານ ໄດ້ແກ່ ປຖົມຢານ ທຸຕິຍຢານ ຕຕິຍຢານ ຈຕຸຕຖຢານ
ຄຳວ່າ ວິໂມກຂ໌ ໄດ້ແກ່ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌
ຄຳວ່າ ສມາທິ ໄດ້ແກ່ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ
ຄຳວ່າ ສມາບັຕິ ໄດ້ແກ່ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ
ຄຳວ່າ ຢານທັສສນະ ໄດ້ແກ່ ວິຊຊາ ໓
ຄຳວ່າ ມັຄພາວນາ ໄດ້ແກ່ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຊົງຄ໌ ໗ ອຣິຍມັຄມີອົງຄ໌ ໘
ຄຳວ່າ ການທຳຜົລໃຫ້ແຈ້ງ ໄດ້ແກ່ ການທຳໂສດາປັຕຕິຜົລໃຫ້ແຈ້ງ ການທຳສກທາຄາມີຜົລໃຫ້

ແຈ້ງ ການທຳອນາຄາມີຜົລໃຫ້ແຈ້ງ ການທຳອຣຫັຕຕຜົລໃຫ້ແຈ້ງ
ຄຳວ່າ ການລະກິເລສ ໄດ້ແກ່ ການລະຣາຄະ ການລະໂທສະ ການລະໂມຫະ
ຄຳວ່າ ພາວະທີ່ຈິຕປອດຈາກກິເລສ ໄດ້ແກ່ ພາວະທີ່ຈິຕປອດຈາກຣາຄະ ພາວະທີ່ຈິຕປອດຈາກໂທສະ ພາວະທີ່ຈິຕປອດຈາກໂມຫະ
ຄຳວ່າ ຄວາມຍິນດີໃນເຮືອນວ່າງ ໄດ້ແກ່ ຄວາມຍິນດີໃນເຮືອນວ່າງດ້ວຍປຖົມຢານຄວາມຍິນດີໃນເຮືອນວ່າງດ້ວຍທຸຕິຍຢານ ຄວາມຍິນດີໃນເຮືອນວ່າງດ້ວຍຕຕິຍຢານ ຄວາມຍິນດີໃນເຮືອນວ່າງດ້ວຍຈຕຸຕຖຢານ

ກ່າວອວດປຖົມຢານ

[໑໑] ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າປຖົມຢານແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າປຖົມຢານຢູ່” ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເປັນຜູ້ເຂົ້າປຖົມຢານແລ້ວ” ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານ” ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເປັນຜູ້ຊຳນານໃນປຖົມຢານ” ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າທຳປຖົມຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕິຍຢານ - ຈຕຸຕຖຢານ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ ຯລຯ ຂ້າພະເຈົ້າເຂົ້າຕຕິຍຢານ. . . ຈຕຸຕຖຢານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ຈຕຸຕຖຢານ ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳຈຕຸຕຖຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບອກສຸຢຢຕວິໂມກຂ໌ - ອັປປນິຫິຕສມາຫິ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າສຸຢຢຕວິໂມກຂ໌ແລ້ວ ຯລຯ ຂ້າພະເຈົ້າເຂົ້າອນິມິຕຕວິໂມກຂ໌ . . . ອັປປນິຫິຕວິໂມກຂ໌ . . . ສຸຢຢຕສມາຫິ . . . ອນິມິຕຕສມາຫິ . . . ອັປປນິຫິຕສມາຫິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອັປປນິຫິຕສມາຫິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອັປປນິຫິຕສມາຫິໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໘. ພູຕາໂຣຈນສິກຂາບົທ ບົທພາຊນີຍ໌

ບອກສຸຢຢຕສມາບັຕິ - ອັປປນິຫິຕສມາບັຕິ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າສຸຢຢຕສມາບັຕິ . . . ອນິມິຕຕສມາບັຕິ . . . ອັປປນິຫິຕສມາບັຕິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ ອັປປນິຫິຕສມາບັຕິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອັປປນິຫິຕສມາບັຕິໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ບອກວິຊຊາ ໓

ຄຳວ່າ ບອກ ຄືພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າວິຊຊາ ໓ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ວິຊຊາ ໓ . . . ຂ້າພະເຈົ້າເປັນ ຜູ້ຊຳນານ. . . ຂ້າພະເຈົ້າທຳວິຊຊາ ໓ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ບອກສຕິປັຕຖານ ໔ - ອິທຫິບາທ ໔

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າສຕິປັຕຖານ ໔ ຯລຯ . . . ສັມມັປປທານ ໔ . . . ອິທຫິບາທ ໔ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອິທຫິບາທ ໔ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອິທຫິບາທ ໔ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕິຍ໌

ບອກອິນທຣີຍ໌ ໕ - ພລະ ໕

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າອິນທຣີຍ໌ ໕ ຯລຯ ພລະ ໕ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ພລະ ໕ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳພລະ ໕ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກໂພຊຢງຄ໌ ໗

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າໂພຊຢງຄ໌ ໗ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ໂພຊຢງຄ໌ ໗ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳໂພຊຢງຄ໌ ໗ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກອຣິຍມັຄມີອົງຄ໌ ໘

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າອຣິຍມັຄມີອົງຄ໌ ໘ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອຣິຍມັຄມີອົງຄ໌ ໘ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອຣິຍມັຄມີອົງຄ໌ ໘ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກໂສດາປັຕຕິຜົລ - ອຣຫັຕຕຜົລ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າໂສດາປັຕຕິຜົລ. . . ສກທາຄາມິຜົລ. . . ອນາຄາມິຜົລ. . . ອຣຫັຕຕຜົລແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ອຣຫັຕຕຜົລ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳອຣຫັຕຕຜົລໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກການສລະຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າສລະຣາຄະແລ້ວ ຯລຯ ຂ້າພະເຈົ້າສລະໂທສະແລ້ວ ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພີກ ຖອນໂມຫະຂຶ້ນແລ້ວ" ຕ້ອງອາບັຕິປາຈິຕ ຕີຍ໌

ບອກວ່າຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຍານ - ຈຕຸຕຖຍານໃນເຮືອນວ່າງ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຍານ ຯລຯ ທຸຕິຍຍານ. . . ຕຕິຍຍານ. . . ຈຕຸຕຖຍານໃນເຮືອນວ່າງແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ຈຕຸຕຖຍານ . . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາຈຕຸຕຖຍານໃຫ້ແຈ້ງແລ້ວ" ຕ້ອງອາບັດປາຈິຕຕີຍ໌

ບອກປຖົມຍານແລະທຸຕິຍຍານ

[໗໔] ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຍານແລະທຸຕິຍຍານແລ້ວ . . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະທຸຕິຍຍານ. . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາປຖົມຍານແລະທຸຕິຍຍານໃຫ້ແຈ້ງແລ້ວ" ຕ້ອງອາບັດປາຈິຕຕີຍ໌

ບອກປຖົມຍານແລະຕຕິຍຍານ - ຈຕຸຕຖຍານ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຍານແລະຕຕິຍຍານ ຯລຯ ປຖົມຍານແລະຈຕຸຕຖຍານແລ້ວ . . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະຈຕຸຕຖຍານ. . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາປຖົມຍານແລະຈຕຸຕຖຍານໃຫ້ແຈ້ງແລ້ວ" ຕ້ອງອາບັດປາຈິຕຕີຍ໌

ບອກປຖົມຍານແລະສຸຍຍຕວິໂມກຂ໌ - ອັປປນິຫິຕສມາທິ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຍານແລະສຸຍຍຕວິໂມກຂ໌ ຯລຯ ອນິມິຕຕວິໂມກຂ໌. . . ອັປປນິຫິຕວິໂມກຂ໌. . . ສຸຍຍຕສມາທິ. . . ອນິມິຕຕສມາທິ. . . ອັປປນິຫິຕສມາທິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຍານແລະອັປປນິຫິຕສມາທິ. . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາປຖົມຍານແລະອັປປນິຫິຕສມາທິໃຫ້ແຈ້ງແລ້ວ" ຕ້ອງອາບັດປາຈິຕຕີຍ໌

ບອກປຖົມຍານແລະສຸຍຍຕສມາບັຕິ - ອັປປນິຫິຕສມາບັຕິ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຍານແລະສຸຍຍຕສມາບັຕິ ຯລຯ ອນິມິຕຕສມາບັຕິ. . . ອັປປນິຫິຕສມາບັຕິແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າ

ແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອັປປນິຫິຕສມາບັຕິ. . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປຖົມຢານແລະອັປປນິຫິຕສມາບັຕິໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໆ. ພູຕາໂຣຈນສິກຂາບົທ ບົທ ພາຊນີຍ໌

ບອກປຖົມຢານແລະວິຊຊາ ໓

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລະວິຊຊາ ໓ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະວິຊຊາ ໓ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປຖົມຢານແລະວິຊຊາ ໓ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານແລະສຕິປັຕຖານ ໔ - ອິທທິບາທ ໔

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລະສຕິປັຕຖານ ໔ . . . ສັມມັປປທານ ໔ . . . ອິທທິບາທ ໔ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອິທທິບາທ ໔ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປຖົມຢານແລະອິທທິບາທ ໔ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານແລະອິນທຣີຍ໌ ໕ - ພລະ ໕

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລະອິນທຣີຍ໌ ໕ ຯລຯ ພລະ ໕ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະພລະ ໕ . . . ຂ້າພະເຈົ້າເປັນຜູ້ຊຳນານ. . . ຂ້າພະເຈົ້າທຳປຖົມຢານແລະພລະ ໕ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານແລະໂພຊຊົງຄ໌ ໗

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລະໂພຊຊົງຄ໌ ໗ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະ

ໂພຊຸຢັງຄ໌ ໆ . . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາປຖົມຢານແລະໂພຊຸຢັງຄ໌ ໆ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານແລະອຣິຍມັຄມີອົງຄ໌ ໘

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລະອຣິຍມັຄມີອົງຄ໌ ໘ ແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອຣິຍມັຄມີອົງຄ໌ ໘ . . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາປຖົມຢານແລະອຣິຍມັຄມີອົງຄ໌ ໘ ໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານແລະໂສດາປັຕຕິຜົລ - ອຣຫັຕຕຜົລ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລະໂສດາປັຕຕິຜົລ ຯລຯ ສກທາຄາມິຜົລ. . . ອນາຄາມິຜົລ. . . ອຣຫັຕຜົລແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ປຖົມຢານແລະອຣຫັຕຕຜົລ. . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາປຖົມຢານແລະອຣຫັຕຕຜົລໃຫ້ແຈ້ງແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານ - ສລະຣາຄະ ໂທສະ ແລະໂມຫະ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານ ຂ້າພະເຈົ້າສລະຣາຄະ ຂ້າພະເຈົ້າສລະໂທສະແລ້ວ ຂ້າພະເຈົ້າສລະ ຄາຍ ພົ້ນ ລະ ສລັດ ເພິກຖອນໂມຫະຂຶ້ນແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ບອກປຖົມຢານ-ຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຈິຕຂອງຂ້າພະເຈົ້າປອດຈາກຣາຄະ ຈິຕຂອງຂ້າພະເຈົ້າປອດຈາກໂທສະ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕິຍຢານແລະຈຕຸຕຖຢານ

[໗໓] ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຢານແລະຕຕິຍຢານ ທຸຕິຍຢານແລະຈຕຸຕຖຢານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າ

ພະເຈົ້າເປັນຜູ້ໄດ້ທຸຕິຍຢານແລະຈຕຸຕຖຢານ. . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາທຸຕິຍຢານແລະຈຕຸຕຖຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕິຍຢານແລະສຸຍຍຕວິໂມກຂ໌

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າທຸຕິຍຢານແລະສຸຍຍຕວິໂມກຂ໌ແລ້ວ ຯລຯ ແລະຈິຕຂອງຂ້າພະເຈົ້າປອດຈາກໂມຫະ” ຕ້ອງອາບັຕິປາຈິຕຕີຍ໌

ບອກທຸຕິຍຢານແລະປຖົມຢານ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າທຸຕິຍຢານແລະປຖົມຢານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຂ້າພະເຈົ້າເປັນຜູ້ໄດ້ທຸຕິຍຢານແລະປຖົມຢານ. . . ຂ້າພະເຈົ້າເປັນຜູ້ຊໍານານ. . . ຂ້າພະເຈົ້າທໍາທຸຕິຍຢານແລະປຖົມຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

(ມູລນັຍທ່ານຫຍໍ້ໄວ້ແລ້ວ)

ບອກວ່າຈິຕປອດຈາກໂມຫະແລະປຖົມຢານ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຂ້າພະເຈົ້າເຂົ້າປຖົມຢານແລ້ວ. . . ຂ້າພະເຈົ້າເຂົ້າຢູ່. . . ຂ້າພະເຈົ້າເປັນຜູ້ເຂົ້າແລ້ວ. . . ຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າເປັນຜູ້ໄດ້ປຖົມຢານ ຂ້າພະເຈົ້າເປັນຜູ້ຊໍານານຈິຕຂອງຂ້າພະເຈົ້າປອດຈາກໂມຫະ ແລະຂ້າພະເຈົ້າທໍາປຖົມຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບອກວ່າຈິຕປອດຈາກໂມຫະແລະໂທສະ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຈິຕຂອງຂ້າພະເຈົ້າປອດຈາກໂມຫະແລະຈິຕຂອງຂ້າພະເຈົ້າປອດຈາກໂທສະ” ຕ້ອງອາບັຕິປາຈິຕຕີຍ໌ ຯລຯ

ບອກປຖົມຢານ - ຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ຂ້າພະເຈົ້າເຂົ້າປຖົມຢານ ທຸຕິຍຢານ ຕຕິຍຢານ ຈຕຸຕຖຢານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ ວິຊຊາ ໑ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຍງຄ໌ ໗ ອຣິຍມັຄ

ມັຄົງຄ໌ ໗ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລ ແລະອຣຫັຕຕຜົລ ຯລຯ ຂ້າພະເຈົ້າສລະຣາຄະແລ້ວ ຂ້າພະເຈົ້າສລະໂທສະແລ້ວ ແລະສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ" ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໑. ມຸສາວາທວັຄ ໗. ພູຕາໂຣຈນສິກຂາບົທ ບົທພາຊນີຍ໌

ວັຕຖຸການວາຣກຖາ

ປະສົງຄ໌ຈະບອກປຖົມຢານ

[໗໔] ຄຳວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລ້ວ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ປະສົງຄ໌ຈະບອກປຖົມຢານ - ຈິຕປອດຈາກຣາຄະ ໂທສະ ແລະໂມຫະ

ຄຳວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຢານແລ້ວ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າຕຕິຍຢານ ຯລຯ ຈຕຸຕຖຢານ ສຸຍຍຕວິໂມກຂ໌ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌ ສຸຍຍຕສມາທິ ອນິມິຕຕສມາທິ ອັປປນິຫິຕສມາທິ ສຸຍຍຕສມາບັຕິ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິ ວິຊຊາ ໓ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຊົງຄ໌ ໗ ອຣິຍມັຄມັຄົງຄ໌ ໗ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລ ແລະອຣຫັຕຕຜົລແລ້ວ ຯລຯ ຂ້າພະເຈົ້າສລະຣາຄະແລ້ວ ຂ້າພະເຈົ້າສລະໂທສະແລ້ວ ແລະຂ້າພະເຈົ້າສລະຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ປະສົງຄ໌ຈະບອກທຸຕິຍຢານ - ຈິຕປອດຈາກໂມຫະ

ຄຳວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຢານແລ້ວ" ແຕ່ກ່າວວ່າ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ປະສົງຄ໌ຈະບອກທຸຕິຍຍານ

ຄໍາວ່າ ບອກ ຄື ພິກສຸຕ້ອງການຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຍານແລ້ວ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຍານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

(ມູລນັຍທ່ານຫຍໍ້ໄວ້ແລ້ວ)

ປະສົງຄ໌ຈະບອກວ່າຈິຕປອດຈາກໂມຫະ

ຄໍາວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຍານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ຄໍາວ່າ ບອກ ຄື ພິກສຸຕ້ອງການຈະກ່າວແກ່ອນຸປສັມບັນວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຈິຕຂອງຂ້າພະເຈົ້າປອດຈາກໂທສະ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ປະສົງຄ໌ຈະບອກປຖົມຍານ ຯລຯ

ຄໍາວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າປຖົມຍານ ທຸຕິຍຍານ ຕຕິຍຍານ ຈຕຸຕຖຍານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຍານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ປະສົງຄ໌ຈະບອກທຸຕິຍຍານ ຯລຯ

ຄໍາວ່າ ບອກ ຄື ພິກສຸປະສົງຄ໌ຈະກ່າວແກ່ອນຸປສັມບັນວ່າ "ຂ້າພະເຈົ້າເຂົ້າທຸຕິຍຍານ ຕຕິຍຍານ ຈຕຸຕຖຍານແລ້ວ ຯລຯ ຈິຕຂອງຂ້າພະເຈົ້າປອດຈາກໂມຫະ" ແຕ່ກ່າວວ່າ "ຂ້າພະເຈົ້າເຂົ້າປຖົມຍານແລ້ວ" ເມື່ອຜູ້ອື່ນເຂົ້າໃຈ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອເຂົາບໍ່ເຂົ້າໃຈ ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າປຖົມຍານ

[໗໕] ຄໍາວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ພິກສຸຮູບໃດຢູ່ໃນວິຫານຂອງທ່ານ ພິກສຸຮູບນັ້ນເຂົ້າປຖົມຍານແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸ

ຮູບນັ້ນເປັນຜູ້ໄດ້ປຖົມຢານ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳປຖົມຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າທຸຕິຍຢານ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າທຸຕິຍຢານ ຯລຯ ຕຕິຍຢານ. . . ຈຕຸຕຖຢານແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້ທຸຕິຍຢານ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳຈຕຸຕຖຢານໃຫ້ແຈ້ງແລ້ວ” ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າສຸຍຢຕວິໂມກຂ໌ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າສຸຍຢຕວິໂມກຂ໌ ຯລຯ ອນິມິຕຕວິໂມກຂ໌ ອັປປນິຫິຕວິໂມກຂ໌ ສຸຍຢຕສມາທິອນິມິຕຕສມາທິອັປປນິຫິຕສມາທິແລ້ວ . . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້ອັປປນິຫິຕສມາທິ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳອັປປນິຫິຕສມາທິໃຫ້ແຈ້ງແລ້ວ” ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າສຸຍຢຕສມາບັຕິ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າສຸຍຢຕສມາບັຕິ ຯລຯ ອນິມິຕຕສມາບັຕິ ອັປປນິຫິຕສມາບັຕິແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້ອັປປນິຫິຕສມາບັຕິ. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳອັປປນິຫິຕສມາບັຕິໃຫ້ແຈ້ງແລ້ວ” ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າວິຊຊາ ໓ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວອວດອນຸປສັມບັນວ່າ “ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າວິຊຊາ ໓ ຯລຯ ສຕິປັຕຖານ ໔ ສັມມັປປທານ ໔ ອິທທິບາທ ໔ ອິນທຣີຍ໌ ໕ ພລະ ໕ ໂພຊຊົງຄ໌ ໗ ອຣິຍມັຄມີອົງຄ໌ ໘ ໂສດາປັຕຕິຜົລ ສກທາຄາມິຜົລ ອນາຄາມິຜົລ ແລະອຣຫັຕຕຜົລແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນສລະຣາຄະແລ້ວ ພິກສຸຮູບນັ້ນສລະໂທສະແລ້ວ ພິກສຸຮູບນັ້ນສລະ ຄາຍ ພົ້ນ ລະ ສລັດ ເພິກ ຖອນໂມຫະຂຶ້ນແລ້ວ

ຈິຕຂອງພິກສຸຮູບນັ້ນປອດຈາກຣາຄະ ຈິຕຂອງພິກສຸຮູບນັ້ນປອດຈາກໂທສະ ຈິຕຂອງພິກສຸຮູບນັ້ນປອດຈາກໂມຫະ” ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າປຖົມຍານໃນເຮືອນວ່າງ ຯລຯ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ພິກສຸຮູບໃດຢູ່ໃນວິຫາຣຂອງທ່ານ ພິກສຸຮູບນັ້ນເຂົ້າປຖົມຍານ ຯລຯ ທຸຕິຍຍານ ຕຕິຍຍານ ຈຕຸຕຖຍານໃນເຮືອນວ່າງແລ້ວ ຯລຯ ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳຈຕຸຕຖຍານໃຫ້ແຈ້ງໃນເຮືອນວ່າງແລ້ວ” ຕ້ອງອາບັຕິທຸກກຕ

ບອກວ່າພິກສຸອື່ນເຂົ້າຈຕຸຕຖຍານໃນເຮືອນວ່າງ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ພິກສຸຮູບໃດໃຊ້ສອຍຈີວອນຂອງທ່ານ ພິກສຸຮູບໃດສັນບິນທບາຕຂອງທ່ານ ພິກສຸຮູບໃດໃຊ້ສອຍເສນາສນະຂອງທ່ານ ພິກສຸຮູບໃດບໍຣິໂພຄຄິລານປັຈຈັຍເພສັຊບໍຣິຂາຣ໑ຂອງທ່ານ ພິກສຸຮູບນັ້ນເຂົ້າຈຕຸຕຖຍານໃນເຮືອນວ່າງແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳຈຕຸຕຖຍານໃຫ້ແຈ້ງໃນເຮືອນວ່າງແລ້ວ” ຕ້ອງອາບັຕິທຸກກຕ

[໗໘] ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ “ວິຫາຣຂອງທ່ານພິກສຸຮູບໃດໃຊ້ສອຍແລ້ວ ຈີວອນຂອງທ່ານພິກສຸຮູບໃດໃຊ້ສອຍແລ້ວ ບິນທບາຕຂອງທ່ານພິກສຸຮູບໃດສັນແລ້ວ ເສນາສນະຂອງທ່ານພິກສຸຮູບໃດໃຊ້ສອຍແລ້ວ ຄິລານປັຈຈັຍເພສັຊບໍຣິຂາຣຂອງທ່ານພິກສຸຮູບໃດບໍຣິໂພຄແລ້ວ ພິກສຸຮູບນັ້ນເຂົ້າຈຕຸຕຖຍານໃນເຮືອນວ່າງແລ້ວ. . . ພິກສຸຮູບນັ້ນເຂົ້າຢູ່. . . ພິກສຸຮູບນັ້ນເປັນຜູ້ເຂົ້າແລ້ວ. . . ພິກສຸຮູບນັ້ນເປັນຜູ້ໄດ້. . . ພິກສຸຮູບນັ້ນເປັນຜູ້ຊຳນານ. . . ພິກສຸຮູບນັ້ນທຳຈຕຸຕຖຍານໃຫ້ແຈ້ງໃນເຮືອນວ່າງແລ້ວ” ຕ້ອງອາບັຕິທຸກກຕ

ເຊີງອັນຖະ :

໑ ຄິລານປັຈຈັຍເພສັຊບໍຣິຂາຣ ຄືເພສັຊທັງ ໕ ໄດ້ແກ່ ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ (ວິ. ອ. ໒/໔໙໐/໔໐, ສາຣຕຸຖ. ຕີກາ ໒/໔໙໐/໓໙໓) ເປັນສິ່ງສັປປາຍະສຳລັບພິກສຸຜູ້ເຈັບໄຂ້ ຈັດວ່າເປັນບໍຣິຂາຣ ຄືບໍຣິວາຣຂອງຊີວິຕ ດຸຈດັ່ງກຳແພງລ້ອມພຣະນະຄອນ ເພາະຄອຍປ້ອງກັນຮັກສາບໍ່ໃຫ້ອາພາທທີ່ຈະບັ່ນຮອນຊີວິຕໄດ້ຊ່ອງເກີດຂຶ້ນ ແລະເປັນສັມພາຣະຂອງຊີວິຕ ຄອຍປະຄັບປະຄອງຊີວິຕໃຫ້ດຳຣົງຢູ່ດົນ (ວິ. ອ. ໒/໔໙໐/໔໐-໔໑, ມ. ມູ. ອ. ໑/໑໙໑/໓໙໗,

ມ. ມູ ຕີກາ ໑/໒໓໓/໑໑໓) ເປັນເຄື່ອງປ້ອງກັນໂຣຄ ບຳບັດໂຣຄທີ່ໃຫ້ເກີດທຸກຂເວທນາ ເນື່ອງຈາກທາຕຸກຳເຣີບໃຫ້ຫາຍໄປ (ສາຣຕຸຖ. ຕີກາ ໒/໒໘໐/໓໘໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ຖ. ພູຕາໂຣຈນສິກຂາບົທ ອນາປັຕຕິວາຣ

ຄຳວ່າ ບອກ ຄື ພິກສຸກ່າວແກ່ອນຸປສັມບັນວ່າ "ທ່ານອາສັຍພິກສຸຮູບໃດແລ້ວໄດ້ຖວາຍວິຫາຣ ໄດ້ຖວາຍຈີວອນ ໄດ້ຖວາຍບິນທບາຕ ໄດ້ຖວາຍເສນາສນະ ໄດ້ຖວາຍຄິລານປັຈຈັຍເພສັຊບໍຣິຂາຣ ພິກສຸຮູບນັ້ນເຂົ້າແລ້ວ ກຳລັງເຂົ້າ ເປັນຜູ້ເຂົ້າຈຕຸຕຖຢານໃນເຮືອນວ່າງ ພິກສຸຮູບນັ້ນເປັນຜູ້ໄດ້ ເປັນຜູ້ຊຳນານ ເຮັດໃຫ້ແຈ້ງຈຕຸຕຖຢານໃນເຮືອນວ່າງແລ້ວ" ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໗໗] ໑. ພິກສຸບອກອຸຕຕຣິມນຸສສທັມທີ່ມີຈິງແກ່ອຸປສັມບັນ
໒. ພິກສຸຕົ້ນບັນຍັດ

ພູຕາໂຣຈນສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໙. ທຸຕຖຸລລາໂຣຈນສິກຂາບົທ ນິທານວັຕຖຸ

໑. ມຸສາວາທວັຄ

໙. ທຸຕຖຸລລາໂຣຈນສິກຂາບົທ
ວ່າດ້ວຍການບອກອາບັຕິຊົ່ວຫຍາບ

ເຣື້ອງພຣະອຸປນັນທສາກຍບຸຕຣ
[໗໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິ

ກເສດຖີ ເຂດກຸງສາວັດຖີ ສມັຍນັ້ນ ທ່ານພຣະອຸປນັນທສູາກຍບຸຕຣຜິດຖຽງກັບພວກພິກສຸສັພພັຄຄີຍ໌ ທ່ານຕ້ອງອາບັຕິສັງຂູາທິເສສຂໍ້ຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ຈຶ່ງຂໍສົງຂ໌ຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ ສົງຂ໌ໃຫ້ທ່ານຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ

ສມັຍນັ້ນ ໃນກຸງສາວັດຖີມີສັງຂູພັຕຂອງສມາຄົມນຶ່ງເກີດຂຶ້ນ ທ່ານພຣະອຸປນັນທສູາກຍບຸຕຣກຳລັງຢູ່ປຣິວາສ ຈຶ່ງນັ່ງ ນະ ອາສນະສຸດທ້າຍໃນໂຮງອາຫາຣ ພວກພິກສຸສັພພັຄຄີຍ໌ກ່າວກັບອຸບາສິກເຫລົ່ານັ້ນວ່າ "ທ່ານພຣະອຸປນັນທສູາກຍບຸຕຣເປັນພຣະປະຈຳຕະກູນທີ່ພວກທ່ານຍົກຍ້ອງ ໃຊ້ມືທີ່ປ່ອນເຂົ້າທີ່ເຂົາຖວາຍດ້ວຍສັດທາ ພຍາຍາມທຳນ້ຳອສຸຈິໃຫ້ເຄື່ອນ ທ່ານຕ້ອງອາບັຕິຂໍ້ຈົງໃຈທຳນ້ຳອສຸຈິໃຫ້ເຄື່ອນ ຈຶ່ງຂໍສົງຂ໌ຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ ສົງຂ໌ໃຫ້ທ່ານຢູ່ປຣິວາສເພື່ອອອກຈາກອາບັຕິນັ້ນ ທ່ານກຳລັງຢູ່ປຣິວາສຈຶ່ງນັ່ງ ນະ ອາສນະສຸດທ້າຍ"

ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງບອກອາບັຕິຊົ່ວຫຍາບຂອງພິກສຸແກ່ອນຸປສັມບັນລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານບອກອາບັຕິຊົ່ວຫຍາບຂອງພິກສຸແກ່ອນຸປສັມບັນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງບອກອາບັຕິຊົ່ວຫຍາບຂອງພິກສຸແກ່ອນຸປສັມບັນລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໙] ກໍ ພິກສຸໃດບອກອາບັຕິຊົ່ວຫຍາບຂອງພິກສຸແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ຮັບສົມມຸດ

ເຣື່ອງພຣະອຸປນັນທສູາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໗໐] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ຂອງພິກສຸ ຄື ຂອງພິກສຸຮູບອື່ນ

ອາບັຕິທີ່ຊື່ວ່າ ຊົ່ວຫຍາບ ໄດ້ແກ່ ອາບັຕິປາຣາຊິກ ໔ ສິກຂາບົທ ແລະອາບັຕິສັງຄາທິເສສ ໑໓ ສິກຂາບົທ

ທີ່ຊື່ວ່າ ອນຸປສັມບັນ ຄື ຍົກເວັ້ນພິກສຸແລະພິກສຸນີ ນອກນັ້ນຊື່ວ່າອນຸປສັມບັນ

ຄຳວ່າ ບອກ ຄື ບອກແກ່ສຕຣີຫລືແກ່ບຸຣຸສ ແກ່ຄຣືຫັສຖ໌ຫລືແກ່ບັພຊິຕ

ຄຳວ່າ ເວັ້ນໄວ້ແຕ່ພິກສຸໄດ້ຮັບສົມມຸດ ຄື ຍົກເວັ້ນພິກສຸທີ່ໄດ້ຮັບມອບຫມາຍຈາກສົງຂ໌໑

ເຊີງອັນຖະ :

໑ ຄືມອບຫມາຍໃຫ້ເປັນຜູ້ບອກອາບັຕິ (ເບິ່ງ ຫນ້າ ໔໗໑-໔໗໔ ປະກອບ)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໙. ທຸຕຖຸລລາໂຣຈນ ສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ພິກສຸທີ່ໄດ້ຮັບສົມມຸດໃຫ້ບອກ ກຳຫນົດອາບັຕິ ບໍ່ກຳຫນົດຕະກູນກໍມີ

ພິກສຸທີ່ໄດ້ຮັບສົມມຸດໃຫ້ບອກ ກຳຫນົດຕະກູນ ບໍ່ກຳຫນົດອາບັຕິກໍມີ

ພິກສຸທີ່ໄດ້ຮັບສົມມຸດໃຫ້ບອກ ກຳຫນົດອາບັຕິແລະກຳຫນົດຕະກູນກໍມີ

ພິກສຸທີ່ໄດ້ຮັບສົມມຸດໃຫ້ບອກ ບໍ່ກຳຫນົດອາບັຕິແລະບໍ່ກຳຫນົດຕະກູນກໍມີ

ທີ່ຊື່ວ່າ ກຳຫນົດອາບັຕິ ຄື ສົງຂ໌ກຳຫນົດອາບັຕິວ່າ ເພິງບອກຕາມຈຳນວນອາບັຕິເທົ່ານີ້

ທີ່ຊື່ວ່າ ກຳຫນົດຕະກູນ ຄື ສົງຂ໌ກຳຫນົດຕະກູນວ່າ ເພິງບອກໃນຕະກູນມີປະມານເທົ່ານີ້

ທີ່ຊື່ວ່າ ກຳຫນົດອາບັຕິແລະກຳຫນົດຕະກູນ ຄື ສົງຂ໌ກຳຫນົດອາບັຕິແລະກຳຫນົດຕະກູນໄວ້ວ່າ ເພິງບອກຕາມຈຳນວນອາບັຕິເທົ່ານີ້ ໃນຕະກູນມີປະມານເທົ່ານີ້

ທີ່ຊື່ວ່າ ບໍ່ກໍາຫນົດອາບັຕິແລະບໍ່ກໍາຫນົດຕະກູນ ຄື ສົງຊ໌ບໍ່ກໍາຫນົດອາບັຕິແລະບໍ່ກໍາຫນົດຕະກູນໄວ້ວ່າ ເພິ່ງບອກຕາມຈໍານວນອາບັຕິເທົ່ານີ້ ໃນຕະກູນມີປະມານເທົ່ານີ້

[໗໑] ໃນການກໍາຫນົດອາບັຕິ ພິກສຸບອກອາບັຕິອື່ນນອກຈາກອາບັຕິທີ່ສົງຊ໌ກໍາຫນົດໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນການກໍາຫນົດຕະກູນ ພິກສຸບອກໃນຕະກູນອື່ນນອກຈາກຕະກູນທີ່ສົງຊ໌ກໍາຫນົດໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນການກໍາຫນົດອາບັຕິແລະໃນການກໍາຫນົດຕະກູນ ພິກສຸບອກອາບັຕິອື່ນ ນອກຈາກອາບັຕິທີ່ສົງຊ໌ກໍາຫນົດໄວ້ ແລະໃນຕະກູນອື່ນນອກຈາກຕະກູນທີ່ສົງຊ໌ກໍາຫນົດໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນກໍຣນີທີ່ບໍ່ໄດ້ກໍາຫນົດອາບັຕິແລະໃນກໍຣນີທີ່ບໍ່ໄດ້ກໍາຫນົດຕະກູນ ບໍ່ຕ້ອງອາບັຕິ

ຕິກປາຈິຕຕີຍ໌

[໗໔] ອາບັຕິຊົ່ວຫຍາບ ພິກສຸສໍາຄັນວ່າເປັນອາບັຕິຊົ່ວຫຍາບ ບອກແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ຮັບສົມມຸດ

ອນາປັຕຕິວາຣ

ອາບັຕິຊົ່ວຫຍາບ ພິກສຸບໍ່ແນ່ໃຈ ບອກແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ຮັບສົມມຸດ
ອາບັຕິຊົ່ວຫຍາບ ພິກສຸສໍາຄັນວ່າບໍ່ເປັນອາບັຕິຊົ່ວຫຍາບ ບອກແກ່ອນຸປສັມບັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ພິກສຸໄດ້ຮັບສົມມຸດ

ທຸກກົຕ

ພິກສຸບອກອາບັຕິບໍ່ຊົ່ວຫຍາບ ຕ້ອງອາບັຕິທຸກກົຕ
ພິກສຸບອກຄວາມປະພຶດຊົ່ວຫຍາບຫລືບໍ່ຊົ່ວຫຍາບແກ່ອນຸປສັມບັນ ຕ້ອງອາບັຕິທຸກກົຕ
ອາບັຕິບໍ່ຊົ່ວຫຍາບ ພິກສຸສໍາຄັນວ່າເປັນອາບັຕິຊົ່ວຫຍາບ ຕ້ອງອາບັຕິທຸກກົຕ
ອາບັຕິບໍ່ຊົ່ວຫຍາບ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ
ອາບັຕິບໍ່ຊົ່ວຫຍາບ ພິກສຸສໍາຄັນວ່າເປັນອາບັຕິບໍ່ຊົ່ວຫຍາບ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໘໓] ໑. ພິກສຸບອກເຣື້ອງທີ່ເກີດແຕ່ບໍ່ບອກອາບັຕິ

໒. ພິກສຸບອກອາບັຕິແຕ່ບໍ່ບອກເຣື້ອງທີ່ເກີດ

໓. ພິກສຸຜູ້ໄດ້ຮັບສົມມຸດ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ທຸຕຖຸລລາໂຮຈນສິກຂາບົທທີ ໙ ຈົບ

ພຣະວິນັຍປີດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ໑໐. ປຖວີຂນນສິກຂາບົທ
ນິທານວັຕຖຸ

໑. ມຸສາວາທວັຄ

໑໐. ປຖວີຂນນສິກຂາບົທ

ວ່າດ້ວຍການຂຸດດິນ

ເຣື້ອງພິກສຸຊາວເມືອງອາລະວີ

[໘໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ອັຄຄາລະວເຈດີຍ໌ ເຂຕເມືອງອາລະວີ ສມັຍນັ້ນ ພວກພິກສຸຊາວເມືອງອາລະວີຊ່ອຍກັນກໍ່ສ້າງ ຂຸດແດ່ ໃຊ້ໃຫ້ຂຸດແດ່ ຊຶ່ງດິນ ພວກຊາວບ້ານຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງຂຸດແດ່ ໃຊ້ໃຫ້ຂຸດແດ່ຊຶ່ງດິນລະ ພຣະສມນະເຊື້ອສາຍສາກຍບຸຕຣບຽດບຽນຊີວະຊຶ່ງມີອິນທຣີຍ໌ດຽວ” ພວກພິກສຸໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸຊາວເມືອງອາລະວີ ຈຶ່ງຂຸດແດ່ ໃຊ້ໃຫ້ຂຸດແດ່ຊຶ່ງດິນລະ” ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸຊາວເມືອງອາລະວີໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຂຸດແດ່ ໃຊ້ໃຫ້ຂຸດແດ່ຊຶ່ງດິນແມ່ນແທ້ບໍ" ພິກສຸຊາວເມືອງອາຣວິທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຂຸດແດ່ ໃຊ້ໃຫ້ຂຸດແດ່ ຊຶ່ງດິນລະ ໂມຂບຸຣຸສທັງຫລາຍ ພວກຊາວບ້ານສຳຄັນວ່າດິນມີຊີວະ ໂມຂບຸຣຸສທັງຫລາຍກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ສິກຂາບົທວິພັງຄ໌

ພຣະບັນຍັດ

[໓໕] ກໍ ພິກສຸໃດຂຸດ ຫລືໃຊ້ໃຫ້ຂຸດຊຶ່ງດິນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກສຸຊາວເມືອງອາຣວີ ຈົບ

ສິກຂາບົທວິພັງຄ໌

[໓໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ດິນ ໄດ້ແກ່ ດິນ ໒ ຊນິດ ຄື (໑) ດິນແທ້ (໒) ດິນບໍ່ແທ້

ທີ່ຊື່ວ່າ ດິນແທ້ ຄື ດິນຣ່ວນລ້ວນ ດິນຫນຽວລ້ວນ ດິນມີຫີນຜສົມຫນ້ອຍດຽວ ດິນມີກ້ອນຫີນຜສົມຫນ້ອຍດຽວ ດິນມີກຣະເບື້ອງຜສົມຫນ້ອຍດຽວ ດິນມີແຮ່ຜສົມຫນ້ອຍດຽວ ດິນມີຊາຍຜສົມຫນ້ອຍດຽວ ດິນຣ່ວນເປັນສ່ວນຫລາຍ ດິນຫນຽວເປັນສ່ວນຫລາຍ ແມ່ນດິນທີ່ຍັງບໍ່ເຜົາໄຟກໍຮຽກວ່າ ດິນແທ້ ກອງດິນຣ່ວນຫລືດິນຫນຽວທີ່ຝົນຕົກຮົດເກີນ ໔ ເດືອນກໍຮຽກວ່າ ດິນແທ້ ທີ່ຊື່ວ່າ ດິນບໍ່ແທ້ ຄື ຫີນລ້ວນ ດິນມີກ້ອນຫີນລ້ວນ ດິນມີກຣະເບື້ອງລ້ວນ ດິນມີແຮ່ລ້ວນ ດິນມີຊາຍລ້ວນ ດິນມີດິນຣ່ວນຜສົມຫນ້ອຍດຽວ ດິນມີດິນຫນຽວຜສົມຫນ້ອຍດຽວ ດິນມີຫີນ ດິນມີກ້ອນຫີນມາກ ດິນມີກຣະເບື້ອງມາກ ດິນມີແຮ່ມາກ ດິນມີຊາຍມາກ ແມ່ນດິນທີ່ເຜົາໄຟແລ້ວກໍຮຽກວ່າ ດິນບໍ່ແທ້

ກອງດິນອ່ອນຫລືດິນຫນຽວທີ່ຝົນຕົກຣົດຍັງບໍ່ເຖິງ ໔ ເດືອນກໍຮຽກວ່າ ດິນບໍ່ແທ້
ຄໍາວ່າ ຂຸດ ຄື ພິກສຸຂຸດເອງ ຕ້ອງອາບັຕິປາຈິຕຕີຍ໌
ຄໍາວ່າ ໃຊ້ໃຫ້ຂຸດ ຄື ພິກສຸໃຊ້ຜູ້ອື່ນໃຫ້ຂຸດ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸສັ່ງຄັ້ງດຽວ ເຂົາຂຸດຫລາຍຄັ້ງ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໑. ມຸສາວາທວັຄ ໑໐. ປຖວີຂນນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

[໗໗] ດິນ ພິກສຸສໍາຄັນວ່າເປັນດິນ ຂຸດຫລືໃຊ້ໃຫ້ຂຸດ ທໍາລາຍຫລືໃຊ້ໃຫ້ທໍາລາຍ ເຜົາຫລືໃຊ້ໃຫ້ເຜົາ ຕ້ອງອາບັຕິປາຈິຕຕີຍ໌
ດິນ ພິກສຸບໍ່ແນ່ໃຈ ຂຸດຫລືໃຊ້ໃຫ້ຂຸດ ທໍາລາຍຫລືໃຊ້ໃຫ້ທໍາລາຍ ເຜົາຫລືໃຊ້ໃຫ້ເຜົາ ຕ້ອງອາບັຕິທຸກກົຕ
ດິນ ພິກສຸສໍາຄັນວ່າບໍ່ແມ່ນດິນ ຂຸດຫລືໃຊ້ໃຫ້ຂຸດ ທໍາລາຍຫລືໃຊ້ໃຫ້ທໍາລາຍ ເຜົາຫລືໃຊ້ໃຫ້ເຜົາ ບໍ່ຕ້ອງອາບັຕິ
ບໍ່ແມ່ນດິນ ພິກສຸສໍາຄັນວ່າເປັນດິນ ຕ້ອງອາບັຕິທຸກກົຕ
ບໍ່ແມ່ນດິນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ
ບໍ່ແມ່ນດິນ ພິກສຸສໍາຄັນວ່າບໍ່ແມ່ນດິນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໗໘] ໑. ພິກສຸກ່າວວ່າ "ທ່ານຈົ່ງຮູ້ ຈົ່ງໃຫ້ ຈົ່ງນໍາສິ່ງນີ້ມາ ເຮົາຕ້ອງການສິ່ງນີ້ທ່ານຈົ່ງທໍາສິ່ງນີ້ໃຫ້ເປັນກັປປີຍະ"໑
໒. ພິກສຸບໍ່ຈົງໃຈ
໓. ພິກສຸບໍ່ມີສຕິ
໔. ພິກສຸບໍ່ຮູ້

໕. ພິກຂຸວິກົລຈິຕ
໖. ພິກຂຸຕົ້ນບັນຍັດ

ປຖວິຂນບນສິກຂາບົທທີ ໑໐ ຈົບ
ມຸສາວາທວັຄທີ ໑ ຈົບ

ເຊີງອັນຖະ :
໑ ຄື ໃຊ້ໃຫ້ຜູ້ອື່ນເຮັດດ້ອຍກ່າວວ່າ ທ່ານຈົ່ງຮູ້ຫລຸມເສົາ ຈົ່ງຮູ້ດິນຫນຽວມາກ ຈົ່ງຮູ້ດິນຫນຽວຜສົມແກລບ ທ່ານຈົ່ງໃຫ້ດິນຫນຽວມາກ ຈົ່ງໃຫ້ດິນຫນຽວຜສົມແກລບ ທ່ານຈົ່ງນຳດິນຫນຽວມາ ຈົ່ງນຳຝຸ່ນມາ ຕ້ອງກາຣດິນຫນຽວຕ້ອງກາຣຝຸ່ນ ທ່ານຈົ່ງທຳຫລຸມເສົານີ້ໃຫ້ເປັນກັປປິຍະ ຈົ່ງທຳດິນຫນຽວນີ້ໃຫ້ເປັນກັປປິຍະ ຈົ່ງທຳຝຸ່ນນີ້ໃຫ້ເປັນກັປປິຍະຄືໃຫ້ເປັນຂອງທີ່ຄວຣໃຊ້ (ວິ. ອ. ໒/໘໘/໒໘໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໑. ມຸສາວາທວັຄ ຣວມສິກຂາບົທທີ່ມີໃນມຸສາວາທວັຄ

ຣວມສິກຂາບົທທີ່ມີໃນມຸສາວາທວັຄ
ມຸສາວາທວັຄມີ ໑໐ ສິກຂາບົທ ຄື

໑. ມຸສາວາທສິກຂາບົທ ວ່າດ້ວຍກາຣກ່າວເທັຈ
໒. ໂອມສວາທສິກຂາບົທ ວ່າດ້ວຍກາຣກ່າວສຽດສີ
໓. ເປສຸນສິກຂາບົທ ວ່າດ້ວຍກາຣກ່າວສໍ່ສຽດ
໔. ປທໂສທັມມສິກຂາບົທ ວ່າດ້ວຍກາຣໃຫ້ກ່າວທັມເປັນບົທໆ
໕. ສຫເສຍຍສິກຂາບົທ ວ່າດ້ວຍກາຣນອນຮ່ວມກັນ
໖. ທຸຕິຍສຫເສຍຍສິກຂາບົທ ວ່າດ້ວຍກາຣນອນຮ່ວມກັນຂໍ້ທີ ໒
໗. ທັມມເທສນາສິກຂາບົທ ວ່າດ້ວຍກາຣສະແດງທັມ
໘. ພູຕາໂຣຈນສິກຂາບົທ ວ່າດ້ວຍກາຣບອກອຸຕຕຣິມນຸສສທັມທີ່ມີຈິງ
໙. ທຸຕຖຸລລາໂຣຈນສິກຂາບົທ ວ່າດ້ວຍກາຣບອກອາບັຕິຊົ່ວຫຍາບ

໑໐. ປຖວິຂນນສິກຂາບົທ ວ່າດ້ວຍການການຂຸດດິນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ພູຕຄາມວັຄ ໑. ພູຕຄາມສິກຂາບົທ ນິທານ ວັຕຖຸ

໔. ພູຕຄາມວັຄ

ຫມວດວ່າດ້ວຍພູຕຄາມ

໑. ພູຕຄາມສິກຂາບົທ

ວ່າດ້ວຍການພາກພູຕຄາມ

ເຣື້ອງພິກສຸຊາວເມືອງອາລວີ

[໗ລ] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ອັຄຄາລວເຈດີຍ໌ ເຂຕເມືອງອາລວີ ຄັ້ງນັ້ນ ພວກພິກສຸຊາວເມືອງອາລວີທຳການກໍ່ສ້າງ ຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ ພິກສຸຊາວເມືອງອາລວີຮູບນຶ່ງກຳລັງຕັດຕົ້ນໄມ້ ເທວດາຜູ້ສິງຢູ່ທີ່ຕົ້ນໄມ້ໄດ້ກ່າວກັບພິກສຸນັ້ນວ່າ "ທ່ານຜູ້ຈະເຣີນ ທ່ານຕ້ອງການຈະສ້າງທີ່ຢູ່ຂອງທ່ານກໍໄປຣດຢ່າຕັດຕົ້ນໄມ້ທີ່ເປັນທີ່ຢູ່ຂອງຂ້າພະເຈົ້າເລີຍ" ພິກສຸນັ້ນບໍ່ເຊື່ອຟັງຍັງຂືນຕັດ ໄດ້ຟັນຖືກແຂນລູກຂອງເທວດາ ເທື່ອນັ້ນ ເທວດາໄດ້ມີຄວາມຄິດວ່າ "ເຮົາຂ້າພິກສຸນີ້ໃນທີ່ນີ້ຈະດີບໍ່" ແຕ່ແລ້ວໄດ້ມີຄວາມຄິດວ່າ "ການທີ່ເຮົາຈະຂ້າພິກສຸໃນທີ່ນີ້ບໍ່ສົມຄວຣ ທາງທີ່ດີ ເຮົາຄວຣນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ" ຈຶ່ງໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລເຣື້ອງນັ້ນໃຫ້ຊົງຊາບ ພຣະຜູ້ມີພຣະພາຄປະທານສາທຸການວ່າ "ເທວດາ ດີແລ້ວ ດີນັກຫນາທີ່ທ່ານບໍ່ຂ້າພິກສຸ ຖ້າທ່ານຂ້າພິກສຸໃນວັນນີ້ ທ່ານຈະປະສົບບາປມາກ ເທວດາ ໄປເຖີດ ທ່ານຈົ່ງໄປຢູ່ທີ່ຕົ້ນໄມ້ອ່າງໃນທີ່ພຸ້ນ" ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ລະ ພຣະສມນະເຊື້ອສາຍສາກຍບຸຕຣ ບຽດບຽນຊີວະຊຶ່ງມີອິນທຣີຍ໌ດຽວ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸຊາວເມືອງອາລວີຈຶ່ງຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸຊາວເມືອງອາລວີໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫດ ຊົງສອບຖາມພວກພິກສຸຊາວເມືອງອາຣຸວີວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຕັດແດ່ ໃຊ້ໃຫ້ຕັດແດ່ ຊຶ່ງຕົ້ນໄມ້ແມ່ນແທ້ບໍ" ພວກພິກສຸຊາວເມືອງອາຣຸວີທູລຮັບວ່າ "ແມ່ນແທ້ພຣະພຸທທຸເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທຸເຈົ້າຊົງຕຳໜິວ່າ "ຯລຯ ໂມຊບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຕັດແດ່ ໃຊ້ໃຫ້ຕັດແດ່ຊຶ່ງຕົ້ນໄມ້ລະ ໂມຊບຸຣຸສທັງຫລາຍ ເພາະພວກຊາວບ້ານມີຄວາມສຳຄັນວ່າຕົ້ນໄມ້ມີຊີວະ ໂມຊບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໙໐] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະພາກພູຕຄາມ໑

ເຣື່ອງພິກສຸຊາວເມືອງອາຣຸວີ ຈົບ

ສິກຂາບົທວິພັງຄ໌

[໙໑] ທີ່ຊື່ວ່າ ພູຕຄາມ ໄດ້ແກ່ ພືຊພັນທຸ໌ ໕ ຊນິດ ຄື (໑) ພືຊພັນທຸ໌ເກີດຈາກເຫງົ້າ (໒) ພືຊພັນທຸ໌ເກີດຈາກລຳຕົ້ນ (໓) ພືຊພັນທຸ໌ເກີດຈາກຕາ (໔) ພືຊພັນທຸ໌ເກີດຈາກຍອດ (໕) ພືຊພັນທຸ໌ເກີດຈາກເມັດ

ເຊີງອັນຖະ :

໑ ພູຕຄາມ ກຸ່ມແຫ່ງພືຊພັນທຸ໌ທີ່ຈະງອກໄດ້ ທີ່ຈະເຣີນເຕີບໃຫຍ່ແລ້ວ ເປັນຊື່ຮຽກຕົ້ນໄມ້ຢືນຕົ້ນແລະຫຍ້າຂຽວສົດ (ວິ. ອ. ໒/໙໐-໙໑/໒໗໓-໒໗໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໒. ພູຕຄາມວັຄ ໑. ພູຕຄາມສິກຂາບົທ ບົທພາຊນີຍ໌

ທີ່ຊື່ວ່າ ພືຊພັນທຸ໌ເກີດຈາກເຫງົ້າ ໄດ້ແກ່ ຂມິ້ນ ຂີງ ວ່ານນ້ຳ ວ່ານເປຣາະ ອຸຕພິດ ຂ່າ ແຝກ ແຫ້ວຫມູ ຫລືພືຊພັນທຸ໌ຢ່າງອື່ນຊຶ່ງເກີດທີ່ເຫງົ້າ ງອກທີ່ເຫງົ້າ ນີ້ຊື່ວ່າພືຊພັນທຸ໌ເກີດຈາກເຫງົ້າ
ທີ່ຊື່ວ່າ ພືຊພັນທຸ໌ເກີດຈາກລຳຕົ້ນ ໄດ້ແກ່ ຕົ້ນໂພ ຕົ້ນໄທຣ ຕົ້ນດີປລີ ຕົ້ນມະເດື່ອ ຕົ້ນຕ່າຮ້າງ ຕົ້ນມະຂວິດ ຫລືພືຊພັນທຸ໌ຢ່າງອື່ນຊຶ່ງເກີດທີ່ລຳຕົ້ນ ງອກທີ່ລຳຕົ້ນ ນີ້ຊື່ວ່າ ພືຊພັນທຸ໌ເກີດຈາກລຳຕົ້ນ
ທີ່ຊື່ວ່າ ພືຊພັນທຸ໌ເກີດຈາກຕາ ໄດ້ແກ່ ອ້ອຍ ໄມ້ໄຜ່ ໄມ້ອໍ້ ຫລືພືຊພັນທຸ໌ຢ່າງອື່ນຊຶ່ງເກີດທີ່ຕາ ງອກທີ່ຕາ ນີ້ຊື່ວ່າພືຊພັນທຸ໌ເກີດຈາກຕາ
ທີ່ຊື່ວ່າ ພືຊພັນທຸ໌ເກີດຈາກຍອດ ໄດ້ແກ່ ຜັກບົ້ງລ້ອມ ຜັກອີ່ຕູ່ ເຄືອຢ່ານາງ ຫລືພືຊພັນທຸ໌ຢ່າງອື່ນຊຶ່ງເກີດທີ່ຍອດ ງອກທີ່ຍອດ ນີ້ຊື່ວ່າພືຊພັນທຸ໌ເກີດຈາກຍອດ
ທີ່ຊື່ວ່າ ພືຊພັນທຸ໌ເກີດຈາກເມັດ ໄດ້ແກ່ ເຂົ້າ ຖົ່ວ ງາ ຫລືພືຊພັນທຸ໌ຢ່າງອື່ນຊຶ່ງເກີດທີ່ເມັດ ງອກທີ່ເມັດ ນີ້ຊື່ວ່າພືຊພັນທຸ໌ເກີດຈາກເມັດ

ບົທພາຊນີຍ໌

[໘໔] ພືຊພັນທຸ໌ ພິກສຸສຳຄັນວ່າເປັນພືຊພັນທຸ໌ ຕັດ ຫລືໃຊ້ໃຫ້ຕັດ ທຳລາຍ ຫລືໃຊ້ໃຫ້ທຳລາຍ ຕົ້ມ ຫລືໃຊ້ໃຫ້ຕົ້ມ ຕ້ອງອາບັຕິປາຈິຕຕີຍ໌
ພືຊພັນທຸ໌ ພິກສຸບໍ່ແນ່ໃຈ ຕັດ ຫລືໃຊ້ໃຫ້ຕັດ ທຳລາຍ ຫລືໃຊ້ໃຫ້ທຳລາຍ ຕົ້ມ ຫລືໃຊ້ໃຫ້ຕົ້ມ ຕ້ອງອາບັຕິທຸກກຕ
ພືຊພັນທຸ໌ ພິກສຸສຳຄັນວ່າບໍ່ແມ່ນພືຊພັນທຸ໌ ຕັດ ຫລືໃຊ້ໃຫ້ຕັດ ທຳລາຍ ຫລືໃຊ້ໃຫ້ທຳລາຍ ຕົ້ມ ຫລືໃຊ້ໃຫ້ຕົ້ມ ບໍ່ຕ້ອງອາບັຕິ
ບໍ່ແມ່ນພືຊພັນທຸ໌ ພິກສຸສຳຄັນວ່າເປັນພືຊພັນທຸ໌ ຕ້ອງອາບັຕິທຸກກຕ
ບໍ່ແມ່ນພືຊພັນທຸ໌ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ບໍ່ແມ່ນພືຊພັນທຸ໌ ພິກສຸສຳຄັນວ່າບໍ່ແມ່ນພືຊພັນທຸ໌ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໔. ພູຕຄາມວັຄ ໑. ພູຕຄາມສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໙໓] ໑. ພິກສຸກ່າວວ່າ "ທ່ານຈົ່ງຮູ້ ຈົ່ງໃຫ້ ຈົ່ງນຳສິ່ງນີ້ມາ ເຮົາຕ້ອງການສິ່ງນີ້ ທ່ານຈົ່ງທຳສິ່ງນີ້ໃຫ້ເປັນກັປປິຍະ"໑

໒. ພິກສຸບໍ່ຈິງໃຈ

໓. ພິກສຸບໍ່ມີສຕິ

໔. ພິກສຸຜູ້ບໍ່ຮູ້

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ພູຕຄາມສິກຂາບົທທີ ໑ ຈົບ

ເຊີງອັນຖະ :

໑ ຄື ໃຊ້ໃຫ້ຜູ້ອື່ນເຮັດດ້ວຍກ່າວວ່າ ທ່ານຈົ່ງຮູ້ພືຊພັນທຸ໌ເກີດຈາກເຫງົ້ານີ້ ທ່ານຈົ່ງໃຫ້ເຫງົ້າ ຫລືໃບໄມ້ນີ້ ທ່ານຈົ່ງນຳຕົ້ນໄມ້ຫລືເຄືອໄມ້ນີ້ມາ ຕ້ອງການດອກໄມ້ ຜົລໄມ້ ຫລືໃບໄມ້ນີ້ ທ່ານຈົ່ງທຳຕົ້ນໄມ້ ເຄືອໄມ້ ຫລືຜົລໄມ້ນີ້ໃຫ້ເປັນກັປປິຍະ ຄືໃຫ້ເປັນຂອງທີ່ຄວນໃຊ້ (ວິ. ອ. ໒/໙໓/໔໙໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໒. ພູຕຄາມວັຄ ໒. ອັຍປວາຫກສິກຂາບົທ ນິທານວັຕຖຸ

໒. ພູຕຄາມວັຄ

໒. ອັຍປວາຫກສິກຂາບົທ

ວ່າດ້ວຍການກ່າວປິດບັງ

ເຣື້ອງພຣະສັນນະ

[໙໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ໂຊສິຕາຣາມ ເຂຕກຸງໂກສັມພີ ສມັຍນັ້ນ ທ່ານພຣະສັນນະປະພຶດບໍ່ເຫມາະສົມ ຖືກພຣະວິນັຍທຣໄຕ່ສວນອາບັຕິທ່າມກາງສົງຂ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ "ໃຜຕ້ອງຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ຕຳຫນິ ປະນາມ

ໂພນທະນາວ່າ "ຈັ່ງໃດທ່ານພຣະສັນນະຖືກພຣະວິນັຍທຣໄຕ່ສວນອາບັຕິທ່ານກາງສົງຂ໌ ກັບນຳເອົາເຣື້ອງອື່ນມາກ່າວກົບເກື່ອນອີກເຣື້ອງນຶ່ງວ່າ "ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ" ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະສັນນະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງສອບຖາມພຣະສັນນະ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມທ່ານພຣະສັນນະວ່າ "ສັນນະ ຊາບວ່າເມື່ອທ່ານຖືກໄຕ່ສວນອາບັຕິທ່ານກາງສົງຂ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ 'ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ' ແມ່ນແທ້ບໍ" ທ່ານພຣະສັນນະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານ ເມື່ອຖືກໄຕ່ສວນອາບັຕິທ່ານກາງສົງຂ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ ໃຜຕ້ອງ ຯລຯ ພວກທ່ານກ່າວເຣື້ອງຫຍັງລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ຄັນຊົງຕຳຫນິແລ້ວໄດ້ຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ສົງຂ໌ຈົ່ງລົງອັຍຢອາຫກກັມ໑ ແກ່ພິກສຸສັນນະ ພິກສຸທັງຫລາຍ ສົງຂ໌ເພິງລົງອັຍຢອາຫກກັມຢ່າງນີ້ ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

ກັມວາຈາ

[໙໕] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ສັນນະນີ້ຖືກໄຕ່ສວນອາບັຕິທ່ານກາງສົງຂ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງ ຖ້າສົງຂ໌ພ້ອມກັນແລ້ວ ເພິງລົງອັຍຢອາຫກກັມແກ່ພິກສຸຊື່ສັນນະ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ສັນນະນີ້ຖືກໄຕ່ສວນອາບັຕິທ່ານກາງສົງຂ໌ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງ ສົງຂ໌ຈຶ່ງລົງອັຍຢອາຫກກັມແກ່ພິກສຸຊື່ສັນນະ ທ່ານຮູບໃດເຫັນດ້ວຍກັບກາຣລົງອັຍຢອາຫກກັມແກ່ພິກສຸຊື່ສັນນະ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ອັຍຢອາຫກກັມສົງຂ໌ລົງແກ່ພິກສຸຊື່ສັນນະແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຊົງບັນຍັດສິກຂາບົທ

ເທື່ອນັ້ນ ຄັນພຣະຜູ້ມີພຣະພາຄຊົງຕຳຫນິທ່ານພຣະສັນນະໂດຍປະກາຣຕ່າງໆແລ້ວໄດ້ຕຣັສໂທສ

ແຫ່ງຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ຄຳວ່າ "ອັຍຍ໌ວາຫກກັມ" ໄດ້ແກ່ ການລົງໂທສູພິກສຸທີ່ແກ້ງຍົກເຣື້ອງອື່ນໆມາເວົ້າປິດບັງຂໍ້ຫາທີ່ຖືກໂຈທບໍ່ໃຫ້ການຕາມຕຣງເມື່ອຖືກສົງຊ໌ສອບສວນ ເຊັ່ນ ຖືກພຣະວິນັຍທຣຖາມວ່າ "ທ່ານຕ້ອງອາບັຕິນີ້ຫລື" ກໍກ່າວວ່າ "ຜູ້ຂ້າໄປກຸງປາຕລີບຸຕຣມາ" ເມື່ອພຣະວິນັຍທຣກ່າວອີກວ່າ "ບໍ່ໄດ້ຖາມທ່ານເຣື້ອງໄປກຸງປາຕລີບຸຕຣ ແຕ່ຖາມເຣື້ອງອາບັຕິ" ກໍກ່າວວ່າ "ຕໍ່ຈາກກຸງປາຕລີບຸຕຣ ຜູ້ຂ້າກໍໄປກຸງຣາຊຄືຫ໌" (ວິ. ອ. ໒/໙໔/໒໙໓, ສາຣຕ຺ຖ. ຕີກາ ໓/໙໔-໙໗/໒໗-໒໙)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໒. ພູຕຄາມວັຄ ໒. ອັຍຍ໌ວາຫກສິກຂາບົທ ພຣະບັນຍັດ

ພຣະບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

[໙໓] ສມັຍນັ້ນ ທ່ານພຣະສັນນະຖືກໄຕ່ສວນອາບັຕິທ່າມກາງສົງຊ໌ ຄິດວ່າ "ເມື່ອເຮົານຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງຕ້ອງອາບັຕິ" ຈຶ່ງນິ່ງເສີຍ ທຳສົງຊ໌ໃຫ້ລຳບາກ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະສັນນະເມື່ອຖືກໄຕ່ສວນອາບັຕິທ່າມກາງສົງຊ໌ ຈຶ່ງນິ່ງເສັຽ ທຳສົງຊ໌ໃຫ້ລຳບາກລະ" ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະສັນນະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງສອບຖາມພຣະສັນນະ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມທ່ານພຣະສັນນະວ່າ "ສັນນະ ຊາບວ່າທ່ານເມື່ອຖືກໄຕ່ສວນອາບັຕິທ່າມກາງສົງຊ໌ ກັບນິ່ງເສີຍ ທຳສົງຊ໌ໃຫ້ລຳບາກແມ່ນແທ້ບໍ" ທ່ານພຣະສັນນະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານເມື່ອຖືກໄຕ່ສວນອາບັຕິທ່າມກາງສົງຊ໌ ຈຶ່ງນິ່ງ ທຳສົງຊ໌ໃຫ້ລຳບາກລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ຄັນຊົງຕຳໜິແລ້ວ

ໄດ້ຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ສົງຂ໌ຈົງລົງວິເຫສກກັມ໑ ແກ່ພິກສຸສັນນະ ພິກສຸທັງຫລາຍ ສົງຂ໌ເພິງລົງວິເຫສກກັມຢ່າງນີ້ ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

ເຊີງອັນຖະ :

໑ ຄຳວ່າ "ວິເຫສກກັມ" ໄດ້ແກ່ ກາຣລົງໂທສພິກສຸຜູ້ທຳສົງຂ໌ໃຫ້ລຳບາກ ຄືພິກສຸປະພຶດບໍ່ສົມຄວຣ ສົງຂ໌ຮຽກຕົວມາຖາມກັບນິ່ງເສີຍບໍ່ຕອບ ສົງຂ໌ຈຶ່ງສວດປະກາດກາຣທີ່ທ່ານທຳຕົວເຊັ່ນນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໒. ພູຕຄາມວັຄ ໒. ອັຍຢອາຫກສິກຂາບົທ ສິກຂາບົທວິພັງຄ໌

ກັມວາຈາ

[ລຖ] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ສັນນະນີ້ຖືກໄຕ່ສວນອາບັຕິທ່າມກາງສົງຂ໌ ໄດ້ນິ່ງເສີຍ ທຳສົງຂ໌ໃຫ້ລຳບາກ ຖ້າສົງຂ໌ພ້ອມກັນແລ້ວເພິງລົງວິເຫສກກັມແກ່ພິກສຸຊື່ສັນນະ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ສັນນະນີ້ຖືກໄຕ່ສວນອາບັຕິທ່າມກາງສົງຂ໌ ໄດ້ນິ່ງເສີຍ ທຳສົງຂ໌ໃຫ້ລຳບາກ ສົງຂ໌ຈຶ່ງລົງວິເຫສກກັມແກ່ພິກສຸຊື່ສັນນະ ທ່ານຮູບໃດເຫັນດ້ວຍກັບກາຣລົງວິເຫສກກັມແກ່ພິກສຸຊື່ສັນນະ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງວິເຫສກກັມສົງຂ໌ລົງແກ່ພິກສຸຊື່ສັນນະແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຊົງບັນຍັດສິກຂາບົທ

ເທື່ອນັ້ນ ຄັນພຣະຜູ້ມີພຣະພາຄຊົງຕຳຫນິທ່ານພຣະສັນນະໂດຍປະກາຣຕ່າງໆແລ້ວໄດ້ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໙໗] ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງເພາະທຳສົງຄ໌ໃຫ້ລຳບາກ

ເຣື້ອງພຣະສັນນະ ຈົບ

ສິກຂາບົທວິພັງຄ໌

[໙໙] ທີ່ຊື່ວ່າ ນຳເອົາເຣື້ອງອື່ນມາກ່າວປິດບັງ ຄື ພິກສຸເມື່ອຖືກໄຕ່ສວນວັຕຖຸ໑ ຫລືອາບັຕິທ່າມກາງສົງຄ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເຣື້ອງນັ້ນ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ "ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ" ນີ້ຊື່ວ່ານຳເອົາເຣື້ອງອື່ນມາກ່າວປິດບັງ

ທີ່ຊື່ວ່າ ທຳສົງຄ໌ໃຫ້ລຳບາກ ຄື ພິກສຸເມື່ອຖືກໄຕ່ສວນວັຕຖຸຫລືອາບັຕິທ່າມກາງສົງຄ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເຣື້ອງນັ້ນ ຈຶ່ງນິ່ງເສີຍ ນີ້ຊື່ວ່າທຳສົງຄ໌ໃຫ້ລຳບາກ

ເຊີງອັນຖະ :

໑ ຄຳວ່າ "ວັຕຖຸ" ໃນທີ່ນີ້ຫມາຍເຖິງເຣື້ອງທີ່ຖືກສົງຄ໌ນຳມາສອບສວນ ກໍຣນີທີ່ສົງຄ໌ຍົກຂຶ້ນມາສອບສວນ

ບົທພາຊນີຍ໌

[໑໐໐] ເມື່ອສົງຄ໌ຍັງບໍ່ລົງອັປໂລກນກັມ ພິກສຸຖືກໄຕ່ສວນວັຕຖຸຫລືອາບັຕິທ່າມກາງສົງຄ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເຣື້ອງນັ້ນ ກັບນຳເອົາເຣື້ອງອື່ນມາກ່າວປິດບັງອີກເຣື້ອງນຶ່ງວ່າ "ໃຜຕ້ອງ ຕ້ອງຫຍັງ ຕ້ອງໃນເຣື້ອງຫຍັງ ຕ້ອງຢ່າງໃດ ພວກທ່ານກ່າວເຖິງໃຜ ກ່າວເຣື້ອງຫຍັງ" ຕ້ອງອາບັຕິທຸກກົຏ

ເມື່ອສົງຄ໌ຍັງບໍ່ລົງວິເຫສກັມ ພິກສຸຖືກໄຕ່ສວນວັຕຖຸຫລືອາບັຕິທ່າມກາງສົງຄ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເຣື້ອງນັ້ນ ຈຶ່ງນິ່ງເສີຍທຳສົງຄ໌ໃຫ້ລຳບາກ ຕ້ອງອາບັຕິທຸກກົຏ

ເມື່ອສົງຄ໌ລົງອັປໂລກນກັມ ພິກສຸຖືກໄຕ່ສວນວັຕຖຸຫລືອາບັຕິທ່າມກາງສົງຄ໌ ບໍ່ຕ້ອງການຈະບອກ ບໍ່ຕ້ອງການຈະເປີດເຜີຍເຣື້ອງນັ້ນ ກັບນຳເອົາເຣື້ອງອື່ນມາກ່າວກົບເກື່ອນອີກເຣື້ອງນຶ່ງວ່າ "ໃຜຕ້ອງ ຯລຯ ພວກທ່ານກ່າວເຣື້ອງຫຍັງ" ຕ້ອງອາບັຕິປາຈິຕຕິຍ໌ ເມື່ອສົງຄ໌ລົງວິເຫສກັມ ພິກສຸຖືກໄຕ່

ສອນວັຕຖຸຫລືອາບັຕິທ່ານກາງສົງຊ໌ ບໍ່ຕ້ອງກາຣຈະບອກ ບໍ່ຕ້ອງກາຣຈະເປີດເຜີຍເຣື້ອງນັ້ນ ຈຶ່ງນິ່ງເສີຍ ທຳສົງຊ໌ໃຫ້ລຳບາກ ຕ້ອງອາບັຕິປາຈິຕຕີຍ໌

ຕິກປາຈິຕຕີຍ໌

[໑໐໑] ກັມທີ່ທຳຖືກຕ້ອງ໑ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ ເພາະທຳສົງຊ໌ໃຫ້ລຳບາກ

ເຊີງອັນຖະ :

໑ ຫມາຍເຖິງອັຍຍອາຫກກັມແລະອິເຫສກກັມ (ວິ. ອ. ໒/໑໐໑/໒໙໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຖ໌] ໔. ພູຕຄາມວັຄ ໔. ອັຍຍອາຫກສິກຂາບົທ

ອນາປັຕຕິວາຣ

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ ເພາະທຳສົງຊ໌ໃຫ້ລຳບາກ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະນຳເອົາເຣື້ອງອື່ນມາກ່າວປິດບັງ ເພາະທຳສົງຊ໌ໃຫ້ລຳບາກ

ຕິກທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໐໔] ໑. ພິກສຸບໍ່ເຂົ້າໃຈຈຶ່ງຖາມ

໒. ພິກສຸເປັນໄຂ້ໃຫ້ກາຣບໍ່ໄດ້

໓. ພິກສຸບໍ່ຍອມກ່າວເພາະຄິດວ່າ ສົງຊ໌ຈະມີຄວາມບາດຫມາງກັນ ຜິດຖຽງກັນ ຂັດແຍ້ງກັນ ຫລືວິວາທກັນ

໔. ພິກສຸບໍ່ຍອມກ່າວເພາະຄິດວ່າ ສົງຊ໌ຈັກແຕກແຍກ ຫລືສົງຊ໌ຈະແຕກແຫງ

໕. ພິກຂຸບໍ່ຍອມກ່າວເພາະຄິດວ່າ ສົງຂ໌ຈະເຮັດກັມທີ່ບໍ່ຖືກຕ້ອງ ຈະແຍກພວກກັນທຳ ຫລືຈະລົງໂທສພິກຂຸຜູ້ບໍ່ຄວຣລົງໂທສ

໖. ພິກຂຸວິກົລຈິຕ

໗. ພິກຂຸຕົ້ນບັນຍັດ

ວັຍປອາຫາກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ພູຕຄາມວັຄ ໓. ອຸຊຊາປນກສິກຂາບົທ ນິທານວັຕຖຸ

໔. ພູຕຄາມວັຄ

໓. ອຸຊຊາປນກສິກຂາບົທ

ວ່າດ້ວຍການກ່າວໃຫ້ເພ່ງໂທສ

ເຣື້ອງພຣະທັພພມັລລບຸຕຣ

[໑໐໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະທັພພມັລລບຸຕຣຈັດແຈງເສນາສນະແລະແຈກພັຕຕາຫາຣສົງຂ໌ ສມັຍນັ້ນ ພຣະເມຕຕິຍະແລະພຣະພຸມມຊກະ໑ ເປັນພຣະບວຊໃຫມ່ ມີບຸນຫນ້ອຍ ເສນາສນະຂອງສົງຂ໌ຊັ້ນຕ່ຳ ພັຕຕາຫາຣກໍຊັ້ນຕ່ຳ ຕົກເຖິງທ່ານທັງສອງ ທ່ານເຫລົ່ານັ້ນຈຶ່ງກ່າວໃຫ້ພິກຂຸທັງຫລາຍເພ່ງໂທສ໔ ທ່ານພຣະທັພພມັລລບຸຕຣວ່າ "ພຣະທັພພມັລລບຸຕຣຈັດແຈງເສນາສນະຕາມຄວາມຮັກແພງກັນ໓ ແລະແຈກພັຕຕາຫາຣຕາມຄວາມຮັກແພງກັນ" ບັນດາພິກຂຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເມຕຕິຍະແລະພຣະພຸມມຊກະຈຶ່ງກ່າວໃຫ້ພິກຂຸທັງຫລາຍເພ່ງໂທສທ່ານພຣະທັພພມັລລບຸຕຣລະ" ຄັນພິກຂຸເຫລົ່ານັ້ນຕຳຫນິພຣະເມຕຕິຍະແລະພຣະພຸມມຊກະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະ

ເມຕຕິຍະແລະພຣະພຸມມຊກະວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານກ່າວໃຫ້ພິກສຸທັງຫລາຍເຜ່ງໂທສທັພພມັລລບຸຕຣ ແມ່ນແທ້ບໍ່" ພຣະເມຕຕິຍະແລະພຣະພຸມມຊກະ ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງກ່າວໃຫ້ພິກສຸທັງຫລາຍເຜ່ງໂທສທັພພມັລລບຸຕຣລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ຢູ່ໃນກຸ່ມພຣະ ໖ ຮູບ ຊຶ່ງຮຽກວ່າ "ພິກສຸສັພພັຄຄີຍ໌" ໄດ້ແກ່ (໑) ພຣະປັນທຸກະ (໒) ພຣະໂລຫິຕກະ (໓) ພຣະເມຕຕິຍະ (໔) ພຣະພຸມມຊກະ (໕) ພຣະອັສສຊິ (໖) ພຣະປຸນັພພສຸກະ (ມ. ມ. ອ ໑໗໕/໑໓໘)

໒ ກ່າວໃຫ້ຜູ້ອື່ນເຜ່ງໂທສ ຄືກ່າວໃຫ້ພິກສຸທັງຫລາຍດູໝິ່ນພຣະທັພພມັລລບຸຕຣ ເບິ່ງດູພຣະທັພພມັລລບຸຕຣ ຢ່າງດູໝິ່ນ ຫລືກ່າວໃຫ້ຄິດໃນທາງບໍ່ດີໃນພຣະທັພພມັລລບຸຕຣ (ວິ. ອ. ໒/໑໐໓/໒໘໕)

໓ ຄືຈັດເສນາສນະທີ່ປານີຕເພື່ອເພື່ອນພິກສຸທີ່ຄົບຫາສນິທສນມກັບຕນ (ວິ. ອ. ໒/໑໐໓/໒໘໕)

ພຣະບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເຜ່ງໂທສສິກຂາບົທນີ້ ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

[໑໐໔] ສມັຍນັ້ນ ພຣະເມຕຕິຍະແລະພຣະພຸມມຊກະຄິດວ່າ ພິກສຸທັງຫລາຍເຊື່ອຟັງພຣະບັນຍັດວ່າພຣະຜູ້ມີພຣະພາຄຊົງຫ້າມການກ່າວໃຫ້ຜູ້ອື່ນເຜ່ງໂທສ ຈຶ່ງຈົ່ມວ່າທ່ານພຣະທັພພມັລລບຸຕຣໃກ້ໆພິກສຸທັງຫລາຍວ່າ "ພຣະທັພພມັລລບຸຕຣຈັດແຈງເສນາສນະຕາມຄວາມຮັກແພງກັນ ແລະແຈກພັຕຕາຫາຣຕາມຄວາມຮັກແພງກັນ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດພຣະເມຕຕິຍະແລະພຣະພຸມມຊກະຈຶ່ງຈົ່ມວ່າທ່ານພຣະທັພພມັລລບຸຕຣລະ" ຄັນພິກສຸເຫລົ່ານັ້ນຕຳໜິພຣະເມຕຕິຍະແລະພຣະພຸມມຊກະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພຣະເມຕຕິຍະແລະພຣະພຸມມຊກະວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຈິ່ມວ່າທັພພມັລລບຸຕຣ ແມ່ນແທ້ບໍ່" ທ່ານທັງ ໔ ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຈິ່ມວ່າທັພພມັລລບຸຕຣລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໑໐໕] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທສ ເພາະຈິ່ມວ່າ

ເຣື່ອງພຣະທັພພມັລລບຸຕຣ ຈົບ

ສິກຂາບົທວິພັງຄ໌

[໑໐໖] ທີ່ຊື່ວ່າ ກ່າວໃຫ້ຜູ້ອື່ນເພ່ງໂທສ ຄື ພິກສຸຕ້ອງການຈະເຮັດໃຫ້ເສັຽຊື່ ຕ້ອງການຈະເຮັດໃຫ້ອັປຍົສ ຕ້ອງການຈະເຮັດໃຫ້ເກີ້ເຂີນ ຈຶ່ງກ່າວໃຫ້ພິກສຸທັງຫລາຍເພ່ງໂທສ ຫລືຈິ່ມວ່າອຸປສັມບັນທີ່ສົງຄ໌ແຕ່ງຕັ້ງໃຫ້ເປັນເຈົ້າໜ້າທີ່ຈັດແຈງເສນາສນະ ແຈກພັຕຕາຫານແຈກເຂົ້າຕົ້ມແຈກຜົລໄມ້ ແຈກຂອງຄ້ຽວຫລືແຈກຂອງເລັກນ້ອຍ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ໑ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທສ ເພາະຈິ່ມວ່າ

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທສ ເພາະຈິ່ມວ່າ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິປາຈິຕຕີຍ໌ ເພາະກ່າວໃຫ້ຜູ້ອື່ນເພ່ງໂທສ ເພາະຈິ່ມວ່າ

ທຸກກົຕ

ພິກສຸກ່າວໃຫ້ຜູ້ອື່ນເພ່ງໂທສຫລືຈິ່ມວ່າອນຸປສັມບັນ ຕ້ອງອາບັຕິທຸກກົຕ

ເຣື່ອງອັນຖະ :

໑ ກັມ ຄືການສົມມຸດພິກສຸໃຫ້ທຳໜ້າທີ່ເປັນຜູ້ຈັດແຈງເສນາສນະເປັນຕົ້ນ (ວິ. ອ. ໒/໑໐໓/໒໙໓)

ພິກສຸຕ້ອງການຈະເຮັດໃຫ້ເສັຽຊື່ ຕ້ອງການຈະເຮັດໃຫ້ອັປຍົສ ຕ້ອງການຈະທຳອຸປສັມບັນທີ່ສົງຂ໌ບໍ່ໄດ້ແຕ່ງຕັ້ງໃຫ້ເປັນເຈົ້າໜ້າທີ່ຈັດແຈງເສນາສນະ ແຈກພັຕຕາຫານ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄັ້ງວ ຫລືແຈກຂອງເລັກນ້ອຍ ໃຫ້ເກີ້ເຂີນ ຈຶ່ງກ່າວໃຫ້ພິກສຸທັງຫລາຍ ເພ່ງໂທສ ຫລືຈົ່ມວ່າອຸປສັມບັນຫລືອນຸປສັມບັນ ຕ້ອງອາບັຕິທຸກກຕ

ພິກສຸຕ້ອງການຈະເຮັດໃຫ້ເສັຽຊື່ ຕ້ອງການຈະເຮັດໃຫ້ອັປຍົສ ຕ້ອງການຈະທຳອນຸປສັມບັນທີ່ສົງຂ໌ແຕ່ງຕັ້ງກໍຕາມ ບໍ່ໄດ້ແຕ່ງຕັ້ງກໍຕາມ ໃຫ້ເປັນເຈົ້າໜ້າທີ່ຈັດແຈງເສນາສນະ ແຈກພັຕຕາຫານ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄັ້ງວຫລືແຈກຂອງເລັກນ້ອຍ ໃຫ້ເກີ້ເຂີນ ຈຶ່ງກ່າວໃຫ້ພິກສຸທັງຫລາຍເພ່ງໂທສຫລືຈົ່ມວ່າອຸປສັມບັນຫລືອນຸປສັມບັນ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວານ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໐໗] ໑. ພິກສຸຜູ້ກ່າວໃຫ້ຜູ້ອື່ນເພ່ງໂທສ ຫລືຈົ່ມວ່າພິກສຸຜູ້ມັກເຮັດດ້ວຍຄວາມຊອບດ້ວຍຄວາມຊັງ ດ້ວຍຄວາມຫລົງ ດ້ວຍຄວາມຢ້ານ

໒. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັດ

ອຸຊຸຢາປນກສິກຂາບົທທີ ໓ ຈົບ

໔. ພູຕຄາມວັຄ

໔. ປຖມເສນາສນສິກຂາບົທ
ວ່າດ້ວຍເສນາສນະຂໍ້ທີ ໑

ເຣື້ອງພິກສຸຫລາຍຮູບ
[໑໐໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ສມັຍນັ້ນ ໃນຣະດູຫນາວ ພິກສຸທັງຫລາຍຈັດຕັ້ງເສນາສນະໃນທີ່ກາງ ແຈ້ງຜີ່ງກາຍກັນ ຄັນເຂົາບອກເວລາພັຕຕາຫາຣ ເມື່ອຈະຈາກໄປບໍ່ເກັບ ບໍ່ໃຊ້ໃຫ້ເກັບເສນາສນະ ນັ້ນ ບໍ່ບອກມອບຫມາຍພາກັນຈາກໄປແລ້ວ ເສນາສນະຈຶ່ງຖືກນໍ້າຫມອກແລະຝຸ່ນຕົກຣົດ ບັນດາ ພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈັດຕັ້ງເສນາ ສນະໃນທີ່ກາງແຈ້ງ ເມື່ອຈະຈາກໄປຈຶ່ງບໍ່ເກັບ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປລະ ເສນາສນະຖືກນໍ້າຫມອກແລະຝຸ່ນຕົກຮໍາ" ຄັນພິກສຸທັງຫລາຍຕໍາຫນິພິກສຸເຫລົ່າ ນັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ ທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພິກສຸທັງຫລາຍຈັດຕັ້ງເສນາສນະໃນທີ່ກາງແຈ້ງ ເມື່ອຈະ ຈາກໄປບໍ່ເກັບ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ບອກມອບຫມາຍພາກັນຈາກໄປ ເສນາສນະຖືກນໍ້າ ຫມອກແລະຝຸ່ນຕົກຣົດ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຄບຸຣຸສເຫລົ່ານັ້ນ ຈັດຕັ້ງ ເສນາສນະໄວ້ໃນທີ່ກາງແຈ້ງແລ້ວ ເມື່ອຈະຈາກໄປ ຈຶ່ງບໍ່ເກັບເອງ ບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ບໍ່ ບອກມອບຫມາຍ ພາກັນຈາກໄປ ຈົນເສນາສນະຖືກນໍ້າຫມອກແລະຝຸ່ນຕົກຮໍາລະ ພິກສຸທັງຫລາຍ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງ ໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ
[໑໐໘] ກໍ ພິກສຸໃດວາງໄວ້ ຫລືໃຊ້ໃຫ້ວາງໄວ້ຊຶ່ງເສນາສນະ ຄື ຕຽງ ຕັ່ງ ເສື່ອ ຫລືຕັ່ງ ຂອງສົງຄ໌ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກ

ມອບຫມາຍ ໄປເສັງ ຕ້ອງອາບັຕິປາຈິຕຕິຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸຫລາຍຮູບ ຈົບ

ຊົງອນຸຍາຕໃຫ້ເກັບເສນາສນະ

[໑໑໐] ສມັຍນັ້ນ ພິກສຸທັງຫລາຍຢູ່ໃນທີ່ກາງແຈ້ງ ຮີບເກັບເສນາສນະກ່ອນເວລາອັນສົມຄວຣ ພຣະຜູ້ມີພຣະພາຄທອດພຣະເນຕຣເຫັນພິກສຸເຫລົ່ານັ້ນຮີບເກັບເສນາສນະກ່ອນເວລາອັນສົມຄວຣ ຄັນແລ້ວຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເກັບເສນາສນະໄວ້ໃນມນູທປ ເຫງົ້າໄມ້ ຫລືໃນທີ່ຊຶ່ງກາຫລືເຫຍີ່ຍວຈະບໍ່ຖ່າຍມູລຮົດໄດ້ຕລອດ ໘ ເດືອນທີ່ບໍ່ແມ່ນຣະດູຝົນ”

ສິກຂາບົທວິພັງຄ໌

[໑໑໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ຂອງສົງຂ໌ ໄດ້ແກ່ ຂອງທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຂ໌
ທີ່ຊື່ວ່າ ຕຽງ ໄດ້ແກ່ ຕຽງ ໔ ຊນິດ ຄື (໑) ຕຽງມີແມ່ແຄຣ່ສອດເຂົ້າໃນຂາ (໒) ຕຽງມີແຄຣ່ຕິດກັບຂາ (໓) ຕຽງມີຂາດັ່ງກ້າມປູ (໔) ຕຽງມີຂາຈດແມ່ແຄຣ່
ທີ່ຊື່ວ່າ ຕັ່ງ ໄດ້ແກ່ຕັ່ງ ໔ ຊນິດ ຄື (໑) ຕັ່ງມີແມ່ແຄຣ່ສອດເຂົ້າໃນຂາ (໒) ຕັ່ງມີແມ່ແຄຣ່ຕິດກັບຂາ (໓) ຕັ່ງມີຂາດັ່ງກ້າມປູ (໔) ຕັ່ງມີຂາຈດແມ່ແຄຣ່

ທີ່ຊື່ວ່າ ເສື່ອ ໄດ້ແກ່ ເສື່ອ ໕ ຊນິດ ຄື (໑) ເສື່ອຂົນສັຕວ໌ (໒) ເສື່ອເສດຜ້າ (໓) ເສື່ອເປືອກໄມ້ (໔) ເສື່ອຫຍ້າ (໕) ເສື່ອໃບໄມ້
ທີ່ຊື່ວ່າ ຕັ່ງ ໄດ້ແກ່ ຕັ່ງທີ່ເຂົາຖັກພື້ນສຳລັບນັ່ງພາຍໃນ ເຮັດດ້ວຍເປືອກໄມ້ກໍມີ ເຮັດດ້ວຍຫຍ້າແຝກກໍມີ ເຮັດດ້ວຍຫຍ້າມຸງກະຕ່າຍກໍມີ ເຮັດດ້ວຍຫຍ້າປ້ອງກໍມີ
ຄຳວ່າ ວາງໄວ້ ຄື ວາງໄວ້ດ້ວຍຕົນເອງ
ຄຳວ່າ ໃຊ້ໃຫ້ວາງໄວ້ ຄື ໃຊ້ໃຫ້ຜູ້ອື່ນໃຫ້ວາງໄວ້ ພິກສຸໃຊ້ອນຸປສັມບັນໃຫ້ວາງໄວ້ ເປັນພາຣະ

ຂອງພິກສຸນັ້ນ ໃຊ້ອຸປສັມບັນໃຫ້ວາງໄວ້ ເປັນພາຣະຂອງຜູ້ວາງໄວ້
ຄຳວ່າ ເມື່ອຈະຈາກໄປບໍ່ເກັບ. . . ເສນາສນະນັ້ນ ຄື ບໍ່ເກັບດ້ວຍຕົນເອງ
ຄຳວ່າ ບໍ່ໃຊ້ໃຫ້ເກັບ ຄື ບໍ່ໃຊ້ໃຫ້ຜູ້ອື່ນເກັບ
ຄຳວ່າ ຫລືບໍ່ບອກມອບຫມາຍ ໄປເສັຽ ຄວາມວ່າ ພິກສຸບໍ່ບອກມອບຫມາຍ
ພິກສຸ ສາມເນຣຫລືຄົນວັດ ຍ່າງລ່ວງເລຕຖຸບາຕ໑ ຂອງບຸຣຸສມີກຳລັງປານກາງໄປ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໑໔] ເສນາສນະຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສົງຂ໌ ວາງໄວ້ຫລືໃຊ້ໃຫ້ວາງໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌
ເສນາສນະຂອງສົງຂ໌ ພິກສຸບໍ່ແນ່ໃຈ ວາງໄວ້ ຫລືໃຊ້ໃຫ້ວາງໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ຄຳວ່າ "ເລຕຖຸບາຕ" ໄດ້ແກ່ ຣະຍະໂຍນຫລືດຶກກ້ອນດິນໄປຕກ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ພູຕຄາມວັຄ ໔. ປຖມເສນາສນສິກຂາບົທ ອນາປັຕຕິວາຣ

ເສນາສນະຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ວາງໄວ້ ຫລືໃຊ້ໃຫ້ວາງໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບເສນາສນະນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸວາງໄວ້ ຫລືໃຊ້ໃຫ້ວາງຜ້າປູຮັກສາຜິວພື້ນ ຜ້າປູຕຽງ ຜ້າປູພື້ນ ເສື່ອອ່ອນ ທ່ອນຫນັງ ທີ່ເຊັດຕີນ ຕັ່ງກະດານໄວ້ໃນທີ່ກາງແຈ້ງ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບຜ້າປູຮັກສາຜິວ

ເປັນຕົ້ນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິທຸກກຕ
ເສນາສນະສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສົງຂ໌ ຕ້ອງອາບັຕິທຸກກຕ
ເສນາສນະສ່ວນບຸຄຄົລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ເສນາສນະສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກຕ
ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ເສນາສນະເປັນຂອງສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໑໑໓] ໑. ພິກສຸເກັບໄວ້ແລ້ວຈຶ່ງໄປ
໒. ພິກສຸໃຊ້ໃຫ້ເກັບໄວ້ແລ້ວຈຶ່ງໄປ
໓. ພິກສຸບອກມອບຫມາຍໄວ້ແລ້ວຈຶ່ງໄປ
໔. ພິກສຸນຳອອກເຜີ່ງແດດໄວ້ ຈາກໄປດ້ວຍຄິດວ່າຈະກັບມາເກັບ
໕. ພິກສຸຜູ້ມີເຫຕຸບາງຢ່າງຂັດຂວາງ
໖. ພິກສຸຜູ້ມີເຫຕຸຂັດຂ້ອງ
໗. ພິກສຸວິກົລຈິຕ
໘. ພິກສຸຕົ້ນບັນຍັດ

ປຖົມເສນາສນສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ພູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ນິທານວັຕຖຸ

໔. ພູຕຄາມວັຄ

໕. ທຸຕິຍເສນາສນສິກຂາບົທ
ວ່າດ້ວຍເສນາສນະຂໍ້ທີ ໔

ເຣື້ອງພຣະສັຕຕຣສວັຄຄີຍ໌
[໑໑໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ

ຫຼືກເສດຖີ ເຂດກຸງສາວັດຖີ ສມັຍນັ້ນ ພວກພິກສຸສັຕຕຣສວັຄຄີຍ໌ເປັນສະຫາຍກັນ ພິກສຸເຫລົ່ານັ້ນເມື່ອຈະຢູ່ກໍຢູ່ດ້ວຍກັນ ເມື່ອຈະຈາກໄປກໍຈາກໄປພ້ອມກັນ ພວກທ່ານປູທີ່ນອນໃນວິຫາຣຂອງສົງຂ໌ແຫ່ງນຶ່ງ ເມື່ອຈະຈາກໄປ ບໍ່ເກັບ ບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປເສນາສນະຖືກຕົວປອກກັດ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັຕຕຣສວັຄຄີຍ໌ປູທີ່ນອນໃນວິຫາຣຂອງສົງຂ໌ແລ້ວ ເມື່ອຈະຈາກໄປບໍ່ເກັບ ບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປຈົນເສນາສນະຖືກຕົວປອກກັດລະ" ຄັນພິກສຸເຫລົ່ານັ້ນຕໍາຫນິພວກພິກສຸສັຕຕຣສວັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື່ອງນັ້ນໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸສັຕຕຣສວັຄຄີຍ໌ປູທີ່ນອນໃນວິຫາຣຂອງສົງຂ໌ແລ້ວເມື່ອຈະຈາກໄປ ບໍ່ເກັບ ບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ບໍ່ບອກມອບຫມາຍ ພາກັນຈາກໄປ ຈົນເສນາສນະຖືກຕົວປອກກັດ ແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ຈິງພຣະພຸທຫຼເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫຼເຈົ້າຊົງຕໍາຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນປູທີ່ນອນໃນວິຫາຣຂອງສົງຂ໌ແລ້ວ ເມື່ອຈະຈາກໄປ ຈຶ່ງບໍ່ເກັບ ບໍ່ໃຊ້ໃຫ້ເກັບ ບໍ່ບອກມອບຫມາຍ ພາກັນຈາກໄປຈົນເສນາສນະຖືກຕົວປອກກັດລະ ພິກສຸທັງຫລາຍ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫຼ໌] ໔. ພູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໑໑໕] ກໍ ພິກສຸໃດປູຫລືໃຊ້ໃຫ້ປູທີ່ນອນໃນວິຫາຣຂອງສົງຂ໌ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໑໑໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມຫມາຍນີ້

ວິຫາຣທີ່ຊື່ວ່າ ຂອງສົງຂ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຂ໌

ທີ່ຊື່ວ່າ ທີ່ນອນ ໄດ້ແກ່ ເສື່ອ ຜ້າປູຮັກສາຜິວພື້ນ ຜ້າປູຕຽງ ຜ້າປູພື້ນ ເສື່ອອ່ອນ ທ່ອນຫນັງ ຜ້າປູນັ່ງ ຜ້າປູນອນ ເຄື່ອງປູເຮັດດ້ວຍຫຍ້າ ເຄື່ອງປູເຮັດດ້ວຍໃບໄມ້

ຄຳວ່າ ປູ ຄື ປູດ້ວຍຕົນເອງ

ຄຳວ່າ ໃຊ້ໃຫ້ປູ ຄື ໃຊ້ຜູ້ອື່ນໃຫ້ປູ

ຄຳວ່າ ເມື່ອຈະຈາກໄປບໍ່ເກັບ. . . ທີ່ນອນນັ້ນ ຄື ບໍ່ເກັບດ້ວຍຕົນເອງ

ຄຳວ່າ ບໍ່ໃຊ້ໃຫ້ເກັບ ຄື ບໍ່ໃຊ້ຜູ້ອື່ນໃຫ້ເກັບ

ຄຳວ່າ ຫລືບໍ່ບອກມອບຫມາຍ ໄປເສັຽ ຄວາມວ່າ ພິກສຸບໍ່ບອກມອບຫມາຍ

ພິກສຸ ສາມເນຣຫລືຄົນວັດ ຍ່າງລ່ວງເລີຍເຄື່ອງລ້ອມອາຣາມທີ່ມີຮົ້ວລ້ອມໄວ້ ຕ້ອງອາບັຕິປາຈິຕຕີຍ໌ ຍ່າງລ່ວງເລີຍອຸປຈາຣອາຣາມທີ່ບໍ່ມີຮົ້ວລ້ອມໄວ້ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ພູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

ວິຫາຣຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສົງຂ໌ ປູຫລືໃຊ້ໃຫ້ປູທີ່ນອນ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ວິຫາຣຂອງສົງຂ໌ ພິກສຸບໍ່ແນ່ໃຈ ປູຫລືໃຊ້ໃຫ້ປູທີ່ນອນ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ວິຫາຣຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ປູຫລືໃຊ້ໃຫ້ປູທີ່ນອນ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິປາຈິຕຕີຍ໌

ທຸກກດ

[໑໑໗] ພິກສຸປູຫລືໃຊ້ໃຫ້ປູທີ່ນອນໄວ້ ໃນອຸປຈາຣວິຫາຣ ໃນໂຮງສັນ ໃນມນ຺ຫ຺ປ ຫລືທີ່ເຫງົ້າໄມ້ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບທີ່ນອນນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິທຸກກດ

ພິກສຸຈັດຕັ້ງໄວ້ ຫລືໃຊ້ໃຫ້ຈັດຕັ້ງຕຽງຫລືຕັ່ງໄວ້ໃນວິຫາຣ ໃນອຸປຈາຣວິຫາຣ ໃນໂຮງສັນ ໃນມນ຺ຫ຺ປ ຫລືທີ່ເຫງົ້າໄມ້ ເມື່ອຈະຈາກໄປ ບໍ່ເກັບ ຫລືບໍ່ໃຊ້ໃຫ້ເກັບຕຽງຫລືຕັ່ງນັ້ນ ຫລືບໍ່ບອກມອບຫມາຍ ໄປເສັຽ ຕ້ອງອາບັຕິທຸກກດ

ວິຫາຣສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສົງຂ໌ ຕ້ອງອາບັຕິທຸກກດ

ວິຫາຣສ່ວນບຸຄຄົລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກດ

ວິຫາຣສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກດ ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣເປັນຂອງສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນ຺ຫ຺] ໒. ພູຕຄາມວັຄ ໕. ທຸຕິຍເສນາສນສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໑໘] ໑. ພິກສຸເກັບໄວ້ແລ້ວຈຶ່ງໄປ

໒. ພິກສຸໃຊ້ໃຫ້ເກັບໄວ້ແລ້ວຈຶ່ງໄປ

໓. ພິກສຸບອກມອບຫມາຍໄວ້ແລ້ວຈຶ່ງໄປ

໔. ພິກສຸຜູ້ບໍ່ເກັບເສນາສນະທີ່ມີເຫຕຸບາງຢ່າງຂັດຂວາງ

໕. ພິກສຸເກີດຫ່ວງໃຍໄປຢືນໃນທີ່ນັ້ນບອກມອບຫມາຍ

໖. ພິກສຸຜູ້ມີເຫຕຸບາງຢ່າງຂັດຂວາງ

໗. ພິກສຸຜູ້ມີເຫຕຸຂັດຂ້ອງ

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ຫຸຕິຍເສນາສນສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ພູຕຄາມວັຄ ໒໖. ອນຸປຂັຊຊສິກຂາບົທ ນິທານວັຕຖຸ

໔. ພູຕຄາມວັຄ

໒໖. ອນຸປຂັຊຊສິກຂາບົທ

ວ່າດ້ວຍການເຂົ້າໄປແຊກແຊງ

ເຣື້ອງພຣະສັພພັຄຄີຍ໌

[໑໑໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ກີດກັນທີ່ນອນດີໆເອົາໄວ້ ໃຫ້ຍ້າຍ ພິກສຸຜູ້ເປັນເຖຣະອອກໄປ ເທື່ອນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ມີຄວາມຄິດວ່າ “ພວກເຮົາຈະຈຳ ພັນສາໃນທີ່ນີ້ດ້ວຍອຸບາຍຢ່າງໃດຫນໍ” ລຳດັບນັ້ນ ພວກພິກສຸສັພພັຄຄີຍ໌ຈຶ່ງເຂົ້າໄປນອນແຊກ ແຊງພິກສຸຜູ້ເປັນເຖຣະດ້ວຍຕັ້ງໃຈວ່າ ເມື່ອທ່ານມີຄວາມຄັບໃຈກໍຈັກຈາກໄປເອງ ບັນດາພິກສຸຜູ້ ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງເຂົ້າໄປນອນ ແຊກແຊງພິກສຸຜູ້ເປັນເຖຣະລະ” ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການ ຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານເຂົ້າໄປນອນແຊກແຊງພິກສຸຜູ້ເປັນເຖຣະ ແມ່ນແທ້ບໍ່” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄ ພຸທທເຈົ້າຊົງຕຳຫນິວ່າ “ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໄປນອນແຊກແຊງ ພິກສຸຜູ້ເປັນເຖຣະລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໐] ກໍ ພິກສຸໃດຮູ້ຢູ່ ເຂົ້າໄປນອນແຊກແຊງພິກສຸຜູ້ເຂົ້າໄປຢູ່ໃນວິຫາຣຂອງສົງຂ໌ກ່ອນດ້ວຍປະສົງຄ໌ວ່າ "ທ່ານມີຄວາມຄັບໃຈກໍຈັກຈາກໄປເອງ" ປະສົງຄ໌ພຽງເທົ່ານີ້ບໍ່ມີຫຍັງອື່ນ ຕ້ອງອາບັຕິປາຈິຕຕີຍ໌

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໑໔໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ວິຫາຣທີ່ຊື່ວ່າ ຂອງສົງຂ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຂ໌
ທີ່ຊື່ວ່າ ຮູ້ ຄື ຮູ້ວ່າ "ເປັນພິກສຸຜູ້ເຖົ້າ" ຮູ້ວ່າ "ເປັນພິກສຸຜູ້ເປັນໄຂ້" ຫລືຮູ້ວ່າ "ເປັນພິກສຸທີ່ສົງຂ໌ມອບວິຫາຣໃຫ້"
ຄຳວ່າ ເຂົ້າໄປແຊກແຊງ ຄື ເຂົ້າໄປບຽດສຽດ
ຄຳວ່າ ນອນ ຄວາມວ່າ ພິກສຸປູໄວ້ຫລືໃຊ້ໃຫ້ປູທີ່ນອນໄວ້ໃນອຸປຈາຣຕຽງ ຕັ່ງຫລືປະຕູເຂົ້າອອກ ຕ້ອງອາບັຕິທຸກກຕ ພິກສຸນັ່ງຫລືນອນ ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ປະສົງຄ໌ພຽງເທົ່ານີ້ ຄວາມວ່າ ບໍ່ມີເຫຕຸຜົລຢ່າງອື່ນໃນກາຣເຂົ້າໄປນອນແຊກແຊງ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໔໔] ວິຫາຣຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສົງຂ໌ ເຂົ້າໄປນອນແຊກແຊງ ຕ້ອງອາບັຕິປາຈິຕຕີຍ໌
ວິຫາຣຂອງສົງຂ໌ ພິກສຸບໍ່ແນ່ໃຈ ເຂົ້າໄປນອນແຊກແຊງ ຕ້ອງອາບັຕິປາຈິຕຕີຍ໌
ວິຫາຣຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ເຂົ້າໄປນອນແຊກແຊງ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸປູຫລືໃຊ້ໃຫ້ປູທີ່ນອນ ເວັ້ນອຸປຈາຣຕຽງ ຕັ່ງຫລືປະຕູເຂົ້າອອກ ຕ້ອງອາບັຕິທຸກກຕ ພິກສຸ

ນັ່ງຫລືນອນ ຕ້ອງອາບັຕິທຸກກົຕ
ພິກສຸປູຫລືໃຊ້ໃຫ້ປູທີ່ນອນໃນອຸປຈາຣວິຫາຣ ໃນໂຮງສັນ ໃນມຸນດົປ ທີ່ເຫງົ້າໄມ້ຫລືໃນທີ່ກາງແຈ້ງ ຕ້ອງອາບັຕິທຸກກົຕ ພິກສຸນັ່ງຫລືນອນ ຕ້ອງອາບັຕິທຸກກົຕ
ວິຫາຣສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສົງຂ໌ ຕ້ອງອາບັຕິທຸກກົຕ
ວິຫາຣສ່ວນບຸຄຄົລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ
ວິຫາຣສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກົຕ ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣເປັນສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໑໔໓] ໑. ພິກສຸຜູ້ເປັນໄຂ້ເຂົ້າໄປຢູ່
໒. ພິກສຸຖືກຄວາມໜາວຫລືຄວາມຮ້ອນບຽດບຽນແລ້ວເຂົ້າໄປຢູ່
໓. ພິກສຸຜູ້ມີເຫຕຸຂັດຂ້ອງ
໔. ພິກສຸວິກົລຈິຕ
໕. ພິກສຸຕົ້ນບັນຍັດ

ອນຸປຂັຊຊສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນດ໌] ໒. ພູຕຄາມວັຄ ໗. ນິກກັດດນສິກຂາບົທ ນິທານວັຕຖຸ

໒. ພູຕຄາມວັຄ

໗. ນິກກັດດນສິກຂາບົທ
ວ່າດ້ວຍການດຶງແກ່ອອກ

ເຣື້ອງພຣະສັຕຕຣສວັຄຄີຍ໌
[໑໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັຕຕຣສວັຄຄີຍ໌ສ້ອມແປງວິຫາຣຫລັງໃຫຍ່ແຫ່ງ

ນິ່ງຢູ່ສຸດເຂດອາຮາມດ້ວຍຫມາຍໃຈວ່າ ພວກເຮົາຈັກຈຳພັນສາໃນທີ່ນີ້ ພວກພິກສຸສັພພັຄຄີຍ໌ເຫັນພວກພິກສຸສັຕຕຣສວັຄຄີຍ໌ສ້ອມແປງວິຫາຣ ຄັນເຫັນແລ້ວຈຶ່ງກ່າວກັນຢ່າງນີ້ວ່າ "ທ່ານທັງຫລາຍພວກພິກສຸສັຕຕຣສວັຄຄີຍ໌ເຫລົ່ານີ້ສ້ອມແປງວິຫາຣກັນ ມາເຖີດ ພວກເຮົາຈັກຂັບໄລ່ພິກສຸເຫລົ່ານັ້ນອອກໄປ" ພິກສຸບາງພວກກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ໂປຣດຖ້າໃຫ້ພິກສຸເຫລົ່ານັ້ນສ້ອມແປງວິຫາຣເຖີດ ເມື່ອສ້ອມແປງເສັດແລ້ວ ພວກເຮົາຈຶ່ງຂັບໄລ່ອອກໄປ" ເມື່ອພວກພິກສຸສັຕຕຣສວັຄຄີຍ໌ສ້ອມແປງວິຫາຣເສັດ ພວກພິກສຸສັພພັຄຄີຍ໌ໄດ້ກ່າວກັບພວກພິກສຸສັຕຕຣສວັຄຄີຍ໌ດັ່ງນີ້ວ່າ "ພວກທ່ານຈົ່ງຍ້າຍອອກໄປ ວິຫາຣເປັນຂອງພວກເຮົາ" ພວກພິກສຸສັຕຕຣສວັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ພວກທ່ານຄວນຈະບອກກ່ອນພວກເຮົາຈະໄດ້ສ້ອມແປງວິຫາຣຫລັງອື່ນ" ພວກພິກສຸສັພພັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ວິຫາຣເປັນຂອງສົງຂ໌ບໍ່ແມ່ນບໍ" ພວກພິກສຸສັຕຕຣສວັຄຄີຍ໌ຕອບວ່າ "ແມ່ນແລ້ວ ທ່ານທັງຫລາຍ ວິຫາຣເປັນຂອງສົງຂ໌" ພວກພິກສຸສັພພັຄຄີຍ໌ກ່າວວ່າ "ພວກທ່ານຈົ່ງຍ້າຍອອກໄປ ວິຫາຣເປັນຂອງພວກເຮົາ" ພວກພິກສຸສັຕຕຣສວັຄຄີຍ໌ກ່າວວ່າ "ວິຫາຣຫລັງໃຫຍ່ ພວກທ່ານກໍຢູ່ໄດ້ ພວກເຮົາກໍຢູ່ໄດ້" ພວກພິກສຸສັພພັຄຄີຍ໌ກ່າວວ່າ "ພວກທ່ານຈົ່ງຍ້າຍອອກໄປ ວິຫາຣເປັນຂອງພວກເຮົາ" ແລ້ວໂກດ ບໍ່ພໍໃຈ ຈັບຄໍລາກອອກໄປ ພວກພິກສຸສັຕຕຣສວັຄຄີຍ໌ເຫລົ່ານັ້ນເມື່ອຖືກລາກແກ່ອອກໄປ ກໍຮ້ອງໄຫ້ ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກສຸສັຕຕຣສວັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ພວກພິກສຸສັພພັຄຄີຍ໌ໂກດ ບໍ່ພໍໃຈ ດຶງແກ່ພວກຜູ້ຂ້າອອກຈາກວິຫາຣຂອງສົງຂ໌" ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໂກດບໍ່ພໍໃຈ ດຶງແກ່ພິກສຸທັງຫລາຍອອກຈາກວິຫາຣຂອງສົງຂ໌ລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອົາເຮື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າພວກທ່ານໂກດ ບໍ່ພໍໃຈ ດຶງແກ່ພິກສຸທັງຫລາຍອອກຈາກວິຫາຣຂອງສົງຂ໌ ຈິງຫລື" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໂກດ ບໍ່ພໍໃຈ ດຶງແກ່ພິກສຸທັງຫລາຍອອກຈາກວິຫາຣຂອງສົງຂ໌ລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໕] ກໍ ພິກສຸໃດໂກດ ບໍ່ພໍໃຈ ດຶງແກ່ ຫລືໃຊ້ໃຫ້ດຶງແກ່ພິກສຸອອກຈາກວິຫາຣຂອງສົງຂ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໑໔໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ໄດ້ແກ່ ພິກສຸອື່ນ

ຄຳວ່າ ໂກດ ບໍ່ພໍໃຈ ຄື ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ

ວິຫາຣທີ່ຊື່ວ່າ ຂອງສົງຂ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຂ໌

ຄຳວ່າ ດຶງແກ່ ຄື ຈັບໃນຫ້ອງດຶງແກ່ອອກໄປໄວ້ຫນ້າຫ້ອງ ຕ້ອງອາບັຕິປາຈິຕຕີຍ໌

ຈັບທີ່ຫນ້າຫ້ອງດຶງແກ່ອອກໄປຂ້າງນອກ ຕ້ອງອາບັຕິປາຈິຕຕີຍ໌ ພິກສຸດຶງແກ່ພົ້ນປະຕູ ຫລາຍປະຕູດ້ວຍຄວາມພຍາຍາມຄັ້ງດຽວ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ດຶງແກ່ ຄວາມວ່າ ພິກສຸສັ່ງຜູ້ອື່ນ ຕ້ອງອາບັຕິປາຈິຕຕີຍ໌ ຜູ້ຮັບຄຳສັ່ງຄັ້ງດຽວ ແຕ່ດຶງແກ່ອອກໄປພົ້ນຫລາຍປະຕູ ພິກສຸຜູ້ສັ່ງ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໔໗] ວິຫາຣຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສົງຂ໌ ໂກດ ບໍ່ພໍໃຈ ດຶງແກ່ຫລືໃຊ້ໃຫ້ດຶງແກ່ ຕ້ອງອາບັຕິປາຈິຕຕີຍ໌

ວິຫາຣຂອງສົງຂ໌ ພິກສຸບໍ່ແນ່ໃຈ ໂກດ ບໍ່ພໍໃຈ ດຶງແກ່ ຫລືໃຊ້ໃຫ້ດຶງແກ່ ຕ້ອງອາບັຕິປາຈິຕຕີຍ໌

ວິຫາຣຂອງສົງຂ໌ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ໂກດ ບໍ່ພໍໃຈ ດຶງແກ່ ຫລືໃຊ້ໃຫ້ດຶງແກ່ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຏ

ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງພິກສຸນັ້ນ ຕ້ອງອາບັຕິທຸກກຏ

ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ອອກຈາກອຸປຈາຣວິຫາຣ ຈາກໂຮງສັນ ຈາກມນຫຼປ ຈາກເຫງົ້າໄມ້ ຫລືຈາກທີ່ກາງແຈ້ງ ຕ້ອງອາບັຕິທຸກກຕ

ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງພິກສຸນັ້ນ ຕ້ອງອາບັຕິທຸກກຕ

ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ອນຸປສັມບັນອອກຈາກວິຫາຣ ຈາກອຸປຈາຣວິຫາຣ ຈາກໂຮງສັນ ຈາກມນຫຼປ ຈາກເຫງົ້າໄມ້ ຫລືຈາກທີ່ກາງແຈ້ງ ຕ້ອງອາບັຕິທຸກກຕ

ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງອນຸປສັມບັນນັ້ນ ຕ້ອງອາບັຕິທຸກກຕ

ວິຫາຣຂອງສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສົງຂ໌ ຕ້ອງອາບັຕິທຸກກຕ

ວິຫາຣຂອງສ່ວນບຸຄຄົລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ວິຫາຣຂອງສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກຕ

ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໔໗] ໑. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ພິກສຸອລັຊຊີ

໒. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງພິກສຸອລັຊຊີ

໓. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ພິກສຸວິກົລຈິຕ

໔. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງພິກສຸວິກົລຈິຕ

໕. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ພິກສຸຜູ້ກໍ່ຄວາມບາດຫມາງ ກໍ່ຄວາມຜິດຖຽງ ກໍ່ການວິວາທ ກໍ່ໃຫ້ເກີດການທຸ່ມຖຽງ ຫລືກໍ່ອທິກຣນ໌(ບັນຫາຂອງສົງຂ໌)ໃນສົງຂ໌

໖. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງພິກສຸຜູ້ກໍ່ເຫຕຸເຫລົ່ານັ້ນ

໗. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ອັນເຕວາສິກຫລືສັທທິວິຫາຣິກຜູ້ບໍ່ປະພຶດໂດຍຊອບ

໘. ພິກສຸດຶງແກ່ ຫລືໃຊ້ໃຫ້ດຶງແກ່ບໍຣິຂາຣຂອງອັນເຕວາສິກຫລືສັທທິວິຫາຣິກຜູ້ເຊັ່ນນັ້ນ

໙. ພິກສຸວິກົລຈິຕ

໑໐. ພິກສຸຕົ້ນບັນຍັດ

ນິກກັຫຼຫຼນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ພູຕຄາມວັຄ ໗. ເວຫາສກຸຕິສິກຂາບົທ ນິທານວັຕຖຸ

໔. ພູຕຄາມວັຄ

໗. ເວຫາສກຸຕິສິກຂາບົທ

ວ່າດ້ວຍກຸຕິຊັ້ນລອຍ

ເຣື່ອງພິກສຸ ໔ ຮູບ

[໑໔໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸ ໔ ຮູບຢູ່ເທິງກຸຕິຊັ້ນລອຍ໑ ໃນວິຫາຣຂອງສົງຂ໌ ຮູບໜຶ່ງຢູ່ຊັ້ນລຸ່ມ ອີກຮູບໜຶ່ງຢູ່ຊັ້ນເທິງ ຮູບທີ່ຢູ່ຊັ້ນເທິງນັ່ງຢ່າງແຮງເທິງຕຽງຊນິດທີ່ມີຕີນສຽບ(ບໍ່ມີໄລສລັກ) ຕີນຕຽງຕົກຖືກສີສະຮູບທີ່ນັ່ງຢູ່ຊັ້ນລຸ່ມຈົນທ່ານຮ້ອງລັ່ນ ພິກສຸທັງຫລາຍແລ່ນເຂົ້າໄປຫາແລ້ວໄດ້ກ່າວດັ່ງນີ້ວ່າ "ທ່ານ ທ່ານສົ່ງສຽງຮ້ອງເຮັດຫຍັງ" ພິກສຸຮູບທີ່ນັ່ງຢູ່ຊັ້ນລຸ່ມຈຶ່ງບອກເຣື່ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງນັ່ງຢ່າງແຮງເທິງຕຽງມີຕີນສຽບເທິງ**ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຂ໌ລະ" ຄັນພິກສຸທັງຫລາຍຕຳໜິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານນັ່ງຢ່າງແຮງເທິງຕຽງມີຕີນສຽບ**ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຂ໌ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສຈັ່ງໃດທ່ານຈຶ່ງນັ່ງຢ່າງແຮງເທິງຕຽງມີຕີນສຽບ**ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຂ໌ລະ ໂມຂບຸຣຸສການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ກຸຕິຊັ້ນລອຍ ຄືກຸຕິມີພື້ນ ໔ ຊັ້ນຫລື ໓ ຊັ້ນ ແຕ່ບໍ່ໄດ້ປູພື້ນຊັ້ນເທິງ ຮອດທີ່ຄານສູງພໍພົ້ນສີສະ

(ວິ. ອ. ໔/໑໘໙-໑໖໑/໖໐໙-໖໑໐), ພິກສຸເອົາຕຽງຊື່ງບໍ່ໄດ້ໃສ່ເດືອຍສລັກຕີນຕຽງວາງພາດ ເມື່ອ ນັ່ງຢ່າງແຮງ ຕີນຕຽງຈຶ່ງຫລຸດໃສ່ສີສະພິກສຸທີ່ຢູ່ຊັ້ນລຸ່ມ

ພຣະບັນຍັດ

[໑໖໐] ກໍ ພິກສຸໃດນັ່ງ ຫລືນອນເທິງຕຽງ ຫລື**ເທິງ**ຕັ່ງອັນມີຕີນສຽບ **ເທິງກຸຕິ**ຊັ້ນລອຍໃນວິຫາຣຂອງສົງຊ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກສຸ ໔ ຮູບ ຈົບ

ສິກຂາບົທວິພັງຄ໌

[໑໖໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ວິຫາຣທີ່ຊື່ວ່າ ຂອງສົງຊ໌ ໄດ້ແກ່ ວິຫາຣທີ່ມີຜູ້ຖວາຍ ບໍຣິຈາຄແກ່ສົງຊ໌
ທີ່ຊື່ວ່າ ກຸຕິຊັ້ນລອຍ ໄດ້ແກ່ ກຸຕິຊັ້ນລອຍສູງຈົນສີສະບຸຣຸສກາງຄົນບໍ່ຕຳຕຽງທີ່ຊື່ວ່າ ມີຕີນສຽບ ຄື ສອດຕີນສຽບຕິດໄວ້ໃນຕົວຕຽງ
ຕັ່ງທີ່ຊື່ວ່າ ມີຕີນສຽບ ຄື ສອດຕີນສຽບຕິດໄວ້ໃນຕົວຕັ່ງ
ຄຳວ່າ ນັ່ງ ຄື ພິກສຸນັ່ງເທິງຕຽງຫລື**ເທິງ**ຕັ່ງນັ້ນ ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ນອນ ຄື ພິກສຸນອນເທິງຕຽງຫລື**ເທິງຕັ່ງ**ນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໖໔] ວິຫາຣຂອງສົງຊ໌ ພິກສຸສຳຄັນວ່າເປັນຂອງສົງຊ໌ ນັ່ງ ຫລືນອນເທິງຕຽງຫລື**ເທິງຕັ່ງ**ມີຕີນສຽບເທິງກຸຕິຊັ້ນລອຍ ຕ້ອງອາບັຕິປາຈິຕຕີຍ໌
ວິຫາຣຂອງສົງຊ໌ ພິກສຸບໍ່ແນ່ໃຈ ນັ່ງ ຫລືນອນເທິງຕຽງຫລື**ເທິງຕັ່ງ**ມີຕີນສຽບ**ເທິງກຸຕິ**ຊັ້ນລອຍ ຕ້ອງອາບັຕິປາຈິຕຕີຍ໌
ວິຫາຣຂອງສົງຊ໌ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ນັ່ງ ຫລືນອນເທິງຕຽງຫລື**ເທິງຕັ່ງ**ມີຕີນສຽບ**ເທິງກຸຕິ**ຊັ້ນລອຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກາຕ

ວິຫາຣສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສົງຂ໌ ຕ້ອງອາບັຕິທຸກກາຕ

ວິຫາຣສ່ວນບຸຄຄົລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກາຕ

ວິຫາຣສ່ວນບຸຄຄົລ ພິກສຸສຳຄັນວ່າເປັນຂອງສ່ວນບຸຄຄົລ ຕ້ອງອາບັຕິທຸກກາຕ ເພາະເປັນຂອງສ່ວນບຸຄຄົລຂອງຜູ້ອື່ນ ວິຫາຣສ່ວນບຸຄຄົລຂອງຕົນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໖໖] ໑. ພິກສຸນັ່ງເທິງທີ່ທີ່ບໍ່ແມ່ນກຸຕິຊັ້ນລອຍ

໒. ພິກສຸນັ່ງເທິງກຸຕິຊັ້ນລອຍສູງພອຕຳສີສະ

໓. ພິກສຸນັ່ງເທິງທີ່ທີ່ຂ້າງລຸ່ມບໍ່ເປັນທີ່ຢູ່

໔. ພິກສຸນັ່ງເທິງກຸຕິຊັ້ນລອຍປູພື້ນໄວ້

໕. ພິກສຸນັ່ງເທິງກຸຕິຊັ້ນລອຍມີຕົນຕຽງຫລືຕົນຕັ່ງຕຣຶງສລັກກັບຕົວ

໖. ພິກສຸຢືນເທິງຕຽງຫລືຕັ່ງຫຍິບຫລືພາດຈີວອນໄດ້

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ເວຫາສກຸຕິສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໒. ພູຕຄາມວັຄ ໙. ມຫັລລກວິຫາຣສິກຂາບົທ ນິທານວັຕຖຸ

໒. ພູຕຄາມວັຄ

໙. ມຫັລລກວິຫາຣສິກຂາບົທ

ວ່າດ້ວຍການສ້າງວິຫາຣໃຫຍ່

ເຣື້ອງພຣະສັນນະ

[໑໖໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ໂຊສິຕາຣາມ ເຂຕກຸງໂກສັມພີ ຄັ້ງ

ນັ້ນ ມຫາອມາຕຍ໌ຜູ້ເປັນອຸປັຕຖາກຂອງທ່ານພຣະສັນນະ ສ້າງວິຫາຣຖວາຍທ່ານພຣະສັນນະ ເທື່ອນັ້ນ ທ່ານພຣະສັນນະສັ່ງໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງ ວິຫາຣມີນ້ຳໜັກມາກຈຶ່ງພັງລົງມາ ຕໍ່ມາທ່ານພຣະສັນນະຈຶ່ງຫາເກັບຫຍ້າແລະໄມ້ ເຮັດໃຫ້ນາເຂົ້າຫນງອຂອງພຣາມນ໌ຄົນນຶ່ງເສັຽຫາຍ ພຣາມນ໌ນັ້ນຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍຈຶ່ງທຳນາເຂົ້າຫນງອຂອງເຮົາໃຫ້ເສັຽຫາຍລະ" ພິກສຸທັງຫລາຍ ໄດ້ຍິນພຣາມນ໌ຕຳໜິ ປະນາມໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະສັນນະຈຶ່ງໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງລະ ວິຫາຣມີນ້ຳໜັກມາກ ຈຶ່ງພັງລົງມາ" ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະສັນນະໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະສັນນະວ່າ "ສັນນະ ຊາບວ່າ ທ່ານໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງ ວິຫາຣມີນ້ຳໜັກມາກ ຈຶ່ງພັງລົງມາ ແມ່ນແທ້ບໍ" ທ່ານພຣະສັນນະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງໃຫ້ມຸງໃຫ້ທາບທາວິຫາຣທີ່ສ້າງເສັດແລ້ວຫລາຍໆຄັ້ງ ຈົນວິຫາຣຮັບນ້ຳໜັກມາກພັງລົງມາລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ພູຕຄາມວັຄ ໙. ມຫັລລກວິຫາຣສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໑໓໕] ກໍ ພິກສຸຈະສ້າງວິຫາຣຫລັງໃຫຍ່ ຈະຕິດຕັ້ງບານປະຕູໃກ້ວົງກົບປະຕູ ແລະຕົບແຕ່ງບານປ່ອງຢ້ຽມ໑ ຄວຣຢືນໃນທີ່ທີ່ປາສຈາກຂອງຂຽວ ດຳເນີນການມຸງຫລັງຄາໄດ້ ໔-໓ ຊັ້ນ໔ ຖ້າທ່ານດຳເນີນການເກີນກວ່ານັ້ນ ແມ່ນຈະຢືນໃນທີ່ທີ່ປາສຈາກຂອງຂຽວ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັນນະ ຈົບ

ສິກຂາບົດທີ ໑໙

[໑໓໗] ວິຫານທີ່ຊື່ວ່າ ຫລັງໃຫຍ່ ທ່ານກ່າວເຖິງວິຫານທີ່ມີເຈົ້າຂອງ

ທີ່ຊື່ວ່າ ວິຫານ ໄດ້ແກ່ ທີ່ຢູ່ຊຶ່ງໄບກເຄືອບພາຍໃນຫລືພາຍນອກ ຫລືໄບກເຄືອບທັງພາຍໃນພາຍນອກ

ຄຳວ່າ ສ້າງ ຄື ສ້າງເອງ ຫລືໃຊ້ຄົນອື່ນສ້າງ

ຄຳວ່າ ໃກ້ວົງກົບປະຕູ ຄື ຊົ່ວຣະຍະຫັດຖບາສຮອບວົງກົບ

ຄຳວ່າ ຈະຕິດຕັ້ງບານປະຕູ ຄື ວາງບານປະຕູ

ຄຳວ່າ ຕົບແຕ່ງບານປ່ອງຢ້ຽມ ຄື ທາບທາບານປ່ອງຢ້ຽມໃຫ້ມີສີຂາວ ໃຫ້ມີສີດຳ ໃຫ້ມີສີຍາງໄມ້ ຂຽນລວດລາຍດອກໄມ້ ຂຽນລວດລາຍເຄືອໄມ້ ຈັກເປັນຟັນມັງກອນ ຫລືຂຽນລວດລາຍດອກຈອກ

ເຊິງອັນຖະ :

*໑ ບານປະຕູແລະບານປ່ອງຢ້ຽມວິຫານ ຕ້ອງເປີດ-ປິດ ເມື່ອເປີດຈະຕຳຝາຜນັງວິຫານ ເມື່ອປິດຈະຕຳ**ວົງກົບ** ເຮັດໃຫ້ຝາຜນັງສັ່ນສະເທືອນຈົນດິນຫນຽວທີ່ພອກຝາຜນັງໂຊະລ່ອນຕົກລົງມາ ພຣະຜູ້ມີພຣະພາຄຊົງອນຸຍາຕໃຫ້ທາບທາພອກຝາຜນັງບໍຣິເວນໃກ້ໆບານປະຕູ ບານປ່ອງຢ້ຽມວິຫານໄດ້ ເພື່ອເຮັດໃຫ້ຄົງທົນຖາວອນ (ວິ. ຈ. ໒/໑໓/໓໑໑-໓໑໒, ກງຂາ. ອ. ໒໔໔) ເມື່ອພິກສຸພອກຝາຜນັງນອກຈາກບໍຣິເວນໃກ້ໆບານປະຕູແລະບານປ່ອງຢ້ຽມຊ້ຳເກີນ ໓ ຄັ້ງ ຕ້ອງອາບັຕິປາຈິຕຕີຍ໌ (ສາຣຕຸຖ. ຕີກາ ໓/໑໓໕/໔໐, ວິມຕິ. ຕີກາ ໒/໑໓໕/໒໓, ກງຂາ. ຕີກາ ໓໙໒)*

໒ ໃນການມຸງຫລັງຄາກໍ່ເຊັ່ນກັນ ພິກສຸເຂົ້າໃຈວ່າ ເມື່ອມຸງຫລາຍຄັ້ງ ຈະປ້ອງກັນຝົນຮົ່ວຮົດໄດ້ນານ ຈຶ່ງໃຊ້ອິດ ສີລາ ປູນຂາວ ຫຍ້າ ຫລືໃບໄມ້ມຸງຫລັງຄາ ແຕ່ຈະມຸງໄດ້ບໍ່ເກີນ ໓ ຊັ້ນ (ວິ. ອ. ໒/໑໓໕-໑໓໗/໓໑໒-໓໑໓, ສາຣຕຸຖ. ຕີກາ ໓/໑໓໕-໑໓໗/໔໐-໔໑)

ຄຳວ່າ ຢືນໃນທີ່ທີ່ປາສຈາກຂອງຂຽວດຳເນີນການມຸງຫລັງຄາໄດ້ ໒-໓ ຊັ້ນຄວາມວ່າ ທີ່ຊື່ວ່າ ຂອງຂຽວ ໄດ້ແກ່ ບຸພພັນຊາຕິແລະອປຣັນຊາຕິ໑ ຖ້າພິກສຸຢືນດຳເນີນການໃນທີ່ທີ່ມີຂອງຂຽວ ຕ້ອງອາບັຕິທຸກກຕ

ພິກສຸເມື່ອຈະມຸງຕາມແນວ ເພິ່ງດຳເນີນການ ໒ ແນວ ສັ່ງແນວທີ ໓ ແລ້ວຈາກໄປພິກສຸເມື່ອຈະມຸງເປັນຊັ້ນ ເພິ່ງດຳເນີນການ ໒ ຮອບ ສັ່ງຮອບທີ ໓ ແລ້ວຈາກໄປ

[໑໓໗] ຄຳວ່າ ຖ້າທ່ານດຳເນີນການເກີນວ່ານັ້ນ ແມ່ນຈະຍືນໃນທີ່ທີ່ປາສຈາກຂອງຂຽວ ຄວາມວ່າ ພິກສຸເມື່ອມຸງດ້ວຍອິດ ຕ້ອງອາບັຕິປາຈິຕຕິຍ໌ທຸກໆກ້ອນ ເມື່ອມຸງດ້ວຍແຜ່ນສິລາ ຕ້ອງອາບັຕິປາຈິຕຕິຍ໌ທຸກໆກ້ອນ ເມື່ອມຸງດ້ວຍປູນຂາວ ຕ້ອງອາບັຕິປາຈິຕຕິຍ໌ທຸກໆກ້ອນ ເມື່ອມຸງດ້ວຍຫຍ້າ ຕ້ອງອາບັຕິປາຈິຕຕິຍ໌ທຸກໆກຳຫຍ້າ ເມື່ອມຸງດ້ວຍໃບໄມ້ ຕ້ອງອາບັຕິປາຈິຕຕິຍ໌ທຸກໆໃບ

ບົທພາຊນີຍ໌

ຕິກປາຈິຕຕິຍ໌

ເກີນ ໒-໓ ຊັ້ນ ພິກສຸສຳຄັນວ່າເກີນ ດຳເນີນການ ຕ້ອງອາບັຕິປາຈິຕຕິຍ໌

ເກີນ ໒-໓ ຊັ້ນ ພິກສຸບໍ່ແນ່ໃຈ ດຳເນີນການ ຕ້ອງອາບັຕິປາຈິຕຕິຍ໌

ເກີນ ໒-໓ ຊັ້ນ ພິກສຸສຳຄັນວ່າຫນ້ອຍກວ່າ ດຳເນີນການ ຕ້ອງອາບັຕິປາຈິຕຕິຍ໌

ທຸກທຸກກຕ

ຫນ້ອຍກວ່າ ໒-໓ ຊັ້ນ ພິກສຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຕ

ຫນ້ອຍກວ່າ ໒-໓ ຊັ້ນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຫນ້ອຍກວ່າ ໒-໓ ຊັ້ນ ພິກສຸສຳຄັນວ່າຫນ້ອຍກວ່າ ບໍ່ຕ້ອງອາບັຕິ

ເຊີງອັນຖະ :

໑ ບຸພພັນຊາຕິ ໄດ້ແກ່ ທັນຊາຕິ ໗ ຢ່າງ ຄື ເຂົ້າສາລີ ເຂົ້າເຈົ້າ ຫຍ້າກັບແກ້ ເຂົ້າລະມານ ຫມາກເດືອຍ ເຂົ້າຫນຽວແລະເຂົ້າຟ່າງ ອປຣັນຊາຕິ ໄດ້ແກ່ ຖົ່ວຂຽວ ຖົ່ວຣາຊມາສ ງາ ພືຊຜັກທີ່ກິນຫລັງອາຫານ (ວິ. ອ. ໑/໑໐໔/໓໓໗, ສາຣຕຖ. ຕີກາ ໒/໑໐໔/໑໗໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໒. ພູຕຄາມວັຄ ໙. ມຫັລລກວິຫາຣສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໓໘] ໑. ພິກສຸມຸງພຽງ ໒-໓ ຊັ້ນ

໒. ພິກສຸມຸງຫນ້ອຍກວ່າ ໒-໓ ຊັ້ນ

໓. ພິກສຸນຸງເຮືອນຜາມີປະຕູ
໔. ພິກສຸຕົບແຕ່ງຖ້ຳ
໕. ພິກສຸນຸງກຸຕິຫຍ້າ
໖. ພິກສຸນຸງກຸຕິເພື່ອພິກສຸອື່ນ
໗. ພິກສຸນຸງດ້ວຍຊັພຍ໌ຕົນເອງ
໗. ພິກສຸນຸງອາຄາຣນອກຈາກນັ້ນ໑ ຍົກເວັ້ນອາຄາຣທີ່ພັກຂອງຕົນ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ມຫັລລກວິຫາຣສິກຂາບົທທີ ໙ ຈົບ

ເຊີງອັນຖະ :

໑ ອາຄາຣນອກຈາກນັ້ນ ຄື ໂຮງອຸໂບສົຖ ເຮືອນໃຜ ໂຮງສັນ ໂຮງໄຟ (ວິ. ອ. ໒/໓໖໔/໖໙)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໒. ພູຕຄາມວັຄ ໑໐. ສັປປານກສິກຂາບົທ ນິທານວັຕຖຸ

໒. ພູຕຄາມວັຄ

໑໐. ສັປປານກສິກຂາບົທ
ວ່າດ້ວຍສິ່ງມີຊີວິຕ

ເຣື້ອງພິກສຸຊາວເມືອງອາຣວີ
[໑໓໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ອັຄຄາຣວເຈດີຍ໌ ເຂຕເມືອງອາຣາວີ ຄັ້ງນັ້ນ ພວກພິກສຸຊາວເມືອງອາຣວີກຳລັງຊ່ວຍກັນກໍ່ສ້າງ ຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸຊາວເມືອງອາຣວີຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ລະ" ຄັນພິກສຸເຫລົ່ານັ້ນຕຳໜິພວກພິກສຸຊາວເມືອງອາຣວີໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫດ ຊົງສອບຖາມພວກພິກສຸຊາວເມືອງອາຣວີວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ ແມ່ນແທ້ບໍ" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຈຶ່ງຣົດຫຍ້າແດ່ ດິນແດ່ ໃຊ້ໃຫ້ຣົດຫຍ້າແດ່ ດິນແດ່ລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໐] ກໍ ພິກສຸໃດຮູ້ຢູ່ວ່ານ້ຳມີສິ່ງມີຊີວິຕ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພິກສຸຊາວເມືອງອາຣວີ ຈົບ

ສິກຂາບົທວິພັງຄ໌

[໑໔໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກສຸນັ້ນຮູ້ເອງ ຫລືຜູ້ອື່ນບອກໃຫ້ພິກສຸນັ້ນຮູ້

ຄຳວ່າ ຣົດ ຄື ພິກສຸຣົດເອງ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ຣົດ ຄື ພິກສຸໃຊ້ຜູ້ອື່ນໃຫ້ຣົດ ຕ້ອງອາບັຕິປາຈິຕຕີຍ໌

ຜູ້ຮັບຄຳສັ່ງຄັ້ງດຽວແຕ່ຣົດຫລາຍຄັ້ງ ພິກສຸຜູ້ສັ່ງຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໑໔໒] ນ້ຳມີສິ່ງມີຊີວິຕ ພິກສຸສຳຄັນວ່າມີສິ່ງມີຊີວິຕ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ຕ້ອງອາບັຕິປາຈິຕຕີຍ໌

ນ້ຳມີສິ່ງມີຊີວິຕ ພິກສຸບໍ່ແນ່ໃຈ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ຕ້ອງອາບັຕິທຸກກຕ

ນ້ຳມີສິ່ງມີຊີວິຕ ພິກສຸສຳຄັນວ່າບໍ່ມີສິ່ງມີຊີວິຕ ຣົດ ຫລືໃຊ້ໃຫ້ຣົດຫຍ້າຫລືດິນ ບໍ່ຕ້ອງອາບັຕິ

ນ້ຳບໍ່ມີສິ່ງມີຊີວິຕ ພິກສຸສຳຄັນວ່າມີສິ່ງມີຊີວິຕ ຕ້ອງອາບັຕິທຸກກຕ
ນ້ຳບໍ່ມີສິ່ງມີຊີວິຕ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ນ້ຳບໍ່ມີສິ່ງມີຊີວິຕ ພິກສຸສຳຄັນວ່າບໍ່ມີສິ່ງມີຊີວິຕ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໔໓] ໑. ພິກສຸບໍ່ຈົງໃຈ

໒. ພິກສຸບໍ່ມີສຕິ

໓. ພິກສຸຜູ້ບໍ່ຮູ້

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ສັປປາຍກສິກຂາບົທທີ ໑໐ ຈົບ

ພູຕຄາມວັຄທີ ໒ ຈົບ

ຮວມສິກຂາບົທທີ່ມີໃນພູຕຄາມວັຄ

ພູຕຄາມວັຄມີ ໑໐ ສິກຂາບົທ ຄື

໑. ພູຕຄາມສິກຂາບົທ ວ່າດ້ວຍການພາກພູຕຄາມ

໒. ອັຍຍວາທກສິກຂາບົທ ວ່າດ້ວຍການກ່າວປິດບັງ

໓. ອຸຊຍາປນກສິກຂາບົທ ວ່າດ້ວຍການກ່າວໃຫ້ເພ່ງໂທສ

໔. ປຖມເສນາສນສິກຂາບົທ ວ່າດ້ວຍເສນາສນະຂໍ້ທີ ໑

໕. ທຸຕິຍເສນາສນສິກຂາບົທ ວ່າດ້ວຍເສນາສນະຂໍ້ທີ ໒

໖. ອນຸປຂັຊຊສິກຂາບົທ ວ່າດ້ວຍການເຂົ້າໄປແຊກແຊງ

໗. ນິກກັຑຫຼນສິກຂາບົທ ວ່າດ້ວຍການດຶງແກ່ອອກ

໘. ເວຫາສກຸຕິສິກຂາບົທ ວ່າດ້ວຍກຸຕິຊັ້ນລອຍ

໙. ມຫັລລກວິຫາຣສິກຂາບົທ ວ່າດ້ວຍການສ້າງວິຫາຣໃຫຍ່

໑໐. ສັປປາຍກສິກຂາບົທ ວ່າດ້ວຍສິ່ງມີຊີວິຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໑. ໂອວາທສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

ຫມວດວ່າດ້ວຍໂອວາທ

໑. ໂອວາທສິກຂາບົທ

ວ່າດ້ວຍການສັ່ງສອນພິກສຸນີ

ເຣື້ອງພຣະສັພພັຄຄີຍ໌

[໑໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພວກພິກສຸນີ ຍ່ອມໄດ້ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ເທື່ອນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ມີການປຶກສາກັນດັ່ງນີ້ວ່າ "ທ່ານທັງຫລາຍ ບັດນີ້ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພວກພິກສຸນີ ຍ່ອມໄດ້ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ທ່ານທັງຫລາຍ ມາເຖີດ ແມ່ນພວກເຮົາກໍຈະສັ່ງສອນພວກພິກສຸນີແດ່" ຄັນແລ້ວພວກພິກສຸສັພພັຄຄີຍ໌ຈຶ່ງໄດ້ເຂົ້າໄປຫາພວກພິກສຸນີ ແລ້ວໄດ້ກ່າວດັ່ງນີ້ວ່າ "ມາເຖີດ ນ້ອງຍິງທັງຫລາຍ ພວກທ່ານຈົ່ງເຂົ້າໄປຫາພວກອາຕມາແດ່ ພວກອາຕມາຈັກສັ່ງສອນໃຫ້ແດ່" ຫລັງຈາກນັ້ນ ພວກພິກສຸນີເຫລົ່ານັ້ນໄດ້ພາກັນເຂົ້າໄປຫາພວກພິກສຸສັພພັຄຄີຍ໌ເຖິງທີ່ຢູ່ ຄັນເຖິງແລ້ວໄດ້ໄຫວ້ພວກພິກສຸສັພພັຄຄີຍ໌ແລ້ວນັ່ງ ນະ ທີ່ສົມຄວຣ ເທື່ອນັ້ນພວກພິກສຸສັພພັຄຄີຍ໌ ໄດ້ສະແດງທັມມີກຖາພຽງເລັກນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຍຣະສານກຖາ໑ ແລ້ວສົ່ງກັບດ້ວຍກ່າວວ່າ "ພວກທ່ານກັບໄປເຖີດ ນ້ອງຍິງທັງຫລາຍ"

ເຊີງອັນຖະ :

໑ ເດັຍຣະສານກຖາ ຄືຖ້ອຍຄຳທີ່ຂັດຂວາງທາງໄປສູ່ສວັນຄ໌ນິພພານ ພິກສຸບໍ່ຄວຣນຳມາເປັນຂໍ້ຖົກຖຽງສົນທນາກັນ (ວິ. ອ. ໒/໑໔໔/໓໑໕, ສາຣຕຖ. ຕີກາ ໓/໑໔໔/໔໓) ມີ ໒໗ ຢ່າງ (ວິ. ມ. ໕/໒໕໐/໑໓-໑໔, ທີ. ສີ. ໙/໑໗/໗, ທີ. ປາ. ໑໑/໕໐/໓໐, ມ. ມ. ໑໓/໒໔໓/໑໙໗, ສໍ. ມ. ໑໙/໑໐໗໐/໓໖໕-໓໖໖, ອງ. ທສກ. ໒໔/໖໙/໑໐໒, ຂຸ. ມ. ໒໙/໑໕໗/໓໐໖) ດູ

ຣຕນວັດ ສິກຂາບົທທີ ໓ ຂໍ້ ໕໐໗ ໜ້າ ໕໔໔ (ໃນເຫລັ້ມນີ້)

ຕໍ່ມາ ພວກພິກສຸນີເຫລົ່ານັ້ນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວໄດ້ຢືນ ນະ ທີ່ສົມຄວຣ ພຣະຜູ້ມີພຣະພາຄໄດ້ຕຣັສກັບ ພວກພິກສຸນີຜູ້ຢືນຢູ່ ນະ ທີ່ສົມຄວຣເຫລົ່ານັ້ນດັ່ງນີ້ວ່າ "ກາຣສັ່ງສອນພວກພິກສຸນີສັມເຣັດຜົລດີຫລື" ພວກພິກສຸນີຂາບທູລວ່າ "ກາຣສັ່ງສອນຈະສັມເຣັດຜົລໄດ້ແຕ່ທີ່ໃດກັນ ພຣະພຸທທເຈົ້າຂ້າ ພຣະຄຸນເຈົ້າສັພພັຄຄີຍ໌ສະແດງທັມມີກຖາພຽງເລັກນ້ອຍ ແລ້ວໃຫ້ວັນເວລາຜ່ານໄປດ້ວຍກາຣສົນທນາກ່ຽວກັບເດັຽຣະສານກຖາ ແລ້ວສົ່ງໃຫ້ກັບ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພວກພິກສຸນີເຫລົ່ານັ້ນເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ພິກສຸນີເຫລົ່ານັ້ນຄັນພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວຈຶ່ງລຸກຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວທຳປຣະທັກສິນ(ວຽນໄປທາງຂວາ)ຈາກໄປ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານສະແດງທັມມີກຖາພຽງເລັກນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍກາຣສົນທນາກ່ຽວກັບເດັຽຣະສານກຖາແລ້ວສົ່ງໃຫ້ກັບ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງສະແດງທັມມີກຖາພຽງເລັກ ນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍກາຣສົນທນາກ່ຽວກັບເດັຽຣະສານກຖາແລ້ວສົ່ງໃຫ້ກັບລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳໜິແລ້ວໄດ້ຊົງສະແດງທັມມີກຖາ ແລ້ວຈຶ່ງຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ແຕ່ງຕັ້ງພິກສຸເປັນຜູ້ສັ່ງສອນພິກສຸນີ"

ພິກສຸທັງຫລາຍ ສົງຄ໌ເພິງແຕ່ງຕັ້ງພິກສຸເປັນຜູ້ສັ່ງສອນພິກສຸນີຢ່າງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫຼ໌] ໓. ໂອວາທວັຄ ໑. ໂອວາທສິກຂາບົທ ພຣະບັນຍັດ

ວິທີແຕ່ງຕັ້ງແລະກັມວາຈາແຕ່ງຕັ້ງພິກສຸສັ່ງສອນພິກສຸນີ

ເບື້ອງຕົ້ນເພິງຂໍໃຫ້ພິກສຸຮັບ ຄັນແລ້ວພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຄ໌ຊາບດ້ວຍຍັຕຕິຈຕຸຕຖກັມວາຈາວ່າ

[໑໔໕] ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ຖ້າສົງຄ໌ພ້ອມກັນແລ້ວເພິງແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກສຸນີ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກສຸນີ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກສຸນີ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ຂ້າພະເຈົ້າກ່າວຄວາມນີ້ເປັນຄັ້ງທີ ໒ ຯລຯ ຂ້າພະເຈົ້າກ່າວຄວາມນີ້ເປັນຄັ້ງທີ ໓

ທ່ານຜູ້ຈະເຣີນ ຂໍສົງຄ໌ຈົ່ງຟັງຂ້າພະເຈົ້າ ສົງຄ໌ແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກສຸນີ ທ່ານຮູບໃດເຫັນດ້ວຍກັບການແຕ່ງຕັ້ງພິກສຸຊື່ນີ້ໃຫ້ເປັນຜູ້ສັ່ງສອນພິກສຸນີ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ

ພິກສຸຊື່ນີ້ສົງຄ໌ແຕ່ງຕັ້ງໃຫ້ເປັນຜູ້ສັ່ງສອນພິກສຸນີແລ້ວ ສົງຄ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຄັນພຣະຜູ້ມີພຣະພາຄຊົງຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງຕຣັສໂທສຂອງຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໖] ກໍ ພິກສຸໃດບໍ່ໄດ້ຮັບແຕ່ງຕັ້ງ ເພິງສັ່ງສອນພິກສຸນີທັງຫລາຍ ຕ້ອງອາບັຕິປາຈິຕຕິຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌

[໑໔໗] ສມັຍນັ້ນ ພິກສຸຜູ້ເປັນເຖຣະທັງຫລາຍຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນພວກພິກສຸນີຍັງໄດ້ຈີ

ວອນ ບິນທະບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣຢູ່ເຫມືອນເດີມ ຄັ້ງນັ້ນພວກພິກສຸສັພພັຄຄີຍ໌ໄດ້ມີການປຶກສາກັນດັ່ງນີ້ວ່າ "ທ່ານທັງຫລາຍ ບັດນີ້ ພິກສຸຜູ້ເປັນເຖຣະທັງຫລາຍຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນພວກພິກສຸນີຍັງໄດ້ຈີວອນ ບິນທະບາຕເສນາສນະແລະຄິລານປັຈຈັຍເພສັຊບໍຣິຂາຣຢູ່ເຫມືອນເດີມ ທ່ານທັງຫລາຍ ມາເຖີດ ແມ່ນພວກເຮົາກໍຈະໄປນອກສີມາ ແຕ່ງຕັ້ງກັນແລະກັນໃຫ້ເປັນຜູ້ສັ່ງສອນພິກສຸນີ ແລ້ວສັ່ງສອນພວກພິກສຸນີແດ່" ຄັນແລ້ວພວກພິກສຸສັພພັຄຄີຍ໌ຈຶ່ງໄດ້ພາກັນໄປນອກສີມາ ໄດ້ແຕ່ງຕັ້ງກັນແລະກັນໃຫ້ເປັນຜູ້ສັ່ງສອນພິກສຸນີແລ້ວເຂົ້າໄປຫາພິກສຸນີທັງຫລາຍ ໄດ້ກ່າວດັ່ງນີ້ວ່າ "ນ້ອງຍິງທັງຫລາຍ ພວກອາຕມາໄດ້ຮັບແຕ່ງຕັ້ງແລ້ວພວກທ່ານຈົ່ງເຂົ້າໄປຫາພວກອາຕມາແດ່ ພວກອາຕມາຈັກສັ່ງສອນໃຫ້ແດ່" ຕໍ່ມາ ພວກພິກສຸນີເຫລົ່ານັ້ນໄດ້ພາກັນເຂົ້າໄປຫາພວກພິກສຸສັພພັຄຄີຍ໌ເຖິງທີ່ຢູ່ ຄັນເຖິງແລ້ວໄດ້ໄຫວ້ພວກພິກສຸສັພພັຄຄີຍ໌ແລ້ວນັ່ງ ນະ ທີ່ສົມຄວຣ ເທື່ອນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ສະແດງ ທັມມີກະຖາພຽງເລັກນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບ ເດັຽຣະສານກະຖາແລ້ວສົ່ງກັບດ້ວຍກ່າວວ່າ "ພວກທ່ານກັບໄປເຖີດ ນ້ອງຍິງທັງຫລາຍ" ຕໍ່ມາ ພວກພິກສຸນີເຫລົ່ານັ້ນໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວໄດ້ຢືນ ນະ ທີ່ສົມຄວຣ ພຣະຜູ້ມີພຣະພາຄໄດ້ຕຣັສກັບພວກພິກສຸ ນີ ຜູ້ຢືນຢູ່ ນະທີ່ສົມຄວຣເຫລົ່ານັ້ນດັ່ງນີ້ວ່າ "ການສັ່ງສອນພວກພິກສຸນີສັມເຣັດຜົລດີຫລື" ພວກພິກສຸນີຂາບທູລວ່າ "ການສັ່ງສອນຈະສັມເຣັດຜົລໄດ້ແຕ່ທີ່ໃດກັນ ພຣະພຸທທະເຈົ້າຂ້າ ພຣະຄຸນເຈົ້າສັພພັຄຄີຍ໌ສະແດງທັມມີກະຖາພຽງເລັກນ້ອຍ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກະຖາ ແລ້ວສົ່ງໃຫ້ກັບ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພວກພິກສຸນີເຫລົ່ານັ້ນເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກະຖາ ພິກສຸນີເຫລົ່ານັ້ນຄັນພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກະຖາແລ້ວຈຶ່ງລຸກຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວທຳປະທັກສິນ (ວຽນໄປທາງຂວາ)ຈາກໄປ

ຊົງປະຊຸມສົງຄ໌ແຕ່ງຕັ້ງພິກສຸສັ່ງສອນພິກສຸນີ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານສະແດງທັມມີກະຖາພຽງເລັກນ້ອຍແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກະຖາ ແລ້ວສົ່ງ

ໃຫ້ກັບ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງສະແດງທັມມີກຖາພຽງເລັກ ນ້ອຍ ແກ່ພວກພິກສຸນີ ແລ້ວໃຫ້ວັນເວລາຜ່ານໄປດ້ວຍການສົນທນາກ່ຽວກັບເດັຽຣະສານກຖາ ແລ້ວສົ່ງໃຫ້ກັບລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳຫນິແລ້ວໄດ້ຊົງສະແດງທັມມີກຖາແລ້ວຈຶ່ງຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ແຕ່ງຕັ້ງພິກສຸຜູ້ມີຄຸນສົມບັຕ ໗ ຢ່າງ ເປັນຜູ້ສັ່ງສອນພິກສຸນີ ຄື

ຄຸນສົມບັຕຂອງພິກສຸຜູ້ສັ່ງສອນພິກສຸນີ ໗ ຢ່າງ

໑. ເປັນຜູ້ມີສີລ ສຳຮວມໃນປາຕິໂມກຂສັງວຣສີລ ເຖິງພ້ອມດ້ວຍອາຈາຣະແລະໂຄຈຣເຫັນພັຍໃນຄວາມຜິດແມ່ນພຽງເລັກນ້ອຍ ສມາທານສຶກສາສິກຂາບົທທັງຫລາຍ

໒. ເປັນພຫູສູຕ ເປັນຜູ້ຊົງສຸຕະ (ຈຳສິ່ງທີ່ໄດ້ຮ່ຳຮຽນມາ) ສ້າງສົມສຸຕະ (ສ້າງສົມສິ່ງທີ່ໄດ້ຮ່ຳຮຽນມາ) ທ່ານໄດ້ຍິນໄດ້ຟັງທັມອັນງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ອັນປະກາດພຣົມຈັນຍ໌ພ້ອມທັງອັນຖະ ພ້ອມທັງພຍັນຊນະ ຄົບຖ້ວນ ບໍຣິບູຣນ໌ມາກ ຊົງຈຳໄດ້ ຄ່ອງປາກຂຶ້ນໃຈ ແທງຕລອດແລ້ວດ້ວຍທິຕຖິ

໓. ເປັນຜູ້ຊຳນານປາຕິໂມກຂ໌ທັງສອງ ແຈກແຈງໄດ້ຖືກຕ້ອງ ຄ່ອງແຄ້ວ ວິນິຈສັຍໄດ້ຮຽບຮ້ອຍທັງໂດຍສູຕຣແລະໂດຍອນຸພຍັນຊນະ໑

໔. ເປັນຜູ້ມີວາຈາສລະສລວຍ ມີສຽງມ່ວນ

ເຊີງອັນຖະ :

໑ ຄຳວ່າ "ໂດຍສູຕຣ" ໃນທີ່ນີ້ຫມາຍເຖິງຄັມພີຣ໌ຂັນທກະແລະບໍຣິວາຣແຫ່ງພຣະວິນັຍປິດົກ ຄຳວ່າ "ອນຸພຍັນຊນະ" ຄື ບົທວັກສຣບໍຣິບູຣນ໌ບໍ່ຕົກຫລົ່ນ (ວິ. ອ. ໔/໑໕໔-໗/໓໑໙)

໕. ເປັນທີ່ນິຍມຊົມຊອບຂອງພວກພິກສຸນີໂດຍສ່ວນຫລາຍ

໖. ເປັນຜູ້ສາມາດສັ່ງສອນພວກພິກສຸນີໄດ້

໗. ເປັນຜູ້ບໍ່ເຄີຍປະພຶດລ່ວງຄຣຸທັມໃນສຕຣີຜູ້ນຸ່ງຫົ່ມຜ້າກາສາຍະບວຊອຸທິສພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ໑

໘. ເປັນຜູ້ມີພັນສາ ໒໐ ຫລືເກີນກວ່າ ໒໐
ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ແຕ່ງຕັ້ງພິກສຸຜູ້ມີຄຸນສົມບັຕ ໘ ຢ່າງນີ້ ເປັນຜູ້ສັ່ງສອນພິກສຸນີ"

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໑໔໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ
ວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ບໍ່ໄດ້ຮັບແຕ່ງຕັ້ງ ຄື ສົງຂ໌ຍັງບໍ່ໄດ້ແຕ່ງຕັ້ງດ້ວຍຍັຕຕິຈຕຸຕຖກັມ
ທີ່ຊື່ວ່າ ພິກສຸນີທັງຫລາຍ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ
ຄຳວ່າ ສັ່ງສອນ ຄວາມວ່າ ພິກສຸສັ່ງສອນຄຣຸທັມ ໘ ຢ່າງ ຕ້ອງອາບັຕິປາຈິຕຕີຍ໌
ສັ່ງສອນທັມຢ່າງອື່ນ ຕ້ອງອາບັຕິທຸກກຕ ສັ່ງສອນພິກສຸນີທີ່ອຸປສົມບົທໃນສົງຂ໌ຝ່າຍດຽວ ຕ້ອງ
ອາບັຕິທຸກກຕ

[໑໔໙] ພິກສຸຜູ້ໄດ້ຮັບແຕ່ງຕັ້ງແລ້ວນັ້ນເພິ່ງກວາດບໍຣິເວນະ ຕັ້ງນ້ຳສັນນ້ຳໃຊ້ ປູອາສນະໄວ້ ຊວນ
ເພື່ອນພິກສຸໄປນັ່ງດ້ວຍ
ພິກສຸນີທັງຫລາຍເພິ່ງໄປທີ່ນັ້ນ ແລ້ວໄຫວ້ພິກສຸນັ້ນ ແລ້ວນັ່ງ ນະ ທີ່ສົມຄວຣ

ເຊີງອັນຖະ :

໑ ໃນສມັຍທີ່ເປັນຄຣືຫັສຖ໌ກ່ອນບວຊ ບໍ່ເຄີຍຈັບຕ້ອງກາຍກັບພິກສຸນີ ບໍ່ເຄີຍປະພຶດຜິດທາງ
ປະເວນີກັບສິກຂມານາ ຫລືສາມເນຣີ (ວິ. ອ. ໒/໑໔໕-໑໔໗/ນີ໑໙)

ພິກສຸຜູ້ໄດ້ຮັບແຕ່ງຕັ້ງແລ້ວນັ້ນເພິ່ງຖາມພິກສຸນີທັງຫລາຍວ່າ "ນ້ອງຍິງທັງຫລາຍ ພວກທ່ານພ້ອມ
ພຽງກັນແລ້ວຫລື" ຖ້າພວກພິກສຸນີຕອບວ່າ "ພວກຂະນ້ອຍພ້ອມພຽງກັນແລ້ວ ຂນ້ອຍ" ເພິ່ງ
ຖາມວ່າ "ນ້ອງຍິງທັງຫລາຍ ຄຣຸທັມ ໘ ຂໍ້ຍັງຈຳກັນໄດ້ຢູ່ຫລື" ຖ້າພວກພິກສຸນີຕອບວ່າ "ຍັງຈຳ
ກັນໄດ້ຢູ່ ຂນ້ອຍ" ເພິ່ງກ່າວວ່າ "ນ້ອງຍິງທັງຫລາຍ ທັມນີ້ເປັນໂອວາທ" ແລ້ວເພິ່ງ
ມອບຫມາຍ ຖ້າພວກພິກສຸນີຕອບວ່າ "ຈຳກັນບໍ່ໄດ້ ຂນ້ອຍ" ເພິ່ງສວດຄຣຸທັມດັ່ງນີ້ວ່າ

ຄຣຸທັມ ໗ ຂໍ້

໑. ພິກສຸນີເຖິງຈະບວຊໄດ້ ໑໐໐ ພັນສາ ກໍຕ້ອງທຳການຂາບໄຫວ້ ຕ້ອນຮັບ ທຳອັຢຊລີກັມ ທຳສາມີຈິກັມແກ່ພິກສຸຜູ້ບວຊແມ່ນໃນມື້ນັ້ນ ທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໒. ພິກສຸນີບໍ່ເພິງຢູ່ຈຳພັນສາໃນອາວາສທີ່ບໍ່ມີພິກສຸ ທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໓. ພິກສຸນີເພິງຫວັງທັມ ໒ ຢ່າງ ຄື ຖາມອຸໂບສົຖແລະໄປຮັບໂອວາທຈາກພິກສຸສົງຂ໌ທຸກເຄິ່ງເດືອນ ທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໔. ພິກສຸນີຈຳພັນສາແລ້ວເພິງປວາຣນາໃນສົງຂ໌ ໒ ຝ່າຍ ໂດຍສຖານ ໓ ຄື ໄດ້ເຫັນ ໄດ້ຟັງ ຫລືໄດ້ນຶກສົງສັຍ ທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໕. ພິກສຸນີຕ້ອງຄຣຸທັມແລ້ວເພິງປະພຶດປັກຂມານັຕໃນສົງຂ໌ ໒ ຝ່າຍ ທັມຂໍ້ນີ້ ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໖. ພິກສຸນີເພິງແສວງຫາການອຸປສົມບົທໃນສົງຂ໌ ໒ ຝ່າຍໃຫ້ແກ່ສິກຂມານາທີ່ສຶກສາທັມ ໖ ຂ້ອຕລອດ ໒ ປີແລ້ວ ທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖືບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໗. ພິກສຸນີບໍ່ເພິງດ່າ ບໍ່ເພິງບໍຣິພາສພິກສຸ ບໍ່ວ່າກໍຣນີໃດໆທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

໘. ຕັ້ງແຕ່ວັນນີ້ເປັນຕົ້ນໄປ ຫ້າມພິກສຸນີສັ່ງສອນພິກສຸ ແຕ່ບໍ່ຫ້າມພິກສຸສັ່ງສອນພິກສຸນີ ທັມຂໍ້ນີ້ພິກສຸນີເພິງສັກກາຣະ ເຄົາຣົພ ນັບຖື ບູຊາ ບໍ່ເພິງລ່ວງລະເມີດຈົນຕລອດຊີວິຕ

ຖ້າພວກພິກສຸນີຕອບວ່າ "ພວກຂະນ້ອຍພ້ອມພຽງກັນແລ້ວ ຂນ້ອຍ" ພິກສຸຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນທັມອື່ນ ຕ້ອງອາບັຕິທຸກກຕ

ຖ້າພວກພິກສຸນີຕອບວ່າ "ພວກຂະນ້ອຍຍັງບໍ່ພ້ອມພຽງກັນ ຂນ້ອຍ" ພິກສຸຜູ້ໄດ້ຮັບແຕ່ງຕັ້ງແລ້ວສັ່ງສອນຄຣຸທັມ ໘ ຂໍ້ ຕ້ອງອາບັຕິທຸກກຕ ພິກສຸບໍ່ໃຫ້ໂອວາທ ສັ່ງສອນທັມອື່ນ ຕ້ອງອາບັຕິທຸກກຕ

ບິທພາຊນີຍ໌

[໑໕໐] ກັມ໑ ທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸບໍ່ແນ່ໃຈ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ກັມ ຄືກາຣແຕ່ງຕັ້ງພິກສຸສັ່ງສອນພິກສຸນີ (ວິ. ອ. ໔/໑໕໐/໓໖໑)

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

[໑໕໑] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີ ສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸບໍ່ແນ່ໃຈ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ພິກສຸນີສົງຊ໌ຍັງບໍ່ພ້ອມພຽງກັນ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຯລຯ ພິກສຸບໍ່ແນ່ໃຈ ສັ່ງສອນ ຯລຯ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າຍັງບໍ່ພ້ອມພຽງກັນ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸບໍ່ແນ່ໃຈ ສັ່ງສອນ ຕ້ອງອາບັຕິທຸກກາຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ພິກສຸນີສົງຊ໌ພ້ອມພຽງກັນແລ້ວ ພິກສຸສຳຄັນວ່າພ້ອມພຽງກັນແລ້ວ ສັ່ງສອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໕໔] ໑. ພິກສຸໃຫ້ອຸທເທສ
໒. ພິກສຸໃຫ້ປຣິປຸຈສາ໑
໓. ພິກສຸທີ່ພິກສຸນີກ່າວຂໍອ່າ "ນິມົນຕ໌ພຣະຄຸນເຈົ້າສວດເຖີດ" ສວດຢູ່
໔. ພິກສຸຖາມປັນຫາ
໕. ພິກສຸຖືກຖາມປັນຫາແລ້ວຕອບປັນຫາ
໖. ພິກສຸສັ່ງສອນຜູ້ອື່ນແຕ່ມີພິກສຸນີຟັງຢູ່ດ້ວຍ
໗. ພິກສຸສັ່ງສອນສິກຂມານາ
໘. ພິກສຸສັ່ງສອນສາມເນຣີ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ໂອວາທສິກຂາບົທທີ ໑ ຈົບ

ເຊີງອັນຖະ :

໑ ໃຫ້ອຸທເທສ ຄື ສອນພຣະບາລີຄຣຸທັມ ໘ ໃຫ້ປຣິປຸຈສາ ຄື ສອນຄຳອທິບາຍພຣະບາລີຄຣຸທັມ ໘ (ວິ. ອ. ໔/໑໕໔/໓໓໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໔. ອັຕຖັງຄຕສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

໔. ອັຕຖັງຄຕສິກຂາບົທ

ວ່າດ້ວຍການສັ່ງສອນພິກສຸນີໃນເວລາທີ່ດວງອາທິຕຍ໌ອັສດົງແລ້ວ

ເຣື້ອງພຣະຈູຣປັນຖກ

[໑໕໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸຜູ້ເປັນເຖຣະຜັດປ່ຽນກັນສັ່ງສອນພວກພິກສຸນີ ຄັ້ງນັ້ນ ເຖີງວາຣະທີ່ທ່ານພຣະຈູຣປັນຖກຈະສັ່ງສອນພວກພິກສຸນີ ພວກພິກສຸນີ ກ່າວກັນຢ່າງນີ້ວ່າ

"ອັນນີ້ເຫັນທີການສັ່ງສອນຈະບໍ່ສັມເຣັດຜົລ ບຶດນຶ່ງພຣະຄຸນເຈົ້າຈູຣປັນຖກກໍຄົງຈະເປັ່ງອຸທານ ຊໍ້າຊາກເຫມືອນເດີມ" ຄັນແລ້ວພວກພິກສຸນີໄດ້ພາກັນໄປຫາພຣະຈູຣປັນຖກເຖິງທີ່ຢູ່ ຄັນເຖິງ ແລ້ວໄດ້ໄຫວ້ທ່ານພຣະຈູຣບັນຖກແລ້ວນັ່ງ ນະ ທີ່ສົມຄວຣ ທ່ານພຣະຈູຣປັນຖກໄດ້ກ່າວກັບພວກ ພິກສຸນີຜູ້ນັ່ງ ນະ ທີ່ສົມຄວຣແລ້ວດັ່ງນີ້ວ່າ "ນ້ອງຍິງທັງຫລາຍ ພວກທ່ານພ້ອມພຽງກັນແລ້ວຫລື" ພວກພິກສຸນີຕອບວ່າ "ພວກຂະນ້ອຍພ້ອມພຽງກັນແລ້ວ ຂນ້ອຍ" ພຣະຈູຣປັນຖກຖາມວ່າ "ນ້ອງ ຍິງທັງຫລາຍ ຄຣຸທັມ ໘ ຂໍ້ ຍັງຈໍາກັນໄດ້ຢູ່ຫລື" ພວກພິກສຸນີຕອບວ່າ "ຍັງຈໍາກັນໄດ້ຢູ່ ຂນ້ອຍ"

ພຣະຈູຣປັນຖກມອບຫມາຍວ່າ "ນ້ອງຍິງທັງຫລາຍ ທັມນີ້ເປັນໂອວາທ" ແລ້ວເປັ່ງອຸທານຊໍ້າວ່າ "ມຸນີຜູ້ມີຈິຕຫມັ້ນຄົງ ບໍ່ປມາດ ສຶກສາທາງແຫ່ງຄວາມເປັນມຸນີ໑ ຜູ້ຄົງທີ່ ສງົບ ມີສຕິທຸກຂນະ ຍ່ອມເປັນຜູ້ບໍ່ເສົ້າໂສກ"໒

ເຊີງອັນຖະ :

໑ ທາງແຫ່ງຄວາມເປັນມຸນີ ຫມາຍເຖິງໄຕຣປັກຂິຍທັມ ໓໗ ປະການ ຫລືໄຕຣສິກຂາ (ອົ. ອ. ໒/໑໕໓/໓໓໒)

໒ ຂຸ. ທ. ໒໕/໓໗/໑໕໒, ຂຸ. ເຖຣ. ໒໖/໒໘/໒໗໔

ພວກພິກສຸນີກ່າວຢ່າງນີ້ວ່າ "ພວກເຮົາໄດ້ກ່າວແລ້ວບໍ່ແມ່ນບໍວ່າ ອັນນີ້ເຫັນທີການສັ່ງສອນ ຈະບໍ່ສັມເຣັດຜົລ ບຶດນຶ່ງພຣະຄຸນເຈົ້າຈູຣປັນຖກກໍຄົງຈະເປັ່ງອຸທານຊໍ້າຊາກເຫມືອນເດີມ" ທ່ານພຣະຈູຣປັນຖກໄດ້ຍິນຄໍາສົນທນານີ້ຂອງພວກພິກສຸນີເຫລົ່ານັ້ນແລ້ວ ຈຶ່ງເຫາະຂຶ້ນໄປສູ່ອາກາສ ຈົງກົມແດ່ ຢືນແດ່ ນັ່ງແດ່ ນອນແດ່ ບັນດາລໃຫ້ຄວັນພຸ່ງຕລົບແດ່ ບັນດາລໃຫ້ໄຟໂພງແດ່ ຫາຍຕົວແດ່ ໃນອາກາສ ເປັ່ງອຸທານນັ້ນ ນັ້ນລະ ແລະກ່າວພຣະພຸທທພົຈນ໌ອື່ນໆເປັນອັນມາກ ພວກພິກສຸນີພາກັນກ່າວຢ່າງນີ້ວ່າ "ນ່າອັສຈັນ ບໍ່ເຄີຍມີ ການສັ່ງສອນກ່ອນຫນ້ານີ້ບໍ່ເຄີຍສັມເຣັດ ຜົລ ແກ່ພວກເຮົາເຫມືອນການສັ່ງສອນຂອງພຣະຄຸນເຈົ້າຈູຣປັນຖກເລີຍ" ຄາວນັ້ນ ທ່ານພຣະຈູຣ ປັນຖກສັ່ງສອນພວກພິກສຸນີຢູ່ຈົນແລງຄໍ່າແລ້ວສັ່ງກັບດ້ວຍກ່າວວ່າ "ພວກທ່ານກັບໄປເຖີດ ນ້ອງ ຍິງທັງຫລາຍ"

ຄັ້ງນັ້ນ ເມື່ອເຈົ້າຫນ້າທີ່ປິດປະຕູເມືອງແລ້ວ ພວກພິກສຸນີໄດ້ພັກແຮມຢູ່ນອກເມືອງ ຮຸ່ງເຊົ້າຈຶ່ງພາ ກັນເຂົ້າເມືອງ ພວກຊາວບ້ານຕໍາຫນິ ປະນາມ ໂພນທະນາວ່າ "ພິກສຸນີພວກນີ້ເປັນຜູ້ບໍ່ປະພຶດ

ພຣົມຈັນຍ໌ ພັກແຮມກັບພວກພິກສຸໃນອາຮາມຫາກໍ່ຈະກັບເຂົ້າເມືອງດຽວນີ້ເອງ” ພວກພິກສຸໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງຕຳໜິ ປະນາມ ໂພນທະນາວ່າ “ເມື່ອດວງອາທິຕຍ໌ອັສດົງແລ້ວ ຈັ່ງໃດທ່ານພຣະຈູຌປັນຖກຍັງສັ່ງສອນພວກພິກສຸນີຢູ່ລະ” ຄັນພິກສຸເຫລົ່ານັ້ນຕຳໜິທ່ານພຣະຈູຌປັນຖກ ໂດຍປະການຕ່າງໆແລ້ວຈຶ່ງນຳເອົາເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະຈູຌປັນຖກວ່າ “ຈູຌປັນຖກ ຊາບວ່າ ເມື່ອດວງອາທິຕຍ໌ອັສດົງແລ້ວ ທ່ານຍັງສັ່ງສອນພວກພິກສຸນີຢູ່ ແມ່ນແທ້ບໍ” ທ່ານພຣະຈູຌປັນຖກທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ຈູຌປັນຖກ ຈັ່ງໃດເມື່ອດວງອາທິຕຍ໌ອັສດົງແລ້ວ ທ່ານຈຶ່ງຍັງສັ່ງສອນພວກພິກສຸນີຢູ່ລະ ຈູຌປັນຖກ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໕໔] ຖ້າພິກສຸແມ່ນໄດ້ຮັບການແຕ່ງຕັ້ງແລ້ວ ເມື່ອດວງອາທິຕຍ໌ອັສດົງແລ້ວ ຍັງສັ່ງສອນພິກສຸນີທັງຫລາຍຢູ່ ຕ້ອງອາບັຕິປາຈິຕຕີຍ໌

ເລື່ອງພຣະຈູຌປັນຖກ ຈົບ

ສິກຂາບົທວິພັງຄ໌

[໑໕໕] ພິກສຸທີ່ຊື່ວ່າ ໄດ້ຮັບການແຕ່ງຕັ້ງແລ້ວ ຄືໄດ້ຮັບການແຕ່ງຕັ້ງດ້ວຍຍັຕຕິຈຕຸຕຖກັມວາຈາແລ້ວ

ຄຳວ່າ ເມື່ອດວງອາທິຕຍ໌ອັສດົງແລ້ວ ຄື ເມື່ອດວງອາທິຕຍ໌ຕົກແລ້ວ

ທີ່ຊື່ວ່າ ພິກສຸນີທັງຫລາຍ ໄດ້ແກ່ ມາຕຸຄາມຜູ້ທີ່ອຸປສົມບົທໃນສົງຄ໌ ໒ ຝ່າຍ

ຄຳວ່າ ສັ່ງສອນ ຄວາມວ່າ ພິກສຸສັ່ງສອນຄຣຸທັມ ຫຼື ຢ່າງ ຫລືທັມຢ່າງອື່ນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໕໖] ດວງອາທິຕຍ໌ອັສດົງແລ້ວ ພິກສຸສຳຄັນວ່າອັສດົງແລ້ວ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌
ດວງອາທິຕຍ໌ອັສດົງແລ້ວ ພິກສຸບໍ່ແນ່ໃຈ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌
ດວງອາທິຕຍ໌ອັສດົງແລ້ວ ພິກສຸສຳຄັນວ່າຍັງບໍ່ອັສດົງ ສັ່ງສອນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ພິກສຸສັ່ງສອນພິກສຸນີທີ່ອຸປສົມບົທໃນສົງຄ໌ຝ່າຍດຽວ ຕ້ອງອາບັຕິທຸກກຕ
ດວງອາທິຕຍ໌ຍັງບໍ່ອັສດົງ ພິກສຸສຳຄັນວ່າອັສດົງແລ້ວ ສັ່ງສອນ ຕ້ອງອາບັຕິທຸກກຕ
ດວງອາທິຕຍ໌ຍັງບໍ່ອັສດົງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ດວງອາທິຕຍ໌ຍັງບໍ່ອັສດົງ ພິກສຸສຳຄັນວ່າຍັງບໍ່ອັສດົງ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໕໗] ໑. ພິກສຸໃຫ້ອຸທເທສ
໒. ພິກສຸໃຫ້ປຣິປຸຈສາ
໓. ພິກສຸທີ່ພິກສຸນີກ່າວຂອວ່າ “ນິມົນຕ໌ພຣະຄຸນເຈົ້າສວດເຖີດ” ສວດຢູ່
໔. ພິກສຸຖາມບັນຫາ
໕. ພິກສຸຖືກຖາມບັນຫາແລ້ວຕອບບັນຫາ
໖. ພິກສຸສັ່ງສອນຜູ້ອື່ນແຕ່ມີພິກສຸນີຟັງຢູ່ດ້ວຍ
໗. ພິກສຸສັ່ງສອນສິກຂມານາ
໘. ພິກສຸສັ່ງສອນສາມເນຣີ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ອັຕຖັງຄຕສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໓. ພິກຂຸນູປັສສຍສິກຂາບົທ

ນິທານວັຕຖຸ

໖. ໂອວາທວັຄ

໖. ພິກຂຸນູປັສສຍສິກຂາບົທ
ວ່າດ້ວຍການໄປສັ່ງສອນພິກສຸນີເຖິງທີ່ສຳນັກ

ເຣື້ອງພຣະສັພພັຄຄີຍ໌

[໑໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ນິໂຄຣທາຣາມ ເຂຕກຸງກບິລພັສດຸ໌ ແຄວ້ນສັກກະ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເຂົ້າໄປທີ່ສຳນັກຂອງພິກສຸນີ ສັ່ງສອນພວກພິກສຸນີ ສັພພັຄຄີຍ໌ ພວກພິກສຸນີໄດ້ກ່າວກັບພວກພິກສຸນີສັພພັຄຄີຍ໌ດັ່ງນີ້ວ່າ "ມາເຖີດ ເຈົ້າແມ່ທັງຫລາຍ ພວກເຮົາຈະໄປຮັບໂອວາທກັນ" ພວກພິກສຸນີສັພພັຄຄີຍ໌ກ່າວວ່າ "ເປັນຫຍັງພວກເຮົາຈະຕ້ອງໄປ ຮັບໂອວາທ ພວກພຣະຄຸນເຈົ້າສັພພັຄຄີຍ໌ມາສັ່ງສອນພວກເຮົາເຖິງທີ່ນີ້ທີດຽວ" ພວກພິກສຸນີຈຶ່ງ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ ຈຶ່ງເຂົ້າໄປທີ່ສຳນັກພິກສຸນີ ແລ້ວສັ່ງສອນພິກສຸນີທັງຫລາຍລະ" ແລ້ວແຈ້ງເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກ ນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງເຂົ້າໄປທີ່ ສຳນັກພິກສຸນີແລ້ວສັ່ງສອນພິກສຸນີທັງຫລາຍລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານເຂົ້າໄປທີ່ສຳນັກພິກສຸນີແລ້ວສັ່ງສອນ ພິກສຸນີທັງຫລາຍ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຊບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໄປທີ່ ສຳນັກພິກສຸນີແລ້ວສັ່ງສອນພິກສຸນີທັງຫລາຍລະ ໂມຊບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດ ໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກ ຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກ. ພິກສຸໃດເຂົ້າໄປທີ່ສຳນັກພິກສຸນີແລ້ວສັ່ງສອນພິກສຸນີທັງຫລາຍ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພຣະສັພພັຄຄີຍ໌ ຈົບ

ເຣື້ອງພຣະນາງມຫາປຊາບໍດີໂຄຕມີເປັນໄຂ້

[໑໕໘] ສມັຍນັ້ນ ພຣະນາງມຫາປຊາບໍດີໂຄຕມີເປັນໄຂ້ ພິກສຸຜູ້ເປັນເຖຣະທັງຫລາຍເຂົ້າໄປຢ້ຽມເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບພຣະນາງມຫາປຊາບໍດີໂຄຕມີດັ່ງນີ້ວ່າ "ທ່ານຍັງສະບາຍດີຫລືຍັງພໍເປັນຢູ່ໄດ້ຫລື" ພຣະນາງມຫາປຊາບໍດີໂຄຕມີຕອບວ່າ "ພຣະຄຸນເຈົ້າທັງຫລາຍ ຂະນ້ອຍກຳລັງບໍ່ສະບາຍ ຈະເປັນຢູ່ບໍ່ໄດ້ແລ້ວ ຂໍນິມົນຕ໌ພຣະຄຸນເຈົ້າທັງຫລາຍສະແດງທັມເຖີດຂນ້ອຍ" ພຣະເຖຣະທັງຫລາຍກ່າວວ່າ "ກາຣເຂົ້າມາທີ່ສຳນັກພິກສຸນີແລ້ວສະແດງທັມແກ່ພິກສຸນີບໍ່ສົມຄວຣ" ພາກັນມີຄວາມຢຳເກງຢູ່ບໍ່ສະແດງທັມ ຄັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງຄອງອັນຕຣວາສກ ຖືບາຕຣແລະຈີວອນສເດັຈເຂົ້າໄປຢ້ຽມພຣະນາງມຫາປຊາບໍດີເຖິງທີ່ຢູ່ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດໄວ້ແລ້ວ ຄັນພຣະຜູ້ມີພຣະພາຄປະທັບນັ່ງແລ້ວ ໄດ້ຕຣັສກັບພຣະນາງມຫາປຊາບໍດີໂຄຕມີນັ້ນ ດັ່ງນີ້ວ່າ "ໂຄຕມີ ທ່ານສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື" ພຣະນາງມຫາປຊາບໍດີໂຄຕມີຂາບທູລວ່າ "ເມື່ອກ່ອນ ພິກສຸຜູ້ເປັນເຖຣະທັງຫລາຍມາສະແດງທັມ ຂະນ້ອຍຈຶ່ງມີຄວາມຜາສຸກ ແຕ່ບັດນີ້ພິກສຸທັງຫລາຍກ່າວວ່າ 'ພຣະອົງຄ໌ຊົງຫ້າມ' ມີຄວາມຢຳເກງຢູ່ບໍ່ສະແດງທັມ ເຫຕຸນັ້ນຂະນ້ອຍຈຶ່ງບໍ່ມີຄວາມຜາສຸກ ພຣະພຸທທເຈົ້າຂ້າ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພຣະນາງມຫາປຊາບໍດີໂຄຕມີເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ແລ້ວຊົງລຸກຈາກອາສນະສເດັຈໄປ ຕໍ່ມາພຣະຜູ້ມີພຣະພາຄ ຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າໄປທີ່ສຳນັກພິກສຸນີແລ້ວສັ່ງສອນພິກສຸນີເປັນໄຂ້ໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໑໕໐] ອີກຢ່າງນຶ່ງ ພິກສຸໃດເຂົ້າໄປທີ່ສຳນັກພິກສຸນີແລ້ວສັ່ງສອນພິກສຸນີທັງຫລາຍ ນອກສມັຍຕ້ອງອາບັຕິປາຈິຕຕີຍ໌ ສມັຍໃນຂໍ້ນັ້ນ ຄື ພິກສຸນີເປັນໄຂ້ ນີ້ເປັນສມັຍໃນຂໍ້ນັ້ນ

ເຣື້ອງພຣະນາງມຫາປຊາບໍດີໂຄຕມີ ຈົບ

[໑໕໑] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ທີ່ສຳນັກພິກສຸນີ ໄດ້ແກ່ ສຖານທີ່ທີ່ພິກສຸນີພັກແມ່ນຄືນດຽວ

ຄຳວ່າ ເຂົ້າໄປ ຄື ໄປໃນທີ່ນັ້ນ

ທີ່ຊື່ວ່າ ພິກສຸນີທັງຫລາຍ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ຄຳວ່າ ສັ່ງສອນ ຄວາມວ່າ ພິກສຸສັ່ງສອນຄຣຸທັມ ຣ຺ ຢ່າງ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ພິກສຸນີເປັນໄຂ້ ໄດ້ແກ່ ພິກສຸນີບໍ່ສາມາດໄປຮັບໂອວາທຫລືຮ່ວມປະຊຸມໄດ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໓. ພິກຂຸນູປັສສຍສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໕໔] ອຸປສັມບັນ໑ ພິກສຸສຳຄັນວ່າເປັນອຸປສັມບັນ ເຂົ້າໄປທີ່ສຳນັກພິກສຸນີແລ້ວສັ່ງສອນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ເຂົ້າໄປທີ່ສຳນັກພິກສຸນີແລ້ວສັ່ງສອນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າອນຸປສັມບັນ໔ ເຂົ້າໄປທີ່ສຳນັກພິກສຸນີແລ້ວ ສັ່ງສອນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸສັ່ງສອນທັມຢ່າງອື່ນ ຕ້ອງອາບັຕິທຸກກຕ

ພິກສຸສັ່ງສອນພິກສຸນີທີ່ອຸປສົມບົທໃນສົງຂ໌ຝ່າຍດຽວ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໗໖] ໑. ພິກສຸສອນໃນສມັຍ

໔. ພິກສຸໃຫ້ອຸທເທສ

໖. ພິກສຸໃຫ້ປຣິປຸຈສາ

ເຊີງອັນຖະ :

໑ ຄຳວ່າ "ອຸປສັມບັນ" ໃນທີ່ນີ້ຫມາຍເຖີງພິກສຸນີ

໔ ຄືສຳຄັນວ່າບໍ່ແມ່ນພິກສຸນີ

໔. ພິກສຸທີ່ພິກສຸນີກ່າວຂອວ່າ "ນິມົນຕ໌ພຣະຄຸນເຈົ້າສອດເຖີດ" ສອດຢູ່

໕. ພິກສຸຖາມບັນຫາ

໗. ພິກສຸຖືກຖາມບັນຫາແລ້ວຕອບບັນຫາ

໗. ພິກສຸສັ່ງສອນຜູ້ອື່ນແຕ່ມີພິກສຸນີຟັງຢູ່ດ້ວຍ

໘. ພິກສຸສັ່ງສອນສິກຂມານາ

໙. ພິກສຸສັ່ງສອນສາມເນຣີ

໑໐. ພິກສຸວິກົລຈິຕ

໑໑. ພິກສຸຕົ້ນບັນຍັດ

ພິກຂຸນູປັສສຍສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໖. ໂອວາທວັຄ ໔. ອາມິສສິກຂາບົທ ນິທານວັຕຖຸ

໖. ໂອວາທວັຄ

໔. ອາມິສສິກຂາບົທ

ວ່າດ້ວຍການສັ່ງສອນພິກສຸນີເພາະເຫັນແກ່ອາມິສ

ເຣື້ອງພຣະສັພພັຄຄີຍ໌

[໑໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພວກພິກສຸນີ ຍ່ອມໄດ້ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ພວກພິກສຸສັພພັຄຄີຍ໌ກ່າວຢ່າງນີ້ວ່າ "ພິກສຸຜູ້ເປັນເຖຣະທັງຫລາຍບໍ່ຕັ້ງໃຈສັ່ງສອນພິກສຸນີທັງຫລາຍ ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພິກສຸນີທັງຫລາຍກໍເພາະເຫັນແກ່ອາມິສ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງກ່າວຢ່າງນີ້ວ່າ ພິກສຸຜູ້ເປັນເຖຣະທັງຫລາຍບໍ່ຕັ້ງໃຈສັ່ງສອນພິກສຸນີທັງຫລາຍ ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພິກສຸນີທັງຫລາຍກໍເພາະເຫັນແກ່ອາມິສລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານກ່າວຢ່າງນີ້ວ່າ ພິກສຸຜູ້ເປັນເຖຣະທັງຫລາຍບໍ່ຕັ້ງໃຈສັ່ງສອນພິກສຸນີທັງຫລາຍ ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພິກສຸນີທັງຫລາຍກໍເພາະເຫັນແກ່ອາມິສ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງກ່າວ ຢ່າງນີ້ວ່າ ພິກສຸຜູ້ເປັນເຖຣະທັງຫລາຍບໍ່ຕັ້ງໃຈສັ່ງສອນພິກສຸນີທັງຫລາຍ ພິກສຸຜູ້ເປັນເຖຣະທັງຫລາຍສັ່ງສອນພິກສຸນີທັງຫລາຍກໍເພາະເຫັນແກ່ອາມິສລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໕໕] ກໍ ພິກສຸໃດກ່າວຢ່າງນີ້ວ່າ ພິກສຸ(ຜູ້ເປັນເຖຣະ)ທັງຫລາຍສັ່ງສອນພິກສຸນີທັງຫລາຍເພາະເຫັນແກ່ອາມິສ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໑໘໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ເພາະເຫັນແກ່ອາມິສ ຄື ເພາະເຫັນແກ່ຈີວອນ ເພາະເຫັນແກ່ບິນທບາຕ ເພາະເຫັນແກ່ເສນາສນະ ເພາະເຫັນແກ່ຄິລານປັຈຈັຍເພສັຊບໍຣິຂາຣ ເພາະເຫັນແກ່ສັກກາຣະ ເພາະເຫັນແກ່ຄວາມເຄົາຣົພ ເພາະເຫັນແກ່ຄວາມນັບຖື ເພາະເຫັນແກ່ການຂາບໄຫວ້ ເພາະເຫັນແກ່ການບູຊາ

ຄຳວ່າ ກ່າວຢ່າງນີ້ ຄວາມວ່າ ພິກສຸຕ້ອງການຈະເຮັດໃຫ້ເສັ່ງຊື່ ຕ້ອງການຈະເຮັດໃຫ້ອັປຍົສ ຕ້ອງການຈະທຳອຸປສັມບັນທີ່ສົງຄ໌ແຕ່ງຕັ້ງໃຫ້ເປັນຜູ້ສັ່ງສອນພິກສຸນີໃຫ້ເກີ້ເຂີນ ຈຶ່ງກ່າວຫາຢ່າງນີ້ ວ່າ "ພິກສຸນັ້ນສັ່ງສອນເພາະເຫັນແກ່ຈີວອນ ເພາະເຫັນແກ່ບິນທບາຕ ເພາະເຫັນແກ່ເສນາສນະ ເພາະເຫັນແກ່ຄິລານປັຈຈັຍເພສັຊບໍຣິຂາຣ ເພາະເຫັນແກ່ສັກກາຣະ ເພາະເຫັນແກ່ຄວາມເຄົາຣົພ ເພາະເຫັນແກ່ຄວາມນັບຖື ເພາະເຫັນແກ່ການຂາບໄຫວ້ ເພາະເຫັນແກ່ການບູຊາ" ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໖. ໂອວາທວັຄ ໔. ອາມິສສິກຂາບົທ ບົທພາຊນີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໘໗] ກັມ໑ ທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ກ່າວຢ່າງນີ້ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ກ່າວຢ່າງນີ້ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ກ່າວຢ່າງນີ້ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກົຕ

ພິກສຸຕ້ອງການຈະເຮັດໃຫ້ເສັ່ງຊື່ ຕ້ອງການຈະເຮັດໃຫ້ອັປຍົສ ຕ້ອງການຈະທຳອຸປສັມບັນທີ່ສົງຄ໌ບໍ່ໄດ້ແຕ່ງຕັ້ງໃຫ້ເປັນຜູ້ສັ່ງສອນພິກສຸນີໃຫ້ເກີ້ເຂີນ ຈຶ່ງກ່າວຫາຢ່າງນີ້ວ່າ "ພິກສຸນັ້ນສັ່ງສອນເພາະ

ເຫັນແກ່ຈີວອນ ເພາະເຫັນແກ່ບິນທູບາຕ ເພາະເຫັນແກ່ເສນາສນະ ເພາະເຫັນແກ່ຄິລານປັຈຈັຍເພສັຊບໍຣິຂາຣ ເພາະເຫັນແກ່ສັກກາຣະ ເພາະເຫັນແກ່ຄວາມເຄົາຣົພ ເພາະເຫັນແກ່ຄວາມນັບຖື ເພາະເຫັນແກ່ການຂາບໄຫວ້ ເພາະເຫັນແກ່ການບູຊາ" ຕ້ອງອາບັຕິທຸກກົຕ
ພິກສຸຕ້ອງການຈະເຮັດໃຫ້ເສັຽຊື່ ຕ້ອງການຈະເຮັດໃຫ້ອັປຍົສ ຕ້ອງການຈະທຳອນຸປສັມບັນທີ່ສົງຊ໌ແຕ່ງຕັ້ງຫລືບໍ່ໄດ້ແຕ່ງຕັ້ງໃຫ້ເປັນຜູ້ສັ່ງສອນພິກສຸນີໃຫ້ເກີ້ເຂີນ ຈຶ່ງກ່າວຫາຢ່າງນີ້ວ່າ "ອນຸປສັມບັນນັ້ນສັ່ງສອນເພາະເຫັນແກ່ຈີວອນ ເພາະເຫັນແກ່ບິນທູບາຕ ເພາະເຫັນແກ່ເສນາສນະ ເພາະເຫັນແກ່ຄິລານປັຈຈັຍເພສັຊບໍຣິຂາຣ ເພາະເຫັນແກ່ສັກກາຣະ ເພາະເຫັນແກ່ຄວາມເຄົາຣົພ ເພາະເຫັນແກ່ຄວາມນັບຖື ເພາະເຫັນແກ່ການຂາບໄຫວ້ ເພາະເຫັນແກ່ການບູຊາ" ຕ້ອງອາບັຕິທຸກກົຕ

ເຊີງອັນຖະ :
໑ ກັມ ຄືການແຕ່ງຕັ້ງພິກສຸສັ່ງສອນພວກພິກສຸນີ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໓. ໂອວາທວັຄ ໔. ອາມິສສິກຂາບົທ ອນາປັຕຕິວາຣ

ຕິກທຸກກົຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ກ່າວຢ່າງນີ້ ຕ້ອງອາບັຕິທຸກກົຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ກ່າວຢ່າງນີ້ ຕ້ອງອາບັຕິທຸກກົຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ກ່າວຢ່າງນີ້ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໑໖໗] ໑. ພິກສຸກ່າວຫາພິກສຸຜູ້ສັ່ງສອນເພາະເຫັນແກ່ຈີວອນ ເພາະເຫັນແກ່ບິນທູບາຕ ເພາະເຫັນແກ່ເສນາສນະ ເພາະເຫັນແກ່ຄິລານປັຈຈັຍເພສັຊບໍຣິຂາຣ ເພາະເຫັນແກ່ສັກກາຣະ ເພາະເຫັນແກ່ຄວາມເຄົາຣົພ ເພາະເຫັນແກ່ຄວາມນັບຖື ເພາະເຫັນແກ່ການຂາບໄຫວ້ ເພາະເຫັນແກ່ການບູຊາຕາມປົກຕິ

໔. ພິກສຸວິກົລຈິຕ
໕. ພິກສຸຕົ້ນບັນຍັດ

ອານິສສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໓. ໂອວາທວັຄ ໕. ຈີວອນທານສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

໕. ຈີວອນທານສິກຂາບົທ

ວ່າດ້ວຍການຖວາຍຈີວອນ

ເຣື້ອງພິກສຸຮູບນຶ່ງ

[໑໕໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຮູບນຶ່ງທ່ຽວບິນທບາຕໄປຕາມຖນົນສາຍນຶ່ງ ພິກສຸນີຮູບນຶ່ງກໍທ່ຽວບິນທບາຕໄປຕາມຖນົນສາຍດຽວກັນນັ້ນ ເທື່ອນັ້ນ ພິກສຸໄດ້ກ່າວກັບພິກສຸນີຮູບນັ້ນດັ່ງນີ້ວ່າ "ໄປເຖີດ ນ້ອງຍິງ ທີ່ພຸ້ນມີຜູ້ຖວາຍພິກສາ" ພິກສຸນີກໍກ່າວຢ່າງນີ້ວ່າ "ໄປເຖີດ ພຣະຄຸນເຈົ້າ ທີ່ພຸ້ນມີຜູ້ຖວາຍພິກສາ" ພິກສຸແລະພິກສຸນີທັງ ໒ ຮູບນັ້ນຈຶ່ງເປັນເພື່ອນກັນ ເພາະພົບກັນຢູ່ເນືອງໆຕໍ່ມາ ພິກສຸຜູ້ເປັນເຈົ້າຫນ້າທີ່ແຈກຈີວອນກໍາລັງແຈກຈີວອນຂອງສົງຄ໌ ພິກສຸນີຮູບນັ້ນໄປຮັບໂອ ວາທ ແລ້ວເຂົ້າໄປຫາພິກສຸຮູບນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ໄຫວ້ພິກສຸຮູບນັ້ນ ແລ້ວຢືນ ນະ ທີ່ ສົມຄວຣ ພິກສຸຜູ້ເປັນເພື່ອນຮູບນັ້ນໄດ້ກ່າວກັບພິກສຸນີຮູບນັ້ນຜູ້ຢືນຢູ່ ນະ ທີ່ສົມຄວຣວ່າ "ນ້ອງ
ຍິງ ນີ້ຈີວອນສ່ວນແບ່ງຂອງເຮົາ ທ່ານຈະຮັບຫລືບໍ່" ພິກສຸນີຕອບວ່າ "ຮັບ ຂນ້ອຍ ເພາະຂະນ້ອຍມີຈີວອນເກົ່າ" ເທື່ອນັ້ນ ພິກສຸນັ້ນຈຶ່ງໄດ້ໃຫ້ຈີວອນແກ່ພິກສຸນີຮູບນັ້ນ ສ່ວນຕົນເອງກໍຍັງຄົງໃຊ້ຈີວອນເກົ່າ ພິກສຸທັງຫລາຍໄດ້ກ່າວກັບພິກສຸນັ້ນດັ່ງນີ້ວ່າ "ທ່ານ ບັດນີ້ທ່ານຈົ່ງຕັດຍົບຈີວອນຂອງທ່ານ" ລໍາດັບນັ້ນ ພິກສຸຮູບນັ້ນຈຶ່ງບອກເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງໃຫ້ຈີວອນແກ່ພິກສຸນີລະ" ຄັນພິກສຸ

ເຫລົ່ານັ້ນຕຳຫນິພິກສຸນັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານໃຫ້ຈີວອນແກ່ພິກສຸນີແມ່ນແທ້ບໍ່" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸ ພິກສຸນີນັ້ນເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ພິກສຸນັ້ນທູລຮັບວ່າ "ບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ໂມຂບຸຣຸສ ພິກສຸຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເຫມາະສົມຫລືບໍ່ເຫມາະສົມຄວາມຫນ້າເຫລື້ອມໃສຫລືບໍ່ຫນ້າເຫລື້ອມໃສ ຂອງທີ່ມີຢູ່ຫລືບໍ່ມີຢູ່ຂອງພິກສຸນີ ຜູ້ບໍ່ແມ່ນຍາຕ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງໃຫ້ຈີວອນແກ່ພິກສຸນີຜູ້ບໍ່ແມ່ນຍາຕລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດ ໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດໃຫ້ຈີວອນແກ່ພິກສຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິປາຈິຕຕິຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພິກສຸຮູບນຶ່ງ ຈົບ

ເຣື້ອງພິກສຸຫລາຍຮູບ

[໑໗໐] ສມັຍນັ້ນ ພິກສຸທັງຫລາຍພາກັນມີຄວາມຢຳເກງ ຈຶ່ງບໍ່ຍອມໃຫ້ຈີວອນແລກປ່ຽນກັບພິກສຸນີທັງຫລາຍ ພິກສຸນີທັງຫລາຍຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງບໍ່ຍອມໃຫ້ຈີວອນແລກປ່ຽນກັບພວກເຮົາລະ" ພິກສຸທັງຫລາຍໄດ້ຍິນພິກສຸນີທັງຫລາຍຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ແລກປ່ຽນຈີວອນໄດ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສຫທຣມິກ ໕ ຄື ພິກສຸ ພິກສຸນີ ສິກຂມານາ ສາມເນຣ ສາມເນຣີ ໃຫ້ຈີວອນແລກປ່ຽນກັນໄດ້ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສຫທຣມິກ

໕ ເຫລົ່ານີ້ ໃຫ້ຈີວອນແລກປ່ຽນກັນໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໑໗໑] ອີກຢ່າງນຶ່ງ ພິກສຸໃດໃຫ້ຈີວອນແກ່ພິກສຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ເຣື້ອງພິກສຸຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

[໑໗໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກ ຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຄ໌ ໔ ຝ່າຍ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ໌ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະທຳວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ເວັ້ນໄວ້ແຕ່ແລກປ່ຽນກັນ ຄື ພິກສຸໃຫ້ ຕ້ອງອາບັຕິປາຈິຕຕີຍ໌ ຍົກເວັ້ນແລກປ່ຽນກັນ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໗໕] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຫ້ຈີວອນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ໃຫ້ຈີວອນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ໃຫ້ຈີວອນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ແລກປ່ຽນກັນ

ຕິກທຸກກຕ

ພິກສຸນີທີ່ອຸປສົມບົທໃນສົງຂ໌ຝ່າຍດຽວ ພິກສຸໃຫ້ຈີວອນ ຕ້ອງອາບັຕິທຸກກຕ ເວັ້ນໄວ້ແຕ່ແລກປ່ຽນກັນ

ພິກສຸນີທີ່ເປັນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ໃຫ້ຈີວອນ ຕ້ອງອາບັຕິທຸກກຕ

ພິກສຸນີທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ໃຫ້ຈີວອນ ຕ້ອງອາບັຕິທຸກກຕ

ພິກສຸນີທີ່ເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ໃຫ້ຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໗໔] ໑. ພິກສຸຜູ້ໃຫ້ແກ່ພິກສຸນີທີ່ເປັນຍາຕ

໒. ພິກສຸແລກ ຄື ເອົາຈີວອນຣາຄາຖືກແລກຈີວອນຣາຄາແພງ ຫລືຈີວອນຣາຄາແພງແລກຈີວອນຣາຄາຖືກ

໓. ພິກສຸເຈົ້າຂອງຈີວອນທີ່ພິກສຸນີຖືວິສາສະເອົາໄປ

໔. ພິກສຸເຈົ້າຂອງຈີວອນທີ່ພິກສຸນີຂໍຢືມໄປ

໕. ພິກສຸໃຫ້ບໍຣິຂາຣອື່ນ ນອກຈາກຈີວອນ

໖. ພິກສຸໃຫ້ແກ່ສິກຂມານາ

໗. ພິກສຸໃຫ້ແກ່ສາມເນຣີ

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ຈີວອນທານສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໓. ໂອວາທວັຄ ໖. ຈີວອນສິພພນສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

ຝ໌. ຈີວອນສິພພນສິກຂາບົທ

ວ່າດ້ວຍການຍິບຈີວອນໃຫ້ພິກສຸນີ

ເຣື້ອງພຣະອຸທາຍີ

[໑໗໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີເປັນຜູ້ຊຳນານການຕັດຍິບຈີວອນ ພິກສຸນີຮູບນຶ່ງເຂົ້າໄປຫາທ່ານພຣະອຸທາຍີເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານພຣະອຸທາຍີດັ່ງນີ້ວ່າ "ພຣະຄຸນເຈົ້າ ຂະນ້ອຍຂໍໂອກາສ ພຣະຄຸນເຈົ້າ ຊ່ວຍຍິບຈີວອນໃຫ້ດ້ວຍເຖີດ ຂະນ້ອຍ" ເທື່ອນັ້ນ ທ່ານພຣະອຸທາຍີຈຶ່ງໄດ້ຍິບຈີວອນໃຫ້ນາງພິກສຸນີນັ້ນ ຍ້ອມຢ່າງດີ ຮຽບຮ້ອຍດີ ຂຽນພາພຕາມຈິນຕນາການ ໃສ່ທາງກາງແລ້ວພັບເກັບໄວ້ ຄັ້ງນັ້ນ ພິກສຸນີຮູບນັ້ນໄດ້ເຂົ້າໄປຫາທ່ານພຣະອຸທາຍີເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບທ່ານພຣະອຸທາຍີດັ່ງນີ້ວ່າ "ພຣະຄຸນເຈົ້າ ຈີວອນນັ້ນຢູ່ທີ່ໃດ ຂະນ້ອຍ" ທ່ານພຣະອຸທາຍີຕອບວ່າ "ນ້ອງຍິງ ມາເຖີດ ທ່ານນຳຈີວອນຜືນນີ້ໄປຕາມທີ່ພັບເກັບໄວ້ແລ້ວ ຈົ່ງຫົ່ມຈີວອນຜືນນີ້ ຍ່າງຕາມຫລັງພິກສຸນີສົງຂ໌ມາ ໃນເວລາທີ່ພິກສຸນີສົງຂ໌ມາຮັບໂອວາທ" ຄັ້ງນັ້ນ ພິກສຸນີຮູບນັ້ນໄດ້ນຳຈີວອນໄປເກັບໄວ້ຕາມທີ່ພັບ ແລ້ວໄດ້ຫົ່ມຈີວອນຜືນນັ້ນຍ່າງຕາມຫລັງພິກສຸນີສົງຂ໌ມາໃນເວລາທີ່ພິກສຸນີສົງຂ໌ມາຮັບໂອວາທ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ພວກພິກສຸນີບໍ່ຢ້ານບາປໃຈເຖິງ ໄຮ້ຢາງອາຍ ຈົນເຖິງກັບໄດ້ຂຽນພາພຕາມຈິນຕນາການໄວ້ທີ່ຈີວອນ" ພິກສຸນີທັງຫລາຍກ່າວຢ່າງນີ້ວ່າ "ພາພນີ້ໃຜຂຽນ" ພິກສຸນີນັ້ນຕອບວ່າ "ພຣະຄຸນເຈົ້າອຸທາຍີ" ພິກສຸນີທັງຫລາຍກ່າວວ່າ "ພາພຕາມຈິນຕນາການປະເພດນີ້ ເຖິງພວກນັກເລງຂີ້ລັກມັກສິກບໍ່ຢ້ານບາປ ກໍຍັງບໍ່ເຫັນວ່າງາມ ຈັ່ງໃດພຣະຄຸນເຈົ້າອຸທາຍີຈຶ່ງເຫັນວ່າງາມລະ" ຄັນແລ້ວພິກສຸນີເຫລົ່ານັ້ນຈຶ່ງບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີຈຶ່ງຍິບຈີວອນໃຫ້ພິກສຸນີລະ" ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະອຸທາຍີໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານຍິບຈີວອນໃຫ້ພິກສຸນີ ແມ່ນແທ້ບໍ່" ທ່ານພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ອຸທາຍີ ພິກສຸນີນັ້ນເປັນ

ຍາຕ ຂອງທ່ານຫລືບໍ່ແມ່ນຍາຕ" ທ່ານພຣະອຸທາຍີຂາບທູລວ່າ "ບໍ່ແມ່ນຍາຕພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຊົງຕຳໜິວ່າ "ໂມຂບຸຣຸສ ພິກສຸຜູ້ບໍ່ແມ່ນຍາຕຍ່ອມບໍ່ຮູ້ຄວາມເໝາະສົມຫລືບໍ່ເໝາະສົມ ຄວາມໜ້າເຫລື້ອມໃສຫລືບໍ່ໜ້າເຫລື້ອມໃສຂອງພິກສຸນີຜູ້ບໍ່ແມ່ນຍາຕ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງຍິບຈີວອນໃຫ້ແກ່ພິກສຸນີຜູ້ບໍ່ແມ່ນຍາຕລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໗໕] ກໍ ພິກສຸໃດຍິບຫລືໃຊ້ໃຫ້ຍິບຈີວອນໃຫ້ພິກສຸນີຜູ້ບໍ່ແມ່ນຍາຕ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸທາຍີ ຈົບ

ສິກຂາບົທວິພັງຄ໌

[໑໗໗] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ທີ່ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາ ຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ໖ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະທຳວິກັປໄດ້ເປັນຢ່າງຕ່ຳ

ຄຳວ່າ ຍິບ ຄື ພິກສຸຍິບໃຫ້ເອງ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຮອຍເຂັມ

ຄຳວ່າ ໃຊ້ໃຫ້ຍິບ ຄື ພິກສຸໃຊ້ໃຫ້ຜູ້ອື່ນຍິບໃຫ້ ຕ້ອງອາບັຕິປາຈິຕຕີຍ໌ ຜູ້ຮັບຄຳສັ່ງຄັ້ງດຽວ ແຕ່ຍິບນາກຄັ້ງ ພິກສຸຜູ້ສັ່ງຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໗໘] ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຍິບຫລືໃຊ້ໃຫ້ຍິບຈີວອນໃຫ້ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຍິບຫລືໃຊ້ໃຫ້ຍິບຈີວອນໃຫ້ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸນີທີ່ບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ຍິບຫລືໃຊ້ໃຫ້ຍິບຈີວອນໃຫ້ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກາຕ

ພິກສຸນີທີ່ອຸປສົມບົທໃນສົງຂ໌ຝ່າຍດຽວ ພິກສຸຍິບຫລືໃຊ້ໃຫ້ຍິບຈີວອນໃຫ້ ຕ້ອງອາບັຕິທຸກກາຕ
ພິກສຸນີທີ່ເປັນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຍິບຫລືໃຫ້ຍິບຈີວອນໃຫ້ ຕ້ອງອາບັຕິທຸກກາຕ
ພິກສຸນີທີ່ເປັນຍາຕ ພິກສຸບໍ່ແນ່ໃຈ ຍິບຫລືໃຊ້ໃຫ້ຍິບຈີວອນໃຫ້ ຕ້ອງອາບັຕິທຸກກາຕ
ພິກສຸນີທີ່ເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ຍິບຫລືໃຊ້ໃຫ້ຍິບຈີວອນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໑໗໙] ໑. ພິກສຸຍິບຈີວອນໃຫ້ພິກສຸນີຜູ້ເປັນຍາຕ
໒. ພິກສຸຍິບຫລືໃຊ້ໃຫ້ຍິບບໍຣິຂາຣອື່ນໃຫ້ ນອກຈາກຈີວອນ
໓. ພິກສຸຍິບຈີວອນໃຫ້ສິກຂມານາ
໔. ພິກສຸຍິບຈີວອນໃຫ້ສາມເນຣີ
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ຈີວອນສິພພນສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໗. ສັງວິທານສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

໗. ສັງວິທານສິກຂາບົທ

ວ່າດ້ວຍການຊັກຊວນຍ່າງທາງຮ່ວມກັນ

ເລື້ອງພຣະສັພພັຄຄີຍ໌

[໑໗໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີທັງຫລາຍ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສາກຍບຸຕຣທຽວໄປກັບພິກສຸນີທັງຫລາຍ ເຫມືອນພວກເຮົາກັບພັຣຍາທຽວໄປດ້ວຍກັນ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີທັງຫລາຍລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ ໂດຍປະກາຣຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີທັງຫລາຍ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີທັງຫລາຍລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເລື້ອງພຣະສັພພັຄຄີຍ໌ ຈົບ

ເລື້ອງພິກສຸແລະພິກສຸນີຫລາຍຮູບ

[໑໗໑] ສມັຍນັ້ນ ພວກພິກສຸແລະພວກພິກສຸນີຫລາຍຮູບຈະຍ່າງທາງໄກຈາກເມືອງສາເກຕໄປກຸງສາວັຕຖີ ຄັ້ງນັ້ນ ພິກສຸນີເຫລົ່ານັ້ນໄດ້ກ່າວກັບພິກສຸເຫລົ່ານັ້ນດັ່ງນີ້ວ່າ "ພວກຂະນ້ອຍຈະຂໍຍ່າງທາງ

ໄປກັບພຣະຄຸນເຈົ້າທັງຫລາຍ" ພິກສຸທັງຫລາຍກ່າວວ່າ "ນ້ອງຍິງທັງຫລາຍ ການຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີບໍ່ສົມຄວນ ພວກທ່ານຈັກໄປກ່ອນ ຫລືພວກເຮົາຈັກໄປກ່ອນ" ພິກສຸນີທັງຫລາຍຕອບວ່າ "ພຣະຄຸນເຈົ້າທັງຫລາຍເປັນບຸຣຸສຜູ້ລ້ຳເລີສ ນິມົນຕ໌ລ່ວງຫນ້າໄປກ່ອນເຖີດ ຂນ້ອຍ" ຄັ້ງນັ້ນ ເມື່ອພິກສຸນີເຫລົ່ານັ້ນຍ່າງທາງໄປພາຍຫລັງ ພວກໂຈຣຈຶ່ງປຸ້ນແລະທຳຮ້າຍໃນ ຣະຫວ່າງທາງ ເທື່ອນັ້ນ ຄັນພິກສຸນີເຫລົ່ານັ້ນຍ່າງທາງເຖິງກຸງສາວັຕຖີຈຶ່ງບອກເຣື່ອງນັ້ນແກ່ ພິກ ສຸນີທັງຫລາຍ ພິກສຸນີເຫລົ່ານັ້ນຈຶ່ງບອກເຣື່ອງນັ້ນແກ່ພິກສຸທັງຫລາຍ ພິກສຸເຫລົ່ານັ້ນໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ຍ່າງທາງຮ່ວມກັນ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຫົນທາງທີ່ຈະເພິ່ງໄປດ້ວຍກອງກວຽນ ທີ່ຮູ້ກັນວ່າຫນ້າຫວາດຣະແວງ ມີພັຍຫນ້າຢ້ານ ເຮົາອນຸຍາຕໃຫ້ຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໑໗໔] ອີກຢ່າງນຶ່ງ ພິກສຸໃດຊັກຊວນກັນຍ່າງທາງໄກຮ່ວມກັນກັບພິກສຸນີ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌ ສມັຍໃນຂໍ້ນັ້ນ ຄືເປັນຫົນທາງທີ່ຈະເພິ່ງໄປດ້ວຍກອງກວຽນ ທີ່ຮູ້ກັນວ່າຫນ້າຫວາດຣະແວງ ມີພັຍຫນ້າຢ້ານ ນີ້ເປັນສມັຍໃນຂໍ້ນັ້ນ

ເຣື່ອງພິກສຸແລະນາງພິກສຸນີຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

[໑໗໕] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໔ ຝ່າຍ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ຊັກຊວນກັນ ຄື ຊັກຊວນກັນວ່າ ພວກເຮົາໄປກັນເຖີດ ນ້ອງຍິງ ພວກເຮົາໄປກັນເຖີດ

ພຣະຄຸນເຈົ້າ ໄປກັນເຖີດ ພຣະຄຸນເຈົ້າ ພວກເຮົາໄປກັນເຖີດ ນ້ອງຍິງ ພວກເຮົາຈະໄປວັນນີ້ ມື້ອື່ນນີ້ ຫລືວັນມະຣືນນີ້ ຕ້ອງອາບັຕິທຸກກຎ

ຄຳວ່າ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຄື ຫມູ່ບ້ານນຶ່ງກຳຫນົດຊົ່ວໄກ່ບິນຕົກ ຕ້ອງອາບັຕິປາຈິຕຕີຍ໌ທຸກໆບໍຣິເວນຫມູ່ບ້ານ ໃນປ່າທີ່ບໍ່ມີຫມູ່ບ້ານ ຕ້ອງອາບັຕິປາຈິຕຕີຍ໌ທຸກໆເຄິ່ງໂຍຊນ໌

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ຫົນທາງທີ່ຈະເພິ່ງໄປດ້ວຍກອງກວຽນ ຄື ບໍ່ສາມາດຈະໄປໄດ້ ເວັ້ນໄວ້ແຕ່ໄປດ້ວຍກອງກວຽນ

ທີ່ຊື່ວ່າ ຫນ້າຫວາດຣະແວງ ຄື ໃນຫົນທາງນັ້ນ ປາກົດທີ່ຢູ່ ປາກົດທີ່ກິນ ປາກົດທີ່ຢືນ ປາກົດທີ່ນັ່ງ ປາກົດທີ່ນອນຂອງພວກໂຈຣ

ທີ່ຊື່ວ່າ ມີພັຍຫນ້າຢ້ານ ຄື ໃນຫົນທາງນັ້ນ ປາກົດມີມນຸສ຺ຍ໌ຖືກພວກໂຈຣຂ້າ ປາກົດມີມນຸສ຺ຍ໌ຖືກປຸ້ນ ປາກົດມີມນຸສ຺ຍ໌ຖືກທຸບຕີ

ພິກສຸພາໄປຕລອດທາງທີ່ມີພັຍຫນ້າຢ້ານ ພໍເຫັນທີ່ປອດພັຍເພິ່ງສົ່ງພິກສຸນີທັງຫລາຍ ໄປດ້ວຍກ່າວວ່າ “ພວກທ່ານຈົ່ງໄປເຖີດ”

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໗໔] ຊັກຊວນກັນແລ້ວ ພິກສຸສຳຄັນວ່າຊັກຊວນກັນແລ້ວ ຍ່າງທາງໄກດ້ວຍກັນໂດຍທີ່ສຸດແມ່ນຊົ່ວຣະຍະຫມູ່ບ້ານນຶ່ງ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ຊັກຊວນກັນແລ້ວ ພິກສຸບໍ່ແນ່ໃຈ ຍ່າງທາງໄກດ້ວຍກັນໂດຍທີ່ສຸດແມ່ນຊົ່ວຣະຍະຫມູ່ບ້ານນຶ່ງ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ຊັກຊວນກັນແລ້ວ ພິກສຸສຳຄັນວ່າບໍ່ໄດ້ຊັກຊວນ ຍ່າງທາງໄກດ້ວຍກັນໂດຍທີ່ສຸດແມ່ນຊົ່ວຣະຍະຫມູ່ບ້ານນຶ່ງ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຎ

ພິກສຸຊັກຊວນ ພິກສຸນີບໍ່ໄດ້ຊັກຊວນ ຕ້ອງອາບັຕິທຸກກຎ

ບໍ່ໄດ້ຊັກຊວນ ພິກສຸສຳຄັນວ່າຊັກຊວນ ຕ້ອງອາບັຕິທຸກກຎ

ບໍ່ໄດ້ຊັກຊວນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ບໍ່ໄດ້ຊັກຊວນ ພິກສຸສຳຄັນວ່າບໍ່ໄດ້ຊັກຊວນ ບໍ່ຕ້ອງອາບັຕິ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໗໕] ໑. ພິກສຸແລະພິກສຸນີໄປໃນສມັຍທີ່ຊົງອນຸຍາຕ

໒. ພິກສຸແລະພິກສຸນີບໍ່ໄດ້ຊັກຊວນກັນໄປ

໓. ພິກສຸບໍ່ໄດ້ຊັກຊວນແຕ່ພິກສຸນີຊັກຊວນ

໔. ພິກສຸແລະພິກສຸນີໄປດ້ວຍກັນໂດຍບໍ່ໄດ້ນັດຫມາຍກັນ

໕. ພິກສຸແລະພິກສຸນີໄປໃນຄາວມີເຫຕຸຂັດຂ້ອງ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ສັງວິທານສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໓. ໂອວາທວັຄ ໗. ນາວາພິຣູຫນສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

໗. ນາວາພິຣູຫນສິກຂາບົທ

ວ່າດ້ວຍການໂດຍສານເຮືອລຳດຽວກັນ

ເຣື້ອງພຣະສັພພັຄຄີຍ໌

[໑໗໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຊັກຊວນພິກສຸນີທັງຫລາຍ ໂດຍສານເຮືອລຳດຽວກັນ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ພຣະສມນະເຊື້ອສາຍສາກຍບຸຕຣເຫລົ່ານີ້ຊັກຊວນພິກສຸນີທັງຫລາຍຫລິ້ນເຮືອລຳດຽວກັນ ເຫມືອນພວກເຮົາກັບພັຣຍາຫລິ້ນ

ເຮືອລຳດຽວກັນ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຊັກຊວນພິກສຸນີທັງຫລາຍໂດຍສາຣເຮືອລຳດຽວກັນລະ" ຄັນແລ້ວພິກສຸເຫລົ່ານັ້ນຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍຊາບວ່າ ພວກທ່ານຊັກຊວນພິກສຸນີທັງຫລາຍໂດຍສາຣເຮືອລຳດຽວກັນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສ ທັງຫລາຍ ຈັ່ງໃດພວກທ່ານຈຶ່ງຊັກຊວນພິກສຸນີທັງຫລາຍໂດຍສາຣເຮືອລຳດຽວກັນລະ ໂມຄບຸຣຸສ ທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດຊັກຊວນພິກສຸນີໂດຍສາຣເຮືອລຳດຽວກັນ ໄປທວນນ້ຳກໍຕາມ ໄປຕາມນ້ຳກໍຕາມ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພຣະສັພພັຄຄີຍ໌ ຈົບ

ເຣື່ອງພິກສຸແລະພິກສຸນີຫລາຍຮູບ

[໑໗໗] ສມັຍນັ້ນ ພວກພິກສຸແລະພວກພິກສຸນີຫລາຍຮູບຈະຍ່າງທາງໄກຈາກເມືອງສາເກຕໄປກຸງສາວັຕຖີ ຣະຫວ່າງທາງມີແມ່ນ້ຳທີ່ຕ້ອງຂ້າມ ຄັ້ງນັ້ນ ພິກສຸນີເຫລົ່ານັ້ນໄດ້ກ່າວກັບພິກສຸເຫລົ່ານັ້ນດັ່ງນີ້ວ່າ "ພວກຂະນ້ອຍຈະຂໍຂ້າມໄປພ້ອມກັບພຣະຄຸນເຈົ້າທັງຫລາຍ" ພິກສຸທັງຫລາຍກ່າວວ່າ "ນ້ອງຍິງທັງຫລາຍ ການຊັກຊວນພິກສຸນີໂດຍສາຣເຮືອລຳດຽວກັນບໍ່ສົມຄວຣ ພວກທ່ານຈັກຂ້າມໄປກ່ອນ ຫລືພວກເຮົາຈັກຂ້າມໄປກ່ອນ" ພິກສຸນີທັງຫລາຍຕອບວ່າ "ພຣະຄຸນເຈົ້າທັງຫລາຍເປັນບຸຣຸສຜູ້ລ້ຳເລີສ ນິມົນຕ໌ຂ້າມໄປກ່ອນເຖີດ ຂນ້ອຍ" ຄັ້ງນັ້ນ ເມື່ອພິກສຸນີເຫລົ່ານັ້ນຂ້າມໄປພາຍຫລັງ ພວກໂຈຣຈຶ່ງປຸ້ນແລະທຳຮ້າຍໃນຣະຫວ່າງທາງ ເທື່ອນັ້ນ ຄັນພິກສຸນີເຫລົ່ານັ້ນຍ່າງ

ທາງເຖິງກຸງສາວັຕຖີຈຶ່ງບອກເຣື້ອງນັ້ນແກ່ພິກສຸນີທັງຫລາຍ ພິກສຸນີເຫລົ່ານັ້ນຈຶ່ງບອກເຣື້ອງນັ້ນແກ່ພິກສຸທັງຫລາຍ ພິກສຸເຫລົ່ານັ້ນໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ໂດຍສາຣເຮືອລຳດຽວກັນຂ້າມຟາກ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ໃນກາຣຂ້າມຟາກ ເຮົາອນຸຍາຕໃຫ້ຊັກຊວນພິກສຸນີໂດຍສາຣເຮືອລຳດຽວກັນໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ສິກຂາບົທວິພັງຄ໌

ພຣະອນຸບັນຍັດ

[໑໗໗] ອີກຢ່າງນຶ່ງ ພິກສຸໃດຊັກຊວນພິກສຸນີໂດຍສາຣເຮືອລຳດຽວກັນ ໄປທວນນ້ຳກໍຕາມ ໄປຕາມນ້ຳກໍຕາມ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ຂ້າມຟາກ

ເຣື້ອງພິກສຸແລະພິກສຸນີຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

[໑໗໘] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ຄຳວ່າ ກັບ ຄື ຣວມກັນໂດຍຄວາມເປັນອັນດຽວກັນ

ຄຳວ່າ ຊັກຊວນກັນ ຄື ຊັກຊວນກັນວ່າ ໄປໂດຍສາຣເຮືອກັນເຖີດ ນ້ອງຍິງ ໄປໂດຍສາຣເຮືອກັນເຖີດ ພຣະຄຸນເຈົ້າ ໄປໂດຍສາຣເຮືອກັນເຖີດ ຂະນ້ອຍ ໄປໂດຍສາຣເຮືອກັນເຖີດ ພວກເຮົາຈະໄປໂດຍສາຣເຮືອກັນວັນນີ້ ມື້ອື່ນນີ້ ຫລືວັນມະຣືນນີ້ ຕ້ອງອາບັຕິທຸກກຕ

ເມື່ອພິກສຸນີໂດຍສາຣ ພິກສຸໂດຍສາຣ ຕ້ອງອາບັຕິປາຈິຕຕີຍ໌

ເມື່ອພິກສຸໂດຍສາຣ ພິກສຸນີໂດຍສາຣ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸແລະພິກສຸນີທັງສອງໂດຍສາຣ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໄປທວນນ້ຳ ຄື ແລ່ນທວນກະແສນ້ຳ

ຄຳວ່າ ໄປຕາມນ້ຳ ຄື ແລ່ນຕາມກະແສນ້ຳ
ຄຳວ່າ ເວັ້ນໄວ້ແຕ່ຂ້າມຟາກ ຄື ຍົກເວັ້ນແຕ່ຂ້າມຝັ່ງນ້ຳ
ໝູ່ບ້ານນຶ່ງກຳໜົດຊົ່ວໄກ່ບິນຕົກ ຕ້ອງອາບັຕິປາຈິຕຕີຍ໌ທຸກໆບໍຣິເວນໝູ່ບ້ານ ໃນປ່າທີ່ບໍ່ມີ ໝູ່ບ້ານ ຕ້ອງອາບັຕິປາຈິຕຕີຍ໌ທຸກໆເຄິ່ງເຄິ່ງໂຍຊນ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໗. ນາວາພິຣູຫນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໙໐] ຊັກຊວນກັນແລ້ວ ພິກສຸສຳຄັນວ່າຊັກຊວນກັນແລ້ວ ໂດຍສາຣເຮືອລຳດຽວກັນໄປທວນນ້ຳກໍຕາມ ໄປຕາມນ້ຳກໍຕາມ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ຂ້າມຟາກ ຊັກຊວນກັນແລ້ວ ພິກສຸບໍ່ແນ່ໃຈ ໂດຍສາຣເຮືອລຳດຽວກັນ ໄປທວນນ້ຳກໍຕາມ ໄປຕາມນ້ຳກໍຕາມ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ຂ້າມຟາກ ຊັກຊວນກັນແລ້ວ ພິກສຸສຳຄັນວ່າບໍ່ໄດ້ຊັກຊວນ ໂດຍສາຣເຮືອລຳດຽວກັນ ໄປທວນນ້ຳກໍຕາມ ໄປຕາມນ້ຳກໍຕາມ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ຂ້າມຟາກ

ຕິກທຸກກຕ

ພິກສຸຊັກຊວນ ພິກສຸນີບໍ່ໄດ້ຊັກຊວນ ຕ້ອງອາບັຕິທຸກກຕ
ບໍ່ໄດ້ຊັກຊວນ ພິກສຸສຳຄັນວ່າຊັກຊວນກັນແລ້ວ ຕ້ອງອາບັຕິທຸກກຕ
ບໍ່ໄດ້ຊັກຊວນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ບໍ່ໄດ້ຊັກຊວນ ພິກສຸສຳຄັນວ່າບໍ່ໄດ້ຊັກຊວນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໑໙໑] ໑. ພິກສຸແລະພິກສຸນີໂດຍສາຣເຮືອຂ້າມຟາກ
໒. ພິກສຸແລະພິກສຸນີບໍ່ໄດ້ຊັກຊວນກັນໂດຍສາຣເຮືອ
໓. ພິກສຸບໍ່ໄດ້ຊັກຊວນ ແຕ່ພິກສຸນີຊັກຊວນ
໔. ພິກສຸແລະພິກສຸນີໂດຍສາຣເຮືອໂດຍບໍ່ໄດ້ນັດໝາຍກັນ

໕. ພິກສຸແລະພິກສຸນີໄປໃນຄາວມີເຫຕຸຂັດຂ້ອງ
໖. ພິກສຸວິກົລຈິຕ
໗. ພິກສຸຕົ້ນບັນຍັດ

ນາວາພິຣູຫານສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໓. ໂອວາທວັຄ ໙. ປຣິປາຈິຕສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

໙. ປຣິປາຈິຕສິກຂາບົທ

ວ່າດ້ວຍການສັນບິນຫບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ

ເຣື້ອງພິກສຸນີຖຸລລນັນທາ

[໑໙໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພິກສຸນີຊື່ຖຸລລນັນທາເປັນຜູ້ໃກ້ຊິດຕະກູນຂອງຕະກູນນຶ່ງຮັບພັຕຕາຫາຣປະຈຳ ຄຫບໍດີນັ້ນນິມົນຕ໌ພິກສຸຜູ້ເປັນເຖຣະຫລາຍຮູບໄວ້ ຄັ້ງນັ້ນ ໃນເວລາເຊົ້າພິກສຸນີຊື່ຖຸລລນັນທາຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປເຖິງຕະກູນນັ້ນ ຄັນເຖິງແລ້ວໄດ້ກ່າວກັບຄຫບໍດີນັ້ນດັ່ງນີ້ວ່າ "ຄຫບໍດີ ເປັນຫຍັງທ່ານຈຶ່ງຕຽມຂອງຄ້ຽວຂອງສັນໄວ້ມາກມາຍ" ຄຫບໍດີຕອບວ່າ "ແມ່ເຈົ້າ ຜູ້ຂ້ານິມົນຕ໌ພຣະເຖຣະທັງຫລາຍໄວ້ ຂນ້ອຍ" ພິກສຸນີຊື່ຖຸລລນັນທາຖາມວ່າ "ຄຫບໍດີ ພຣະເຖຣະເຫລົ່ານັ້ນ ໃຜແດ່" ຄຫບໍດີຕອບວ່າ "ຄື ພຣະຄຸນເຈົ້າສາຣີບຸຕຣພຣະຄຸນເຈົ້າມຫາໂມຄຄັລລານະ ພຣະຄຸນເຈົ້າມຫາກັຈຈາຍນະ ພຣະຄຸນເຈົ້າມຫາໂກຕຖິຕະ ພຣະຄຸນເຈົ້າມຫາກັປປີນະ ພຣະຄຸນເຈົ້າມຫາຈຸນທະ ພຣະຄຸນເຈົ້າອນຸຣຸທທະ ພຣະຄຸນເຈົ້າເຣວຕະ ພຣະຄຸນເຈົ້າອຸບາລີ ພຣະຄຸນເຈົ້າອານົນທ໌ ພຣະຄຸນເຈົ້າຣາຫຸລ" ພິກສຸນີຖຸລລນັນທາຖາມວ່າ "ຄຫບໍດີ ເມື່ອມີພຣະເຖຣະຜູ້ໃຫຍ່ ເປັນຫຍັງທ່ານຈຶ່ງນິມົນຕ໌ພຣະຜູ້ນ້ອຍລະ" "ພຣະເຖຣະຜູ້ໃຫຍ່ຂອງທ່ານ ມີໃຜແດ່ ຂນ້ອຍ" "ພຣະຄຸນເຈົ້າເທວທັຕ ພຣະຄຸນເຈົ້າໂກກາລິກະ ພຣະຄຸນເຈົ້າກຕໂມຣກຕິສສກະ໑ ພຣະຄຸນເຈົ້າຂັນຫເທວີບຸຕຣ ພຣະຄຸນເຈົ້າສມຸທທທັຕ"

ເຊີງອັນຖະ :

໑ ວິນັຍປິດົກເຫລັ້ມ ໑ ເປັນ ກຕູໂນຣກຕິສສກະ (ວິ. ມຫາ. ໑/໔໐໙/໓໐໘)

ໃນຂະນະທີ່ພິກສຸນີຊື່ຖຸລລນັນທາກ່າວຄ້າງຢູ່ນີ້ ພໍດີກັບທີ່ພຣະເຖຣະເຫລົ່ານັ້ນເຂົ້າມາ ນາງກັບເວົ້າວ່າ "ຖືກແລ້ວ ຄຫບໍດີ ທ່ານນິມົນຕ໌ພຣະເຖຣະຜູ້ໃຫຍ່ທັງນັ້ນ" ຄຫບໍດີກ່າວວ່າ "ເມື່ອກີ້ນີ້ເອງ ທ່ານກ່າວວ່າ ພຣະຄຸນເຈົ້າທັງຫລາຍເປັນພຣະຜູ້ນ້ອຍ ແຕ່ດຽວນີ້ກັບກ່າວວ່າເປັນພຣະເຖຣະຜູ້ໃຫຍ່" ຈຶ່ງຂັບນາງອອກຈາກເຮືອນແລະງົດໃຫ້ພັຕຕາຫານທີ່ຖວາຍປະຈຳ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເທວທັຕຮູ້ຢູ່ຈຶ່ງສັນບິນຫຼບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມລະ" ຄັນພິກສຸເຫລົ່ານັ້ນຕຳໜິພຣະເທວທັຕໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະເທວທັຕວ່າ "ເທວທັຕ ຊາບວ່າ ທ່ານຮູ້ຢູ່ສັນບິນຫຼບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ ແມ່ນແທ້ບໍ" ພຣະເທວທັຕທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຮູ້ຢູ່ຈຶ່ງສັນບິນຫຼບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດຮູ້ຢູ່ ສັນບິນຫຼບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸນີຖຸລລນັນທາ ຈົບ

ເຣື້ອງພິກສຸຮູບນຶ່ງ

[໑໙໓] ສມັຍນັ້ນ ພິກສຸຮູບນຶ່ງບອຊຈາກກຸງຮາຊຄຶຫ໌ ໄດ້ຍ່າງທາງໄປຕະກູນຍາຕ ພວກຊາວບ້ານຖວາຍພັຕຕາຫາຣດ້ວຍຄວາມດີໃຈວ່າ ດົນໆພຣະຄຸນເຈົ້າຈຶ່ງມາ ພິກສຸນີຜູ້ໃກ້ຊິດຕະກູນຂອງຕະກູນນັ້ນໄດ້ກ່າວກັບພວກຊາວບ້ານດັ່ງນີ້ວ່າ "ທ່ານທັງຫລາຍຈົ່ງຖວາຍພັຕຕາຫາຣແກ່ພຣະຄຸນເຈົ້າ" ເທື່ອນັ້ນ ພິກສຸນັ້ນມີຄວາມຢຳເກງວ່າ ພຣະຜູ້ມີພຣະພາຄຊົງຫ້າມພິກສຸຜູ້ຮູ້ຢູ່ສັນບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ ຈຶ່ງບໍ່ຍອມຮັບປະເຄນ ບໍ່ສາມາດໄປທ່ຽວບິນທບາຕ ໄດ້ອົດອາຫາຣ ຄັນໄປອາຮາມຈຶ່ງບອກເຣື້ອງນັ້ນແກ່ພິກສຸທັງຫລາຍ ພິກສຸເຫລົ່ານັ້ນຈຶ່ງໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສັນບິນທບາຕທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເມື່ອຄຣືຫັສຖ໌ປາຣົພໄວ້ກ່ອນ ເຮົາອນຸຍາຕໃຫ້ພິກສຸຜູ້ຮູ້ຢູ່ ສັນບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໑໙໔] ອີກຢ່າງນຶ່ງ ພິກສຸໃດຮູ້ຢູ່ ສັນບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ພັຕຕາຫາຣທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ

ເຣື້ອງພິກສຸຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໑໙໕] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ຮູ້ເອງ ຜູ້ອື່ນບອກໃຫ້ພິກສຸນັ້ນຮູ້ ຫລືພິກສຸນີບອກ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ທີ່ຊື່ວ່າ ແນະນຳໃຫ້ຈັດຕຽມ ຄື ເຂົາບໍ່ປະສົງຄ໌ຈະຖວາຍ ຫລືບໍ່ປະສົງຄ໌ຈະກະທຳແຕ່ແຣກ ພິກສຸນີ

ກ່າວວ່າ "ພຣະຄຸນເຈົ້າເປັນນັກສວດ ພຣະຄຸນເຈົ້າເປັນພຫູສູຕ ພຣະຄຸນເຈົ້າເປັນຜູ້ຊຳນານພຣະສູຕຣ ພຣະຄຸນເຈົ້າເປັນຜູ້ຊົງວິນັຍ ພຣະຄຸນເຈົ້າເປັນທັມກຖຶກ ທ່ານທັງຫລາຍຈົ່ງຖວາຍແກ່ພຣະຄຸນເຈົ້າ ຈົ່ງທຳຖວາຍແກ່ພຣະຄຸນເຈົ້າ" ຢ່າງນີ້ຊື່ວ່າແນະນຳໃຫ້ຈັດຕຽມ

ທີ່ຊື່ວ່າ ບິນທບາຕ ໄດ້ແກ່ ໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ

ຄຳວ່າ ເວັ້ນໄວ້ແຕ່ພັຕຕາຫາຣທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ ຄື ຍົກເວັ້ນທີ່ຄຣືຫັສຖ໌ຣິເລີ້ມໄວ້

ທີ່ຊື່ວ່າ ຄຣືຫັສຖ໌ປາຣົພໄວ້ ຄື ເຂົາເປັນຍາຕ ເປັນຜູ້ປວາຣນາພິກສຸໄວ້ ຫລືຂອງເຂົາຈັດແຈງໄວ້ຕາມປົກຕິ

[໑໙໘] ພິກສຸຮັບປະເຄນດ້ວຍຕັ້ງໃຈວ່າຈະສັນ ຕ້ອງອາບັຕິທຸກກຕ ພິກສຸສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ ເວັ້ນໄວ້ແຕ່ພັຕຕາຫາຣທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ

ບົທພາຊນີຍ໌

ບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ ພິກສຸສຳຄັນວ່າພິກສຸນີແນະນຳໃຫ້ຈັດຕຽມ ສັນ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ພັຕຕາຫາຣທີ່ຄຣືຫັສຖ໌ປາຣົພໄວ້ກ່ອນບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ ພິກສຸບໍ່ແນ່ໃຈ ສັນ ຕ້ອງອາບັຕິທຸກກຕ ເວັ້ນໄວ້ແຕ່ພັຕຕາຫາຣທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ

ບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ ພິກສຸສຳຄັນວ່າບໍ່ໄດ້ແນະນຳໃຫ້ຈັດຕຽມສັນ ບໍ່ຕ້ອງອາບັຕິ

ພິກສຸສັນບິນທບາຕທີ່ພິກສຸນີຜູ້ອຸປສົມບົທໃນສົງຂ໌ຝ່າຍດຽວແນະນຳໃຫ້ຈັດຕຽມ ຕ້ອງອາບັຕິທຸກກຕ ເວັ້ນໄວ້ແຕ່ພັຕຕາຫາຣທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ

ບິນທບາຕທີ່ພິກສຸນີບໍ່ໄດ້ແນະນຳໃຫ້ຈັດຕຽມ ພິກສຸສຳຄັນວ່າພິກສຸນີແນະນຳໃຫ້ຈັດຕຽມ ສັນ ຕ້ອງອາບັຕິທຸກກຕ

ບິນທບາຕທີ່ພິກສຸນີບໍ່ໄດ້ແນະນຳໃຫ້ຈັດຕຽມ ພິກສຸບໍ່ແນ່ໃຈ ສັນ ຕ້ອງອາບັຕິທຸກກຕ

ບິນທບາຕທີ່ພິກສຸນີບໍ່ໄດ້ແນະນຳໃຫ້ຈັດຕຽມ ພິກສຸສຳຄັນວ່າບໍ່ໄດ້ແນະນຳໃຫ້ຈັດຕຽມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໑໙໗] ໑. ພິກສຸສັນບິນທບາຕທີ່ຄຣືຫັສຖ໌ປາຣົພໄວ້ກ່ອນ

໒. ພິກສຸສັນບິນຫຼບາຕທີ່ສິກຂມານາແນະນຳໃຫ້ຈັດຕຽມ
໓. ພິກສຸສັນບິນຫຼບາຕທີ່ສາມເນຣີແນະນຳໃຫ້ຈັດຕຽມ
໔. ພິກສຸສັນອາຫາຣທຸກຊນິດ ຍົກເວັ້ນໂພຊນະ ໕໑
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ປຣິປາຈິຕສິກຂາບົທທີ ໗ ຈົບ

ເຊີງອັນຖະ :
໑ ໂພຊນະ ໕ ຄື ເຂົ້າສຸກ ຂນົມສດ ເຂົ້າຕູ ປລາ ຊີ້ນ (ດູ ຂໍ້ ໒໓໗ ຫນ້າ ໓໗໗ ໃນເຫລັ້ມນີ້)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫຼ໌] ໓. ໂອວາທວັຄ ໑໐. ຣໂຫນິສັຊຊສິກຂາບົທ ນິທານວັຕຖຸ

໓. ໂອວາທວັຄ

໑໐. ຣໂຫນິສັຊຊສິກຂາບົທ
ວ່າດ້ວຍການນັ່ງໃນທີ່ລັບ

ເຣື້ອງພຣະອຸທາຍີ
[໑໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນຫຼິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອດີຕພັຣຍາຂອງທ່ານພຣະອຸທາຍີ ບວຊໃນສຳນັກພິກສຸນີທັງຫລາຍ ພິກສຸນີນັ້ນມາທີ່ສຳນັກທ່ານພຣະອຸທາຍີເປັນປະຈຳ ທ່ານພຣະອຸທາຍີກໍໄປສຳນັກຂອງພິກສຸນີນັ້ນເປັນປະຈຳ ສມັຍນັ້ນ ທ່ານພຣະອຸທາຍີນັ່ງໃນທີ່ລັບກັບພິກສຸນີນັ້ນສອງຕໍ່ສອງ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸທາຍີຈຶ່ງນັ່ງໃນທີ່ລັບກັບພິກສຸນີສອງຕໍ່ສອງລະ” ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະອຸທາຍີໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານນັ່ງໃນທີ່ລັບກັບພິກສຸນີສອງຕໍ່ສອງ ແມ່ນແທ້ບໍ" ທ່ານພຣະອຸທາຍີທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າ ຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງນັ່ງຢູ່ໃນທີ່ລັບກັບພິກສຸນີສອງຕໍ່ສອງລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໙໙] ກໍ ພິກສຸໃດນັ່ງໃນທີ່ລັບກັບພິກສຸນີສອງຕໍ່ສອງ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸທາຍີ ຈົບ

ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໒໐໐] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຊ໌ ໒ ຝ່າຍ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ສອງຕໍ່ສອງ ໄດ້ແກ່ ພິກສຸກັບພິກສຸນີ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາ ທີ່ລັບຫູ

ທີ່ຊື່ວ່າ ທີ່ລັບຕາ ຫມາຍເຖິງ ທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວ ຫລືງົກສີສະຂຶ້ນ ໃຜໆກໍບໍ່ສາມາດແລເຫັນໄດ້

ທີ່ຊື່ວ່າ ທີ່ລັບຫູ ຫມາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດຈະໄດ້ຍິນຖ້ອຍຄຳທີ່ເວົ້າກັນຕາມປົກຕິ

ຄຳວ່າ ນັ່ງ ຫມາຍຄວາມວ່າ ເມື່ອພິກສຸນີນັ່ງ ພິກສຸນັ່ງໃກ້ ຫລືນອນໃກ້ກັນ ຕ້ອງອາບັຕິປາຈິຕຕີຍ໌

[໔໐໑] ເມື່ອພິກສຸນັ່ງ ພິກສຸນີນັ່ງໃກ້ຫລືນອນໃກ້ ພິກສຸຕ້ອງອາບັຕິປາຈິຕຕີຍ໌ ພິກສຸແລະພິກສຸນີທັງສອງນັ່ງໃກ້ຫລືນອນໃກ້ກັນ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

ທີ່ລັບ ພິກສຸສຳຄັນວ່າເປັນທີ່ລັບ ນັ່ງສອງຕໍ່ສອງ ຕ້ອງອາບັຕິປາຈິຕຕີຍ໌

ທີ່ລັບ ພິກສຸບໍ່ແນ່ໃຈ ນັ່ງສອງຕໍ່ສອງ ຕ້ອງອາບັຕິປາຈິຕຕີຍ໌

ທີ່ລັບ ພິກສຸສຳຄັນວ່າບໍ່ແມ່ນທີ່ລັບ ນັ່ງສອງຕໍ່ສອງ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຕ

ບໍ່ແມ່ນທີ່ລັບ ພິກສຸສຳຄັນວ່າເປັນທີ່ລັບ ນັ່ງສອງຕໍ່ສອງ ຕ້ອງອາບັຕິທຸກກຕ

ບໍ່ແມ່ນທີ່ລັບ ພິກສຸບໍ່ແນ່ໃຈ ນັ່ງສອງຕໍ່ສອງ ຕ້ອງອາບັຕິທຸກກຕ

ບໍ່ແມ່ນທີ່ລັບ ພິກສຸສຳຄັນວ່າບໍ່ແມ່ນທີ່ລັບ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໐໔] ໑. ພິກສຸມີບຸຣຸສຮູ້ດຽງສາຢູ່ເປັນເພື່ອນ

໒. ພິກສຸຢືນ ບໍ່ໄດ້ນັ່ງ

໓. ພິກສຸບໍ່ໄດ້ມຸ່ງວ່າເປັນທີ່ລັບ

໔. ພິກສຸນັ່ງຄິດເຣື່ອງອື່ນ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ຣໂຫນີສັຊຊສິກຂາບົທທີ ໑໐ ຈົບ

ໂອວາທວັຄທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໓. ໂອວາທວັຄ **ຣວ**

ມສິກຂາບົທທີ່ມີໃນໂອວາສວັຄ

ຣວມສິກຂາບົທທີ່ມີໃນໂອວາທວັຄ

ໂອວາທວັຄມີ ໑໐ ສິກຂາບົທ ຄື

໑. ໂອວາທສິກຂາບົທ ວ່າດ້ວຍກາຣສັ່ງສອນພິກສຸນີ

໒. ອັຕຖັງຄຕສິກຂາບົທ ວ່າດ້ວຍກາຣສັ່ງສອນພິກສຸນີໃນເວລາທີ່ດວງອາທິຕຍ໌ອັສດົງແລ້ວ

໓. ພິກຂຸນູປັສສຍສິກຂາບົທ ວ່າດ້ວຍກາຣໄປສັ່ງສອນພິກສຸນີເຖິງທີ່ສຳນັກ

໔. ອາມິສສິກຂາບົທ ວ່າດ້ວຍກາຣສັ່ງສອນພິກສຸນີເພາະເຫັນແກ່ອາມິສ

໕. ຈີວອນທານສິກຂາບົທ ວ່າດ້ວຍກາຣຖວາຍຈີວອນ

໖. ຈີວອນສິພພນສິກຂາບົທ ວ່າດ້ວຍກາຣຍິບຈີວອນໃຫ້ພິກສຸນີ

໗. ສັງວິທານສິກຂາບົທ ວ່າດ້ວຍກາຣຊັກຊວນຍ່າງທາງຮ່ວມກັນ

໘. ນາວາພິຣູຫນສິກຂາບົທ ວ່າດ້ວຍກາຣໂດຍສາຣເຮືອລຳດຽວກັນ

໙. ປຣິປາຈິຕສິກຂາບົທ ວ່າດ້ວຍກາຣສັນບິນທບາຕທີ່ພິກສຸນີແນະນຳໃຫ້ຈັດຕຽມ

໑໐. ຣໂຫນິສັຊຊສິກຂາບົທ ວ່າດ້ວຍກາຣນັ່ງໃນທີ່ລັບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໑. ອາວສຖປິນທສິກຂາບົທ

ນິທານວັຕຖຸ

໔. ໂພຊນວັຄ

ໝວດວ່າດ້ວຍໂພຊນະ

໑. ອາວສຖປິນທສິກຂາບົທ໑

ວ່າດ້ວຍກາຣສັນພັຕຕາຫາຣໃນທີ່ພັກແຣມ

ເຣື້ອງພຣະສັພພັຄຄີຍ໌

[໒໐໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ

ຫຼືກເສດຖີ ເຂດກຸງສາວັດຖີ ຄັ້ງນັ້ນ ໃນທີ່ບໍ່ໄກກຸງສາວັດຖີ ມີສມາຄົມນຶ່ງຈັດຕັ້ງພັດຕາຫານໄວ້ໃນທີ່ພັກແຮມ ໃນເວລາເຊົ້າ ພວກພິກສຸສັພພັຄຄີຍ໌ຄອງອັນຕຣວາສກ ແລ້ວຖືບາຕຣແລະຈີວອນເຂົ້າໄປບິນຫຼບາຕໃນກຸງສາວັດຖີ ເມື່ອບໍ່ໄດ້ພັຕຕາຫານຈຶ່ງໄດ້ໄປຍັງທີ່ພັກແຮມ ພວກຊາວບ້ານຖວາຍພັຕຕາຫານດ້ວຍຄວາມດີໃຈວ່າ ດົນໆພຣະຄຸນເຈົ້າຈຶ່ງມາ ຄັ້ງນັ້ນ ແມ່ນໃນວັນທີ ໔ ພວກພິກສຸສັພພັຄຄີຍ໌ ຯລຯ ແມ່ນໃນວັນທີ ໓ ພວກພິກສຸສັພພັຄຄີຍ໌ຄອງອັນຕຣວາສກ ແລ້ວຖືບາຕຣແລະຈີວອນເຂົ້າໄປບິນຫຼບາຕໃນກຸງສາວັດຖີ ເມື່ອບໍ່ໄດ້ພັຕຕາຫານຈຶ່ງໄດ້ໄປຍັງທີ່ພັກແຮມ ແລ້ວສັນພັຕຕາຫານ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ປຶກສາກັນດັ່ງນີ້ວ່າ "ພວກເຮົາຈະກັບໄປອາຮາມເປັນຫຍັງກັນ ມື້ອື່ນນີ້ກໍຕ້ອງມາທີ່ນີ້ອີກ" ຈຶ່ງຢູ່ສັນພັຕຕາຫານໃນທີ່ພັກແຮມເປັນປະຈຳ ພວກເດັຽຣະຖີຍ໌ຈຶ່ງພາກັນຈາກໄປ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສູາກຍບຸຕຣຈຶ່ງຢູ່ສັນພັຕຕາຫານໃນທີ່ພັກແຮມເປັນປະຈຳລະ ພັຕຕາຫານໃນທີ່ພັກແຮມເຂົາ
ບໍ່ໄດ້ຈັດໄວ້ເພື່ອທ່ານເຫລົ່ານີ້ເທົ່ານັ້ນ ແຕ່ພັຕຕາຫານໃນທີ່ພັກແຮມເຂົາຈັດໄວ້ເພື່ອສາຫຼານບຸຊິນຕ່າງຫາກ"

ເຊີງອັນຖະ :

໑ ຄຳວ່າ "ອາວສຖ" ທ່ານອທິບາຍໄວ້ວ່າ "ອາຄນ຺ຕ຺ວາ ວສນ຺ຕິ ເອຕ຺ຖ ອາຄນ຺ຕຸກາຕີ ອາວສໂຖ ຄືສຖານທີ່ສຳລັບຄົນຈອນມາພັກອາສັຍ (ສາຣຕ຺ຖ. ຕີກາ ໓/໔໗໕/໓໒໙), ອາວສໂຖ ນາມ ກວາຕພຫຸໂຫ ອຸຈ຺ຈຕິ ທ່ານຫມາຍເອົາທີ່ພັກອາສັຍຕິດບານປະຕູ (ອີ. ພິກ຺ຂຸນີ. ໓/໑໐໑໐/໑໔໙), ອາວສຖນ຺ຕິ ກວາຕພທິຫວິຫາຣໍ ທີ່ພັກອາສັຍ ຄືທີ່ພັກອາສັຍຕິດບານປະຕູ (ກຽຂາ. ອ. ໓໗໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ໂພຊນວັຄ ໑. ອາວສຖປິນຫຼສິກຂາບົທ

ພວກພິກສຸໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຢູ່ສັນພັຕຕາຫານໃນທີ່ພັກແຮມເປັນປະຈຳລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົດ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫດຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຢູ່ສັນພັດຕາຫານໃນທີ່ພັກແຮມເປັນປະຈຳ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຄຄະບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຢູ່ສັນພັດຕາຫານໃນທີ່ພັກແຮມເປັນປະຈຳລະ ໂມຄຄະບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ພິກສຸສັນພັດຕາຫານໃນທີ່ພັກແຮມ໑ ໄດ້ມື້ດຽວ ຖ້າສັນເກີນກວ່ານັ້ນ ຕ້ອງອາບັດປາຈິດຕີຍ໌

ສິກຂາບົດນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພຣະສັພພັຄຄີຍ໌ ຈົບ

ເຣື່ອງພຣະສາຣີບຸດຣ

[໔໐໔] ສມັຍນັ້ນ ທ່ານພຣະສາຣີບຸດຣຍ່າງທາງໄປກຸງສາວັດຖີ ໃນແຄວ້ນໂກສົລເຂົ້າໄປຍັງທີ່ພັກແຮມແຫ່ງນຶ່ງ ພວກຊາວບ້ານຖວາຍພັດຕາຫານດ້ວຍຄວາມດີໃຈວ່າ ດົນໆພຣະຄຸນເຈົ້າຈຶ່ງມາ

ເຊີງອັນຖະ :

໑ ອາວສຖປິນຸທ ພັດຕາຫານໃນທີ່ພັກແຮມຄືອາຫານທີ່ທາຍົກຜູ້ຕ້ອງການບຸນຈັດໄວ້ໃນທີ່ພັກແຮມຊຶ່ງສ້າງໄວ້ມີຮົ້ວລ້ອມຮອບມີຫ້ອງຫລາຍຫ້ອງມີໜ້າມຸຂ ຕັ້ງຕຽງຕັ່ງໄວ້ສຳລັບຄົນຍ່າງທາງ ຄົນໄຂ້ ຍິງມີຄັນພ໌ ແລະບັພຊິດ (ວິ. ອ. ໒/໔໐໓/໓໔໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕີຍກັນທ໌] ໔. ໂພຊນວັຄ ໑. ອາວສຖປິນທສິກຂາບົດ

ສິກຂາບົດວິພັງຄ໌

ຄັນພຣະສາຣີບຸດຣສັນພັດຕາຫານເສັດແລ້ວ ເກີດເປັນໄຂ້ຢ່າງໜັກຈົນບໍ່ສາມາດຈະອອກໄປຈາກທີ່ພັກແຮມນັ້ນໄດ້ ຄັນໃນວັນທີ ໔ ພວກຊາວບ້ານໄດ້ຂາບຮຽນທ່ານພຣະສາຣີບຸດຣດັ່ງນີ້ວ່າ "ນິມົນຕ໌

ສັນເຖີດ ພຣະຄຸນເຈົ້າ" ຄັ້ງນັ້ນ ທ່ານພຣະສາຣີບຸຕຣມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການຢູ່ສັນພັຕຕາຫານໃນທີ່ພັກແຮມເປັນປະຈຳ" ຈຶ່ງບໍ່ຮັບ ຍອມອົດອາຫານ ຄັນທ່ານພຣະສາຣີບຸຕຣຢ່າງຫາງເຖິງກຸງສາວັຕຖີ ໄດ້ເລົ່າເຣື່ອງນັ້ນໃຫ້ພິກສຸທັງຫລາຍຊາບ ພິກສຸເຫລົ່ານັ້ນໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕພິກສຸເປັນໄຂ້ໃຫ້ສັນອາຫານໃນທີ່ພັກແຮມໄດ້
ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເປັນໄຂ້ພັກຢູ່ສັນພັຕຕາຫານໃນທີ່ພັກແຮມເປັນປະຈຳໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ
[໔໐໕] ພິກສຸບໍ່ເປັນໄຂ້ ເພິງຢູ່ສັນພັຕຕາຫານໃນທີ່ພັກແຮມໄດ້ມື້ດຽວ໑ ຖ້າສັນເກີນກວ່ານັ້ນຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສາຣີບຸຕຣ ຈົບ

ສິກຂາບົທວິພັງຄ໌
[໔໐໖] ທີ່ຊື່ວ່າ ພິກສຸບໍ່ເປັນໄຂ້ ຄື ພິກສຸທີ່ສາມາດຈະຫລີກອອກໄປຈາກທີ່ພັກແຮມນັ້ນໄດ້

ເຊີງອັນຖະ :
໑ ຄຳວ່າ "ມື້ດຽວ" ທ່ານອທິບາຍໄວ້ວ່າ "ເອໂກຕິ ເອກທິວສິໂກ ມື້ດຽວ ຄືພຽງວັນດຽວ (ກງຂາ. ອ. ໔໕໖)

ທີ່ຊື່ວ່າ ເປັນໄຂ້ ຄື ພິກສຸທີ່ບໍ່ສາມາດຈະຫລີກອອກໄປຈາກທີ່ພັກແຮມນັ້ນໄດ້
ທີ່ຊື່ວ່າ ພັຕຕາຫານໃນທີ່ພັກແຮມ ໄດ້ແກ່ ໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງທີ່ເຂົາຈັດໄວ້ທີ່ສາລາທີ່ມນຫຼປ ທີ່ເຫງົ້າໄມ້ ຫລືທີ່ກາງແຈ້ງ ຢ່າງພຽງພໍ ບໍ່ໄດ້ເຈາະຈົງຜູ້ໃດ
ພິກສຸບໍ່ເປັນໄຂ້ເພິງສັນໄດ້ມື້ດຽວ ຫາກຮັບປະເຄນເກີນກວ່ານັ້ນດ້ວຍຄິດວ່າ ຈະສັນ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໐໗] ບໍ່ເປັນໄຂ້ ພິກສຸສຳຄັນວ່າບໍ່ເປັນໄຂ້ ສັນພັຕຕາຫາຣໃນທີ່ພັກແຣມເກີນກວ່ານັ້ນ ຕ້ອງອາບັຕິປາຈິຕຕີຍ໌

ບໍ່ເປັນໄຂ້ ພິກສຸບໍ່ແນ່ໃຈ ສັນພັຕຕາຫາຣໃນທີ່ພັກແຣມເກີນກວ່ານັ້ນ ຕ້ອງອາບັຕິປາຈິຕຕີຍ໌

ບໍ່ເປັນໄຂ້ ພິກສຸສຳຄັນວ່າເປັນໄຂ້ ສັນພັຕຕາຫາຣໃນທີ່ພັກແຣມເກີນກວ່ານັ້ນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກຕ

ເປັນໄຂ້ ພິກສຸສຳຄັນວ່າບໍ່ເປັນໄຂ້ ສັນພັຕຕາຫາຣໃນທີ່ພັກແຣມເກີນກວ່ານັ້ນ ຕ້ອງອາບັຕິທຸກກຕ

ເປັນໄຂ້ ພິກສຸບໍ່ແນ່ໃຈ ສັນພັຕຕາຫາຣໃນທີ່ພັກແຣມເກີນກວ່ານັ້ນ ຕ້ອງອາບັຕິທຸກກຕ

ເປັນໄຂ້ ພິກສຸສຳຄັນວ່າເປັນໄຂ້ ສັນພັຕຕາຫາຣໃນທີ່ພັກແຣມເກີນກວ່ານັ້ນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຖ໌] ໔. ໂພຊນວັຄ ໑. ອາວສຖປິນທສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໐໘] ໑. ພິກສຸເປັນໄຂ້

໒. ພິກສຸບໍ່ເປັນໄຂ້ສັນມື້ດຽວ

໓. ພິກສຸຍ່າງທາງໄປຫລືມາແລ້ວແວະສັນ

໔. ພິກສຸທີ່ເຈົ້າຂອງທານນິມົນຕ໌ໃຫ້ສັນ

໕. ພິກສຸສັນພັຕຕາຫາຣທີ່ເຂົາຈັດໄວ້ຈຳເພາະ

໖. ພິກສຸສັນພັຕຕາຫາຣທີ່ເຂົາບໍ່ໄດ້ຈັດໄວ້ຢ່າງພຽງພໍ

໗. ພິກສຸສັນພັຕຕາຫາຣທຸກຊນິດຍົກເວັ້ນໂພຊນະ ໕

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ອາວສຖປິນຫຼູສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫຼ໌] ໔. ໂພຊນວັຄ ໔. ຄນໂພຊນສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໔. ຄນໂພຊນສິກຂາບົທ

ວ່າດ້ວຍການສັນຄນໂພຊນະ

ເຣື້ອງພຣະເທວທັຕ

[໔໐໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພຣະເທວທັຕພ້ອມກັບບໍຣິສັດເສື່ອມລາພສັກກາຣະ ຈຶ່ງພາກັນອອກປາກຂໍພັຕຕາຫາຣໃນຕະກູນທັງຫລາຍມາສັນ ພວກຊາວບ້ານພາກັນຕໍາຫນິ ປະນາມ ໂພນທະນາ ວ່າ "ຈັ່ງໃດພວກພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງທຽວອອກປາກຂໍພັຕຕາຫາຣໃນຕະກູນທັງຫລາຍມາສັນລະ ພັຕຕາຫາຣທີ່ດີໃຜຈະບໍ່ພໍໃຈ ພັຕຕາຫາຣແຊບໃຜຈະບໍ່ຊອບລະ" ພວກພິກສຸໄດ້ຍິນພວກຊາວບ້ານຕໍາຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະເທວທັຕພ້ອມກັບບໍຣິສັດຈຶ່ງທຽວອອກປາກຂໍພັຕຕາຫາຣໃນຕະກູນທັງຫລາຍມາສັນລະ" ຄັນພິກສຸເຫລົ່ານັ້ນຕໍາຫນິພຣະເທວທັຕໂດຍປະກາຣຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະເທວທັຕວ່າ "ເທວທັຕ ຊາບວ່າ ທ່ານພ້ອມກັບບໍຣິສັດທຽວອອກປາກຂໍພັຕຕາຫາຣໃນຕະກູນທັງຫລາຍມາສັນ ແມ່ນແທ້ບໍ" ພຣະເທວທັຕທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ໂມຂບຸຣຸສ ຈັ່ງໃດທ່ານພ້ອມກັບບໍຣິສັດຈຶ່ງທຽວອອກປາກຂໍພັຕຕາຫາຣ ໃນຕະກູນທັງຫລາຍມາສັນລະ ໂມຂບຸຣຸສ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່

ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນຄນໂພຊນະ໑

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະເທວທັຕ ຈົບ

ເຣື້ອງພິກສຸເປັນໄຂ້

[໔໑໐] ສມັຍນັ້ນ ພວກຊາວບ້ານນິມົນຕ໌ພວກພິກສຸເປັນໄຂ້ສັນພັຕຕາຫາຣ ພິກສຸເຫລົ່ານັ້ນມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມກາຣສັນຄນໂພຊນະ" ຈຶ່ງບໍ່ຮັບນິມົນຕ໌ ພິກສຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສັນຄນໂພຊນະໄດ້ໃນສມັຍທີ່ເປັນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເປັນໄຂ້ສັນຄນໂພຊນະໄດ້"

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸ ຕ້ອງອາບັຕິປາຈິຕຕີຍ໌ ເພາະສັນຄນໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸເປັນໄຂ້ ຈົບ

ເຊີງອັນຖະ :

໑ ກາຣສັນຄນໂພຊນະ ມີໄດ້ ໔ ກໍຣະນີ (໑) ທາຍົກນິມົນຕ໌ໄປສັນ (໔) ພິກສຸອອກປາກຂໍພັຕຕາຫາຣມາສັນ (ວິ. ປ. ກູ/໓໒໔/໔໓໑) ຄືທາຍົກນິມົນຕ໌ພິກສຸຕັ້ງແຕ່ ໔ ຮູບຂຶ້ນໄປພ້ອມກັນໄປສັນໂດຍອອກຊື່ອາຫາຣ ພິກສຸໄປພ້ອມກັນຮັບປະເຄນພ້ອມກັນ ສັນພ້ອມກັນ ແຕ່ຖືກາຣຮັບປະ

ເຄນພ້ອມກັນເປັນປະມານ ຖ້າຮັບປະເຄນແຍກກັນ ບໍ່ຕ້ອງອາບັຕິ ນີ້ຈັດເປັນຄນ຺ໂພຊນະໂດຍທາຍົກ ນິມົນຕ໌ ແລະອີກກໍຣນີນຶ່ງ ພິກສຸຕັ້ງແຕ່ ໔ ຮູບຂຶ້ນໄປ ຢືນຫລືນັ່ງຢູ່ດ້ວຍກັນເຫັນອຸບາສິກແລ້ວ ອອກປາກຂໍວ່າ ທ່ານຈົ່ງຖວາຍພັຕຕາຫາຣແກ່ອາຕມາທັງ ໔ ຮູບ ຫລືເຫັນຕ່າງຄາວກັນ ແລ້ວຕ່າງ ອອກປາກຂໍຮ່ວມກັນ ຫລືຕ່າງຄາວກັນວ່າ ທ່ານຈົ່ງຖວາຍພັຕຕາຫາຣແກ່ອາຕມາ ທ່ານຈົ່ງຖວາຍ ພັຕຕາຫາຣແກ່ອາຕມາ ແລ້ວຈະໄປພ້ອມກັນ ຫລືໄປແຍກກັນ ຈະຮັບປະເຄນພັຕຕາຫາຣແລ້ວສັນ ພ້ອມກັນ ຫລືແຍກກັນສັນກໍຕາມ ຕ້ອງອາບັຕິເພາະຖືກາຣຮັບປະເຄນພ້ອມກັນເປັນປະມານນີ້ ຈັດ ເປັນຄນ຺ໂພຊນະໂດຍກາຣ ອອກປາກຂໍ (ວິ. ອ. ໒/໒໑໗-໗/๓໔໓-໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຑ໌] ໔. ໂພຊນວັຄ ໒. ຄນ຺ໂພຊນສິກຂາບົທ

ພຣະອນຸບັນຍັດ

ຊົງອນຸຍາຕໃຫ້ສັນຄນ຺ໂພຊນະໄດ້ໃນສມັຍທີ່ຖວາຍຈີວອນ

[໒໑໑] ສມັຍນັ້ນ ພວກຊາວບ້ານກະກຽມພັຕຕາຫາຣພ້ອມຈີວອນໃນສມັຍທີ່ຈະຖວາຍຈີວອນ ແລ້ວ ນິມົນຕ໌ພິກສຸທັງຫລາຍດ້ວຍຕັ້ງໃຈວ່າ "ພວກເຮົານິມົນຕ໌ພິກສຸທັງຫລາຍສັນແລ້ວຈະໃຫ້ຄອງຈີ ວອນ" ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມກາຣສັນຄນ຺ໂພຊນະ" ບໍ່ ຮັບນິມົນຕ໌ ຈຶ່ງໄດ້ຈີວອນພຽງເລັກນ້ອຍ ພິກສຸທັງຫລາຍນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງ ຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນຄນ຺ໂພຊນະໄດ້ໃນສມັຍທີ່ຖວາຍຈີວອນ" ແລ້ວ ຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນຄນ຺ໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງຊົງອນຸຍາຕໃຫ້ສັນຄນ຺ໂພຊນະໄດ້ໃນສມັຍທີ່ທຳຈີວອນ

[໒໑໒] ສມັຍນັ້ນ ພວກຊາວບ້ານນິມົນຕ໌ພວກພິກສຸຜູ້ທຳຈີວອນສັນພັຕຕາຫາຣ ພິກສຸທັງຫລາຍມີ

ຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄເຈົ້າຊົງຫ້າມການສັນຄບໂພຊນະ" ຈຶ່ງບໍ່ຮັບນິມົນຕ໌ ພິກສຸທັງຫລາຍນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນຄບໂພຊນະໄດ້ໃນສມັຍທີ່ທຳຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຖ໌] ໔. ໂພຊນວັຄ ໘. ຄນໂພຊນສິກຂາບົທ ພຣະອນຸບັນຍັດ

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນຄບໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ສັນຄບໂພຊນະໄດ້ໃນສມັຍທີ່ຍ່າງທາງໄກ

[໔໑໓] ສມັຍນັ້ນ ພິກສຸທັງຫລາຍຍ່າງທາງໄກໄປກັບພວກຊາວບ້ານ ຄັ້ງນັ້ນ ພິກສຸເຫລົ່ານັ້ນໄດ້ກ່າວກັບພວກຊາວບ້ານເຫລົ່ານັ້ນດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດຖ້າຈັກບຶດ ພວກອາຕມາຈະໄປບິນທບາຕ" ພວກຊາວບ້ານໄດ້ກ່າວກັບພິກສຸເຫລົ່ານັ້ນຢ່າງນີ້ວ່າ "ພຣະຄຸນເຈົ້າທັງຫລາຍ ນິມົນຕ໌ພວກທ່ານສັນທີ່ນີ້ແຫລະ" ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການສັນຄບໂພຊນະ" ຈຶ່ງບໍ່ຮັບແລ້ວໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນຄບໂພຊນະໄດ້ໃນສມັຍທີ່ຍ່າງທາງໄກ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນຄບໂພຊນະນອກສມັຍ ສມັຍໃນຂໍ້ນັ້ນຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໘. ຄນໂພຊນສິກຂາບົທ ພຣະອນຸບັນຍັດ

ເຣື່ອງຊົງອນຸຍາຕໃຫ້ສັນຄນໂພຊນະໄດ້ໃນສມັຍທີ່ໂດຍສາຣເຮືອ

[໒໑໔] ສມັຍນັ້ນ ພິກສຸທັງຫລາຍໂດຍສາຣເຮືອໄປກັບພວກຊາວບ້ານຄັ້ງນັ້ນພິກສຸເຫລົ່ານັ້ນໄດ້ກ່າວກັບພວກຊາວບ້ານເຫລົ່ານັ້ນຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດນຳເຮືອເຂົ້າທຽບທີ່ຝັ່ງບຶດນຶ່ງ ພວກອາຕມາຈະໄປບິນທບາຕ" ພວກຊາວບ້ານເຫລົ່ານັ້ນຈຶ່ງກ່າວຢ່າງນີ້ວ່າ "ພຣະຄຸນເຈົ້າທັງຫລາຍ ນິມົນຕ໌ພວກທ່ານສັນທີ່ນີ້ແຫລະ" ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການສັນຄນໂພຊນະ" ຈຶ່ງບໍ່ຮັບ ແລ້ວໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນຄນໂພຊນະໄດ້ໃນສມັຍທີ່ໂດຍສາຣເຮືອ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນຄນໂພຊນະນອກສມັຍ ສມັຍໃນຂໍ້ນັ້ນຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ສມັຍທີ່ໂດຍສາຣເຮືອ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງຊົງອນຸຍາຕໃຫ້ສັນຄນໂພຊນະໄດ້ໃນມຫາສມັຍ

[໒໑໕] ສມັຍນັ້ນ ພິກສຸທັງຫລາຍໃນຖິ່ນຕ່າງໆອອກພັນສາແລ້ວ ໄດ້ຍ່າງທາງມາເຝົ້າພຣະຜູ້ມີພຣະພາຄທີ່ກຸງຣາຊຄຶຫ໌ ພວກຊາວບ້ານເຫັນພິກສຸທັງຫລາຍຜູ້ມາຈາກຕ່າງຖິ່ນ ຈຶ່ງນິມົນຕ໌ສັນພັຕຕາຫານ ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການສັນຄນໂພຊນະ" ຈຶ່ງບໍ່ຮັບນິມົນຕ໌ ແລ້ວໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ

ເຮົາອນຸຍາຕໃຫ້ສັນຄນໂພຊນະໄດ້ໃນມຫາສມັຍ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກ ຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະສັນຄນໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄືສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ສມັຍທີ່ໂດຍສາຣເຮືອ ມຫາສມັຍ ນີ້ ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ສັນຄນໂພຊນະໄດ້ໃນສມັຍທີ່ເປັນພັຕຕາຫາຣຂອງສມນະ

[໔໑໓] ສມັຍນັ້ນ ພຣະຍາຕຮ່ວມສາຍໂລຫິຕຂອງພຣະເຈົ້າພິມພິສາຣຈອມທັພມຄທຣັຖຊົງຜນວຊ ໃນສຳນັກຂອງອາຊີວກທັງຫລາຍ ຄັ້ງນັ້ນ ອາຊີວກນັ້ນໄດ້ເຂົ້າໄປເຝົ້າພຣະເຈົ້າພິມພິສາຣເຖິງ ພຣະຣາຊສຳນັກ ຄັນເຖິງແລ້ວໄດ້ຖວາຍພຣະພຣພຣະເຈົ້າພິມພິສາຣຈອມທັພມຄທຣັຖດັ່ງນີ້ວ່າ “ມຫາບພິຕຣ ອາຕມາປຣາຖນາຈະຈັດພັຕຕາຫາຣຖວາຍນັກບວຊຜູ້ເປັນເຈົ້າລັທທິທັງຫມົດ” ພຣະເຈົ້າພິມພິສາຣຈອມທັພມຄທຕຣັສວ່າ “ພຣະຄຸນເຈົ້າ ຖ້າທ່ານນິມົນຕ໌ພິກສຸສົງຂ໌ມີພຣະພຸທທ ເຈົ້າເປັນປຣະມຸຂໃຫ້ມາສັນກ່ອນ ໂຍມຈຶ່ງຈະຈັດຖວາຍ”

ຄັ້ງນັ້ນ ອາຊີວກນັ້ນສົ່ງທູຕໄປຫາພິກສຸທັງຫລາຍໃຫ້ອາຣາທນາວ່າ “ຂໍນິມົນຕ໌ພິກສຸທັງຫລາຍຮັບ ພັຕຕາຫາຣຂອງຂ້າພະເຈົ້າເພື່ອສັນໃນມື້ອື່ນນີ້” ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ “ພຣະຜູ້ມີ ພຣະພາຄຊົງຫ້າມກາຣສັນຄນໂພຊນະ” ຈຶ່ງບໍ່ຮັບນິມົນຕ໌ ຄັ້ງນັ້ນ ອາຊີວກນັ້ນຈຶ່ງເຂົ້າໄປເຝົ້າພຣະຜູ້ ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ສົນທນາປາສັຍກັບພຣະຜູ້ມີພຣະພາຄພໍເປັນທີ່ບັນເທີງ ໃຈ ພໍເປັນທີ່ຣະນຶກເຖິງກັນ ແລ້ວໄດ້ຢືນຢູ່ ນະ ທີ່ສົມຄວຣ ອາຊີວກຜູ້ຢືນຢູ່ ນະ ທີ່ສົມຄວຣນັ້ນ ໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ທ່ານພຣະໂຄດົມກໍເປັນບັພຊິຕ ຂ້າພະເຈົ້າກໍເປັນບັພຊິຕ ບັພຊິຕຄວຣຈະຮັບພັຕຕາຫາຣຂອງບັພຊິຕ ຂໍທ່ານພຣະໂຄດົມພ້ອມກັບພິກສຸສົງຂ໌ໂປຣດຮັບ ພັຕຕາຫາຣຂອງຂ້າພະເຈົ້າເພື່ອສັນໃນມື້ອື່ນນີ້ເຖີດ” ພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ໂດຍ ດຸສນີພາພ ຄັນອາຊີວກຊາບວ່າພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ແລ້ວ ຈຶ່ງຖວາຍອພິວາທແລ້ວຈາກ ໄປ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸ ທັງຫລາຍວ່າ “ພິກສຸທັງຫລາຍເຮົາອນຸຍາຕໃຫ້ສັນຄນໂພຊນະໄດ້ໃນສມັຍທີ່ເປັນພັຕຕາຫາຣຂອງ ສມນະ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໑໗] ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະສັນຄນບໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ສມັຍທີ່ຍ່າງທາງໄກ ສມັຍທີ່ໂດຍສາຣເຮືອ ມຫາສມັຍ ສມັຍທີ່ເປັນພັຕຕາຫາຣຂອງສມນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທວິພັງຄ໌

[໔໑໘] ທີ່ຊື່ວ່າ ສັນຄນບໂພຊນະ ຄື ພິກສຸ ໔ ຮູບທີ່ເຂົານິມົນຕ໌ດ້ວຍໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ ແລ້ວໄປສັນ ນີ້ຊື່ວ່າສັນຄນບໂພຊນະ໑

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ສມັຍທີ່ເປັນໄຂ້ ຄື ທີ່ສຸດແມ່ນຈົນເມື່ອຕີນແຕກ ພິກສຸຄິດວ່າ ເປັນສມັຍທີ່ເປັນໄຂ້ ເພິງສັນໄດ້

ທີ່ຊື່ວ່າ ສມັຍທີ່ຖວາຍຈີວອນ ຄື ເມື່ອຍັງບໍ່ໄດ້ກຣານກຖິນ ກຳຫນົດເອົາເດືອນສຸດທ້າຍແຫ່ງຣະດູຝົນ ເມື່ອກຣານກຖິນແລ້ວມີກຳຫນົດເວລາ ໕ ເດືອນ ພິກສຸຄິດວ່າ ເປັນສມັຍທີ່ຖວາຍຈີວອນ ເພິງສັນໄດ້

ເຊີງອັນຖະ :

໑ ຄນໂພຊນໍ ສັນຄນບໂພຊນະ ຄື ຄນສຸສ ໂພຊເນ ສັນໂພຊນະ(ອາຫາຣ)ຂອງຄນະ (ວິ. ອ. ໒/໔໑໗-໔໑໘/໓໔໓),

ຄເນນ ລທຸທຸຕຸຕາ ຄນສຸສ ສນຸຕເກ ໂພຊເນ ສັນໂພຊນະທີ່ເປັນຂອງຄນະຊຶ່ງຄນະໄດ້ມາ (ກັງຂາ. ຕີກາ ໔໐໔)

ທີ່ຊື່ວ່າ ສມັຍທີ່ທຳຈີວອນ ຄື ເມື່ອພິກສຸກຳລັງທຳຈີວອນ ພິກສຸຄິດວ່າ ເປັນສມັຍທີ່ທຳຈີວອນ ເພິງສັນໄດ້

ທີ່ຊື່ວ່າ ສມັຍທີ່ຍ່າງທາງໄກ ຄື ພິກສຸຄິດວ່າ ເຮົາຈະຍ່າງທາງເຄິ່ງໂຍຊນ໌ ເພິງສັນໄດ້ ເມື່ອພິກສຸນັ້ນໄປ ເພິງສັນໄດ້ ກັບມາເຖິງແລ້ວ ເພິງສັນໄດ້

ທີ່ຊື່ວ່າ ສມັຍທີ່ໂດຍສາຣເຮືອ ຄື ພິກສຸຄິດວ່າ ເຮົາຈະໂດຍສາຣເຮືອ ເພິງສັນໄດ້ ເມື່ອພິກສຸນັ້ນໂດຍສາຣໄປ ເພິງສັນໄດ້ ຂາກັບ ເພິງສັນໄດ້

ທີ່ຊື່ວ່າ ມຫາສມັຍ ຄື ຄາວມີພິກສຸ ໒-໓ ຮູບທ່ຽວບິນທບາຕພອລ້ຽງກັນ ເມື່ອມີພິກສຸຮູບທີ ໔

ມາຮອມດ້ວຍ ບໍ່ພໍລ້ຽງກັນ ພິກສຸຄິດວ່າ ເປັນມຫາສມັຍ ເພິງສັນໄດ້
ທີ່ຊື່ວ່າ ສມັຍທີ່ເປັນພັຕຕາຫາຣຂອງສມນ ຄື ໃນຄາວມີປຣິພາຊກຈັດພັຕຕາຫາຣຖວາຍ ພິກສຸຄິດວ່າ ເປັນສມັຍທີ່ເປັນພັຕຕາຫາຣຂອງສມນ ເພິງສັນໄດ້
ພິກສຸຮັບດ້ວຍຄິດວ່າ "ຈະສັນ" ນອກສມັຍ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໑໙] ຄນໂພຊນະ ພິກສຸສຳຄັນວ່າຄນໂພຊນະ ສັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌
ຄນໂພຊນະ ພິກສຸບໍ່ແນ່ໃຈ ສັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌
ຄນໂພຊນະ ພິກສຸສຳຄັນວ່າບໍ່ແມ່ນຄນໂພຊນະ ສັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຕ

ບໍ່ແມ່ນຄນໂພຊນະ ພິກສຸສຳຄັນວ່າຄນໂພຊນະ ສັນນອກສມັຍ ຕ້ອງອາບັຕິທຸກກຕ
ບໍ່ແມ່ນຄນໂພຊນະ ພິກສຸບໍ່ແນ່ໃຈ ສັນນອກສມັຍ ຕ້ອງອາບັຕິທຸກກຕ
ບໍ່ແມ່ນຄນໂພຊນະ ພິກສຸສຳຄັນວ່າບໍ່ແມ່ນຄນໂພຊນະ ສັນນອກສມັຍ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ໂພຊນວັຄ ໔. ຄນໂພຊນສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໒໐] ໑. ພິກສຸສັນໃນສມັຍ
໔. ພິກສຸ ໔-໓ ຮູບສັນຮ່ວມກັນ
໓. ພິກສຸຫລາຍຮູບທ່ຽວບິນທບາຕແລ້ວປະຊຸມສັນຮ່ວມກັນ
໔. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍເປັນນິຕຍ໌
໕. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍຕາມສລາກ
໖. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍໃນປັກສ໌

໗. ພິກສຸສັນພັດຕາຫານທີ່ເຂົາຖວາຍໃນວັນອຸໂບສົຖ
໘. ພິກສຸສັນພັດຕາຫານທີ່ເຂົາຖວາຍໃນວັນປາຕິບົທ໑
໙. ພິກສຸສັນພັດຕາຫານທຸກຊນິດ ຍົກເວັ້ນໂພຊນະ ໕
໑໐. ພິກສຸວິກົລຈິຕ
໑໑. ພິກສຸຕົ້ນບັນຍັດ

ຄນໂພຊນສິກຂາບົທທີ ໔ ຈົບ

ເຊີງອັນຖະ :

໑ ວັນປາຕິບົທ ຄືວັນແຮມ ໑ ຄ່ຳ ທາຍົກຄິດວ່າວັນອຸໂບສົຖມີຜູ້ສັດທາເຫລື້ອມໃສຖວາຍພັດຕາຫານກັນມາກ ສ່ວນວັນແຮມ ໑ ຄ່ຳ ພິກສຸທັງຫລາຍລຳບາກເຣື້ອງພັດຕາຫານ ທານທີ່ຖວາຍໃນວັນປາຕິບົທ ເປັນການຖວາຍພິກສາຫານທີ່ຫາໄດ້ຍາກ ອີກປະການນຶ່ງ ພິກສຸສົງຂ໌ລົງປາຕິໂມກຂ໌ແລ້ວວັນຮຸ່ງຂຶ້ນຈຶ່ງມີສີລບໍຣິສຸດທ໌ ການຖວາຍທານແກ່ທ່ານຍ່ອມມີຜລານິສົງສ໌ມາກ ການຖວາຍທານໃນວັນປາຕິບົທ ຄືຖວາຍຖັດຈາກວັນຂຶ້ນ ໑໕ ຄ່ຳ ໄປນຶ່ງວັນ (ວິ. ອ. ໓/໓໗໗-໓໗໘)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໓. ປຣັມປຣໂພຊນສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໓. ປຣັມປຣໂພຊນສິກຂາບົທ

ວ່າດ້ວຍການສັນປຣັມປຣໂພຊນະ

ເຣື້ອງຊາຍກັມກອນຜູ້ຍາກຈົນ

[໔໔໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພວກຊາວບ້ານຈັດລຳດັບວາຣະຖວາຍພັດຕາຫານຢ່າງປານີຕໄວ້ໃນ ກຸງເວສາລີ ຄັ້ງນັ້ນ ຊາຍກັມກອນຍາກຈົນຄົນນຶ່ງໄດ້ມີຄວາມຄິດດັ່ງນີ້ວ່າ ທານນີ້ບໍ່ແມ່ນເປັນຂອງຕ່ຳຕ້ອຍ໑ ເພາະພວກຊາວບ້ານເຫລົ່ານີ້ໄດ້ຊ່ອຍກັນຈັດພັດຕາຫານໂດຍເຄົາຣົພ ເອົາເຖີດ ແມ່ນຕົວເຮົາກໍເພິ່ງຈັດ

ພັຕຕາຫານດ້ວຍ ຄັ້ງນັ້ນ ຊາຍກັມກອນຜູ້ຍາກຈົນຄົນນັ້ນໄດ້ເຂົ້າໄປຫານາຍຈ້າງຊື່ກິຣປຕິກະເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບນາຍກິຣປຕິກະດັ່ງນີ້ວ່າ "ນາຍທ່ານ ຜູ້ຂ້າຕ້ອງການຈັດພັຕຕາຫານຖວາຍພິກສຸສົງຂ໌ຊຶ່ງມີພຣະພຸທທເຈົ້າເປັນປຣະມຸຂ ທ່ານກຣຸນາໃຫ້ຄ່າຈ້າງແກ່ຜູ້ຂ້າດ້ວຍ" ນາຍກິຣປຕິກະມີສັດທາເຫລື້ອມໃສຢູ່ແລ້ວຈຶ່ງໄດ້ໃຫ້ຄ່າຈ້າງແກ່ເຂົາຫລາຍກວ່າປົກຕິ ຄັ້ງນັ້ນ ຊາຍກັມກອນຜູ້ຍາກຈົນຄົນນັ້ນໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວນ ຊາຍກັມກອນຜູ້ຍາກຈົນຄົນນັ້ນນັ່ງ ນະທີ່ສົມຄວນແລ້ວໄດ້ຂາບອາຣາທນາພຣະຜູ້ມີພຣະພາຄດັ່ງນີ້ວ່າ "ຂໍພຣະຜູ້ມີພຣະພາຄພ້ອມກັບພິກສຸສົງຂ໌ໂປຣດຮັບພັຕຕາຫານຂອງຂ້າພຣະພຸທທເຈົ້າເພື່ອສັນໃນມື້ອື່ນນີ້ເຖີດ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສວ່າ "ອຸບາສົກ ພິກສຸສົງຂ໌ມີຈຳນວນຫລາຍ ທ່ານຈົ່ງຊາບ" ຊາຍກັມກອນຜູ້ຍາກຈົນຂາບທູລວ່າ "ພຣະອົງຄ໌ຜູ້ຈະເຣີນ ເຖິງພິກສຸສົງຂ໌ມີຈຳນວນຫລາຍ ກໍບໍ່ເປັນຫຍັງ ຂ້າພຣະພຸທທເຈົ້າຈັດຕຽມຜລພຸທຣາໄວ້ມາກມາຍ ນ້ຳພຸທຣາມີພຽງພໍ"

ເຊີງອັນຖະ :

໑ ອິກນັຍນຶ່ງ ສາສນານີ້ຫລືການຖວາຍທານພຣະສົງຂ໌ຊຶ່ງມີພຣະພຸທທເຈົ້າເປັນປຣະມຸຂນີ້ ບໍ່ແມ່ນເຣື້ອງຕ່ຳຕ້ອຍ ຄືບໍ່ແມ່ນ

ເຣື້ອງເລັກນ້ອຍຊື່ວຊາມ (ວິ. ອ. ໒/໒໒໑/໓໕໒)

ພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ໂດຍດຸສນີພາພ ຄັນຊາຍກັມກອນຜູ້ຍາກຈົນຊາບວ່າພຣະຜູ້ມີພຣະພາຄຊົງຮັບນິມົນຕ໌ແລ້ວຈຶ່ງລຸກຂຶ້ນຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄ ທຳປຣະທັກສິນ (ວຽນໄປທາງຂວາ)ແລ້ວຈາກໄປ

ພິກສຸທັງຫລາຍໄດ້ຊາບຂ່າວວ່າ ຊາຍກັມກອນຜູ້ຍາກຈົນນິມົນຕ໌ພິກສຸສົງຂ໌ມີພຣະພຸທທເຈົ້າເປັນປຣະມຸຂເພື່ອສັນພັຕຕາຫານໃນມື້ອື່ນນີ້ ນ້ຳພຸທຣາມີພຽງພໍ ພິກສຸເຫລົ່ານັ້ນໄດ້ທຽວບິນທບາຕແລ້ວສັນແຕ່ເຊົ້າໆເລີຍ ພວກຊາວບ້ານໄດ້ຊາບຂ່າວວ່າ ຊາຍກັມກອນຜູ້ຍາກຈົນນິມົນຕ໌ພິກສຸສົງຂ໌ມີພຣະພຸທທເຈົ້າເປັນປຣະມຸຂ ພວກຊາວບ້ານເຫລົ່ານັ້ນຈຶ່ງໄດ້ນຳຂາທນີຍໂພຊນີຍາຫານຈຳນວນຫລາຍໄປໃຫ້ຊາຍກັມກອນຜູ້ຍາກຈົນ ຄັ້ງນັ້ນແລ ຕລອດຣາຕຣີນັ້ນ ຊາຍກັມກອນຜູ້ຍາກຈົນໄດ້ຈັດຕຽມຂາທນີຍໂພຊນີຍາຫານຢ່າງປານີຕ ໃຫ້ຄົນໄປຂາບທູລພັຕຕກາລວ່າ "ໄດ້ເວລາແລ້ວ ພຣະພຸທທເຈົ້າຂ້າ ພັຕຕາຫານເສັດແລ້ວ ພຣະພຸທທເຈົ້າຂ້າ"

ຄັນເວລາເຊົ້າ ພຣະຜູ້ມີພຣະພາຄຊົງຄອງອັນຕຣວາສກ ຖືບາຕຣແລະຈີວອນສເດັຈໄປເຖິງທີ່ຢູ່ຂອງ

ຊາຍກັມກອນຜູ້ຍາກຈົນ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດຖວາຍພ້ອມພິກສຸສົງຂ໌ ເທື່ອນັ້ນ ຊາຍກັມກອນຜູ້ຍາກຈົນຖວາຍພັຕຕາຫາຣພິກສຸທັງຫລາຍທີ່ທໍ່ສົນ ພິກສຸທັງຫລາຍໄດ້ກ່າວຢ່າງນີ້ວ່າ "ອຸບາສົກ ຈົ່ງຖວາຍແຕ່ນ້ອຍເຖີດ ອຸບາສົກ ຈົ່ງຖວາຍແຕ່ນ້ອຍເຖີດ" ຊາຍກັມກອນຜູ້ຍາກຈົນກ່າວວ່າ "ພຣະຄຸນເຈົ້າທັງຫລາຍ ພວກພຣະຄຸນເຈົ້າຢ່າເຂົ້າໃຈວ່າຜູ້ນີ້ເປັນກັມກອນຍາກຈົນ ແລ້ວຮັບແຕ່ນ້ອຍໆເລີຍ ຜູ້ຂ້າໄດ້ຈັດຕຽມຂາທນີຍໂພຊນີຍາຫາຣໄວ້ຢ່າງ ພຽງພໍ ພຣະຄຸນເຈົ້າທັງຫລາຍໂປຣດຮັບໃຫ້ພໍແກ່ຄວາມຕ້ອງການເຖີດ" ພິກສຸທັງຫລາຍກ່າວວ່າ "ພວກອາຕມາສັນແຕ່ນ້ອຍ ບໍ່ແມ່ນເພາະເຫຕຸນັ້ນ ແຕ່ພວກອາຕມາໄດ້ທຽວບິນທບາຕສັນມາແຕ່ເຊົ້າແລ້ວຕ່າງຫາກ ດັ່ງນັ້ນ ພວກອາຕມາຈຶ່ງຂໍຮັບແຕ່ຫນ້ອຍໆ"

ລຳດັບນັ້ນ ຊາຍກັມກອນຜູ້ຍາກຈົນຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍທີ່ເຮົານິມົນຕ໌ໄວ້ແລ້ວ ຈຶ່ງໄດ້ໄປສັນໃນທີ່ອີກແຫ່ງອື່ນລະ ເຮົາບໍ່ສາມາດຈະຖວາຍໃຫ້ພໍແກ່ຄວາມຕ້ອງການຫລື"

ພິກສຸທັງຫລາຍໄດ້ຍິນຊາຍກັມກອນຜູ້ຍາກຈົນຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຮັບນິມົນຕ໌ໄວ້ທີ່ນຶ່ງແລ້ວຈຶ່ງໄປສັນໃນທີ່ອີກແຫ່ງນຶ່ງລະ" ຄັນພິກສຸທັງຫລາຍຕຳຫນິພິກສຸເຫລົ່ານັ້ນໂດຍປະການຕ່າງໆ ແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍ ຊາບວ່າ ພິກສຸທັງຫລາຍຮັບນິມົນຕ໌ໄວ້ທີ່ນຶ່ງ ແລ້ວໄປສັນອີກໃນທີ່ອີກແຫ່ງນຶ່ງ ແມ່ນແທ້ບໍ່" ພິກສຸເຫລົ່ານັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງຮັບນິມົນຕ໌ໄວ້ທີ່ນຶ່ງແລ້ວໄປສັນໃນທີ່ອີກແຫ່ງນຶ່ງລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະສັນປຣັມປຣໂພຊນະ໑

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງຊາຍກັມກອນຜູ້ຍາກຈນ ຈົບ

ເຣື້ອງພິກສຸເປັນໄຂ້

[໔໔໔] ສມັຍນັ້ນ ພິກສຸຮູບນຶ່ງເປັນໄຂ້ ພິກສຸອີກຮູບນຶ່ງນຳບິນທບາຕໄປເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບພິກສຸຮູບທີ່ເປັນໄຂ້ນັ້ນດັ່ງນີ້ວ່າ "ນິມົນຕ໌ທ່ານສັນເຖີດ ຂນ້ອຍ" ພິກສຸເປັນໄຂ້ຕອບວ່າ "ບໍ່ລ່ະຂນ້ອຍ ຜູ້ຂ້າມີພັຕຕາຫາຣທີ່ຫວັງວ່າຈະໄດ້"

ເຊີງອັນຖະ :

໑ ສັນປຣັມປຣໂພຊນະ ຄືພິກສຸຮັບນິມົນຕ໌ສັນພັຕຕາຫາຣຂອງທາຍົກຣາຍນຶ່ງແລ້ວ ໄປສັນພັຕຕາຫາຣຂອງທາຍົກຄົນອື່ນກ່ອນແລ້ວກັບມາສັນຂອງຄົນທຳອິດພາຍຫລັງ ໂດຍບໍ່ໄດ້ຍົກເລີກນິມົນຕ໌ຜູ້ທຳອິດໃຫ້ພິກສຸຮູບອື່ນ (ກງຂາ. ອ. ໔໕໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໔. ໂພຊນວັຄ ໓. ປຣັມປຣໂພຊນສິກຂາບົທ

ພຣະອນຸບັນຍັດ

ທາຍົກນຳບິນທບາຕມາຖວາຍພິກສຸເປັນໄຂ້ຮູບນັ້ນ ໃນເວລາສວາຍ ພິກສຸເປັນໄຂ້ຮູບນັ້ນສັນບໍ່ໄດ້ຕາມທີ່ຄິດໄວ້ ພິກສຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ສັນປຣັມປຣໂພຊນະໄດ້ໃນສມັຍທີ່ເປັນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເປັນໄຂ້ສັນປຣັມປຣໂພຊນະໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະສັນປຣັມປຣໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸເປັນໄຂ້ ຈົບ

ຊົງອນຸຍາຕໃຫ້ສັນປຣັມປຣໂພຊນະໄດ້ໃນສມັຍທີ່ຖວາຍຈີວອນ

[໔໘໓] ສມັຍນັ້ນ ພວກຊາວບ້ານກະກຽມພັຕຕາຫາຣພ້ອມຈີວອນໃນສມັຍທີ່ຈະຖວາຍຈີວອນ ແລ້ວນິມົນຕ໌ພິກສຸທັງຫລາຍດ້ວຍຕັ້ງໃຈວ່າ ພວກເຮົານິມົນຕ໌ພິກສຸທັງຫລາຍສັນແລ້ວຈະໃຫ້ຄອງຈີວອນ ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການສັນປຣັມປຣໂພຊນະ" ບໍ່ຮັບນິມົນຕ໌ ຈຶ່ງໄດ້ຈີວອນພຽງເລັກນ້ອຍ ພິກສຸທັງຫລາຍນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນປຣັມປຣໂພຊນະໄດ້ໃນສມັຍທີ່ຖວາຍຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໓. ປຣັມປຣໂພຊນສິກຂາບົທ ພຣະອນຸບັນຍັດ

ພຣະອນຸບັນຍັດ

ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະສັນປຣັມປຣໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງຊົງອນຸຍາຕໃຫ້ສັນປຣັມປຣໂພຊນະໄດ້ໃນສມັຍທີ່ທຳຈີວອນ

[໔໘໔] ສມັຍນັ້ນ ພວກຊາວບ້ານນິມົນຕ໌ພວກພິກສຸຜູ້ທຳຈີວອນສັນພັຕຕາຫາຣ ພິກສຸທັງຫລາຍມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການສັນປຣັມປຣໂພຊນະ" ຈຶ່ງບໍ່ຮັບນິມົນຕ໌ ພິກສຸທັງຫລາຍນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນປຣັມປຣໂພຊນະໄດ້ໃນສມັຍທີ່ທຳຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໘໕] ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະສັນປຣັມປຣໂພຊນະນອກສມັຍ ສມັຍໃນຂໍ້ນັ້ນ ຄື ສມັຍທີ່ເປັນໄຂ້ ສມັຍທີ່ຖວາຍຈີວອນ ສມັຍທີ່ທຳຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງວິກັປອາຫາຣທີ່ຫວັງວ່າຈະໄດ້

[໔໔໙] ຄັ້ງນັ້ນ ໃນເວລາເຊົ້າ ພຣະຜູ້ມີພຣະພາຄຊົງຄອງອັນຕຣວາສກຖືບາຕຣແລະຈີວອນ ມີທ່ານພຣະອານົນທ໌ເປັນປັຈສາສມນະສເດັຈເຂົ້າໄປຕະກູນນຶ່ງ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ພວກຊາວບ້ານໄດ້ຖວາຍໂພຊນາຫາຣແດ່ພຣະຜູ້ມີພຣະພາຄແລະທ່ານພຣະອານົນທ໌ ທ່ານພຣະອານົນທ໌ມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປະເຄນ ພຣະຜູ້ມີພຣະພາຄຮັບສັ່ງວ່າ "ຮັບເຖີດ ອານົນທ໌" ທ່ານພຣະອານົນທ໌ຂາບທູລວ່າ "ຢ່າເລີຍ ພຣະພຸທທເຈົ້າຂ້າ ຂ້າພຣະພຸທທເຈົ້າມີ

ພັຕຕາຫາຣທີ່ຫວັງວ່າຈະໄດ້" ພຣະຜູ້ມີພຣະພາຄຮັບສັ່ງວ່າ "ອານົນທ໌ ຖ້າເຊັ່ນນັ້ນ ທ່ານຈົ່ງວິກັປໄວ້ແລ້ວຮັບ"໑

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ວິກັປພັຕຕາຫາຣທີ່ຫວັງວ່າຈະໄດ້ແລ້ວສັນ ປຣັມປຣໂພຊນະ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍວິກັປພັຕຕາຫາຣທີ່ຫວັງວ່າຈະໄດ້ ຢ່າງນີ້

ຄຳວິກັປອາຫາຣ

ຜູ້ຂ້າຖວາຍພັຕຕາຫາຣທີ່ຜູ້ຂ້າຫວັງວ່າຈະໄດ້ແກ່ພິກສຸຊື່ນີ້໔

ເຣື້ອງວິກັປອາຫາຣທີ່ຫວັງວ່າຈະໄດ້ ຈົບ

ສິກຂາບົທວິພັງຄ໌

[໔໔໗] ທີ່ຊື່ວ່າ ປຣັມປຣໂພຊນະ ຄື ພິກສຸທີ່ທາຍົກນິມົນຕ໌ດ້ວຍໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງໄວ້ ງົດເວັ້ນໂພຊນະນັ້ນ ໄປສັນໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ ອື່ນຈາກທີ່ຕົນຮັບນິມົນຕ໌ໄວ້ ຢ່າງນີ້ຊື່ວ່າປຣັມປຣໂພຊນະ

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ສມັຍທີ່ເປັນໄຂ້ ຄື ນັ່ງ ນະ ອາສນະແຫ່ງດຽວ ບໍ່ອາຈຈະສັນໃຫ້ພໍແກ່ຄວາມຕ້ອງການໄດ້ ພິກສຸຄິດວ່າ ເປັນສມັຍທີ່ເປັນໄຂ້ ເພິ່ງສັນໄດ້

ທີ່ຊື່ວ່າ ສມັຍທີ່ຖວາຍຈີວອນ ຄື ເມື່ອຍັງບໍ່ໄດ້ກຣານກຖິນ ກຳຫນົດເອົາເດືອນສຸດທ້າຍແຫ່ງຣະດູຝົນ ເມື່ອກຣານກຖິນແລ້ວ ມີກຳຫນົດເວລາ ໕ ເດືອນ ພິກສຸຄິດວ່າ ເປັນສມັຍທີ່ຖວາຍຈີວອນ ເພິ່ງສັນໄດ້

ເຊີງອັນຖະ :

໑ ວິກັປພັຕຕາຫາຣ ຄືອາພັຕຕາຫາຣທີ່ຮັບນິມົນຕ໌ໄວ້ກ່ອນໃຫ້ພິກສຸຮູບອື່ນ

໒ ໃນຄັມພີຣ໌ບໍຣິວາຣແລະຄັມພີຣ໌ດີການັບການວິກັປພັຕຕາຫາຣເປັນພຣະອນຸບັນຍັດ (ວິ. ປ. ໗/ ໗໕/໓໔, ສາຣຕຖ. ຕີກາ ໓/໒໒໕/໗໐, ວິມຕິ. ຕີກາ ໒/໒໒໑/໓໗, ກງຂາ. ຕີກາ ໔໐໔)

ທີ່ຊື່ວ່າ ສມັຍທີ່ທຳຈີວອນ ຄື ເມື່ອພິກສຸກຳລັງທຳຈີວອນ ພິກສຸຄິດວ່າ ເປັນສມັຍທີ່ທຳຈີວອນ ເພີງສັນໄດ້

ພິກສຸຮັບດ້ວຍຄິດວ່າ "ຈະສັນ" ນອກສມັຍ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆ ຄຳກືນ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໒໒໗] ປຣັມປຣໂພຊນະ ພິກສຸສຳຄັນວ່າປຣັມປຣໂພຊນະ ສັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ປຣັມປຣໂພຊນະ ພິກສຸບໍ່ແນ່ໃຈ ສັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ປຣັມປຣໂພຊນະ ພິກສຸສຳຄັນວ່າບໍ່ແມ່ນປຣັມປຣໂພຊນະ ສັນນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຕ

ບໍ່ແມ່ນປຣັມປຣໂພຊນະ ພິກສຸສຳຄັນວ່າປຣັມປຣໂພຊນະ ຕ້ອງອາບັຕິທຸກກຕ

ບໍ່ແມ່ນປຣັມປຣໂພຊນະ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນປຣັມປຣໂພຊນະ ພິກສຸສຳຄັນວ່າບໍ່ແມ່ນປຣັມປຣໂພຊນະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໒໘] ໑. ພິກສຸສັນໃນສມັຍ

໒. ພິກສຸວິກັປແລ້ວສັນ

໓. ພິກສຸສັນບິນຫບາຕທີ່ຮັບນິມົນຕ໌ໄວ້ ໒-໓ ບ່ອນຮວມກັນ

໔. ພິກສຸສັນຕາມລຳດັບທີ່ຮັບນິມົນຕ໌

໕. ພິກສຸທີ່ຊາວຕາແສງທັງຫມົດນິມົນຕ໌ແລ້ວສັນໃນທີ່ແຫ່ງນຶ່ງໃນຕາແສງນັ້ນ

໓. ພິກສຸທີ່ສມາຄົມທັງຫມົດນິມົນຕ໌ແລ້ວສັນໃນທີ່ແຫ່ງນຶ່ງໃນສມາຄົມນັ້ນ
໗. ພິກສຸຮັບນິມົນຕ໌ແຕ່ບອກວ່າຈະຮັບພິກສາ
໘. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍເປັນນິຕຍ໌
໙. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍຕາມສລາກ
໑໐. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍໃນປັກສ໌
໑໑. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍໃນວັນອຸໂບສົຖ
໑໒. ພິກສຸສັນພັຕຕາຫາຣທີ່ເຂົາຖວາຍໃນວັນປາຕິບົທ
໑໓. ພິກສຸສັນອາຫາຣທຸກຊນິດຍົກເວັ້ນໂພຊນະ ໕
໑໔. ພິກສຸວິກົລຈິຕ
໑໕. ພິກສຸຕົ້ນບັນຍັດ

ປຣັມປຣໂພຊນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໔. ໂພຊນວັຄ ໔. ກາณມາຕຸສິກຂາບົທ ນິທານ ວັຕຖຸ

໔. ໂພຊນວັຄ

໔. ກາณມາຕຸສິກຂາບົທ

ວ່າດ້ວຍມາຣດາຂອງນາງກາณາ

ເຣື້ອງອຸບາສິກາມາຣດາຂອງນາງກາณາ

[໒໓໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ณະ ພຣະເຊຕວັນ ອາຣາມຂອງອນາຖບິณฑິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ອຸບາສິກາມາຣດາຂອງນາງກາณາ ເປັນຜູ້ມີສັດທາເຫລື້ອມໃສ ນາງໄດ້ຍົກທິດາຊື່ກາณາໃຫ້ຊາຍຫນຸ່ມຜູ້ນຶ່ງໃນຫມູ່ບ້ານແຫ່ງນຶ່ງ ຕໍ່ມາ ນາງກາณາໄດ້ມາບ້ານມາຣດາດ້ວຍກໍຣນີຍກິຈບາງຢ່າງ ຝ່າຍສາມີຂອງນາງກາณາສົ່ງຂ່າວມາເຖິງນາງກາณາວ່າ "ຈົ່ງກັບມາເຖີດ ກາณາ ຂ້ອຍຕ້ອງກາຣໃຫ້ກາณາກັບ" ຄັ້ງນັ້ນ ມາຣດາຂອງນາງກາณາຄິດວ່າ "ກາຣທີ່ກາณາກັບໄປມືເປົ່າ ເບິ່ງຄືບໍ່ງາມ" ຈຶ່ງຈືນຂນົມໃຫ້ ເມື່ອຂນົມສຸກ ພິກສຸຜູ້ຖືທງວບິณฑບາຕເປັນວັຕຣຮູບນຶ່ງເຂົ້າ

ມາເຖິງບ້ານມາຣດາຂອງນາງກາ<u>ນ</u>າ ມາຣດາຂອງນາງກາ<u>ນ</u>າຈຶ່ງສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນ <u>ພິ</u>ກສຸຮູບນັ້ນໄດ້ອອກໄປບອກ<u>ພິ</u>ກສຸຮູບອື່ນ ມາຣດາຂອງນາງກາ<u>ນ</u>າກໍສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນ <u>ພິ</u>ກສຸຮູບນັ້ນໄດ້ອອກໄປບອກ<u>ພິ</u>ກສຸຮູບອື່ນ ມາຣດາຂອງນາງກາ<u>ນ</u>າກໍສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນອີກ ຈົນເມື່ອຂນົມທີ່ຕຽມໄວ້ຫມົດສິ້ນໄປ

ແມ່ນຄັ້ງທີ ໔ ສາມີຂອງນາງກາ<u>ນ</u>າກໍໄດ້ສົ່ງຂ່າວມາເຖິງນາງກາ<u>ນ</u>າວ່າ “ຈົ່ງກັບມາເຖີດກາ<u>ນ</u>າ ຂ້ອຍຕ້ອງການໃຫ້ກາ<u>ນ</u>າກັບ”

ແມ່ນຄັ້ງທີ ໔ ມາຣດາຂອງນາງກາ<u>ນ</u>າຄິດວ່າ “ການທີ່ກາ<u>ນ</u>າກັບໄປມືເປົ່າ ເບິ່ງຄືບໍ່ງາມປານໃດ ຈຶ່ງຈີນຂນົມໃຫ້ ເມື່ອຂນົມສຸກ <u>ພິ</u>ກສຸຜູ້ຖືທຸງວບິ<u>ນ</u>ທຸບາຕເປັນວັຕຣຮູບນຶ່ງເຂົ້າມາເຖິງບ້ານມາຣດາຂອງນາງກາ<u>ນ</u>າ ມາຣດາຂອງນາງກາ<u>ນ</u>າຈຶ່ງສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນ <u>ພິ</u>ກສຸຮູບນັ້ນໄດ້ອອກໄປບອກ<u>ພິ</u>ກສຸຮູບອື່ນ ມາຣດາຂອງນາງກາ<u>ນ</u>າກໍສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນ <u>ພິ</u>ກສຸຮູບນັ້ນໄດ້ອອກໄປບອກ<u>ພິ</u>ກສຸຮູບອື່ນ ມາຣດາຂອງນາງກາ<u>ນ</u>າກໍສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນອີກ ຈົນເມື່ອຂນົມທີ່ຕຽມໄວ້ຫມົດສິ້ນໄປ ແມ່ນຄັ້ງທີ ໖ ສາມີຂອງນາງກາ<u>ນ</u>າກໍໄດ້ສົ່ງຂ່າວມາເຖິງນາງກາ<u>ນ</u>າວ່າ “ຈົ່ງກັບມາເຖີດກາ<u>ນ</u>າ ຂ້ອຍຕ້ອງການໃຫ້ກາ<u>ນ</u>າກັບ ຫາກກາ<u>ນ</u>າບໍ່ກັບ ຂ້ອຍຈະພາຍິງອື່ນມາເປັນ<u>ພັ</u>ຣຍາ”

ແມ່ນຄັ້ງທີ ໖ ມາຣດາຂອງນາງກາ<u>ນ</u>າຄິດວ່າ “ການທີ່ກາ<u>ນ</u>າກັບໄປມືເປົ່າ ເບິ່ງຄືບໍ່ງາມ” ຈຶ່ງຈີນຂນົມໃຫ້ ເມື່ອຂນົມສຸກ <u>ພິ</u>ກສຸຜູ້ຖືທຸງວບິ<u>ນ</u>ທຸບາຕເປັນວັຕຣຮູບນຶ່ງເຂົ້າມາເຖິງບ້ານມາຣດາຂອງນາງກາ<u>ນ</u>າ ມາຣດາຂອງນາງກາ<u>ນ</u>າຈຶ່ງສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນ <u>ພິ</u>ກສຸຮູບນັ້ນໄດ້ອອກໄປບອກ<u>ພິ</u>ກສຸຮູບອື່ນ ມາຣດາຂອງນາງກາ<u>ນ</u>າກໍສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນ <u>ພິ</u>ກສຸຮູບນັ້ນໄດ້ອອກໄປບອກ<u>ພິ</u>ກສຸຮູບອື່ນ ມາຣດາຂອງນາງກາ<u>ນ</u>າກໍສັ່ງໃຫ້ຖວາຍຂນົມແກ່<u>ພິ</u>ກສຸຮູບນັ້ນອີກ ຈົນເມື່ອຂນົມທີ່ຕຽມໄວ້ຫມົດສິ້ນໄປ

ຄັ້ງນັ້ນ ສາມີຂອງນາງກາ<u>ນ</u>າໄດ້ພາຍິງອື່ນມາເປັນ<u>ພັ</u>ຣຍາ ນາງກາ<u>ນ</u>າໄດ້ຊາບຂ່າວວ່າສາມີຂອງຕົນໄດ້ພາຍິງອື່ນມາເປັນ<u>ພັ</u>ຣຍາ ຈຶ່ງໄດ້ຢືນຮ້ອງໄຫ້ ຄັ້ງນັ້ນ ໃນເວລາເຊົ້າ ພຣະຜູ້ມີພຣະ<u>ພ</u>າຄຊົງຄອງອັນຕຣວາສກຖືບາຕຣແລະຈີວອນສເດັຈໄປເຖິງບ້ານຂອງອຸບາສິກາມາຣດາຂອງນາງກາ<u>ນ</u>າ ຄັນເຖິງແລ້ວໄດ້ປະທັບນັ່ງເທິງອາສນະທີ່ເຂົາຈັດຖວາຍ ລຳດັບນັ້ນ ມາຣດາຂອງນາງກາ<u>ນ</u>າເຂົ້າໄປເຝົ້າພຣະຜູ້ມີພຣະ<u>ພ</u>າຄເຖິງອາສນະ ຄັນເຖິງແລ້ວໄດ້ຖວາຍອ<u>ພິ</u>ວາທພຣະຜູ້ມີພຣະ<u>ພ</u>າຄ ແລ້ວນັ່ງ <u>ນ</u>ະ ທີ່ສົມຄວຣ ພຣະຜູ້ມີພຣະ<u>ພ</u>າຄໄດ້ຕຣັສກັບມາຣດາຂອງນາງກາ<u>ນ</u>າຜູ້ນັ່ງ <u>ນ</u>ະ ທີ່ສົມຄວຣດັ່ງນີ້ວ່າ “ນາງກາ<u>ນ</u>າຮ້ອງໄຫ້ເຮັດຫຍັງ” ອຸບາສິກາມາຣດາຂອງນາງກາ<u>ນ</u>າຈຶ່ງຂາບທູລເຣື່ອງຣາວນັ້ນໃຫ້ຊົງຊາບ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງ ຊີ້ແຈງໃຫ້ມາຣດາຂອງນາງກາ<u>ນ</u>າເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍ<u>ທັ</u>ມມີກຖາ ແລ້ວຊົງລຸກຈາກອາສນະສເດັຈໄປ

ເຣື້ອງອຸບາສິກາມາຣດາຂອງນາງກາ<u>ນ</u>າ ຈົບ

ເຣື້ອງພໍ່ຄ້າກວຽນ

[໔໑໑] ສມັຍນັ້ນ ພໍ່ຄ້າກວຽນກຸ່ມນຶ່ງຕ້ອງການຈະຍ່າງທາງຈາກກຸງຣາຊຄຶຫ໌ ໄປຖິ່ນຍ້ອນແສງ໑ <u>ພິ</u>ກ<u>ສຸ</u>ຜູ້ຖືທຽວບິ<u>ນ</u><u>ທ</u>ບາຕຮູບນຶ່ງເຂົ້າໄປບິ<u>ນ</u><u>ທ</u>ບາຕເຖິງຫມູ່ກວຽນ

ເຊີງອັນຖະ :

໑ ປ<u>ຕິ</u>ຍາໂລກໍ ຖິ່ນຍ້ອນແສງ ຄື ສູຣິຍາໂລກສຸສ ປ<u>ຕິ</u>ມຸຂໍ ຍ້ອນແສງຕາເວັນ ໄດ້ແກ່ ປຈຸ<u>ສິ</u>ມທິສໍ ທິ<u>ສ</u>ຕາເວັນຕົກ (ວິ. ອ. ໒/໔໐໗/໔໑໗)

ອຸບາສິກຄົນນຶ່ງໄດ້ໃຫ້ຖວາຍເຂົ້າຕູແກ່<u>ພິ</u>ກ<u>ສຸ</u>ຮູບນັ້ນ <u>ພິ</u>ກ<u>ສຸ</u>ຮູບນັ້ນໄດ້ອອກໄປບອກ<u>ພິ</u>ກ<u>ສຸ</u>ຮູບອື່ນ ອຸບາສິກໄດ້ໃຫ້ຖວາຍເຂົ້າຕູແກ່<u>ພິ</u>ກ<u>ສຸ</u>ຮູບນັ້ນ <u>ພິ</u>ກ<u>ສຸ</u>ຮູບນັ້ນໄດ້ອອກໄປບອກ<u>ພິ</u>ກ<u>ສຸ</u>ຮູບອື່ນ ອຸບາສິກກໍໄດ້ໃຫ້ຖວາຍເຂົ້າຕູແມ່ນແກ່<u>ພິ</u>ກ<u>ສຸ</u>ຮູບນັ້ນອີກ ຈົນເມື່ອສະບຽງທີ່ຈັດໄວ້ຫມົດສິ້ນໄປ ຄັ້ງນັ້ນ ອຸບາສິກນັ້ນໄດ້ກ່າວກັບພວກພໍ່ຄ້າດັ່ງນີ້ວ່າ "ວັນນີ້ ພວກທ່ານໂປຣດຖ້າກ່ອນ ສະບຽງທີ່ຈັດຕຽມໄວ້ຜູ້ຂ້າຖວາຍພຣະຄຸ<u>ນ</u>ເຈົ້າທັງຫລາຍໄປແລ້ວ ຜູ້ຂ້າຈະຈັດຕຽມສະບຽງ" ພວກພໍ່ຄ້າກວຽນກ່າວວ່າ "ທ່ານເອີຍ ພວກເຮົາບໍ່ສາມາດຈະຖ້າໄດ້ ພໍ່ຄ້າກວຽນອອກຍ່າງທາງແລ້ວ" ໄດ້ໄປແລ້ວ ເມື່ອອຸບາສິກຈັດຕຽມສະບຽງເສັດແລ້ວຍ່າງທາງໄປພາຍຫລັງຈຶ່ງຖືກພວກໂຈຣປຸ້ນ ພວກພໍ່ຄ້າພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມ<u>ນ</u>ະເຊື້ອສາຍ<u>ສ</u>າກຍບຸຕຣຈຶ່ງຮັບໂດຍບໍ່ຮູ້ປະມານ ອຸບາສິກຄົນນີ້ຊຶ່ງເມື່ອຖວາຍສະບຽງແກ່ພຣະສມ<u>ນ</u>ະເຊື້ອສາຍ<u>ສ</u>າກຍບຸຕຣເຫລົ່ານີ້ແລ້ວຍ່າງທາງໄປພາຍຫລັງໄດ້ຖືກໂຈຣປຸ້ນ" ພວກ<u>ພິ</u>ກ<u>ສຸ</u>ໄດ້ຍິນພວກພໍ່ຄ້າຕຳຫນິ ປະນາມ ໂພນທະນາ ຄັນແລ້ວ<u>ພິ</u>ກ<u>ສຸ</u>ເຫລົ່ານັ້ນ
ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງ<u>ທັ</u>ມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບ<u>ພິ</u>ກ<u>ສຸ</u>ທັງ

ຫລາຍວ່າ "ພິກສຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ພິກສຸທັງຫລາຍ ໂດຍອາສັຍອຳນາຈປໂຍດ ໑໐ ປະການ ຄື
໑. ເພື່ອຄວາມຮັບວ່າດີແຫ່ງສົງຄ໌
໒. ເພື່ອຄວາມຜາສຸກແຫ່ງສົງຄ໌
ฯລฯ
໑໐. ເພື່ອເອື້ອເຟື້ອວິນັຍ໑
ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :
໑ ເບິ່ງຄວາມພິສດານ ຂໍ້ ໕໓໓ ໜ້າ ໘໔ ໃນເຫລັ້ມນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໔. ການມາຕຸສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໔໓໔] ກໍ ຫາຍົກນຳຂນົມຫລືເຂົ້າຕູ໑ ມາປວາຣນາພິກສຸຜູ້ເຂົ້າໄປເຖິງຕະກູນ ພິກສຸຜູ້ຕ້ອງການເພິງຮັບໄດ້ເຕັມ ໒-໓ ບາຕຣ ຖ້າຮັບເກີນກວ່ານັ້ນ ຕ້ອງອາບັຕິປາຈິຕຕີຍ໌ ຄັນຮັບເຕັມ ໒-໓ ບາຕຣແລ້ວ ເມື່ອນຳອອກຈາກທີ່ນັ້ນແລ້ວເພິງແບ່ງປັນກັບພິກສຸທັງຫລາຍ ນີ້ເປັນການທຳທີ່ສົມຄວຣໃນເຣື້ອງນັ້ນ

ເຣື້ອງພໍ່ຄ້າກວຽນ ຈົບ

ສິກຂາບົທວິພັງຄ໌

[໔໓໓] ຄຳວ່າ ກໍ. . . ພິກສຸຜູ້ເຂົ້າໄປເຖິງຕະກູນ ທີ່ຊື່ວ່າຕະກູນ ໄດ້ແກ່ ຕະກູນ ໔ ຄື ຕະກູນກສັຕຣິຍ໌ ຕະກູນພຣາມນ໌ ຕະກູນແພສຍ໌ ຕະກູນສູທຣ
ຄຳວ່າ ຜູ້ເຂົ້າໄປເຖິງ ຄື ຜູ້ເຂົ້າໄປໃນຕະກູນນັ້ນ
ທີ່ຊື່ວ່າ ຂນົມ ໄດ້ແກ່ ຂອງກິນຢ່າງໃດຢ່າງນຶ່ງທີ່ເຂົາຈັດຕຽມເພື່ອສົ່ງໄປເປັນຂອງກຳນັລ
ທີ່ຊື່ວ່າ ເຂົ້າຕູ ໄດ້ແກ່ ຂອງກິນຢ່າງໃດຢ່າງນຶ່ງທີ່ເຂົາຈັດຕຽມເປັນສະບຽງທາງ

ຄຳວ່າ ທາຍົກນຳມາປວາຣນາ ຄື ເຂົານຳມາປວາຣນາວ່າ "ທ່ານໂປຣດຮັບຕາມຕ້ອງການ"
ຄຳວ່າ ຜູ້ຕ້ອງການ ຄື ຜູ້ປຣາຖນາໄດ້

ເຊິງອັນຖະ :

໑ ມນຸຖ ເຂົ້າຕູ ຫມາຍເຖິງ ອພທຸທສຕຸຕຸນາ ຈ . . . ພທຸທສຕຸຕຸນາ ຈ ເຂົ້າຕູກ້ອນ ເຂົ້າຕູປົ່ນ (ວິ. ອ. ໓/໑໑) ສຕຸຕຸ ນາມ ສາລິວີຫິຍເວຫິ ກຕສຕຸຕຸ. ກຽຄຸວຣກຸທຸຣູສກສີສານີປີ ພຊຸຊິຕຸວາ ອິສກໍໂກຕຸເຕຸຕຸວາ ຖຸເສ ປາເປຕຸວາ ປຸນ ທຣູທໍ ໂກຕຸເຕຸຕຸວາ ຈຸນຸນໍ ກໂຣນຸຕິ. ສເຈປີ ຕໍ ອລຸລຕຸຕາ ເອກາພທຸທໍ ໂຫຕິ ສຕຸຕຸສຽຄຫເມວ ຄຈຸສຕິ. ຂຣປາກພຊຸຊິຕານໍ ວີທີນໍ ຕນຸທຸເລ ໂກຕຸເຕຸຕຸວາ ເທນຸຕິ, ຕມຸປິ ຈຸນຸນໍ ສຕຸຕຸສຽຄຫເມວ ຄຈຸສຕິ. ເຂົ້າຕູ ຫລືເຂົ້າສັຕຕຸ ເຮັດດ້ວຍເຂົ້າເຈົ້າແລະເຂົ້າຫນຽວ ທີ່ເຂົາເດັດຮວງທັຍຊາຕິ ໓ ຢ່າງ ຄື ເຂົ້າຟາງ ຫມາກເດືອຍ ຫຍ້າກັບແກ້ ມາຕຳໜ້ອຍ ດຽວ ແລ້ວຝັດແກບອອກແລ້ວຕຳອີກຈົນມຸ່ນ ຊຶ່ງຖ້າຍັງຊຸ່ມຢູ່ຈະຈັບເປັນກ້ອນ ນີ້ກໍຈັດເປັນເຂົ້າຕູເຫມືອນກັນ ແລະທີ່ເຂົາຕຳເຂົ້າເປືອກແກ່ເປັນເຂົ້າສານຈົນມຸ່ນ ນີ້ກໍຈັດເປັນເຂົ້າຕູເຊັ່ນກັນ (ວິ. ອ. ໔/໔໓໔/໓໕໐)

ບົທພາຊນີຍ໌

ຄຳວ່າ ເພິງຮັບໄດ້ເຕັມ ໔-໓ ບາຕຣ ຄວາມວ່າ ພິກສຸເພິງຮັບໄດ້ເຕັມ ໔-໓ ບາຕຣ
ຄຳວ່າ ຖ້າຮັບເກີນກວ່ານັ້ນ ຄວາມວ່າ ຮັບເກີນກຳຫນົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌
ຄັນຮັບເຕັມ ໔-໓ ບາຕຣ ແລ້ວເມື່ອອອກຈາກທີ່ນັ້ນໄປພົບພິກສຸຮູບອື່ນເພິງບອກວ່າ "ຜູ້ຂ້າຮັບເຕັມ ໔-໓ ບາຕຣ ໃນທີ່ພຸ້ນ ທ່ານຢ່າຮັບໃນທີ່ນັ້ນ" ຖ້າພົບພິກສຸຮູບອື່ນແລ້ວບໍ່ບອກ ຕ້ອງອາບັຕິທຸກກຕ ເມື່ອບອກແລ້ວ ພິກສຸຮູບນັ້ນຍັງໄປຮັບ ຕ້ອງອາບັຕິທຸກກຕ
ຄຳວ່າ ເມື່ອນຳອອກຈາກທີ່ນັ້ນແລ້ວເພິງແບ່ງປັນກັບພິກສຸທັງຫລາຍ ຄື ພິກສຸເພິງນຳກັບໄປແລ້ວແບ່ງກັນ
ຄຳວ່າ ນີ້ເປັນການທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໓໔] ຂອງເຕັມເກີນ ໔-໓ ບາຕຣ ພິກສຸສຳຄັນວ່າເກີນ ຮັບ ຕ້ອງອາບັຕິປາຈິຕຕີຍ໌

ຂອງເຕັມເກີນ ໔-໖ ບາຕຣ ພິກສຸບໍ່ແນ່ໃຈ ຮັບ ຕ້ອງອາບັຕິປາຈິຕຕີຍ໌
ຂອງເຕັມເກີນ ໔-໖ ບາຕຣ ພິກສຸສໍາຄັນວ່າຍັງບໍ່ເຕັມ ຮັບ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກຕ

ຂອງຍັງບໍ່ເຕັມ ໔-໖ ບາຕຣ ພິກສຸສໍາຄັນວ່າເກີນ ຕ້ອງອາບັຕິທຸກກຕ
ຂອງຍັງບໍ່ເຕັມ ໔-໖ ບາຕຣ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ຂອງຍັງບໍ່ເຕັມ ໔-໖ ບາຕຣ ພິກສຸສໍາຄັນວ່າຍັງບໍ່ເຕັມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໖໕] ໑. ພິກສຸຮັບເຕັມ ໔-໖ ບາຕຣ
໔. ພິກສຸຮັບບໍ່ເຕັມ ໔-໖ ບາຕຣ
໖. ພິກສຸຜູ້ຮັບຂອງທີ່ເຂົາບໍ່ໄດ້ຈັດຕຽມໄວ້ເພື່ອສົ່ງໄປເປັນຂອງກໍານັລ
໔. ພິກສຸຜູ້ຮັບຂອງທີ່ເຂົາບໍ່ໄດ້ຈັດຕຽມເປັນສະບຽງຍ່າງທາງ
໕. ພິກສຸຜູ້ຮັບຂອງທີ່ເຫລືອຈາກທີ່ເຂົາຈັດຕຽມໄວ້ເພື່ອສົ່ງໄປເປັນຂອງກໍານັລຫລືເພື່ອເປັນສະບຽງຍ່າງທາງ
໖. ພິກສຸຜູ້ຮັບຂອງທີ່ທາຍົກຖວາຍເມື່ອເຂົາຣະງັບກາຣໄປແລ້ວ
໗. ພິກສຸຮັບຂອງຍາຕ
໘. ພິກສຸຮັບຂອງຄນປວາຣນາ
໙. ພິກສຸຮັບເພື່ອພິກສຸອື່ນ
໑໐. ພິກສຸຮັບຂອງທີ່ຈ່າຍມາດ້ວຍຊັພຍ໌ຂອງຕົນ
໑໑. ພິກສຸວິກົລຈິຕ
໑໔. ພິກສຸຕົ້ນບັນຍັດ

ກາບມາຕຸສິກຂາບົທທີ 4 ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ໂພຊນວັຄ ໕. ປຖມປວາຣນາສິກຂາບົທ

ນິທານວັຕຖຸ

໔. ໂພຊນວັຄ

໕. ປຖມປວາຣນາສິກຂາບົທ

ວ່າດ້ວຍການບອກຫ້າມພັຕຕາຫາຣຂໍ້ທີ ໑

ເຣື່ອງພິກສຸຫລາຍຮູບ

[໔໓໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພຣາມນ໌ຄົນນຶ່ງນິມົນຕ໌ພິກສຸທັງຫລາຍໃຫ້ສັນພັຕຕາຫາຣ ພິກສຸສັນແລ້ວ ບອກຫ້າມພັຕຕາຫາຣແລ້ວພາກັນໄປຕະກູນຍາຕພິກສຸບາງພວກຍັງສັນອີກ ບາງ ພວກກໍຍັງຮັບບິນທບາຕກັບໄປ ຕໍ່ມາ ພຣາມນ໌ໄດ້ກ່າວກັບເພື່ອນບ້ານຜູ້ຄຸ້ນເຄີຍດັ່ງນີ້ວ່າ "ນາຍທັງ ຫລາຍ ເຮົາລ້ຽງພິກສຸທັງຫລາຍໃຫ້ອີ່ມຫນຳແລ້ວ ເຊີນມາເຖີດ ເຮົາຈະລ້ຽງພວກທ່ານໃຫ້ອີ່ມ ຫນຳແດ່" ເພື່ອນບ້ານຜູ້ຄຸ້ນເຄີຍເຫລົ່ານັ້ນກ່າວຢ່າງນີ້ວ່າ "ນາຍ ທ່ານຈະລ້ຽງພວກເຮົາໃຫ້ອີ່ມ ຫນຳໄດ້ຢ່າງໃດ ແມ່ນພວກພິກສຸທີ່ທ່ານນິມົນຕ໌ແລ້ວກໍຍັງຕ້ອງໄປທີ່ເຮືອນພວກເຮົາ ບາງພວກຍັງ ສັນອີກ ບາງພວກກໍຍັງຮັບບິນທບາຕກັບໄປ" ຄັ້ງນັ້ນ ພຣາມນ໌ນັ້ນໄດ້ຕຳຫນິ ປະນາມ ໂພນທະນາ ວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍສັນທີ່ເຮືອນເຮົາແລ້ວຈຶ່ງໄປສັນທີ່ອື່ນອີກລະ ເຮົາບໍ່ສາມາດຈະ ຖວາຍໃຫ້ພໍແກ່ຄວາມຕ້ອງການຫລື" ພິກສຸທັງຫລາຍໄດ້ຍິນພຣາມນ໌ຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍສັນ ແລ້ວ ບອກຫ້າມພັຕຕາຫາຣແລ້ວໄປສັນຕໍ່ທີ່ອື່ນອີກລະ" ຄັນພິກສຸເຫລົ່ານັ້ນຕຳຫນິພິກສຸທັງ ຫລາຍໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ ທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸສັນແລ້ວ ບອກຫ້າມພັຕຕາຫາຣແລ້ວໄປສັນຕໍ່ ທີ່ອື່ນອີກ ແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ຈິງ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄ ພຸທທເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນສັນແລ້ວ ບອກຫ້າມ ພັຕຕາຫາຣແລ້ວໄປສັນຕໍ່ທີ່ອື່ນອີກລະ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວ ຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດສັນແລ້ວ ບອກຫ້າມພັຕຕາຫານແລ້ວ ຄ້ຽວຂອງຄ້ຽວຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົດນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພິກສຸຫລາຍຮູບ ຈົບ

ເຣື່ອງພັຕຕາຫານທີ່ເປັນເດນ

[໔໓໗] ສມັຍນັ້ນ ພິກສຸທັງຫລາຍນຳບິນທບາຕຢ່າງປານີຕໄປຖວາຍພວກພິກສຸຜູ້ເປັນໄຂ້ ພວກພິກສຸເປັນໄຂ້ສັນພັຕຕາຫານບໍ່ໄດ້ສົມໃຈ ພິກສຸທັງຫລາຍຈຶ່ງຖິ້ມບິນທບາຕເຫລົ່ານັ້ນ ພຣະຜູ້ມີພຣະພາຄຊົງໄດ້ສດັບນົກກາສົ່ງສຽງຮ້ອງດັງເຊັງແຊວ ຄັນໄດ້ຊົງສດັບແລ້ວ ຈຶ່ງໄດ້ຕຣັສກັບທ່ານພຣະອານົນທ໌ວ່າ "ອານົນທ໌ ເປັນຫຍັງນົກກາຈຶ່ງສົ່ງສຽງຮ້ອງດັງເຊັງແຊວ" ລຳດັບນັ້ນ ທ່ານພຣະອານົນທ໌ໄດ້ຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບ ພຣະຜູ້ມີພຣະພາຄຕຣັສຖາມວ່າ "ອານົນທ໌ ພິກສຸທັງຫລາຍໄດ້ສັນພັຕຕາຫານທີ່ເປັນເດນພິກສຸໄຂ້ຫລື" ທ່ານພຣະອານົນທ໌ຂາບທູລວ່າ "ບໍ່ໄດ້ສັນ ພຣະພຸທທເຈົ້າຂ້າ"

ຊົງອນຸຍາຕໃຫ້ສັນພັຕຕາຫານທີ່ເປັນເດນພິກສຸເປັນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສັນພັຕຕາຫານທີ່ເປັນເດນພິກສຸຜູ້ເປັນໄຂ້ແລະພິກສຸຜູ້ບໍ່ເປັນໄຂ້ ພິກສຸທັງຫລາຍເພິ່ງທຳພັຕຕາຫານໃຫ້ເປັນເດນດ້ວຍກາຣກ່າວຢ່າງນີ້ວ່າ "ທັງຫມົດນັ້ນພໍແລ້ວ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໔໓໘] ອີກຢ່າງນຶ່ງ ພິກສຸໃດສັນແລ້ວ ບອກຫ້າມພັຕຕາຫານແລ້ວ ຄ້ຽວຂອງຄ້ຽວຫລືສັນຂອງສັນທີ່ບໍ່ເປັນເດນ໑ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພັຕຕາຫານທີ່ເປັນເດນ ຈົບ

ສິກຂາບົທວິພັງຄ໌

[໓໓໙] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ສັນແລ້ວ ຄື ພິກສຸສັນໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງ ໂດຍທີ່ສຸດແມ່ນສັນດ້ວຍປາຍຫຍ້າຄາແຕະ

ລັກສນະກາຣບອກຫ້າມພັຕຕາຫາຣ

ທີ່ຊື່ວ່າ ບອກຫ້າມພັຕຕາຫາຣ ຄື (໑) ພິກສຸກຳລັງສັນ (໒) ທາຍົກນຳໂພຊນະມາຖວາຍ (໓) ທາຍົກຢູ່ໃນຫັຕຖບາສນ້ອມຖວາຍ (໔) ພິກສຸບອກຫ້າມ

ເຊີງອັນຖະ :

໑ ອນຕິຣິຕ຺ຕໍ ໂພຊນະທີ່ບໍ່ເປັນເດນ, ໂພຊນະທີ່ບໍ່ເຫລືອເຟືອ, ໂພຊນະທີ່ຍັງບໍ່ໄດ້ທຳອຕິເຣກວິນັຍ ຄືພຣະວິນັຍທຣຍັງບໍ່ໄດ້ເຮັດໃຫ້ເປັນເດນວ່າ "ອລເມຕໍ ສພ຺ພໍ ທັງຫມົດນັ້ນພໍແລ້ວ" (ວິ. ອ. ໒/໓໖໖, ວຊິຣ. ຕີກາ ໔໐໗), ອຕິເຣໂກ ໂຫຕິຕິ ອຕິຣິຕ຺ໂຕ ໂຫຕິ ອຕິຣິຕ຺ຕ ທີ່ເປັນເດນຫມາຍເຖິງເຫລືອເຟືອ (ປຕິສໍ. ອ. ໒/໓໐໗) ອນຕິຣິຕ຺ຕ ທີ່ບໍ່ເປັນເດນ ຈຶ່ງຫມາຍເຖິງບໍ່ເຫລືອເຟືອ

ຂອງທີ່ບໍ່ເປັນເດນ

ທີ່ຊື່ວ່າ ທີ່ບໍ່ເປັນເດນ ຄື (໑) ຂອງທີ່ພິກສຸຍັງບໍ່ໄດ້ເຮັດໃຫ້ເປັນກັປປິຍະ (໒) ຂອງທີ່ພິກສຸຍັງບໍ່ໄດ້ຮັບປະເຄນ (໓) ຂອງທີ່ພິກສຸຍັງບໍ່ໄດ້ຍົກຂຶ້ນສົ່ງໃຫ້ (໔) ຂອງທີ່ຢູ່ນອກຫັຕຖບາສ (໕) ຂອງທີ່ພິກສຸຍັງບໍ່ໄດ້ສັນ (໖) ຂອງທີ່ພິກສຸສັນແລ້ວບອກຫ້າມ ລຸກຈາກອາສນະແລ້ວ (໗) ຂອງທີ່ພິກສຸຍັງບໍ່ໄດ້ກ່າວວ່າ "ທັງຫມົດນັ້ນພໍແລ້ວ" (໘) ຂອງບໍ່ເປັນເດນພິກສຸເປັນໄຂ້ ນີ້ຊື່ວ່າທີ່ບໍ່ເປັນເດນ

ຂອງທີ່ເປັນເດນ

ທີ່ຊື່ວ່າ ທີ່ເປັນເດນ ຄື (໑) ຂອງທີ່ພິກສຸເຮັດໃຫ້ເປັນກັປປິຍະແລ້ວ (໒) ຂອງທີ່ພິກສຸຮັບປະເຄນແລ້ວ (໓) ຂອງທີ່ພິກສຸຍົກຂຶ້ນສົ່ງໃຫ້ແລ້ວ (໔) ຂອງທີ່ຢູ່ໃນຫັຕຖບາສ (໕) ຂອງທີ່ພິກສຸສັນ

ແລ້ວ (໖) ຂອງທີ່ພິກສຸສັນແລ້ວບອກຫ້າມ ແຕ່ຍັງບໍ່ລຸກຈາກອາສນະ (໗) ຂອງທີ່ພິກສຸກ່າວວ່າ "ທັງຫມົດນັ້ນພໍແລ້ວ" (໘) ຂອງເປັນເດນພິກສຸເປັນໄຂ້ ນີ້ຊື່ວ່າທີ່ເປັນເດນ

ຂອງຄັ້ງວ

ທີ່ຊື່ວ່າ ຂອງຄັ້ງວ ຄື ຍົກເວັ້ນໂພຊນະ ໕ ໑ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄັ້ງວ

ເຊີງອັນຖະ :

໑ ຍາມກາລິກ ຂອງທີ່ພິກສຸຮັບປະເຄນໄວ້ແລ້ວສັນໄດ້ຊົ່ວມື້ນຶ່ງກັບຄືນນຶ່ງກ່ອນອຣຸນຂອງອັນໃຫມ່ ຄື ນໍ້າປານະ ໄດ້ແກ່ ນໍ້າຄັ້ນຜົລໄມ້ທີ່ຊົງອນຸຍາຕ ໘ ຢ່າງ ຄື (໑) ອັມພປານະ ນໍ້າຫມາກມ່ວງ (໒) ຊັມພຸປານະ ນໍ້າຫວ້າ (໓) ໂຈຈປານະ ນໍ້າກ້ວຍມີເມັດ (໔) ໂມຈປານະ ນໍ້າກ້ວຍບໍ່ມີເມັດ (໕) ມທຸກປານະ ນໍ້າມະຫຣາງ (໖) ມຸທທິກປານະ ນໍ້າຫມາກຈັນທນ໌ຫລືນໍ້າອງຸ່ນ (໗) ສາລູກປານະ ນໍ້າເຫງົ້າບົວ (໘) ຜາຣຸສກປານ ນໍ້າຜົລຫມາກຜາງຫລືນໍ້າລິ້ນຈີ່ ແລະນໍ້າຜົລໄມ້ທຸກຊນິດ ເວັ້ນນໍ້າຕົ້ມ ເມັດເຂົ້າເປືອກ, ນໍ້າໃບໄມ້ທຸກຊນິດ ເວັ້ນນໍ້າຜັກດອງ, ນໍ້າດອກໄມ້ທຸກຊນິດ ເວັ້ນນໍ້າດອກມະຫ ຣາງ, ນໍ້າອ້ອຍສົດ ສັນໄດ້ (ວິ. ມ. ໕/໓໐໐/໘໔, ວິ. ອ. ໒/໒໕໕-໖/໓໗໘) ສັຕຕາຫກາລິກ ຂອງທີ່ພິກສຸຮັບປະເຄນໄວ້ແລ້ວສັນໄດ້ພາຍໃນ ໗ ວັນ ຄື ເພສັຊທັງ ໕ ໄດ້ແກ່ (໑) ສັປປິ ເນີຍໃສ

(໒) ນວນີຕະ ເນີຍຂຸ້ນ (໓) ເຕລະ ນໍ້າມັນ (໔) ມທຸ ນໍ້າເຜິ້ງ (໕) ຜານິຕ ນໍ້າອ້ອຍ (ວິ. ມ. ໕/໒໖໐/໒໗) ຍາວຊີວິກ ຂອງທີ່ພິກສຸຮັບປະເຄນໄວ້ແລ້ວ ສັນໄດ້ຕລອດໄປ ບໍ່ຈຳກັດເວລາ ຄື ຂອງທີ່ໃຊ້ປຸງເປັນຍາ ໄດ້ແກ່ຫລິທທະ ຂມິ້ນ, ສິງຄິເວຣະ ຂີງ, ວຈະ ວ່ານນໍ້າ, ວຈັຕຖະ ວ່ານ ເປຣາະ, ອຕິວິສະ ອຸຕພິດ, ກຕຸກໂຣຫິນີ ຂ່າ, ອຸສີຣະ ແຝກ, ພັທທມຸຕຕກະ ແຫ້ວຫມູ ເປັນຕົ້ນ (ວິ. ມ. ໕/໒໖໓/໒໙) ເບິ່ງເຊີງອັນຖະ ຂໍ້ ໒໕໖ ໜ້າ ໔໐໙

ຂອງສັນ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມສົດ ເຂົ້າຕູ ປາ ຊີ້ນ ພິກສຸຮັບປະເຄນ ດ້ວຍຕັ້ງໃຈວ່າ "ຈະຄັ້ງວ ຈະສັນ" ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ບິທພຼາຊນີຍ໌

ຕິກປາຈິຕຕິຍ໌

[໔໔໐] ຂອງທີ່ບໍ່ເປັນເດນ ພິກສຸສຳຄັນວ່າເປັນຂອງທີ່ບໍ່ເປັນເດນ ຄັ່ງວຂອງຄ້ຽວ ຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕິຍ໌

ຂອງທີ່ບໍ່ເປັນເດນ ພິກສຸບໍ່ແນ່ໃຈ ຄ້ຽວຂອງຄ້ຽວ ຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕິຍ໌

ຂອງທີ່ບໍ່ເປັນເດນ ພິກສຸສຳຄັນວ່າເປັນຂອງທີ່ເປັນເດນ ຄ້ຽວຂອງຄ້ຽວ ຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕິຍ໌

ຕິກທຸກກຕ

ພິກສຸຮັບປະເຄນຍາມກາລິກ ສັຕຕາຫກາລິກ ຍາວຊີວິກ ເພື່ອເປັນອາຫານ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ຂອງທີ່ເປັນເດນ ພິກສຸສຳຄັນວ່າເປັນຂອງທີ່ບໍ່ເປັນເດນ ຕ້ອງອາບັຕິທຸກກຕ

ຂອງທີ່ເປັນເດນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຂອງທີ່ເປັນເດນ ພິກສຸສຳຄັນວ່າເປັນຂອງທີ່ເປັນເດນ ບໍ່ຕ້ອງອາບັຕິ

ອນາປັຕຕິວານ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໑] ໑. ພິກສຸໃຫ້ທຳເປັນຂອງທີ່ເປັນເດນແລ້ວສັນ

໒. ພິກສຸຮັບປະເຄນດ້ວຍຕັ້ງໃຈວ່າ ຈະໃຫ້ທຳເປັນຂອງທີ່ເປັນເດນກ່ອນຈຶ່ງສັນ

໓. ພິກສຸຮັບໄປເພື່ອພິກສຸອື່ນ

໔. ພິກສຸສັນພັຕຕາຫານທີ່ເຫລືອຂອງພິກສຸຜູ້ເປັນໄຂ້

໕. ພິກສຸສັນຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ເມື່ອມີເຫຕຸຜົລທີ່ສົມຄວນ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ປຖມປວາຣນາສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ຝ. ທຸຕິຍປວາຣນາສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

ຝ. ທຸຕິຍປວາຣນາສິກຂາບົທ

ວ່າດ້ວຍການບອກຫ້າມພັຕຕາຫານຂໍ້ທີ ໔

ເລື້ອງພິກສຸ ໔ ຮູບ

[໔໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸ ໔ ຮູບຍ່າງທາງໄກໄປກຸງສາວັຕຖີ ແຄວ້ນໂກສົລ ພິກສຸຮູບນຶ່ງປະພຶດອນາຈານ ພິກສຸຜູ້ເປັນເພື່ອນໄດ້ກ່າວກັບພິກສຸຮູບນັ້ນດັ່ງນີ້ວ່າ "ທ່ານຢ່າໄດ້ກະທຳຢ່າງນີ້ ການກະທຳຢ່າງນີ້ບໍ່ສົມຄວນ" ພິກສຸຮູບນັ້ນແຄ້ນເຄືອງພິກສຸຜູ້ເປັນເພື່ອນນັ້ນ ຄັນພິກສຸເຫລົ່ານັ້ນເຖິງກຸງສາວັຕຖີ ຄັ້ງນັ້ນ ມີສັງຂພັຕຂອງສມາຄົມນຶ່ງ ພິກສຸຜູ້ເປັນເພື່ອນສັນແລ້ວ ບອກຫ້າມພັຕຕາຫານແລ້ວ ພິກສຸຮູບທີ່ແຄ້ນເຄືອງໄປຕະກູນຍາຕນຳບິນທບາຕມາ ແລ້ວເຂົ້າໄປຫາພິກສຸຜູ້ເປັນເພື່ອນເຖິງທີ່ພັກ ຄັນເຖິງແລ້ວໄດ້ກ່າວກັບພິກສຸນັ້ນດັ່ງນີ້ວ່າ "ເຊີນທ່ານສັນເຖີດ ຂນ້ອຍ" ພິກສຸຜູ້ເປັນເພື່ອນປຕິເສທວ່າ "ບໍ່ລະຂນ້ອຍ ຜູ້ຂ້າບໍຣິບູຣນ໌ແລ້ວ" ພິກສຸຜູ້ແຄ້ນເຄືອງນັ້ນລ້ຳໄລວ່າ "ບິນທບາຕແຊບ ສັນເຖີດ ຂນ້ອຍ" ຄັນພິກສຸຜູ້ເປັນເພື່ອນຖືກລ້ຳໄລຈຶ່ງສັນບິນທບາຕນັ້ນ ພິກສຸຜູ້ແຄ້ນເຄືອງໄດ້ກ່າວກັບພິກສຸນັ້ນດັ່ງນີ້ວ່າ "ທ່ານເຂົ້າໃຈວ່າຜູ້ຂ້າເປັນຜູ້ທີ່ຄວນວ່າກ່າວ ທ່ານເອງສັນແລ້ວບອກຫ້າມພັຕຕາຫານແລ້ວກໍຍັງສັນໂພຊນະທີ່ບໍ່ເປັນເດນອີກ" ພິກສຸຜູ້ເປັນເພື່ອນກ່າວວ່າ "ທ່ານຄວນບອກເລື້ອງນີ້ບໍ່ແມ່ນບໍ" ພິກສຸຜູ້ແຄ້ນເຄືອງກ່າວວ່າ "ທ່ານຄວນຖາມກ່ອນບໍ່ແມ່ນບໍ" ຕໍ່ມາ ພິກສຸນັ້ນໄດ້ແຈ້ງເລື້ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງນຳໂພຊນະທີ່ບໍ່ເປັນເດນໄປປວາຣນາພິກສຸຜູ້ສັນແລ້ວບອກຫ້າມພັຕຕາຫານແລ້ວລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານນຳໂພຊນະທີ່ບໍ່ເປັນເດນໄປປວາຣນາພິກສຸຜູ້ສັນແລ້ວບອກຫ້າມ

ພັຕຕາຫານແລ້ວ ແມ່ນແທ້ບໍ່” ພິກສຸນັ້ນທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງນຳໂພຊນະທີ່ບໍ່ເປັນເດນໄປປວາຣນາພິກສຸຜູ້ສັນແລ້ວບອກຫ້າມພັຕຕາຫານແລ້ວລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒໔໓] ກໍ ພິກສຸໃດຮູ້ຢູ່ ແຕ່ຕ້ອງການຈະຈັບຜິດ ນຳຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປປວາຣນາ ພິກສຸຜູ້ສັນແລ້ວບອກຫ້າມພັຕຕາຫານແລ້ວ ໂດຍກ່າວລໍ້າໄລວ່າ “ນິມົນຕ໌ເຖີດຂນ້ອຍທ່ານຈົ່ງຄ້ຽວຫລືຈົ່ງສັນກໍໄດ້” ເມື່ອທ່ານສັນແລ້ວ ພິກສຸນັ້ນຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພິກສຸ ໒ ຣູບ ຈົບ

ສິກຂາບົທວິພັງຄ໌

[໒໔໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້
ຄຳວ່າ ພິກສຸ ໝາຍເຖິງ ພິກສຸຮູບອື່ນ
ທີ່ຊື່ວ່າ ສັນແລ້ວ ຄື ພິກສຸສັນໂພຊນະ ໕ ຢ່າງ ຢ່າງໃດຢ່າງນຶ່ງໂດຍທີ່ສຸດແມ່ນສັນດ້ວຍປາຍຫຍ້າຄາແຕະ໑

ລັກສນະຫ້າມພັຕຣ

ທີ່ຊື່ວ່າ ບອກຫ້າມພັຕຕາຫານ ຄື (໑) ພິກສຸກຳລັງສັນ (໒) ທາຍົກນຳໂພຊນະມາຖວາຍ (໓) ທາຍົກຢູ່ໃນຫັຕຖບາສນ້ອມຖວາຍ (໔) ພິກສຸບອກຫ້າມ

ຂອງທີ່ບໍ່ເປັນເດນ

ທີ່ຊື່ວ່າ ທີ່ບໍ່ເປັນເດນ ຄື (໑) ຂອງທີ່ຍັງບໍ່ໄດ້ເຮັດໃຫ້ເປັນກັປປິຍະ (໒) ຂອງທີ່ພິກສຸຍັງບໍ່ໄດ້ຮັບປະເຄນ (໓) ຂອງທີ່ພິກສຸຍັງບໍ່ໄດ້ຍົກຂຶ້ນສົ່ງໃຫ້ (໔) ຂອງທີ່ຢູ່ນອກຫັຕຖບາສ (໕) ຂອງທີ່ພິກສຸຍັງບໍ່ໄດ້ລົງມືສັນ (໖) ຂອງທີ່ພິກສຸລົງມືສັນແລ້ວບອກຫ້າມ ລຸກຈາກອາສນະແລ້ວ (໗) ຂອງທີ່

ພິກສຸຍັງບໍ່ໄດ້ກ່າວວ່າ "ທັງຫມົດນັ້ນພໍແລ້ວ" (໗) ຂອງບໍ່ເປັນເດນພິກສຸເປັນໄຂ້ ນີ້ຊື່ວ່າທີ່ບໍ່ເປັນເດນ

ຂອງຄ້ຽວ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ຂອງສັນ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມສດ ເຂົ້າຕູ ປລາ ຊີ້ນ

ຄຳວ່າ ນຳມາປວາຣນາ ຄື ນຳມາປວາຣນາວ່າ "ທ່ານໂປຣດຮັບຕາມຕ້ອງການ"

ທີ່ຊື່ວ່າ ຮູ້ຢູ່ ຄື ພິກສຸຮູ້ເອງ ຄົນເຫລົ່າອື່ນບອກທ່ານ ຫລືຄົນນັ້ນບອກ

ເຊີງອັນຖະ :

໑ ສັນດ້ວຍປາຍຫຍ້າຄາແຕະ ຄືເຄື່ອງອາຫານທີ່ໄດ້ມາໃນພາຊນະອັນດຽວກັນ ຄົນໃຫ້ເຂົ້າກັນຈົນເປັນຣົສດຽວກັນ ແລ້ວເອົາປາຍຫຍ້າຄາແຕະພຽງຢົດດຽວແລ້ວວາງທີ່ປາຍລີ້ນ ກືນກິນ (ວິ. ອ. ໔/໔໓໐/໓໗໑)

ທີ່ຊື່ວ່າ ຕ້ອງການຈະຈັບຜິດ ຄື ພິກສຸເພ່ງເລັງວ່າ ເຮົາຈະທ້ວງ ເຮົາຈະເຕືອນ ເຮົາຈະທັກທ້ວງ ເຮົາຈະຕັກເຕືອນ ເຮົາຈະທຳພິກສຸນີ້ໃຫ້ເກີ້ເຂີນດ້ວຍວິທີນີ້ ນຳໄປ ຕ້ອງອາບັຕິທຸກກຕ

ພິກສຸຮັບໄວ້ຕາມຄຳຂອງພິກສຸນັ້ນດ້ວຍຕັ້ງໃຈວ່າ ຈະສັນ ພິກສຸຜູ້ນຳໄປ ຕ້ອງອາບັຕິທຸກກຕ

ພິກສຸຜູ້ຮັບສັນ ພິກສຸຜູ້ນຳໄປ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ເມື່ອພິກສຸຜູ້ຮັບນັ້ນສັນແລ້ວ ພິກສຸຜູ້ນຳໄປ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໔໔໕] ບອກຫ້າມພັຕຕາຫານແລ້ວພິກສຸສຳຄັນວ່າບອກຫ້າມພັຕຕາຫານແລ້ວ ນຳຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປປວາຣນາ ຕ້ອງອາບັຕິປາຈິຕຕີຍ໌

ບອກຫ້າມພັຕຕາຫານແລ້ວ ພິກສຸບໍ່ແນ່ໃຈ ນຳຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປປວາຣນາ ຕ້ອງອາບັຕິທຸກກຕ

ບອກຫ້າມພັຕຕາຫາຣແລ້ວ ພິກສຸສຳຄັນວ່າຍັງບໍ່ໄດ້ບອກຫ້າມພັຕຕາຫາຣນຳຂອງຄ້ຽວຫລືຂອງສັນທີ່ບໍ່ເປັນເດນໄປປວາຣນາ ບໍ່ຕ້ອງອາບັຕິ

ພິກສຸນຳຍາມກາລິກ ສັຕຕາຫກາລິກ ຍາວຊີວິກໄປເປັນອາຫາຣ ຕ້ອງອາບັຕິທຸກກຕ

ພິກສຸຮັບໄວ້ຕາມຄຳຂອງພິກສຸຜູ້ນຳໄປນັ້ນດ້ວຍຕັ້ງໃຈວ່າ ຈະສັນ ພິກສຸຜູ້ນຳໄປ ຕ້ອງອາບັຕິທຸກກຕ

ພິກສຸຜູ້ຮັບສັນ ພິກສຸຜູ້ນຳໄປ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ຍັງບໍ່ໄດ້ບອກຫ້າມພັຕຕາຫາຣ ພິກສຸສຳຄັນວ່າບອກຫ້າມພັຕຕາຫາຣແລ້ວ ຕ້ອງອາບັຕິທຸກກຕ

ຍັງບໍ່ໄດ້ບອກຫ້າມພັຕຕາຫາຣ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ຍັງບໍ່ໄດ້ບອກຫ້າມພັຕຕາຫາຣ ພິກສຸສຳຄັນວ່າຍັງບໍ່ໄດ້ບອກຫ້າມພັຕຕາຫາຣ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໔໒] ໑. ພິກສຸໃຫ້ທຳເປັນຂອງທີ່ເປັນເດນແລ້ວໃຫ້

໒. ພິກສຸໃຫ້ດ້ວຍກ່າວວ່າ ທ່ານຈົ່ງໃຫ້ທຳເປັນຂອງທີ່ເປັນເດນກ່ອນຈຶ່ງສັນ

໓. ພິກສຸໃຫ້ດ້ວຍກ່າວວ່າ ທ່ານຈົ່ງນຳໄປເພື່ອພິກສຸອື່ນ

໔. ພິກສຸໃຫ້ພັຕຕາຫາຣທີ່ເຫລືອຂອງພິກສຸເປັນໄຂ້

໕. ພິກສຸໃຫ້ຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ຍາວຊີວິກ ດ້ວຍກ່າວວ່າ ທ່ານຈົ່ງສັນເມື່ອມີເຫຕຸສົມຄວຣ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ທຸຕິຍປວາຣນາສິກຂາບົທທີ ໖ ຈົບ

ພຣະວິນັຍປີດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໗. ວິກາລໂພຊນສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໗. ວິກາລໂພຊນສິກຂາບົທ

ວ່າດ້ວຍການສັນໂພຊນະໃນເວລາວິກາລ

ເຣື້ອງພຣະສັຕຕຣສວັຄຄີຍ໌

[໔໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ໃນກຸງຣາຊຄຶຫ໌ ມີມຫໍຣສົພ**ເທິງຍອດ**ເຂົາພວກພິກສຸສັຕຕຣສວັຄຄີຍ໌ໄດ້ໄປຊົມມຫໍຣສົພ ພວກຊາວບ້ານເຫັນພວກພິກສຸສັຕຕຣສວັຄຄີຍ໌ແລ້ວຈຶ່ງນິມົນຕ໌ໃຫ້ສົງນ້ຳ ໃຫ້ລູບໄລ້ຂອງຫອມ ໃຫ້ສັນພັຕຕາຫາຣແລ້ວຖວາຍຂອງຄ້ຽວພວກພິກສຸສັຕຕຣສວັຄຄີຍ໌ນຳຂອງຄ້ຽວໄປອາຣາມ ແລ້ວໄດ້ກ່າວກັບພວກພິກສຸສັພພັຄຄີຍ໌ດັ່ງນີ້ວ່າ "ທ່ານທັງຫລາຍ ນິມົນຕ໌ພວກທ່ານຮັບແລ້ວຈົ່ງສັນຂອງຄ້ຽວເຖີດ ຂນ້ອຍ" ພວກພິກສຸສັພພັຄຄີຍ໌ຖາມວ່າ "ພວກທ່ານໄດ້ຂອງຄ້ຽວມາຈາກໃສ" ພວກພິກສຸສັຕຕຣສວັຄຄີຍ໌ຈຶ່ງແຈ້ງເຣື້ອງນັ້ນໃຫ້ພວກພິກສຸສັພພັຄຄີຍ໌ຊາບ ພວກພິກສຸສັພພັຄຄີຍ໌ຖາມວ່າ "ພວກທ່ານສັນອາຫາຣໃນເວລາວິກາລຫລື" ພວກພິກສຸສັຕຕຣສວັຄຄີຍ໌ຕອບວ່າ "ແມ່ນແລ້ວ ຂນ້ອຍ" ພວກພິກສຸສັພພັຄຄີຍ໌ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັຕຕຣສວັຄຄີຍ໌ຈຶ່ງສັນພັຕຕາຫາຣໃນເວລາວິກາລລະ" ແລ້ວພວກພິກສຸສັພພັຄຄີຍ໌ຈຶ່ງແຈ້ງເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັຕຕຣສວັຄຄີຍ໌ຈຶ່ງສັນພັຕຕາຫາຣໃນເວລາວິກາລລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັຕຕຣສວັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັຕຕຣສວັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານສັນພັຕຕາຫາຣ ໃນເວລາວິກາລແມ່ນແທ້ບໍ່" ພວກພິກສຸສັຕຕຣສວັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງສັນພັຕຕາຫາຣໃນເວລາວິກາລລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒໔໗] ກໍ ພິກສຸໃດຄ້ຽວຂອງຄ້ຽວ ຫລືສັນຂອງສັນໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໒໔໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ເວລາວິກາລ ຫມາຍເອົາເວລາເມື່ອທ່ຽງວັນລ່ວງໄປຈົນເຖິງອຣຸນຂຶ້ນ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປາ ຊີ້ນ ພິກສຸຮັບປະເຄນດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະສັນ" ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຖ໌] ໔. ໂພຊນວັຄ ໗. ວິກາລໂພຊນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໒໕໐] ເວລາວິກາລ ພິກສຸສຳຄັນວ່າເປັນວິກາລ ຄ້ຽວຂອງຄ້ຽວຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ເວລາວິກາລ ພິກສຸບໍ່ແນ່ໃຈ ຄ້ຽວຂອງຄ້ຽວຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ເວລາວິກາລ ພິກສຸສຳຄັນວ່າເປັນກາລ ຄ້ຽວຂອງຄ້ຽວຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ພິກສຸຮັບປະເຄນຍາມກາລິກ ສັຕຕາຫກາລິກ ຍາວຊີວິກໄວ້ເປັນອາຫາຣ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ກາລ ພິກສຸສຳຄັນວ່າເປັນວິກາລ ຕ້ອງອາບັຕິທຸກກຕ
ກາລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກາລ ພິກສຸສຳຄັນວ່າເປັນກາລ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໕໑] ໑. ພິກສຸສັນຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ເມື່ອມີເຫຕຸຜົລທີ່ສົມຄວຣ
໔. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ວິກາລໂພຊນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໔. ໂພຊນວັຄ ໘. ສັນນິທິກາຣກສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໘. ສັນນິທິກາຣກສິກຂາບົທ
ວ່າດ້ວຍການສະສົມໂພຊນະ

ເຣື້ອງພຣະເວຣັຕຖສີສະ
[໔໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະເວຣັຕຖສີສະ ພຣະອຸປັຊຢາຍ໌ຂອງທ່ານພຣະອານົນທ໌ຢູ່ໃນປ່າ ທ່ານທຽວບິນທບາຕໄດ້ມາກມາຍ ເອົາເຂົ້າສຸກເປົ່າໄປຕາກແຫ້ງເກັບໄວ້ທີ່ອາຣາມ ຄາວທີ່ຕ້ອງການພັຕຕາຫາຣກໍນຳມາແຊ່ນ້ຳແລ້ວສັນ ດົນໆຈຶ່ງຈະເຂົ້າໄປບິນທບາຕໃນຫມູ່ບ້ານ ພິກສຸທັງຫລາຍໄດ້ກ່າວກັບທ່ານພຣະເວຣັຕຖສີສະດັ່ງນີ້ວ່າ “ທ່ານ ເປັນຫຍັງດົນໆທ່ານຈຶ່ງເຂົ້າໄປບິນທບາຕໃນຫມູ່ບ້ານ” ລຳດັບນັ້ນ ທ່ານພຣະເວຣັຕຖສີສະຈຶ່ງແຈ້ງເຣື້ອງນັ້ນໃຫ້ພິກສຸທັງຫລາຍ

ຊາບ ພິກສຸທັງຫລາຍຖາມວ່າ "ທ່ານ ທ່ານສັນອາຫານທີ່ເກັບສະສົມໄວ້ຫລື" ທ່ານຕອບວ່າ "ແມ່ນແລ້ວ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ"ຈັ່ງໃດທ່ານ ພຣະເວຣັ໗ຖສີສະຈຶ່ງສັນໂພຊນະທີ່ເກັບສະສົມໄວ້ລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະເວຣັ໗ຖສີສະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸຊົງສອບຖາມທ່ານພຣະເວຣັ໗ຖສີສະວ່າ "ເວຣັ໗ຖສີສະ ຊາບວ່າ ທ່ານສັນໂພຊນະທີ່ເກັບສະສົມໄວ້ ແມ່ນແທ້ບໍ" ພຣະເຖຣະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ເວຣັ໗ຖສີສະ ຈັ່ງໃດທ່ານຈຶ່ງສັນໂພຊນະທີ່ເກັບສະສົມໄວ້ລະ ເວຣັ໗ຖສີສະ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໒໕໓] ກໍ ພິກສຸໃດຄ້ຽວຂອງຄ້ຽວຫລືສັນຂອງສັນທີ່ເກັບສະສົມໄວ້ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະເວຣັ໗ຖສີສະ ຈົບ

ສິກຂາບົທວິພັງຄ໌

[໒໕໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຂອງທີ່ເກັບສະສົມໄວ້ ຄື ຂອງທີ່ພິກສຸຮັບປະເຄນໃນວັນນີ້ແລ້ວສັນໃນວັນອື່ນ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປາ ຊີ້ນ ພິກສຸຮັບປະເຄນດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະສັນ" ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ປິທພາຊນີຍ໌

ຕິກປາຈິຕຕີຍ໌

[໔໕໕] ຂອງເກັບສະສົມໄວ້ ພິກສຸສຳຄັນວ່າເປັນຂອງເກັບສະສົມໄວ້ ຄ້ຽວຂອງຄ້ຽວ ຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ຂອງເກັບສະສົມໄວ້ ພິກສຸບໍ່ແນ່ໃຈ ຄ້ຽວຂອງຄ້ຽວຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ຂອງເກັບສະສົມໄວ້ ພິກສຸສຳຄັນວ່າບໍ່ແມ່ນຂອງເກັບສະສົມໄວ້ ຄ້ຽວຂອງຄ້ຽວຫລືສັນຂອງສັນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸຮັບປະເຄນຍາມກາລິກ ສັຕຕາຫກາລິກ ຍາວຊີວິກໄວ້ເປັນອາຫານ ຕ້ອງອາບັຕິທຸກກຕ ພິກສຸສັນ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ບໍ່ແມ່ນຂອງເກັບສະສົມໄວ້ ພິກສຸສຳຄັນວ່າເປັນຂອງເກັບສະສົມໄວ້ ຕ້ອງອາບັຕິທຸກກຕ

ບໍ່ແມ່ນຂອງເກັບສະສົມໄວ້ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນຂອງເກັບສະສົມໄວ້ ພິກສຸສຳຄັນວ່າບໍ່ແມ່ນເປັນຂອງເກັບສະສົມໄວ້ ບໍ່ຕ້ອງອາບັຕິ

ອນາປັຕຕິວານ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໕໖] ໑. ພິກສຸເກັບຂອງທີ່ເປັນຍາວກາລິກໄວ້ສັນຊົ່ວກາລ

໒. ພິກສຸເກັບຂອງທີ່ເປັນຍາມກາລິກໄວ້ສັນຊົ່ວຍາມ[1]

໓. ພິກສຸເກັບຂອງທີ່ເປັນສັຕຕາຫກາລິກໄວ້ສັນຊົ່ວສັປດາຫ໌

໔. ພິກສຸສັນຂອງທີ່ເປັນຍາວຊີວິກເມື່ອມີເຫຕຸຜົລສົມຄວນ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ສັນນິທິກາຣກສິກຂາບົທທີ ໘ ຈົບ

ເຊີງອັນຖະ :

໑ ຊົ່ວກາລ ຄືຊົ່ວເວລາທ່ຽງວັນ, ຊົ່ວຍາມ ຄືຊົ່ວປັຈສິມຍາມ (ວິ. ອ. ໒/໔໕໖/໓໗໘, ເບິ່ງເຊີງ

ອັນຖະ ຂໍ້ ໔໑໙ ຫນ້າ ໑໙໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໙. ປນີຕໂພຊນສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໙. ປນີຕໂພຊນສິກຂາບົທ

ວ່າດ້ວຍການອອກປາກຂໍໂພຊນະອັນປານີຕ

ເຣື້ອງພຣະສັພພັຄຄີຍ໌

[໔໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ອອກປາກຂໍໂພຊນະອັນປານີຕມາເພື່ອ ຕິນແລ້ວສັນ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍ ສູາກຍບຸຕຣຈຶ່ງອອກປາກຂໍໂພຊນະອັນປານີຕມາເພື່ອຕິນແລ້ວສັນລະ ພັຕຕາຫາຣທີ່ດີໃຜຈະບໍ່ພໍໃຈ ພັຕຕາຫາຣແຊບໃຜຈະບໍ່ມັກລະ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກ ພິກສຸສັພພັຄຄີຍ໌ຈຶ່ງອອກປາກຂໍໂພຊນະອັນປານີຕມາເພື່ອຕິນແລ້ວສັນລະ" ຄັນພິກສຸທັງຫລາຍ ຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານອອກປາກຂໍໂພຊນະອັນປານີຕມາເພື່ອຕິນ ແລ້ວສັນແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະ ພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງອອກປາກຂໍໂພຊນະ ອັນປານີຕມາເພື່ອຕິນແລ້ວສັນລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ

ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໙. ປນີຕໂພຊນສິກຂາບົທ ພຣະອນຸບັນຍັດ

ພຣະບັນຍັດ

ກໍ ພິກສຸໃດອອກປາກຂໍໂພຊນະອັນປານີຕເຊັ່ນນີ້ ຄື ເນີຍໃສ ເນີຍຂຸ້ນ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ ປລາ ຊີ້ນ ນົມສົດ ນົມສົ້ມ ມາເພື່ອຕນແລ້ວສັນ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຣື້ອງພິກສຸເປັນໄຂ້

[໔໕໗] ສມັຍນັ້ນ ພິກສຸທັງຫລາຍເປັນໄຂ້ ພວກພິກສຸຜູ້ມີໜ້າທີ່ສອບຖາມອາການໄຂ້ ໄດ້ກ່າວກັບພວກພິກສຸຜູ້ເປັນໄຂ້ດັ່ງນີ້ວ່າ “ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື” ພວກພິກສຸເປັນໄຂ້ຕອບວ່າ “ເມື່ອກ່ອນພວກຜູ້ຂ້າອອກປາກຂໍໂພຊນະອັນປານີຕມາເພື່ອຕົນແລ້ວສັນ ດັ່ງນັ້ນ ຈຶ່ງມີຄວາມຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢໍາເກງຢູ່ວ່າ “ພຣະຜູ້ມີພຣະພາຄຊົງຫ້າມໄວ້” ຈຶ່ງບໍ່ອອກປາກຂໍ ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ”
ພິກສຸທັງຫລາຍໄດ້ນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ພິກສຸເປັນໄຂ້ອອກປາກຂໍໂພຊນະອັນປານີຕໄດ້

ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸເປັນໄຂ້ອອກປາກຂໍໂພຊນະ ອັນປານີຕມາເພື່ອຕນແລ້ວສັນໄດ້” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະອນຸບັນຍັດ

[໔໕໙] ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ ອອກປາກຂໍໂພຊນະອັນປານີຕເຊັ່ນນີ້ ຄື ເນີຍໃສ

ເນີຍຂຸ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ປລາ ຊີ້ນ ນົມສົດ ນົມສົ້ມ ມາເພື່ອຕົນແລ້ວສັ່ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກສຸເປັນໄຂ້ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ລ. ປນີຕໂພຊນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໔໓໐] ຄຳວ່າ ໂພຊນະອັນປານີຕ ຄວາມວ່າ ທີ່ຊື່ວ່າ ເນີຍໃສ ໄດ້ແກ່ ເນີຍໃສທີ່ທຳຈາກນ້ຳນົມໂຄ ເນີຍໃສທີ່ທຳຈາກນ້ຳນົມແພະ ເນີຍໃສທີ່ທຳຈາກນ້ຳນົມກະບື ຫລືເນີຍໃສທີ່ທຳຈາກນ້ຳນົມສັຕວ໌ທີ່ມີຊີ້ນເປັນກັປປິຍະ

ທີ່ຊື່ວ່າ ເນີຍຂຸ້ນ ໄດ້ແກ່ ເນີຍຂຸ້ນທີ່ທຳຈາກນ້ຳນົມສັຕວ໌ເຫລົ່ານັ້ນ

ທີ່ຊື່ວ່າ ນ້ຳມັນ ໄດ້ແກ່ ນ້ຳມັນທີ່ສກັດຈາກເມັດງາ ນ້ຳມັນທີ່ສກັດຈາກເມັດພັນຫຸ໌ຜັກກາດ ນ້ຳມັນທີ່ສກັດຈາກເມັດມະຊາງ ນ້ຳມັນທີ່ສກັດຈາກເມັດລະຫຸ່ງ ນ້ຳມັນທີ່ທຳຈາກແປວສັຕວ໌

ທີ່ຊື່ວ່າ ນ້ຳເຜີ້ງ ໄດ່ແກ່ ນ້ຳຫວານຂອງແມງເຜີ້ງ

ທີ່ຊື່ວ່າ ນ້ຳອ້ອຍ ໄດ້ແກ່ ນ້ຳຫວານທີ່ເກີດຈາກອ້ອຍ

ທີ່ຊື່ວ່າ ປລາ ທ່ານກ່າວເຖິງສັຕວ໌ທີ່ທ່ຽວໄປໃນນ້ຳ

ທີ່ຊື່ວ່າ ຊີ້ນ ໄດ້ແກ່ ຊີ້ນຂອງສັຕວ໌ບກທີ່ມີຊີ້ນເປັນກັປປິຍະ

ທີ່ຊື່ວ່າ ນົມສົດ ໄດ້ແກ່ ນ້ຳນົມໂຄ ນ້ຳນົມແພະ ນ້ຳນົມກະບືຫລືນ້ຳນົມຂອງສັຕວ໌ທີ່ມີຊີ້ນເປັນກັປປິຍະ

ທີ່ຊື່ວ່າ ນົມສົ້ມ ໄດ້ແກ່ ນົມສົ້ມທີ່ທຳຈາກນ້ຳນົມຂອງສັຕວ໌ເຫລົ່ານັ້ນ

ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ໂພຊນະອັນປານີຕເຊັ່ນນີ້ ໄດ້ແກ່ ໂພຊນະອັນປານີຕດັ່ງກ່າວ

ທີ່ຊື່ວ່າ ບໍ່ເປັນໄຂ້ ຄື ຜູ້ທີ່ເວັ້ນໂພຊນະອັນປານີຕ ກໍເປັນຢູ່ຜາສຸກ
ທີ່ຊື່ວ່າ ຜູ້ເປັນໄຂ້ ຄື ຜູ້ທີ່ເວັ້ນໂພຊນະອັນປານີຕ ຈະບໍ່ມີຄວາມຜາສຸກ
ພິກສຸບໍ່ເປັນໄຂ້ອອກປາກຂໍມາເພື່ອຕົນ ຕ້ອງອາບັຕິທຸກກຕທຸກໆຄັ້ງທີ່ພຍາຍາມ
ພິກສຸຮັບໄວ້ດ້ວຍຕັ້ງໃຈວ່າ ຈະສັນຂອງທີ່ໄດ້ ຕ້ອງອາບັຕິທຸກກຕ
ພິກສຸສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄໍາກືນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ໂພຊນວັຄ ໙. ປນີຕໂພຊນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໓໑] ບໍ່ເປັນໄຂ້ ພິກສຸສໍາຄັນວ່າບໍ່ເປັນໄຂ້ ອອກປາກຂໍໂພຊນະອັນປານີຕມາເພື່ອຕົນແລ້ວສັນ ຕ້ອງອາບັຕິປາຈິຕຕີຍ໌
ບໍ່ເປັນໄຂ້ ພິກສຸບໍ່ແນ່ໃຈ ອອກປາກຂໍໂພຊນະອັນປານີຕມາເພື່ອຕົນແລ້ວສັນ ຕ້ອງອາບັຕິປາຈິຕຕີຍ໌
ບໍ່ເປັນໄຂ້ ພິກສຸສໍາຄັນວ່າເປັນໄຂ້ ອອກປາກຂໍໂພຊນະອັນປານີຕມາເພື່ອຕົນແລ້ວສັນ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຕ

ເປັນໄຂ້ ພິກສຸສໍາຄັນວ່າບໍ່ເປັນໄຂ້ ຕ້ອງອາບັຕິທຸກກຕ
ເປັນໄຂ້ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ເປັນໄຂ້ ພິກສຸສໍາຄັນວ່າເປັນໄຂ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໓໔] ໑. ພິກສຸເປັນໄຂ້
໒. ພິກສຸເປັນໄຂ້ອອກປາກຂໍມາແລ້ວຫາຍເປັນໄຂ້ຈຶ່ງສັນ
໓. ພິກສຸສັນໂພຊນະທີ່ເຫລືອຂອງພິກສຸເປັນໄຂ້
໔. ພິກສຸອອກປາກຂໍຈາກຍາຕ

໕. ພິກສຸອອກປາກຂໍຈາກຄນປວາຣນາ
໖. ພິກສຸອອກປາກຂໍເພື່ອພິກສຸອື່ນ
໗. ພິກສຸຈ່າຍມາດ້ວຍຊັພຍ໌ຂອງຕົນ
໘. ພິກສຸວິກົລຈິຕ
໙. ພິກສຸຕົ້ນບັນຍັດ

ປຏິຕໂພຊນສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໔. ໂພຊນວັຄ ໑໐. ທັນຕໂປນສິກຂາບົທ ນິທານວັຕຖຸ

໔. ໂພຊນວັຄ

໑໐. ທັນຕໂປນສິກຂາບົທ

ວ່າດ້ວຍການຮັບປະເຄນອາຫານນອກຈາກນ້ຳແລະໄມ້ຊຳຣະແຂ້ວ

ເຣື້ອງພິກສຸຣູບນຶ່ງ

[໔໖໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພິກສຸຣູບນຶ່ງຜູ້ຖືວ່າທຸກຢ່າງເປັນຂອງບັງສຸກຸລ ພັກຢູ່ໃນປ່າຊ້າ ທ່ານບໍ່ປຣາຖນາຮັບພັຕຕາຫານທີ່ພວກຊາວບ້ານຖວາຍ ທຽວຖືເອົາເຄື່ອງເຊ່ນຕາມປ່າຊ້າເຫງົ້າໄມ້ຫລືທໍຣນີປະຕູມາສັນ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸນີ້ຈຶ່ງຖືເອົາເຄື່ອງເຊ່ນຂອງພວກເຮົາໄປສັນເອງລະ ພິກສຸນີ້ອ້ວນລ່ຳ ເຫັນທີຈະສັນຊີ້ນມນຸສຍ໌ແລ້ວຕີບໍ່" ພວກພິກສຸໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງກືນອາຫານທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ

ນັ້ນວ່າ "ພິກສຸ ຊາບວ່າ ທ່ານສັນອາຫາຣທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍ ແມ່ນແທ້ບໍ່" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງກິນອາຫາຣທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດກິນອາຫາຣທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລຳຄອ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸຮູບນຶ່ງ ຈົບ

ຊົງອນຸຍາຕນ້ຳແລະໄມ້ຊຳຣະແຂ້ວ

[໒໖໔] ສມັຍນັ້ນ ພິກສຸທັງຫລາຍມີຄວາມຢຳເກງ ບໍ່ຍອມຫຍິບນ້ຳແລະໄມ້ຊຳຣະຟັນໃຊ້ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຊົງອນຸຍາຕວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຖືເອົານ້ຳແລະໄມ້ຊຳຣະແຂ້ວມາໃຊ້ເອງໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໒໖໕] ອີກຢ່າງນຶ່ງ ພິກສຸໃດກິນອາຫາຣທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລົງລຳຄໍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທວິພັງຄ໌

[໒໖໖] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ຊຸ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ທີ່ຍັງບໍ່ມີຜູ້ຖວາຍ ທ່ານກ່າວເຖິງຂອງທີ່ຍັງບໍ່ໄດ້ຮັບປະເຄນ

ລັກສູນະກາຣຮັບປະເຄນ
ທີ່ຊື່ວ່າ ມີຜູ້ຖວາຍ ຄື (໑) ເຂົາຖວາຍດ້ວຍກາຍ ດ້ວຍຂອງເນື່ອງດ້ວຍກາຍ ຫລືດ້ວຍໂຍນໃຫ້ (໔) ເຂົາຢູ່ໃນຫັດຖບາສ (໓) ພິກສຸຮັບປະເຄນດ້ວຍກາຍຫລືດ້ວຍຂອງເນື່ອງດ້ວຍກາຍ ນີ້ຊື່ວ່າມີຜູ້ຖວາຍ
ທີ່ຊື່ວ່າ ອາຫາຣ ໄດ້ແກ່ ຂອງທີ່ສັນໄດ້ ຍົກເວັ້ນນ້ຳແລະໄມ້ຊຳຣະແຂ້ວ ນີ້ຊື່ວ່າອາຫາຣ
ຄຳວ່າ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຄື ຍົກເວັ້ນນ້ຳແລະໄມ້ຊຳຣະແຂ້ວ
ພິກສຸຖືເອົາດ້ວຍຕັ້ງໃຈວ່າ ຈະຄ້ຽວ ຈະສັນ ຕ້ອງອາບັຕິທຸກກຕ
ພິກສຸສັນ ຕ້ອງອາບັຕິປາຈິຕຕີຍ໌ທຸກໆຄຳກືນ

ບົທພູາຊນີຍ໌

ຕິກປາຈິຕຕີຍ໌
[໔໖໗] ອາຫາຣທີ່ຍັງບໍ່ໄດ້ຮັບປະເຄນ ພິກສຸສຳຄັນວ່າຍັງບໍ່ຮັບປະເຄນ ສັນອາຫາຣທີ່ຍັງບໍ່ມີຜູ້ຖວາຍໃຫ້ລ່ວງລຳຄໍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັຕິປາຈິຕຕີຍ໌
ອາຫາຣທີ່ຍັງບໍ່ໄດ້ຮັບປະເຄນ ພິກສຸບໍ່ແນ່ໃຈ ສັນອາຫາຣທີ່ບໍ່ມີຜູ້ຖວາຍໃຫ້ລ່ວງລຳຄໍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງປາຈິຕຕີຍ໌
ອາຫາຣທີ່ຍັງບໍ່ໄດ້ຮັບປະເຄນ ພິກສຸສຳຄັນວ່າຮັບປະເຄນ ສັນອາຫາຣທີ່ບໍ່ມີຜູ້ຖວາຍ ນອກຈາກນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຕ
ອາຫາຣທີ່ຮັບປະເຄນ ພິກສຸສຳຄັນວ່າຍັງບໍ່ໄດ້ຮັບປະເຄນ ຕ້ອງອາບັຕິທຸກກຕ
ອາຫາຣທີ່ຮັບປະເຄນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ອາຫາຣທີ່ຮັບປະເຄນ ພິກສຸສຳຄັນວ່າຮັບປະເຄນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໔. ໂພຊນວັຄ ຮວມສິກຂາບົທທີ່ມີໃນໂພຊນວັຄ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໖໘] ໑. ພິກສຸໃຊ້ນ້ຳແລະໄມ້ຊຳຣະແຂ້ວ
໒. ພິກສຸຫຍິບຍາມຫາວິກັຕິ ໔ ສັນເອງໄດ້ ເມື່ອມີເຫດຜົນທີ່ສົມຄວນ ໃນເມື່ອບໍ່ມີກັປປິຍກາຣກ ຖວາຍ
໓. ພິກສຸວິກົລຈິດ
໔. ພິກສຸຕົ້ນບັນຍັດ

ທັນຕໂປນສິກຂາບົທທີ ໑໐ ຈົບ
ໂພຊນວັຄທີ ໔ ຈົບ

ຣວມສິກຂາບົທທີ່ມີໃນໂພຊນວັຄ

ໂພຊນວັຄມີ ໑໐ ສິກຂາບົທ ຄື
໑. ອາວສຖປິນທສິກຂາບົທ ວ່າດ້ວຍການສັນພັຕຕາຫານໃນທີ່ພັກແຮມ
໒. ຄນໂພຊນສິກຂາບົທ ວ່າດ້ວຍການສັນຄນໂພຊນະ
໓. ປຣັມປຣໂພຊນສິກຂາບົທ ວ່າດ້ວຍການສັນປຣັມປຣໂພຊນະ
໔. ກາມມາຕຸສິກຂາບົທ ວ່າດ້ວຍມາຣດາຂອງນາງການາ
໕. ປຖມປວາຣນາສິກຂາບົທ ວ່າດ້ວຍການບອກຫ້າມພັຕຕາຫານຂໍ້ທີ ໑
໖. ທຸຕິຍປວາຣນາສິກຂາບົທ ວ່າດ້ວຍການບອກຫ້າມພັຕຕາຫານຂໍ້ທີ ໒
໗. ວິການໂພຊນສິກຂາບົທ ວ່າດ້ວຍການສັນໂພຊນະໃນເວລາວິການ
໘. ສັນນິທິການກສິກຂາບົທ ວ່າດ້ວຍການສະສົມໂພຊນະ
໙. ປນີຕໂພຊນສິກຂາບົທ ວ່າດ້ວຍການອອກປາກຂໍໂພຊນະອັນປານີຕ
໑໐. ທັນຕໂປນສິກຂາບົທ ວ່າດ້ວຍການຮັບປະເຄນອາຫານນອກຈາກນ້ຳແລະໄມ້ຊຳຣະແຂ້ວ

ເຊີງອັນຖະ :

໑ ຍາມຫາວິກຕິ ໔ ຄື ຄູຖ ມູຕຣ ເຖົ່າ ດິນ (ວິ. ມ. ໕/໒໖໘/໓໖) ພິກສຸອາພາທຫລືຖືກສັຕວ໌ມີພິສຸກັດຕອດ ຫຍິບສັນໄດ້ໂດຍບໍ່ຕ້ອງຮັບປະເຄນ ຖ້າບໍ່ອາພາທກໍຄວນຈະຮັບປະເຄນ (ວິ. ອ. ໓/໒໖໘/໑໗໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໑. ອເຈລກສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

ໝວດວ່າດ້ວຍນັກບວຊເປືອຍ

໑. ອເຈລກສິກຂາບົທ

ວ່າດ້ວຍນັກບວຊເປືອຍ

ເຣື້ອງພຣະອານົນທ໌

[໔໓໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ກູຕາຄາຣສາລາ ປ່າມຫາວັນ ເຂຕກຸງເວສາລີ ຄັ້ງນັ້ນ ພຣະສົງຂ໌ມີຂອງຄ້ຽວເຫລືອເຟືອ ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງວ່າ "ອານົນທ໌ ຖ້າເຊັ່ນນັ້ນທ່ານຈົ່ງແຈກຂນົມເປັນທານແກ່ພວກຄົນກິນເດນ" ທ່ານພຣະອານົນທ໌ທູລຮັບສນອງພຣະດຳຣັສຂອງພຣະຜູ້ມີພຣະພາຄ ແລ້ວຈັດພວກຄົນກິນເດນໃຫ້ນັ່ງຕາມລຳດັບ ແຈກຂນົມໃຫ້ຄົນລະຕ່ອນແຈກຂນົມໃຫ້ປຣິພາຊິກາຄົນນຶ່ງ ໔ ຕ່ອນດ້ວຍສຳຄັນວ່າເປັນຕ່ອນດຽວ ພວກປຣິພາຊິກາທີ່ຢູ່ໃກ້ໆໄດ້ກ່າວກັບປຣິພາຊິການັ້ນດັ່ງນີ້ວ່າ "ສມນະຣູບນັ້ນເປັນຄູ່ຮັກຂອງທ່ານຫລື" ປຣິພາຊິການັ້ນຕອບວ່າ "ສມນະຣູບນັ້ນບໍ່ແມ່ນຄູ່ຮັກຂອງຂະນ້ອຍ ທ່ານແຈກໃຫ້ ໔ ຕ່ອນດ້ວຍສຳຄັນວ່າແມ່ນຕ່ອນດຽວ"
ແມ່ນຄັ້ງທີ ໔ ທ່ານພຣະອານົນທ໌ກໍແຈກຂນົມໃຫ້ປຣິພາຊິການັ້ນ ໔ ຕ່ອນດ້ວຍສຳຄັນວ່າເປັນຕ່ອນດຽວ ພວກປຣິພາຊິກາທີ່ຢູ່ໃກ້ໆໄດ້ກ່າວກັບປຣິພາຊິການັ້ນ ດັ່ງນີ້ວ່າ "ສມນະຣູບນັ້ນເປັນຄູ່ຮັກຂອງທ່ານຫລື" ປຣິພາຊິການັ້ນຕອບວ່າ "ສມນະຣູບນັ້ນບໍ່ແມ່ນຄູ່ຮັກຂອງຂະນ້ອຍ ທ່ານແຈກໃຫ້ ໔ ຕ່ອນ ດ້ວຍສຳຄັນວ່າເປັນຕ່ອນດຽວ"
ແມ່ນຄັ້ງທີ ໓ ທ່ານພຣະອານົນທ໌ກໍແຈກຂນົມໃຫ້ປຣິພາຊິການັ້ນ ໔ ຕ່ອນດ້ວຍສຳຄັນວ່າເປັນຕ່ອນດຽວ ພວກປຣິພາຊິກາທີ່ຢູ່ໃກ້ໆໄດ້ກ່າວກັບປຣິພາຊິການັ້ນດັ່ງນີ້ວ່າ "ສມນະຣູບນັ້ນເປັນຄູ່ຮັກຂອງທ່ານຫລື" ປຣິພາຊິການັ້ນຕອບວ່າ "ສມນະຣູບນັ້ນບໍ່ແມ່ນຄູ່ຮັກຂອງຂະນ້ອຍ ທ່ານແຈກໃຫ້ ໔ ຕ່ອນ ດ້ວຍສຳຄັນວ່າເປັນຊິ້ນດຽວ"
ພວກປຣິພາຊິກາເຫລົ່ານັ້ນໂຕ້ຖຽງກັນວ່າ "ເປັນຄູ່ຮັກ ບໍ່ແມ່ນຄູ່ຮັກ"
ອາຊີວກອີກຄົນນຶ່ງໄດ້ເຂົ້າໄປທີ່ທີ່ລ້ຽງອາຫາຣ ພິກສຸຣູບນຶ່ງຄັ້ນເຂົ້າກັບເນີຍໃສ່ຈຳນວນຫລາຍ ໄດ້

ແຈກເຂົ້າກ້ອນໃຫຍ່ແກ່ອາຊີວົກນັ້ນ ຄັນແລ້ວ ອາຊີວົກນັ້ນໄດ້ຖືກ້ອນເຂົ້ານັ້ນໄປ ອາຊີວົກອີກຄົນນຶ່ງ ໄດ້ກ່າວກັບອາຊີວົກນັ້ນດັ່ງນີ້ວ່າ "ທ່ານໄດ້ກ້ອນເຂົ້າມາຈາກທີ່ໃດ" ອາຊີວົກນັ້ນຕອບວ່າ "ຂ້າພະເຈົ້າໄດ້ມາຈາກທີ່ລ້ຽງອາຫານຂອງຄຫບໍດີໂລ້ນສມນູໂຄດົມ" ພວກອຸບາສົກໄດ້ຍິນອາຊີວົກເຫລົ່ານັ້ນສົນທນາກັນ ລຳດັບນັ້ນ ອຸບາສົກເຫລົ່ານັ້ນໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວ ໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວນັ່ງ ນະ ທີ່ສົມຄວຣ ອຸບາສົກເຫລົ່ານັ້ນຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ພຣະພຸທທເຈົ້າຂ້າ ພວກເດັຽຣະຖີຍ໌ເຫລົ່ານີ້ຕ້ອງການຕິຕຽນພຣະພຸທທ ຕ້ອງການຕິຕຽນພຣະທັມ ຕ້ອງການຕິຕຽນພຣະສົງຂ໌ ຂໍປະທານໂອກາສເຖີດ ພຣະພຸທທເຈົ້າຂ້າ ພຣະຄຸນເຈົ້າທັງຫລາຍໂປຣດຢ່າໃຫ້ສິ່ງຂອງແກ່ພວກເດັຽຣະຖີຍ໌ດ້ວຍມືຕົນເອງເລີຍ"

ລຳດັບນັ້ນ ພຣະຜູ້ມີພຣະພາຄໄດ້ຊົງຊີ້ແຈງໃຫ້ອຸບາສົກເຫລົ່ານັ້ນເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານ ດ້ວຍທັມມີກຖາ ຈາກນັ້ນ ອຸບາສົກເຫລົ່ານັ້ນຊຶ່ງພຣະຜູ້ມີພຣະພາຄໄດ້ຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນ ເບີກບານທັມມີກຖາແລ້ວ ໄດ້ລຸກຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄທຳປຣະທັກສິນ(ວຽນໄປທາງຂວາ) ແລ້ວຈາກໄປ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສະແດງທັມມີກຖາແກ່ພິກສຸທັງຫລາຍໃຫ້ສົມຄວຣໃຫ້ເຫມາະສົມກັບເຣື່ອງນັ້ນ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ພິກສຸທັງຫລາຍໂດຍອາສັຍອຳນາຈປໂຍດ ໑໐ ປະການ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຂ໌

໔. ເພື່ອຄວາມຜາສຸກແຫ່ງສົງຂ໌ ຯລຯ

໑໐. ເພື່ອເອື້ອເຟື້ອວິນັຍ"໑

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔ກ໐] ກໍ ພິກສຸໃດໃຫ້ຂອງຄ້ຽວຫລືຂອງສັນແກ່ອເຈລກ ປຣິພາຊກຫລືປຣິພາຊິກາດ້ວຍມືຕົນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອານົນທ໌ ຈົບ

ສິກຂາບົທວິພັງຄ໌

[໔ກ໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ອເຈລກ ໄດ້ແກ່ ຊີເປືອຍຄົນໃດຄົນນຶ່ງຢູ່ໃນລັທທິປຣິພາຊກ

ທີ່ຊື່ວ່າ ປຣິພາຊກ ໄດ້ແກ່ ນັກບວຊຄົນໃດຄົນນຶ່ງຢູ່ໃນລັທທິປຣິພາຊກ ຍົກເວັ້ນພິກສຸແລະສາມເນຣ

ເຊີງອັນຖະ :

໑ ເບິ່ງຄວາມພິສດາຣ ຂໍ້ ໕໖໖ ຫນ້າ ລ໔ ໃນເຫລັ້ມນີ້

ທີ່ຊື່ວ່າ ປຣິພາຊິກາ ໄດ້ແກ່ ນັກບວຊຍິງຄົນໃດຄົນນຶ່ງນັບເນື່ອງໃນລັທທິປຣິພາຊກ ຍົກເວັ້ນພິກສຸນີ ສິກຂມານາແລະສາມເນຣີ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຢ່າງ ນ້ຳແລະໄມ້ຊຳຣະແຂ້ວ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຢ່າງຄື ເຂົ້າສຸກ ຂນົມສດ ເຂົ້າຕູ ປາ ຊີ້ນ

ຄຳວ່າ ໃຫ້ ຄື ພິກສຸໃຫ້ດ້ວຍກາຍ ດ້ວຍຂອງເນື່ອງດ້ວຍກາຍ ຫລືດ້ວຍໂຍນໃຫ້ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔ກ໔] ເດັຽຣະຖີຍ໌໑ ພິກສຸສຳຄັນວ່າເປັນເດັຽຣະຖີຍ໌ ໃຫ້ຂອງຄ້ຽວຫລືຂອງສັນດ້ວຍມືຕົນ ຕ້ອງອາບັຕິປາຈິຕຕີຍ໌

ເດັຽຣະຖີຍ໌ ພິກສຸບໍ່ແນ່ໃຈ ໃຫ້ຂອງຄ້ຽວຫລືຂອງສັນດ້ວຍມືຕົນ ຕ້ອງອາບັຕິປາຈິຕຕີຍ໌

ເດັຽຣະຖີຍ໌ ພິກສຸສຳຄັນວ່າບໍ່ແມ່ນເດັຽຣະຖີຍ໌ໃຫ້ຂອງຄ້ຽວຫລືຂອງສັນດ້ວຍມືຕນ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ພິກສຸໃຫ້ນ້ຳແລະໄມ້ຊຳຣະແຂ້ວ ຕ້ອງອາບັຕິທຸກກຕ

ບໍ່ແມ່ນເດັຽຣະຖີຍ໌ ພິກສຸສຳຄັນວ່າເປັນເດັຽຣະຖີຍ໌ ຕ້ອງອາບັຕິທຸກກຕ

ບໍ່ແມ່ນເດັຽຣະຖີຍ໌ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນເດັຽຣະຖີຍ໌ ພິກສຸສຳຄັນວ່າບໍ່ແມ່ນເດັຽຣະຖີຍ໌ ບໍ່ຕ້ອງອາບັຕິ

ເຊີງອັນຖະ :

໑ ເດັຽຣະຖີຍ໌ ຄືຜູ້ຖືລັທທິນອກພຣະພຸທທສາສນາ ເປັນນັກບວຊຜູ້ຖືລັທທິອື່ນ (ວິ. ອ. ໓/໑໖໔/໑໐໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໑. ອເຈລກສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໓] ໑. ພິກສຸໃຊ້ໃຫ້ຜູ້ອື່ນໃຫ້ ບໍ່ໄດ້ໃຫ້ເອງ

໒. ພິກສຸວາງໃຫ້

໓. ພິກສຸໃຫ້ຂອງໄລ້ທາພາຍນອກ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ອເຈລກສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໔. ອຸຍໂຍຊນສິກຂາບົທ
ນິທານວັຕຖຸ

໕. ອເຈລກວັຄ

໔. ອຸຍໂຍຊນສິກຂາບົທ

ວ່າດ້ວຍການສົ່ງກັບ

ເຣື້ອງພຣະອຸປນັນທສູ່າກຍບຸຕຣ

[໔໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສູ່າກຍບຸຕຣໄດ້ກ່າວຊັກຊວນສັທທິວິຫາຣິກ ຂອງພຣະອ້າຍວ່າ "ທ່ານຈົ່ງມາເຖີດ ພວກເຮົາຈະໄປບິນທບາຕໃນຫມູ່ບ້ານ" ແລ້ວບໍ່ໄດ້ໃຫ້ ທາຍົກຖວາຍຫຍັງແກ່ທ່ານ ນິມົນຕ໌ກັບດ້ວຍກ່າວວ່າ "ທ່ານຈົ່ງກັບໄປເຖີດ ເວົ້າຫລືນັ່ງກັບທ່ານ ບໍ່ ເຮັດໃຫ້ເຮົາສະບາຍ ເຮົາເວົ້າຫລືນັ່ງຄົນດຽວສະບາຍກວ່າ" ເມື່ອໃກ້ເວລາສັນແລ້ວ ພິກສຸນັ້ນບໍ່ສາ ມາດຫາບິນທບາຕສັນໄດ້ທັນ ແມ່ນໄປຮັບພັຕຕາຫາຣທີ່ເຂົາແຈກໃນໂຮງສັນກໍບໍ່ທັນ ຈຶ່ງບໍ່ໄດ້ສັນ ພັຕຕາຫາຣ ຄັນພິກສຸນັ້ນໄປເຖິງອາຣາມ ຈຶ່ງເລົ່າເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສູ່າກຍ ບຸຕຣກ່າວຊັກຊວນພິກສຸວ່າ 'ທ່ານຈົ່ງມາເຖີດ ພວກເຮົາຈະໄປບິນທບາຕໃນຫມູ່ບ້ານ ແລ້ວບໍ່ໄດ້ ໃຫ້ທາຍົກຖວາຍຫຍັງແກ່ທ່ານ ແລ້ວນິມົນຕ໌ກັບລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະອຸປນັນ ທສູ່າກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸຊົງສອບຖາມທ່ານ ພຣະອຸປນັນທສູ່າກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານກ່າວຊັກຊວນພິກສຸວ່າ ທ່ານຈົ່ງມາເຖີດ ພວກເຮົາຈະໄປບິນທບາຕໃນຫມູ່ບ້ານ ແລ້ວບໍ່ໄດ້ໃຫ້ທາຍົກຖວາຍຫຍັງແກ່ທ່ານ ແລ້ວນິມົນຕ໌ກັບ ແມ່ນແທ້ບໍ" ທ່ານພຣະອຸປນັນທສູ່າກຍບຸຕຣທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະ ພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງກ່າວຊັກຊວນພິກສຸວ່າ ທ່ານຈົ່ງມາ ເຖີດ ພວກເຮົາຈະໄປບິນທບາຕໃນຫມູ່ບ້ານແລ້ວບໍ່ໄດ້ໃຫ້ທາຍົກຖວາຍຫຍັງແກ່ທ່ານ ແລ້ວນິມົນຕ໌ ກັບລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລື

ເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໕] ກໍ ພິກສຸໃດກ່າວຊັກຊວນພິກສຸວ່າ “ທ່ານຈົ່ງມາເຖີດ ພວກເຮົາຈະໄປບິນທບາຕໃນຫມູ່ບ້ານຫລືໃນນິຄົມ” ແລ້ວໃຫ້ທາຍົກຖວາຍຫລືບໍ່ໃຫ້ທາຍົກຖວາຍແກ່ທ່ານແລ້ວນິມົນຕ໌ກັບດ້ວຍກ່າວວ່າ “ທ່ານຈົ່ງກັບໄປເຖີດ ເວົ້າຫລືນັ່ງກັບທ່ານບໍ່ເຮັດໃຫ້ເຮົາສະບາຍ ເຮົາເວົ້າຫລືນັ່ງຄົນດຽວສະບາຍກວ່າ” ມີເຫຕຸຜົລພຽງເທົ່ານີ້ ບໍ່ມີຫຍັງອື່ນ ຕ້ອງອາບັຕິປາຈິຕຕີຍ໌

ເລື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໔໗໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ຫມາຍເຖິງ ພິກສຸຮູບອື່ນ

ຄຳວ່າ ທ່ານຈົ່ງມາເຖີດ. . . ໃນຫມູ່ບ້ານຫລືໃນນິຄົມ ຄື ຫມູ່ບ້ານກໍດີ ນິຄົມກໍດີ ເມືອງກໍດີ ຊື່ວ່າຫມູ່ບ້ານແລະນິຄົມ

ຄຳວ່າ ໃຫ້ທາຍົກຖວາຍແກ່ທ່ານ ຄື ໃຫ້ເຂົາຖວາຍເຂົ້າຕົ້ມ ເຂົ້າສວຍ ຂອງຄ້ຽວຫລືຂອງສັນ

ຄຳວ່າ ບໍ່ໃຫ້ທາຍົກຖວາຍ ຄື ບໍ່ໃຫ້ທາຍົກຖວາຍຫຍັງໆ

ຄຳວ່າ ນິມົນຕ໌ກັບ ຄວາມວ່າ ພິກສຸປຣາຖນາຈະກຣະຊິກກຣະຊີ້ ປຣາຖນາຈະຫຍອກເຍົ້າ ປຣາຖນາຈະນັ່ງໃນທີ່ລັບ ຫລືປຣາຖນາຈະປະພຶດອນາຈາຣກັບມາຕຸຄາມ ກ່າວນິມົນຕ໌ກັບຢ່າງນີ້ວ່າ “ທ່ານຈົ່ງກັບໄປເຖີດ ເວົ້າຫລືນັ່ງກັບທ່ານ ບໍ່ເຮັດໃຫ້ເຮົາສະບາຍ ເຮົາເວົ້າຫລືນັ່ງຄົນດຽວສະບາຍກວ່າ” ຕ້ອງອາບັຕິທຸກກຕ ເມື່ອທ່ານໄປເຖິງຣະຍະທີ່ເບິ່ງ ບໍ່ເຫັນຫລືບໍ່ໄດ້ຍິນສຽງ ພິກສຸຮູບທີ່ນິມົນຕ໌ກັບຕ້ອງອາບັຕິທຸກກຕ ເມື່ອທ່ານໄປຈົນພົ້ນ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ມີເຫຕຸຜົລພຽງເທົ່ານີ້ບໍ່ມີຫຍັງອື່ນ ຄວາມວ່າ ບໍ່ມີເຫຕຸຜົລຢ່າງອື່ນເພື່ອສົ່ງກັບ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໗໗] ອຸປສັມບັນ ພິກສຸສໍາຄັນວ່າເປັນອຸປສັມບັນ ນິມົນຕ໌ກັບ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກສຸບໍ່ແນ່ໃຈ ນິມົນຕ໌ກັບ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກສຸສໍາຄັນວ່າເປັນອນຸປສັມບັນ ນິມົນຕ໌ກັບ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸທໍາເປັນໂກດ ນິມົນຕ໌ກັບ ຕ້ອງອາບັຕິທຸກກຕ
ພິກສຸນິມົນຕ໌ອນຸປສັມບັນກັບ ຕ້ອງອາບັຕິທຸກກຕ
ພິກສຸທໍາເປັນໂກດ ນິມົນຕ໌ກັບ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸສໍາຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸສໍາຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໗໘] ໑. ພິກສຸນິມົນຕ໌ກັບດ້ວຍຄິດວ່າ ເຮົາສອງຮູບສັນດ້ວຍກັນ ພັຕຕາຫາຣຈະບໍ່ພໍ
໒. ພິກສຸນິມົນຕ໌ກັບດ້ວຍຄິດວ່າ ຮູບນັ້ນພົບຂອງມີຄ່າແລ້ວຈະເກີດຄວາມໂລພ
໓. ພິກສຸນິມົນຕ໌ກັບດ້ວຍຄິດວ່າ ຮູບນັ້ນເຫັນມາຕຸຄາມແລ້ວຈະເກີດຄວາມກໍາຫນັດ
໔. ພິກສຸນິມົນຕ໌ກັບດ້ວຍສັ່ງວ່າ ທ່ານຈົ່ງນໍາເຂົ້າຕົ້ມ ເຂົ້າສວຍ ຫລືຂອງຄ້ຽວຂອງສັນໄປຖວາຍ
ພິກສຸເປັນໄຂ້ ພິກສຸຜູ້ຕກຄ້າງຢູ່ ຫລືພິກສຸຜູ້ເຝົ້າວິຫາຣ
໕. ພິກສຸບໍ່ປະສົງຄ໌ຈະປະພຶດອນາຈາຣແຕ່ມີທຸຣະຈໍາເປັນຈຶ່ງສົ່ງກັບ
໖. ພິກສຸວິກົລຈິຕ
໗. ພິກສຸຕົ້ນບັນຍັດ

ອຸຍໂຍຊນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໓. ສໂພຊນສິກຂາບົທ ນິທານ ວັຕຖຸ

၅. ອເຈລກວັຄ

၆. ສໂພຊຸນສິກຂາບົທ
ວ່າດ້ວຍການເຂົ້າໄປແຊກແຊງໃນບ່ອນທີ່ມີຄົນ ၄ ຄົນ

ເຣື້ອງພຣະອຸປນັນທສູາກຍບຸຕຣ
[၄ກຸລ] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສູາກຍບຸຕຣໄດ້ໄປເຮືອນຂອງສະຫາຍແລ້ວ ໄດ້ນັ່ງໃນຫ້ອງນອນກັບພັຣຍາຂອງສະຫາຍ ເທື່ອນັ້ນ ສະຫາຍນັ້ນໄດ້ເຂົ້າໄປຫາທ່ານພຣະອຸປນັນ ທສູາກຍບຸຕຣເຖິງອາສນະ ຄັນເຖິງແລ້ວໄດ້ໄຫວ້ທ່ານພຣະອຸປນັນທສູາກຍບຸຕຣ ແລ້ວນັ່ງ ນະ ທີ່ສົມຄວຣ ສະຫາຍນັ້ນຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ກ່າວກັບພັຣຍາດັ່ງນີ້ວ່າ “ທ່ານຈົ່ງຖວາຍ ພິກສູາຫາຣແດ່ພຣະຄຸນເຈົ້າ” ລຳດັບນັ້ນ ພັຣຍາຂອງສະຫາຍນັ້ນໄດ້ຖວາຍພິກສູາຫາຣແກ່ທ່ານ ອຸປນັນທສູາກຍບຸຕຣແລ້ວ ຄັ້ງນັ້ນ ສະຫາຍນັ້ນໄດ້ກ່າວກັບທ່ານພຣະອຸປນັນທສູາກຍບຸຕຣດັ່ງນີ້ວ່າ “ນິມົນຕ໌ພຣະຄຸນເຈົ້າກັບໄປເຖີດຂນ້ອຍ ເພາະໄດ້ຖວາຍພິກສູາຫາຣແດ່ພຣະຄຸນເຈົ້າແລ້ວ” ພັຣຍາ ຂອງສະຫາຍນັ້ນກຳຫນົດຮູ້ວ່າສາມີຖືກຣາຄະຫຸ້ມລ້ອມແລ້ວ ຈຶ່ງໄດ້ກ່າວກັບທ່ານພຣະອຸປນັນທສູາກຍ ບຸຕຣດັ່ງນີ້ວ່າ “ພຣະຄຸນເຈົ້າ ນິມົນຕ໌ທ່ານນັ່ງຢູ່ເຖີດ ຢ່າຟ້າວກັບ” ແມ່ນຄັ້ງທີ ၄ ສະຫາຍນັ້ນ ຯລຯ

ແມ່ນຄັ້ງທີ ၆ ສະຫາຍນັ້ນໄດ້ກ່າວກັບທ່ານພຣະອຸປນັນທສູາກຍບຸຕຣດັ່ງນີ້ວ່າ “ນິມົນຕ໌ພຣະຄຸນເຈົ້າ ກັບໄປເຖີດຂນ້ອຍ ເພາະໄດ້ຖວາຍພິກສູາຫາຣແດ່ພຣະຄຸນເຈົ້າແລ້ວ” ແມ່ນຄັ້ງທີ ၆ ພັຣຍາຂອງ ສະຫາຍນັ້ນ ກໍໄດ້ກ່າວກັບທ່ານພຣະອຸປນັນທສູາກຍບຸຕຣດັ່ງນີ້ວ່າ “ພຣະຄຸນເຈົ້າ ນິມົນຕ໌ທ່ານນັ່ງຢູ່ ເຖີດ ຢ່າຟ້າວກັບ” ຄັ້ງນັ້ນ ສະຫາຍຂອງທ່ານພຣະອຸປນັນທສູາກຍບຸຕຣ ໄດ້ອອກໄປທຽວຟ້ອງ ພິກສຸທັງຫລາຍວ່າ “ພຣະຄຸນເຈົ້າອຸປນັນທສູາກຍບຸຕຣຮູບນີ້ນັ່ງໃນຫ້ອງນອນກັບພັຣຍາຂອງຜູ້ຂ້າ ຜູ້ຂ້ານິມົນຕ໌ໃຫ້ທ່ານກັບ ກໍບໍ່ປຣາຖນາຈະກັບ ພວກຜູ້ຂ້າມີກິຈມາກ ມີງານທີ່ຕ້ອງທຳມາກ” ບັນດາ ພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະອຸປນັນທສູາກຍ ບຸຕຣຈຶ່ງເຂົ້ານັ່ງແຊກແຊງໃນຕະກູນທີ່ມີຄົນ ၄ ຄົນລະ” ຄັນພິກສຸທັງຫລາຍຕຳຫນິທ່ານພຣະ ອຸປນັນທສູາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົ ງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໘໐] ກໍ ພິກສຸໃດເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໔໘໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ສກຸລທີ່ຊື່ວ່າ ມີຄົນ ໔ ຄົນ ຄື ສຕຣີກັບບຸຣຸສຢູ່ດ້ວຍກັນ ສຕຣີແລະບຸຣຸສຍັງບໍ່ແຍກອອກຈາກກັນ ທັງ ໔ ຄົນຍັງບໍ່ປາສຈາກຣາຄະ

ຄຳວ່າ ເຂົ້າໄປແຊກແຊງ ຄື ເຂົ້າໄປຂ້າງໃນ

ຄຳວ່າ ນັ່ງ ຄວາມວ່າ ໃນເຮືອນໃຫຍ່ ພິກສຸນັ່ງລະຫັຕຖບາສບານປະຕູ໑ ຕ້ອງອາບັຕິປາຈິຕຕີຍ໌ ໃນເຮືອນເລັກ ພິກສຸນັ່ງລ້ຳທາງກາງຫ້ອງນອນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໘໔] ຫ້ອງນອນ ພິກສຸສຳຄັນວ່າເປັນຫ້ອງນອນ ເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌

ຫ້ອງນອນ ພິກສຸບໍ່ແນ່ໃຈ ເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໔ ຄົນ ຕ້ອງອາບັຕິປາຈິຕຕີຍ໌

ຫ້ອງນອນ ພິກສຸສຳຄັນວ່າບໍ່ແມ່ນຫ້ອງນອນ ເຂົ້າໄປນັ່ງແຊກແຊງໃນຕະກູນທີ່ມີຄົນ ໒ ຄົນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກຕ

ບໍ່ແມ່ນຫ້ອງນອນ ພິກສຸສຳຄັນວ່າເປັນຫ້ອງນອນ ຕ້ອງອາບັຕິທຸກກຕ

ບໍ່ແມ່ນຫ້ອງນອນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນຫ້ອງນອນ ພິກສຸສຳຄັນວ່າບໍ່ແມ່ນຫ້ອງນອນ ບໍ່ຕ້ອງອາບັຕິ

ເຊີງອັນຖະ :

໑ ນັ່ງລະຫັຕຖບາສບານປະຕູ ຫມາຍຄວາມວ່າ ນັ່ງຫ່າງຊື່ອຣະຍະຢຽດແຂນອອກໄປຈັບຕົວຄົນທີ່ນັ່ງໃກ້ໄດ້ ເທົ່າກັບ ໒ ສູອກຄືບ (ວິ. ອ. ໒/໔໗໗-໗໘/໑໕໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໓. ສໂພຊນສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໒໗໓] ໑. ພິກສຸນັ່ງໃນເຮືອນໃຫຍ່ຫ່າງຈາກບານປະຕູບໍ່ເກີນຫັຕຖບາສ

໒. ພິກສຸນັ່ງໃນເຮືອນເລັກບໍ່ລໍ້າທາງກາງຫ້ອງນອນ

໓. ພິກສຸມີເພື່ອນຢູ່ດ້ວຍ

໔. ພິກສຸນັ່ງໃນເຮືອນທີ່ຄົນທັງສອງອອກໄປແລ້ວ

໕. ພິກສຸນັ່ງໃນເຮືອນທີ່ຄົນທັງສອງສວ່າງຈາກຣາຄະ

໖. ພິກສຸນັ່ງໃນທີ່ບໍ່ແມ່ນຫ້ອງນອນ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ສໂພຊນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນ໌ຫ໌] ໕. ອເຈລກວັຄ ໔. ຣໂຫປຕິຈສັນນສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໔. ຣໂຫປຕິຈສັນນສິກຂາບົທ

ວ່າດ້ວຍການນັ່ງໃນທີ່ລັບມີສິ່ງກຳບັງ

ເຣື້ອງພຣະອຸປນັນທສັກຍບຸຕຣ

[໔ຖ໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສັກຍບຸຕຣໄດ້ໄປເຮືອນຂອງສະຫາຍແລ້ວ ໄດ້ນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບພັຣຍາຂອງສະຫາຍ ຄັ້ງນັ້ນ ສະຫາຍນັ້ນໄດ້ຕຳໜິ ປະນາມ ໂພນທນາວ່າ "ຈັ່ງໃດພຣະຄຸນເຈົ້າອຸປນັນທສັກຍບຸຕຣຈຶ່ງນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບພັຣ ຍາຂອງຜູ້ຂ້າລະ" ພິກສຸທັງຫລາຍໄດ້ຍິນສະຫາຍຂອງທ່ານພຣະອຸປນັນທສັກຍບຸຕຣນັ້ນຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດ ທ່ານພຣະອຸປນັນທສັກຍບຸຕຣຈຶ່ງນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບມາຕຸຄາມລະ" ຄັນພິກສຸທັງ ຫລາຍຕຳໜິທ່ານພຣະອຸປນັນທສັກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະ ຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສັກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານນັ່ງເທິງອາສນະທີ່ກຳບັງໃນທີ່ລັບກັບ ມາຕຸຄາມ ແມ່ນແທ້ບໍ່" ທ່ານພຣະອຸປນັນທສັກຍບຸຕຣທູລຮັບວ່າ "ຈິງ ພຣະພຸທທເຈົ້າຂ້າ" ພຣະ ຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງນັ່ງເທິງອາສນະທີ່ກຳບັງໃນ ທີ່ລັບກັບມາຕຸຄາມລະ ໂມຂບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມ ໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"
ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໔. ຣໂຫປຕິຈສັນນສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໔໗໕] ກໍ ພິກສຸໃດນັ່ງເຫິງອາສນະທີ່ກຳບັງໃນທີ່ລັບກັບມາຕຸຄາມ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໔໗໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານ ໂຕແມ່ ຍິງມນຸສຍ໌ນັ້ນໂດຍທີ່ສຸດຈົນເມື່ອເດັກຍິງຊຶ່ງເກີດໃນມື້ນັ້ນ ຍິງໂຕກວ່ານີ້ບໍ່ຕ້ອງກ່າວເຖິງ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາແລະທີ່ລັບຫູ

ທີ່ຊື່ວ່າ ທີ່ລັບຕາ ຫມາຍເຖິງ ສຖານທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວຫລືງົກສີສະຂຶ້ນ ໃຜໆກໍບໍ່ສາມາດແລເຫັນໄດ້

ທີ່ຊື່ວ່າ ທີ່ລັບຫູ ຫມາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດຈະໄດ້ຍິນຖ້ອຍຄຳທີ່ເວົ້າກັນຕາມປົກຕິໄດ້

ອາສນະທີ່ຊື່ວ່າ ທີ່ກຳບັງ ຄື ອາສນະທີ່ກຳບັງດ້ວຍຝາ ບານປະຕູ ເສື່ອລຳແພນ ມ່ານ ຕົ້ນໄມ້ ເສົາ ຫລືພ້ອມຢ່າງໃດຢ່າງນຶ່ງ

ຄຳວ່າ ນັ່ງ ຫມາຍຄວາມວ່າ ເມື່ອມາຕຸຄາມນັ່ງ ພິກສຸນັ່ງໃກ້ ຫລືນອນໃກ້ ຕ້ອງອາບັຕິປາຈິຕຕີຍ໌

ເມື່ອພິກສຸນັ່ງ ມາຕຸຄາມນັ່ງໃກ້ຫລືນອນໃກ້ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ທັງພິກສຸແລະມາຕຸຄາມນັ່ງຫລືນອນ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໔. ຣໂຫປຕິຈສັນນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[໔໗໗] ມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ນັ່ງເຫີງອາສນະທີ່ກຳບັງໃນທີ່ລັບ ຕ້ອງອາບັຕິປາຈິຕຕິຍ໌

ມາຕຸຄາມ ພິກສຸບໍ່ແນ່ໃຈ ນັ່ງເຫີງອາສນະທີ່ກຳບັງໃນທີ່ລັບ ຕ້ອງອາບັຕິປາຈິຕຕິຍ໌

ມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ນັ່ງເຫີງອາສນະທີ່ກຳບັງໃນທີ່ລັບ ຕ້ອງອາບັຕິປາຈິຕຕິຍ໌

ຕິກທຸກກຕ

ພິກສຸນັ່ງເຫີງອາສນະທີ່ກຳບັງໃນທີ່ລັບກັບນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານມີກາຍເປັນມນຸສຍ໌ຜູ້ຍິງ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໘] ໑. ພິກສຸນັ່ງໃນທີ່ທີ່ມີບຸຣຸສຮູ້ດຽງສາຄົນນຶ່ງຢູ່ເປັນເພື່ອນ

໒. ພິກສຸຢືນບໍ່ໄດ້ນັ່ງ

໓. ພິກສຸບໍ່ໄດ້ມຸ່ງໃຫ້ເປັນທີ່ລັບ

໔. ພິກສຸນັ່ງຄິດເຣື່ອງອື່ນ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ຣໂຫປຕິຈສັນນສິກຂາບົທທີ່ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໕. ຣໂຫນິສັຊຊສິກຂາບົທ

ນິທານວັຕຖຸ

໕. ອເຈລກວັຄ

໕. ຣໂຫນິສັຊຊສິກຂາບົທ

ວ່າດ້ວຍການນັ່ງໃນທີ່ລັບ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໔໗໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣໄດ້ໄປເຮືອນຂອງສະຫາຍແລ້ວ ໄດ້ນັ່ງໃນທີ່ລັບກັບພັຣຍາຂອງສະຫາຍນັ້ນສອງຕໍ່ສອງ ຄັ້ງນັ້ນ ສະຫາຍນັ້ນໄດ້ຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າອຸປນັນທສາກຍບຸຕຣຈຶ່ງນັ່ງໃນທີ່ລັບກັບພັຣຍາຂອງຜູ້ຂ້າສອງຕໍ່ ສອງລະ" ພິກສຸທັງຫລາຍໄດ້ຍິນສະຫາຍຂອງທ່ານພຣະອຸປນັນທສາກຍບຸຕຣນັ້ນຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະ ອຸປນັນທສາກຍບຸຕຣຈຶ່ງນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງລະ" ຄັນພິກສຸທັງຫລາຍຕຳຫນິທ່ານ ພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງ ແມ່ນແທ້ບໍ" ທ່ານພຣະອຸປນັນທະທູລຣັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄ ພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຊບຸຣຸສ ຈັ່ງໃດທ່ານຈຶ່ງນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງລະ ໂມຊບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຣັບສັ່ງໃຫ້ພິກສຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໕. ອເຈລກວັຄ ໕. ຣໂຫນິສັຊຊສິກຂາບົທ
ສິກຂາບົທວິພັງຄ໌

ພຣະບັນຍັດ

[໔໙໐] ກໍ ພິກສຸໃດນັ່ງໃນທີ່ລັບກັບມາຕຸຄາມສອງຕໍ່ສອງ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໔໙໑] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຽຣະສານໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄໍາສຸພາສິຕ ທຸພພາສິຕຄໍາຫຍາບແລະຄໍາສຸພາພ

ຄໍາວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄໍາວ່າ ສອງຕໍ່ສອງ ໄດ້ແກ່ ພິກສຸກັບມາຕຸຄາມ

ທີ່ຊື່ວ່າ ທີ່ລັບ ໄດ້ແກ່ ທີ່ລັບຕາແລະທີ່ລັບຫູ

ທີ່ຊື່ວ່າ ທີ່ລັບຕາ ຫມາຍເຖິງ ສຖານທີ່ຊຶ່ງເມື່ອບຸຄຄົລຂຍິບຕາ ຍັກຄິ້ວຫລືງຶກສີສະຂຶ້ນ ໃຜໆກໍບໍ່ສາມາດເຫັນໄດ້

ທີ່ຊື່ວ່າ ທີ່ລັບຫູ ຫມາຍເຖິງ ທີ່ຊຶ່ງບໍ່ມີໃຜສາມາດຈະໄດ້ຍິນຖ້ອຍຄໍາທີ່ເວົ້າກັນຕາມປົກຕິໄດ້

ຄໍາວ່າ ນັ່ງ ຫມາຍຄວາມວ່າ ເມື່ອມາຕຸຄາມນັ່ງ ພິກສຸນັ່ງໃກ້ ຫລືນອນໃກ້ ຕ້ອງອາບັຕິປາຈິຕຕີຍ໌

ເມື່ອພິກສຸນັ່ງ ມາຕຸຄາມນັ່ງໃກ້ຫລືນອນໃກ້ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ທັງພິກສຸແລະມາຕຸຄາມນັ່ງຫລືນອນ ພິກສຸຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໕. ຣໂຫນິສັຊຊສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໙໔] ມາຕຸຄາມ ພິກສຸສໍາຄັນວ່າເປັນມາຕຸຄາມ ນັ່ງໃນທີ່ລັບສອງຕໍ່ສອງ ຕ້ອງອາບັຕິປາຈິຕຕີຍ໌

ມາຕຸຄາມ ພິກຂຸບໍ່ແນ່ໃຈ ນັ່ງໃນທີ່ລັບສອງຕໍ່ສອງ ຕ້ອງອາບັດປາຈິດຕີຍ໌
ມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ນັ່ງໃນທີ່ລັບສອງຕໍ່ສອງ ຕ້ອງອາບັດປາຈິດຕີຍ໌

ຕິກທຸກກາດ

ພິກຂຸນັ່ງໃນທີ່ລັບກັບນາງຍັກຂ໌ ນາງເຜດ ກະເທີຍ ຫລືສັດຕ໌ເດັຽຣະສານນິກາຍເປັນມນຸສຍ໌ຜູ້ຍິງ ສອງຕໍ່ສອງ ຕ້ອງອາບັດທຸກກາດ
ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັດທຸກກາດ
ບໍ່ແມ່ນມາຕຸຄາມ ພິກຂຸບໍ່ແນ່ໃຈ ຕ້ອງອາບັດທຸກກາດ
ບໍ່ແມ່ນມາຕຸຄາມ ພິກຂຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັດ

ອນາປັດຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື
[໔໙໑] ໑. ພິກຂຸນັ່ງໃນທີ່ທີ່ມີບຸຣຸສຮູ້ດຽງສາຄົນນຶ່ງຢູ່ເປັນເພື່ອນ
໒. ພິກຂຸຢືນບໍ່ໄດ້ນັ່ງ
໓. ພິກຂຸບໍ່ໄດ້ມຸ່ງທີ່ລັບ
໔. ພິກຂຸນັ່ງຄິດເຣື່ອງອື່ນ
໕. ພິກຂຸວິກົລຈິດ
໖. ພິກຂຸຕົ້ນບັນຍັດ

ຣໂຫນີສັຊຊສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໖. ຈາຣິຕຕສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໖. ຈາຣິຕຕສິກຂາບົທ

ວ່າດ້ວຍການທຽວສັນຈອນໄປ

ເຣື້ອງພຣະອຸປນັນທສັກຍບຸຕຣ

[໔໙໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂດກຸງຣາຊຄຶຫ໌ ຄັ້ງນັ້ນ ຕະກູນອຸປັຕຖາກຂອງທ່ານພຣະອຸປນັນທສັກຍບຸຕຣນິມົນຕ໌ທ່ານສັນພັຕຕາຫາຣ ແມ່ນພິກສຸເຫລົ່າອື່ນຕະກູນອຸປັຕຖາກຂອງທ່ານພຣະອຸປນັນທສັກຍບຸຕຣກໍໄດ້ນິມົນຕ໌ສັນພັຕຕາຫາຣ ຄັ້ງນັ້ນ ກ່ອນເຖິງເວລາສັນພັຕຕາຫາຣ ທ່ານພຣະອຸປນັນທສັກຍບຸຕຣເຂົ້າໄປຢັ້ງມເຢືອນຕະກູນທັງຫລາຍ ລຳດັບນັ້ນ ພິກສຸທັງຫລາຍໄດ້ກ່າວກັບທາຍົກເຫລົ່ານັ້ນດັ່ງນີ້ວ່າ "ອຸບາສິກທັງຫລາຍ ພວກທ່ານຈົ່ງຖວາຍພັຕຕາຫາຣເຖີດ" ພວກທາຍົກກ່າວວ່າ "ນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດຖ້າຈົນກວ່າພຣະຄຸນເຈົ້າອຸປນັນທສັກຍບຸຕຣຈະມາເຖີດ"

ແມ່ນຄັ້ງທີ ໒ ພິກສຸທັງຫລາຍໄດ້ກ່າວກັບທາຍົກເຫລົ່ານັ້ນດັ່ງນີ້ວ່າ "ອຸບາສິກທັງຫລາຍ ພວກທ່ານຈົ່ງຖວາຍພັຕຕາຫາຣເຖີດ" ພວກທາຍົກກ່າວວ່າ "ນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດຣອຈົນກວ່າພຣະຄຸນເຈົ້າອຸປນັນທສັກຍບຸຕຣຈະມາ"

ພໍຄັ້ງທີ ໓ ພິກສຸທັງຫລາຍໄດ້ກ່າວກັບທາຍົກເຫລົ່ານັ້ນດັ່ງນີ້ວ່າ "ອຸບາສິກທັງຫລາຍ ພວກທ່ານຈົ່ງຖວາຍພັຕຕາຫາຣເຖີດ ກ່ອນທີ່ເວລາຈະລ່ວງເລີຍໄປເສັຽ" ພວກທາຍົກຕອບວ່າ "ພຣະຄຸນເຈົ້າທັງຫລາຍ ພວກໂຍມຈັດພັຕຕາຫາຣເພາະເຫຕຸແຫ່ງພຣະຄຸນເຈົ້າອຸປນັນທສັກຍບຸຕຣ ນິມົນຕ໌ພຣະຄຸນເຈົ້າທັງຫລາຍໂປຣດຖ້າຈົນກວ່າພຣະຄຸນເຈົ້າອຸປນັນທສັກຍບຸຕຣຈະມາເຖີດ" ຄັນທ່ານພຣະອຸປນັນທສັກຍບຸຕຣເຂົ້າໄປຢັ້ງມເຢືອນ ຕະກູນທັງຫລາຍກ່ອນເຖິງເວລາສັນພັຕຕາຫາຣແລ້ວກັບໃກ້ເວລາສັນ ພິກສຸທັງຫລາຍຈຶ່ງສັນພັຕຕາຫາຣບໍ່ໄດ້ສົມໃຈ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສັກຍບຸຕຣຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫາຣແລ້ວ ຈຶ່ງຍັງທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເຖິງເວລາສັນພັຕຕາຫາຣລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະອຸປນັນທສັກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສັກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫາຣແລ້ວຍັງທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເຖິງເວລາສັນພັຕຕາຫາຣ ຈິງຫລື" ທ່ານພຣະອຸປນັນທສັກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫາຣແລ້ວ ຍັງທ່ຽວສັນ

ຈອນໄປໃນຕະກູນທັງຫລາຍກ່ອນເຖິງເວລາສັນພັຕຕາຫາຣລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫາຣຢູ່ແລ້ວ໑ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

[໔໙໕] ສມັຍນັ້ນ ຕະກູນອຸປັຕຖາກຂອງທ່ານພຣະອຸປນັນທສາກຍບຸຕຣສົ່ງຂອງຄ້ຽວໄປຖວາຍສົງຂ໌ດ້ວຍສັ່ງວ່າ "ຂໍມອບໃຫ້ພຣະຄຸນເຈົ້າອຸປນັນທສາກຍບຸຕຣເປັນຜູ້ຖວາຍສົງຂ໌" ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣກຳລັງໄປບິນທບາຕໃນຫມູ່ບ້ານ ພໍດີພວກຊາວບ້ານໄປເຖິງອາຣາມຖາມພິກສຸທັງຫລາຍວ່າ "ພຣະຄຸນເຈົ້າທັງຫລາຍ ພຣະຄຸນເຈົ້າອຸປນັນທສາກຍບຸຕຣໄປໃສ"

ເຊີງອັນຖະ :

໑ ຄືທີ່ທາຍົກຈັດຕຽມໄວ້ຖວາຍ

ພິກສຸທັງຫລາຍຕອບວ່າ "ອຸບາສິກທັງຫລາຍ ທ່ານພຣະອຸປນັນທະໄປບິນທບາຕໃນຫມູ່ບ້ານ" ພວກຊາວບ້ານຮຽນວ່າ "ພຣະຄຸນເຈົ້າທັງຫລາຍ ຂອງຄ້ຽວນີ້ມອບໃຫ້ພຣະຄຸນເຈົ້າອຸປນັນທະເປັນຜູ້ຖວາຍສົງຂ໌" ພິກສຸທັງຫລາຍນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນພຣະ ຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເອື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ພວກທ່ານຈົ່ງຮັບປະເຄນແລ້ວເກັບໄວ້ຈົນກວ່າອຸປນັນທະຈະກັບມາ" ຝ່າຍທ່ານພຣະອຸປນັນທສາກຍບຸຕຣຄິດວ່າ "ພຣະຜູ້ມີພຣະພາຄຊົງຫ້າມກາຣທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣ" ຈຶ່ງເຂົ້າໄປຢັ້ງມເຢືອນຕະກູນທັງຫລາຍພາຍຫລັງເວລາສັນພັຕຕາຫາຣ ກັບອອກມາເວລາບ່າຍ ຂອງສັນຖືກສົ່ງຄືນບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣຈຶ່ງທ່ຽວສັນຈອນໄປໃນຕະກູນທັງຫລາຍພາຍຫລັງເວລາພັຕຕາຫາຣລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະກາຣຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານທ່ຽວສັນຈອນໄປໃນຕະກູນທັງຫລາຍພາຍຫລັງເວລາສັນພັຕຕາຫາຣ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງທ່ຽວສັນຈອນໄປໃນຕະກູນທັງຫລາຍພາຍຫລັງເວລາສັນພັຕຕາຫາຣລະໂມຂບຸຣຸສ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫາຣຢູ່ແລ້ວ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣ ຫລືຫລັງເວລາສັນພັຕຕາຫາຣ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ຊົງອນຸຍາຕໃຫ້ເຂົ້າຕະກູນໄດ້ໃນສມັຍທີ່ຖວາຍຈີວອນ

[໔໙໗] ສມັຍນັ້ນ ພວກພິກສຸມີຄວາມຢໍາເກງຢູ່ຈຶ່ງບໍ່ເຂົ້າໄປຫາຕະກູນທັງຫລາຍ ໃນສມັຍທີ່ຖວາຍຈີວອນຈຶ່ງໄດ້ຈີວອນພຽງເລັກນ້ອຍ ພິກສຸທັງຫລາຍນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລໍາດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເຂົ້າໄປຫາຕະກູນທັງຫລາຍໄດ້ໃນສມັຍທີ່ຖວາຍຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫາຣຢູ່ແລ້ວ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣ ຫລືຫລັງເວລາສັນພັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ສມັຍໃນຂໍ້ນັ້ນ ຄື ສມັຍທີ່ຖວາຍຈີວອນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອະນຸຍາຕໃຫ້ເຂົ້າຕະກູນໄດ້ໃນສະໄໝທີ່ທຳຈີວອນ

[໔໙໗] ສະໄໝນັ້ນ ພິກສຸທັງຫລາຍຕັດຍິບຈີວອນຢູ່ຕ້ອງການເຂັມແດ່ ດ້າຍແດ່ ມີດແດ່ ແຕ່ມີຄວາມຢຳເກງຢູ່ຈຶ່ງບໍ່ເຂົ້າໄປຫາຕະກູນທັງຫລາຍ ພິກສຸທັງຫລາຍໄດ້ນຳເອື້ອງນີ້ໄປຂາບທູນພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເອື້ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອະນຸຍາຕໃຫ້ເຂົ້າໄປຫາຕະກູນທັງຫລາຍໄດ້ໃນສະໄໝທີ່ທຳຈີວອນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອະນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫານຢູ່ແລ້ວ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫານ ຫລືຫລັງເວລາສັນພັຕຕາຫານ ນອກສະໄໝ ຕ້ອງອາບັຕິປາຈິຕຕີຍ໌ ສະໄໝໃນຂໍ້ນັ້ນ ຄື ສະໄໝທີ່ຖວາຍຈີວອນ ສະໄໝທີ່ທຳຈີວອນ ນີ້ເປັນສະໄໝໃນຂໍ້ນັ້ນ
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອະນຸຍາຕໃຫ້ບອກລາກ່ອນເຂົ້າຕະກູນ

[໔໙໘] ສະໄໝນັ້ນ ພິກສຸທັງຫລາຍເປັນໄຂ້ຕ້ອງການເພສັຊ ແຕ່ມີຄວາມຢຳເກງຢູ່ຈຶ່ງບໍ່ເຂົ້າໄປຫາຕະກູນທັງຫລາຍ ພິກສຸທັງຫລາຍໄດ້ນຳເອື້ອງນີ້ໄປຂາບທູນພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເອື້ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອະນຸຍາຕໃຫ້ບອກລາພິກສຸທີ່ມີຢູ່ແລ້ວເຂົ້າໄປໃນຕະກູນທັງຫລາຍໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອະນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດຮັບນິມົນຕ໌ໄວ້ແລ້ວ ມີພັຕຕາຫານຢູ່ແລ້ວ ບໍ່ບອກລາພິກສຸທີ່ມີຢູ່ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫານ ຫລືຫລັງເວລາສັນພັຕຕາຫານ ນອກສະໄໝ ຕ້ອງອາບັຕິປາຈິຕຕີຍ໌ ສະໄໝໃນຂໍ້ນັ້ນ ຄື ສະໄໝທີ່ຖວາຍຈີວອນ ສະໄໝທີ່ທຳຈີວອນ ນີ້ເປັນສະໄໝໃນຂໍ້ນັ້ນ

ສິກຂາບົທວິພັງຄ໌

[៳໐໐] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ຮັບນິມົນຕ໌ໄວ້ແລ້ວ ຄື ພິກສຸຮັບນິມົນຕ໌ສັນໂພຊນະ ៥ ຢ່າງ ຢ່າງໃດ ຢ່າງນຶ່ງ

ທີ່ຊື່ວ່າ ມີພັຕຕາຫາຣຢູ່ແລ້ວ ຄື ພິກສຸມີອາຫາຣທີ່ຮັບນິມົນຕ໌ໄວ້

ທີ່ຊື່ວ່າ ພິກສຸມີຢູ່ ຄື ພິກສຸທີ່ອາຈບອກລາກ່ອນເຂົ້າບ້ານໄດ້

ທີ່ຊື່ວ່າ ພິກສຸບໍ່ມີຢູ່ ຄື ພິກສຸທີ່ບໍ່ອາຈບອກລາກ່ອນເຂົ້າບ້ານໄດ້

ທີ່ຊື່ວ່າ ກ່ອນເວລາສັນພັຕຕາຫາຣ ຄື ພິກສຸຍັງບໍ່ໄດ້ສັນພັຕຕາຫາຣທີ່ຮັບນິມົນຕ໌ໄວ້

ທີ່ຊື່ວ່າ ຫລັງເວລາສັນພັຕຕາຫາຣ ຄື ພິກສຸສັນພັຕຕາຫາຣທີ່ຮັບນິມົນຕ໌ໄວ້ ໂດຍທີ່ສຸດສັນດ້ວຍໃຊ້ປາຍຫຍ້າຄາແຕະ

ທີ່ຊື່ວ່າ ຕະກູນ ໝາຍເຖິງ ຕະກູນ ៤ ໄດ້ແກ່ ຕະກູນກສັຕຣິຍ໌ ຕະກູນພຣາມນ໌ ຕະກູນແພສຍ໌ ແລະຕະກູນສູທຣ

ຄຳວ່າ ທ່ຽວສັນຈອນໄປໃນຕະກູນທັງຫລາຍ ຄວາມວ່າ ພິກສຸກ້າວເຂົ້າອຸປຈາຣເຮືອນຂອງຜູ້ອື່ນ ຕ້ອງອາບັຕິທຸກກຏ ກ້າວຕີນທີ ១ ລ່ວງທໍຣນີປະຕູ ຕ້ອງອາບັຕິທຸກກຏ ກ້າວຕີນທີ ໒ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ນອກສມັຍ ຄື ຍົກເວັ້ນສມັຍ

ທີ່ຊື່ວ່າ ສມັຍທີ່ຖວາຍຈີວອນ ຄື ເມື່ອຍັງບໍ່ໄດ້ກຖານກຖິນ ກຳໜົດເອົາເດືອນທ້າຍແຫ່ງຣະດູຝົນ ເມື່ອກຖານກຖິນແລ້ວ ມີກຳໜົດເວລາ ៥ ເດືອນ

ທີ່ຊື່ວ່າ ສມັຍທີ່ທຳຈີວອນ ຄື ເມື່ອພິກສຸກຳລັງທຳຈີວອນ

ພຣະວິນັຍປິດົກ ມຫາວິພັງຄ໌ [៥. ປາຈິຕຕີຍກັນຖ໌] ៥. ອເຈລກວັຄ ៦. ຈາຣິຕຕສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໖໐໑] ຮັບນິມົນຕ໌ໄວ້ແລ້ວ ພິກສຸສຳຄັນວ່າຮັບນິມົນຕ໌ໄວ້ແລ້ວ ບໍ່ບອກລາພິກສຸທີ່ມີຢູ່ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣຫລືຫລັງເວລາສັນພັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ຮັບນິມົນຕ໌ໄວ້ແລ້ວ ພິກສຸບໍ່ແນ່ໃຈ ບໍ່ບອກລາພິກສຸທີ່ມີຢູ່ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣຫລືຫລັງເວລາສັນພັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ຮັບນິມົນຕ໌ໄວ້ແລ້ວ ພິກສຸສຳຄັນວ່າບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ບອກລາພິກສຸທີ່ມີຢູ່ ທ່ຽວສັນຈອນໄປໃນຕະກູນທັງຫລາຍກ່ອນເວລາສັນພັຕຕາຫາຣຫລືຫລັງເວລາສັນພັຕຕາຫາຣ ນອກສມັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກຕ

ບໍ່ໄດ້ຮັບນິມົນຕ໌ໄວ້ ພິກສຸສຳຄັນວ່າຮັບນິມົນຕ໌ໄວ້ ຕ້ອງອາບັຕິທຸກກຕ

ບໍ່ໄດ້ຮັບນິມົນຕ໌ໄວ້ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ໄດ້ຮັບນິມົນຕ໌ໄວ້ ພິກສຸສຳຄັນວ່າບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໐໔] ໑. ພິກສຸສັນໃນສມັຍ

໔. ພິກສຸບອກລາພິກສຸທີ່ມີຢູ່ແລ້ວຈຶ່ງເຂົ້າໄປ

໓. ພິກສຸບໍ່ບອກລາພິກສຸທີ່ບໍ່ມີຢູ່ເຂົ້າໄປ

໔. ພິກສຸຍ່າງໄປຕາມທາງທີ່ຜ່ານເຮືອນຜູ້ອື່ນ

໕. ພິກສຸຍ່າງໄປຕາມທາງທີ່ຜ່ານໃກ້ເຮືອນ

໖. ພິກສຸໄປອາຮາມອື່ນ

໗. ພິກສຸໄປສຳນັກພິກສຸນີ

໘. ພິກສຸໄປສຳນັກເດັຽຣະຖີຍ໌

໙. ພິກສຸໄປໂຮງສັນ

໑໐. ພິກສຸໄປເຮືອນທີ່ເຂົານິມົນຕ໌

໑໑. ພິກສຸໄປໃນຄາວມີເຫຕຸຂັດຂ້ອງ

໑໔. ພິກຂຸວິກົລຈິຕ
໑໕. ພິກຂຸຕົ້ນບັນຍັດ

ຈາຣິຕຕສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໗. ມຫານາມສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໗. ມຫານາມສິກຂາບົທ
ວ່າດ້ວຍພຣະເຈົ້າມຫານາມສາກຍະ

ເຣື່ອງພຣະເຈົ້າມຫານາມສາກຍະ
[໕໐໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ນິໂຄຣທາຣາມ ເຂຕກຸງກບິລພັສດຸ໌ ແຄວ້ນສັກກະ ຄັ້ງນັ້ນ ພຣະເຈົ້າມຫານາມສາກຍະມີເພສັຊເຫລືອເຟືອ ລຳດັບນັ້ນ ພຣະເຈົ້າມຫານາມສາກຍະຈຶ່ງໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວຣ ພຣະເຈົ້າມຫານາມສາກຍະຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ຂ້ານ້ອຍປະສົງຄ໌ຈະປວາຣນາສົງຂ໌ດ້ວຍເພສັຊຕລອດ ໔ ເດືອນ ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄຕັສວ່າ “ສາທຸ ສາທຸ ມຫານາມະ ຖ້າເຊັ່ນນັ້ນ ທ່ານຈົ່ງປວາຣນາສົງຂ໌ດ້ວຍເພສັຊຕລອດ ໔ ເດືອນເຖີດ” ພວກພິກຂຸມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປວາຣນາ ພິກຂຸທັງຫລາຍໄດ້ນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາ ເພາະເຣື່ອງນີ້ເປັນຕົ້ນເຫຕຸແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ “ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ຍິນດີການປວາຣນາດ້ວຍປັຈຈັຍຕລອດ ໔ ເດືອນ”

[໕໐໔] ສມັຍນັ້ນ ພິກຂຸທັງຫລາຍອອກປາກຂໍເພສັຊກະພຣະເຈົ້າມຫານາມສາກຍະພຽງເລັກນ້ອຍ ເພສັຊຂອງພຣະເຈົ້າມຫານາມສາກຍະກໍຍັງມີເຫລືອເຟືອຢູ່ເຫມືອນເດີມ ແມ່ນຄັ້ງທີ ໔ ພຣະເຈົ້າມຫານາມສາກຍະກໍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວຣ ພຣະເຈົ້າມຫານາມສາກຍະຜູ້ນັ່ງ ນະ ທີ່ສົມຄວຣແລ້ວ

ໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ຂະນ້ອຍປະສົງຄ໌ ຈະປວາຣນາສົງຊ໌ດ້ວຍເພສັຊຕໍ່ໄປອີກ ໔ ເດືອນ ພຣະພຸທທເຈົ້າຂ້າ”

ພຣະຜູ້ມີພຣະພາຄຕຣັສວ່າ “ສາທຸ ສາທຸ ມຫານາມະ ຖ້າເຊັ່ນນັ້ນ ທ່ານຈົ່ງປວາຣນາສົງຊ໌ດ້ວຍເພສັຊຕໍ່ໄປອີກ ໔ ເດືອນເຖີດ” ພວກພິກສຸມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປວາຣນາ ພິກສຸທັງຫລາຍນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາ ເພາະເອື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຍິນດີການປວາຣນາຕໍ່ໄປອີກ”

[໓໐໕] ສມັຍນັ້ນ ພິກສຸທັງຫລາຍອອກປາກຂໍເພສັຊກະພຣະເຈົ້າມຫານາມສາກຍະພຽງເລັກນ້ອຍ ເພສັຊຂອງພຣະເຈົ້າມຫານາມສາກຍະກໍຍັງມີເຫລືອເຟືອຢູ່ເຫມືອນເດີມ ແມ່ນຄັ້ງທີ ໓ ພຣະເຈົ້າມຫານາມສາກຍະກໍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວຣ ພຣະເຈົ້າມຫານາມສາກຍະຜູ້ນັ່ງ ນະ ທີ່ສົມຄວຣແລ້ວໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ຂະນ້ອຍປະສົງຄ໌ຈະປວາຣນາສົງຊ໌ດ້ວຍເພສັຊຕລອດຊີວິຕພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄຕຣັສວ່າ “ສາທຸ ສາທຸ ມຫານາມະ ຖ້າເຊັ່ນນັ້ນທ່ານຈົ່ງປວາຣນາສົງຊ໌ ດ້ວຍເພສັຊຕລອດຊີວິຕເຖີດ” ພວກພິກສຸມີຄວາມຢຳເກງຢູ່ຈຶ່ງບໍ່ຮັບປວາຣນາ ພິກສຸທັງຫລາຍນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເອື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ຍິນດີການປວາຣນາເປັນນິຕຍ໌”

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ນຸ່ງບໍ່ຮຽບຮ້ອຍ ຫົ່ມບໍ່ຮຽບຮ້ອຍ ອາກັປກິຣິຍາບໍ່ຮຽບຮ້ອຍ ພຣະເຈົ້າມຫານາມສາກຍະຈຶ່ງວ່າກ່າວວ່າ “ພຣະຄຸນເຈົ້າທັງຫລາຍ ເປັນຫຍັງພວກທ່ານຈຶ່ງນຸ່ງບໍ່ຮຽບຮ້ອຍ ຫົ່ມບໍ່ຮຽບຮ້ອຍ ອາກັປກິຣິຍາບໍ່ຮຽບຮ້ອຍລະ ທັມນຽມບັພຊິຕຕ້ອງນຸ່ງໃຫ້ຮຽບຮ້ອຍ ຫົ່ມໃຫ້ຮຽບຮ້ອຍ ແລະມີອາກັປກິຣິຍາຮຽບຮ້ອຍ ບໍ່ແມ່ນບໍ” ພວກພິກສຸສັພພັຄຄີຍ໌ແຄ້ນເຄືອງພຣະເຈົ້າມຫານາມສາກຍະ ເທື່ອນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ປຶກສາກັນວ່າ “ພວກເຮົາຈະເຮັດໃຫ້ພຣະເຈົ້າມຫານາມສາກຍະໄດ້ຮັບຄວາມເກີ້ເຂີນດ້ວຍວິທີໃດ” ຈຶ່ງປຶກສາກັນວ່າ “ທ່ານທັງຫລາຍ ພຣະເຈົ້າມຫານາມສາກຍະປວາຣນາສົງຊ໌ດ້ວຍເພສັຊ ພວກເຮົາຈະໄປອອກປາກຂໍເນີຍໃສກັບພຣະເຈົ້າມຫານາມສາກຍະ” ລຳດັບນັ້ນ ພວກພິກສຸສັພພັຄຄີຍ໌ໄດ້ເຂົ້າໄປຫາພຣະເຈົ້າມຫານາມສາກຍະເຖິງພຣະຕຳຫນັກ ຄັນເຖິງແລ້ວໄດ້ກ່າວກັບພຣະເຈົ້າມຫານາມສາກຍະດັ່ງນີ້ວ່າ “ໂຍມ ພວກອາຕມາ

ຕ້ອງການເນີຍໃສ ໑ ທະນານ” ພຣະເຈົ້າມຫານາມສັກກະຮັບສັ່ງວ່າ “ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ພວກຄົນງານກຳລັງໄປທີ່ຄອກເພື່ອຈະນຳເນີຍໃສມາ ພວກເຂົາຈະນຳມາໃຫ້ທັນເວລາ”

ແມ່ນໃນຄັ້ງທີ ໔ ຯລຯ

ແມ່ນໃນຄັ້ງທີ ໕ ພວກພິກສຸສັພພັຄຄີຍ໌ກໍໄດ້ກ່າວກັບພຣະເຈົ້າມຫານາມສັກກະດັ່ງນີ້ວ່າ “ໂຍມ ພວກອາຕມາຕ້ອງການເນີຍໃສ ໑ ທະນານ” ພຣະເຈົ້າມຫານາມສັກກະຮັບສັ່ງວ່າ “ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ພວກຄົນງານກຳລັງໄປທີ່ຄອກເພື່ອຈະນຳເນີຍໃສມາ ພວກເຂົາຈະນຳມາໃຫ້ທັນເວລາ” ພວກພິກສຸສັພພັຄຄີຍ໌ກ່າວວ່າ “ໂຍມ ທ່ານບໍ່ຕ້ອງການຖວາຍ ແລ້ວປວາຣນາຈະມີປໂຍດຫຍັງ ປວາຣນາແລ້ວບໍ່ຖວາຍ” ຄັ້ງນັ້ນ ພຣະເຈົ້າມຫານາມສັກກະໄດ້ຕຳໜິ ປະນາມ ໂພນທະນາວ່າ “ພຣະຄຸນເຈົ້າທັງຫລາຍ ຈັ່ງໃດເມື່ອຂ້າພະເຈົ້າຂໍຮ້ອງວ່າ ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ຈຶ່ງຣອບໍ່ໄດ້ລະ” ພວກພິກສຸໄດ້ຍິນພຣະເຈົ້າມຫານາມສັກກະຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯພາກັນຕຳໜິ ປະນາມ ໂພນທະ ນາ ວ່າ “ພຣະເຈົ້າມຫານາມສັກກະ ຂໍຮ້ອງພວກພິກສຸສັພພັຄຄີຍ໌ວ່າ ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ຈັ່ງໃດຈຶ່ງຖ້າບໍ່ໄດ້ລະ” ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ ໂດຍປະການຕ່າງໆແລ້ວໄດ້ນຳເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພຣະເຈົ້າມຫານາມະຂໍຮ້ອງພວກທ່ານວ່າ ‘ພຣະຄຸນເຈົ້າທັງຫລາຍ ວັນນີ້ ພຣະຄຸນເຈົ້າໂປຣດຖ້າກ່ອນ’ ແລ້ວຖ້າບໍ່ໄດ້ ຈິງຫລື” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານເມື່ອພຣະເຈົ້າມຫານາມສັກກະຂໍຮ້ອງວ່າ ພຣະຄຸນເຈົ້າທັງຫລາຍ ວັນນີ້ພຣະຄຸນເຈົ້າໂປຣດຖ້າກ່ອນ ກໍຖ້າບໍ່ໄດ້ລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໐໖] ພິກຂຸບໍ່ເປັນໄຂ້ ເພິ່ງຍິນດີການປະວາຣນາດ້ວຍປັຈຈັຍພຽງ ໔ ເດືອນ ເວັ້ນໄວ້ແຕ່ປະວາຣນາອີກ ເວັ້ນໄວ້ແຕ່ປະວາຣນາເປັນນິຕຍ໌ ຖ້າຍິນດີເກີນກວ່າກຳຫນົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະເຈົ້າມຫານາມສາກຍະ ຈົບ

ສິກຂາບົທວິພັງຄ໌

[໓໐໗] ຄຳວ່າ ພິກຂຸບໍ່ເປັນໄຂ້ເພິ່ງຍິນດີການປະວາຣນາດ້ວຍປັຈຈັຍພຽງ ໔ ເດືອນ ຄວາມວ່າ ເພິ່ງຍິນດີການປະວາຣນາພຽງຄິລານປັຈຈັຍ ແມ່ນເຂົາປະວາຣນາອີກ ເພິ່ງຍິນດີວ່າ ເຮົາຈະອອກປາກຂໍໃນເວລາທີ່ເຮົາເຈັບໄຂ້ ແມ່ນເຂົາປະວາຣນາໄວ້ເປັນນິຕຍ໌ ເພິ່ງຍິນດີວ່າ ເຮົາຈະອອກປາກຂໍໃນເວລາທີ່ເຮົາເຈັບໄຂ້

ຄຳວ່າ ຖ້າຍິນດີເກີນກວ່າກຳຫນົດນັ້ນ ຄວາມວ່າ ການປະວາຣນາກຳຫນົດເພສັຊບໍ່ກຳຫນົດຣາຕຣີກໍມີ ການປະວາຣນາກຳຫນົດຣາຕຣີບໍ່ກຳຫນົດເພສັຊກໍມີ ການປະວາຣນາກຳຫນົດທັງເພສັຊທັງຣາຕຣີກໍມີ ການປະວາຣນາບໍ່ກຳຫນົດເພສັຊບໍ່ກຳຫນົດຣາຕຣີກໍມີ

ທີ່ຊື່ວ່າ ກຳຫນົດເພສັຊ ຄື ເຂົາກຳຫນົດເພສັຊໄວ້ວ່າ ຂ້າພະເຈົ້າປະວາຣນາດ້ວຍເພສັຊພຽງເທົ່ານີ້

ທີ່ຊື່ວ່າ ກຳຫນົດຣາຕຣີ ຄື ເຂົາກຳຫນົດຣາຕຣີໄວ້ວ່າ ຂ້າພະເຈົ້າປະວາຣນາໃນຣາຕຣີພຽງເທົ່ານີ້

ທີ່ຊື່ວ່າ ກຳຫນົດທັງເພສັຊກຳຫນົດທັງຣາຕຣີ ຄື ເຂົາກຳຫນົດເພສັຊແລະກຳຫນົດຣາຕຣີໄວ້ວ່າ ຂ້າພະເຈົ້າປະວາຣນາດ້ວຍເພສັຊເທົ່ານີ້ໃນຣາຕຣີພຽງເທົ່ານີ້

ທີ່ຊື່ວ່າ ບໍ່ກຳຫນົດເພສັຊແລະບໍ່ກຳຫນົດຣາຕຣີ ຄື ເຂົາບໍ່ໄດ້ກຳຫນົດເພສັຊແລະບໍ່ໄດ້ກຳຫນົດຣາຕຣີໄວ້

ບົທພາຊນີຍ໌

ປາຈິຕຕີຍ໌

[໓໐໘] ໃນການກຳຫນົດເພສັຊ ພິກຂຸອອກປາກຂໍເພສັຊອື່ນນອກຈາກເພສັຊທີ່ເຂົາປະວາຣນາໄວ້ ຕ້ອງອາບັຕິປາຈິຕຕີຍ໌

ໃນການກຳຫນົດຣາຕຣີ ພິກຂຸອອກປາກຂໍໃນຣາຕຣີອື່ນນອກຈາກຣາຕຣີທີ່ເຂົາປະວາຣນາໄວ້ ຕ້ອງອາບັຕິປາຈິຕຕີຍ໌

ໃນການກຳຫນົດທັງເພສັຊແລະກຳຫນົດຣາຕຣີ ພິກຂຸອອກປາກຂໍເພສັຊອື່ນນອກຈາກເພສັຊທີ່ເຂົາ

ປວາຣນາໄວ້ໃນຣາຕຣີອື່ນນອກຈາກຣາຕຣີທີ່ເຂົາປວາຣນາໄວ້ ຕ້ອງອາບັຕິປາຈິຕຕີຍ໌
ໃນການບໍ່ກຳໜົດເພສັຊບໍ່ກຳໜົດຣາຕຣີ ບໍ່ຕ້ອງອາບັຕິ

[໓໐໙] ເມື່ອບໍ່ມີຄວາມຈຳເປັນດ້ວຍເພສັຊ ພິກສຸອອກປາກຂໍເພສັຊ ຕ້ອງອາບັຕິປາຈິຕຕີຍ໌
ເມື່ອມີຄວາມຈຳເປັນດ້ວຍເພສັຊຢ່າງນຶ່ງ ພິກສຸອອກປາກຂໍເພສັຊອີກຢ່າງນຶ່ງ ຕ້ອງອາບັຕິປາຈິຕຕີຍ໌
ເກີນກວ່າກຳໜົດນັ້ນ ພິກສຸສຳຄັນວ່າເກີນກວ່າກຳໜົດນັ້ນ ອອກປາກຂໍເພສັຊ ຕ້ອງອາບັຕິ
ປາຈິຕຕີຍ໌
ເກີນກວ່າກຳໜົດນັ້ນ ພິກສຸບໍ່ແນ່ໃຈ ອອກປາກຂໍເພສັຊ ຕ້ອງອາບັຕິປາຈິຕຕີຍ໌
ເກີນກວ່າກຳໜົດນັ້ນ ພິກສຸສຳຄັນວ່າບໍ່ເກີນກວ່າກຳໜົດນັ້ນ ອອກປາກຂໍເພສັຊ ຕ້ອງອາບັຕິ
ປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໗. ມຫານາມສິກຂາບົທ ອນາປັຕຕິວາຣ

ທຸກກຸກຕ
ບໍ່ເກີນກວ່າກຳໜົດນັ້ນ ພິກສຸສຳຄັນວ່າເກີນກວ່າກຳໜົດນັ້ນ ຕ້ອງອາບັຕິທຸກກຕ
ບໍ່ເກີນກວ່າກຳໜົດນັ້ນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ບໍ່ເກີນກວ່າກຳໜົດນັ້ນ ພິກສຸສຳຄັນວ່າບໍ່ເກີນກວ່າກຳໜົດນັ້ນ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໑໐] ໑. ພິກສຸອອກປາກຂໍເພສັຊຕາມທີ່ເຂົາປວາຣນາໄວ້
໒. ພິກສຸອອກປາກຂໍເພສັຊໃນຣາຕຣີຕາມທີ່ເຂົາປວາຣນາໄວ້
໓. ພິກສຸອອກປາກຂໍເພສັຊວ່າ ທ່ານປວາຣນາພວກອາຕມາດ້ວຍເພສັຊເຫລົ່ານີ້ແລະພວກອາຕມາກໍຕ້ອງການເພສັຊນີ້ແລະນີ້
໔. ພິກສຸອອກປາກຂໍເພສັຊວ່າ ຣາຕຣີທີ່ທ່ານປວາຣນາຜ່ານໄປແລ້ວ ແຕ່ເຮົາຍັງຕ້ອງການເພສັຊ
໕. ພິກສຸອອກປາກຂໍເພສັຊຈາກຍາຕ

໘. ພິກສຸອອກປາກຂໍເພສັຊຈາກຄນປວາຣນາ
໗. ພິກສຸອອກປາກຂໍເພສັຊເພື່ອພິກສຸອື່ນ
໘. ພິກສຸອອກປາກຂໍເພສັຊທີ່ຈ່າຍມາດ້ວຍຊັພຍ໌ຂອງຕົນ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ມຫານາມສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໘. ອຸຍຍຸຕຕເສນາສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໘. ອຸຍຍຸຕຕເສນາສິກຂາບົທ

ວ່າດ້ວຍກອງທັພທີ່ເຄື່ອນຂບວນອອກຣບ

ເຣື່ອງພຣະສັພພັຄຄີຍ໌

[໓໑໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະເຈົ້າປເສນທິໂກສົລຊົງຍກກອງທັພອອກຣົບ ພວກພິກສຸສັພພັຄຄີຍ໌ກໍອອກໄປເພື່ອຊົມກອງທັພທີ່ກຳລັງເຄື່ອນຂບວນອອກຣົບ ພຣະເຈົ້າປເສນທິໂກສົລໄດ້ທອດພຣະເນຕຣເຫັນພວກພິກສຸສັພພັຄຄີຍ໌ກຳລັງຍ່າງມາແຕ່ໄກ ຄັນທອດພຣະເນຕຣເຫັນແລ້ວຈຶ່ງຣັບສັ່ງໃຫ້ນິມົນຕ໌ມາ ແລ້ວຕຣັສຖາມດັ່ງນີ້ວ່າ "ພຣະຄຸນເຈົ້າທັງຫລາຍ ພວກທ່ານມາເປັນຫຍັງກັນ" ພວກພິກສຸສັພພັຄຄີຍ໌ຖວາຍພຣະພອນວ່າ "ພວກອາຕມາຕ້ອງກາຣຈະມາຢ້ຽມມຫາບພິຕຣ" ພຣະເຈົ້າປເສນທິໂກສົລຣັບສັ່ງວ່າ "ພຣະຄຸນເຈົ້າທັງຫລາຍ ບໍ່ມີປໂຍດໃດເລີຍທີ່ທ່ານມາຢ້ຽມໂຍມຜູ້ໄຝ່ໃນກາຣຣົບ ພວກທ່ານຄວຣໄປເຝົ້າພຣະຜູ້ມີພຣະພາຄບໍ່ແມ່ນບໍ" ພວກພົລຣົບຕຳຫນິ ປະນາມໂພນທະນາວ່າ "ຈັ່ງໃດພວກພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງມາເບິ່ງກອງທັພທີ່ເຄື່ອນຂບວນອອກຣົບລະ ບໍ່ແມ່ນເປັນລາພຂອງພວກເຮົາ ພວກເຮົາໄດ້ບໍ່ດີ ທີ່ພວກເຮົາມາຢູ່ໃນກອງທັພກໍເພາະກາຣຄອງຊີພ ເພາະຕ້ອງລ້ຽງດູບຸຕຣພັຣຍາ" ພິກສຸທັງຫລາຍໄດ້ຍິນພວກພົລຣົບຕຳຫນິ ປະນາມ

ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໄປເບິ່ງກອງທັພ ທີ່ເຄື່ອນ ຂບວນອອກຣົບລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"

ແລ້ວຈຶ່ງຣັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຣື້ອງພິກສຸຮູບນຶ່ງ

[໓໑໔] ສມັຍນັ້ນ ລຸງຂອງພິກສຸຮູບນຶ່ງປ່ວຍຢູ່ໃນກອງທັພ ເຂົາສົ່ງຂ່າວໄປເຖິງພິກສຸນັ້ນວ່າ "ລຸງກຳລັງປ່ວຍຢູ່ໃນກອງທັພ ນິມົນຕ໌ທ່ານມາ ລຸງປຣາຖນາໃຫ້ທ່ານມາຢ້ຽມ" ພິກສຸນັ້ນໄດ້ມີຄວາມຄິດດັ່ງນີ້ວ່າ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທວ່າ ພິກສຸບໍ່ເພິງໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບ ນີ້ລຸງຂອງເຮົາປ່ວຍຢູ່ໃນກອງທັພ ເຮົາຈະເພິງປະຕິບັດຢ່າງໃດດີລະ ພິກສຸທັງຫລາຍນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ໄປໃນກອງທັພໄດ້ເມື່ອມີເຫຕຸຜົລທີ່ສົມຄວຣ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຣັບສັ່ງກັບພິກສຸທັງ

ຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ໄປໃນກອງທັພໄດ້ເມື່ອມີເຫຕຸຜົລເຊັ່ນນັ້ນ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໓໑໓] ອີກຢ່າງນຶ່ງ ພິກສຸໃດໄປເບິ່ງກອງທັພທີ່ເຄື່ອນຂບວນອອກຣົບ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກສຸຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໓໑໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ເຄື່ອນຂບວນອອກຣົບ ໄດ້ແກ່ ກອງທັພທີ່ເຄື່ອນອອກຈາກໝູ່ບ້ານແລ້ວຕັ້ງຄ່າຍພັກແຮມຫລືເຄື່ອນຂບວນຕໍ່ໄປ

ທີ່ຊື່ວ່າ ກອງທັພ ໄດ້ແກ່ ກອງທັພຊ້າງ ກອງທັພມ້າ ກອງທັພຣົຖ ກອງທັພພົລຍ່າງດ້ວຍຂາ ຊ້າງ ໑ ເຊືອກ ມີທຫາຣປະຈຳຢູ່ ໑໔ ນາຍ ມ້າ ໑ ຕົວ ມີທຫາຣປະຈຳຢູ່ ໓ ຄົນ ຣຖ ໑ ຄັນ ມີທຫາຣປະຈຳຢູ່ ໔ ນາຍ ພົລຍ່າງດ້ວຍຂາ ມີທຫາຣຍິງທນູ ໔ ນາຍ

ພິກສຸໄປເພື່ອຈະເບິ່ງກອງທັພນັ້ນ ຕ້ອງອາບັຕິທຸກກຕ ຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິປາຈິຕຕີຍ໌ ພົ້ນວິສັຍທີ່ຈະເຫັນ ແຕ່ພຍາຍາມເບິ່ງຈົນເຫັນ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ນອກຈາກມີເຫຕຸຜົລທີ່ສົມຄວຣ ຄື ຍົກເວັ້ນເມື່ອມີເຫຕຸຜົລທີ່ສົມຄວຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໑໕] ກອງທັພເຄື່ອນຂບວນອອກຣົບ ພິກສຸສຳຄັນວ່າເຄື່ອນຂບວນອອກຣົບ ໄປເພື່ອຈະເບິ່ງ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕີຍ໌

ກອງທັພເຄື່ອນຂບວນອອກຣົບ ພິກສຸບໍ່ແນ່ໃຈ ໄປເພື່ອຈະເບິ່ງ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕິຍ໌

ກອງທັພເຄື່ອນຂບວນອອກຣົບ ພິກສຸສຳຄັນວ່າຍັງບໍ່ໄດ້ເຄື່ອນຂບວນອອກຣົບ ໄປເພື່ອຈະເບິ່ງ ນອກຈາກມີເຫຕຸຜົລທີ່ສົມຄວຣ ຕ້ອງອາບັຕິປາຈິຕຕິຍ໌

ທຸກກຕ

ພິກສຸໄປເພື່ອຈະເບິ່ງກອງທັພແຕ່ລະກອງ ຕ້ອງອາບັຕິທຸກກຕ

ພິກສຸຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິທຸກກຕ

ພິກສຸຢູ່ພົ້ນວິສັຍທີ່ຈະເຫັນ ແຕ່ພຍາຍາມເບິ່ງຈົນເຫັນ ຕ້ອງອາບັຕິທຸກກຕ

ກອງທັພຍັງບໍ່ໄດ້ເຄື່ອນຂບວນອອກຣົບ ພິກສຸສຳຄັນວ່າເຄື່ອນຂບວນອອກຣົບ ຕ້ອງອາບັຕິທຸກກຕ

ກອງທັພຍັງບໍ່ໄດ້ເຄື່ອນຂບວນອອກຣົບ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ກອງທັພຍັງບໍ່ໄດ້ເຄື່ອນຂບວນອອກຣົບ ພິກສຸສຳຄັນວ່າຍັງບໍ່ໄດ້ເຄື່ອນຂບວນອອກຣົບ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໑໖] ໑. ພິກສຸຢືນເບິ່ງຢູ່ໃນອາຣາມ

໒. ພິກສຸດູກອງທັພທີ່ຍກຜ່ານມາຍັງທີ່ທີ່ພິກສຸຢືນ ທີ່ພິກສຸນັ່ງ ຫລືທີ່ພິກສຸນອນ

໓. ພິກສຸຍ່າງສວນທາງໄປເຫັນ

໔. ພິກສຸດູເມື່ອມີເຫຕຸຜົລທີ່ສົມຄວຣ

໕. ພິກສຸດູເມື່ອຄາວມີເຫຕຸຂັດຂ້ອງ

໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ອຸຍຍຸຕຕເສນາສິກຂາບົທທີ ໗ ຈົບ

໕. ອເຈລກວັຄ

໙. ເສນາວາສສິກຂາບົທ
ວ່າດ້ວຍການພັກຢູ່ໃນກອງທັພ

ເລື້ອງພຣະສັພພັຄຄີຍ໌
[໑໑໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ມີທຸຣະຕ້ອງຍ່າງຜ່ານກອງທັພ ໄດ້ພັກແຮມຢູ່ໃນກອງທັພເກີນ ໓ ຄືນ ພວກພົລຣົບຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກສມນະເຊື້ອສາຍສາກຍບຸຕຣຈຶ່ງພັກແຮມຢູ່ໃນກອງທັພເກີນ ໓ ຄືນລະ ບໍ່ແມ່ນເປັນລາພຂອງພວກເຮົາ ພວກເຮົາໄດ້ບໍ່ດີ ທີ່ພວກເຮົາມາພັກແຮມຢູ່ໃນກອງທັພກໍເພາະການຄອງຊີພ ເພາະຕ້ອງລ້ຽງດູບຸຕຣພັຣຍາ" ພິກສຸທັງຫລາຍໄດ້ຍິນພວກພົລຣົບເຫລົ່ານັ້ນຕໍາໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງພັກແຮມຢູ່ໃນກອງທັພເກີນ ໓ ຣາຕຣີລະ" ຄັນພິກສຸທັງຫລາຍຕໍາໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆ
ແລ້ວຈຶ່ງນໍາເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ
ລໍາດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຊ໌ເພາະເລື້ອງນີ້ເປັນຕົ້ນເຫດ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານພັກແຮມຢູ່ໃນກອງທັພເກີນ ໓ ຄືນແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງພັກແຮມຢູ່ໃນກອງທັພເກີນ ໓ ຣາຕຣີລະ ໂມຂບຸຣຸສທັງຫລາຍ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ
[໑໑໘] ກໍ ເມື່ອພິກສຸມີເຫຕຸຜົລຈໍາເປັນຕ້ອງໄປໃນກອງທັພ ພິກສຸນັ້ນເພິ່ງພັກແຮມຢູ່ໃນກອງທັພໄດ້ພຽງ ໒-໓ ຄືນ ຖ້າພັກແຮມຢູ່ເກີນກໍາໜົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໑໙] ຄຳວ່າ ກໍ ເມື່ອພິກສຸມີເຫດຸຜົລຈຳເປັນຕ້ອງໄປໃນກອງທັພ ຄື ມີເຫດຸຜົລຈຳເປັນ ມີທຸຣະຈຳເປັນ

ຄຳວ່າ ພິກສຸນັ້ນເພິງພັກແຮມຢູ່ໃນກອງທັພໄດ້ພຽງ ໒-໓ ຄືນ ຄື ພິກສຸຢູ່ໄດ້ ໒ - ໓ ຄືນ

ຄຳວ່າ ຖ້າພັກແຮມຢູ່ເກີນກຳໜົດນັ້ນ ຄວາມວ່າ ເມື່ອດວງອາທິຕຍ໌ອັສດົງໃນວັນທີ ໔ ພິກສຸຍັງພັກແຮມຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໔໐] ເກີນ ໓ ຄືນ ພິກສຸສຳຄັນວ່າເກີນ ພັກຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ເກີນ ໓ ຄືນ ພິກສຸບໍ່ແນ່ໃຈ ພັກຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ເກີນ ໓ ຄືນ ພິກສຸສຳຄັນວ່າໜ້ອຍກວ່າ ພັກຢູ່ໃນກອງທັພ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຸກກຕ

ໜ້ອຍກວ່າ ໓ ຄືນ ພິກສຸສຳຄັນວ່າເກີນ ຕ້ອງອາບັຕິທຸກກຕ

ໜ້ອຍກວ່າ ໓ ຄືນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ໜ້ອຍກວ່າ ໓ ຄືນ ພິກສຸສຳຄັນວ່າຍັງບໍ່ເກີນ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໕. ອເຈລກວັຄ ໙. ເສນາວາສສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໔໑] ໑. ພິກສຸພັກຢູ່ ໒-໓ ຄືນ

໒. ພິກສຸພັກຢູ່ໜ້ອຍກວ່າ ໒-໓ ຄືນ

໓. ພິກສຸພັກຢູ່ ໒ ຄືນ ແຕ່ອອກໄປກ່ອນອຣຸນຂອງວັນທີ ໓ ແລ້ວກັບມາຢູ່ອີກ

໔. ພິກສຸເຈັບໄຂ້ພັກຢູ່
໕. ພິກສຸຢູ່ດ້ວຍທຸຣະຂອງຜູ້ເປັນໄຂ້
໖. ພິກສຸຢູ່ໃນກອງທັພທີ່ຖືກຂ້າສຶກລ້ອມ
໗. ພິກສຸຖືກໃຜຄົນໃດຄົນນຶ່ງຣິບກວນ
໘. ພິກສຸພັກຢູ່ໃນຄາວມີເຫຕຸຂັດຂ້ອງ
໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ເສນາອາສສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໑໐. ອຸຍໂຍທິກສິກຂາບົທ ນິທານວັຕຖຸ

໕. ອເຈລກວັຄ

໑໐. ອຸຍໂຍທິກສິກຂາບົທ
ວ່າດ້ວຍການໄປເບິ່ງສນາມຣົບ

ເຣື້ອງພຣະສັພພັຄຄີຍ໌
[໖໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ພັກແຮມຢູ່ໃນກອງທັພ ໔-໖ ຄືນ ໄປທີ່ສນາມຣົບແດ່ ທີ່ພັກພົລແດ່ ທີ່ຈັດຂບວນທັພແດ່ ໄປເບິ່ງກອງທັພທີ່ຈັດເປັນຂບວນແລ້ວແດ່ ພິກສຸສັພພັຄຄີຍ໌ຮູບນຶ່ງໄປທີ່ສນາມຣົບ ຖືກຍິງດ້ວຍລູກສອນ ພວກຊາວບ້ານພາກັນເຍາະເຍີ້ຍວ່າ "ເປັນຢ່າງໃດພຣະຄຸນເຈົ້າ ທ່ານຣົບມ່ວນບໍ່ ທ່ານຊນະໄດ້ຈັກແຕ້ມ"
ພິກສຸນັ້ນຖືກເຍາະເຍີ້ຍຈົນເກີ້ເຂີນ ພວກພົລຣົບຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງຫງວເບິ່ງສນາມຣົບລະ ບໍ່ແມ່ນເປັນລາພຂອງພວກເຮົາ ພວກເຮົາໄດ້ບໍ່ດີ ທີ່ພວກເຮົາມາສນາມຣົບກໍເພາະການຄອງຊີພ ເພາະຕ້ອງລ້ຽງດູບຸຕຣພັຣຍາ" ພິກສຸທັງຫລາຍໄດ້ຍິນພວກພົລຣົບຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນ

ຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໄປທຽວເບິ່ງສນາມຣົບລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໄປທຽວດູສນາມຣົບ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງທຽວໄປເບິ່ງສນາມຣົບລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໔໓] ຖ້າພິກສຸພັກຢູ່ໃນກອງທັພ ໔-໓ ຄືນ ທຽວໄປໃນສນາມຣົບກໍດີ ທີ່ພັກພົລກໍດີ ທີ່ຈັດຂບວນທັພກໍດີ ໄປເບິ່ງກອງທັພທີ່ຈັດເປັນຂບວນແລ້ວກໍດີ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໔໔] ຄຳວ່າ ຖ້າພິກສຸພັກຢູ່ໃນກອງທັພ ໔-໓ ຄືນ ຄື ພິກສຸພັກແຮມຢູ່ ໔-໓ ຄືນ

ທີ່ຊື່ວ່າ ສນາມຣົບ ໄດ້ແກ່ ສຖານທີ່ຣົບຊຶ່ງປາກົດຢູ່

ທີ່ຊື່ວ່າ ທີ່ພັກພລ ໄດ້ແກ່ ກອງຊ້າງປະມານເທົ່ານີ້ ກອງມ້າປະມານເທົ່ານີ້ ກອງຣົຖປະມານເທົ່ານີ້ ກອງພົລຍ່າງປະມານເທົ່ານີ້

ທີ່ຊື່ວ່າ ທີ່ຈັດຂບວນທັພ ໄດ້ແກ່ ກອງຊ້າງຈົ່ງຢູ່ທາງນີ້ ກອງມ້າຈົ່ງຢູ່ທາງນີ້ ກອງຣົຖຈົ່ງຢູ່ທາງນີ້ ກອງພົລຍ່າງຈົ່ງຢູ່ທາງນີ້

ທີ່ຊື່ວ່າ ກອງທັພ ໄດ້ແກ່ ກອງທັພຊ້າງ ກອງທັພມ້າ ກອງທັພຣົຖ ກອງທັພພົລຍ່າງ ກອງທັພຊ້າງມີຊ້າງ ໓ ຕົວເປັນຢ່າງຫນ້ອຍ ກອງທັພມ້າມີມ້າ ໓ ຕົວເປັນຢ່າງຫນ້ອຍ ກອງທັພຣົຖມີຣົຖ ໓ ຄັນເປັນຢ່າງຫນ້ອຍ ກອງທັພພົລຍ່າງມີທຫານຖືທຫູ ໔ ນາຍເປັນຢ່າງຫນ້ອຍ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ໑໐. ອຸຍໂຍຫິກສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ພິກສຸໄປເພື່ອຈະເບິ່ງ ຕ້ອງອາບັຕິທຸກກຕ

ພິກສຸຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິປາຈິຕຕິຍ໌

ພົ້ນວິສັຍຈະເຫັນ ແຕ່ພິກສຸຍັງເບິ່ງອີກ ຕ້ອງອາບັຕິປາຈິຕຕິຍ໌

ພິກສຸໄປເພື່ອຈະເບິ່ງກອງທັພແຕ່ລະກອງ ຕ້ອງອາບັຕິທຸກກຕ

ພິກສຸຢືນເບິ່ງໃນຣະຍະທີ່ພໍເບິ່ງເຫັນ ຕ້ອງອາບັຕິທຸກກຕ

ພົ້ນວິສັຍທີ່ຈະເຫັນ ແຕ່ພິກສຸຍັງເບິ່ງອີກ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໒໕] ໑. ພິກສຸຢືນເບິ່ງຢູ່ໃນອາຣາມ

໒. ພິກສຸດູກາຣຣບພຸ່ງທີ່ຜ່ານມາຍັງທີ່ທີ່ພິກສຸຢືນ ທີ່ພິກສຸນັ່ງ ຫລືທີ່ພິກສຸນອນ

໓. ພິກສຸຍ່າງສວນທາງໄປພບ

໔. ພິກສຸມີທຸຣະຍ່າງໄປພບ

໕. ພິກສຸດູໃນຄາວມີເຫຕຸຂັດຂ້ອງ

໖. ພິກສຸວິກລຈິຕ

໗. ພິກສຸຕົ້ນບັນຍັດ

ອຸຍໂຍຫິກສິກຂາບົທທີ ໑໐ ຈົບ

ອເຈລກວັຄທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໕. ອເຈລກວັຄ ຣວມສິກຂາບົທທີ່ມີໃນອເຈລກວັຄ

ຣວມສິກຂາບົທທີ່ມີໃນອເຈລກວັຄ

ອເຈລກວັຄມີ ໑໐ ສິກຂາບົທ ຄື

໑. ອເຈລກສິກຂາບົທ ວ່າດ້ວຍນັກບວຊເປືອຍ

໒. ອຸຍໂຍຊນສິກຂາບົທ ວ່າດ້ວຍການສົ່ງກັບ

໓. ສໂພຊນສິກຂາບົທ ວ່າດ້ວຍການເຂົ້າໄປແຊກແຊງໃນທີ່ທີ່ມີຄົນ ໒ ຄົນ

໔. ຣໂຫປຕິຈສັນນສິກຂາບົທ ວ່າດ້ວຍການນັ່ງໃນທີ່ລັບມີສິ່ງກຳບັງ

໕. ຣໂຫນິສັຊຊສິກຂາບົທ ວ່າດ້ວຍການນັ່ງໃນທີ່ລັບ

໖. ຈາຣິຕຕສິກຂາບົທ ວ່າດ້ວຍການທ່ຽວສັນຈອນໄປ

໗. ມຫານາມສິກຂາບົທ ວ່າດ້ວຍພຣະເຈົ້າມຫານາມສາກຍະ

໘. ອຸຍຍຸຕຕເສນາສິກຂາບົທ ວ່າດ້ວຍກອງທັພທີ່ເຄື່ອນຂບວນອອກຣບ

໙. ເສນາວາສສິກຂາບົທ ວ່າດ້ວຍການພັກຢູ່ໃນກອງທັພ

໑໐. ອຸຍໂຍທິກສິກຂາບົທ ວ່າດ້ວຍການໄປເບິ່ງສນາມຣົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໖. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

ຫມວດວ່າດ້ວຍການດື່ມສຸຣາ

໑. ສຸຣາປານສິກຂາບົທ

ວ່າດ້ວຍການດື່ມສຸຣາແລະເມຣັຍ

ເຣື້ອງພຣະສາຄຕະ

[໓໔໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າສເດັຈຈາຣິກຢູ່ໃນແຄວ້ນເຈຕີຍ໌ ສເດັຈໄປທາງຫມູ່ບ້ານພັທທວຕິ ພວກຄົນລ້ຽງໂຄ ພວກຄົນລ້ຽງປສຸສັຕວ໌ ພວກຊາວນາ ພວກຄົນຍ່າງທາງໄດ້ເຫັນພຣະຜູ້ມີພຣະພາຄຊົງດຳເນີນມາແຕ່ໄກ ຄັນເຫັນແລ້ວ ຈຶ່ງໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ພຣະອົງຄ໌ຜູ້ຈະເຣີນ ພຣະອົງຄ໌ຢ່າສເດັຈໄປທີ່ທ່າອັມພຕິຕຖະເລີຍ ນາຄມີຣິທທິ໌ ມີພິສທີ່ແຂ້ວ ໑ ມີພິສກ້າ ອາສັຍຢູ່ທີ່ອາສົມຂອງຊຕິລ ທີ່ທ່າອັມພຕິຕຖະ ນາຄນັ້ນຢ່າທຳຮ້າຍພຣະຜູ້ມີພຣະພາຄ

ເລີຍ ພຣະພຸທທເຈົ້າຂ້າ” ເມື່ອພວກເຂົາຂາບທູລເຊັ່ນນັ້ນ ພຣະຜູ້ມີພຣະພາຄໄດ້ຊົງນິ່ງ ແມ່ນຄັ້ງທີ ໔ ຯລຯ ແມ່ນຄັ້ງທີ ໓ ພວກຄົນລ້ຽງໂຄ ພວກຄົນລ້ຽງປສຸສັຕວ໌ ພວກຊາວນາ ພວກຄົນຍ່າງທາງກໍໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ພຣະອົງຄ໌ຜູ້ຈະເຣີນ ພຣະອົງຄ໌ຢ່າສເດັຈໄປທີ່ທ່າອັມພຕິຕຖະເລີຍ ນາຄມີຣິທທິ໌ ມີພິສທີ່ແຂ້ວ ອາສັຍຢູ່ທີ່ອາສົມຂອງຊດິລ ທີ່ທ່າອັມພຕິຕຖະ ນາຄນັ້ນ

ຢ່າທຳຮ້າຍພຣະຜູ້ມີພຣະພາຄເລີຍ”

ແມ່ນຄັ້ງທີ ໓ ພຣະຜູ້ມີພຣະພາຄກໍໄດ້ຊົງນິ່ງ

ຄັ້ງນັ້ນ ພຣະຜູ້ມີພຣະພາຄສເດັຈຈາຣິກໄປໂດຍລຳດັບຈົນເຖິງໝູ່ບ້ານພັທທວດີ ປະທັບຢູ່ ນະ ໝູ່ບ້ານພັທທວດີນັ້ນ

ເຊີງອັນຖະ :

໑ ອາສີວິໂສ ມີພິສທີ່ແຂ້ວ ຫລືມີພິສແລ່ນໄວ ທ່ານອທິບາຍໄວ້ດັ່ງນີ້ ອາສຸ ສີຂໍ ເອຕສຸສ ວິສໍ ອາຄຈຸສຕີຕິ ອາສີວິໂສ ພິສຂອງນາຄນັ້ນຍ່ອມແລ່ນໄວ ຄືດ່ວນ ດັ່ງນີ້ ຈຶ່ງຊື່ວ່າອາສີວິສະ ມີພິສແລ່ນໄວ (ວິ. ອ. ໑/໓໗/໔໓໐), ອາສີຕິ ທາຖາ ວຸຈຈຕິ, ຕຕຸຖ ສນຸນິຫິຕວິໂສຕິ ອາສີວິໂສ ອີກຢ່າງນຶ່ງ ຄຳວ່າ ອາສີ ທ່ານໝາຍເຖິງແຂ້ວ ທີ່ແຂ້ວນັ້ນມີພິສຝັງຢູ່ ຈຶ່ງຊື່ວ່າອາສີວິສະ ມີພິສທີ່ແຂ້ວ (ສາຣຕຸຖ. ຕີກາ ໔/໓໗/໔໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໖. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ນິທານວັຕຖຸ

ຄັ້ງນັ້ນ ທ່ານພຣະສາຄຕະຍ່າງເຂົ້າໄປທີ່ທ່າອັມພຕິຕຖະຈົນເຖິງອາສົມຂອງຊດິລ ຄັນເຖິງແລ້ວໄດ້ເຂົ້າໄປໃນໂຮງບູຊາໄຟ ປູເຄື່ອງລາດຫຍ້າແລ້ວຈຶ່ງນັ່ງຄູ້ບັລລັງກ໌ ຕັ້ງກາຍຕຣົງ ດຳຣົງສຕິໄວ້ສະເພາະໜ້າ ພໍນາຄນັ້ນເຫັນທ່ານພຣະສາຄຕະເຂົ້າມາແລ້ວ ກໍເປັນທຸກຂ໌ ເສັຽໃຈ ຈຶ່ງເຮັດໃຫ້ຄວັນພຸ່ງຕລົບຂຶ້ນ ແມ່ນທ່ານພຣະສາຄຕະກໍເຮັດໃຫ້ຄວັນພຸ່ງຕລົບຂຶ້ນແດ່ ນາຄນັ້ນທົນການລົບຫລູ່ບໍ່ໄດ້ຈຶ່ງພົ່ນໄຟສູ້ ແມ່ນທ່ານພຣະສາຄຕະກໍເຂົ້າເຕໂຊກສິນພົ່ນໄຟສູ້ແດ່ ເທື່ອນັ້ນ ທ່ານພຣະສາຄຕະ ຄັນປຣາບເດຊຂອງນາຄນັ້ນໄດ້ແລ້ວ ຈຶ່ງຍ່າງໄປທາງໝູ່ບ້ານພັທທວດີ ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ ນະ ໝູ່ບ້ານພັທທວດີຕາມພຣະອັທຍາສັຍແລ້ວຈຶ່ງສເດັຈຈາຣິກໄປທາງກຸງໂກສັມພີ ພວກອຸ

ບາສິກອຸບາສິກາຊາວກຸງໂກສັມພີຊາບຂ່າວວ່າພຣະສາຄຕະຕໍ່ສູ້ກັບນາຄທີ່ທ່າອັມພຕິຕຖະ ສມັຍນັ້ນ ພຣະຜູ້ມີພຣະພາຄສເດັຈຈາຣິກໄປໂດຍລຳດັບຈົນເຖິງກຸງໂກສັມພີ ເທື່ອນັ້ນ ພວກອຸບາສິກແລະອຸບາສິກາຊາວກຸງໂກສັມພີພາກັນຮັບສເດັຈພຣະຜູ້ມີພຣະພາຄແລ້ວເຂົ້າໄປຫາທ່ານພຣະສາຄຕະ ໄຫວ້ແລ້ວຢືນຢູ່ ນະ ທີ່ສົມຄວຣ ພວກອຸບາສິກອຸບາສິກາຊາວກຸງໂກສັມພີຜູ້ຢືນຢູ່ ນະ ທີ່ສົມຄວຣ ໄດ້ກ່າວກັບທ່ານພຣະສາຄຕະດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ສິ່ງທີ່ຫາໄດ້ຍາກແລະເປັນທີ່ຊອບໃຈຂອງພຣະຄຸນທ່ານມີຫຍັງແດ່ ພວກຂ້າພະເຈົ້າຈະຈັດຕຽມຫຍັງ" ເມື່ອອຸບາສິກອຸບາສິກາກ່າວຢ່າງນີ້ ພວກພິກສຸສັພພັຄຄີຍ໌ໄດ້ກ່າວກັບພວກອຸບາສິກອຸບາສິກາຊາວກຸງໂກສັມພີດັ່ງນີ້ວ່າ "ມີຢູ່ທ່ານທັງຫລາຍ ຫົວເຊື້ອສຸຣາຊື່ກາໂປຕິກະ໑ຫາຍາກ ເປັນທີ່ຊອບໃຈຂອງພິກສຸທັງຫລາຍ ພວກທ່ານຈົ່ງຈັດຕຽມຫົວເຊື້ອສຸຣາຊື່ກາໂປຕິກະນັ້ນໄວ້"

ເຊີງອັນຖະ :

໑ ກາໂປຕິກາຕິ ກໂປຕປາທສມວນ្ນຣຕຸໂຕພາສາ. ປສນນາຕິ ສຸຣາມນ្ឌສ្ເສຕំ ອທິວຈນំ ແປສຣຸປຄວາມໄດ້ວ່າ ຫົວເຊື້ອສຸຣາທີ່ມີສີແດງເໝືອນຕີນນົກກາງແກ (ວິ. ອ. ໔/໓໔໖/໔໐໔) ຄຳວ່າ ປສນ្ນ ຫົວເຊື້ອສຸຣາ ໃນທີ່ນີ້ບໍ່ໄດ້ໝາຍເຖິງນ້ຳໃສ ແຕ່ໝາຍເຖິງນ້ຳຫົວ (ຕສຸສາເຍວ ກິນ្ນປກ្ຂິຕ្ຕາຍ ມນ្ເທ្ ຄຫິເຕ ເມື່ອໃສ່ຫົວເຊື້ອໃນສຸຣານັ້ນແລ້ວ ຈົນຈັບຕົວເປັນຝາ - ວິ. ອ. ໔/໓໔໗/໔໐໕) ຣສានំ ສພ្ພຣສានំ ອគ្គម្ហិ ຣເສ ມນ្ຫ្ສហ្ໂໂ ມັນ្ຫ្សັ្ພທ໌ ໝາຍເຖິງນ້ຳທີ່ສຸດຍອດກວ່ານ້ຳທັງໝົດ (ດູ ອພິທາ. ແລະ ອພິທາ. ຕີກາ ຄາຖາ ໔໖໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໖. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ນິທານວັຕຖຸ

ຄັ້ງນັ້ນ ພວກອຸບາສິກອຸບາສິກາຊາວກຸງໂກສັມພີຈັດຕຽມຫົວເຊື້ອສຸຣາຊື່ກາໂປຕິກະ ໄວ້ທຸກຄົວເຮືອນ ພໍເຫັນທ່ານພຣະສາຄຕະຍ່າງບິນທບາຕຈຶ່ງໄດ້ກ່າວກັບທ່ານພຣະສາຄຕະດັ່ງນີ້ວ່າ "ພຣະຄຸນເຈົ້າ ຂໍນິມົນຕ໌ພຣະຄຸນເຈົ້າສາຄຕະດື່ມຫົວເຊື້ອສຸຣາຊື່ກາໂປຕິກະເຖີດ ພຣະຄຸນເຈົ້າ ຂໍນິມົນຕ໌ພຣະຄຸນເຈົ້າສາຄຕະດື່ມຫົວເຊື້ອສຸຣາຊື່ກາໂປຕິກະເຖີດ" ຄັນທ່ານພຣະສາຄຕະດື່ມຫົວເຊື້ອສຸຣາຊື່ກາໂປຕິກະທຸກໆຄົວເຮືອນແລ້ວອອກຈາກເມືອງ ໄດ້ລົ້ມກິ້ງທີ່ປະຕູເມືອງ ລຳດັບນັ້ນ ພຣະຜູ້ມີພຣະພາຄສເດັຈອອກມາພ້ອມພິກສຸຫລາຍຮູບ ໄດ້ທອດພຣະເນຕຣເຫັນທ່ານພຣະສາຄຕະນອນກິ້ງຢູ່ທີ່ປະຕູ

ເມືອງ ຄັນເຫັນແລ້ວຈຶ່ງຮັບສັ່ງວ່າ "ພິກສຸທັງຫລາຍ ພວກທ່ານຈົ່ງພາສາຄຕະໄປ" ພິກສຸທັງຫລາຍຮັບສນອງພຣະພຸທທຸດຳຣັສແລ້ວ ຊ່ວຍກັນນຳທ່ານພຣະສາຄຕະໄປທີ່ອາຣາມ ໃຫ້ນອນຫັນສີສະໄປທາງພຣະຜູ້ມີພຣະພາຄ ແຕ່ທ່ານພຣະສາຄຕະພິກກັບນອນຫັນຕີນໄປທາງພຣະຜູ້ມີພຣະພາຄ ເທື່ອນັ້ນ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ກ່ອນນີ້ສາຄຕະເຄີຍມີຄວາມເຄົາຣົພຢຳເກງຕຖາຄົຕບໍ່ແມ່ນບໍ" ພິກສຸທັງຫລາຍທູລຮັບວ່າ "ເປັນເຊັ່ນນັ້ນ ພຣະພຸທທຸເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງຫລາຍ ບັດນີ້ສາຄຕະຍັງມີຄວາມເຄົາຣົພຢຳເກງຕຖາຄົຕຢູ່ອີກຫລື" ພິກສຸທັງຫລາຍຂາບທູລວ່າ "ບໍ່ມີເລີຍ ພຣະພຸທທຸເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງຫລາຍ ສາຄຕະຕໍ່ສູ້ກັບນາຄທີ່ທ່າອັມພຕິຕຖະ ບໍ່ແມ່ນບໍ" ພິກສຸທັງຫລາຍທູລຮັບວ່າ "ເປັນເຊັ່ນນັ້ນ ພຣະພຸທທຸເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງຫລາຍ ບັດນີ້ສາຄຕະພໍຈະຕໍ່ສູ້ແມ່ນກັບງູນ້ຳໄດ້ລະຫລື" ພິກສຸທັງຫລາຍຂາບທູລວ່າ "ສູ້ບໍ່ໄດ້ເລີຍ ພຣະພຸທທຸເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ນ້ຳທີ່ດື່ມເຂົ້າໄປແລ້ວເຮັດໃຫ້ຄວາມຈຳໄດ້ຫມາຍຮູ້ ວິປຣິຕໄປນັ້ນ ຄວຣຈະດື່ມຫລື"

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ຝ໌. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ບົທພາຊນີຍ໌

ພິກສຸທັງຫລາຍຂາບທູລວ່າ "ບໍ່ຄວຣດື່ມເລີຍ ພຣະພຸທທຸເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສວ່າ "ພິກສຸທັງຫລາຍ ການກະທຳຂອງສາຄຕະນັ້ນບໍ່ສົມຄວຣ ບໍ່ຄ້ອຍຕາມ ບໍ່ເຫມາະສົມ ບໍ່ແມ່ນກິຈຂອງສມນູ ໃຊ້ບໍ່ໄດ້ ບໍ່ຄວຣທຳ ຈັ່ງໃດສາຄຕະຈຶ່ງດື່ມນ້ຳເມົາລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໔໗] ພິກສຸຕ້ອງອາບັຕິປາຈິຕຕິຍ໌ ເພາະດື່ມສຸຣາແລະເມຣັຍ

ເຣື່ອງພຣະສາຄຕະ ຈົບ

ສິກຂາບົທວິພັງຄ໌

[໓໔໗] ທີ່ຊື່ວ່າ ສຸຣາ ໄດ້ແກ່ ສຸຣາທີ່ທຳຈາກແປ້ງ ສຸຣາທີ່ທຳຈາກຂນົມ ສຸຣາທີ່ທຳຈາກເຂົ້າສຸກ ສຸຣາໝັກແປ້ງເຊື້ອເຫລົ້າ ສຸຣາທີ່ຜສົມເຄື່ອງປຸງຫລາຍຊນິດ

ທີ່ຊື່ວ່າ ເມຣັຍ ໄດ້ແກ່ ນ້ຳໝັກດອງດອກໄມ້ ນ້ຳໝັກດອງຜົລໄມ້ ນ້ຳໝັກດອງນ້ຳເຜີ້ງ ນ້ຳໝັກດອງນ້ຳອ້ອຍງົບ ນ້ຳໝັກດອງທີ່ຜສົມເຄື່ອງປຸງຫລາຍຊນິດ

ຄຳວ່າ ດື່ມ ຄື ພິກສຸດື່ມ ໂດຍທີ່ສຸດແມ່ນດື່ມດ້ວຍປາຍຫຍ້າຄາແຕະ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

ນ້ຳເມົາ ພິກສຸສຳຄັນວ່າເປັນນ້ຳເມົາ ດື່ມ ຕ້ອງອາບັຕິປາຈິຕຕີຍ໌

ນ້ຳເມົາ ພິກສຸບໍ່ແນ່ໃຈ ດື່ມ ຕ້ອງອາບັຕິປາຈິຕຕີຍ໌

ນ້ຳເມົາ ພິກສຸສຳຄັນວ່າບໍ່ແມ່ນນ້ຳເມົາ ດື່ມ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໖. ສຸຣາປານວັຄ ໑. ສຸຣາປານສິກຂາບົທ ອນາປັຕຕິວາຣ

ທຸກກຸກກຕ

ບໍ່ແມ່ນນ້ຳເມົາ ພິກສຸສຳຄັນວ່າເປັນນ້ຳເມົາ ຕ້ອງອາບັຕິທຸກກົຕ

ບໍ່ແມ່ນນ້ຳເມົາ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຕ

ບໍ່ແມ່ນນ້ຳເມົາ ພິກສຸສຳຄັນວ່າບໍ່ແມ່ນນ້ຳເມົາ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໔໘] ໑. ພິກສຸດື່ມຢາດອງທີ່ມີສີ ກິ່ນ ຣສ ເໝືອນນ້ຳເມົາແຕ່ບໍ່ແມ່ນນ້ຳເມົາ

໒. ພິກສຸດື່ມນ້ຳເມົາເຈືອໃນແກງ

໓. ພິກສຸດື່ມນ້ຳເມົາເຈືອໃນຊີ້ນ

໔. ພິກສຸດື່ມນ້ຳເມົາເຈືອໃນນ້ຳມັນ

໕. ພິກສຸດື່ມນ້ຳເມົາເຈືອນ້ຳອ້ອຍດອງມະຂາມປ້ອມ

໖. ພິກສຸດື່ມຢາດອງອຣິຕຖະຊຶ່ງບໍ່ແມ່ນນ້ຳເມົາ

ໆ. ພິກສຸວິກົລຈິຕ

ໆ. ພິກສຸຕົ້ນບັນຍັດ

ສຸຣາປານສິກຂາບົທທີ ໑ ຈົບ

ເຊີງອັນຖະ :

໑ ຍາດອງອຣິຕຖະ ນັ້ນດອງດ້ວຍນໍ້າມະຂາມປ້ອມເປັນຕົ້ນ ສີ ກິ່ນ ແລະຣົສຄ້າຍນໍ້າເມົາ ແຕ່ບໍ່ແມ່ນນໍ້າເມົາ (ວິ. ອ. ໒/໓໒໗/໔໐໕)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ຝ. ສຸຣາປານວັຄ ໔. ອັງຄຸລິປໂຕທກສິກຂາບົທ ນິທານວັຕຖຸ

ຝ. ສຸຣາປານວັຄ

໔. ອັງຄຸລິປໂຕທກສິກຂາບົທ

ວ່າດ້ວຍການໃຊ້ນີ້ວມືຈີ້ກັນແລະກັນ

ເຣື້ອງພຣະສັພພັຄຄີຍ໌

[໓໓໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໃຊ້ນີ້ວມືຈີ້ພິກສຸຮູບນຶ່ງໃນກຸ່ມພິກສຸສັຕຕຣສວັຄຄີຍ໌ໃຫ້ຫົວ ພິກສຸນັ້ນຫົວຈົນເມື່ອຍ ຫັນໃຈບໍ່ທັນເຖິງແກ່ມໍຣນພາພ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຊ້ນີ້ວມືຈີ້ພິກສຸໃຫ້ຫົວລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ນີ້ວມືຈີ້ພິກສຸໃຫ້ຫົວ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງ

ຕໍາຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ນິ້ວມືຈີ້ພິກສຸໃຫ້ຫົວລະ ໂມຂບຸຣຸສທັງຫລາຍ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໖໑] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະໃຊ້ນິ້ວມືຈີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໖. ສຸຣາປານວັຄ ໔. ອັງຄຸລິປໂຕທກສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໓໖໔] ທີ່ຊື່ວ່າ ໃຊ້ນິ້ວມືຈີ້ ຄື ພິກສຸຈີ້ດ້ວຍນິ້ວມື ອຸປສັມບັນປະສົງຄ໌ຈະໃຫ້ອຸປສັມບັນຫົວ ໃຊ້ກາຍຈັບຕ້ອງກາຍ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

ອຸປສັມບັນ ພິກສຸສໍາຄັນວ່າເປັນອຸປສັມບັນ ໃຊ້ນິ້ວມືຈີ້ໃຫ້ຫົວ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ໃຊ້ນິ້ວມືຈີ້ໃຫ້ຫົວ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສໍາຄັນວ່າເປັນອນຸປສັມບັນ ໃຊ້ນິ້ວມືຈີ້ໃຫ້ຫົວ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸໃຊ້ກາຍຈັບຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຕ

ພິກສຸໃຊ້ຂອງເນື່ອງດ້ວຍກາຍຖືກຕ້ອງກາຍ ຕ້ອງອາບັຕິທຸກກຕ

ພິກສຸໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງຂອງເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຕ

ພິກສຸໃຊ້ຂອງໂຍນໄປຖືກຕ້ອງກາຍ ຕ້ອງອາບັຕິທຸກກຕ

ພິກສຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກຕ

ພິກສຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ໂຍນມາ ຕ້ອງອາບັຕິທຸກກົດ
[໓໖໖] ພິກສຸໃຊ້ກາຍຈັບຕ້ອງກາຍອນຸປສັມບັນ ຕ້ອງອາບັຕິທຸກກົດ
ພິກສຸໃຊ້ກາຍຈັບຕ້ອງຂອງເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກົດ
ພິກສຸໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງກາຍ ຕ້ອງອາບັຕິທຸກກົດ
ພິກສຸໃຊ້ຂອງທີ່ເນື່ອງດ້ວຍກາຍຖືກຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກົດ
ພິກສຸໃຊ້ຂອງໂຍນໄປຖືກຕ້ອງກາຍ ຕ້ອງອາບັຕິທຸກກົດ
ພິກສຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ເນື່ອງດ້ວຍກາຍ ຕ້ອງອາບັຕິທຸກກົດ
ພິກສຸໃຊ້ຂອງໂຍນໄປຖືກຕ້ອງຂອງທີ່ໂຍນມາ ຕ້ອງອາບັຕິທຸກກົດ
ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກົດ
ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ
ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກົດ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໖໔] ໑. ພິກສຸບໍ່ປະສົງຄ໌ຈະໃຫ້ຫົວ ຈັບຕ້ອງກາຍເມື່ອມີເຫຕຸຈຳເປັນ
໔. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ອັງຄຸລິປໂຕທກສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໖. ສຸຣາປານວັຄ ໖. ຫັສສທັມມສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໖. ຫັສສທັມມສິກຂາບົທ

ວ່າດ້ວຍກາຣຫລິ້ນນ້ຳ

ເຣື້ອງພຣະສັຕຕຣສວັຄຄີຍ໌

[໓໖໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັຕຕຣສວັຄຄີຍ໌ຫລິ້ນນ້ຳໃນແມ່ນ້ຳອຈິຣວດີ ເວລານັ້ນ ພຣະເຈົ້າປເສນທິໂກສົລປະທັບຢູ່ທີ່ປຣາສາທຊັ້ນເທິງກັບພຣະນາງມັລລິກາເທວີ ພຣະອົງຄ໌ໄດ້ທອດພຣະເນຕຣເຫັນພວກພິກສຸສັຕຕຣສວັຄຄີຍ໌ຫລິ້ນນ້ຳຢູ່ໃນແມ່ນ້ຳອຈິຣວດີ ຄັນທອດພຣະເນຕຣເຫັນແລ້ວ ຈຶ່ງຮັບສັ່ງກັບພຣະນາງມັລລິກາເທວີດັ່ງນີ້ວ່າ "ນ້ອງມັລລິກາ ນັ້ນພຣະອຣຫັນຕ໌ເຫລົ່ານັ້ນກຳລັງຫລິ້ນນ້ຳ" ພຣະນາງຂາບທູລວ່າ "ພຣະຜູ້ມີພຣະພາຄຄົງຈະຍັງບໍ່ໄດ້ຊົງບັນຍັດສິກຂາບົທ ຫລືພິກສຸເຫລົ່ານັ້ນຍັງບໍ່ຮອບຮູ້ພຣະບັນຍັດເປັນແນ່ ພຣະພຸທທເຈົ້າຂ້າ" ເທື່ອນັ້ນ ພຣະເຈົ້າປເສນທິໂກສົລໄດ້ຊົງມີພຣະດຳຣິດັ່ງນີ້ວ່າ "ດ້ວຍອຸບາຍຢ່າງໃດໜໍ ທີ່ເຮັດໃຫ້ເຮົາບໍ່ຕ້ອງຂາບທູລພຣະຜູ້ມີພຣະພາຄ ແລະພຣະຜູ້ມີພຣະພາຄຈະຊົງຊາບໄດ້ວ່າພິກສຸເຫລົ່ານີ້ຫລິ້ນນ້ຳກັນ" ຄັນແລ້ວພຣະເຈົ້າປເສນທິໂກສົລຈຶ່ງຮັບສັ່ງໃຫ້ນິມົນຕ໌ພວກພິກສຸສັຕຕຣສວັຄຄີຍ໌ມາ ແລ້ວພຣະຣາຊທານນ້ຳອ້ອຍງົບເປັນອັນມາກແກ່ພິກສຸເຫລົ່ານັ້ນດ້ວຍຮັບສັ່ງວ່າ "ພຣະຄຸນເຈົ້າຜູ້ຈະເຣີນ ຂໍພຣະຄຸນເຈົ້າທັງຫລາຍໂປຣດຖວາຍນ້ຳອ້ອຍງົບນີ້ແດ່ພຣະຜູ້ມີພຣະພາຄ" ພວກພິກສຸສັຕຕຣສວັຄຄີຍ໌ນຳນ້ຳອ້ອຍງົບນັ້ນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລດັ່ງນີ້ວ່າ "ພຣະເຈົ້າປເສນທິໂກສົລຖວາຍນ້ຳອ້ອຍງົບນີ້ແດ່ພຣະຜູ້ມີພຣະພາຄ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສຖາມວ່າ "ພິກສຸທັງຫລາຍ ພຣະຣາຊາພົບພວກທ່ານທີ່ໃດ" ພວກພິກສຸສັຕຕຣສວັຄຄີຍ໌ຂາບທູລວ່າ "ພຣະຣາຊາພົບພວກຂ້າພຣະພຸທທເຈົ້າກຳລັງຫລິ້ນນ້ຳຢູ່ໃນແມ່ນ້ຳອຈິຣວດີ ພຣະພຸທທເຈົ້າຂ້າ"

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໗. ສຸຣາປານວັຄ ໓. ຫັສສທັມມສິກຂາບົທ ບົທພາຊນີຍ໌

ຊົງຕຳໜິແລ້ວບັນຍັດສິກຂາບົທ

ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຫລິ້ນນ້ຳລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໓໕] ພິກສຸຕ້ອງອາບັດປາຈິຕຕີຍ໌ ເພາະຫລິ້ນນ້ຳ

ເຣື່ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໓໗] ທີ່ຊື່ວ່າ ຫລິ້ນນ້ຳ ຄື ພິກສຸປະສົງຄ໌ຈະຫລິ້ນນ້ຳຈຶ່ງດຳລົງ ຜຸດຂຶ້ນ ຫລືລອຍໃນນ້ຳເລິກພົ້ນຂໍ້ຕີນ ຕ້ອງອາບັດປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໓໘] ຫລິ້ນນ້ຳ ພິກສຸສຳຄັນວ່າຫລິ້ນ ຕ້ອງອາບັດປາຈິຕຕີຍ໌

ຫລິ້ນນ້ຳ ພິກສຸບໍ່ແນ່ໃຈ ຕ້ອງອາບັດປາຈິຕຕີຍ໌

ຫລິ້ນນ້ຳ ພິກສຸສຳຄັນວ່າບໍ່ໄດ້ຫລິ້ນ ຕ້ອງອາບັດປາຈິຕຕີຍ໌

ທຸກກຕ

ພິກສຸຫລິ້ນນ້ຳຕື້ນໃຕ້ຂໍ້ຕີນ ຕ້ອງອາບັດທຸກກຕ

ພິກສຸນັ່ງເຮືອຫລິ້ນໃນນ້ຳ ຕ້ອງອາບັດທຸກກຕ

ພິກສຸໃຊ້ມື ໃຊ້ຕີນ ໃຊ້ໄມ້ ຫລືໃຊ້ກຣະເບື້ອງຕີນ້ຳ ຕ້ອງອາບັດທຸກກຕ

ພິກສຸຫລິ້ນນ້ຳ ນ້ຳຊາວເຂົ້າ ນ້ຳນົມ ປຽງ ນ້ຳຍ້ອມ ນ້ຳປັສສາວະ ຫລືນ້ຳຕົມທີ່ຂັງໃນພາຊນະ ຕ້ອງອາບັດທຸກກຕ

ບໍ່ໄດ້ຫລິ້ນນ້ຳ ພິກສຸສຳຄັນວ່າຫລິ້ນ ຕ້ອງອາບັດທຸກກຕ

ບໍ່ໄດ້ຫລິ້ນນ້ຳ ພິກສຸບໍ່ແນ່ໃຈ ຕ້ອງອາບັດທຸກກຕ

ບໍ່ໄດ້ຫລິ້ນນ້ຳ ພິກສຸສຳຄັນວ່າບໍ່ໄດ້ຫລິ້ນ ບໍ່ຕ້ອງອາບັດ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໓໓໙] ໑. ພິກສຸບໍ່ປະສົງຄ໌ຈະຫລິ້ນນ້ຳ

໔. ພິກສຸລົງນ້ຳແລ້ວດຳລົງ ຜຸດຂຶ້ນ ຫລືລອຍໃນນ້ຳເມື່ອມີເຫຕຸຈຳເປັນ

໓. ພິກສຸຈະຂ້າມຟາກຈຶ່ງດຳລົງ ຜຸດຂຶ້ນ ຫລືລອຍໃນນ້ຳ
໔. ພິກສຸຜູ້ອ່າຍນ້ຳໃນຄາວມີເຫຕຸຂັດຂ້ອງ
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ຫັສສຫັມມສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໖. ສຸຣາປານວັຄ ໔. ອນາທຣິຍສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໔. ອນາທຣິຍສິກຂາບົທ

ວ່າດ້ວຍຄວາມບໍ່ເອື້ອເຟື້ອຕໍ່ຄຳຕັກເຕືອນ

ເຣື່ອງພຣະສັນນະ

[໓໔໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ໂຊສິຕາຣາມ ເຂຕກຸງໂກສັມພີ ຄັ້ງນັ້ນ ທ່ານພຣະສັນນະປະພຶດບໍ່ສົມຄວຣ ພິກສຸທັງຫລາຍກ່າວຕັກເຕືອນຢ່າງນີ້ວ່າ “ທ່ານສັນນະທ່ານຢ່າກະທຳຢ່າງນັ້ນ ກາຣກະທຳເຊັ່ນນີ້ບໍ່ສົມຄວຣ” ທ່ານບໍ່ເອື້ອເຟື້ອຍັງຂືນທຳເຫມືອນເດີມ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດທ່ານພຣະສັນນະຈຶ່ງບໍ່ເອື້ອເຟື້ອລະ” ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະສັນນະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະສັນນະວ່າ “ສັນນະ ຊາບວ່າ ທ່ານບໍ່ເອື້ອເຟື້ອ ແມ່ນແທ້ບໍ” ທ່ານພຣະສັນນະທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ “ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງບໍ່ເອື້ອເຟື້ອລະ ໂມຄບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມ

ໃສ ຫລືເຮັດໃຫ້ດິນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໔໑] ພິກສຸຕ້ອງອາບັຕິປາຈິຕຕີຍ໌ ເພາະບໍ່ເອື້ອເຟື້ອ

ເອື້ອງພຣະສັນນະ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ຝ໌. ສຸຣາປານວັຄ ໔. ອນາທຣິຍສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໓໔໔] ທີ່ຊື່ວ່າ ຄວາມບໍ່ເອື້ອເຟື້ອ ໄດ້ແກ່ ຄວາມບໍ່ເອື້ອເຟື້ອ ໒ ຢ່າງ ຄື (໑) ຄວາມບໍ່ເອື້ອເຟື້ອຕໍ່ບຸຄຄົລ (໒) ຄວາມບໍ່ເອື້ອເຟື້ອຕໍ່ທັມທີ່ຊື່ວ່າ ຄວາມບໍ່ເອື້ອເຟື້ອຕໍ່ບຸຄຄົລ ໄດ້ແກ່ ພິກສຸຖືກອຸປສັມບັນຕັກເຕືອນດ້ວຍພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ “ຜູ້ນີ້ຖືກສົງຂ໌ລົງອຸກເຂປນີຍກັມຖືກສົງຂ໌ດູຫມິ່ນຫລືຖືກສົງຂ໌ຕຳຫນິ ຄຳເວົ້າຂອງຜູ້ນີ້ບໍ່ຫນ້າເຮັດຕາມ” ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າ ຄວາມບໍ່ເອື້ອເຟື້ອຕໍ່ທັມ ໄດ້ແກ່ ພິກສຸຖືກອຸປສັມບັນຕັກເຕືອນດ້ວຍພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ “ຈະເຮັດຢ່າງໃດ ທັມຂໍ້ນີ້ເພິງເສື່ອມ ເພິງສູນຫລືເພິງອັນຕຣທານໄປ” ຫລືວ່າທ່ານບໍ່ປະສົງຄ໌ຈະສຶກສາພຣະບັນຍັດນັ້ນ ຈຶ່ງບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໔໓] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ບໍ່ເອື້ອເຟື້ອ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸອັນອຸປສັມບັນຕັກເຕືອນດ້ວຍເອື້ອງທີ່ບໍ່ແມ່ນພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ “ເອື້ອງນີ້ບໍ່

ເປັນໄປເພື່ອຄວາມຂັດເກົາ ບໍ່ເປັນໄປເພື່ອຄວາມກຳຈັດ ບໍ່ເປັນໄປເພື່ອຄວາມເປັນຜູ້ໜ້າເຫລື້ອມໃສ ບໍ່ເປັນໄປເພື່ອຄວາມບໍ່ກໍ່໑ ບໍ່ເປັນໄປເພື່ອປາຣິພຄວາມພຽນ" ຕ້ອງອາບັດທຸກກຕ

ເຊີງອັນຖະ :

໑ ອປຈຍາຍາຕິ ສພ຺ພສ຺ສປິ ອຕ຺ຕສ຺ສ ອປຈຍຕ຺ຖາຍ, ນິພ຺ພານາຍາຕິ ອຕ຺ໂຖ ຄວາມບໍ່ກໍ່ ຄື ບໍ່ກໍ່ວັຕຕະ ໄດ້ແກ່ເພື່ອນິພພານ (ສາຣຕ຺ຖ. ຕີກາ ໓/໔໐໓/໕໓໐)

ພິກສຸອັນອນຸປສັມບັນຕັກເຕືອນດ້ວຍພຣະບັນຍັດຫລືບໍ່ແມ່ນພຣະບັນຍັດ ບໍ່ເອື້ອເຟື້ອດ້ວຍກ່າວວ່າ "ເຣື້ອງນີ້ບໍ່ເປັນໄປເພື່ອຄວາມຂັດເກົາ ບໍ່ເປັນໄປເພື່ອຄວາມກຳຈັດ ບໍ່ເປັນໄປເພື່ອຄວາມເປັນຜູ້ໜ້າເຫລື້ອມໃສ ບໍ່ເປັນໄປເພື່ອຄວາມບໍ່ກໍ່ ບໍ່ເປັນໄປເພື່ອປາຣິພຄວາມພຽນ" ຕ້ອງອາບັດທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັດທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັດທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັດທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໓໔໔] ໑. ພິກສຸຜູ້ກ່າວວ່າ "ອາຈາຣຍ໌ຂອງພວກເຮົາຮຽນກັນມາ ສອບຖາມກັນມາຢ່າງນີ້"

໔. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັດ

ອນາທຣິຍສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໖. ສຸຣາປານວັຄ ໕. ພິງສາປນສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໕. ພິງສາປນສິກຂາບົທ

ວ່າດ້ວຍການເຮັດໃຫ້ຕົກໃຈ

ເລື່ອງພຣະສັພພັຄຄີຍ໌

[໑໔໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເຮັດໃຫ້ພວກພິກສຸສັຕຕຣສວັຄຄີຍ໌ຕົກ ໃຈ ພວກພິກສຸເຫລົ່ານັ້ນຖືກເຮັດໃຫ້ຕົກໃຈ ຈຶ່ງຮ້ອງໄຫ້ ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານ ທັງຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກສຸສັຕຕຣສວັຄຄີຍ໌ຕອບວ່າ "ພວກພິກສຸ ສັພພັຄຄີຍ໌ເຮັດໃຫ້ພວກເຮົາຕົກໃຈ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນ ທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງເຮັດໃຫ້ພິກສຸຕົກໃຈລະ" ຄັນພິກສຸເຫລົ່ານັ້ນ ຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເລື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄ ໃຫ້ຊົງ ຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເລື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານເຮັດໃຫ້ພິກສຸຕົກໃຈ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງ ຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຮັດໃຫ້ພິກສຸຕົກໃຈລະ ໂມຄບຸຣຸສ ທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົ ກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໑໔໖] ພິກສຸໃດເຮັດໃຫ້ພິກສຸຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ເລື່ອງພຣະສັພພັຄຄີຍ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຝ. ສຸຣາປານວັຄ ໕. ພິງສາປນສິກຂາບົທ ບົທ ພາຂນີຍ໌

ສິກຂາບົທວິພັງຄ໌

[໓໔໗] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ໄດ້ແກ່ ພິກສຸອື່ນ

ຄຳວ່າ ເຮັດໃຫ້. . . ຕົກໃຈ ຄວາມວ່າ ອຸປສັມບັນຕ້ອງການຈະເຮັດໃຫ້ອຸປສັມບັນຕົກໃຈ ນຳຮູບ ສຽງ ກິ່ນ ຣສ ຫລືໂຜຕຖັພພະເຂົ້າໄປໃກ້໑ ພິກສຸຜູ້ຖືກເຮັດໃຫ້ຕົກໃຈນັ້ນຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນຕ້ອງການຈະເຮັດໃຫ້ອຸປສັມບັນຕົກໃຈ ບອກທາງກັນດານເພາະມີໂຈຣ ກັນດານເພາະມີສັຕວ໌ຮ້າຍ ຫລືກັນດານເພາະມີປີສາຈ ພິກສຸຜູ້ຖືກເຮັດໃຫ້ຕົກໃຈຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໔໘] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ເຮັດໃຫ້ຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ເຮັດໃຫ້ຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ເຮັດໃຫ້ຕົກໃຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ອຸປສັມບັນຕ້ອງການຈະເຮັດໃຫ້ອນຸປສັມບັນຕົກໃຈ ຈຶ່ງນຳຮູບ ສຽງ ກິ່ນ ຣົສ ຫລືໂຜຕຖັພພະເຂົ້າໄປໃກ້ ອນຸປສັມປັນຜູ້ຖືກເຮັດໃຫ້ຕົກໃຈນັ້ນຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິທຸກກຕ

ເຊີງອັນຖະ :

໑ ນຳຮູບ ສຽງ ກິ່ນ ຣົສ ຫລືໂຜຕຖັພພະທີ່ຫນ້າຢ້ານເຂົ້າໄປໃກ້ (ເບິ່ງ ພຣະວິນັຍປິດົກແປ ເຫລັ້ມ ໑ ຂໍ້ ໑໗໘ ຫນ້າ ໑໔໗-໙)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໖. ສຸຣາປານວັຄ ໕. ພີງສາປນສິກຂາບົທ

ອນາປັຕຕິວາຣ

ອຸປສັມບັນຕ້ອງການຈະເຮັດໃຫ້ອນຸປສັມບັນຕົກໃຈ ບອກທາງກັນດານເພາະມີໂຈຣ ກັນດານເພາະມີສັຕວ໌ຮ້າຍ ຫລືກັນດານເພາະມີປີສາຈ ອນຸປສັມບັນຜູ້ຖືກເຮັດໃຫ້ຕົກໃຈນັ້ນ ຈະຢ້ານຫລືບໍ່ຢ້ານກໍຕາມ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໔໙] ໑. ພິກສຸບໍ່ຕ້ອງການຈະເຮັດໃຫ້ຕົກໃຈ ນຳຮູບ ສຽງ ກິ່ນ ຣົສ ຫລືໂຜຕຖັພພະເຂົ້າໄປໃກ້

໒. ພິກສຸບໍ່ຕ້ອງການຈະເຮັດໃຫ້ຕົກໃຈ ບອກທາງກັນດານເພາະມີໂຈຣ ກັນດານເພາະມີສັຕວ໌ຮ້າຍ ຫລືກັນດານເພາະມີປີສາຈ

໓. ພິກສຸວິກົລຈິຕ

໔. ພິກສຸຕົ້ນບັນຍັດ

ພີງສາປນສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໖. ສຸຣາປານວັຄ ໖. ໂຊຕິກສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໖. ໂຊຕິກສິກຂາບົທ

ວ່າດ້ວຍການກໍ່ໄຟຜີງ

ເຣື້ອງພິກສຸຫລາຍຮູບ

[໓໕໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ເພສກຣາມຣິຄທາຍວັນ ເຂຕເມືອງສຸງສຸມາຣຄິຣະ ແຄວ້ນພັຄຄະ ຄັ້ງນັ້ນໃນຣະດູໜາວ ພວກພິກສຸກໍ່ໄຟທີ່ຂອນໄມ້ໃຫຍ່ຂອນນຶ່ງຊຶ່ງມີໂພຣງແລ້ວຝີງ ງູເຫົ່າໃນໂພຣງໄມ້ນັ້ນ ພໍຖືກໄຟຮ້ອນ ໄດ້ເລືອອອກມາໄລ່ພວກພິກສຸ ພິກສຸທັງຫລາຍແລ່ນໜີໄປໃນທີ່ນັ້ນໆ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງກໍ່ໄຟຝີງລະ" ຄັນພິກສຸທັງຫລາຍຕຳໜິພິກສຸເຫລົ່ານັ້ນໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸເຫລົ່ານັ້ນວ່າ "ພິກສຸທັງຫລາຍ ຊາບວ່າພິກສຸທັງຫລາຍກໍ່ໄຟຝີງ ແມ່ນແທ້ບໍ" ພວກພິກສຸທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດພວກໂມຂບຸຣຸສເຫລົ່ານັ້ນຈຶ່ງກໍ່ໄຟຝີງລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດຕ້ອງການຝີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸຫລາຍຮູບ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຖ໌] ຝ. ສຸຣາປານວັຄ ຝ. ໂຊຕິກສິກຂາບົທ ພຣະອນຸບັນຍັດ

ຊົງອນຸຍາຕໃຫ້ພິກສຸເປັນໄຂ້ຝີງໄຟໄດ້

[໓໕໑] ສມັຍນັ້ນ ພິກສຸທັງຫລາຍເປັນໄຂ້ ພວກພິກສຸຜູ້ມີໜ້າທີ່ສອບຖາມອາການໄຂ້ ໄດ້ກ່າວ

ກັບພວກພິກສຸເປັນໄຂ້ດັ່ງນີ້ວ່າ "ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື" ພວກພິກສຸຕອບວ່າ "ເມື່ອກ່ອນພວກຜູ້ຂ້າກໍ່ໄຟຜີງ ດັ່ງນັ້ນຈຶ່ງມີຄວາມຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢໍາເກງຢູ່ວ່າ 'ພຣະຜູ້ມີພຣະພາຄຊົງຫ້າມໄວ້' ຈຶ່ງບໍ່ຜີງໄຟ ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ" ພິກສຸທັງຫລາຍໄດ້ນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ຯລຯ ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ກໍ່ໄຟຫລືໃຊ້ໃຫ້ກໍ່ໄຟຜີງໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ຕາມປະທີປ

[໓໕໔] ສມັຍນັ້ນ ພິກສຸທັງຫລາຍມີຄວາມຢໍາເກງການຕາມປະທີປແດ່ ການກໍ່ໄຟແດ່ ການຕິດໄຟໃນເຮືອນໄຟແດ່ ຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ກໍ່ໄຟຫລືໃຊ້ໃຫ້ກໍ່ໄຟເພາະມີເຫຕຸຜົລທີ່ສົມຄວຣ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໓໕໓] ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຜົລທີ່ສົມຄວຣ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໖. ສຸຣາປານວັຄ ໖. ໂຊຕິກສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໓໕໔] ຄໍາວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ
ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າ ພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ

ວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ບໍ່ເປັນໄຂ້ ຄື ພິກສຸຜູ້ເວັ້ນຈາກໄຟກໍມີຄວາມຜາສຸກ
ທີ່ຊື່ວ່າ ເປັນໄຂ້ ຄື ພິກສຸຜູ້ເວັ້ນຈາກໄຟຈະບໍ່ມີຄວາມຜາສຸກ
ຄໍາວ່າ ຕ້ອງການຜີງໄຟ ຄື ຕ້ອງການໃຫ້ຮ່າງກາຍອບອຸ່ນ
ທີ່ຊື່ວ່າ ໄຟ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງອັຄຄີ
ຄໍາວ່າ ກໍ່ ຄື ພິກສຸກໍ່ເອງ ຕ້ອງອາບັຕິປາຈິຕຕີຍ໌
ຄໍາວ່າ ໃຊ້ໃຫ້ກໍ່ ຄື ພິກສຸສັ່ງຜູ້ອື່ນ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸຜູ້ຮັບຄໍາສັ່ງຄັ້ງດຽວແຕ່ກໍ່ໄຟຫລາຍຄັ້ງ ພິກສຸຜູ້ສັ່ງ ຕ້ອງອາບັຕິປາຈິຕຕີຍ໌
ຄໍາວ່າ ເວັ້ນໄວ້ແຕ່ມີເຫຕຸຜົລເຊັ່ນນັ້ນ ຄື ຍົກໄວ້ແຕ່ມີເຫຕຸຜົລທີ່ສົມຄວຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໑໕໕] ບໍ່ເປັນໄຂ້ ພິກສຸສໍາຄັນວ່າບໍ່ເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຜົລເຊັ່ນນັ້ນ
ບໍ່ເປັນໄຂ້ ພິກສຸບໍ່ແນ່ໃຈ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຜົລເຊັ່ນນັ້ນ
ບໍ່ເປັນໄຂ້ ພິກສຸສໍາຄັນວ່າເປັນໄຂ້ ຕ້ອງການຜີງໄຟ ກໍ່ຫລືໃຊ້ໃຫ້ກໍ່ໄຟ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຜົລເຊັ່ນນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ຝ. ສຸຣາປານວັຄ ຝ. ໂຊຕິກສິກຂາບົທ ອນາປັຕຕິວາຣ

ຕິກທຸກກຕ

ພິກສຸເກັບດຶ້ນໄຟທີ່ຕົກເຂົ້າທີ່ເດີມ ຕ້ອງອາບັຕິທຸກກຕ
ເປັນໄຂ້ ພິກສຸສໍາຄັນວ່າບໍ່ເປັນໄຂ້ ຕ້ອງອາບັຕິທຸກກຕ
ເປັນໄຂ້ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ເປັນໄຂ້ ພິກສຸສໍາຄັນວ່າເປັນໄຂ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໕໓] ໑. ພິກສຸເປັນໄຂ້

໒. ພິກສຸຜີງໄຟທີ່ຜູ້ອື່ນກໍ່ໄວ້

໖. ພິກສຸຜີງໄຟຖ່ານທີ່ບໍ່ມີແປວ

໔. ພິກສຸຕາມປະທີປ ກໍ່ໄຟຫລືຕິດໄຟໃນເຮືອນໄຟເພາະມີເຫຕຸຜົລເຊັ່ນນັ້ນ

໕. ພິກສຸຜູ້ກໍ່ໄຟໃນຄາວມີເຫຕຸຂັດຂ້ອງ໑

໓. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ໂຊຕິກສິກຂາບົທທີ ໓ ຈົບ

ເຊີງອັນຖະ :

໑ "ເຫຕຸຂັດຂ້ອງ" ໃນທີ່ນີ້ຫມາຍເຖິງຈະມີສັຕວ໌ຮ້າຍ ຊຶ້ນຮ້າຍ ແລະອມນຸສຍ໌ມາທຳຮ້າຍ (ວິ. ອ. ໒/໖໕໓/໔໐໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໓. ສຸຣາປານວັຄ ໗. ນຫານສິກຂາບົທ ນິທານວັຕຖຸ

໓. ສຸຣາປານວັຄ

໗. ນຫານສິກຂາບົທ

ວ່າດ້ວຍການສົງນ້ຳນອກສມັຍ

ເຣື້ອງພຣະເຈົ້າພິມພິສາຣ

[໖໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພິກສຸທັງຫລາຍສົງນ້ຳໃນແມ່ນ້ຳຕໂປທາ໑ ເທື່ອນັ້ນ ພຣະເຈົ້າພິມພິສາຣຈອມທັພມຄຫຣັຖສເດັຈໄປແມ່ນ້ຳຕໂປທາດ້ວຍມີພຣະຣາຊປະສົງຄ໌ຈະຊົງສນານພຣະ

ສຽງ ປະທັບຖ້າຢູ່ດ້ານນຶ່ງ ດ້ວຍພຣະດຳຣິວ່າ "ເຮົາຈະສນານຕໍ່ເມື່ອພຣະຄຸນເຈົ້າທັງຫລາຍສົງນ້ຳແລ້ວໆ" ພິກສຸສົງນ້ຳຈົນຄ້ອຍຄ່ຳ ຄັ້ງນັ້ນພຣະເຈົ້າພິມພິສາຣຈອມທັພມຄທຣັຖຕ້ອງຊົງສນານພຣະສຽງໃນເວລາຄ້ອຍຄ່ຳ ເມື່ອປະຕູເມືອງປິດຈຳຕ້ອງປະທັບແຮມຢູ່ນອກເມືອງ ເຊົ້າຕຣູ່ຈຶ່ງສເດັຈເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບທັງໆທີ່ເຄື່ອງປຣະທິນໃນພຣະວຣກາຍຍັງບໍ່ຈາງຫາຍເລີຍ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວປະທັບ ນະ ທີ່ສົມຄວຣ

ພຣະຜູ້ມີພຣະພາຄໄດ້ຕຣັສຖາມພຣະເຈົ້າພິມພິສາຣຈອມທັພມຄທຣັຖຜູ້ປະທັບນັ່ງ ນະ ທີ່ສົມຄວຣດັ່ງນີ້ວ່າ "ເຫຕຸໃດພຣະອົງຄ໌ຈຶ່ງສເດັຈມາແຕ່ເຊົ້າທັງໆທີ່ເຄື່ອງປຣະທິນໃນພຣະວຣກາຍຍັງບໍ່ຈາງຫາຍ" ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖຂາບທູລເຣື້ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງ ຊາບ ເທື່ອນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມທັພມຄທຣັຖເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ລຳດັບນັ້ນ ພຣະເຈົ້າພິມພິສາຣຈອມທັພມຄທຣັຖຜູ້ຊຶ່ງພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ

ເຊີງອັນຖະ :

໑ ແມ່ນ້ຳຕໂປທາ ຄືແມ່ນ້ຳສາຍນີ້ມີນ້ຳຮ້ອນເດືອດຟົດ ຕົ້ນກຳເນີດໄຫລມາຈາກແອ່ງທະເລສາບໃຕ້ພູເຂົາເວພາຣບັນພິຕ ໄຫລຕັດຜ່ານພຣະນຄຣຣາຊຄືຫ໌ ນ້ຳໃນແອ່ງຕົ້ນກຳເນີດໃສເຢັນ ແຕ່ພໍໄຫລເປັນສາຍແມ່ນ້ຳແລ້ວກາຍເປັນນ້ຳຮ້ອນ ອັນຖະກຖາອທິບາຍວ່າ ສາເຫຕຸທີ່ນ້ຳໃນແມ່ນ້ຳມີຄວາມຮ້ອນນັ້ນ ເພາະໄຫລຜ່ານມາຣະຫວ່າງມຫານຣົກ ໔ ຂຸມ (ເບິ່ງ ພຣະວິນັຍປິດົກແປ ເຫລັ້ມ ໑ ຂໍ້ ໔໖໑ ຫນ້າ ໔໔໕, ສໍ. ອ. ໑/໔໐/໖໘)

ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວ ຊົງລຸກຂຶ້ນຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວ ທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວສເດັຈໄປ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານເຫັນພຣະຣາຊາກໍຍັງອາບນ້ຳບໍ່ຮູ້ຄວາມພໍດີແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທ

ເຈົ້າຊົງຕຳໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດພວກໂມຂບຸຣຸສເຫລົ່ານັ້ນເຫັນພຣະຣາຊາແລ້ວກໍ ຍັງອາບນ້ຳບໍ່ຮູ້ຄວາມພໍດີລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມ ໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍ ພິກສຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌
ສິກຂາບົດນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພຣະເຈົ້າພິມພິສານ ຈົບ

ຊົງອນຸຍາຕໃຫ້ພິກສຸອາບນ້ຳໄດ້ໃນສມັຍທີ່ຮ້ອນ

[໓໕໗] ສມັຍນັ້ນ ພິກສຸທັງຫລາຍມີຄວາມຢຳເກງ ບໍ່ຍອມອາບນ້ຳໃນສມັຍທີ່ຮ້ອນ ໃນສມັຍທີ່ອົບ ເອົ້າ ຈຳວັດທັງໆທີ່ຕົນຕົວຍັງຊຸ່ມເຫື່ອ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ພິກສຸທັງຫລາຍຈຶ່ງນຳ ເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ອາບນ້ຳໃນສມັຍທີ່ຮ້ອນ ໃນສມັຍທີ່ອົບເອົ້າ ໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົດນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ ສມັຍໃນຂໍ້ນັ້ນ ຄື ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນ ຮວມເປັນ ໒ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ ນີ້ເປັນສມັຍໃນຂໍ້ນັ້ນ
ສິກຂາບົດນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ພິກສຸອາບນ້ຳໄດ້ໃນສມັຍທີ່ເປັນໄຂ້

[໓໕໘] ສມັຍນັ້ນ ພິກສຸທັງຫລາຍເປັນໄຂ້ ພວກພິກສຸຜູ້ມີໜ້າທີ່ສອບຖາມອາການໄຂ້ ໄດ້ກ່າວ ກັບພວກພິກສຸເປັນໄຂ້ດັ່ງນີ້ວ່າ "ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື" ພວກພິກສຸຜູ້ ເປັນໄຂ້ຕອບວ່າ "ເມື່ອກ່ອນຍັງບໍ່ເຖິງເຄິ່ງເດືອນ ພວກຜູ້ຂ້າອາບນ້ຳກັນໄດ້ ດັ່ງນັ້ນຈຶ່ງມີຄວາມ ຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢຳເກງຢູ່ວ່າ 'ພຣະຜູ້ມີພຣະພາຄຊົງຫ້າມໄວ້' ຈຶ່ງບໍ່ໄດ້ອາບນ້ຳ

ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ" ພິກສຸທັງຫລາຍໄດ້ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ອາບນ້ຳໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນ ຮວມເປັນ ໒ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້ ນີ້ເປັນສມັຍໃນຂໍ້ນັ້ນ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ພິກສຸອາບນ້ຳໄດ້ໃນສມັຍທີ່ເຮັດວຽກ

[໓໖໐] ສມັຍນັ້ນ ພິກສຸທັງຫລາຍເຮັດວຽກ ມີຄວາມຢໍາເກງ ຈຶ່ງບໍ່ອາບນ້ຳ ຈຳວັດທັງໆທີ່ຕົນຕົວຍັງຊຸ່ມເຫື່ອ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ຯລຯ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາຕໃຫ້ອາບນ້ຳໄດ້ໃນສມັຍທີ່ເຮັດວຽກ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນ ຮວມເປັນ ໒ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້ (໓) ສມັຍທີ່ເຮັດວຽກ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ຊົງອນຸຍາຕໃຫ້ພິກສຸອາບນ້ຳໄດ້ໃນສມັຍທີ່ຍ່າງທາງໄກ

[໓໖໑] ສມັຍນັ້ນ ພິກສຸທັງຫລາຍຍ່າງທາງໄກ ມີຄວາມຢໍາເກງ ຈຶ່ງບໍ່ອາບນ້ຳ ຈຳວັດທັງໆທີ່ຕົນຕົວຍັງຊຸ່ມເຫື່ອ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ຯລຯ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງ

ຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາດໃຫ້ອາບນ້ຳໄດ້ໃນສມັຍທີ່ຍ່າງທາງໄກ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນສມັຍ ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນແຣກແຫ່ງຣະດູຝົນ ຣວມເປັນ ໔ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້(໓) ສມັຍທີ່ເຮັດວຽກ (໔) ສມັຍທີ່ຍ່າງທາງໄກ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໖. ສຸຣາປານວັຄ ໗. ນຫານສິກຂາບົທ ສິກຂາບົທວິພັງຄ໌

ຊົງອນຸຍາດໃຫ້ພິກສຸອາບນ້ຳໄດ້ໃນສມັຍທີ່ມີພາຍຸຝຸ່ນ

[໓໖໔] ສມັຍນັ້ນ ພິກສຸທັງຫລາຍຕັດຍົບຈີວອນຢູ່ກາງແຈ້ງ ຖືກລົມຝຸ່ນເປິເປື້ອນ ຝົນກໍຕົກປ໋ອກແປັກ ພວກພິກສຸມີຄວາມຢຳເກງ ຈຶ່ງບໍ່ອາບນ້ຳ ຈຳວັດທັງໆທີ່ຕົນຕົວຍັງເປິເປື້ອນ ຈີວອນກໍດີ ເສນາສນະກໍດີເສັຽຫາຍ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ ຯລຯ ພຣະຜູ້ມີພຣະພາຄຮັບສັ່ງກັບພິກສຸທັງຫລາຍວ່າ “ພິກສຸທັງຫລາຍ ຍັງບໍ່ເຖິງເຄິ່ງເດືອນ ເຮົາອນຸຍາດໃຫ້ອາບນ້ຳໃນສມັຍທີ່ມີພາຍຸຝຸ່ນໄດ້” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໓໖໓] ອີກຢ່າງນຶ່ງ ພິກສຸໃດ ຍັງບໍ່ເຖິງເຄິ່ງເດືອນ ອາບນ້ຳ ຕ້ອງອາບັຕິປາຈິຕຕີຍ໌ເວັ້ນໄວ້ແຕ່ໃນສມັຍ ສມັຍໃນຂໍ້ນັ້ນ ຄື (໑) ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ ແລະເດືອນທຳອິດແຫ່ງຣະດູຝົນ ຣວມເປັນ ໔ ເດືອນເຄິ່ງ ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ (໒) ສມັຍທີ່ເປັນໄຂ້ (໓) ສມັຍທີ່ເຮັດວຽກ (໔) ສມັຍທີ່ຍ່າງທາງໄກ (໕) ສມັຍທີ່ມີພາຍຸຝຸ່ນ ນີ້ເປັນສມັຍໃນຂໍ້ນັ້ນ

ສິກຂາບົທວິພັງຄ໌

[໓໓໔] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຯລຯ ຊື່ວ່າພິກສຸ ເພາະວ່າເປັນຜູ້ຂໍ ນີ້ທີ່ພຣະຜູ້ມີພຣະພາຄປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ຍັງບໍ່ເຖິງເຄິ່ງເດືອນ ຄື ໜ້ອຍກວ່າເຄິ່ງເດືອນ

ຄຳວ່າ ອາບນ້ຳ ໄດ້ແກ່ ພິກສຸອາບນ້ຳຖູຕົວດ້ວຍຈຸຣນຫລືດິນໜຽວ ຕ້ອງອາບັຕິທຸກກຕ ທຸກໆຄັ້ງທີ່ຖູ ອາບເສັດ ຕ້ອງອາບັຕິປາຈິຕຕິຍ໌

ຄຳວ່າ ເວັ້ນໄວ້ແຕ່ໃນສມັຍ ຄື ຍົກເວັ້ນແຕ່ໃນສມັຍ

ທີ່ຊື່ວ່າ ສມັຍທີ່ຮ້ອນ ຄື ທ້າຍຣະດູຮ້ອນ ໑ ເດືອນເຄິ່ງ

ທີ່ຊື່ວ່າ ສມັຍທີ່ອົບເອົ້າ ຄື ເດືອນແຣກແຫ່ງຣະດູຝົນ ພິກສຸເພິງອາບນ້ຳໄດ້ເພາະຖືວ່າ ໒ ເດືອນເຄິ່ງນີ້ເປັນສມັຍທີ່ຮ້ອນ ເປັນສມັຍທີ່ອົບເອົ້າ

ທີ່ຊື່ວ່າ ສມັຍທີ່ເປັນໄຂ້ ຄື ພິກສຸໃດບໍ່ໄດ້ອາບນ້ຳຈະບໍ່ມີຄວາມຜາສຸກ ພິກສຸເພິງອາບນ້ຳໄດ້ເພາະຖືວ່າ ເປັນສມັຍທີ່ເປັນໄຂ້

ທີ່ຊື່ວ່າ ສມັຍທີ່ເຮັດວຽກ ຄື ໂດຍທີ່ສຸດແມ່ນການກວາດບໍຣິເວນະ ພິກສຸເພິງອາບນ້ຳໄດ້ ເພາະຖືວ່າເປັນສມັຍທີ່ເຮັດວຽກ

ທີ່ຊື່ວ່າ ສມັຍທີ່ຍ່າງທາງໄກ ຄື ພິກສຸຄິດວ່າ "ເຮົາຈະຍ່າງທາງເຄິ່ງໂຍຊນ໌" ເພິງອາບນ້ຳໄດ້ ພິກສຸນັ້ນເມື່ອຈະໄປເພິງອາບນ້ຳໄດ້ ໄປແລ້ວເພິງອາບນ້ຳໄດ້

ທີ່ຊື່ວ່າ ສມັຍທີ່ມີພາຍຸຝຸ່ນ ຄື ພິກສຸທັງຫລາຍຖືກລົມຝຸ່ນເປິເປື້ອນຫລືຫຍາດຝົນຕົກຖືກກາຍ ໒-໓ ຢົດ ພິກສຸເພິງອາບນ້ຳໄດ້ເພາະຖືວ່າ ເປັນສມັຍທີ່ມີພາຍຸຝຸ່ນ

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[໓໓໕] ໜ້ອຍກວ່າເຄິ່ງເດືອນ ພິກສຸສຳຄັນວ່າໜ້ອຍກວ່າ ອາບນ້ຳ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ໃນສມັຍ

ໜ້ອຍກວ່າເຄິ່ງເດືອນ ພິກສຸບໍ່ແນ່ໃຈ ອາບນ້ຳ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ໃນສມັຍ

ໜ້ອຍກວ່າເຄິ່ງເດືອນ ພິກສຸສຳຄັນວ່າເກີນກວ່າ ອາບນ້ຳ ຕ້ອງອາບັຕິປາຈິຕຕິຍ໌ ເວັ້ນໄວ້ແຕ່ໃນ

ສມັຍ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໖. ສຸຣາປານວັຄ ໗. ນຫານສິກຂາບົທ ອນາປັຕຕິວາຣ

ທຸກກຸກກຸຕ

ເກີນກວ່າເຄິ່ງເດືອນ ພິກສຸສຳຄັນວ່າຫນ້ອຍກວ່າ ຕ້ອງອາບັຕິທຸກກຕ

ເກີນກວ່າເຄິ່ງເດືອນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ເກີນກວ່າເຄິ່ງເດືອນ ພິກສຸສຳຄັນວ່າເກີນກວ່າ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໖໖] ໑. ພິກສຸອາບນ້ຳໃນສມັຍ

໔. ພິກສຸອາບນ້ຳຊ່ວງເຄິ່ງເດືອນ

໓. ພິກສຸອາບນ້ຳຊ່ວງເກີນກວ່າເຄິ່ງເດືອນ

໔. ພິກສຸຜູ້ຂ້າມຝັ່ງຈຶ່ງອາບນ້ຳ

໕. ພິກສຸອາບນ້ຳໃນປັຈຈັນຕຊົນບົທທຸກແຫ່ງ

໖. ພິກສຸຜູ້ມີເຫຕຸຂັດຂ້ອງ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ນຫານສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໖. ສຸຣາປານວັຄ ໘. ທຸພພັນນກຣນສິກຂາບົທ ນິທານວັຕຖຸ

໖. ສຸຣາປານວັຄ

໗. ທຸພພັນນກຣນສິກຂາບົທ
ວ່າດ້ວຍການທຳຈີວອນໃຫມ່ໃຫ້ເສັ່ງສີ

ເຣື້ອງພິກສຸຫລາຍຣູບ
[໓໓໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸແລະປຣິພາຊກຈຳນວນຫລາຍຕ່າງຢ່າງທາງໄກຈາກ ເມືອງສາເກຕໄປກຸງສາວັຕຖີ ຣະຫວ່າງທາງ ໂຈຣທັງຫລາຍອອກມາປຸ້ນ ພວກເຈົ້າຫນ້າທີ່ໃນກຸງ ສາວັຕຖີຈັບໂຈຣເຫລົ່ານັ້ນໄດ້ພ້ອມຂອງກາງ ຈຶ່ງສົ່ງຂ່າວເຖິງພິກສຸທັງຫລາຍວ່າ "ນິມົນຕ໌ພຣະຄຸນ ເຈົ້າມາເຖີດ ຖ້າຈຳໄດ້ ນິມົນຕ໌ຮັບເອົາຈີວອນຂອງຕົນໆຄືນໄປ" ພິກສຸທັງຫລາຍຈຳຈີວອນ ຂອງຕົນ ບໍ່ໄດ້ ຄົນທັງຫລາຍຈຶ່ງຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍ ຈຶ່ງຈຳຈີວອນຂອງຕົນບໍ່ໄດ້ລະ" ພິກສຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສະແດງທັມມີ ກຖາໃຫ້ເຫມາະສົມ ໃຫ້ຄ້ອຍຕາມກັບເຣື້ອງນັ້ນແກ່ພວກພິກສຸແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ພິກສຸທັງຫລາຍໂດຍອາສັຍອຳນາຈປ ໂຍດ ໑໐ ປະການ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຂ໌
໔. ເພື່ອຄວາມຜາສຸກແຫ່ງສົງຂ໌
ຯລຯ
໑໐. ເພື່ອເອື້ອເຟື້ອວິນັຍ໑

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :
໑ ເບິ່ງ ຂໍ້ ໕໓໓ ຫນ້າ ໙໔ ໃນເຫລັ້ມນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຝ. ສຸຣາປານວັຄ ໗. ທຸພພັນນກຣນສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໓໖໗] ກໍພິກສຸໄດ້ຈີວອນໃຫມ່ ເພິງໃຊ້ວັຕຖຸທີ່ເຮັດໃຫ້ເສັ້ງສີ ໓ ຊນິດຢ່າງໃດຢ່າງນຶ່ງຄື ສີຂຽວ ສີຕົມ ຫລືສີດໍາກໍ່າ ມາເຮັດໃຫ້ເສັ້ງສີ ຖ້າພິກສຸບໍ່ໃຊ້ວັຕຖຸທີ່ເຮັດໃຫ້ເສັ້ງສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັ້ງສີ ໃຊ້ສອຍຈີວອນໃຫມ່ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພິກສຸຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

[໓໖໘] ທີ່ຊື່ວ່າ ໃຫມ່ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງຜ້າທີ່ຍັງບໍ່ທໍາພິນທຸກັປປະ໑

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ

ຄໍາວ່າ ພິກສຸເພິງໃຊ້ວັຕຖຸທີ່ເຮັດໃຫ້ເສັ້ງສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັ້ງສີ ຄື ໂດຍທີ່ສຸດພິກສຸເພິງເຮັດໃຫ້ເສັ້ງສີແມ່ນດ້ວຍປາຍຫຍ້າຄາແຕະ

ທີ່ຊື່ວ່າ ສີຂຽວ ໄດ້ແກ່ ສີຂຽວ ໒ ຢ່າງ ຄື ຂຽວສໍາຣິດ ສີຂຽວໃບໄມ້

ທີ່ຊື່ວ່າ ສີຕມ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງສີນໍ້າຕົມ

ທີ່ຊື່ວ່າ ສີດໍາຄລໍ້າ ໄດ້ແກ່ ສີດໍາຄລໍ້າຢ່າງໃດຢ່າງນຶ່ງ

ທີ່ຊື່ວ່າ ຖ້າພິກສຸບໍ່ໃຊ້ວັຕຖຸທີ່ເຮັດໃຫ້ເສັ້ງສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັ້ງສີ ຄວາມວ່າ ໂດຍທີ່ສຸດພິກສຸບໍ່ເອົາປາຍຫຍ້າຄາແຕະວັຕຖຸທີ່ເຮັດໃຫ້ເສັ້ງສີ ໓ ຊນິດ ຢ່າງໃດຢ່າງນຶ່ງ ມາເຮັດໃຫ້ເສັ້ງສີ ແລ້ວໃຊ້ສອຍຈີວອນໃຫມ່ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຣຖະ :

໑ ຄໍາວ່າ "ພິນທຸກັປປະ" ຫມາຍເຖິງກາຣທໍາຈຸດເປັນວົງກົມຢ່າງໃຫຍ່ເທົ່າແວວຕານົກຍູງ ຢ່າງເລັກເທົ່າຫລັງຕົວເຮືອດ ທີ່ມຸມຈີວອນ ດ້ວຍສີຂຽວ ສີຕົມ ຫລືສີດໍາກໍ່າ ເພື່ອເຮັດໃຫ້ຈີວອນເສັ້ງສີ ຫລືມີຕໍາຫນິ (ວິ. ອ. ໒/໓໖໘-໙/໔໑໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໖. ສຸຣາປານວັຄ ໘. ທຸພພັນນກຣນສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໗໐] ຍັງບໍ່ໄດ້ເຮັດໃຫ້ເສັ້ງສີ ພິກສຸສຳຄັນວ່າຍັງບໍ່ໄດ້ເຮັດໃຫ້ເສັ້ງສີ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ຍັງບໍ່ໄດ້ເຮັດໃຫ້ເສັ້ງສີ ພິກສຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ຍັງບໍ່ໄດ້ເຮັດໃຫ້ເສັ້ງສີ ພິກສຸສຳຄັນວ່າເຮັດໃຫ້ເສັ້ງສີແລ້ວ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກທຸກກຕ

ເຮັດໃຫ້ເສັ້ງສີແລ້ວ ພິກສຸສຳຄັນວ່າຍັງບໍ່ໄດ້ເຮັດໃຫ້ເສັ້ງສີ ຕ້ອງອາບັຕິທຸກກຕ

ເຮັດໃຫ້ເສັ້ງສີແລ້ວ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ເຮັດໃຫ້ເສັ້ງສີແລ້ວ ພິກສຸສຳຄັນວ່າໃຊ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໑] ໑. ພິກສຸເຮັດໃຫ້ເສັ້ງສີແລ້ວນຸ່ງຫົ່ມ

໒. ພິກສຸຫົ່ມຈີວອນທີ່ພິນທຸກັປປະເສັ້ງຫາຍໄປ

໓. ພິກສຸຫົ່ມຈີວອນທີ່ທຳພິນທຸກັປປະໄວ້ ແຕ່ເກົ່າໂດກຂາດ

໔. ພິກສຸຫົ່ມຈີວອນທີ່ບໍ່ໄດ້ທຳພິນທຸກັປປະໄວ້ ແຕ່ຍຶບຕິດກັບຈີວອນທີ່ທຳພິນທຸກັປປະໄວ້

໕. ພິກສຸນຸ່ງຫົ່ມຜ້າປະ

໖. ພິກສຸນຸ່ງຫົ່ມຜ້າຫາບ

໗. ພິກສຸໃຊ້ຜ້າດາມ

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ທຸພພັນນກຣນສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຝ. ສຸຣາປານວັຄ ຓ. ວິກັປປນສິກຂາບົທ ນິທານວັຕຖຸ

ຝ. ສຸຣາປານວັຄ

ຓ. ວິກັປປນສິກຂາບົທ

ວ່າດ້ວຍການວິກັປຈີວອນ

ເຣື້ອງພຣະອຸປນັນທສາກຍບຸຕຣ

[໓໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສາກຍບຸຕຣວິກັປ໑ ຈີວອນດ້ວຍຕົນເອງ ແກ່ພິກສຸສັທທິວິຫາຣິກຂອງພິກສຸຜູ້ເປັນພີ່ນ້ອງກັນແລ້ວໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທທຣນ໌໔ ລຳດັບນັ້ນ ພິກສຸນັ້ນໄດ້ແຈ້ງເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບວ່າ "ທ່ານທັງຫລາຍ ທ່ານພຣະອຸປນັນທສາກຍບຸຕຣວິກັປຈີວອນດ້ວຍຕົນເອງແກ່ຜູ້ຂ້າແລ້ວໃຊ້ສອຍຈີວອນທີ່ຍັງບໍ່ໄດ້ ປັຈຈຸທທຣນ໌" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸປນັນທສາກຍບຸຕຣວິກັປຈີວອນດ້ວຍຕົນເອງແກ່ພິກສຸແລ້ວ ຈຶ່ງໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທທຣນ໌ລະ" ຄັນພິກສຸເຫລົ່ານັ້ນຕຳຫນິທ່ານພຣະອຸປນັນທສາກຍບຸຕຣໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອຸປນັນທສາກຍບຸຕຣວ່າ "ອຸປນັນທະ ຊາບວ່າ ທ່ານວິກັບຈີວອນດ້ວຍຕົນເອງແກ່ພິກສຸແລ້ວ

ເຊີງອັນຖະ :

໑ ວິກັປ ເປັນວິນັຍກັມ ຄືວິທີການທາງພຣະວິນັຍ ເພື່ອປ້ອງກັນອາບັຕິ ຕາມປົກຕິພິກສຸຈະໃຊ້ສອຍຜ້ານຸ່ງຫົ່ມພຽງ ໓ ຜືນ ຄື ຜ້າສັງຂາຕິ ຜ້າອຸຕຕຣາສົງຄ໌ ຜ້າອັນຕຣວາສກ ຜ້ານອກຈາກນີ້ຮຽກວ່າ ຜ້າອຕິເຣກຈີວອນ ເກັບໄວ້ໃຊ້ສອຍໄດ້ບໍ່ເກີນ ໑໐ ວັນ ຖ້າຕ້ອງການຈະໃຊ້ສອຍຕລອດໄປ ຕ້ອງວິກັປ ຄື ຍົກໃຫ້ແກ່ຜູ້ອື່ນ ໃຫ້ຜູ້ອື່ນມີກັມສິທທິ໌ຮ່ວມ ຜູ້ທີ່ຮັບໄປ ຕ້ອງໃຫ້ຄືນໄວ້ໃຊ້ສອຍ ນີ້ເປັນວິນັຍກັມ ໃນກໍຣະນີນີ້ຖ້າເປັນສມັຍຈີວອນກາລ ບໍ່ຕ້ອງວິກັປ ໃຊ້ໄດ້ຕລອດຈົນກວ່າຈະຫມົດຈີ

ວອນກາລ (ດູ ນິສສັຄຄິຍ໌ ສິກຂາບົທທີ ໑ ຂໍ້ ໔໘໐-໔໗໐ ໜ້າ ໔-໗ ໃນເຫລັ້ມນີ້ ແລະ ວິ. ມ. ໕/
໓໕໗/໑໘໐, ວິ. ອ. ໔/໔໘໙/໑໔໘-໑໕໕)
໔ ຄຳວ່າ "ປັຈຈຸທທຣນ໌" ແປວ່າ ຖອນຄືນ ຄືຖອນຜ້າທີ່ວິກັປໄວ້

ໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທທຣນ໌ ແມ່ນແທ້ບໍ" ທ່ານພຣະອຸປນັນທສາກຍບຸຕຣທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານ ເມື່ອວິກັປຈີວອນດ້ວຍຕົນເອງແກ່ພິກສຸແລ້ວ ຈຶ່ງໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທທຣນ໌ ລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສ ຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໗໓] ກໍ ພິກສຸໃດວິກັປຈີວອນດ້ວຍຕົນເອງແກ່ພິກສຸ ຫລືແກ່ພິກສຸນີ ຫລືແກ່ສິກຂມານາ ຫລືແກ່ສາມເນຣ ຫລືແກ່ສາມເນຣີ ແລ້ວໃຊ້ສອຍຈີວອນທີ່ຍັງບໍ່ໄດ້ປັຈຈຸທທຣນ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໓໗໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້
ຄຳວ່າ ແກ່ພິກສຸ ຄື ພິກສຸຣູບອື່ນ
ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ສຕຣີທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ
ທີ່ຊື່ວ່າ ສິກຂມານາ ໄດ້ແກ່ ສຕຣີຜູ້ສຶກສາສິກຂາທັມ ໖ ຂ້ອຕລອດ ໒ ປີ
ທີ່ຊື່ວ່າ ສາມເນຣ ໄດ້ແກ່ ບຸຣຸສຜູ້ຖືສິກຂາບົທ ໑໐ ຂ້ອ
ທີ່ຊື່ວ່າ ສາມເນຣີ ໄດ້ແກ່ ສຕຣີຜູ້ຖືສິກຂາບົທ ໑໐ ຂ້ອ

ຄຳວ່າ ດ້ວຍຕົນເອງ ຄື ວິກັປເອງ
ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ຝ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ
ທີ່ຊື່ວ່າ ວິກັປ ມີ ໒ ຢ່າງ ຄື (໑) ວິກັປຕໍ່ໜ້າ (໒) ວິກັປລັບຫລັງ
ທີ່ຊື່ວ່າ ວິກັປຕໍ່ໜ້າ ຄື ພິກສຸກ່າວວ່າ "ຂ້າພະເຈົ້າວິກັປຈີວອນຜືນນີ້ແກ່ທ່ານ ຫລືຂ້າພະເຈົ້າວິກັປຈີວອນຜືນນີ້ແກ່ພິກສຸນີ້"
ທີ່ຊື່ວ່າ ວິກັປລັບຫລັງ ຄື ພິກສຸກ່າວວ່າ "ຂ້າພະເຈົ້າໃຫ້ຈີວອນຜືນນີ້ແກ່ທ່ານເພື່ອວິກັປ"
ພິກສຸຜູ້ຮັບວິກັປຖາມພິກສຸຜູ້ວິກັປວ່າ "ໃຜເປັນມິຕຣຫລືເພື່ອນຂອງທ່ານ" ເພິ່ງຕອບວ່າ "ພິກສຸຊື່ນີ້ ແລະພິກສຸຊື່ນີ້"
ພິກສຸຜູ້ຮັບວິກັປເພິ່ງກ່າວກັບພິກສຸຜູ້ວິກັປວ່າ "ຂ້າພະເຈົ້າໃຫ້ແກ່ພິກສຸເຫລົ່ານັ້ນ ຈີວອນຜືນນີ້ເປັນຂອງພິກສຸເຫລົ່ານັ້ນ ທ່ານຈົ່ງໃຊ້ສອຍ ຈົ່ງສລະ ຫລືຈົງທຳຕາມເຫຕຸຜົລເຖີດ"
ທີ່ຊື່ວ່າ ທີ່ຍັງບໍ່ໄດ້ປັຈຈຸທທຣົນ໌ ຄື ຈີວອນທີ່ຜູ້ຮັບວິກັປຍັງບໍ່ໄດ້ຄືນໃຫ້໑ ຫລືພິກສຸຜູ້ວິກັປໃຊ້ສອຍຈີວອນໂດຍບໍ່ຄຸ້ນເຄີຍກັບພິກສຸຜູ້ຮັບວິກັປນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໓໗໕] ຈີວອນຍັງບໍ່ໄດ້ປັຈຈຸທທຣົນ໌ ພິກສຸສຳຄັນວ່າຍັງບໍ່ໄດ້ປັຈຈຸທທຣົນ໌ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌
ຈີວອນຍັງບໍ່ໄດ້ປັຈຈຸທທຣົນ໌ ພິກສຸບໍ່ແນ່ໃຈ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌
ຈີວອນຍັງບໍ່ໄດ້ປັຈຈຸທທຣົນ໌ ພິກສຸສຳຄັນວ່າປັຈຈຸທທຣົນ໌ແລ້ວ ໃຊ້ສອຍ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ຄືພິກສຸຜູ້ຮັບວິກັປຍັງບໍ່ໄດ້ໃຫ້ຄືນດ້ວຍກ່າວວ່າ "ທ່ານຈະໃຊ້ສອຍ ຈະສລະ ຫລືຈະທຳຕາມເຫຕຸຜົລກໍໄດ້" ປັຈຈຸທທຣົນ໌ ຄືຖອນວິກັປນັ້ນເອງ (ວິ. ອ. ໒/໓໗໔/໔໑໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ຝ. ສຸຣາປານວັຄ ໙. ວິກັປປນສິກຂາບົທ ຈົບ ປັຕຕິວາຣ

ຕິກທຸກກາຕ

ພິກສຸອທິສຖານຫລືສລະ ຕ້ອງອາບັຕິທຸກກາຕ

ຈີວອນປັຈຈຸທທຣນ໌ແລ້ວ ພິກສຸສຳຄັນວ່າຍັງບໍ່ໄດ້ປັຈຈຸທທຣນ໌ ຕ້ອງອາບັຕິທຸກກາຕ

ຈີວອນປັຈຈຸທທຣນ໌ແລ້ວ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກາຕ

ຈີວອນປັຈຈຸທທຣນ໌ແລ້ວ ພິກສຸສຳຄັນວ່າປັຈຈຸທທຣນ໌ແລ້ວ ບໍ່ເປັນອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໖໗໘] ໑. ພິກສຸໃຊ້ສອຍຈີວອນທີ່ຜູ້ຮັບວິກັປຄືນໃຫ້ຫລືໃຊ້ສອຍຈີວອນດ້ວຍຄວາມຄຸ້ນເຄີຍກັບ ພິກສຸຜູ້ຮັບວິກັປ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ວິກັປປນສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຖ໌] ຝ. ສຸຣາປານວັຄ ໑໐. ຈີວອນອປນິທານ ສິກຂາບົທ ນິທານວັຕຖຸ

ຝ. ສຸຣາປານວັຄ

໑໐. ຈີວອນອປນິທານສິກຂາບົທ

ວ່າດ້ວຍການລີ້ຈີວອນ

ເຣື້ອງພຣະສັຕຕຣສວັຄຄີຍ໌

[໖໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັຕຕຣສວັຄຄີຍ໌ບໍ່ເກັບບໍຣິຂາຣ ພວກພິກສຸສັພພັຄ ຄີຍ໌ຈຶ່ງເອົາບາຕຣແດ່ ຈີວອນແດ່ຂອງພວກພິກສຸສັຕຕຣສວັຄຄີຍ໌ໄປລີ້ ພວກພິກສຸສັຕຕຣສວັຄຄີຍ໌ ໄດ້ກ່າວກັບພວກພິກສຸສັພພັຄຄີຍ໌ດັ່ງນີ້ວ່າ “ທ່ານທັງຫລາຍ ພວກທ່ານໄປຣດຄືນບາຕຣແດ່ຈີວອນ ແດ່ໃຫ້ແກ່ພວກເຮົາເຖີດ” ພວກພິກສຸສັພພັຄຄີຍ໌ພາກັນຫົວ ພວກພິກສຸສັຕຕຣສວັຄຄີຍ໌ພາກັນ

ຮ້ອງໄຫ້ ພິກສຸທັງຫລາຍຖາມວ່າ "ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກສຸສັຕຕຣສວັຄຄີຍ໌ ກ່າວວ່າ "ທ່ານທັງຫລາຍ ພວກພິກສຸສັພພັຄຄີຍ໌ເອົາບາຕຣແດ່ ຈີວອນແດ່ຂອງພວກຜູ້ຂ້າໄປລີ້" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ ຈຶ່ງເອົາບາຕຣແດ່ ຈີວອນແດ່ຂອງພິກສຸທັງຫລາຍໄປລີ້ລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸ ສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອົາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫດຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານເອົາບາຕຣແດ່ ຈີວອນແດ່ຂອງພິກສຸທັງ ຫລາຍໄປລີ້ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີ ພຣະພາຄຊົງຕຳຫນິວ່າ "ຯລຯ ໂມຊບຸຣຸສທັງຫລາຍ ຈັ່ງໃດທ່ານຈຶ່ງເອົາບາຕຣແດ່ ຈີວອນແດ່ຂອງ ພວກພິກສຸໄປລີ້ລະ ໂມຊບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໗໘] ກໍ ພິກສຸໃດເອົາບາຕຣຫລືຈີວອນ ຜ້າປູນັ່ງ ກັບເຂັມຫລືປຣະຄົດແອວຂອງພິກສຸໄປລີ້ ໃຊ້ ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັຕຕຣສວັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໗໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ຂອງພິກສຸ ຄື ຂອງພິກສຸອື່ນ

ທີ່ຊື່ວ່າ ບາຕຣ ໄດ້ແກ່ ບາຕຣ ໒ ຊນິດ ຄື (໑) ບາຕຣເຫລັກ (໒) ບາຕຣດິນ

ທີ່ຊື່ວ່າ ຈີວອນ ໄດ້ແກ່ ຈີວອນ ໖ ຊນິດ ຢ່າງໃດຢ່າງນຶ່ງຊຶ່ງມີຂນາດພໍທີ່ຈະວິກັປໄດ້ເປັນຢ່າງຕ່ຳ

ທີ່ຊື່ວ່າ ຜ້າປູນັ່ງ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງຜ້າປູນັ່ງມີຊາຍ
ທີ່ຊື່ວ່າ ກັບເຂັມ ໄດ້ແກ່ ກລ່ອງທີ່ມີເຂັມຫລືບໍ່ມີເຂັມກໍຕາມ
ທີ່ຊື່ວ່າ ປຣະຄດແອວ ໄດ້ແກ່ ປຣະຄດແອວ ໒ ຊນິດ ຄື (໑) ປຣະຄດແອວຜ້າ (໒) ປຣະຄົດແອວໄສ້ຫມູ
ຄຳວ່າ ເອົາໄປລີ້ ຄື ພິກສຸເອົາໄປລີ້ເອງ ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ໃຊ້ໃຫ້ເອົາໄປລີ້ ຄື ພິກສຸໃຊ້ຜູ້ອື່ນໃຫ້ເອົາໄປລີ້ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸຜູ້ຮັບຄຳສັ່ງຄັ້ງດຽວແຕ່ລີ້ຫລາຍຄັ້ງ ພິກສຸຜູ້ສັ່ງຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຄື ພິກສຸປະສົງຄ໌ຈະຫລິ້ນ

ຕິກປາຈິຕຕີຍ໌

[໓໗໐] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ເອົາບາຕຣ ຫລືຈີວອນ ຫລືຜ້າປູນັ່ງ ຫລືກັບເຂັມ ຫລືປຣະຄົດແອວໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກສຸບໍ່ແນ່ໃຈ ເອົາບາຕຣ ຫລືຈີວອນ ຫລືຜ້າປູນັ່ງ ຫລືກັບເຂັມ ຫລືປຣະຄົດແອວໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌
ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ເອົາບາຕຣ ຫລືຈີວອນ ຫລືຜ້າປູນັ່ງ ຫລືກັບເຂັມ ຫລືປຣະຄົດແອວໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸເອົາບໍຣິຂາຣອື່ນໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິທຸກກຕ
ພິກສຸເອົາບາຕຣ ຫລືຈີວອນ ຫລືບໍ່ຣິຂາຣອື່ນຂອງອນຸປສັມບັນໄປລີ້ ຫລືໃຊ້ໃຫ້ເອົາໄປລີ້ ໂດຍທີ່ສຸດແມ່ນມຸ່ງຈະລໍ້ຫລິ້ນ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຜ. ສຸຣາປານວັຄ ຮວມສິກຂາບົທທີ່ມີໃນສຸຣາປານວັຄ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໑] ໑. ພິກສຸບໍ່ປະສົງຄ໌ຈະລໍ້ຫລິ້ນ

໒. ພິກສຸເກັບບໍຣິຂາຣທີ່ຜູ້ອື່ນວາງໄວ້ບໍ່ດີ

໓. ພິກສຸເກັບໄວ້ດ້ວຍຫວັງຈະສັ່ງສອນແລ້ວຄືນໃຫ້

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ຈີວອນອປນິທານສິກຂາບົທທີ ໑໐ ຈົບ

ສຸຣາປານວັຄທີ ຜ ຈົບ

ຮວມສິກຂາບົທທີ່ມີໃນສຸຣາປານວັຄ

ສຸຣາປານວັຄມີ ໑໐ ສິກຂາບົທ ຄື

໑. ສຸຣາປານສິກຂາບົທ ວ່າດ້ວຍການດື່ມສຸຣາແລະເມຣັຍ

໒. ອັງຄຸລິປໂຕທກສິກຂາບົທ ວ່າດ້ວຍການໃຊ້ນີ້ວມືຈີ້ກັນແລະກັນ

໓. ຫັສສທັມມສິກຂາບົທ ວ່າດ້ວຍການຫລິ້ນນໍ້າ

໔. ອນາທຣິຍສິກຂາບົທ ວ່າດ້ວຍຄວາມບໍ່ເອື້ອເຟື້ອຕໍ່ຄໍາຕັກເຕືອນ

໕. ພິງສາປນສິກຂາບົທ ວ່າດ້ວຍການເຮັດໃຫ້ຕົກໃຈ

໖. ໂຊຕິກສິກຂາບົທ ວ່າດ້ວຍການກໍ່ໄຟຜີງ

໗. ນຫານສິກຂາບົທ ວ່າດ້ວຍການສົງນໍ້ານອກສມັຍ

໘. ທຸພພັນນກຣນສິກຂາບົທ ວ່າດ້ວຍການທໍາຈີວອນໃຫມ່ໃຫ້ເສັ້ງສີ

໙. ວິກັປປນສິກຂາບົທ ວ່າດ້ວຍການວິກັປຈີວອນ

໑໐. ຈີວອນອປນິທານສິກຂາບົທ ວ່າດ້ວຍການລີ້ຈີວອນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໆ. ສັປປານກວັຄ ໑. ສັຍຈິຈຈສິກຂາບົທ ນິທານວັຕຖຸ

ໆ. ສັປປານກວັຄ

ໝວດວ່າດ້ວຍສັຕວ໌ມີຊີວິຕ

໑. ສັຍຈິຈຈສິກຂາບົທ

ວ່າດ້ວຍຄວາມຈົງໃຈປົງຊີວິຕສັຕວ໌

ເຣື້ອງພຣະອຸທາຍີ

[໑ໆ໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸທາຍີເປັນນັກຍິງທນູດ ແລະທ່ານບໍ່ຊອບອີກາ ທ່ານຈຶ່ງຍິງອີກາທັງຫລາຍແລ້ວຕັດຫົວມາສຽບຫລາວຮຽງໄວ້ ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານ ໃຜຂ້າອີກາເຫລົ່ານີ້" ທ່ານພຣະອຸທາຍີຕອບວ່າ "ທ່ານທັງຫລາຍ ຜູ້ຂ້າເອງ ຜູ້ຂ້າບໍ່ຊອບ ອີກາ"

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອຸທາຍີ ຈຶ່ງຈົງໃຈປົງຊີວິຕສັຕວ໌ລະ ຯລຯ" ຄັນພິກສຸທັງຫລາຍຕຳໜິທ່ານພຣະອຸທາຍີໂດຍປະກາຣຕ່າງໆ ແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະອຸທາຍີວ່າ "ອຸທາຍີ ຊາບວ່າ ທ່ານຈົງໃຈປົງຊີວິຕສັຕວ໌ ແມ່ນແທ້ບໍ" ທ່ານພຣະອຸທາຍີທູລຮັບ ວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຊບຸຣຸສ ຈັ່ງໃດທ່ານຈຶ່ງຈົງໃຈປົງຊີວິຕສັຕວ໌ລະ ໂມຊບຸຣຸສ ກາຣກະທຳຢ່າງນີ້ ມິໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ສມັຍເປັນຄຣືຫັສຖ໌ ທ່ານພຣະອຸທາຍີເປັນນັກຍິງທູນ ຊ່ຽວຊານໃນສິລປະການໃຊ້ທູນ ແລະເປັນອາຈາຣຍ໌ຂອງນັກຍິງທູນດ້ວຍ (ວິ. ອ. ໔/໑໑໘/໔໑໑, ສາຣຕຸຖ. ຕີກາ ໓/໑໑໘/໑໐໓)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໑. ສັຍຈິຈຈສິກຂາບົທ ບົທພາຊນີຍ໌

ພຣະບັນຍັດ

[໑໑໓] ກໍ ພິກສຸໃດຈົງໃຈປົງຊີວິດສັດວ໌ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະອຸທາຍີ ຈົບ

ສິກຂາບົທວິພັງຄ໌

[໑໑໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ຈົງໃຈ ໄດ້ແກ່ ຮູ້ຢູ່ ຮູ້ດີຢູ່ ຈົງໃຈ ຝ່າຝືນ ລ່ວງລະເມີດ

ທີ່ຊື່ວ່າ ສັດວ໌ມີຊີວິດ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງສັດວ໌ເດັຽຣະສານ

ຄຳວ່າ ປົງຊີວິດ ໄດ້ແກ່ ຕັດທຳລາຍຊີວິຕິນທຣີຍ໌ ຕັດຄວາມສືບຕໍ່ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ປາຈິຕຕີຍ໌

[໑໑໕] ສັຕວ໌ມີຊີວິຕ ພິກສຸສຳຄັນວ່າເປັນສັຕວ໌ມີຊີວິຕ ປົງຊີວິຕ ຕ້ອງອາບັຕິປາຈິຕຕີຍ໌

ສັຕວ໌ມີຊີວິຕ ພິກສຸບໍ່ແນ່ໃຈ ປົງຊີວິຕ ຕ້ອງອາບັຕິປາຈິຕຕີຍ໌

ສັຕວ໌ມີຊີວິຕ ພິກສຸສຳຄັນວ່າບໍ່ແມ່ນສັຕວ໌ມີຊີວິຕ ປົງຊີວິຕ ບໍ່ຕ້ອງອາບັຕິ

ທຸກກຕ

ບໍ່ແມ່ນສັຕວ໌ມີຊີວິຕ ພິກສຸສຳຄັນວ່າເປັນສັຕວ໌ມີຊີວິຕ ຕ້ອງອາບັຕິທຸກກຕ

ບໍ່ແມ່ນສັຕວ໌ມີຊີວິຕ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນສັຕວ໌ມີຊີວິຕ ພິກສຸສຳຄັນວ່າບໍ່ແມ່ນສັຕວ໌ມີຊີວິຕ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໑. ສັປຈິຈສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໓໗໖] ໑. ພິກສຸບໍ່ຈິງໃຈຈະປົງຊີວິຕສັຕວ໌

໒. ພິກສຸບໍ່ມີສຕິປົງຊີວິຕສັຕວ໌

໓. ພິກສຸຜູ້ບໍ່ຮູ້ຕົວ

໔. ພິກສຸບໍ່ປະສົງຄ໌ຈະຂ້າ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ສັປຈິຈສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໒. ສັປປານກສິກຂາບົທ ນິທານວັຕຖຸ

໗. ສັປປານກວັຄ

໒. ສັປປານກສິກຂາບົທ

ວ່າດ້ວຍການບໍຣິໂພຄນ້ຳທີ່ມີສັຕວ໌ມີຊີວິຕ

ເຣື້ອງພຣະສັພພັຄຄີຍ໌

[໓໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຮູ້ຢູ່ວ່ານ້ຳມີສັຕວ໌ມີຊີວິຕ ກໍຍັງບໍຣິໂພຄ໑ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌

ຮູ້ຢູ່ວ່ານ້ຳມີສັດຕ໌ມີຊີວິຕ ກໍຍັງບໍຣິໂພຄລະ” ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ວ່ານ້ຳມີສັດຕ໌ມີຊີວິຕ ກໍຍັງບໍຣິໂພຄແມ່ນແທ້ບໍ” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທຫເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳຫນິວ່າ “ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ວ່ານ້ຳມີສັດຕ໌ມີຊີວິຕ ກໍຍັງບໍຣິໂພຄລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໗໗] ກໍ ພິກສຸໃດຮູ້ຢູ່ວ່ານ້ຳມີສັດຕ໌ມີຊີວິຕ ກໍຍັງບໍຣິໂພຄ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຊີງອັນຖະ :

໑ ຄຳວ່າ “ບໍຣິໂພຄ” ຫມາຍເຖິງ ດື່ມ ໃຊ້ລ້າງບາຕຣ ເອົາບາຕຣເຂົ້າຕົ້ມຮ້ອນແຊ່ໃຫ້ເຢັນ ອາບຫລືແມ່ນລົງໄປລຸຍນ້ຳໃນຕຣະພັງ ໃນສຣະໂບກຂຣນີ ເຮັດໃຫ້ເກີດຄລື່ນ (ວິ. ອ. ໒/໓໗໗/໔໑໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສັປປານກວັຄ ໒. ສັປປານກສິກຂາບົທ ອນາປັຕຕິວາຣ

ສິກຂາບົທວິພັງຄ໌

[໓໗໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ

ວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກສຸຮູ້ເອງ ຫລືຄົນເຫລົ່າອື່ນບອກໃຫ້ພິກສຸນັ້ນຮູ້ ພິກສຸຮູ້ຢູ່ວ່າ "ນ້ຳມີສັດມີຊີວິດ" ຮູ້ຢູ່ວ່າ "ສັດມີຊີວິດຈະຕາຍເພາະການບໍຣິໂພຄ" ກໍຍັງບໍຣິໂພຄ ຕ້ອງອາບັດປາຈິດຕີຍ໌

ບົທພາຊນີຍ໌

[໓໙໐] ນ້ຳມີສັດມີຊີວິດ ພິກສຸສຳຄັນວ່າມີສັດມີຊີວິດ ບໍຣິໂພຄ ຕ້ອງອາບັດປາຈິດຕີຍ໌

ນ້ຳມີສັດມີຊີວິດ ພິກສຸບໍ່ແນ່ໃຈ ບໍຣິໂພຄ ຕ້ອງອາບັດທຸກກົຏ

ນ້ຳມີສັດມີຊີວິດ ພິກສຸສຳຄັນວ່າບໍ່ມີສັດມີຊີວິດ ບໍຣິໂພຄ ບໍ່ຕ້ອງອາບັດ

ນ້ຳບໍ່ມີສັດມີຊີວິດ ພິກສຸສຳຄັນວ່າມີສັດມີຊີວິດ ຕ້ອງອາບັດທຸກກົຏ

ນ້ຳບໍ່ມີສັດມີຊີວິດ ພິກສຸບໍ່ແນ່ໃຈ ຕ້ອງອາບັດທຸກກົຏ

ນ້ຳບໍ່ມີສັດມີຊີວິດ ພິກສຸສຳຄັນວ່າບໍ່ມີສັດມີຊີວິດ ບໍ່ຕ້ອງອາບັດ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໓໙໑] ໑. ພິກສຸບໍ່ຮູ້ວ່າ "ນ້ຳມີສັດມີຊີວິດ"

໒. ພິກສຸຮູ້ວ່າ "ນ້ຳບໍ່ມີສັດມີຊີວິດ"

໓. ພິກສຸຮູ້ຢູ່ວ່າ "ສັດມີຊີວິດຈະບໍ່ຕາຍເພາະການບໍຣິໂພຄ"

໔. ພິກສຸວິກົລຈິດ

໕. ພິກສຸຕົ້ນບັນຍັດ

ສັປປານກສິກຂາບົທທີ່ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕີຍກັນຑ໌] ໗. ສັປປານກວັຄ ໓. ອຸກໂກຕນສິກຂາບົທ ນິທານວັຕຖຸ

໗. ສັປປານວັຄ

໓. ອຸກໂກຕນສິກຂາບົທ

ວ່າດ້ວຍການຮື້ຟື້ນອທິກຣນ໌(ບັນຫາຂອງສົງຂ໌)ຂຶ້ນມາພິຈາຣນາໃຫມ່

ເຣື້ອງພຣະສັພພັຄຄີຍ໌

[໓໙໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຮູ້ຢູ່ ຮື້ຟື້ນ ອທິກຣນ໌(ບັນຫາຂອງສົງຂ໌) ທີ່ໄດ້ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາຣນາໃຫມ່ດ້ວຍກ່າວວ່າ "ກັມຍັງບໍ່ໄດ້ທຳ ກັມທຳບໍ່ດີ ເພິ່ງທຳໃຫມ່ ກັມນັ້ນຍັງບໍ່ໄດ້ຕັດສິນ ກັມນັ້ນຕັດສິນບໍ່ດີ ເພິ່ງຕັດສິນໃຫມ່" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຮູ້ຢູ່ຍັງຂືນຮື້ຟື້ນອທິກຣນ໌(ບັນຫາຂອງສົງຂ໌)ທີ່ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາຣນາໃຫມ່ລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ ຮື້ຟື້ນອທິກຣນ໌(ບັນຫາຂອງສົງຂ໌)ທີ່ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາຣນາໃຫມ່ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ຍັງຂືນຮື້ຟື້ນອທິກຣນ໌(ບັນຫາຂອງສົງຂ໌)ທີ່ຕັດສິນໄປແລ້ວຢ່າງຖືກຕ້ອງເພື່ອພິຈາຣນາໃຫມ່ລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໙໖] ກໍ ພິກສຸໃດຮູ້ຢູ່ ຮື້ຟື້ນອທິກຣນ໌(ບັນຫາຂອງສົງຂ໌)ທີ່ຕັດສິນໄປແລ້ວຢ່າງຖືກຕ້ອງ ເພື່ອພິຈາຣນາໃຫມ່ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໓໙໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ

ວ່າ ພິກສຸ ໃນຄວາມໝາຍນີ້
ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ ຫລືຄົນນັ້ນບອກ
ທີ່ຊື່ວ່າ ຢ່າງຖືກຕ້ອງ ຄື ອທິກຣນ໌(ບັນຫາຂອງສົງຂ໌)ທີ່ຕັດສິນໂດຍທັມ ໂດຍວິນັຍ ໂດຍສັຕຖຸສາສນ໌
ທີ່ຊື່ວ່າ ອທິກຣນ໌(ບັນຫາຂອງສົງຂ໌) ໄດ້ແກ່ ອທິກຣນ໌(ບັນຫາຂອງສົງຂ໌) ໔ ຄື (໑) ວິວາທາທິກຣນ໌ (໒) ອນຸວາທາທິກຣນ໌ (໓) ອາປັຕຕາທິກຣນ໌ (໔) ກິຈຈາທິກຣນ໌
ຄຳວ່າ ຮື້ຟື້ນ. . . ເພື່ອພິຈາຣນາໃໝ່ ຄື ພິກສຸຮື້ຟື້ນດ້ວຍກ່າວວ່າ “ກັມຍັງບໍ່ໄດ້ທຳ ກັມທຳບໍ່ດີ ເພິ່ງທຳໃໝ່ ກັມນັ້ນຍັງບໍ່ໄດ້ຕັດສິນ ກັມນັ້ນຕັດສິນບໍ່ດີ ເພິ່ງຕັດສິນໃໝ່” ຕ້ອງອາບັຕິປາຈິຕຕິຍ໌

ບົທພາຊນີຍ໌

[໓໙໕] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຮື້ຟື້ນ ຕ້ອງອາບັຕິປາຈິຕຕິຍ໌
ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ຮື້ຟື້ນ ຕ້ອງອາບັຕິທຸກກົຏ
ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຮື້ຟື້ນ ບໍ່ຕ້ອງອາບັຕິ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກົຏ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົຏ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໓໙໖] ໑. ພິກສຸຮູ້ວ່າ “ກັມນັ້ນທຳບໍ່ຖືກຕ້ອງ ແຍກກັນທຳຫລືທຳແກ່ຜູ້ບໍ່ຄວຣແກ່ກັມ” ຈຶ່ງຮື້ຟື້ນ
໒. ພິກສຸວິກົລຈິຕ
໓. ພິກສຸຕົ້ນບັນຍັດ

ອຸກໂກຕນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໔. ທຸຕຖຸລລສິກຂາບົທ ນິທານວັຕຖຸ

ໆ. ສັປປານກວັຄ

໔. ທຸຕຖຸລລສິກຂາບົທ
ວ່າດ້ວຍການປົກປິດອາບັຕິຊົ່ວຫຍາບ

ເຣື້ອງພຣະອຸປນັນທສຼາກຍບຸຕຣ

[໖໙໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສຼາກຍບຸຕຣ ຕ້ອງອາບັຕິຊື່ສັຍເຈຕນິກາສຸກກວິສັຕຖິ໑ ຈຶ່ງບອກພິກສຸສັທທິວິຫາຣິກຜູ້ເປັນພີ່ນ້ອງກັນວ່າ "ທ່ານ ຂະນ້ອຍຕ້ອງອາບັຕິຊື່ອສັຍເຈຕນິກາສຸກກວິສັຕຖິ ທ່ານໄປຣດຢ່າບອກໃຜໆ" ຕໍ່ມາພິກສຸຮູບນຶ່ງກໍຕ້ອງອາບັຕິຊື່ສັຍເຈຕນິກາສຸກກວິສັຕຖິ ໄດ້ຂໍສິງຂູ໌ຢູ່ປຣິວາສເພື່ອ(ຈະອອກຈາກ)ອາບັຕິນັ້ນ ສົງຂູ໌ໄດ້ໃຫ້ປຣິວາສເພື່ອ(ອອກຈາກ)ອາບັຕິນັ້ນແກ່ພິກສຸນັ້ນ ພິກສຸຜູ້ກຳລັງຢູ່ປຣິວາສນັ້ນພົບພິກສຸນັ້ນຈຶ່ງໄດ້ກ່າວດັ່ງນີ້ວ່າ "ທ່ານ ຂະນ້ອຍຕ້ອງອາບັຕິຊື່ສັຍເຈຕນິກາສຸກກວິສັຕຖິ ຈຶ່ງໄດ້ຂໍສິງຂູ໌ຢູ່ປຣິວາສ ສົງຂູ໌ໄດ້ໃຫ້ຂະນ້ອຍຢູ່ປຣິວາສເພື່ອ(ອອກຈາກ)ອາບັຕິແລ້ວຂະນ້ອຍກຳລັງຢູ່ປຣິວາສ ຂໍບອກໃຫ້ຊາບ ທ່ານຈົ່ງຈຳຂະນ້ອຍໄວ້ວ່າ 'ບອກໃຫ້ຊາບແລ້ວ" ພິກສຸນັ້ນຖາມວ່າ "ພິກສຸອື່ນຜູ້ຕ້ອງອາບັຕິນີ້ກໍຕ້ອງເຮັດຢ່າງນີ້ຫລື" ພິກສຸຜູ້ຢູ່ປຣິວາສຕອບວ່າ "ແມ່ນແລ້ວ ຕ້ອງເຮັດຢ່າງນີ້" ພິກສຸນັ້ນກ່າວວ່າ "ທ່ານພຣະອຸປນັນທສຼາກຍບຸຕຣນີ້ຕ້ອງອາບັຕິຊື່ອສັຍເຈຕນິກາສຸກກວິສັຕຖິ ໄດ້ບອກຂະນ້ອຍວ່າ 'ທ່ານ ຂະນ້ອຍຕ້ອງອາບັຕິຊື່ອສັຍເຈຕນິກາສຸກກວິສັຕຖິ ທ່ານໄປຣດຢ່າບອກໃຜໆ" ພິກສຸຜູ້ຢູ່ປຣິວາສຖາມວ່າ "ທ່ານປົກປິດອາບັຕິໄວ້ຫລື" ພິກສຸນັ້ນຕອບວ່າ "ແມ່ນແລ້ວ ຂນ້ອຍ" ພິກສຸຜູ້ຢູ່ປຣິວາສຈຶ່ງບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ

ເຊີງອັນຖະ :

໑ ຄຳວ່າ "ສັຍເຈຕນິກາສຸກກວິສັຕຖິ" ແປວ່າ ມີຄວາມຈິງໃຈ ມີເຈຕນາທຳນ້ຳອສຸຈິໃຫ້ເຄື່ອນເປັນຊື່ສັງຂາທິເສສ ສິກຂາບົທທີ ໑ (ເບິ່ງ ພຣະວິນັຍປິດົກແປລ ເຫລັ້ມ ໑ ຂໍ້ ໔໖໔ ຫນ້າ ໔໔໗-໔໕໑)

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຮູ້ຢູ່ ຈຶ່ງປົກປິດອາບັຕິຊົ່ວຫຍາບຂອງພິກສຸລະ" ຄັນພິກສຸເຫລົ່ານັ້ນຕຳຫນິພິກສຸຜູ້ປົກປິດອາບັຕິນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸຜູ້ປົກປິດອາບັຕິນັ້ນວ່າ "ພິກສຸ ຊາບວ່າ ທ່ານຮູ້ຢູ່ ຍັງປົກປິດອາບັຕິຊົ່ວຫຍາບຂອງພິກສຸແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທຫຸເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫຸເຈົ້າຊົງຕຳໜິວ່າ "ໂມຊບຸຣຸສ ຈັ່ງໃດທ່ານຮູ້ຢູ່ ຈຶ່ງປົກປິດອາບັຕິຊົ່ວຫຍາບຂອງພິກສຸລະ ໂມຊບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໓໙໘] ກໍ ພິກສຸໃດຮູ້ຢູ່ ປົກປິດອາບັຕິຊົ່ວຫຍາບຂອງພິກສຸ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະອຸປນັນທສາກຍບຸຕຣ ຈົບ

ສິກຂາບົທວິພັງຄ໌

[໓໙໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ຂອງພິກສຸ ຄື ຂອງພິກສຸຮູບອື່ນ

ທີ່ຊື່ວ່າ ຮູ້ຢູ່ ຄື ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ ຫລືພິກສຸຜູ້ຕ້ອງອາບັຕິຊົ່ວຫຍາບນັ້ນບອກ

ທີ່ຊື່ວ່າ ອາບັຕິຊົ່ວຫຍາບ ໄດ້ແກ່ ອາບັຕິປາຣາຊິກ ໔ ສິກຂາບົທ ແລະອາບັຕິສັງຊາທິເສສ ໑໓ ສິກຂາບົທ

ຄຳວ່າ ປົກປິດ ຄວາມວ່າ ເມື່ອພິກສຸຄິດວ່າ "ພິກສຸທັງຫລາຍຮູ້ແລ້ວຈະໂຈທ ຈະຕັກເຕືອນ ຈະຂູ່ຈະບັງຄັບ ຈະເຮັດໃຫ້ເກີ້ເຂີນ ເຮົາຈະບໍ່ບອກ" ພໍທອດທຸຣະ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໔໐໐] ອາບັຕິຊົ່ວຫຍາບ ພິກສຸສຳຄັນວ່າເປັນອາບັຕິຊົ່ວຫຍາບ ປົກປິດໄວ້ ຕ້ອງອາບັຕິປາຈິຕຕີຍ໌

ອາບັຕິຊົ່ວຫຍາບ ພິກສຸບໍ່ແນ່ໃຈ ປົກປິດໄວ້ ຕ້ອງອາບັຕິທຸກກຕ

ອາບັຕິຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັຕິບໍ່ຊົ່ວຫຍາບ ປົກປິດໄວ້ ຕ້ອງອາບັຕິທຸກກົດ

ພິກຂຸປົກປິດອາບັຕິບໍ່ຊົ່ວຫຍາບ ຕ້ອງອາບັຕິທຸກກົດ

ພິກຂຸປົກປິດຄວາມປະພຶດຊົ່ວຫຍາບຫລືບໍ່ຊົ່ວຫຍາບຂອງອະນຸປະສົມບັນ ຕ້ອງອາບັຕິທຸກກົດ

ອາບັຕິບໍ່ຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັຕິຊົ່ວຫຍາບ ຕ້ອງອາບັຕິທຸກກົດ

ອາບັຕິບໍ່ຊົ່ວຫຍາບ ພິກຂຸບໍ່ແນ່ໃຈ ຕ້ອງອາບັຕິທຸກກົດ

ອາບັຕິບໍ່ຊົ່ວຫຍາບ ພິກຂຸສຳຄັນວ່າເປັນອາບັຕິບໍ່ຊົ່ວຫຍາບ ປົກປິດໄວ້ ຕ້ອງອາບັຕິທຸກກົດ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໔. ທຸດຖຸລລສິກຂາບົທ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໐໑] ໑. ພິກຂຸຄິດວ່າ "ສົງຂ໌ຈະບາດຫມາງ ຈະຜິດຖຽງ ຈະຂັດແຍ້ງ ຫລືຈະວິວາທກັນ" ຈຶ່ງບໍ່ບອກ

໒. ພິກຂຸຄິດວ່າ "ສົງຂ໌ຈະແຕກແຍກ ຫລືຈະແຕກແຍກ" ຈຶ່ງບໍ່ບອກ

໓. ພິກຂຸຄິດວ່າ "ຜູ້ນີ້ກັກຂະຂະ ຫຍາບຄາຍ ຈະທຳອັນຕຣາຍແກ່ຊີວິຕຫລືອັນຕຣາຍແກ່ພຣົມຈັນຍ໌" ຈຶ່ງບໍ່ບອກ

໔. ພິກຂຸບໍ່ພົບພິກຂຸເຫລົ່າອື່ນທີ່ສົມຄວຣຈຶ່ງບໍ່ໄດ້ບອກ

໕. ພິກຂຸບໍ່ຕ້ອງກາຣຈະປົກປິດ ແຕ່ຍັງບໍ່ໄດ້ບອກ

໖. ພິກຂຸຄິດວ່າ "ເຂົາຈັກປາກົດດ້ວຍກັມຂອງຕົນເອງ" ຈຶ່ງບໍ່ບອກ

໗. ພິກຂຸວິກົລຈິຕ

໘. ພິກຂຸຕົ້ນບັນຍັດ

ທຸດຖຸລລສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໕. ອູນວີສຕິວັສສສິກຂາບົທ ນິທານວັຕຖຸ

ໆ. ສັປປານກວັຄ

໕. ອູນວີສຕິວັສສສິກຂາບົທ

ວ່າດ້ວຍການອຸປສົມບົທໃຫ້ບຸຄຄົລມີອາຍຸຫນ້ອຍກວ່າ ໒໐ ປີ

ເຣື້ອງເດັກຊາຍອຸບາລີ໑

[໔໐໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ໃນກຸງຣາຊຄຶຫ໌ ມີເດັກຊາຍຜູ້ເປັນເພື່ອນກັນ ໑໗ ຄົນ ເດັກຊາຍອຸບາລີເປັນຫົວຫນ້າຂອງເດັກເຫລົ່ານັ້ນ ເທື່ອນັ້ນ ມາຣດາບິດາຂອງເດັກຊາຍອຸບາລີໄດ້ປຶກສາກັນດັ່ງນີ້ວ່າ "ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກດ້ວຍວິທີໃດຫນໍ" ລຳດັບນັ້ນ ມາຣດາບິດາຂອງເດັກຊາຍອຸບາລີໄດ້ປຶກສາກັນອີກວ່າ "ຖ້າເຈົ້າອຸບາລີຮຽນຂຽນຫນັງສືດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ" ແຕ່ກໍວິຕົກໄປວ່າ "ຖ້າເຈົ້າອຸບາລີຮຽນຂຽນຫນັງສື ນິ້ວມືຈະຊ້ຳ ຖ້າເຈົ້າອຸບາລີຮຽນວິຊາຄຳນວນດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ" ແລະວິຕົກອີກວ່າ "ຖ້າເຈົ້າອຸບາລີຮຽນວິຊາຄຳນວນກໍຈະແໜ້ນຫນ້າເອິກ ຖ້າເຈົ້າອຸບາລີຮຽນວິຊາກ່ຽວກັບການເງິນ໔ ດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ" ແຕ່ກໍວິຕົກອີກວ່າ "ຖ້າເຈົ້າອຸບາລີຮຽນວິຊາກ່ຽວກັບການເງິນ ນັຍນ໌ຕາຂອງເຂົາຈະປວດ ພຣະສມນະເຊື້ອສາຍສາກຍບຸຕຣເຫລົ່ານີ້ມີລັກສນະນິສັຍດີ ປະພຶດຮຽບຮ້ອຍ ບໍຣິໂພຄອາຫາຣດີ ນອນໃນຫ້ອງມິດຊິດ ຖ້າເຈົ້າອຸບາລີໄດ້ບວຊໃນສຳນັກພຣະສມນະເຊື້ອສາຍສາກຍບຸຕຣດ້ວຍວິທີຢ່າງນີ້ ເມື່ອພວກເຮົາລ່ວງລັບໄປ ເຈົ້າອຸບາລີຈະຢູ່ສຸຂສະບາຍແລະບໍ່ລຳບາກ"

ເດັກຊາຍອຸບາລີອອກບວຊ

ເດັກຊາຍອຸບາລີໄດ້ຍິນຄຳສົນທນາຂອງມາຣດາບິດາ ຄັນແລ້ວເດັກຊາຍອຸບາລີຈຶ່ງໄດ້ໄປຫາພວກເດັກໆເຖິງທີ່ພັກ ຄັນເຖິງແລ້ວໄດ້ກ່າວກັບພວກເດັກໆເຫລົ່ານັ້ນດັ່ງນີ້ວ່າ "ເພື່ອນທັງຫລາຍ ມາເຖີດ ພວກເຮົາຈະໄປບວຊໃນສຳນັກພຣະສມນະເຊື້ອສາຍສາກຍບຸຕຣ"

ເຊີງອັນຖະ :

໑ ວິ. ມ. ໔/໙໙/໑໑໑-໑໑໓

໔ ເປັນວິຊາກາຣທຳບັຍຊີ ແລກປ່ຽນເງິນຕຣາ ເປັນເຫຕັຍຢືກ (ວິ. ອ. ໒/໔໐໒/໔໑໕, ສາຣຕຸຖ. ຕີກາ ຈ໌/໔໐໒/໑໐໕)

ເດັກເຫລົ່ານັ້ນກ່າວວ່າ "ເພື່ອນເອີ້ຍ ຖ້າເຈົ້າບວຊ ພວກເຮົາກໍຈະບວຊເຊັ່ນກັນ" ຄັນແລ້ວເດັກໆ ເຫລົ່ານັ້ນຕ່າງຄົນຕ່າງກໍເຂົ້າໄປຫາມາຣດາບິດາຂອງຕົນ ແລ້ວໄດ້ກ່າວຂໍອນຸຍາຕດັ່ງນີ້ວ່າ "ພໍ່ແມ່ ໂປຣດອນຸຍາຕໃຫ້ພວກລູກໆອອກຈາກເຮືອນໄປບວຊເປັນອນາຄາຣິກເຖີດ" ມາຣດາບິດາຂອງເດັກເຫລົ່ານັ້ນອນຸຍາຕດ້ວຍຄິດວ່າ "ເດັກພວກນີ້ຕ່າງພ້ອມໃຈ ມີຄວາມປຣາຖນາ ສິ່ງທີ່ດີງາມທຸກຄົນ" ພວກເດັກເຫລົ່ານັ້ນຈຶ່ງເຂົ້າໄປຫາພິກສຸທັງຫລາຍ ຂໍບັນພະຊາ ພິກສຸທັງ ຫລາຍໃຫ້ເດັກພວກນັ້ນບັນພະຊາອຸປສົມບົທແລ້ວ ຄັນເວລາໃກ້ຮຸ່ງແຫ່ງຣາຕຣີ ພິກສຸໃຫມ່ເຫລົ່າ ນັ້ນລຸກຂຶ້ນຮ້ອງໄຫ້ວ່າ "ທ່ານທັງຫລາຍໂປຣດໃຫ້ເຂົ້າຕົ້ມ ໂປຣດໃຫ້ເຂົ້າສວຍ ໂປຣດໃຫ້ ຂອງຄ້ຽວ" ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານທັງຫລາຍຖ້າໃຫ້ສວ່າງເສັຽກ່ອນ ຖ້າມີເຂົ້າຕົ້ມ ພວກທ່ານຈະໄດ້ສັນ ຖ້າມີເຂົ້າສວຍ ພວກທ່ານຈະໄດ້ສັນ ຖ້າມີຂອງຄ້ຽວ ພວກທ່ານກໍຈະໄດ້ຄ້ຽວ ແຕ່ຖ້າເຂົ້າຕົ້ມ ເຂົ້າສວຍ ຫລືຂອງຄ້ຽວບໍ່ມີ ພວກທ່ານຕ້ອງທຽວບິນຖບາຕມາສັນ" ພິກສຸໃຫມ່ ເຫລົ່ານັ້ນອັນພິກສຸທັງຫລາຍກ່າວຢູ່ຢ່າງນີ້ ກໍຍັງພາກັນຮ້ອງໄຫ້ວ່າ "ທ່ານທັງຫລາຍໂປຣດໃຫ້ ເຂົ້າຕົ້ມ ໂປຣດໃຫ້ເຂົ້າສວຍ ໂປຣດໃຫ້ຂອງຄ້ຽວເຖີດ" ພາກັນຖ່າຍອຸຈຈາຣະແດ່ ຖ່າຍປັສສາວະ ແດ່ ຣົດເສນາສນະ ພຣະຜູ້ມີພຣະພາຄຊົງຕື່ນບັນທົມເວລາໃກ້ຮຸ່ງແຫ່ງຣາຕຣີ ໄດ້ຊົງສດັບສຽງເດັກ ຄັນໄດ້ຊົງສດັບແລ້ວຈຶ່ງຕຣັສກັບທ່ານພຣະອານົນທ໌ວ່າ "ອານົນທ໌ ສຽງເດັກຮ້ອງໄຫ້ເພາະສາເຫຕຸ ໃດຫລື" ເທື່ອນັ້ນ ທ່ານພຣະອານົນທ໌ໄດ້ຂາບທູລເຣື່ອງນັ້ນໃຫ້ພຣະຜູ້ມີພຣະພາຄຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ ທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸຮູ້ຢູ່ກໍຍັງອຸປສົມບົທໃຫ້ບຸຄຄົລອາຍຸຫນ້ອຍ ກວ່າ ໒໐ ປີ ແມ່ນແທ້ບໍ" ພິກສຸທັງຫລາຍທູລຣັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີ ພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຮູ້ຢູ່ກໍຍັງ ອຸປສົມ ບົທ ໃຫ້ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີລະ ພິກສຸທັງຫລາຍ ບຸຄຄົລຜູ້ມີອາຍຸຫນ້ອຍ ກວ່າ ໒໐ ປີ ຍັງບໍ່ອົດທົນ ບໍ່ອົດກັ້ນຕໍ່ຄວາມເຢັນ ຄວາມຮ້ອນ ຄວາມຫິວ ສັມຜັສຈາກເຫລືອບ ຍຸງ ລົມ ແດດ ສັຕວ໌ເລືອຄານ ຄຳກ່າວຮ້າຍ ຄຳທີ່ຟັງແລ້ວບໍ່ດີ ຄວາມຮູ້ສຶກທາງກາຍທີ່ເກີດຂຶ້ນ ເປັນທຸກຂ໌ ແສນສາຫັສ ຮຸນແຮງ ເຜັດຮ້ອນ ບໍ່ນ່າຍິນດີ ບໍ່ຫນ້າພໍໃຈ ແທບຈະພາກຊີວິຕ ພິກສຸ

ທັງຫລາຍ ບຸຄຄົລຜູ້ມີອາຍຸຄົບ ໒໐ ປີ໑ ຈຶ່ງຈະອົດທົນ ອົດກັ້ນຕໍ່ຄວາມເຢັນ ຄວາມຮ້ອນ ຄວາມຫິວ ຄວາມຫິວ ສັມຜັສຈາກເຫລືອບຍຸງ ລົມ ແດດ ສັຕວ໌ເລືອຄານ ຄຳກ່າວຮ້າຍ ຄຳທີ່ຟັງແລ້ວບໍ່ດີ ຄວາມຮູ້ສຶກທາງກາຍທີ່ເກີດຂຶ້ນເປັນທຸກຂ໌ ແສນສາຫັສ ຮຸນແຮງ ເຜັດຮ້ອນ ບໍ່ຫນ້າຍິນດີ ບໍ່ຫນ້າພໍໃຈ ແທບຈະພາກຊີວິຕໄດ້ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໐໖] ກໍ ພິກສຸໃດຮູ້ຢູ່ ອຸປສົມບົທໃຫ້ບຸຄຄົລຜູ້ມີອາຍຸຫນ້ອຍກວ່າ ໒໐ ປີ ບຸຄຄົລນັ້ນບໍ່ເປັນອັນອຸປສົມບົທ ແລະພິກສຸເຫລົ່ານັ້ນຄວຣຖືກຕຳຫນິ ພິກສຸນັ້ນຕ້ອງອາບັຕິປາຈິຕຕີຍ໌ນີ້໔

ເຣື່ອງເດັກຊາຍອຸບາລີ ຈົບ

ເຊີງອັນຖະ :

໑ ທີ່ຊື່ວ່າ ອາຍຸຄົບ ໒໐ ປີ ນັ້ນກຳຫນົດນັບເອົາຕັ້ງແຕ່ວັນທີ່ຖືປະຕິສົນທິ ຈິຕດວງແຣກເກີດໃນຄັນພ໌ມາຣດາ (ວິ. ອ. ໒/໔໐໔/໔໑໕-໖)

໔ ໂສ ຈ ປຸຄຄໂລ ອນຸປສມ຺ປນ຺ໂນຕິ ຊານນ຺ເຕນາປິ ອຊານນ຺ເຕນາປິ ອຸປສມ຺ປາທິໂຕ ອນຸປສມ຺ປນ຺ໂນວ. ເຕ ຈ ພິກ຺ຂູ ຄາຣຍ຺ຫາຕິ ຖເປຕ຺ວາ ອຸປຊ຺ຌາຍໍ ອວເສສາ ຄາຣຍ຺ຫາ ໂຫນ຺ຕິ, ສພ຺ເພ ທຸກ຺ກຏໍ ອາປຊ຺ຊຕິ. ອິທໍ ຕສ຺ມິ ປາຈິຕ຺ຕິຍນ຺ຕິໂຍ ປນ ອຸປຊ຺ຌາໂຍ ຫຸຕ຺ວາ ອຸປສມ຺ປາເທຕິ, ຕສ຺ມິ ເຍວ ປຸຄ຺ຄເລ ອິທໍ ປາຈິຕ຺ຕິຍໍ ເວທິຕພ຺ພໍ

ຄຳວ່າ “ບຸຄຄົລນັ້ນບໍ່ເປັນອັນອຸປສົມບົທ” ຄື ຜູ້ທີ່ພຣະອຸປັຊຊາຍ໌ພ້ອມກາຣກສົງຊ໌ ຊຶ່ງຮູ້ຢູ່ກໍດີ ບໍ່ຮູ້ກໍດີ ອຸປສົມບົທໃຫ້ແລ້ວ ກໍບໍ່ເປັນອັນໄດ້ຮັບກາຣອຸປສົມບົທເລີຍ ຄຳວ່າ “ແລະພິກສຸເຫລົ່ານັ້ນຄວຣໄດ້ຮັບກາຣຕຳຫນິ” ຄື ຍົກເວັ້ນພຣະອຸປັຊຊາຍ໌ແລ້ວ ພິກສຸທີ່ເຫລືອສົມຄວຣຖືກຕຳຫນິ ທຸກຮູປ ຕ້ອງອາບັຕິທຸກກຕ ຄຳວ່າ “ພິກສຸນັ້ນຕ້ອງອາບັຕິປາຈິຕຕີຍ໌ນີ້” ຄື ພິກສຸຮູບທີ່ເປັນພຣະອຸປັຊຊາຍ໌ອຸປສົມບົທໃຫ້ນັ້ນແຫລະຕ້ອງອາບັຕິປາຈິຕຕີຍ໌ (ກງຂາ. ອ. ໔໗໙)

ສິກຂາບົທວິພັງຄ໌

[໔໐໔] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກສຸຮູ້ເອງ ຜູ້ອື່ນບອກໃຫ້ພິກສຸນັ້ນຮູ້ ຫລືບຸຄຄົລຜູ້ມີອາຍຸບໍ່ຄົບ ໒໐ ປີນັ້ນບອກ

ທີ່ຊື່ວ່າ ມີອາຍຸຫນ້ອຍກວ່າ ໒໐ ປີ ຄື ຜູ້ມີອາຍຸບໍ່ເຖິງ ໒໐ ປີ

ພິກສຸຕັ້ງໃຈວ່າ "ຈະອຸປສົມບົທໃຫ້" ແສວງຫາຄນະ ອາຈາຣຍ໌ ບາຕຣ ຫລືຈີວອນ ຫລືສົມມຸດສີມາ ຕ້ອງອາບັຕິທຸກກຕ ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໒ ຄັ້ງ ຕ້ອງອາບັຕິທຸກກຕ ໒ ຕົວ ຈົບກັມວາຈາຄັ້ງສຸດທ້າຍ ພຣະອຸປັຊຍາຍ໌ຕ້ອງອາບັຕິປາຈິຕຕີຍ໌ ຄນະ ແລະອາຈາຣຍ໌ຕ້ອງອາບັຕິທຸກກຕ

ບົທພາຊນີຍ໌

[໔໐໕] ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ພິກສຸສໍາຄັນວ່າອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທໃຫ້ ຕ້ອງອາບັຕິປາຈິຕຕີຍ໌

ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ພິກສຸບໍ່ແນ່ໃຈ ອຸປສົມບົທໃຫ້ ຕ້ອງອາບັຕິທຸກກຕ

ບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ພິກສຸສໍາຄັນວ່າອາຍຸຄົບ ໒໐ ປີ ອຸປສົມບົທໃຫ້ ບໍ່ຕ້ອງອາບັຕິ

ບຸຄຄົລອາຍຸຄົບ ໒໐ ປີ ພິກສຸສໍາຄັນວ່າອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທໃຫ້ ຕ້ອງອາບັຕິທຸກກຕ

ບຸຄຄົລອາຍຸຄົບ ໒໐ ປີ ພິກສຸບໍ່ແນ່ໃຈ ອຸປສົມບົທໃຫ້ ຕ້ອງອາບັຕິທຸກກຕ

ບຸຄຄົລອາຍຸຄົບ ໒໐ ປີ ພິກສຸສໍາຄັນວ່າອາຍຸຄົບ ໒໐ ປີ ອຸປສົມບົທໃຫ້ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໐໖] ໑. ພິກສຸສໍາຄັນບຸຄຄົລອາຍຸຫນ້ອຍກວ່າ ໒໐ ປີ ວ່າອາຍຸຄົບ ໒໐ ປີ ຈຶ່ງອຸປສົມບົທໃຫ້

໒. ພິກສຸສໍາຄັນບຸຄຄົລອາຍຸຄົບ ໒໐ ປີ ວ່າອາຍຸຄົບ ໒໐ ປີ ຈຶ່ງອຸປສົມບົທໃຫ້

໓. ພິກສຸວິກົລຈິຕ

໔. ພິກສຸຕົ້ນບັນຍັດ

ອູນວິສຕິວັສສສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໗. ເຖຍຍສັຕຖສິກຂາບົທ ນິທານວັຕຖຸ

໗. ສັປປານກວັຄ

໗. ເຖຍຍສັຕຖສິກຂາບົທ

ວ່າດ້ວຍການຍ່າງທາງໄກຮ່ວມກັບພໍ່ຄ້າກວຽນຜູ້ເປັນໂຈຣ

ເຣື້ອງພິກສຸຮູບນຶ່ງ

[໔໐໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພໍ່ຄ້າກວຽນກຸ່ມນຶ່ງຕ້ອງການຈະຍ່າງທາງຈາກກຸງຣາຊຄຶຫ໌ໄປ ຖິ່ນຍ້ອນແສງ໑ ພິກສຸຮູບນຶ່ງໄດ້ກ່າວກັບຄົນເຫລົ່ານັ້ນດັ່ງນີ້ວ່າ "ອາຕມາຈະຍ່າງທາງຮ່ວມໄປກັບ ພວກທ່ານ" ພວກພໍ່ຄ້າກວຽນກ່າວວ່າ "ພຣະຄຸນເຈົ້າ ພວກຜູ້ຂ້າຈະລຽງພາສີຂນ້ອຍ" ເຈົ້າຫນ້າທີ່ ເກັບພາສີຊາບຂ່າວວ່າ "ພວກພໍ່ຄ້າກວຽນຈະລຽງພາສີ" ຈຶ່ງດັກຈອບໃນຫົນທາງ ຄັນເຈົ້າຫນ້າທີ່ ເກັບພາສີຈັບພວກພໍ່ຄ້າກວຽນຫມູ່ນັ້ນ ຮິບເອົາຂອງແລ້ວໄດ້ກ່າວກັບພິກສຸນັ້ນວ່າ "ພຣະຄຸນເຈົ້າ ທ່ານຮູ້ຢູ່ ເຫຕຸໃດຈຶ່ງຍ່າງທາງຮ່ວມກັນກັບກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣລະ" ໄຕ່ສວນແລ້ວປ່ອຍໄປ ຄັນພິກສຸນັ້ນໄປເຖິງກຸງສາວັຕຖີຈຶ່ງແຈ້ງເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຮູ້ຢູ່ຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນ ກັບກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງ ນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ເຊີງອັນຖະ :

໑ ປຕິຍາໂລກໍ ຖິ່ນຍ້ອນແສງ ສູຣິຍາໂລກໍ ປຕິມຸຂໍ ຄື ຍ້ອນແສງຕາເວັນ ປຈຸສິມທິສໍ ໄດ້ແກ່ ທິສຕາເວັນຕົກ (ວິ. ອ. ໒/ ໔໐໗/໔໑໗) ພຣະວິນັຍປິດົກແປແລະຮຽບຮຽງຈາກ ສະບັບ "PALI TEXT SOCIETY" ແປວ່າ ຖິ່ນທີ່ຢູ່ທາງທິສໃຕ້ກຸງຣາຊຄຶຫ໌(The Book of the Discipline,

Vol. III, P. 15.)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໖. ເຖຍຍສັຕຖສິກຂາບົທ ສິກຂາບົທວິພັງຄ໌

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານຮູ້ຢູ່ຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຮູ້ຢູ່ຍັງຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໐໗] ກໍ ພິກສຸໃດຮູ້ຢູ່ ຊັກຊວນກັນຍ່າງທາງໄກຮ່ວມກັນກັບກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕິຍ໌

ເຣື່ອງພິກສຸຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໔໐໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ຮູ້ຢູ່ ໄດ້ແກ່ ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ
ທີ່ຊື່ວ່າ ກຸ່ມພໍ່ຄ້າກອງຽນຜູ້ເປັນໂຈຣ ໄດ້ແກ່ ພວກໂຈຣຜູ້ເຄີຍທຳກາຣປຸ້ນແລ້ວ ຫລືຍັງບໍ່ເຄີຍທຳກາຣປຸ້ນ ຜູ້ລັກຂອງຫລວງຫລືລຽງພາສີ
ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ຊັກຊວນກັນ ຄື ຊັກຊວນວ່າ "ພວກເຮົາໄປກັນເຖີດ ທ່ານ ພວກເຮົາໄປກັນເຖີດ ທ່ານຜູ້ຈະເຣີນ ໄປກັນເຖີດ ທ່ານຜູ້ຈະເຣີນ ພວກເຮົາໄປກັນເຖີດ ທ່ານ ພວກເຮົາຈະໄປວັນນີ້ມື້ອື່ນນີ້ ຫລືມະຣືນນີ້" ຕ້ອງອາບັຕິທຸກກຕ

ຄຳວ່າ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຄື ຫມູ່ບ້ານນຶ່ງກຳຫນົດຊົ່ວໄກ່ບິນຕົກ ພິກສຸຕ້ອງອາບັຕິປາຈິຕຕີຍ໌ທຸກໆບໍຣິເວນຫມູ່ບ້ານ ໃນປ່າທີ່ບໍ່ມີຫມູ່ບ້ານ ພິກສຸຕ້ອງອາບັຕິປາຈິຕຕີຍ໌ທຸກໆຣະຍະເຄິ່ງໂຍຊນ໌

ບົທພາຊນີຍ໌

[໔໑໐] ກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸສຳຄັນວ່າເປັນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕີຍ໌

ກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸບໍ່ແນ່ໃຈ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິທຸກກຕ

ກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸສຳຄັນວ່າບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ບໍ່ຕ້ອງອາບັຕິ

ພິກສຸຊັກຊວນ ຄົນທັງຫລາຍບໍ່ໄດ້ຊັກຊວນ ພິກສຸຕ້ອງອາບັຕິທຸກກຕ

ບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸສຳຄັນວ່າກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ຕ້ອງອາບັຕິທຸກກຕ

ບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ພິກສຸສຳຄັນວ່າບໍ່ແມ່ນກຸ່ມພໍ່ຄ້າກວຽນຜູ້ເປັນໂຈຣ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໑໑] ໑. ພິກສຸຍ່າງທາງໂດຍບໍ່ໄດ້ຊັກຊວນ

໒. ຄົນທັງຫລາຍຊັກຊວນ ແຕ່ພິກສຸບໍ່ໄດ້ຊັກຊວນ

໓. ພິກສຸໄປຜິດເວລານັດຫມາຍ

໔. ພິກສຸຜູ້ຍ່າງທາງກັບພໍ່ຄ້າກວຽນຜູ້ເປັນໂຈຣໃນຄາວມີເຫຕຸຂັດຂ້ອງ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ເຖຍຍສັຕຖສິກຂາບົທທີ ໕ ຈົບ

ພຣະວິນັຍປີດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ๆ. ສັປປານກວັຄ ๆ. ສັງວິທານສິກຂາບົທ ນິທານວັຕຖຸ

ๆ. ສັປປານກວັຄ

ๆ. ສັງວິທານສິກຂາບົທ

ວ່າດ້ວຍການຊັກຊວນຍ່າງທາງໄກຮ່ວມກັບມາຕຸຄາມ

ເຣື້ອງພິກສຸຮູບນຶ່ງ

[໔໑໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຮູບນຶ່ງຍ່າງທາງໄປກຸງສາວັຕຖີໃນແຄວັນໂກສົລ ຜ່ານທາງປະຕູຫມູ່ບ້ານແຫ່ງນຶ່ງ ຍິງຄົນນຶ່ງຜິດຖຽງກັບສາມີ ອອກຈາກຫມູ່ບ້ານພົບພິກສຸນັ້ນແລ້ວໄດ້ກ່າວດັ່ງນີ້ວ່າ "ພຣະຄຸນເຈົ້າຜູ້ຈະເຣີນຈະໄປໃສ" ພິກສຸນັ້ນຕອບວ່າ "ນ້ອງຍິງ ອາຕມາຈະໄປກຸງສາວັຕຖີ" ຍິງນັ້ນກ່າວວ່າ "ຂະນ້ອຍຂໍຍ່າງທາງໄປກັບພຣະຄຸນເຈົ້າດ້ວຍ" ພິກສຸນັ້ນກ່າວວ່າ "ໄປເຖີດ ນ້ອງຍິງ" ຄັ້ງນັ້ນ ສາມີຂອງຍິງນັ້ນອອກຈາກບ້ານແລ້ວຖາມພວກຊາວບ້ານວ່າ "ເຈົ້ານາຍພວກທ່ານເຫັນຍິງຮູບຮ່າງຢ່າງນີ້ແດ່ບໍ່" ພວກຊາວບ້ານຕອບວ່າ "ນາຍ ຍິງຮູບຮ່າງຢ່າງນັ້ນຍ່າງທາງໄປກັບບັພຊິຕ" ລຳດັບນັ້ນ ຊາຍຄົນນັ້ນໄດ້ຕິດຕາມໄປຈັບພິກສຸນັ້ນໄດ້ທຸບຕີແລ້ວປ່ອຍໄປຄັ້ງນັ້ນ ພິກສຸນັ້ນນັ່ງຈົ່ມຢູ່ທີ່ເຫງົ້າຕົ້ນໄມ້ແຫ່ງນຶ່ງ ເທື່ອນັ້ນ ຍິງນັ້ນໄດ້ກ່າວກັບສາມີດັ່ງນີ້ວ່າ "ນາຍພິກສຸນັ້ນບໍ່ໄດ້ພາຂະນ້ອຍໄປ ຂະນ້ອຍເອງເປັນຝ່າຍໄປກັບພິກສຸນັ້ນ ພິກສຸນັ້ນບໍ່ແມ່ນຕົວການທ່ານຈົ່ງໄປຂໍຂມາພິກສຸນັ້ນ" ຄັ້ງນັ້ນ ຊາຍຄົນນັ້ນໄດ້ໄປຂໍຂມາພິກສຸນັ້ນ ຄັນພິກສຸນັ້ນໄປເຖິງກຸງສາວັຕຖີແລ້ວຈຶ່ງເລົ່າເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ฯລฯ ພາກັນຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໗. ສັງວິທານສິກຂາບົທ ສິກຂາບົທວິພັງຄ໌

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມແມ່ນແທ້ບໍ່" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຊບຸຣຸສ ຈັ່ງໃດທ່ານຈຶ່ງຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມລະ ໂມຊບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້"

ພຣະບັນຍັດ

[໔໑໓] ກໍ ພິກສຸໃດຊັກຊວນກັນຍ່າງທາງໄກຮ່ວມກັນກັບມາຕຸຄາມ ໂດຍທີ່ສຸດແມ່ນຊົ່ວບໍຣິເວນໝູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕິຍ໌

ເຣື້ອງພິກສຸຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໔໑໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ມາຕຸຄາມ ໄດ້ແກ່ ຍິງມນຸສຍ໌ ບໍ່ແມ່ນນາງຍັກສ໌ ບໍ່ແມ່ນນາງເຜດ ບໍ່ແມ່ນສັຕວ໌ເດັຍຣະສານໂຕແມ່ ແຕ່ເປັນຍິງທີ່ຮູ້ດຽງສາ ສາມາດຮັບຮູ້ຖ້ອຍຄຳສຸພາສິຕ ທຸພພາສິຕ ຄຳຫຍາບແລະຄຳສຸພາພ

ຄຳວ່າ ກັບ ຄື ໂດຍຄວາມເປັນອັນດຽວກັນ

ຄຳວ່າ ຊັກຊວນກັນ ຄື ຊັກຊວນວ່າ "ພວກເຮົາໄປກັນເຖີດ ນ້ອງຍິງ ພວກເຮົາໄປກັນເຖີດ ພຣະຄຸນເຈົ້າ ໄປກັນເຖີດ ພຣະຄຸນເຈົ້າ ພວກເຮົາໄປກັນເຖີດ ນ້ອງຍິງ ພວກເຮົາຈະໄປວັນນີ້ ມື້ອື່ນນີ້ ຫລືມື້ຮືນີ້" ຕ້ອງອາບັຕິທຸກກຕ

ຄຳວ່າ ໂດຍທີ່ສຸດແມ່ນຊົ່ວບໍຣິເວນໝູ່ບ້ານນຶ່ງ ຄື ໝູ່ບ້ານນຶ່ງກຳໜົດຊົ່ວໄກ່ບິນຕກ ພິກສຸຕ້ອງ

ອາບັຕິປາຈິຕຕິຍ໌ທຸກໆບໍຣິເວນຫມູ່ບ້ານ ໃນປ່າທີ່ບໍ່ມີຫມູ່ບ້ານ ພິກສຸຕ້ອງອາບັຕິປາຈິຕຕິຍ໌ທຸກໆ ຣະຍະເຄິ່ງໂຍຊນ໌

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[໔໑໕] ມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ຊັກຊວນກັນຍ່າງທາງໄກຮ່ວມກັນ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕິຍ໌

ມາຕຸຄາມ ພິກສຸບໍ່ແນ່ໃຈ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕິຍ໌

ມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ຊັກຊວນກັນຍ່າງທາງໄກຮ່ວມກັນໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິປາຈິຕຕິຍ໌

ທຸກກຕ

ພິກສຸຊັກຊວນ ມາຕຸຄາມບໍ່ໄດ້ຊັກຊວນ ພິກສຸຕ້ອງອາບັຕິທຸກກຕ

ພິກສຸຊັກຊວນກັນຍ່າງທາງໄກຮ່ວມກັນກັບນາງຍັກສ໌ ນາງເຜດ ກະເທີຍ ຫລືສັຕວ໌ເດັຽຣະສານມີກາຍເປັນມນຸສຍ໌ຜູ້ຍິງ ໂດຍທີ່ສຸດແມ່ນຊົ່ວບໍຣິເວນຫມູ່ບ້ານນຶ່ງ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າເປັນມາຕຸຄາມ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນມາຕຸຄາມ ພິກສຸສຳຄັນວ່າບໍ່ແມ່ນມາຕຸຄາມ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຖ໌] ໗. ສັປປານກວັຄ ໗. ສັງວິທານສິກຂາບ ອນາປັຕຕິວາຣ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໑໖] ໑. ພິກສຸຍ່າງທາງໂດຍບໍ່ໄດ້ຊັກຊວນ

໔. ມາຕຸຄາມຊັກຊວນ ແຕ່ພິກສຸບໍ່ໄດ້ຊັກຊວນ

໓. ພິກສຸໄປຜິດເວລານັດຫມາຍ
໔. ພິກສຸຜູ້ຢ່າງທາງກັບມາຕຸຄາມໃນຄາວມີເຫຕຸຂັດຂ້ອງ
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ສັງວິທານສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໗. ສັປປານກວັຄ ໘. ອຣິຕຖສິກຂາບົທ ນິທານ ວັຕຖຸ

໗. ສັປປານກວັຄ

໘. ອຣິຕຖສິກຂາບົທ
ວ່າດ້ວຍພຣະອຣິຕຖະກ່າວຕູ່ພຣະຜູ້ມີພຣະພາຄ

ເຣື້ອງພຣະອຣິຕຖະ
[໔໑໗] ໑ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທິຕຖິບາປເຊັ່ນນີ້ໄດ້ເກີດຂື້ນແກ່ພຣະອຣິຕຖະ ຜູ້ມີບັນພະບຸຣຸສ ເປັນພານຂ້ານົກແຮ້ງ໔ ວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄ ຊົງສະແດງແລ້ວຈົນເມື່ອ ວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພ ໄດ້ຈິງແທ້"໓ ພິກສຸຫລາຍຮູບໄດ້ຊາບຂ່າວວ່າ "ທິຕຖິບາປເຊັ່ນນີ້ໄດ້ເກີດຂື້ນແກ່ພຣະອຣິຕຖະຜູ້ມີ ບັນພະບຸຣຸສເປັນພານຂ້ານົກແຮ້ງວ່າ ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດ

ເຊີງອັນຖະ :
໑ ວິ. ຈູຣ. ໖/໖໕/໗໔-໔, ມ. ມູ. ໑໔/໔໓໔/໑໙໖-໑໙໙
໔ ຄທຸທາທີປຸພໂພ ຜູ້ມີບັນພະບຸຣຸສເປັນພານຂ້ານົກແຮ້ງ ອັນຖະກຖາອທິບາຍວ່າ ຄທິເທ ພາທຍຶ ສູຕິ ຄທຸທພາທີໂນ, ຄທຸທພາທີໂນ ປຸພພປຸຣິສາ ອສຸສາຕິ ຄທຸທພາທີປຸພໂພ. . . . ຄິຊຸປຊາຕກ ກຸລປຸປສູຕສຸສ ພານຂ້ານົກແຮ້ງເປັນບັນພະບຸຣຸສຂອງເຂົາ ເຫຕຸນັ້ນ ເຂົາຈຶ່ງຊື່ວ່າເປັນຜູ້ມີບັນພະ

ບຸຣຸສເປັນພານຂ້ານົກແຮ້ງ ຫມາຍຄວາມວ່າ ເປັນຄົນເກີດໃນຕະກູນພານຂ້ານົກແຮ້ງ (ວິ. ອ. ໔/໔໑໓/໔໑໗)

ໆ ພຣະອຣິຕຖະ ຮູບນີ້ເປັນພຫູສູຕ ເປັນທັມກຖຶກ ຮູ້ແຕ່ອັນຕຣາຍິກທັມບາງສ່ວນ ເພາະເຫຕຸທີ່ທ່ານບໍ່ສລາດເຣື້ອງວິນັຍ ຈຶ່ງບໍ່ຮູ້ເຣື້ອງອັນຕຣາຍິກທັມແຫ່ງການລ່ວງລະເມີດພຣະວິນັຍບັນຍັດ ດັ່ງນັ້ນ ຄັ້ງທີ່ທ່ານຢູ່ໃນທີ່ຫລີກຫລີບຈຶ່ງໄດ້ເກີດຄວາມຄິດຢ່າງນີ້ວ່າ ພວກຄຣືຫັສຖ໌ທີ່ຍຸ່ງກ່ຽວຢູ່ກັບການຄຸນ ທີ່ເປັນໂສດາບັນກໍມີ ເປັນສກທາຄາມີກໍມີ ເປັນອນາຄາມີກໍມີ ສ່ວນພວກພິກສຸກໍຍັງ ເຫັນຮູບທີ່ຈະເພີງຮູ້ດ້ວຍຈັກສຸ ຯລຯ ຍັງຖືກຕ້ອງສິ່ງສັມຜັສທີ່ຈະເພີງຮູ້ດ້ວຍກາຍ ຍັງໃຊ້ສອຍຜ້າປູຜ້າຫົ່ມອ່ອນນຸ່ມ ສິ່ງນີ້ທັງຫມົດຖືວ່າຄວຣ ເປັນຫຍັງຮູບ ສຽງ ກິ່ນ ຣົສ ສັມຜັສຂອງຍິງຈະບໍ່ຄວຣ ສິ່ງເຫລົ່ານັ້ນຕ້ອງຄວຣແນ່ນອນ ທ່ານເກີດທິຕຖິບາປຂຶ້ນມາແລ້ວ ຂັດແຍ້ງກັບພຣະສັພພັຍຸຕຍານວ່າ "ເປັນຫຍັງພຣະຜູ້ມີພຣະຜູ້ມີພຣະພາຄຈຶ່ງບັນຍັດປຖົມປາຣາຊິກຢ່າງກວດຂັນ ປຣະດຸຈກັ້ນມຫາສມຸທຣສະນັ້ນ ໃນຂໍ້ນີ້ບໍ່ມີໂທສ" ຕັດຄວາມຫວັງຂອງເຫລົ່າພັພພບຸຄຄົລ ຄັດຄ້ານພຣະເວສາຣັຊຢານະ ໃສ່ຕໍແລະຫນາມໃນອຣິຍມັຄ ປະຫາຣອານາຈັກຣຂອງພຣະຊິນເຈົ້າດ້ວຍກ່າວວ່າ "ເມຖຸນທັມບໍ່ມີໂທສ" (ວິ. ອ. ໔/໔໑໓/໔໑໗-໔໑໘, ມ. ມູ. ອ. ໔/໔ໆ໔/໘-໑໐)

ກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງບໍ່" ຄັນແລ້ວພິກສຸເຫລົ່ານັ້ນຈຶ່ງເຂົ້າໄປຫາພຣະອຣິຕຖະຜູ້ມີບັນພະບຸຣຸສເປັນພານຂ້ານົກແຮ້ງເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບພຣະອຣິຕຖະຜູ້ມີບຣຣພບຸຣຸສເປັນພານຂ້ານົກແຮ້ງດັ່ງນີ້ວ່າ "ທ່ານອຣິຕຖະ ໄດ້ຊາບວ່າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ແມ່ນແທ້ບໍ" ພຣະອຣິຕຖະຜູ້ມີບັນພະບຸຣຸສເປັນພານຂ້ານົກແຮ້ງກ່າວວ່າ "ເຫມືອນຈະເປັນຢ່າງນັ້ນທ່ານທັງຫລາຍ ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພິກສຸທັງຫລາຍໄດ້ກ່າວວ່າ "ທ່ານອຣິຕຖະ ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານອຣິຕຖະ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆ ແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ ແມ່ນແທ້ພຣະຜູ້ມີພຣະພາຄຕຣັສວ່າ

ການທັງຫລາຍມີຄວາມຍິນດີນ້ອຍ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນການນີ້ມີໂທສູຢ່າງຍິ່ງ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຮ່າງໂຄງກະດູກ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນການນີ້ມີໂທສູຢ່າງຍິ່ງ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຊີ້ນເນື້ອ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍ

ປຽບເຫມືອນຄວາມຝັນ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຂອງທີ່ຍືມມາ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຜົລໄມ້ຄາຕົ້ນ໑ ຯລຯ ພຣະຜູ້ມີພຣະ

ເຊີງອັນຖະ :

໑ ອິສຣຸກຸຂຜລູປມາ ສພຸພງຄປຈຸຈງຄປລິພຸິຊນຕຸເນ ປຽບເຫມືອນຜົລໄມ້ມີພິສູ ເພາະບັ່ນທອນຮ່າງກາຍ (ມ. ມູ. ອ. ໒/໖໓໔/໑໐) ອີກນັຍນຶ່ງ ຄົນທີ່ຕ້ອງການຜົລໄມ້ ທຽວແສວງຫາຜົລໄມ້ ເມື່ອພົບຕົ້ນໄມ້ຜົລດົກຈຶ່ງປີນຂຶ້ນໄປເກັບກິນ ເກັບໃສ່ຫໍ່ ອີກຄົນນຶ່ງກໍຕ້ອງການຜົລໄມ້ເຊັ່ນກັນ ທຽວແສວງຫາ ພົບເຫັນຕົ້ນໄມ້ຜົລດົກຕົ້ນດຽວກັນນັ້ນ ແຕ່ແທນທີ່ຈະປີນຂຶ້ນໄປເກັບຜົລໄມ້ກິນກັບເອົາຂວານຕັດຕົ້ນໄມ້ຜົລດົກນັ້ນໃນຂນະທີ່ຄົນທຳອິດຍັງຢູ່ເທິງຕົ້ນໄມ້ ອັນຕຣາຍຈຶ່ງເກີດຂຶ້ນແກ່ເຂົາ (ດູ ມ. ມ. ໑໓/໔໗/໓໑)

ພາຄຕຣັສວ່າການທັງຫລາຍປຽບເຫມືອນຂຽງຫັ່ນຊີ້ນ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຫອກຫລາວ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າການທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນການນີ້ມີໂທສູຢ່າງຍິ່ງ” ພຣະອຣິຕຸຖະຖືກພິກສຸເຫລົ່ານັ້ນຕັກເຕືອນແຕ່ກໍຍັງກ່າວດ້ວຍຄວາມຍຶດຫມັ້ນຖືຫມັ້ນທິຕຸຖິບາປນັ້ນຢູ່ຢ່າງນັ້ນວ່າ “ເຫມືອນຈະເປັນຢ່າງນັ້ນ ທ່ານທັງຫລາຍ ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້” ພິກສຸເຫລົ່ານັ້ນບໍ່ອາຈຈະປົດເປື້ອງພຣະອຣິຕຸຖະຜູ້ມີບັນພະບຸຣຸສູເປັນພານຂ້ານິກແຮ້ງຈາກທິຕຸຖິບາປນັ້ນໄດ້ ຄັນແລ້ວພິກສຸທັງຫລາຍຈຶ່ງພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຂາບທູລເຣື່ອງນີ້ໃຫ້ພຣະຜູ້ມີພຣະພາຄຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພຣະອຣິຕຖະວ່າ "ອຣິຕຖະ ຊາບວ່າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄ ຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ຈິງຫລື" ພຣະອຣິຕຖະທູລຮັບວ່າ "ເຫມືອນຈະເປັນຢ່າງນັ້ນພຣະພຸທທເຈົ້າຂ້າ ຂ້າພຣະອົງຄ໌ຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພຣະຜູ້ມີພຣະພາຄຊົງຕຳຫນິວ່າ "ໂມຊບຸຣຸສ ທ່ານຮູ້ທົ່ວເຖິງທັມທີ່ເຮົາສະແດງແລ້ວໄດ້ຢ່າງໃດ ໂມຊບຸຣຸສ ເຮົາກ່າວທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແມ່ນແທ້ ບໍ່ແມ່ນບໍ ເຮົາກ່າວວ່າກາມທັງຫລາຍມີຄວາມຍິນດີນ້ອຍ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຮ່າງໂຄງກະດູກ ມີທຸກຂ໌ມາກມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຊິ້ນເນື້ອ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄວາມຝັນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຂອງທີ່ຍືມມາ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຜົລໄມ້ຄາຕົ້ນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຂຽງຫັ່ນຊີ້ນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫອກຫລາວ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກໃນກາມນີ້ມີໂທສຢ່າງຍິ່ງ ໂມຊບຸຣຸສ ກໍເມື່ອເປັນເຊັ່ນນີ້ ທ່ານຊື່ວ່າກ່າວຕູ່ເຮົາດ້ວຍທິຕຖິທີ່ຍຶດຖືໄວ້ຜິດ ຊື່ວ່າທຳລາຍຕົນເອງແລະຊື່ວ່າປະສົບສິ່ງບໍ່ແມ່ນບຸນເປັນອັນມາກ ໂມຊບຸຣຸສ ຂໍ້ນັ້ນຈັກເປັນໄປເພື່ອຄວາມບໍ່ເກື້ອກູລ ເພື່ອຄວາມທຸກຂ໌ແກ່ທ່ານຕລອດກາລນານ ໂມຊບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໑໗] ກໍ ພິກສຸໃດກ່າວຢ່າງນີ້ວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ

ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພິກສຸນັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ວ່າ "ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍ

ປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງ" ພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍຍັງຢືນຢັນຢູ່ຢ່າງນັ້ນ ພິກສຸນັ້ນອັນພິກສຸທັງຫລາຍເພິງສວດສມນຸພາສນ໌ຈົນຄົບ ໓ ຄັ້ງ ເພື່ອໃຫ້ສລະທິຕຖິນັ້ນ ຖ້າທ່ານກຳລັງຖືກສວດສມນຸພາສນ໌ກວ່າຈະຄົບ ໓ ຄັ້ງ ສລະທິຕຖິນັ້ນໄດ້ ນັ້ນເປັນການດີ ຖ້າບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະອຣິຕຖະ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສັປປານກວັຄ ໗. ອຣິຕຖສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໔໑໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ກ່າວຢ່າງນີ້ ຄວາມວ່າ ພິກສຸກ່າວວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້"

ຄຳວ່າ ພິກສຸນັ້ນ ໄດ້ແກ່ ພິກສຸຜູ້ກ່າວຢ່າງນັ້ນ

ຄຳວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ພວກພິກສຸທີ່ໄດ້ເຫັນ ໄດ້ຍິນ ເພິງວ່າກ່າວຕັກເຕືອນພິກສຸນັ້ນວ່າ "ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆ

ແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍແກ່ຜູ້ຂ້ອງເສພໄດ້ຈິງ” ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໔ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າພິກສຸນັ້ນສລະໄດ້ ນັ້ນເປັນກາຣດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກຕ

ພິກສຸທັງຫລາຍຊາບເຣື່ອງແລ້ວບໍ່ຕັກເຕືອນ ຕ້ອງອາບັຕິທຸກກຕ

ພິກສຸທັງຫລາຍເພິງນຳຕົວພິກສຸນັ້ນມາທ່າມກາງສົງຂ໌ແລ້ວວ່າກ່າວຕັກເຕືອນວ່າ “ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ກາຣກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ທ່ານ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະກາຣຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຂ້ອງເສພໄດ້ຈິງ” ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໔ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າພິກສຸນັ້ນສລະໄດ້ ນັ້ນເປັນກາຣດີ ຖ້າບໍ່ສລະ ຕ້ອງອາບັຕິທຸກກຕ ພິກສຸທັງຫລາຍເພິງສວດສມນຸພາສນ໌ພິກສຸນັ້ນ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໆ. ສັປປານກວັຄ ໆ. ອຣິຕຖສິກຂາບົທ ສິກຂາບົທວິພັງຄ໌

ວິທີສວດສມນຸພາສນ໌ແລະກັມວາຈາສວດສມນຸພາສນ໌

ພິກສຸທັງຫລາຍເພິງສວດສມນຸພາສນ໌ພິກສຸນັ້ນຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິຈຕຸຕຖກັມວາຈາວ່າ

[໔໑໐] “ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ພິກສຸຊື່ນີ້ວ່າ ‘ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວ ຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຂ້ອງເສພໄດ້ຈິງແທ້’ ພິກສຸນັ້ນບໍ່ສລະທິຕຖິນັ້ນ ຖ້າສົງຂ໌ພ້ອມກັນແລ້ວກໍເພິງສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະທິຕຖິນັ້ນ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ພິກສຸຊື່ນີ້ວ່າ ‘ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຂ້ອງເສພໄດ້ຈິງແທ້’ ພິກສຸນັ້ນບໍ່ສລະທິຕຖິນັ້ນ ສົງຂ໌ສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະທິຕຖິນັ້ນ ທ່ານຮູບໃດເຫັນດ້ວຍກັບກາຣສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະທິຕຖິນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນ

ເຖິງທັກທ້ວງ ແມ່ນຄັ້ງທີ ໔ ຂ້າພະເຈົ້າກໍຂໍກ່າວຄວາມນີ້ ຯລຯ ແມ່ນຄັ້ງທີ ໓ ຂ້າພະເຈົ້າກໍຂໍກ່າວຄວາມນີ້ວ່າ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ພິກສຸຊື່ນີ້ຢ່າງນີ້ວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ພິກສຸນັ້ນບໍ່ສລະທິຕຖິນັ້ນ ສົງຂ໌ສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະທິຕຖິນັ້ນ ທ່ານຮູບໃດເຫັນດ້ວຍກັບການສວດສມນຸພາສນ໌ພິກສຸຊື່ນີ້ເພື່ອໃຫ້ສລະທິຕຖິນັ້ນ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ພິກສຸຊື່ນີ້ ສົງຂ໌ສວດສມນຸພາສນ໌ແລ້ວເພື່ອໃຫ້ສລະທິຕຖິນັ້ນ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້"

ຈົບຍັຕຕິ ຕ້ອງອາບັຕິທຸກກຕ ຈົບກັມວາຈາ ໔ ຄັ້ງ ຕ້ອງອາບັຕິທຸກກຕ ໔ ຕົວ
ຈົບກັມວາຈາຄັ້ງສຸດທ້າຍ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສັປປານກວັຄ ໘. ອຣິຕຖສິກຂາບົທ ອນາບັຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໒໑] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌
ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌
ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ສລະ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໘໔] ๑. ພິກຂຸຍັງບໍ່ຖືກສວດສມນຸພາສນ໌
໒. ພິກຂຸຜູ້ສລະ
໓. ພິກຂຸວິກົລຈິຕ
໔. ພິກຂຸຕົ້ນບັນຍັດ

ອຣິຕຖສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສັປປານກວັຄ ໘. ອຸກຂິຕຕສັມໂພຄສິກຂາບົທ ນິທານວັຕຖຸ

໗. ສັປປານກວັຄ

໘. ອຸກຂິຕຕສັມໂພຄສິກຂາບົທ
ວ່າດ້ວຍການຄົບຫາພິກຂຸທີ່ຖືກສົງຄ໌ລົງອຸກເຂປນີຍກັມ

ເຣື້ອງພຣະສັພພັຄຄີຍ໌
[໔໘໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ຮູ້ຢູ່ກໍຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ ກັບພິກຂຸຊື່ອຣິຕຖະຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳທັມອັນສົມຄວຣ໑ ຍັງບໍ່ຍອມສລະທິຕຖິນັ້ນ໒ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸສັພພັຄຄີຍ໌ຮູ້ຢູ່ຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ກັບພິກຂຸຊື່ອຣິຕຖະ ຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຄ໌ຍັງບໍ່ໄດ້ທຳທັມອັນສົມຄວຣ ຍັງບໍ່ຍອມສລະທິຕຖິນັ້ນລະ" ຄັນພິກຂຸທັງຫລາຍຕຳໜິພວກພິກຂຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸສັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ກໍຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນ

ຮ່ວມແດ່ກັບພິກສຸອຣິຕຖະຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຊ໌ຍັງບໍ່ໄດ້ທຳທັມອັນສົມຄວຣ ຍັງບໍ່ຍອມສລະທິຕຖິນັ້ນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຂບຸຣຸສທັງຫລາຍ

ເຊີງອັນຖະ :

໑ ຄຳວ່າ "ຜູ້ທີ່ສົງຊ໌ຍັງບໍ່ໄດ້ທຳທັມອັນສົມຄວຣ" ຫມາຍເຖິງພຣະອຣິຕຖຖືກສົງຊ໌ລົງໂທສໂດຍການຍົກອອກຈາກຫມູ່ ຈາກຊຸມນຸມສົງຊ໌ ທີ່ຮຽກວ່າ "ລົງອຸກເຂປນີຍກັມ" ສົງຊ໌ຍັງບໍ່ໄດ້ຍກເລີກໂທສນັ້ນ (ວິ. ອ. ໒/໔໒໔-໕/໔໒໐)

໔ ພຣະອຣິຕຖະກ່າວຕູ່ພຣະທັມວິນັຍໃນສິກຂາບົທທີ ໗ ສັປປານກວັຄ ຂໍ້ ໔໑໗ ຫນ້າ ໕໒໕

ຈັ່ງໃດພວກທ່ານຮູ້ຢູ່ກໍຍັງຄົບຫາແດ່ ຢູ່ຮ່ວມແດ່ ນອນຮ່ວມແດ່ກັບພິກສຸອຣິຕຖະຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຊ໌ຍັງບໍ່ໄດ້ທຳທັມອັນສົມຄວຣ ຍັງບໍ່ຍອມສລະທິຕຖິນັ້ນລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໒໔] ກໍ ພິກສຸໃດຮູ້ຢູ່ກໍຍັງຄົບຫາ ຢູ່ຮ່ວມ ຫລືນອນຮ່ວມກັບພິກສຸຜູ້ກ່າວຕູ່ຢ່າງນັ້ນ ຜູ້ທີ່ສົງຊ໌ຍັງບໍ່ໄດ້ທຳທັມອັນສົມຄວຣ ຍັງບໍ່ຍອມສລະທິຕຖິນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໒໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ທີ່ຊື່ວ່າ ຮູ້ຢູ່ ຄື ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ ຫລືພິກສຸຮູບທີ່ກ່າວຕູ່ນັ້ນບອກ
ຄຳວ່າ ຜູ້ກ່າວຕູ່ຢ່າງນັ້ນ ຄື ພິກສຸຜູ້ກ່າວຢ່າງນີ້ວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງ

ແລ້ວຈິນວ່າເມື່ອທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍບໍ່ສາມາດກໍ່ອັນຕຣາຍ ແກ່ຜູ້ຊ່ອງເສພໄດ້ຈິງແທ້"

ທີ່ຊື່ວ່າ ຜູ້ທີ່ສົງຂ໌ຍັງບໍ່ໄດ້ທຳທັມອັນສົມຄວຣ ຄື ພິກສຸນັ້ນຖືກສົງຂ໌ລົງອຸກເຂປນີຍກັມແລ້ວ ແຕ່ ສົງຂ໌ຍັງບໍ່ໄດ້ຮຽກເຂົ້າຫມູ່

ຄຳວ່າ ກັບ. . . ຍັງບໍ່ຍອມສລະທິຕຖິນັ້ນ ຄື ຮ່ວມກັບຜູ້ທີ່ຍັງບໍ່ຍອມສລະຄວາມເຫັນນັ້ນ

ຄຳວ່າ ຄົບຫາ ອທິບາຍວ່າ ທີ່ຮຽກວ່າຄົບຫາ ໄດ້ແກ່ ກາຣຄົບຫາ ໒ ຢ່າງຄື (໑) ຄົບຫາທາງ ອາມິສ (໒) ຄົບຫາທາງທັມ

ທີ່ຊື່ວ່າ ຄົບຫາທາງອາມິສ ຄື ພິກສຸໃຫ້ອາມິສຫລືຮັບອາມິສ ຕ້ອງອາບັຕິປາຈິຕຕີຍ໌

ທີ່ຊື່ວ່າ ຄົບຫາທາງທັມ ຄື ພິກສຸຍົກທັມຂຶ້ນສະແດງຫລືໃຫ້ຍົກທັມຂຶ້ນສະແດງ

ພິກສຸຍົກທັມຂຶ້ນສະແດງຫລືໃຫ້ຍົກທັມຂຶ້ນສະແດງເປັນບົທ ຕ້ອງອາບັຕິປາຈິຕຕີຍ໌ ທຸກໆບົທ

ພິກສຸຍົກທັມຂຶ້ນສະແດງຫລືໃຫ້ຍົກທັມຂຶ້ນສະແດງເປັນອັກສຣ ຕ້ອງອາບັຕິປາຈິຕຕີຍ໌ທຸກໆ ອັກສອນ

ຄຳວ່າ ຢູ່ຮ່ວມ ຄວາມວ່າ ພິກສຸທຳອຸໂບສົຖ ປວາຣນາ ຫລືສັງຂກັມຮ່ວມກັບ ພິກສຸຜູ້ຖືກສົງຂ໌ອຸກເຂປນີຍກັມ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ນອນຮ່ວມກັບ ອທິບາຍວ່າ ໃນທີ່ທີ່ມີຫລັງຄາດຽວກັນ ເມື່ອພິກສຸຜູ້ຖືກສົງຂ໌ລົງອຸກ ເຂປນີຍກັມນອນ ພິກສຸກໍນອນ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອພິກສຸນອນ ພິກສຸຜູ້ຖືກສົງຂ໌ລົງອຸກ ເຂປນີຍກັມກໍນອນ ພິກສຸທີ່ນອນດ້ວຍ ຕ້ອງອາບັຕິປາຈິຕຕີຍ໌ ຫລືນອນທັງ ໒ ຮູບ ກໍຕ້ອງອາບັຕິ ປາຈິຕຕີຍ໌ ພິກສຸລຸກຂຶ້ນແລ້ວກັບນອນອີກ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໔໒໘] ພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ພິກສຸສຳຄັນວ່າເປັນພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ຄົບ ຫາ ຢູ່ຮ່ວມ ຫລືນອນຮ່ວມ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ພິກສຸບໍ່ແນ່ໃຈ ຄົບຫາ ຢູ່ຮ່ວມ ຫລືນອນຮ່ວມ ຕ້ອງອາບັຕິທຸກ ກົຏ

ພິກສຸຖືກສົງຂ໌ລົງອຸກເຂປນີຍກັມ ພິກສຸສຳຄັນວ່າບໍ່ແມ່ນພິກສຸທີ່ຖືກສົງຂ໌ລົງອຸກເຂປນີຍກັມ ຄົບຫາ ຢູ່ຮ່ວມ ຫລືນອນຮ່ວມ ບໍ່ຕ້ອງອາບັຕິ

ພິກສຸບໍ່ໄດ້ຖືກສົງຂ໌ລົງອຸກເຂປນີຍກັມ ພິກສຸສຳຄັນວ່າເປັນພິກສຸທີ່ຖືກສົງຂ໌ລົງອຸກເຂປນີຍກັມ ຕ້ອງ

ອາບັຕິທຸກກຕ

ພິກສຸບໍ່ໄດ້ຖືກສົງຊ໌ລົງອຸກເຂປນີຍກັມ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ພິກສຸບໍ່ໄດ້ຖືກສົງຊ໌ລົງອຸກເຂປນີຍກັມ ພິກສຸສໍາຄັນວ່າບໍ່ແມ່ນພິກສຸທີ່ຖືກສົງຊ໌ລົງອຸກເຂປນີຍກັມ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໗] ໑. ພິກສຸຮູ້ວ່າ ພິກສຸນັ້ນບໍ່ໄດ້ຖືກສົງຊ໌ລົງອຸກເຂປນີຍກັມ

໒. ພິກສຸຮູ້ວ່າ "ພິກສຸນັ້ນຖືກສົງຊ໌ລົງອຸກເຂປນີຍກັມ ແຕ່ສົງຊ໌ຮຽກເຂົ້າໝູ່ແລ້ວ"

໓. ພິກສຸຮູ້ວ່າ "ພິກສຸນັ້ນ ຍອມສລະທິຕຖິນັ້ນແລ້ວ"

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ອຸກຂິຕຕສັມໂພຄສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ໑໐. ກັນຕກສິກຂາບົທ ນິທານວັຕຖຸ

໗. ສັປປານກວັຄ

໑໐. ກັນຕກສິກຂາບົທ

ວ່າດ້ວຍສມນຸທເທສຊື່ກັນຕກະຖືກສົງຊ໌ນາສນະ

ເຣື້ອງສມນຸທເທສຊື່ກັນຕກະ

[໔໔໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ສມນຸທເທສຊື່ກັນຕກະວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພິກສຸຫລາຍຮູບໄດ້ຊາບຂ່າວວ່າ "ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ສມນຸທເທສຊື່ກັນຕກະວ່າ ເຮົາຮູ້ທົ່ວເຖິງທັມ

ທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈິນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ແທ້" ຄັນແລ້ວພິກສຸເຫລົ່ານັ້ນຈຶ່ງເຂົ້າໄປຫາສມນຸທເທສຊື່ກັນຕກະເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບສມນຸທເທສຊື່ກັນຕກະດັ່ງນີ້ວ່າ "ກັນຕກະ ໄດ້ຊາບວ່າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ 'ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈິນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມວ່າກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້' ແມ່ນແທ້ບໍ" ສມນຸທເທສຊື່ກັນຕກະກ່າວວ່າ "ເຫມືອນຈະເປັນຢ່າງນັ້ນ ທ່ານຜູ້ຈະເຣີນທັງຫລາຍ ຜູ້ຂ້າຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວ ຈິນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍຫາສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງແທ້" ພິກສຸທັງຫລາຍ ໄດ້ກ່າວວ່າ "ກັນຕກະ ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ກາຣກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ກັນຕກະ ພຣະຜູ້ມີພຣະພາຄຕຣັສທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະກາຣຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍມີຄວາມຍິນດີນ້ອຍ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຮ່າງໂຄງກະດູກ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຊິ້ນເນື້ອ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າ ກາມທັງຫລາຍປຽບເຫມືອນຄວາມຝັນ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຂອງທີ່ຢືມມາ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຜົລໄມ້ຄາຕົ້ນ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຂຽງຫັ່ນເນື້ອ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຫອກຫລາວ ຯລຯ ພຣະຜູ້ມີພຣະພາຄຕຣັສວ່າກາມທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ"

ສມນຸທເທສຊື່ວ່າກັນຕກະຖືກພິກສຸເຫລົ່ານັ້ນຕັກເຕືອນ ແຕ່ກໍຍັງກ່າວດ້ວຍຄວາມຍຶດຫມັ້ນຖືຫມັ້ນທິຕຖິບາປນັ້ນຢູ່ຢ່າງນັ້ນວ່າ "ເຫມືອນຈະເປັນຢ່າງນັ້ນ ທ່ານທັງຫລາຍ ຜູ້ຂ້າຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈິນເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ" ພິກສຸເຫລົ່ານັ້ນບໍ່ອາຈປົດເປື້ອງສມນຸທເທສຊື່

ກັນຕະກະຈາກທິຕຖິບາປນັ້ນໄດ້ ຄັນແລ້ວພິກສຸທັງຫລາຍຈຶ່ງພາກັນເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວຈຶ່ງຂາບທູລເຣື້ອງນີ້ໃຫ້ພຣະຜູ້ມີພຣະພາຄຊົງຊາບ

ຊົງປະຊຸມສົງຂ໌ສັ່ງນາສນະກັນຕະກະສມນຸທເທສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມສມນຸທເທສຊື່ກັນຕະກະວ່າ "ກັນຕະກະ ຊາບວ່າ ທິຕຖິບາປເຊັ່ນນີ້ໄດ້ເກີດຂຶ້ນແກ່ທ່ານວ່າ ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແທ້ຈິງ ແມ່ນແທ້ບໍ" ສມນຸທເທສຊື່ກັນຕະກະທູລຮັບວ່າ "ເຫມືອນຈະເປັນຢ່າງນັ້ນ ພຣະພຸທທເຈົ້າຂ້າ ຂ້າພຣະອົງຄ໌ຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍກໍຍັງບໍ່ສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແທ້ຈິງ" ພຣະຜູ້ມີພຣະພາຄຕຣັສວ່າ "ໂມຄບຸຣຸສ ທ່ານຮູ້ທົ່ວເຖິງທັມທີ່ເຮົາສະແດງແລ້ວໄດ້ຢ່າງໃດ ໂມຄບຸຣຸສ ເຮົາກ່າວທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍ ໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ແມ່ນແທ້ ບໍ່ແມ່ນບໍ ເຮົາກ່າວວ່າກາມທັງຫລາຍມີຄວາມຍິນດີຫນ້ອຍ ມີທຸກຂ໌ຫລາຍ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຮ່າງໂຄງກະດູກ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຊິ້ນເນື້ອ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄົບເພີງຫຍ້າ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫລຸມຖ່ານເພີງ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຄວາມຝັນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຂອງທີ່ຢືມມາ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຜົລໄມ້ຄາຕົ້ນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຂຽງຫັ່ນຊີ້ນ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫອກຫລາວ ຯລຯ ເຮົາກ່າວວ່າກາມທັງຫລາຍປຽບເຫມືອນຫົວງູ ມີທຸກຂ໌ມາກ ມີຄວາມຄັບແຄ້ນມາກ ໃນກາມນີ້ມີໂທສຢ່າງຍິ່ງ ໂມຄບຸຣຸສ ກໍເມື່ອເປັນເຊັ່ນນີ້ ທ່ານຊື່ວ່າກ່າວຕູ່ເຮົາດ້ວຍທິຕຖິທີ່ຍຶດຖືໄວ້ຜິດ ຊື່ວ່າທຳລາຍຕົນເອງແລະຊື່ວ່າປະສົບສິ່ງບໍ່ແມ່ນບຸນເປັນອັນມາກ ໂມຄບຸຣຸສ ຂໍ້ນັ້ນຈັກເປັນໄປເພື່ອຄວາມບໍ່ເກື້ອກູລ ເພື່ອຄວາມທຸກຂ໌ແກ່ທ່ານຕລອດກາລນານ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ" ຄັນຊົງຕຳຫນິແລ້ວຈຶ່ງຊົງສະແດງທັມມີກຖາແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ ພິກສຸທັງຫລາຍ ຖ້າຢ່າງນັ້ນ ສົງຂ໌ຈົ່ງນາສນະ໑ ສມນຸທເທສຊື່ກັນຕະກະ ພິກສຸທັງຫລາຍ ສົງຂ໌ເພີງນາສນະ ສມນຸທເທສຊື່ກັນຕະກະ ຢ່າງນີ້ວ່າ "ກັນຕະກະ ຕັ້ງແຕ່ວັນນີ້ທ່ານບໍ່ເພີງອ້າງພຣະຜູ້ມີ

ພຣະພາຄວ່າເປັນສາສດາ ແລະທ່ານຈະບໍ່ມີການນອນຮ່ວມກັນ ໒-໓ ຄືນກັບພິກສຸທັງຫລາຍ ເຫມືອນສມນຸທເທສເຫລົ່າອື່ນໄດ້ ທ່ານຈົ່ງໄປທີ່ອື່ນ ທ່ານຈົ່ງໄປໃຫ້ພົ້ນ" ດັ່ງນີ້ ຄັ້ງນັ້ນແລ ສົງຊ໌ໄດ້ນາສນະສມນຸທເທສຊື່ກັນຕກະແລ້ວ

ສມັຍນັ້ນ ພວກພິກສຸສັພພັຄຄີຍ໌ຮູ້ຢູ່ ກໍຍັງປອບໂຍນສມນຸທເທສຊື່ກັນຕກະທີ່ຖືກສົງຊ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຕຖາກແດ່ ຄົບຫາແດ່ ນອນຮ່ວມແດ່

ເຊີງອັນຖະ :

໑ ຄຳວ່າ "ນາສນະ" ແປວ່າ ໃຫ້ຈິບຫາຍ ໄດ້ແກ່ ການລົງໂທສພິກສຸ ມີ ໓ ວິທີ ຄື (໑) ລິງຄນາສນະ ໃຫ້ສິກ (໒) ທັນທກັມນາສນະ ໄລ່ອອກຈາກສຳນັກ (໓) ສັງວາສນາສນະ ຍົກອອກຈາກຫມູ່ ສມນຸທເທສຊື່ກັນຕກະນີ້ ຖືກລົງໂທສໂດຍການໄລ່ອອກຈາກສຳນັກ (ວິ. ອ. ໒/໔໒໘/໔໔໐-໔໔໑)

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຮູ້ຢູ່ ຈຶ່ງປອບໂຍນສມນຸທເທສຊື່ກັນຕກະທີ່ຖືກສົງຊ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຕຖາກແດ່ ຄົບຫາແດ່ ນອນຮ່ວມແດ່ລະ" ຄັນພິກສຸຫລ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ຍັງປອບໂຍນສມນຸທເທສຊື່ກັນຕກະທີ່ຖືກສົງຊ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຕຖາກແດ່ ຄົບຫາແດ່ ນອນຮ່ວມແດ່ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຊບຸຣຸສທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ ຍັງປອບໂຍນສມນຸທເທສຊື່ກັນຕກະທີ່ຖືກສົງຊ໌ນາສນະຢ່າງນັ້ນແລ້ວແດ່ ໃຊ້ທ່ານໃຫ້ອຸປັຕຖາກແດ່ ຄົບຫາແດ່ ນອນຮ່ວມແດ່ ລະ ໂມຊບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເລື່ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໔໙] ຖ້າສມນຸທເທສກ່າວຢ່າງນີ້ວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າ ເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ແທ້" ສມນຸທເທສນັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນວ່າ "ທ່ານຢ່າໄດ້ກ່າວ ຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ສມນຸທເທສ ພຣະຜູ້ມີພຣະພາຄຕຣັສ ທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍໃຫ້ແກ່ຜູ້ຊ່ອງເສພໄດ້ຈິງ" ສມນຸທເທສນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນຢູ່ຢ່າງນີ້ ກໍຍັງຄົງຢືນຢັນຢູ່ຢ່າງນັ້ນ ສມນຸທເທສນັ້ນອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນວ່າ "ສມນຸທເທສ ຕັ້ງແຕ່ວັນນີ້ທ່ານບໍ່ເພິງອ້າງພຣະຜູ້ມີພຣະພາຄວ່າເປັນສາສດາ ແລະທ່ານຈະບໍ່ມີການນອນຮ່ວມກັນ ໒-໓ ຄືນກັບພິກສຸທັງຫລາຍເຫມືອນສມນຸທເທສເຫລົ່າອື່ນໄດ້ ທ່ານຈົ່ງໄປທີ່ອື່ນ໑ ທ່ານຈົ່ງໄປໃຫ້ພົ້ນ" ກໍ ພິກສຸໃດຮູ້ຢູ່ກໍຍັງປອບໂຍນສມນຸທເທສຜູ້ຖືກສົງຂໍນາສນະແລ້ວຢ່າງນັ້ນ ໃຊ້ທ່ານໃຫ້ອຸປັຕຖາກ ຄົບຫາ ຫລືນອນຮ່ວມ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງສມນຸທເທສຊື່ກັນຕກະ ຈົບ

ສິກຂາບົທວິພັງຄ໌

[໔໕໐] ທີ່ຊື່ວ່າ ສມນຸທເທສ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງສາມເນນ

ຄຳວ່າ ກ່າວຢ່າງນີ້ ຄື ສມນຸທເທສກ່າວວ່າ "ເຮົາຮູ້ທົ່ວເຖິງທັມທີ່ພຣະຜູ້ມີພຣະພາຄຊົງສະແດງແລ້ວຈົນວ່າເມື່ອວ່າທັມຕາມທີ່ພຣະຜູ້ມີພຣະພາຄຕຣັສວ່າເປັນທັມກໍ່ອັນຕຣາຍ ກໍຍັງບໍ່ສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ແທ້ຈິງ"

ຄຳວ່າ ສມນຸທເທສນັ້ນ ໄດ້ແກ່ ສມນຸທເທສຜູ້ກ່າວຢ່າງນັ້ນ

ຄຳວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ພວກພິກສຸທີ່ໄດ້ເຫັນໄດ້ຍິນ ເພິງວ່າກ່າວຕັກເຕືອນສມນຸທເທສນັ້ນວ່າ "ສມນຸທເທສ ທ່ານຢ່າໄດ້ກ່າວຢ່າງນີ້ ຢ່າກ່າວຕູ່ພຣະຜູ້ມີພຣະພາຄ ການກ່າວຕູ່ພຣະຜູ້ມີພຣະພາຄບໍ່ດີເລີຍ ເພາະພຣະຜູ້ມີພຣະພາຄບໍ່ໄດ້ຕຣັສຢ່າງນັ້ນ ສມນຸທເທສ ພຣະຜູ້ມີພຣະພາຄຕຣັສ ທັມທີ່ກໍ່ອັນຕຣາຍວ່າເປັນທັມກໍ່ອັນຕຣາຍໄວ້ໂດຍປະການຕ່າງໆແລະທັມເຫລົ່ານັ້ນກໍສາມາດກໍ່ອັນຕຣາຍແກ່ຜູ້ຊ່ອງເສພໄດ້ຈິງ"

ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໔ ເພິງວ່າກ່າວຕັກເຕືອນທ່ານແມ່ນຄັ້ງທີ ໓ ຖ້າທ່ານສລະໄດ້ເປັນການດີ ຖ້າບໍ່ສລະ ສມນຸທເທສນັ້ນ ອັນພິກສຸທັງຫລາຍເພິງວ່າກ່າວຕັກເຕືອນຢ່າງນີ້ ວ່າ

ເຊີງອັນຖະ :

໑ ຄຳວ່າ "ຈົ່ງໄປທີ່ອື່ນ" ແປມາຈາກຄຳວ່າ "ຈຣ ປິເຣ" ຕາມນັຍດີກາວ່າ ຈຣ ປິເຣຕິ ປຣໂຕ ຄຈສຸ, ມາ ອິທ ຕິຕຸຖ (ສາຣຕຸຖ. ຕີກາ ໓/໔໔໗/໑໑໑) ຈົ່ງໄປທາງອື່ນ ຢ່າຢູ່ທີ່ນີ້, ອີກນັຍນຶ່ງວ່າ ປິເຣຕິ ປຣ ອມານກ (ວິ. ອ. ໒/໔໔໗/໔໔໑) ອມຸທາກໍ ອນຊຸປຕຸຕິກພູຕ (ສາຣຕຸຖ. ຕີກາ ໓/໔໔໗/໑໑໐) ໂອອາທສຸສ ອປຕິຄຸຄທເນນ ອຕິກຸການເນນ ອມານກາ ປເຣ ນາມ (ຂຸ. ທ. ອ. ໑/໕/໕໗) ທ່ານເປັນ ຄົນອື່ນຜູ້ບໍ່ນັບຖືພຣະຣັຕນຕຣັຍ, ບໍ່ໄດ້ຢູ່ໃນວົງສົ໌ຂອງພວກເຮົາ ເພາະບໍ່ຮັບ ໂອອາທ ເພາະລ່ວງລະເມີດໂອອາທ

"ສມນຸທເທສ ຕັ້ງແຕ່ວັນນີ້ທ່ານບໍ່ເພິງອ້າງພຣະຜູ້ມີພຣະພາຄວ່າເປັນສາສດາ ແລະທ່ານຈະບໍ່ມີການ ນອນຮ່ວມກັນ ໔-໓ ຄືນກັບພິກສຸທັງຫລາຍເຫມືອນສມນຸທເທສເຫລົ່າອື່ນໄດ້ ທ່ານຈົ່ງໄປທີ່ອື່ນ ທ່ານຈົ່ງໄປໃຫ້ພົ້ນ"

ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ ຫລືສມນຸທເທສນັ້ນບອກ

ຄຳວ່າ ຜູ້ຖືກສົງຂ໌ນາສນະແລ້ວຢ່າງນັ້ນ ຄື ຖືກສົງຂ໌ໃຫ້ຈິບຫາຍແລ້ວຢ່າງນັ້ນ

ທີ່ຊື່ວ່າ ສມນຸທເທສ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງສາມເນຣ

ຄຳວ່າ ປອບໂຍນ ຄື ພິກສຸປອບໂຍນວ່າ "ເຮົາຈະໃຫ້ບາຕຣ ຈີວອນ ອຸທເທສຫລືປຣິປຸຈສາແກ່ ສມນຸທເທສນັ້ນ" ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ທ່ານໃຫ້ອຸປັຕຖາກ ຄື ພິກສຸຍິນດີຈຸຣນະ ດິນຫນຽວ ໄມ້ສີຟັນ ຫລືນ້ຳບ້ວນປາກຂອງ ສມນຸທເທສນັ້ນ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ຄົບຫາ ອທິບາຍວ່າ ທີ່ຮຽກວ່າຄົບຫາ ໄດ້ແກ່ ການຄົບຫາ ໔ ຢ່າງ ຄື (໑) ຄົບຫາທາງ ອາມິສ (໔) ຄົບຫາທາງທັມ

ທີ່ຊື່ວ່າ ຄົບຫາທາງອາມິສ ຄື ພິກສຸໃຫ້ອາມິສຫລືຮັບອາມິສ ຕ້ອງອາບັຕິປາຈິຕຕີຍ໌

ທີ່ຊື່ວ່າ ຄົບຫາທາງທັມ ຄື ພິກສຸຍົກທັມຂຶ້ນສະແດງຫລືໃຫ້ຍົກທັມຂຶ້ນສະແດງ ພິກສຸຍົກທັມຂຶ້ນ

ສະແດງຫລືໃຫ້ຍົກຫັມຂຶ້ນສະແດງ ເປັນບົທ ຕ້ອງອາບັຕິປາຈິຕຕີຍ໌ ທຸກໆບົທ
ພິກສຸຍກຫັມຂຶ້ນສະແດງຫລືໃຫ້ຍກຫັມຂຶ້ນສະແດງ ເປັນອັກສຣ ຕ້ອງອາບັຕິປາຈິຕຕີຍ໌ ທຸກໆ ອັກສຣ

ຄຳວ່າ ນອນຮ່ວມ ອທິບາຍວ່າ ໃນທີ່ທີ່ມີຫລັງຄາດຽວກັນ ເມື່ອສມນຸທເທສຜູ້ຖືກສິງຂ໌ນາສນະນອນ ພິກສຸກໍນອນ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອພິກສຸນອນ ສມນຸທເທສຜູ້ຖືກສິງຂ໌ນາສນະກໍນອນ ພິກສຸທີ່ນອນດ້ວຍ ຕ້ອງອາບັຕິປາຈິຕຕີຍ໌ ຫລືນອນທັງ ໒ ຮູບ ກໍຕ້ອງອາບັຕິປາຈິຕຕີຍ໌ ທັງ ໒ ລຸກຂຶ້ນແລ້ວ ກັບນອນອີກ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໔໓໑] ສມນຸທເທສທີ່ຖືກສິງຂ໌ນາສນະແລ້ວ ພິກສຸສຳຄັນວ່າຖືກສິງຂ໌ນາສນະແລ້ວ ປອບໂຍນ ໃຊ້ທ່ານໃຫ້ອຸປັຕຖາກ ຄົບຫາ ຫລືນອນຮ່ວມ ຕ້ອງອາບັຕິປາຈິຕຕີຍ໌
ສມນຸທເທສທີ່ຖືກສິງຂ໌ນາສນະແລ້ວ ພິກສຸບໍ່ແນ່ໃຈ ປອບໂຍນ ໃຊ້ທ່ານໃຫ້ອຸປັຕຖາກ ຄົບຫາ ຫລືນອນຮ່ວມ ຕ້ອງອາບັຕິທຸກກຕ
ສມນຸທເທສທີ່ຖືກສິງຂ໌ນາສນະແລ້ວ ພິກສຸສຳຄັນວ່າບໍ່ໄດ້ຖືກສິງຂ໌ນາສນະ ປອບໂຍນ ໃຊ້ທ່ານໃຫ້ອຸປັຕຖາກ ຄົບຫາ ຫລືນອນຮ່ວມ ບໍ່ຕ້ອງອາບັຕິ
ສມນຸທເທສທີ່ບໍ່ຖືກສິງຂ໌ນາສນະ ພິກສຸສຳຄັນວ່າຖືກສິງຂ໌ນາສນະ ຕ້ອງອາບັຕິທຸກກຕ
ສມນຸທເທສທີ່ບໍ່ຖືກສິງຂ໌ນາສນະ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ສມນຸທເທສທີ່ບໍ່ຖືກສິງຂ໌ນາສນະ ພິກສຸສຳຄັນວ່າບໍ່ຖືກສິງຂ໌ນາສນະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໓໒] ໑. ພິກສຸຮູ້ຢູ່ວ່າ "ສມນຸທເທສບໍ່ຖືກສິງຂ໌ນາສນະ"
໒. ພິກສຸຮູ້ຢູ່ວ່າ "ສມນຸທເທສສລະທິຕຖິນັ້ນແລ້ວ"
໓. ພິກສຸວິກລຈິຕ
໔. ພິກສຸຕົ້ນບັນຍັດ

ກັນຕກສິກຂາບົທທີ ໑໐ ຈົບ
ສັປປານກວັຄທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສັປປານກວັຄ ຮວມສິກຂາບົທທີ່ມີໃນ ສັປປານກວັຄ

ຮວມສິກຂາບົທທີ່ມີໃນສັປປານກວັຄ

ສັປປານກວັຄມີ ໑໐ ສິກຂາບົທ ຄື

໑. ສັຢຈິຈສິກຂາບົທ ວ່າດ້ວຍຄວາມຈົງໃຈຂ້າສັຕວ໌ມີຊີວິຕ
໔. ສັປປານກສິກຂາບົທ ວ່າດ້ວຍການບໍຣິໂພຄນ້ຳທີ່ມີສັຕວ໌ມີຊີວິຕ
໓. ອຸກໂກຕນສິກຂາບົທ ວ່າດ້ວຍການຣື້ຟື້ນອທິກຣນ໌(ບັນຫາຂອງສົງຂ໌)ຂຶ້ນມາພິຈາຣນາໃຫມ່
໔. ທຸຕຖຸລລສິກຂາບົທ ວ່າດ້ວຍການປົກປິດອາບັຕິຊົ່ວຫຍາບ
໕. ອູນວິສຕິວັສສສິກຂາບົທ ວ່າດ້ວຍການອຸປສົມບົທໃຫ້ບຸຄຄົລມີອາຍຸຕ່ຳກວ່າ ໒໐ ປີ
໖. ເຖຍຍສັຕຖສິກຂາບົທ ວ່າດ້ວຍການຍ່າງທາງໄກຮ່ວມກັບພໍ່ຄ້າກວຽນຜູ້ເປັນໂຈຣ
໗. ສັງວິທານສິກຂາບົທ ວ່າດ້ວຍການຊັກຊວນຍ່າງທາງໄກຮ່ວມກັບມາຕຸຄາມ
໘. ອຣິຕຖສິກຂາບົທ ວ່າດ້ວຍພຣະອຣິຕຖະກ່າວຕູ່ພຣະຜູ້ມີພຣະພາຄ
໙. ອຸກຂິຕຕສັມໂພຄສິກຂາບົທ ວ່າດ້ວຍການຄົບຫາພິກສຸທີ່ຖືກສົງຂ໌ລົງອຸກເຂປນີຍກັມ
໑໐. ກັນຕກສິກຂາບົທ ວ່າດ້ວຍສມນຸທເທສຊື່ກັນຕກະ ຖືກສົງຂ໌ນາສນະ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໘. ສຫທຣຣມິກວັຄ ໑. ສຫທຣຣມິກສິກຂາບົທ ນິທານວັຕຖຸ

໘. ສຫທຣຣມິກວັຄ

ຫມວດວ່າດ້ວຍຜູ້ຮ່ວມປະພຶດທັມ

໑. ສຫທຣຣມິກສິກຂາບົທ

ວ່າດ້ວຍການກ່າວຕັກເຕືອນຜູ້ຮ່ວມປະພຶດທັມໂດຍຊອບທັມ

ເຣື້ອງພຣະສັນນະ

[៤໓໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ໂຂສິຕາຣາມ ເຂຕກຸງໂກສັມພີ ຄັ້ງນັ້ນ ທ່ານພຣະສັນນະປະພຶດບໍ່ສົມຄວຣ ພິກສຸທັງຫລາຍກ່າວຢ່າງນີ້ວ່າ "ທ່ານສັນນະ ທ່ານຢ່າໄດ້ກະທຳຢ່າງນີ້ ກາຣກະທຳຢ່າງນີ້ບໍ່ສົມຄວຣ" ທ່ານພຣະສັນນະນັ້ນກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນພຣະວິນັຍທຣ"

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປຣະຢາມ ໂພນທະນາວ່າ "ຈັ່ງໃດທ່ານພຣະສັນນະອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ຈຶ່ງກ່າວຢ່າງນີ້ວ່າ ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນພຣະວິນັຍທຣລະ" ຄັນພິກສຸທັງຫລາຍຕຳຫນິທ່ານພຣະສັນນະໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະສັນນະວ່າ "ສັນນະ ຊາບວ່າ ທ່ານອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມກໍກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນ ຜູ້ສລາດ ຜູ້ເປັນພຣະວິນັຍທຣ' ແມ່ນແທ້ບໍ" ທ່ານພຣະສັນນະທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມກໍກ່າວຢ່າງນີ້ວ່າ 'ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນພຣະວິນັຍທຣ' ລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[៤໓៤] ກໍ ພິກສຸໃດອັນພິກສຸທັງຫລາຍວ່າກ່າວຕັກເຕືອນໂດຍຊອບທັມ ກ່າວຢ່າງນີ້ວ່າ "ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນວິນັຍທຣ" ຕ້ອງ

ອາບັຕິປາຈິຕຕິຍ໌ ພິກສຸທັງຫລາຍ ພິກສຸຜູ້ສຶກສາເພິງຮູ້ເພິງສອບຖາມ ເພິງພິຈາຣນາ ນີ້ເປັນການ ທຳທີ່ສົມຄວນໃນເຣື້ອງນັ້ນ

ເຣື້ອງພຣະສັນນະ ຈົບ

ສິກຂາບົທວິພັງຄ໌

[໔໓໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາ ວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ອັນພິກສຸທັງຫລາຍ ໄດ້ແກ່ ອັນພິກສຸເຫລົ່າອື່ນ

ທີ່ຊື່ວ່າ ໂດຍຊອບທັມ ຄື ສິກຂາບົທໃດທີ່ພຣະຜູ້ມີພຣະພາຄຊົງບັນຍັດໄວ້ ນີ້ຊື່ວ່າໂດຍຊອບທັມ ພິກສຸນັ້ນອັນພິກສຸທັງຫລາຍວ່າກ່າວຕັກເຕືອນດ້ວຍພຣະບັນຍັດໂດຍຊອບທັມນັ້ນ ກ່າວຢ່າງນີ້ວ່າ “ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນພຣະວິນັຍທຣ ຜູ້ເປັນບັນທິຕ ຜູ້ມີປັນຍາ ຜູ້ເປັນພຫູສູຕ ຜູ້ເປັນພຣະທັມກຖຶກ” ດັ່ງນີ້ ຕ້ອງອາບັຕິປາຈິຕຕິຍ໌

ບົທພາຊນີຍ໌

ຕິກປາຈິຕຕິຍ໌

[໔໓໖] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ກ່າວຢ່າງນັ້ນ ຕ້ອງອາບັຕິປາຈິຕຕິຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ກ່າວຢ່າງນັ້ນ ຕ້ອງອາບັຕິປາຈິຕຕິຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ກ່າວຢ່າງນັ້ນ ຕ້ອງອາບັຕິປາຈິຕຕິຍ໌

ທຸກກຕ

ພິກສຸນັ້ນອັນອຸປສັມບັນວ່າກ່າວຕັກເຕືອນດ້ວຍເຣື້ອງທີ່ບໍ່ແມ່ນພຣະບັນຍັດ ກ່າວວ່າ “ເຣື້ອງນີ້ບໍ່ເປັນໄປເພື່ອຄວາມຂັດເກົາ ບໍ່ເປັນໄປເພື່ອຄວາມກຳຈັດ ບໍ່ເປັນໄປເພື່ອຄວາມເປັນຜູ້ຫນ້າເຫລື້ອມໃສ ບໍ່ເປັນໄປເພື່ອຄວາມບໍ່ກໍ່ ບໍ່ເປັນໄປເພື່ອປາຣິພຄວາມພຽນ” ກ່າວວ່າ “ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນພຣະວິນັຍທຣ ຜູ້ເປັນບັນທິຕ ຜູ້ມີປັນຍາ ຜູ້ເປັນພຫູສູຕ ຜູ້ເປັນພຣະທັມກຖຶກ” ດັ່ງນີ້ ຕ້ອງອາບັຕິທຸກກຕ

ພິກສຸນັ້ນອັນອນຸປສັມບັນວ່າກ່າວຕັກເຕືອນດ້ວຍພຣະບັນຍັດ ຫລືບໍ່ແມ່ນພຣະບັນຍັດ ກ່າວວ່າ

"ເຣື້ອງນີ້ບໍ່ເປັນໄປເພື່ອຄວາມຂັດເກົາ ບໍ່ເປັນໄປເພື່ອຄວາມກຳຈັດ ບໍ່ເປັນໄປເພື່ອຄວາມເປັນຜູ້ຫນ້າເຫລື້ອມໃສ ບໍ່ເປັນໄປເພື່ອຄວາມບໍ່ກ່ອ ບໍ່ເປັນໄປເພື່ອປາຣິຼພຄວາມພຽນ" ກ່າວວ່າ "ທ່ານທັງຫລາຍ ຜູ້ຂ້າຈະຍັງບໍ່ສຶກສາໃນສິກຂາບົທນີ້ ຈົນກວ່າຈະໄດ້ສອບຖາມພິກສຸຮູບອື່ນຜູ້ສລາດ ຜູ້ເປັນພຣະວິນັຍທຣ ຜູ້ເປັນບັນທິຕ ຜູ້ມີປັນຍາ ຜູ້ເປັນພຫູສູຕ ຜູ້ເປັນພຣະທັມກຖິກ" ດັ່ງນີ້ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໗. ສຫທັຣມິກວັຄ ໑. ສຫທັຣມິກສິກຂາບົທ ອນາປັຕຕິວາຣ

ຄຳວ່າ ຜູ້ສຶກສາ ຄື ຜູ້ໃຄ່ສຳນຶກ

ຄຳວ່າ ເພິ່ງຮູ້ ຄື ເພິ່ງຊາບ

ຄຳວ່າ ເພິ່ງສອບຖາມ ຄື ເພິ່ງສອບຖາມວ່າ "ທ່ານຜູ້ຈະເຣີນ ສິກຂາບົທນີ້ເປັນຢ່າງໃດ ຫລືສິກຂາບົທນີ້ມີເນື້ອຄວາມວ່າຢ່າງໃດ"

ຄຳວ່າ ເພິ່ງພິຈາຣນາ ຄື ເພິ່ງຄິດ ເພິ່ງໄຕຣ່ຕຣອງ

ຄຳວ່າ ນີ້ເປັນກາຣທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໖໗] ໑. ພິກສຸກ່າວວ່າ "ເຮົາຈັກຮູ້ ຈັກສຶກສາ"

໒. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັດ

ສຫທັຣມິກສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫຫຣຣມິກວັຄ ໔. ວິເລຂນສິກຂາບົທ ນິທານວັຕຖຸ

໗. ສຫຫຣຣມິກວັຄ

໔. ວິເລຂນສິກຂາບົທ

ວ່າດ້ວຍຄວາມຫຍຸ້ງຍາກແຫ່ງສິກຂາບົທ

ເຣື້ອງພຣະສັພພັຄຄີຍ໌

[໔໓໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຕຣັສວິນັຍກຖາ ຊົງພັນນາຄຸນແຫ່ງພຣະວິນັຍ ຕຣັສສັຣເສີນການຮຽນພຣະວິນັຍ ຊົງພັນນາຄຸນພຣະອຸບາລີໂດຍປະການຕ່າງໆພິກສຸທັງຫລາຍກ່າວວ່າ "ພຣະຜູ້ມີພຣະພາຄຕຣັສວິນັຍກຖາ ຊົງພັນນາຄຸນແຫ່ງພຣະວິນັຍ ຕຣັສສັຣເສີນການຮຽນພຣະວິນັຍ ຊົງພັນນາຄຸນທ່ານພຣະອຸບາລີໂດຍປະການຕ່າງໆຢ່າກະນັ້ນເລີຍ ທ່ານທັງຫລາຍ ພວກເຮົາຈະຮຽນພຣະວິນັຍໃນສຳນັກທ່ານພຣະອຸບາລີ"
ພິກສຸເຫລົ່ານັ້ນຈຳນວນຫລາຍ ເປັນເຖຣະກໍມີ ເປັນນວກະກໍມີ ເປັນມັຊຊິມະກໍມີ ຕ່າງພາກັນຮ່ຳຮຽນພຣະວິນັຍໃນສຳນັກທ່ານພຣະອຸບາລີ ຄັ້ງນັ້ນແລ ພວກພິກສຸສັພພັຄຄີຍ໌ໄດ້ປຶກສາກັນວ່າ "ທ່ານທັງຫລາຍ ບັດນີ້ ພິກສຸຈຳນວນຫລາຍເປັນເຖຣະກໍມີ ເປັນນວກະກໍມີ ເປັນມັຊຊິມະກໍມີ ຕ່າງພາກັນຮ່ຳຮຽນພຣະວິນັຍໃນສຳນັກທ່ານພຣະອຸບາລີ ຖ້າພິກສຸເຫລົ່ານີ້ຮອບຮູ້ພຣະບັນຍັດໃນພຣະວິນັຍ ກໍຈັກຊັກຈູງຊີ້ນຳພວກເຮົາໄດ້ຕາມທີ່ປຣາຖນາໃນຄາວທີ່ປຣາຖນາ ຈົນພໍແກ່ຄວາມປຣາຖນາ ຢ່າປານນັ້ນເລີຍ ທ່ານທັງຫລາຍ ພວກເຮົາຈະດູຫມິ່ນພຣະວິນັຍ" ຄັນແລ້ວພວກພິກສຸສັພພັຄຄີຍ໌ຈຶ່ງເຂົ້າໄປຫາພິກສຸທັງຫລາຍແລ້ວກ່າວຢ່າງນີ້ວ່າ "ສິກຂາບົທເລັກໆນ້ອຍໆທີ່ຍົກຂຶ້ນສະແດງເຫລົ່ານີ້ຈະມີປໂຍດຫຍັງ ຍ່ອມເປັນໄປເພື່ອຄວາມຣຳຄານ ເພື່ອຄວາມລຳບາກ ເພື່ອຄວາມຫຍຸ້ງຍາກ"
ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງດູຫມິ່ນພຣະວິນັຍລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ

ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານດູຫມິ່ນວິນັຍ ຈິງຫລື" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງດູຫມິ່ນວິນັຍລະ ໂມຄບຸຣຸສທັງຫລາຍ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໓໙] ກໍ ພິກສຸໃດ ເມື່ອມີຜູ້ຍົກປາຕິໂມກຂ໌ຂຶ້ນສະແດງຢູ່ ກ່າວຢ່າງນີ້ວ່າ "ສິກຂາບົທເລັກໆນ້ອຍໆ ທີ່ຍົກຂຶ້ນສະແດງເຫລົ່ານີ້ ຈະມີປໂຍດຫຍັງ ຍ່ອມເປັນໄປເພື່ອຄວາມຣໍາຄານ ເພື່ອຄວາມລໍາບາກ ເພື່ອຄວາມຫຍຸ້ງຍາກ" ຕ້ອງອາບັຕິປາຈິຕຕີຍ໌ ເພາະດູຫມິ່ນສິກຂາບົທ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໔໐] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້
ຄໍາວ່າ ເມື່ອມີຜູ້ຍົກປາຕິໂມກຂ໌ຂຶ້ນສະແດງຢູ່ ຄວາມວ່າ ເມື່ອມີຜູ້ໃດຜູ້ນຶ່ງຍົກຂຶ້ນສະແດງເອງ ໃຊ້ຜູ້ອື່ນໃຫ້ຍົກຂຶ້ນສະແດງຢູ່ ຫລືກໍາລັງທ່ອງປາຕິໂມກຂ໌
ຄໍາວ່າ ກ່າວຢ່າງນີ້ ຄວາມວ່າ "ສິກຂາບົທເລັກໆນ້ອຍໆທີ່ຍົກຂຶ້ນສະແດງເຫລົ່ານີ້ຈະມີປໂຍດຫຍັງ ຍ່ອມເປັນໄປເພື່ອຄວາມຣໍາຄານ ເພື່ອຄວາມລໍາບາກ ເພື່ອຄວາມຫຍຸ້ງຍາກ" ຄື ດູຫມິ່ນພຣະວິນັຍໃຫ້ອຸປສັມບັນຟັງວ່າ "ພວກພິກສຸທີ່ຮໍ່າຮຽນພຣະວິນັຍນີ້ຈະມີຄວາມຣໍາຄານ ມີຄວາມລໍາບາກ ມີຄວາມຫຍຸ້ງຍາກ ພວກພິກສຸທີ່ບໍ່ຮໍ່າຮຽນພຣະວິນັຍນີ້ຈະບໍ່ມີຄວາມຣໍາຄານ ບໍ່ມີຄວາມລໍາບາກ ບໍ່ມີຄວາມຫຍຸ້ງຍາກ ສິກຂາບົທນີ້ພວກທ່ານບໍ່ຍົກຂຶ້ນສະແດງຈະດີກວ່າ ບໍ່ສຶກສາຈະດີກວ່າ ບໍ່ຮໍ່າຮຽນຈະດີກວ່າ ບໍ່ຊົງຈໍາຈະດີກວ່າ ພຣະວິນັຍຈົ່ງອັນຕຣທານໄປ ຫລືພິກສຸພວກນີ້ຈົ່ງເປັນຜູ້ບໍ່ຮອບຮູ້ພຣະບັນຍັດ" ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໔໑] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ດູຫມິ່ນພຣະວິນັຍ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ດູຫມິ່ນພຣະວິນັຍ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ດູຫມິ່ນພຣະວິນັຍ ຕ້ອງອາບັຕິປາຈິຕຕີຍ໌

ທຸກກດ

ພິກສຸດູຫມິ່ນທັມຢ່າງອື່ນ ຕ້ອງອາບັຕິທຸກກຕ

ພິກສຸດູຫມິ່ນພຣະວິນັຍຫລືທັມຢ່າງອື່ນໃຫ້ອນຸປສັມບັນຟັງ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໔] ໑. ພິກສຸບໍ່ປະສົງຄ໌ຈະດູຫມິ່ນກ່າວຕາມເຫຕຸວ່າ “ນິມົນຕ໌ທ່ານຮຽນພຣະສູຕຣ ພຣະຄາຖາ ຫລືພຣະອພິທັມໄປກ່ອນ ພາຍຫລັງຈຶ່ງຮຽນພຣະວິນັຍ”

໔. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ວິເລຂນສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສຫທຣຣມິກວັຄ ໖. ໂມຫນສິກຂາບົທ ນິທານວັຕຖຸ

໗. ສຫທຣຣມິກວັຄ

໓. ໂມຫນສິກຂາບົທ

ວ່າດ້ວຍການເຮັດໃຫ້ຜູ້ອື່ນຫລົງ

ເຣື້ອງພຣະສັພພັຄຄີຍ໌

[໔໔໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ປະພຶດບໍ່ສົມຄວຣແລ້ວ ຕັ້ງໃຈຢູ່ວ່າ "ຂໍ ພິກສຸທັງຫລາຍຈົ່ງຊາບວ່າ ພວກເຮົາຕ້ອງອາບັຕິເພາະຄວາມບໍ່ຮູ້ " ເມື່ອພິກສຸຍົກປາຕິໂມກຂ໌ຂຶ້ນ ສະແດງຢູ່ກໍກ່າວຢ່າງນີ້ວ່າ "ພວກຜູ້ຂ້າເພິ່ງຊາບດຽວນີ້ເອງວ່າ ຊາບວ່າ ທັມແມ່ນນີ້ມາໃນພຣະສູຕຣ໑ ຢູ່ໃນພຣະສູຕຣ ມີການຍົກຂຶ້ນສະແດງທຸກເຄິ່ງເດືອນ"

ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດ ພວກພິກສຸສັພພັຄຄີຍ໌ ເມື່ອພິກສຸຍົກປາຕິໂມກຂ໌ຂຶ້ນສະແດງຢູ່ ຈຶ່ງກ່າວຢ່າງນີ້ວ່າ 'ພວກ ຜູ້ຂ້າເພິ່ງຊາບດຽວນີ້ເອງວ່າ ຊາບວ່າ ທັມແມ່ນນີ້ມາໃນພຣະສູຕຣ ຢູ່ໃນພຣະສູຕຣ ມີການຍົກຂຶ້ນສະແດງທຸກເຄິ່ງເດືອນ" ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍ ປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານ ເມື່ອພິກສຸຍົກປາຕິໂມກຂ໌ຂຶ້ນສະແດງຢູ່ ກໍຍັງກ່າວຢ່າງນີ້ວ່າ ພວກຜູ້ຂ້າຫາກໍຊາບດຽວນີ້ເອງວ່າ ຊາບວ່າທັມນີ້ແມ່ນວ່າມາໃນພຣະສູຕຣ ຢູ່ໃນ ພຣະສູຕຣແລ້ວ ກໍຍັງມີການຍົກຂຶ້ນສະແດງຢູ່ທຸກເຄິ່ງເດືອນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂ ບຸຣຸສທັງຫລາຍ

ເຊີງອັນຖະ :

໑ ຄຳວ່າ "ທັມ" ຫມາຍເຖິງສິກຂາບົທ ຄຳວ່າ "ພຣະສູຕຣ" ຫມາຍເຖິງພຣະປາຕິໂມກຂ໌

ຈັ່ງໃດພວກທ່ານ ເມື່ອພິກສຸຍົກປາຕິໂມກຂ໌ຂຶ້ນສະແດງຢູ່ຈຶ່ງກ່າວຢ່າງນີ້ວ່າ 'ພວກຜູ້ຂ້າຫາກໍຊາບ ດຽວນີ້ເອງວ່າ 'ຊາບວ່າ ທັມນີ້ແມ່ນມາໃນພຣະສູຕຣ ຢູ່ໃນພຣະສູຕຣ ກໍຍັງມີການຍົກຂຶ້ນສະແດງ ທຸກເຄິ່ງເດືອນ' ລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ

ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂື້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ພຣະບັນຍັດ

[໔໔໔] ກໍ ພິກສຸໃດ ເມື່ອພິກສຸຍົກປາຕິໂມກຂ໌ຂື້ນສະແດງຢູ່ທຸກເຄິ່ງເດືອນ ກ່າວຢ່າງນີ້ວ່າ "ຜູ້ຂ້າເພິ່ງຊາບດຽວນີ້ເອງວ່າ 'ຊາບວ່າ ທັມແມ່ນນີ້ມາໃນພຣະສູຕຣຢູ່ໃນພຣະສູຕຣ ມີກາຣຍົກຂື້ນສະແດງທຸກເຄິ່ງເດືອນ" ຖ້າພິກສຸເຫລົ່າອື່ນຈຳພິກສຸນັ້ນໄດ້ວ່າ "ເມື່ອພິກສຸຍົກປາຕິໂມກຂ໌ຂື້ນສະແດງຢູ່ພິກ ສຸນີ້ເຄີຍນັ່ງຢູ່ ໒-໓ ຄັ້ງມາແລ້ວ ບໍ່ຈຳຕ້ອງກ່າວເຖິງຫລາຍຄັ້ງຍິ່ງກວ່າ" ພິກສຸນັ້ນຍ່ອມບໍ່ພົ້ນເພາະ ຄວາມບໍ່ຮູ້ ແຕ່ພິກສຸນັ້ນຈະຕ້ອງອາບັຕິໃດເພາະປະພຶດບໍ່ເຫມາະສົມນັ້ນ ເພິ່ງປັບອາບັຕິນັ້ນຕາມທັມ ແລະເພິ່ງຍົກໂມຫາໂຣປນກັມຂື້ນມາປັບເພີ້ມໃຫ້ຍິ່ງຂື້ນໄປອີກວ່າ "ທ່ານ ບໍ່ແມ່ນລາພຂອງທ່ານ ທ່ານໄດ້ບໍ່ດີ ທີ່ເມື່ອພິກສຸຍົກປາຕິໂມກຂ໌ຂື້ນສະແດງຢູ່ ທ່ານບໍ່ໃສ່ໃຈຟັງໃຫ້ສຳເຣັຈປໂຍດດ້ວຍດີ" ຕ້ອງອາບັຕິປາຈິຕຕີຍ໌ ເພາະແສຮ້ງທຳຜູ້ອື່ນໃຫ້ຫລົງນັ້ນ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໔໕] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ທຸກເຄິ່ງເດືອນ ຄື ທຸກອັນອຸໂບສົຖ

ຄຳວ່າ ເມື່ອພິກສຸຍົກປາຕິໂມກຂ໌ຂື້ນສະແດງຢູ່ ຄື ເມື່ອພິກສຸກຳລັງສະແດງປາຕິໂມກຂ໌

ຄຳວ່າ ກ່າວຢ່າງນີ້ ຄວາມວ່າ ພິກສຸປະພຶດບໍ່ສົມຄວຣແລ້ວ ຕັ້ງໃຈຢູ່ວ່າ "ຂໍພິກສຸທັງຫລາຍຈົ່ງຊາບວ່າ 'ພວກເຮົາຕ້ອງອາບັຕິເພາະຄວາມບໍ່ຮູ້ ເມື່ອພິກສຸຍົກປາຕິໂມກຂ໌ຂື້ນສະແດງຢູ່ ກໍກ່າວຢ່າງນີ້ວ່າ "ຜູ້ຂ້າເພິ່ງຊາບດຽວນີ້ເອງວ່າ 'ຊາບວ່າ ທັມແມ່ນນີ້ມາໃນພຣະສູຕຣ ຢູ່ໃນພຣະສູຕຣ ມີກາຣຍົກຂື້ນສະແດງທຸກເຄິ່ງເດືອນ" ຕ້ອງອາບັຕິທຸກກຕ

ຖ້າພິກສຸເຫລົ່າອື່ນຈຳພິກສຸຜູ້ປະສົງຄ໌ຈະເຮັດໃຫ້ຫລົງນັ້ນໄດ້ວ່າ "ເມື່ອພິກສຸຍົກປາຕິໂມກຂ໌ຂື້ນສະແດງຢູ່ພິກສຸນີ້ເຄີຍນັ່ງຢູ່ ໒-໓ ຄັ້ງມາແລ້ວ ບໍ່ຈຳຕ້ອງກ່າວເຖິງມາກຄັ້ງຍິ່ງກວ່າ" ພິກສຸນັ້ນຍ່ອມບໍ່ພົ້ນເພາະຄວາມບໍ່ຮູ້ ພິກສຸນັ້ນຈະຕ້ອງອາບັຕິໃດເພາະປະພຶດບໍ່ເຫມາະສົມນັ້ນ ເພິ່ງປັບອາບັຕິນັ້ນ

ຕາມທັມ ແລະເພິງຍົກໂມຫາໂຣປນກັມຂຶ້ນມາປັບເພີ້ມໃຫ້ຍິ່ງຂຶ້ນໄປອີກ
ພິກສຸທັງຫລາຍເພິງຍົກໂມຫາໂຣປນກັມຂຶ້ນປັບຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິງປະກາດ
ໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມວາຈາວ່າ

ກັມວາຈາລົງໂມຫາໂຣປນກັມ

[໔໔໕] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ເມື່ອພິກສຸຍົກປາຕິໂມກຂ໌ຂຶ້ນສະແດງຢູ່ ບໍ່ໃສ່ໃຈຟັງໃຫ້ສຳເຣັຈປໂຍດດ້ວຍດີ ຖ້າສົງຂ໌ພ້ອມກັນແລ້ວ ກໍເພິງຍົກໂມຫາໂຣປນກັມຂຶ້ນປັບພິກສຸຊື່ນີ້ ນີ້ເປັນຍັຕຕິ ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ພິກສຸຊື່ນີ້ເມື່ອພິກສຸຍົກປາຕິໂມກຂ໌ຂຶ້ນສະແດງຢູ່ບໍ່ໃສ່ໃຈຟັງໃຫ້ສຳເຣັຈປໂຍດດ້ວຍດີ ສົງຂ໌ຍົກໂມຫາໂຣປນກັມຂຶ້ນປັບພິກສຸຊື່ນີ້ ທ່ານຮູບໃດເຫັນດ້ວຍກັບການຍົກໂມຫາໂຣປນກັມຂຶ້ນປັບພິກສຸຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງໂມຫາໂຣປນກັມອັນສົງຂ໌ຍົກຂຶ້ນປັບພິກສຸຊື່ນີ້ແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້

ບົທພາຊນີຍ໌

ເມື່ອສົງຂ໌ຍັງບໍ່ຍົກໂມຫາໂຣປນກັມຂຶ້ນປັບ ພິກສຸທຳຜູ້ອື່ນໃຫ້ຫລົງ ຕ້ອງອາບັຕິທຸກກຕ
ເມື່ອສົງຂ໌ຍກໂມຫາໂຣປນກັມຂຶ້ນປັບແລ້ວ ພິກສຸທຳຜູ້ອື່ນໃຫ້ຫລົງ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຖ. ສຫທຣມິກວັຄ ໓. ໂມຫນສິກຂາບົທ ອນາປັຕຕິວາຣ

ຕິກປາຈິຕຕີຍ໌

[໔໔໗] ກັມທີ່ທຳຖືກຕ້ອງ໑ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ທຳຜູ້ອື່ນໃຫ້ຫລົງ ຕ້ອງອາບັຕິປາຈິຕຕີຍ໌
ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ທຳຜູ້ອື່ນໃຫ້ຫລົງ ຕ້ອງອາບັຕິປາຈິຕຕີຍ໌
ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ທຳຜູ້ອື່ນໃຫ້ຫລົງ ຕ້ອງອາບັຕິປາຈິຕຕີຍ໌

ຕິກທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໔໗] ໑. ພິກສຸຍັງບໍ່ໄດ້ຟັງພຣະປາຕິໂມກຂ໌ໂດຍພິສດາຣ

໒. ພິກສຸຟັງພຣະປາຕິໂມກຂ໌ໂດຍພິສດາຣ ແຕ່ບໍ່ເຖິງ ໒-໓ ຄັ້ງ

໓. ພິກສຸບໍ່ປະສົງຄ໌ຈະທຳຜູ້ອື່ນໃຫ້ຫລົງ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ໂມຫນສິກຂາບົທທີ ໓ ຈົບ

ເຊີງອັນຖະ :

໑ ຫມາຍເຖິງໂມຫາໂຣປນກັມ (ວິ. ອ. ໒/໔໔໗/໔໔໙)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫທຣຣມິກວັຄ ໔. ປຫາຣສິກຂາບົທ ນິທານວັຕຖຸ

໗. ສຫທຣຣມິກວັຄ

໔. ປຫາຣສິກຂາບົທ

ວ່າດ້ວຍການທຳຮ້າຍເພື່ອນພິກສຸ

ເຣື້ອງພຣະສັພພັຄຄີຍ໌

[໔໔໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໂກດ ບໍ່ພໍໃຈ ທຳຮ້າຍພວກພິກສຸ ສັຕຕຣສວັຄຄີຍ໌ ພວກພິກສຸສັຕຕຣສວັຄຄີຍ໌ຮ້ອງໄຫ້ ພິກສຸທັງຫລາຍຖາມຢ່າງນີ້ວ່າ “ທ່ານທັງ ຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ” ພວກພິກສຸສັຕຕຣສວັຄຄີຍ໌ຕອບວ່າ “ທ່ານທັງຫລາຍ

ພວກພິກສຸສັພພັຄຄີຍ໌ໂກດ ບໍ່ພໍໃຈ ທຳຮ້າຍພວກຜູ້ຂ້າ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປຣະຢາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໂກດ ບໍ່ພໍໃຈ ທຳຮ້າຍພິກສຸທັງຫລາຍລະ" ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໂກດ ບໍ່ພໍໃຈ ທຳຮ້າຍພິກສຸທັງຫລາຍແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໂກດ ບໍ່ພໍໃຈ ທຳຮ້າຍພິກສຸທັງຫລາຍລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໕໐] ກໍ ພິກສຸໃດໂກດ ບໍ່ພໍໃຈ ທຳຮ້າຍພິກສຸ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໕໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ຄຳວ່າ ພິກສຸ ຄື ພິກສຸອື່ນ

ຄຳວ່າ ໂກດ ບໍ່ພໍໃຈ ຄື ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ

ຄຳວ່າ ທຳຮ້າຍ ຄວາມວ່າ ພິກສຸທຳຮ້າຍດ້ວຍກາຍ ດ້ວຍຂອງເນື່ອງດ້ວຍກາຍ ຫລືດ້ວຍຂອງທີ່ໂຍນໄປ ໂດຍທີ່ສຸດແມ່ນດ້ວຍກລີບອຸບລ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໕໔] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ໂກດ ບໍ່ພໍໃຈ ທຳຮ້າຍ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ໂກດ ບໍ່ພໍໃຈ ທຳຮ້າຍ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ໂກດ ບໍ່ພໍໃຈ ທຳຮ້າຍ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສຫທັມມິກວັຄ ໔. ປຫາຣສິກຂາບົທ ອນາປັຕຕິວາຣ

ທຸກກຕ

ພິກສຸ ໂກດ ບໍ່ພໍໃຈ ທຳຮ້າຍອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໕໖] ໑. ພິກສຸຖືກໃຜໆບຽດບຽນ ປະສົງຄ໌ຈະພົ້ນ ຈຶ່ງທຳຮ້າຍ

໔. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ປຫາຣສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສຫທັມມິກວັຄ ໕. ຕລສັຕຕິກສິກຂາບົທ ນິທານວັຕຖຸ

໗. ສຫທັມມິກວັຄ

໕. ຕລສັຕຕິກສິກຂາບົທ

ວ່າດ້ວຍການເງື້ອຫອກຄືຝ່າມືຂຶ້ນທຳທີວ່າຈະທຳຮ້າຍ

ເຣື້ອງພຣະສັພພັຄຄີຍ໌

[໔໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມື(ຈະທຳຮ້າຍ)໑ພວກພິກສຸສັຕຕຣສວັຄຄີຍ໌ ພວກພິກສຸສັຕຕຣສວັຄຄີຍ໌ເຫລົ່ານັ້ນຢ້ານການທຳຮ້າຍຈຶ່ງຮ້ອງໄຫ້ ພິກສຸທັງຫລາຍຖາມຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກສຸສັຕຕຣສວັຄຄີຍ໌ຕອບວ່າ "ທ່ານທັງຫລາຍ ພວກພິກສຸສັພພັຄຄີຍ໌ໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມືໃຫ້ພວກຜູ້ຂ້າ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມືໃຫ້ພິກສຸທັງຫລາຍລະ" ຄັນພິກສຸ

ທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມືໃຫ້ພິກສຸທັງຫລາຍ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໂກດ ບໍ່ພໍໃຈ ເງື້ອຫອກ ຄືຝ່າມືໃຫ້ພິກສຸລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ

ເຊີງອັນຖະ :

໑ ປຫາຣທານາກາຣំ ຫສີເສຕີອາ ຄືສະແດງອາການຈະທຳຮ້າຍ (ວິ. ອ. ໒/໔໕໔/໔໖໐)

ໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໕໕] ກໍ ພິກສຸໃດໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມືໃຫ້ພິກສຸ ຕ້ອງອາບັຕິປາຈິຕຕີຍ໌

ເອື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໕໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ຄື ພິກສຸອື່ນ

ຄຳວ່າ ໂກດ ບໍ່ພໍໃຈ ຄື ບໍ່ຊອບໃຈ ແຄ້ນໃຈ ເຈັບໃຈ

ຄຳວ່າ ເງື້ອຫອກຄືຝ່າມື ຄວາມວ່າ ພິກສຸເງື້ອກາຍ ຂອງເນື່ອງດ້ວຍກາຍ ຫລືໂດຍທີ່ສຸດແມ່ນດ້ວຍກລີບອຸບລ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໕໗] ອຸປສັມບັນ ພິກສຸສຳຄັນວ່າອຸປສັມບັນ ໂກດ ບໍ່ພໍໃຈ ເງື້ອຫອກຄື ຝ່າມື ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມື ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມື ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸໂກດ ບໍ່ພໍໃຈ ເງື້ອຫອກຄືຝ່າມືໃຫ້ອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໕໗] ໑. ພິກສຸຖືກໃຜໆບຽດບຽນ ປະສົງຄ໌ຈະພົ້ນຈຶ່ງເງື້ອຫອກຄືຝ່າມື
໔. ພິກສຸອິກົລຈິຕ
໖. ພິກສຸຕົ້ນບັນຍັດ

ຕລສັຕຕິກສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫັທຣັມມິກວັຄ ໖. ອມູລກສິກຂາບົທ ນິທານວັຕຖຸ

໗. ສຫັທຣັມມິກວັຄ

໖. ອມູລກສິກຂາບົທ

ວ່າດ້ວຍການໃສ່ຄວາມດ້ວຍອາບັຕິສັງຂາທິເສສທີ່ບໍ່ມີມູລ

ເລື້ອງພຣະສັພພັຄຄີຍ໌

[໔໕໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໃສ່ຄວາມພິກສຸ ດ້ວຍອາບັຕິສັງຂາທິເສສບໍ່ມີມູລ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃສ່ຄວາມພິກສຸດ້ວຍອາບັຕິສັງຂາທິເສສບໍ່ມີມູລລະ" ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເລື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃສ່ຄວາມພິກສຸດ້ວຍອາບັຕິສັງຂາທິເສສບໍ່ມີມູລ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຄຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃສ່ຄວາມພິກສຸດ້ວຍອາບັຕິສັງຂາທິເສສບໍ່ມີມູລລະ ໂມຄຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່

ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໓໐] ກໍ ພິກສຸໃດໃສ່ຄວາມພິກສຸດ້ວຍອາບັຕິສັງຄາທິເສສທີ່ບໍ່ມີມູລ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສຫາທຣຣມິກວັຄ ໓. ອມູລກສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໔໓໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ຄື ພິກສຸອື່ນ

ທີ່ຊື່ວ່າ ບໍ່ມີມູລ ຄື ບໍ່ໄດ້ເຫັນ ບໍ່ໄດ້ຍິນ ບໍ່ໄດ້ນຶກສົງສັຍ

ຄຳວ່າ ອາບັຕິສັງຄາທິເສສ ຄື ດ້ວຍສັງຄາທິເສສ ໑໓ ສິກຂາບົທ ຂໍ້ໃດຂໍ້ນຶ່ງ

ຄຳວ່າ ໃສ່ຄວາມ ໄດ້ແກ່ ພິກສຸໂຈທເອງ ຫລືສັ່ງຜູ້ອື່ນໃຫ້ໂຈທ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໓໔] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ໃສ່ຄວາມດ້ວຍອາບັຕິສັງຄາທິເສສ ທີ່ບໍ່ມີມູລ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ໃສ່ຄວາມດ້ວຍອາບັຕິສັງຄາທິເສສທີ່ບໍ່ມີມູລ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ໃສ່ຄວາມດ້ວຍອາບັຕິສັງຄາທິເສສທີ່ບໍ່ມີມູລ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸໃສ່ຄວາມດ້ວຍອາຈາຣວິບັຕິຫລືທິຕຖິວິບັຕິ໑ ຕ້ອງອາບັຕິທຸກກຕ

ພິກສຸໃສ່ຄວາມອນຸປສັມບັນ ຕ້ອງອາບັຕິທຸກກຕ

ເຊີງອັນຖະ :

໑ "ອາຈາຣວິບັຕິ" ຄືມີຄວາມປະພຶດເສັຽຫາຍ ຕ້ອງອາບັຕິເລັກນ້ອຍ ຄືອາບັຕິຖຸລລັຈຈັຍ ປາຈິຕຕີຍ໌ ປາຕິເທສນີຍະ ທຸກກຕ ທຸພພາສິຕ "ທິຕິວິບັຕິ" ຄືຄວາມເຫັນທີ່ຄາດເຄື່ອນຜິດທັມຜິດວິນັຍ (ວິ. ອ. ໓/໗໔/໔໗-໔໙)

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໖໓] ໑. ພິກສຸສຳຄັນວ່າເປັນເຣື່ອງແມ່ນແທ້ໄຈທເອງຫລືໃຊ້ຜູ້ອື່ນໃຫ້ໄຈທ

໔. ພິກສຸວິກົລຈິຕ

໓. ພິກສຸຕົ້ນບັນຍັດ

ອມູລກສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສຫທຣຣມິກວັຄ ໗. ສັຢຈິຈຈສິກຂາບົທ ນິທານວັຕຖຸ

໗. ສຫທຣຣມິກວັຄ

໗. ສັຢຈິຈຈສິກຂາບົທ

ວ່າດ້ວຍການຈົງໃຈກໍ່ຄວາມຣຳຄານ

ເຣື້ອງພຣະສັພພັຄຄີຍ໌

[໔໙໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຈົງໃຈກໍ່ຄວາມຣຳຄານໃຫ້ແກ່ພວກພິກສຸສັຕຕຣສວັຄຄີຍ໌ດ້ວຍກ່າວວ່າ "ທ່ານທັງຫລາຍ ພຣະຜູ້ມີພຣະພາຄຊົງບັນຍັດສິກຂາບົທໄວ້ວ່າ 'ສົງຂ໌ບໍ່ເພິ່ງອຸປສົມບົທໃຫ້ບຸຄຄົລອາຍຸຕ່ຳກວ່າ ໒໐ ປີ' ພວກທ່ານອາຍຸຕ່ຳກວ່າ ໒໐ ປີ ອຸປສົມບົທແລ້ວ ພວກທ່ານຄົງຈະຍັງເປັນອນຸປສັມບັນຂອງພວກເຮົາແລ້ວຕິບໍ່" ພວກພິກສຸສັຕຕຣສວັຄຄີຍ໌ເຫລົ່ານັ້ນພາກັນຮ້ອງໄຫ້ ພິກສຸທັງຫລາຍຖາມຢ່າງນີ້ວ່າ "ທ່ານທັງຫລາຍ ພວກທ່ານຮ້ອງໄຫ້ເຮັດຫຍັງ" ພວກພິກສຸສັຕຕຣສວັຄຄີຍ໌ຕອບວ່າ "ທ່ານທັງຫລາຍ ພວກພິກສຸສັພພັຄຄີຍ໌ເຫລົ່ານີ້ຈົງໃຈກໍ່ຄວາມຣຳຄານໃຫ້ແກ່ພວກຜູ້ຂ້າ ຂນ້ອຍ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະຢາມ ໂພນທະນາວ່າ "ຈັ່ງໃດພິກສຸສັພພັຄຄີຍ໌ຈຶ່ງຈົງໃຈກໍ່ຄວາມຣຳຄານໃຫ້ແກ່ພິກສຸທັງຫລາຍລະ" ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຈົງໃຈກໍ່ຄວາມຣຳຄານໃຫ້ແກ່ພິກສຸທັງຫລາຍ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຈົງໃຈກໍ່ຄວາມຣຳຄານໃຫ້ແກ່ພິກສຸທັງຫລາຍລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໙໕] ກໍ ພິກສຸໃດຈົງໃຈກໍ່ຄວາມຣຳຄານໃຫ້ແກ່ພິກສຸດ້ວຍຫວັງວ່າ "ທ່ານຈັກບໍ່ມີຄວາມຜາສຸກແມ່ນບຶດດຽວດ້ວຍອຸບາຍນີ້" ປະສົງຄ໌ພຽງເທົ່ານີ້ ບໍ່ມີຫຍັງອື່ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໓໓] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ຄື ພິກສຸອື່ນ

ທີ່ຊື່ວ່າ ຈົງໃຈ ຄື ຮູ້ຢູ່ ຮູ້ດີຢູ່ ຈົງໃຈ ຝ່າຝືນລ່ວງລະເມີດ

ຄຳວ່າ ກໍ່ຄວາມຣຳຄານ ຄວາມວ່າ ພິກສຸກໍ່ຄວາມຣຳຄານກ່າວວ່າ “ທ່ານຄົງຈະອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທແລ້ວ ທ່ານຄົງຈະສັນອາຫາຣໃນເວລາວິກາລ ທ່ານຄົງຈະດື່ມນ້ຳເມົາ ທ່ານຄົງຈະນັ່ງໃນທີ່ລັບກັບມາຕຸຄາມ” ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ປະສົງຄ໌ພຽງເທົ່ານີ້ ບໍ່ມີຫຍັງອື່ນ ຄື ບໍ່ມີເຫຕຸອື່ນທີ່ຈະກໍ່ຄວາມຣຳຄານໃຫ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ສຫທຣຣມິກວັຄ ໗. ສັຍຈິຈຈສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໓໗] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຈົງໃຈກໍ່ຄວາມຣຳຄານ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ຈົງໃຈກໍ່ຄວາມຣຳຄານ ຕ້ອງອາບັຕິປາຈິຕຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຈົງໃຈກໍ່ຄວາມຣຳຄານ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸຈົງໃຈກໍ່ຄວາມຣຳຄານໃຫ້ແກ່ອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໖໗] ໑. ພິກສຸບໍ່ປະສົງຄ໌ຈະກໍ່ຄວາມຣຳຄານ ກ່າວວ່າ "ທ່ານຄົງຈະອາຍຸຫນ້ອຍກວ່າ ໒໐ ປີ ອຸປສົມບົທແລ້ວ ທ່ານຄົງຈະສັນອາຫາຣເວລາວິກາລ ທ່ານຄົງຈະດື່ມນ້ຳເມົາ ທ່ານຄົງຈະນັ່ງໃນທີ່ລັບກັບມາຕຸຄາມ ທ່ານຈົ່ງຮູ້ເຖີດ ຢ່າໄດ້ມີຄວາມຣຳຄານພາຍຫລັງເລີຍ"

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ສັປຈິຈຈສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໘. ສຫທຣຣມິກວັຄ ໘. ອຸປັສສຸຕິສິກຂາບົທ ນິທານວັຕຖຸ

໘. ສຫທຣຣມິກວັຄ

໘. ອຸປັສສຸຕິສິກຂາບົທ

ວ່າດ້ວຍການຈອບຟັງພິກສຸຜິດຖຽງກັນ

ເຣື້ອງພຣະສັພພັຄຄີຍ໌

[໔໖໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຜິດຖຽງກັບພິກສຸຜູ້ມີສີລດີງາມ ພວກພິກສຸຜູ້ມີສີລດີງາມກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ພວກພິກສຸສັພພັຄຄີຍ໌ບໍ່ມີຄວາມລະອາຍ ພວກເຮົາບໍ່ອາຈຜິດຖຽງກັບພິກສຸພວກນີ້" ພວກພິກສຸສັພພັຄຄີຍ໌ກ່າວຢ່າງນີ້ວ່າ "ທ່ານທັງຫລາຍ ເຫຕຸໃດພວກທ່ານຈຶ່ງກ່າວຫາພວກເຮົາວ່າບໍ່ມີຄວາມລະອາຍ" ພິກສຸຜູ້ມີສີລດີງາມ "ທ່ານທັງຫລາຍ ພວກທ່ານໄດ້ຍິນມາຈາກທີ່ໃດ" ພວກພິກສຸສັພພັຄຄີຍ໌ຕອບວ່າ "ພວກເຮົາຢືນຈອບຟັງພວກທ່ານ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປຣະຢາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຢືນຈອບຟັງພວກພິກສຸຜູ້ບາດຫມາງ ຜິດຖຽງ ວິວາທກັນລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຢືນຈອບຟັງພວກພິກສຸຜູ້ບາດຫມາງ ຜິດຖຽງ ວິວາທກັນ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຢືນຈອບຟັງພວກພິກສຸຜູ້ບາດຫມາງ ຜິດຖຽງ ວິວາທກັນລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫທຣຣມິກວັຄ ໗. ອຸປັສສຸຕິສິກຂາບົທ
ສິກຂາບົທວິພັງຄ໌

ພຣະບັນຍັດ

[໔໗໐] ກໍ ພິກສຸໃດຢືນຈອບຟັງພິກສຸຜູ້ບາດຫມາງ ຜິດຖຽງ ວິວາທກັນ ດ້ວຍຕັ້ງໃຈວ່າ "ເຮົາຈະຟັງຄຳທີ່ພິກສຸພວກນີ້ກ່າວ" ປະສົງຄ໌ພຽງເທົ່ານີ້ ບໍ່ມີຫຍັງອື່ນ ຕ້ອງອາບັຕິປາຈິຕຕີຍ໌

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໗໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ພິກສຸ ໄດ້ແກ່ ພິກສຸພວກອື່ນ

ຄຳວ່າ ບາດຫມາງ ຜິດຖຽງ ວິວາທກັນ ຄື ຜູ້ເກີດອທິກຣນ໌(ບັນຫາຂອງສົງຊ໌)

ຄຳວ່າ ຢືນຈອບຟັງ ຄື ພິກສຸຍ່າງໄປດ້ວຍຕັ້ງໃຈວ່າ "ເຮົາຈະຟັງພິກສຸເຫລົ່ານີ້ແລ້ວຈັກໂຈທຕັກເຕືອນ ວ່າກ່າວຕຳຫນິ ໃຫ້ສຳນຶກ ຫລືເຮັດໃຫ້ເກີ້ເຂີນ" ຕ້ອງອາບັຕິທຸກກຕ

ຢືນໃນທີ່ທີ່ຈະໄດ້ຍິນ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸຍ່າງຢູ່ຂ້າງຫລັງ ຮີບຍ່າງໃຫ້ທັນດ້ວຍຕັ້ງໃຈວ່າ “ຈະຟັງ” ຕ້ອງອາບັດທຸກກົດ ຢືນຢູ່ໃນທີ່ທີ່ຈະໄດ້ຍິນ ຕ້ອງອາບັດປາຈິດຕີຍ໌

ພິກສຸຍ່າງໄປຂ້າງຫນ້າ ກັບຍ່າງໃຫ້ຊ້າລົງດ້ວຍຕັ້ງໃຈວ່າ “ຈະຟັງ” ຕ້ອງອາບັດທຸກກົດ ຢືນຢູ່ໃນທີ່ທີ່ຈະໄດ້ຍິນ ຕ້ອງອາບັດປາຈິດຕີຍ໌

ເມື່ອພິກສຸອື່ນປຶກສາກັນຍ່າງຜ່ານມາຍັງທີ່ທີ່ພິກສຸຢືນ ທີ່ທີ່ພິກສຸນັ່ງ ຫລືທີ່ທີ່ພິກສຸນອນ ຕ້ອງອະແຮ້ມໃຫ້ຮູ້ຕົວ ຖ້າບໍ່ອະແຮ້ມຫລືບໍ່ໃຫ້ເຂົາຮູ້ຕົວ ຕ້ອງອາບັດປາຈິດຕີຍ໌

ຄຳວ່າ ປະສົງຄ໌ພຽງເທົ່ານີ້ ບໍ່ມີຫຍັງອື່ນ ຄວາມວ່າ ບໍ່ມີເຫຕຸຜົລອື່ນທີ່ຈະຢືນຈອບຟັງ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິດຕີຍກັນຫ໌] ໗. ສຫທຣຣມິກວັຄ ໗. ອຸປັສສຸຕິສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຈິດຕີຍ໌

[໔໗໔] ອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຢືນຈອບຟັງ ຕ້ອງອາບັດປາຈິດຕີຍ໌

ອຸປສັມບັນ ພິກສຸບໍ່ແນ່ໃຈ ຢືນຈອບຟັງ ຕ້ອງອາບັດປາຈິດຕີຍ໌

ອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຢືນຈອບຟັງ ຕ້ອງອາບັດປາຈິດຕີຍ໌

ທຸກກົດ

ພິກສຸຢືນຈອບຟັງອນຸປສັມບັນ ຕ້ອງອາບັດທຸກກົດ

ອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັດທຸກກົດ

ອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັດທຸກກົດ

ອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ຕ້ອງອາບັດທຸກກົດ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໔໗໕] ໑. ພິກສຸຍ່າງໄປດ້ວຍຫມາຍໃຈວ່າ “ຈັກຟັງຄຳຂອງພິກສຸເຫລົ່ານີ້ແລ້ວ ຈັກ ງົດ ຈັກເວັ້ນ ຈັກຣະງັບ ຈັກປົດເປື້ອງຕົວ”

໔. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ອຸປັສສຸຕິສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໗. ສຫທຣຣມິກວັຄ ໘. ກັມມປຕິພາຫນສິກຂາບົທ ນິທານວັຕຖຸ

໗. ສຫທຣຣມິກວັຄ

໘. ກັມມປຕິພາຫນສິກຂາບົທ

ວ່າດ້ວຍການຄັດຄ້ານກັມທີ່ຖືກຕ້ອງ

ເຣື້ອງພຣະສັພພັຄຄີຍ໌

[໔໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖປິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ປະພຶດບໍ່ສົມຄວຣ ເມື່ອສົງຊ໌ກຳລັງທຳກັມແກ່ພິກສຸແຕ່ລະຮູບ ໄດ້ພາກັນຄັດຄ້ານ ຄັ້ງນັ້ນ ສົງຊ໌ປະຊຸມກັນດ້ວຍກໍຣນີຍກິຈບາງຢ່າງ ພວກພິກສຸສັພພັຄຄີຍ໌ມົວຕັດຍິບຈີວອນຢູ່ ຈຶ່ງໄດ້ມອບສັນທະໃຫ້ພິກສຸຮູບນຶ່ງໄປ ເທື່ອນັ້ນ ສົງຊ໌ກ່າວວ່າ “ທ່ານທັງຫລາຍ ພິກສຸນີ້ຢູ່ໃນກຸ່ມພິກສຸສັພພັຄຄີຍ໌ມາພຽງຮູບດຽວ ພວກເຮົາຈະທຳກັມແກ່ທ່ານ” ແລ້ວໄດ້ທຳກັມແກ່ພິກສຸສັພພັຄຄີຍ໌ຮູບນັ້ນ ຕໍ່ມາ ພິກສຸນັ້ນເຂົ້າໄປຫາພວກພິກສຸສັພພັຄຄີຍ໌ເຖິງທີ່ຢູ່ ພວກພິກສຸສັພພັຄຄີຍ໌ໄດ້ກ່າວກັບພິກສຸນັ້ນດັ່ງນີ້ວ່າ “ທ່ານ ສົງຊ໌ທຳຫຍັງ” ພິກສຸນັ້ນຕອບວ່າ “ສົງຊ໌ທຳກັມແກ່ຜູ້ຂ້າ ຂນ້ອຍ” ພວກພິກສຸສັພພັຄຄີຍ໌ກ່າວວ່າ “ທ່ານ ພວກເຮົາບໍ່ໄດ້ໃຫ້ສັນທະເພື່ອຈະໃຫ້ສົງຊ໌ທຳກັມແກ່ທ່ານ ຖ້າພວກເຮົາຊາບວ່າສົງຊ໌ຈະທຳກັມແກ່ທ່ານ ກໍຈະບໍ່ຍອມໃຫ້ສັນທະໄປ” ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກ ພິກສຸສັພພັຄຄີຍ໌ເມື່ອໃຫ້ສັນທະເພື່ອກັມທີ່ທຳຖືກຕ້ອງແລ້ວກັບຕິຕຽນໃນພາຍຫລັງລະ” ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຫ້ສັນທະເພື່ອກັມທີ່ທຳຖືກຕ້ອງແລ້ວ ກັບຕິຕຽນໃນພາຍຫລັງ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານໃຫ້ສັນທະເພື່ອກັມທີ່ທຳຖືກຕ້ອງແລ້ວກັບຕິຕຽນໃນພາຍຫລັງລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໗໕] ກໍ ພິກສຸໃດໃຫ້ສັນທະເພື່ອກັມທີ່ທຳຖືກຕ້ອງແລ້ວ ກັບຕິຕຽນໃນພາຍຫລັງ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໗໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ກັມທີ່ທຳຖືກຕ້ອງ ໄດ້ແກ່ ອປໂລກນກັມ ຍັຕຕິກັມ ຍັຕຕິທຸຕິຍກັມ ແລະຍັຕຕິຈຕຸຕຖກັມ ທີ່ສົງຂ໌ທຳໂດຍທັມ ໂດຍວິນັຍ ໂດຍສັຕຖຸສາສນ໌ ນີ້ຊື່ວ່າກັມທີ່ທຳຖືກຕ້ອງ

ພິກສຸໃຫ້ສັນທະໄປແລ້ວກັບຕິຕຽນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໔໗໗] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ໃຫ້ສັນທະໄປແລ້ວກັບຕິຕຽນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ໃຫ້ສັນທະໄປແລ້ວກັບຕິຕຽນ ຕ້ອງອາບັຕິທຸກກຕ

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ໃຫ້ສັນທະໄປແລ້ວກັບຕິຕຽນ ບໍ່ຕ້ອງ

ອາບັຕິ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໗໗] ໑. ພິກສຸຮູ້ຢູ່ວ່າ "ສົງຂ໌ທຳກັມບໍ່ຊອບທັມ ແຍກກັນທຳ ຫລືທຳແກ່ພິກສຸຜູ້ບໍ່ຄວຣແກ່ກັມ" ຈຶ່ງຕິຕຽນ
໒. ພິກສຸວິກົລຈິຕ
໓. ພິກສຸຕົ້ນບັນຍັດ

ກັມມປຕິພາຫນສິກຂາບົທທີ່ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫທຣມິກວັຄ ໑໐. ສັນທອທັຕວາຄມນສິກຂາບົທ ນິທານວັຕຖຸ

໗. ສຫທຣມິກວັຄ

໑໐. ສັນທອທັຕວາຄມນສິກຂາບົທ
ວ່າດ້ວຍການບໍ່ໃຫ້ສັນທະແລ້ວໄປເສັຽ

ເຣື້ອງພຣະສັພພັຄຄີຍ໌
[໔໗໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ສົງຂ໌ປະຊຸມກັນດ້ວຍກໍຣະນີຍກິຈບາງຢ່າງ ພວກພິກສຸສັພພັຄຄີຍ໌ມົວຕັດຍີບຈີວອນຢູ່ ຈຶ່ງໄດ້ມອບສັນທະໃຫ້ພິກສຸຣູບນຶ່ງໄປ ຕໍ່ມາສົງຂ໌ຕັ້ງຍັດຕິວ່າ "ສົງຂ໌ປະຊຸມກັນເພື່ອປໂຍດແກ່ກັມໃດ ພວກເຮົາຈະເຮັດກັມນັ້ນ" ລຳດັບນັ້ນ ພິກສຸຣູບນັ້ນໄດ້ກ່າວວ່າ "ພິກສຸເຫລົ່ານີ້ທຳກັມແກ່ພິກສຸແຕ່ລະຣູບຢ່າງນີ້ ພວກທ່ານຈະທຳກັມແກ່ໃຜກັນລະ" ບໍ່ໃຫ້ສັນທະແລ້ວລຸກຈາກອາສນະຈາກໄປ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປຣະຢາມ ໂພນທະນາວ່າ "ຈັ່ງ

ໃດພິກສຸ ເມື່ອຍັງມີເຣື້ອງທີ່ຕ້ອງວິນິຈສັຍຢູ່ໃນສົງຂ໌ ຈຶ່ງບໍ່ໃຫ້ສັນທະແລ້ວລຸກຈາກອາສນະຈາກໄປລະ" ຄັນພິກສຸທັງຫລາຍຕໍາຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນໍາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານເມື່ອຍັງມີເຣື້ອງທີ່ຕ້ອງວິນິຈສັຍຢູ່ໃນສົງຂ໌ ບໍ່ໃຫ້ສັນທະແລ້ວລຸກຈາກອາສນະຈາກໄປ ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານ ເມື່ອຍັງມີເຣື້ອງທີ່ຕ້ອງວິນິຈສັຍຢູ່ໃນສົງຂ໌ ຈຶ່ງບໍ່ໃຫ້ສັນທະແລ້ວລຸກຈາກອາສນະຈາກໄປລະ ໂມຂບຸຣຸສ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫທັມມິກວັຄ ໑໐. ສັນທອທັຕວາຄມນສິກຂາບົທ ບົທພາຊນີຍ໌

ພຣະບັນຍັດ

[໔໗໐] ກໍ ພິກສຸໃດ ເມື່ອຍັງມີເຣື້ອງທີ່ຕ້ອງວິນິຈສັຍໃນສົງຂ໌ ບໍ່ໃຫ້ສັນທະແລ້ວລຸກຈາກອາສນະຈາກໄປ ຕ້ອງອາບັຕິປາຈິຕຕິຍ໌

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໗໑] ຄໍາວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ ຄໍາວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ເຣື້ອງທີ່ຕ້ອງວິນິຈສັຍໃນສົງຂ໌ ໄດ້ແກ່ (໑) ເຣື້ອງທີ່ໂຈທກ໌ແຈ້ງໄວ້ ແຕ່ຍັງບໍ່ໄດ້ວິນິຈສັຍ (໔) ເຣື້ອງທີ່ຕັ້ງຍັຕຕິໄວ້ແລ້ວ (໓) ກັມວາຈາຍັງສວດຄ້າງຢູ່

ຄຳວ່າ ບໍ່ໃຫ້ສັນທະແລ້ວລຸກຈາກອາສນະຈາກໄປ ຄື ພິກສຸໄປດ້ວຍຕັ້ງໃຈວ່າ"ເຮັດຢ່າງໃດ ກັມນີ້ເພິງເສັຽຫາຍ ຈະເພິງແຍກພວກກັນ ເພິງທຳບໍ່ໄດ້" ຕ້ອງອາບັຕິທຸກກຕ

ກຳລັງລະຫັຕຖບາສທີ່ຊຸມນຸມສົງຂ໌ ຕ້ອງອາບັຕິທຸກກຕ ລະຫັຕຖບາສໄປແລ້ວ ຕ້ອງອາບັຕິປາຈິຕຕິຍ໌

ບົທພາຊນີຍ໌

[໔໗໔] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ບໍ່ໃຫ້ສັນທະລຸກຈາກອາສນະຈາກໄປ ຕ້ອງອາບັຕິປາຈິຕຕິຍ໌

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ບໍ່ໃຫ້ສັນທະ ລຸກຈາກອາສນະຈາກໄປ ຕ້ອງອາບັຕິປາຈິຕຕິຍ໌

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ໃຫ້ສັນທະ ລຸກຈາກອາສນະຈາກໄປ ບໍ່ຕ້ອງອາບັຕິ

ທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໕] ໑. ພິກສຸຈາກໄປດ້ວຍຄິດວ່າ "ສົງຂ໌ຈັກມີຄວາມບາດໝາງ ຜິດຖຽງຂັດແຍ້ງຫລືວິວາທກັນ"

໒. ພິກສຸຈາກໄປດ້ວຍຄິດວ່າ "ສົງຂ໌ຈັກແຕກແຍກ ຈັກແຕກແຍກ"

໓. ພິກສຸຈາກໄປດ້ວຍຄິດວ່າ "ສົງຂ໌ຈະເຮັດກັມໂດຍບໍ່ເປັນທັມ ແຍກພວກກັນທຳ ຫລືທຳແກ່ພິກສຸຜູ້ບໍ່ຄວຣແກ່ກັມ"

໔. ພິກສຸເປັນໄຂ້ຈຶ່ງຈາກໄປ

໕. ພິກສຸຈາກໄປດ້ວຍກິຈທີ່ຈຳເປັນຂອງພິກສຸຜູ້ເປັນໄຂ້

໖. ພິກສຸປວດອຸຈຈາຣະປວດປັສສາວະແລ້ວຈາກໄປ

໗. ພິກສຸບໍ່ຕັ້ງໃຈເຮັດໃຫ້ກັມເສັຽ ຈາກໄປດ້ວຍຄິດວ່າຈະກັບມາອີກ

ຖ. ພິກສຸວິກົລຈິຕ

ຌ. ພິກສຸຕົ້ນບັນຍັດ

ສັນທອທັຕອາຄມນສິກຂາບົທທີ ໑໐ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຖ. ສຫທຣຣມິກວັຄ ໑໑. ທັພພສິກຂາບົທ ນິທານວັຕຖຸ

ຖ. ສຫທຣຣມິກວັຄ

໑໑. ທັພພສິກຂາບົທ

ວ່າດ້ວຍກາຣຖວາຍຈີວອນແກ່ພຣະທັພພມັລລບຸຕຣ

ເຣື້ອງພຣະທັພພມັລລບຸຕຣ

[໔໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ທ່ານພຣະທັພພມັລລບຸຕຣຈັດແຈງເສນາສນະແລະແຈກພັຕຕາຫາຣແກ່ສົງຂ໌ ທ່ານມີຈີວອນເກົ່າ ຄາວນັ້ນ ຈີວອນຜືນນຶ່ງໄດ້ເກີດຂຶ້ນແກ່ສົງຂ໌ ຄັນແລ້ວສົງຂ໌ໄດ້ຖວາຍຈີວອນນັ້ນແກ່ທ່ານພຣະທັພພມັລລບຸຕຣ ພວກພິກສຸສັພພັຄຄີຍ໌ພາກັນຕຳຫນິ ປະນາມ ໂພນທະນາວ່າ "ພວກພິກສຸນ້ອມລາພສົງຂ໌ໄປຕາມຄວາມຄຸ້ນເຄີຍກັນ" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຮ່ວມກັບສົງຂ໌ຜູ້ພ້ອມພຽງກັນໃຫ້ຈີວອນໄປແລ້ວກັບຕຳຫນິໃນພາຍຫລັງລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຮ່ວມກັບສົງຂ໌ຜູ້ພ້ອມພຽງກັນໃຫ້ຈີວອນໄປແລ້ວ ກັບຕຳຫນິໃນພາຍຫລັງ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດ

ພວກທ່ານຮ່ວມກັບສົງຂ໌ຜູ້ພ້ອມພຽງກັນໃຫ້ຈີວອນໄປແລ້ວກັບຕຳໜິໃນພາຍຫລັງລະ ໂມຂບຸຣຸສ ທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [៥. ປາຈິຕຕິຍກັນທ໌] ៦. ສຫທັມມິກວັຄ ໑໑. ທັພພສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[៤៦៥] ກໍ ພິກສຸໃດຮ່ວມກັບສົງຂ໌ຜູ້ພ້ອມພຽງກັນ ໃຫ້ຈີວອນໄປແລ້ວກັບຕິຕຽນໃນພາຍຫລັງວ່າ "ພວກພິກສຸນ້ອມລາພທີ່ເປັນຂອງສົງຂ໌ໄປຕາມຄວາມຄຸ້ນເຄີຍກັນ" ຕ້ອງອາບັຕິປາຈິຕຕິຍ໌

ເຣື້ອງພຣະທັພພມັລລບຸຕຣ ຈົບ

ສິກຂາບົທວິພັງຄ໌

[៤៦໖] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ
ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄ ຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້
ສົງຂ໌ທີ່ຊື່ວ່າ ພ້ອມພຽງກັນ ຄື ມີສັງວາສສເມີກັນ ຢູ່ໃນສມານສັງວາສສີມາດຽວກັນ
ທີ່ຊື່ວ່າ ຈີວອນ ໄດ້ແກ່ ບັນດາຈີວອນ ៦ ຊນິດ ຢ່າງໃດຢ່າງນຶ່ງ ຊຶ່ງມີຂນາດພອທີ່ຈະວິກັປໄດ້ ເປັນຢ່າງຕ່ຳ
ຄຳວ່າ ໃຫ້ ຄື ໃຫ້ເອງ
ທີ່ຊື່ວ່າ ຕາມຄວາມຄຸ້ນເຄີຍກັນ ຄື ຕາມຄວາມເປັນມິຕຣ ຕາມຄວາມເປັນເພື່ອນ ຕາມຄວາມໃກ້ຊິດ ຕາມທີ່ເປັນຜູ້ຮ່ວມພຣະອຸປັຊຍາຍ໌ ຕາມທີ່ເປັນຜູ້ຮ່ວມພຣະອາຈາຣຍ໌ກັນມາ
ທີ່ຊື່ວ່າ ທີ່ເປັນຂອງສົງຂ໌ ຄື ທີ່ເຂົາຖວາຍ ທີ່ເຂົາບໍຣິຈາຄແລ້ວແກ່ສົງຂ໌
ທີ່ຊື່ວ່າ ລາພ ໄດ້ແກ່ ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ໂດ ຍທີ່ ສຸດແມ່ນກ້ອນຈຸຣນະ ໄມ້ສີຟັນ ຫລືດ້າຍຊາຍຜ້າ

ຄຳວ່າ ພາຍຫລັງກັບຕິຕຽນ ຄວາມວ່າ ພິກສຸເມື່ອໃຫ້ຈີວອນແກ່ອຸປສັມບັນທີ່ສົງຊ໌ ແຕ່ງຕັ້ງໃຫ້ເປັນເຈົ້າຫນ້າທີ່ຈັດແຈງເສນາສນະ ແຈກອາຫານ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄ້ຽວ ຫລືແຈກຂອງເລັກໆນ້ອຍໆກັບຕິຕຽນ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໔໗໗] ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ໃຫ້ຈີວອນໄປແລ້ວກັບຕິຕຽນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ ພິກສຸບໍ່ແນ່ໃຈ ໃຫ້ຈີວອນໄປແລ້ວກັບຕິຕຽນ ຕ້ອງອາບັຕິປາຈິຕຕີຍ໌

ກັມທີ່ທຳຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ໃຫ້ຈີວອນໄປແລ້ວກັບຕິຕຽນ ບໍ່ຕ້ອງອາບັຕິ

ທຸກກຕ

ພິກສຸໃຫ້ບໍຣິຂາຣຢ່າງອື່ນໄປແລ້ວກັບຕິຕຽນ ຕ້ອງອາບັຕິທຸກກຕ

ພິກສຸໃຫ້ຈີວອນຫລືບໍຣິຂາຣຢ່າງອື່ນແກ່ອຸປສັມບັນທີ່ສົງຊ໌ບໍ່ໄດ້ແຕ່ງຕັ້ງໃຫ້ເປັນເຈົ້າຫນ້າທີ່ຈັດແຈງເສນາສນະ ແຈກອາຫານ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄ້ຽວ ຫລືແຈກຂອງເລັກໆນ້ອຍໆແລ້ວກັບຕິຕຽນ ຕ້ອງອາບັຕິທຸກກຕ

ພິກສຸໃຫ້ຈີວອນຫລືບໍຣິຂາຣຢ່າງອື່ນແກ່ອນຸປສັມບັນທີ່ສົງຊ໌ແຕ່ງຕັ້ງຫລືບໍ່ໄດ້ແຕ່ງຕັ້ງໃຫ້ເປັນເຈົ້າຫນ້າທີ່ຈັດແຈງເສນາສນະ ແຈກອາຫານ ແຈກເຂົ້າຕົ້ມ ແຈກຜົລໄມ້ ແຈກຂອງຄ້ຽວຫລືແຈກຂອງເລັກໆນ້ອຍໆແລ້ວກັບຕິຕຽນ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳຖືກຕ້ອງ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ກັມທີ່ທຳບໍ່ຖືກຕ້ອງ ພິກສຸສຳຄັນວ່າເປັນກັມທີ່ທຳບໍ່ຖືກຕ້ອງ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໔໗໘] ໑. ພິກສຸຕິຕຽນສົງຊ໌ທີ່ມັກທຳໄປດ້ວຍຄວາມລຳອຽງເພາະຊອບ ລຳອຽງເພາະຊັງ ລຳອຽງ

ເພາະຫລິງ ລຳອຽງເພາະຢ້ານວ່າ "ລາພທີ່ສົງຊ໌ໃຫ້ແກ່ພິກສຸນັ້ນໄປຈະມີປໂຍດຫຍັງ ທ່ານໄດ້ໄປກໍຈະເອົາໄປຖິ້ມ ບໍ່ໃຊ້ສອຍໃນທາງທີ່ຊອບ"

໔. ພິກສຸວິກົລຈິຕ

໕. ພິກສຸຕິ້ນບັນຍັດ

ທັພພສິກຂາບົທທີ ໑໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໗. ສຫທັຣມິກວັຄ ໑໔. ປຣິນາມນສິກຂາບົທ ນິທານວັຕຖຸ

໗. ສຫທັຣມິກວັຄ

໑໔. ປຣິນາມນສິກຂາບົທ

ວ່າດ້ວຍການນ້ອມລາພທີ່ເປັນຂອງສົງຊ໌ໄປເພື່ອບຸຄຄົລ

ເຣື້ອງພຣະສັພພັຄຄີຍ໌

[໔໗໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ສມາຄົມນຶ່ງໃນກຸງສາວັຕຖີຕຽມພັຕຕາຫາຣພ້ອມຈີວອນໄວ້ຖວາຍສົງຊ໌ດ້ວຍຕັ້ງໃຈວ່າ "ພວກເຮົາຈັກນິມົນຕ໌ພິກສຸໃຫ້ສັນແລ້ວໃຫ້ຄອງຈີວອນ" ຕໍ່ມາ ພວກພິກສຸສັພພັຄຄີຍ໌ໄດ້ເຂົ້າໄປຫາສມາຄົມນັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ກ່າວກັບສມາຄົມນັ້ນດັ່ງນີ້ວ່າ "ທ່ານທັງຫລາຍ ພວກທ່ານໂປຣດຖວາຍຈີວອນແກ່ພິກສຸເຫລົ່ານີ້" ສມາຄົມນັ້ນກ່າວວ່າ "ທ່ານຜູ້ຈະເຣີນ ພວກເຮົາຈະບໍ່ຖວາຍ ພວກເຮົາຈັດພິກສາຫາຣພ້ອມກັບຈີວອນໄວ້ຖວາຍສົງຊ໌ເປັນປະຈຳທຸກປີ" ພວກພິກສຸສັພພັຄຄີຍ໌ກ່າວວ່າ "ທ່ານທັງຫລາຍ ທາຍົກຂອງສົງຊ໌ມີຫລາຍຄົນ ພັຕຕາຫາຣຂອງສົງຊ໌ກໍມີຈຳນວນຫລາຍ ພິກສຸເຫລົ່ານີ້ອາສັຍພວກທ່ານ ເຫັນແກ່ພວກທ່ານຈຶ່ງຢູ່ທີ່ນີ້ ຖ້າພວກທ່ານບໍ່ຖວາຍແກ່ພິກສຸເຫລົ່ານີ້ແລ້ວ ຄາວນີ້ ໃຜລະຈະຖວາຍແກ່ພິກສຸເຫລົ່ານີ້ ພວກທ່ານໂປຣດຖວາຍຈີວອນແກ່ພິກສຸເຫລົ່ານີ້ເຖີດ" ລຳດັບນັ້ນ ເມື່ອຖືກພວກພິກສຸສັພພັຄຄີຍ໌ລົ້າໄລ ສມາຄົມນັ້ນຈຶ່ງຖວາຍຈີວອນຕາມທີ່ຈັດໄວ້ແລ້ວແກ່ພວກພິກສຸສັພພັຄຄີຍ໌ແລ້ວປະເຄນສົງຊ໌ສະເພາະພັຕຕາຫາຣ ພວກພິກສຸທີ່ຊາບວ່າ "ສມາຄົມຈັດພັຕຕາຫາຣພ້ອມກັບຈີວອນໄວ້ຖວາຍສົງຊ໌" ແຕ່ບໍ່ຮູ້ວ່າ "ພວກ

ເຂົາຖວາຍພວກພິກສຸສັພພັຄຄີຍ໌ໄປແລ້ວ” ຈຶ່ງກ່າວຢ່າງນີ້ວ່າ “ທ່ານທັງຫລາຍ ພວກທ່ານຈົ່ງນ້ອມຖວາຍຈີວອນແກ່ສົງຊ໌ເຖີດ” ສມາຄົມນັ້ນກ່າວວ່າ “ທ່ານຜູ້ຈະເຣີນ ບໍ່ມີຈີວອນຕາມທີ່ເຄີຍຈັດໄວ້ພຣະຄຸນເຈົ້າ ສັພພັຄຄີຍ໌ນ້ອມໄປເພື່ອພຣະຄຸນເຈົ້າສັພພັຄຄີຍ໌ດ້ວຍກັນແລ້ວ” ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຮູ້ຢູ່ຈຶ່ງນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຊ໌ໄປເພື່ອບຸຄຄົລລະ” ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານຮູ້ຢູ່ ນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຊ໌ໄປເພື່ອບຸຄຄົລ ແມ່ນແທ້ບໍ” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ແມ່ນແທ້ພຣະພຸທທເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ “ຯລຯ ໂມຊບຸຣຸສທັງຫລາຍ ຈັ່ງໃດພວກທ່ານຮູ້ຢູ່ຈຶ່ງນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຊ໌ໄປເພື່ອບຸຄຄົລລະ ໂມຊບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔໙໐] ກໍ ພິກສຸໃດຮູ້ຢູ່ ນ້ອມລາພທີ່ເຂົານ້ອມໄວ້ເປັນຂອງຈະຖວາຍສົງຊ໌ໄປເພື່ອບຸຄຄົລ ຕ້ອງອາບັຕິປາຈິຕຕີຍ໌

ເອື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໔໙໑] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕັຣສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຮູ້ຢູ່ ຄື ພິກສຸຮູ້ເອງ ຄົນເຫລົ່າອື່ນບອກພິກສຸນັ້ນ ຫລືຄົນນັ້ນບອກ

ທີ່ຊື່ວ່າ ເປັນຂອງຈະຖວາຍສົງຊ໌ ໄດ້ແກ່ ເປັນຂອງທີ່ເຂົາຖວາຍຫລືບໍຣິຈາຄແລ້ວແກ່ສົງຊ໌

ທີ່ຊື່ວ່າ ລາພ ໄດ້ແກ່ ຈີວອນ ບິນທບາຕ ເສນາສນະ ແລະຄິລານປັຈຈັຍເພສັຊບໍຣິຂາຣ ໂດຍທີ່ສຸດ ຈົນເມື່ອກ້ອນຈຸຣນະ ໄມ້ສີຟັນ ຫລືດ້າຍຊາຍຜ້າ
ທີ່ຊື່ວ່າ ນ້ອມໄວ້ ຄື ເຂົາເປັ່ງວາຈາວ່າ "ເຮົາຈະຖວາຍ ຈະກະທຳ" ພິກສຸນ້ອມລາພນັ້ນໄປເພື່ອບຸຄຄົລ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

[໔໙໔] ລາພທີ່ເຂົານ້ອມໄວ້ແລ້ວ ພິກສຸສຳຄັນວ່າເຂົານ້ອມໄວ້ແລ້ວ ນ້ອມໄປເພື່ອບຸຄຄົລ ຕ້ອງອາບັຕິປາຈິຕຕີຍ໌
ລາພທີ່ເຂົານ້ອມໄວ້ແລ້ວ ພິກສຸບໍ່ແນ່ໃຈ ນ້ອມໄປເພື່ອບຸຄຄົລ ຕ້ອງອາບັຕິທຸກກຕ
ລາພທີ່ເຂົານ້ອມໄວ້ແລ້ວ ພິກສຸສຳຄັນວ່າເຂົາບໍ່ໄດ້ນ້ອມໄວ້ແລ້ວ ນ້ອມໄປເພື່ອບຸຄຄົລ ບໍ່ເປັນອາບັຕິ
ລາພທີ່ເຂົານ້ອມໄວ້ເພື່ອສົງຂ໌ ພິກສຸນ້ອມໄປເພື່ອສົງຂ໌ໝູ່ອື່ນຫລືເພື່ອເຈດີຍ໌ ຕ້ອງອາບັຕິທຸກກຕ
ລາພທີ່ເຂົານ້ອມໄວ້ເພື່ອເຈດີຍ໌ ພິກສຸນ້ອມໄປເພື່ອເຈດີຍ໌ອື່ນ ເພື່ອສົງຂ໌ ຫລືເພື່ອບຸຄຄົລ ຕ້ອງອາບັຕິທຸກກຕ
ລາພທີ່ເຂົານ້ອມໄວ້ເພື່ອບຸຄຄົລ ພິກສຸນ້ອມໄປເພື່ອບຸຄຄົລອື່ນ ເພື່ອສົງຂ໌ ຫລືເພື່ອເຈດີຍ໌ ຕ້ອງອາບັຕິທຸກກຕ
ລາພທີ່ເຂົາຍັງບໍ່ໄດ້ນ້ອມໄວ້ ພິກສຸສຳຄັນວ່າເຂົານ້ອມໄວ້ ຕ້ອງອາບັຕິທຸກກຕ
ລາພທີ່ເຂົາຍັງບໍ່ໄດ້ນ້ອມໄວ້ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ລາພທີ່ເຂົາຍັງບໍ່ໄດ້ນ້ອມໄວ້ ພິກສຸສຳຄັນວ່າເຂົາຍັງບໍ່ໄດ້ນ້ອມໄວ້ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ໙. ຣຕນວັຄ ຮວມສິກຂາບົທທີ່ມີໃນສຫທຣຣມິກວັຄ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໔໙໕] ໑. ພິກສຸຖືກທາຍົກຖາມວ່າ "ຈະຖວາຍທີ່ໃດ" ຈຶ່ງແນະນຳວ່າ "ໄທຍທັມຂອງພວກທ່ານເພິ່ງໄດ້ຮັບການໃຊ້ສອຍ ໄດ້ຮັບການປຕິສັງຂຣນ໌ ຫລືຢູ່ດົນໃນທີ່ໃດ ຫລືທ່ານມີຈິຕເຫລື້ອມໃສ

ໃນທີ່ໃດ ຈິ່ງຖວາຍໃນທີ່ນັ້ນເຖີດ”
໔. ພິກສຸວິກົລຈິດ
໕. ພິກສຸຕົ້ນບັນຍັດ

ປຣິນາມນສິກຂາບົທທີ ໑໔ ຈົບ
ສຫທຣມິກວັຄທີ ໗ ຈົບ

ຣວມສິກຂາບົທທີ່ມີໃນສຫທຣມິກວັຄ

ສຫທຣມິກວັຄມີ ໑໔ ສິກຂາບົທ ຄື

໑. ສຫທຣມິກສິກຂາບົທ ວ່າດ້ວຍການກ່າວຕັກເຕືອນຜູ້ຮ່ວມປະພຶດທັມໂດຍຊອບທັມ
໒. ວິເລຂນສິກຂາບົທ ວ່າດ້ວຍຄວາມຫຍຸ້ງຍາກແຫ່ງສິກຂາບົທ
໓. ໂມຫນສິກຂາບົທ ວ່າດ້ວຍການເຮັດໃຫ້ຜູ້ອື່ນຫລົງ
໔. ປຫາຣສິກຂາບົທ ວ່າດ້ວຍການທຳຮ້າຍເພື່ອນພິກສຸ
໕. ຕລສັຕຕິກສິກຂາບົທ ວ່າດ້ວຍການເງື້ອຫອກຄືຝ່າມືຂຶ້ນທຳທີວ່າຈະທຳຮ້າຍ
໖. ອມູລກສິກຂາບົທ ວ່າດ້ວຍການໃສ່ຄວາມດ້ວຍອາບັຕິສັງຂາທິເສສທີ່ບໍ່ມີມູລ
໗. ສັປຈິຈສິກຂາບົທ ວ່າດ້ວຍການຈົງໃຈກໍ່ຄວາມຣຳຄານ
໘. ອຸປັສສຸຕິສິກຂາບົທ ວ່າດ້ວຍການຈອບຟັງພິກສຸຜິດຖຽງກັນ
໙. ກັມມປຕິພາຫນສິກຂາບົທ ວ່າດ້ວຍການຄັດຄ້ານກັມທີ່ຖືກຕ້ອງ
໑໐. ສັນທອທັຕວາຄມນສິກຂາບົທ ວ່າດ້ວຍການບໍ່ໃຫ້ສັນທະແລ້ວໄປເສັຽ
໑໑. ທັພພສິກຂາບົທ ວ່າດ້ວຍການຖວາຍຈີວອນແກ່ພຣະທັພພມັລລບຸຕຣ
໑໒. ປຣິນາມນສິກຂາບົທ ວ່າດ້ວຍການນ້ອມລາພທີ່ເປັນຂອງສົງຂ໌ໄປເພື່ອບຸຄຄົລ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໑. ອັນເຕປຸຣສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

ໝວດວ່າດ້ວຍຣັຕນະ

໑. ອັນເຕປຸຣສິກຂາບົທ

ວ່າດ້ວຍການເຂົ້າເຂດພຣະຣາຊຖານຊັ້ນໃນ

ເຣື້ອງພຣະເຈົ້າປເສນທິໂກສົລ

[໔໙໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພຣະເຈົ້າປເສນທິໂກສົລຮັບສັ່ງກັບເຈົ້າຫນ້າທີ່ເຝົ້າພຣະຣາຊອຸທຍານວ່າ "ພນາຍ ທ່ານຈົ່ງໄປທຳຄວາມສະອາດອຸທຍານ ເຮົາຈັກໄປອຸທຍານ" ເຈົ້າຫນ້າທີ່ເຝົ້າພຣະຣາຊອຸທຍານຮັບສນອງພຣະຣາຊໂອງການແລ້ວຈຶ່ງໄປທຳຄວາມສະອາດພຣະຣາຊອຸທຍານ ໄດ້ເຫັນພຣະຜູ້ມີພຣະພາຄພຸທທເຈົ້າປະທັບນັ່ງຢູ່ ນະ ຄວງໄມ້ຕົ້ນນຶ່ງຄັນເຫັນແລ້ວຈຶ່ງເຂົ້າໄປເຝົ້າພຣະເຈົ້າປເສນທິໂກສົລເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຂາບທູລພຣະເຈົ້າປເສນທິໂກສົລດັ່ງນີ້ວ່າ "ຂໍເດຊະ ພຣະຣາຊອຸທຍານສະອາດແລ້ວ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະຣາຊອຸທຍານນັ້ນ ພຣະພຸທທເຈົ້າຂ້າ" ທ້າວທ່ານຮັບສັ່ງວ່າ "ຊ່າງເຖີດ ພນາຍ ພວກເຮົາຈະໄປເຝົ້າພຣະຜູ້ມີພຣະພາຄ" ຄັນແລ້ວພຣະເຈົ້າປເສນທິໂກສົລໄດ້ສເດັຈໄປພຣະຣາຊອຸທຍານແລ້ວສເດັຈເຂົ້າໄປທາງທີ່ພຣະຜູ້ມີພຣະພາຄປະທັບຢູ່

ຂນະນັ້ນ ອຸບາສົກຄົນນຶ່ງນັ່ງເຝົ້າຢູ່ໃກ້ພຣະຜູ້ມີພຣະພາຄ ພຣະເຈົ້າປເສນທິໂກສົລໄດ້ທອດພຣະເນຕຣເຫັນອຸບາສົກຜູ້ນັ່ງເຝົ້າຢູ່ໃກ້ພຣະຜູ້ມີພຣະພາຄ ຄັນທອດພຣະເນຕຣເຫັນແລ້ວໄດ້ປະທັບຢືນຕົກພຣະທັຍ ເທື່ອນັ້ນ ພຣະເຈົ້າປເສນທິໂກສົລໄດ້ຊົງມີພຣະດຳຣິດັ່ງນີ້ວ່າ "ຊາຍຄົນນີ້ຄົງບໍ່ແມ່ນຄົນຊົ່ວ ເຂົາເຖິງໄດ້ເຂົ້າເຝົ້າພຣະຜູ້ມີພຣະພາຄຢູ່ໃກ້ໆໄດ້" ຈຶ່ງສເດັຈເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້ມີພຣະພາຄແລ້ວປະທັບນັ່ງ ນະ ທີ່ສົມຄວນ ຂນະນັ້ນອຸບາສົກນັ້ນບໍ່ຖວາຍບັງຄົມ ບໍ່ລຸກຮັບສເດັຈພຣະເຈົ້າປເສນທິໂກສົລ ເພາະມີຄວາມເຄົາຣົພຕໍ່ພຣະຜູ້ມີພຣະພາຄ ລຳດັບນັ້ນ ພຣະເຈົ້າປເສນທິໂກສົລບໍ່ຊົງພໍພຣະທັຍວ່າ "ຈັ່ງໃດຊາຍຄົນນີ້ເມື່ອເຮົາມາເຖິງຈຶ່ງບໍ່ຖວາຍບັງຄົມ ບໍ່ຕ້ອນຮັບລະ" ພຣະຜູ້ມີພຣະພາຄຊົງຊາບວ່າພຣະເຈົ້າປເສນທິໂກສົລບໍ່ຊົງພໍພຣະທັຍ ຈຶ່ງໄດ້ຕຣັສກັບພຣະເຈົ້າປເສນທິໂກສົລດັ່ງນີ້ວ່າ "ມຫາບພິຕຣ ອຸບາສົກຄົນນີ້ເປັນພຫູສູຕ ຈຳສິ່ງທີ່ໄດ້ຮ່ຳຮຽນມາໄດ້ ປາສຈາກຄວາມກຳຫນັດໃນກາມທັງຫລາຍ" ຂນະນັ້ນ ພຣະເຈົ້າປເສນທິໂກສົລໄດ້ຊົງພຣະດຳຣິດັ່ງນີ້ວ່າ "ອຸບາສົກນີ້ບໍ່ແມ່ນຄົນຕ່ຳຕ້ອຍ ແມ່ນພຣະຜູ້ມີພຣະພາຄຍັງຕຣັສພັນນາຄຸນຂອງອຸບາສົກນີ້" ຈຶ່ງໄດ້ຮັບສັ່ງກັບອຸບາສົກນັ້ນດັ່ງນີ້ວ່າ "ອຸບາສົກ ທ່ານເວົ້າສິ່ງທີ່ຈະກໍ່ໃຫ້ເກີດປໂຍດເຖີດ" ອຸບາສົກຂາບທູລວ່າ "ເປັນພຣະມຫາກຣຸນາທິຄຸນຢ່າງລົ້ນກະມ່ອມ ໆ ພຣະພຸທທເຈົ້າຂ້າ" ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພຣະເຈົ້າປເສນທິໂກສົລເຫັນ

ແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນ ເບີກບານດ້ວຍທັມມີກຖາ ລຳດັບນັ້ນ ພຣະເຈົ້າປເສນທິໂກສົລຜູ້ຊຶ່ງພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນ ເບີກບານດ້ວຍທັມມີກຖາແລ້ວ ຈຶ່ງສເດັຈລຸກຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄ ທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວສເດັຈໄປ

[໔໙໕] ຄັ້ງນັ້ນ ພຣະເຈົ້າປເສນທິໂກສົລປະທັບຢູ່ເທິງປຣາສາທຊັ້ນເທິງ ໄດ້ທອດພຣະເນຕຣເຫັນອຸບາສິກນັ້ນຍ່າງກັ້ນຮົ່ມໄປຕາມຖນົນ ຄັນເຫັນແລ້ວຈຶ່ງຮັບສັ່ງໃຫ້ເຊີນມາເຝົ້າ ແລ້ວໄດ້ຕຣັສກັບອຸບາສິກນັ້ນດັ່ງນີ້ວ່າ “ອຸບາສິກ ຊາບວ່າ ທ່ານເປັນພຫູສູຕ ຈຳສິ່ງທີ່ໄດ້ຮ່ຳຮຽນມາໄດ້ ອຸບາສິກ ທ່ານຊ່ວຍສອນທັມໃນຕຳຫນັກຂອງເຮົາດ້ວຍເຖີດ” ອຸບາສິກຂາບທູລວ່າ “ຂໍເດຊະ ຂ້າພຣະພຸທທເຈົ້າຮູ້ທັມຈາກພຣະຄຸນເຈົ້າທັງຫລາຍ ພຣະຄຸນເຈົ້າທັງຫລາຍເທົ່ານັ້ນຈັກສອນທັມພຣະສນົມຂອງພຣະອົງຄ໌ໄດ້” ລຳດັບນັ້ນ ພຣະເຈົ້າປເສນທິໂກສົລຈຶ່ງຮັບສັ່ງວ່າ “ອຸບາສິກກ່າວຈິງ” ຈຶ່ງເຂົ້າໄປເຝົ້າ
ພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທແລ້ວປະທັບນັ່ງ ນະ ທີ່ສົມຄວຣ ພຣະເຈົ້າປເສນທິໂກສົລຜູ້ປະທັບນັ່ງ ນະ ທີ່ສົມຄວຣ ໄດ້ຂາບທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ “ຂໍປະທານວໂຣກາສເຖີດ ພຣະພຸທທເຈົ້າຂ້າ ຂໍພຣະອົງຄ໌ຊົງພຣະກຣຸນາໂປຣດໃຫ້ພິກສຸຮູບນຶ່ງໄປສອນທັມໃນຕຳຫນັກນາງສນົມຂອງຂະນ້ອຍ” ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ພຣະເຈົ້າປເສນທິໂກສົລເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານ ດ້ວຍທັມມີກຖາ ລຳດັບນັ້ນ ພຣະເຈົ້າປເສນທິໂກສົລຜູ້ຊຶ່ງພຣະຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວ ຈຶ່ງສເດັຈລຸກຈາກອາສນະ ຖວາຍອພິວາທພຣະຜູ້ມີພຣະພາຄ ທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວສເດັຈໄປ ຊົງແຕ່ງຕັ້ງພຣະອານົນທ໌ເປັນຄຣູສອນທັມ ຕໍ່ມາ ພຣະຜູ້ມີພຣະພາຄຮັບສັ່ງກັບທ່ານພຣະອານົນທ໌ວ່າ “ອານົນທ໌ ທ່ານຈົ່ງໄປສອນທັມໃນຕຳຫນັກພຣະສນົມຂອງພຣະຣາຊາ” ທ່ານພຣະອານົນທ໌ທູລຮັບສນອງພຣະພຸທທດຳຣັສ ໄດ້ເຂົ້າໄປສອນທັມ ນະ ຕຳຫນັກພຣະສນົມຕາມກາລອັນຄວຣ ຄັ້ງນັ້ນ ໃນເວລາເຊົ້າ ທ່ານພຣະອານົນທ໌ຄອງອັນຕຣວາສກ ຖືບາຕຣແລະຈີວອນເຂົ້າໄປເຖິງພຣະຣາຊນິເວສນ໌

[໔໙໒] ຄັ້ງນັ້ນ ພຣະເຈົ້າປເສນທິໂກສົລປະທັບຢູ່ໃນຫ້ອງບັນທົມກັບພຣະນາງມັລລິກາເທວີ ພຣະນາງມັລລິກາເທວີໄດ້ທອດພຣະເນຕຣເຫັນທ່ານພຣະອານົນທ໌ມາແຕ່ໄກ ຄັນທອດພຣະເນຕຣເຫັນແລ້ວຈຶ່ງຮີບລຸກຂຶ້ນ ພຣະພູສາຊົງກັງງສີເຫລືອງຈຶ່ງເລື່ອນຫລຸດ ເທື່ອນັ້ນ ທ່ານພຣະອານົນທ໌ຈຶ່ງກັບແຕ່ໄກ ໄປເຖິງອາຣາມແລ້ວຈຶ່ງແຈ້ງເຣື່ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕໍາຫນິ ປະນາມ ໂພນທະນາວ່າ "ຈັ່ງໃດທ່ານພຣະອານົນທ໌ບໍ່ໄດ້ຮັບແຈ້ງລ່ວງຫນ້າຈຶ່ງເຂົ້າໄປພຣະຣາຊຖານຊັ້ນໃນລະ" ຄັນພິກສຸທັງຫລາຍຕໍາຫນິທ່ານພຣະອານົນທ໌ໂດຍປະກາຣຕ່າງໆ ແລ້ວຈຶ່ງນໍາເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໑. ອັນເຕປຸຣສິກຂາບົທ ນິທານວັຕຖຸ

ຊົງສອບຖາມ

ລໍາດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານພຣະອານົນທ໌ວ່າ "ອານົນທ໌ ຊາບວ່າ ທ່ານບໍ່ໄດ້ຮັບແຈ້ງລ່ວງຫນ້າ ເຂົ້າໄປພຣະຣາຊຖານຊັ້ນໃນແມ່ນແທ້ບໍ" ທ່ານພຣະອານົນທ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ອານົນທ໌ ຈັ່ງໃດທ່ານຍັງບໍ່ໄດ້ຮັບແຈ້ງລ່ວງຫນ້າ ຈຶ່ງເຂົ້າໄປພຣະຣາຊ ຖານ ຊັ້ນໃນລະ ອານົນທ໌ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕໍາຫນິແລ້ວຈຶ່ງສະແດງທັມມີກຖາແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ

ກາຣເຂົ້າເຂຕພຣະຣາຊຖານຊັ້ນໃນມີໂທສ ໑໐ ຢ່າງ

[໔໙໗] "ພິກສຸທັງຫລາຍ ໃນກາຣເຂົ້າໄປຍັງພຣະຣາຊຖານຊັ້ນໃນ ມີໂທສ ໑໐ ຢ່າງນີ້ ຄື

(໑) ພິກສຸທັງຫລາຍ ພຣະຣາຊາປະທັບຢູ່ກັບພຣະມເຫສີໃນພຣະຣາຊຖານຊັ້ນໃນນີ້ ພິກສຸເຂົ້າໄປໃນພຣະຣາຊຖານຊັ້ນໃນນັ້ນ ພຣະມເຫສີເຫັນພິກສຸແລ້ວຊົງຍິ້ມໃຫ້ ຫລືພິກສຸເຫັນພຣະມເຫສີແລ້ວຍິ້ມໃຫ້ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດໍາຣິຢ່າງນີ້ວ່າ "ຄົນທັງ ໔ ນີ້ໄດ້ທໍາຫຍັງກັນແລ້ວ ຫລືຈະເຮັດຫຍັງກັນແນ່ນອນ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໑ ໃນກາຣເຂົ້າໄປຍັງພຣະຣາຊຖານ ຊັ້ນໃນ

(໔) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຊົງມີພຣະຣາຊກິຈມາກ ມີພຣະກໍຣະນີຍກິຈມາກ ສເດັຈໄປຫາພຣະສນົມຄົນນຶ່ງແລ້ວຊົງລືມ ພຣະສນົມນັ້ນຕັ້ງຄັນພ໌ເພາະການທີ່ພຣະຣາຊາສເດັຈໄປຫານັ້ນ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າມາໄດ້ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໔ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໓) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ຂອງມີຄ່າຢ່າງໃດຢ່າງນຶ່ງ ໃນພຣະຣາຊຖານຊັ້ນໃນ ສູນຫາຍໄປ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າມາໄດ້ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໓ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໔) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ເມື່ອຄວາມລັບທາງຣາຊການທີ່ປຶກສາໃນພຣະຣາຊຖານຊັ້ນໃນຮົ່ວໄຫລອອກໄປພາຍນອກ ໃນຂໍ້ນັ້ນພຣະຣາຊາຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າມາໄດ້ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໔ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໕) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ໃນພຣະຣາຊຖານຊັ້ນໃນ ພຣະຣາຊໂອຣົສປຣາຖນາ(ທີ່ຈະປົງພຣະຊົນມ໌)ພຣະຣາຊບິດາ໑ ຫລືພຣະຣາຊບິດາປຣາຖນາ(ທີ່ຈະປົງພຣະຊົນມ໌)ພຣະຣາຊໂອຣົສ ທັງ ໔ ພຣະອົງຄ໌ຈະຊົງພຣະດຳຣິຢ່າງນີ້ວ່າ "ໃນທີ່ນີ້ ນອກຈາກບັພຊິຕ ບໍ່ມີໃຜອື່ນເຂົ້າມາໄດ້ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໕ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໖) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຊົງເລື່ອນຂ້າຣາຊການຕຳແຫນ່ງຕ່ຳຂຶ້ນຕຳແຫນ່ງສູງ ພວກທີ່ບໍ່ພໍໃຈເຣື່ອງນີ້ຈະມີຄວາມຄິດຢ່າງນີ້ວ່າ "ພຣະຣາຊາຊົງເກືອກກົ້ວຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໖ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(໗) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຊົງລົດຕຳແຫນ່ງຂ້າຣາຊການທີ່ຢູ່ໃນຕຳແຫນ່ງສູງລົງຕຳແຫນ່ງຕ່ຳ ພວກທີ່ບໍ່ພໍໃຈເຣື່ອງນີ້ຈະມີຄວາມຄິດຢ່າງນີ້ວ່າ "ພຣະຣາຊາຊົງເກືອກກົ້ວຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໗ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ

(ຌ) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຮັບສັ່ງໃຫ້ຍົກກອງທັພໄປໃນເວລາບໍ່ຄວຣ ພວກທີ່ບໍ່ພໍໃຈເຣື້ອງນີ້ຈະມີຄວາມຄິດຢ່າງນີ້ວ່າ "ພຣະຣາຊາຊົງເກືອກກໍ້ອຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ຌ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ
(ຝ) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊາຮັບສັ່ງໃຫ້ຍົກກອງທັພໄປໃນເວລາອັນຄວຣແລ້ວຮັບສັ່ງໃຫ້ຍົກທັພກັບເສັຽໃນຣະຫວ່າງທາງ ພວກທີ່ບໍ່ພໍໃຈເຣື້ອງນີ້ຈະມີຄວາມຄິດ

ເຊີງອັນຖະ :

໑ ປຣາຖນາພຣະຣາຊບິດາ ອັນຖະກຖາອທິບາຍວ່າ ປິຕຣໍ ປຕິເຖຕິຕິ ອນຸຕຣໍ ປສຸສິຕຸວາ ຂູາເຕຕຸໍ ອິຈຸສຕິ ແປວ່າ ຕ້ອງການຫາຊ່ອງທາງປົງພຣະຊົນມ໌ພຣະຣາຊບິດາ (ວິ. ອ. ໒/໔ຝຌ/໔໓໔)

ຢ່າງນີ້ວ່າ "ພຣະຣາຊາຊົງເກືອກກໍ້ອຢູ່ກັບບັພຊິຕ ຄົງຈະເປັນການກະທຳຂອງບັພຊິຕ" ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ຝ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ
(໑໐) ພິກສຸທັງຫລາຍ ຂໍ້ອື່ນຍັງມີອີກ ພຣະຣາຊຖານຊັ້ນໃນເປັນສຖານທີ່ຄັບຄັ່ງດ້ວຍຊ້າງ ເປັນສຖານທີ່ຄັບຄັ່ງດ້ວຍມ້າ ເປັນສຖານທີ່ຄັບຄັ່ງດ້ວຍຣົຖ ເປັນສຖານທີ່ມີຣູບ ສຽງ ກິ່ນ ຣົສ ໂຜຕຖັພພະ ທີ່ເປັນເຫຕຸແຫ່ງຄວາມກຳຫນັດ ບໍ່ເຫມາະແກ່ບັພຊິຕ ພິກສຸທັງຫລາຍ ນີ້ເປັນໂທສຂໍ້ທີ ໑໐ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ
ພິກສຸທັງຫລາຍ ໃນການເຂົ້າໄປຍັງພຣະຣາຊຖານຊັ້ນໃນ ມີໂທສ ໑໐ ຢ່າງນີ້ແລ"

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ຄັ້ງນັ້ນ ຄັນພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິທ່ານພຣະອານົນທ໌ໂດຍປະການຕ່າງໆແລ້ວຕຣັສໂທສແຫ່ງຄວາມເປັນຜູ້ລ້ຽງຍາກ ຄວາມເປັນຜູ້ບຳຣຸງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໔ຝຌ] ກໍ ພິກສຸໃດບໍ່ໄດ້ຮັບແຈ້ງລ່ວງຫນ້າ ກ້າວລ່ວງທໍຣນີປະຕູເຂົ້າໄປໃນຕຳຫນັກທີ່ບັນທົມຂອງພຣະຣາຊາຜູ້ເປັນກສັຕຣິຍ໌ທີ່ໄດ້ຮັບມູຣທາພິເສກແລ້ວ ທີ່ພຣະຣາຊາຍັງບໍ່ສເດັຈອອກ ທີ່ນາງຣັຕນະຍັງບໍ່ສເດັຈອອກ ຕ້ອງອາບັຕິປາຈິຕຕີຍ໌

ເຣື້ອງພຣະເຈົ້າປເສນທິໂກສົລ ຈົບ

ສິກຂາບົທວິພັງຄ໌

[໔໙໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ກສັຕຣິຍ໌ ຄື ໄດ້ແກ່ ກສັຕຣິຍ໌ຜູ້ປຣະສູຕິມາດີທັງຝ່າຍພຣະມາຣດາແລະພຣະບິດາ ຊົງຖືກຳເນີດບໍຣິສຸດທ໌ຕລອດເຈັດຊົ່ວບັນພະບຸຣຸສ ບໍ່ມີໃຜຕຳຫນິຊາຕິກຳເນີດໄດ້

ທີ່ຊື່ວ່າ ໄດ້ຮັບມູຣທາພິເສກແລ້ວ ຄື ຜູ້ໄດ້ຮັບອພິເສກໂດຍກາຣອພິເສກເປັນກສັຕຣິຍ໌

ຄຳວ່າ ທີ່ພຣະຣາຊາຍັງບໍ່ໄດ້ສເດັຈອອກ ຄື ພຣະຣາຊາຍັງບໍ່ສເດັຈອອກຈາກຕຳຫນັກທີ່ບັນທົມ

ຄຳວ່າ ທີ່ນາງຣັຕນະຍັງບໍ່ສເດັຈອອກ ຄື ພຣະມເຫສີຍັງບໍ່ສເດັຈອອກຈາກຕຳຫນັກ ທີ່ບັນທົມ ຫລືທັງ ໒ ພຣະອົງຄ໌ຍັງບໍ່ສເດັຈອອກ

ຄຳວ່າ ບໍ່ໄດ້ຮັບແຈ້ງລ່ວງຫນ້າ ຄື ບໍ່ໄດ້ຮຽກມາລ່ວງຫນ້າ

ທີ່ຊື່ວ່າ ທໍຣນີປະຕູ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງທໍຣນີປະຕູຕຳຫນັກທີ່ບັນທົມ

ທີ່ຊື່ວ່າ ຕຳຫນັກທີ່ບັນທົມ ໄດ້ແກ່ ທີ່ບັນທົມຂອງພຣະຣາຊາຊຶ່ງເຈົ້າພນັກງານຈັດໄວ້ໃນທີ່ໃດທີ່ນຶ່ງໂດຍທີ່ສຸດແມ່ນວງດ້ວຍພຣະວິສູຕຣ

ຄຳວ່າ ກ້າວລ່ວງທໍຣນີປະຕູເຂົ້າໄປ ຄື ພິກສຸຍົກຕີນແຣກກ້າວຂ້າມທໍຣນີປະຕູເຂົ້າໄປ ຕ້ອງອາບັຕິທຸກກຕ ຍົກຕີນທີ ໒ ກ້າວຂ້າມທໍຣນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕີຍ໌

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໕໐໐] ຍັງບໍ່ໄດ້ຮັບແຈ້ງ ພິກສຸສຳຄັນວ່າຍັງບໍ່ໄດ້ຮັບແຈ້ງ ກ້າວລ່ວງທໍຣນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕີຍ໌

ຍັງບໍ່ໄດ້ຮັບແຈ້ງ ພິກສຸບໍ່ແນ່ໃຈ ກ້າວລ່ວງທໍຣນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕີຍ໌

ຍັງບໍ່ໄດ້ຮັບແຈ້ງ ພິກສຸສຳຄັນວ່າໄດ້ຮັບແຈ້ງແລ້ວ ກ້າວລ່ວງທໍຣນີປະຕູເຂົ້າໄປ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ໄດ້ຮັບແຈ້ງແລ້ວ ພິກສຸສຳຄັນວ່າຍັງບໍ່ໄດ້ຮັບແຈ້ງ ຕ້ອງອາບັຕິທຸກກຕ

ໄດ້ຮັບແຈ້ງແລ້ວ ພິກສຸສຳຄັນວ່າຍັງບໍ່ໄດ້ຮັບແຈ້ງ ຕ້ອງອາບັຕິທຸກກຕ
ໄດ້ຮັບແຈ້ງແລ້ວ ພິກສຸສຳຄັນວ່າໄດ້ຮັບແຈ້ງແລ້ວ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໑] ໑. ພິກສຸຜູ້ໄດ້ຮັບແຈ້ງແລ້ວ

໒. ພິກສຸເຂົ້າໄປໃນທີ່ທີ່ຜູ້ຢູ່ບໍ່ໄດ້ເປັນກສັຕຣິຍ໌

໓. ພິກສຸເຂົ້າໄປໃນທີ່ທີ່ຜູ້ຢູ່ຍັງບໍ່ໄດ້ຮັບອພິເສກເປັນກສັຕຣິຍ໌

໔. ພິກສຸເຂົ້າໄປໃນທີ່ທີ່ພຣະຣາຊາສເດັຈອອກຈາກຕຳຫນັກທີ່ບັນທົມ

໕. ພິກສຸເຂົ້າໄປໃນທີ່ທີ່ພຣະມເຫສີສເດັຈອອກຈາກຕຳຫນັກທີ່ບັນທົມ

໖. ພິກສຸເຂົ້າໄປໃນທີ່ທີ່ທັງ ໒ ພຣະອົງຄ໌ສເດັຈອອກຈາກຕຳຫນັກທີ່ບັນທົມ

໗. ພິກສຸເຂົ້າໄປໃນທີ່ທີ່ບໍ່ແມ່ນຕຳຫນັກທີ່ບັນທົມ

໘. ພິກສຸວິກົລຈິຕ

໙. ພິກສຸຕົ້ນບັນຍັດ

ອັນເຕປຸຣສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໒. ຣຕນສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໒. ຣຕນສິກຂາບົທ

ວ່າດ້ວຍການເກັບຣັຕນະທີ່ເຈົ້າຂອງລືມໄວ້

ເຣື່ອງພຣະຮູບນຶ່ງ

[໕໐໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸຮູບນຶ່ງສົງນ້ຳໃນແມ່ນ້ຳ ອຈິຣວດີ ພຣາມນ໌ຄົນນຶ່ງ ວາງຖົງຊັພຍ໌ ໕໐໐ ກຫາປນະໄວ້ເທິງບົກແລ້ວລົງອາບນ້ຳໃນແມ່ນ້ຳອຈິຣວດີ ແລ້ວລືມຖົງຊັພຍ໌ໄດ້ ໄປແລ້ວ ເທື່ອນັ້ນ ພິກສຸນັ້ນໄດ້ເກັບໄວ້ດ້ວຍຄິດວ່າ “ຖົງຊັພຍ໌ຂອງພຣາມນ໌ນີ້ຢ່າສູນຫາຍໄປ”

ຝ່າຍພຣາມນ໌ພໍພົ້ນກຂື້ນໄດ້ກໍຮີບແລ່ນມາເຖິງແລ້ວ ໄດ້ກ່າວກັບພິກສຸນັ້ນດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ທ່ານເຫັນຖົງຊັພຍ໌ຂອງຜູ້ຂ້າແດ່ບໍ" ພິກສຸນັ້ນໄດ້ຄືນໃຫ້ພ້ອມກ່າວວ່າ "ເຊີນທ່ານຮັບໄປເຖີດ ພຣາມນ໌" ຄັ້ງນັ້ນ ພຣາມນ໌ນັ້ນໄດ້ເກີດຄວາມຄິດດັ່ງນີ້ວ່າ "ດ້ວຍອຸບາຍຢ່າງໃດ ເຮົາຈຶ່ງບໍ່ຕ້ອງໃຫ້ຄ່າໄຖ່ແກ່ພິກສຸນີ້" ຈຶ່ງຍຶດຕົວແລ້ວກ່າວວ່າ "ທ່ານ ຊັພຍ໌ຂອງຜູ້ຂ້າບໍ່ແມ່ນ ໕໐໐ ກຫາປນະ ແຕ່ມີ ໑,໐໐໐ ກຫາປນະຕ່າງຫາກ" ແລ້ວຈາກໄປ ຄັນພິກສຸນັ້ນໄປເຖິງອາຮາມແລ້ວຈຶ່ງບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງເກັບຣັຕນະໄວ້ລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າ ທ່ານເກັບຣັຕນະໄວ້ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສ ຈັ່ງໃດທ່ານຈຶ່ງເກັບຣັຕນະໄວ້ລະ ໂມຄບຸຣຸສ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສ ໃຫ້ເຫລື້ອມໃສຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂື້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ພຣະບັນຍັດ

ກໍພິກສຸໃດ ເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ຕ້ອງອາບັຕິປາຈິຕຕິຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະຮູບນຶ່ງ ຈົບ

ເຣື້ອງນາງວິສາຂາ

[໕໐໖] ຄັ້ງນັ້ນ ໃນກຸງສາວັຕຖີ ມີມຫໍຣສົພ ປະຊາຊົນແຕ່ງຕົວໄປທຽວອຸທຍານ ແມ່ນນາງວິສາຂາມິຄາຣມາຕາກໍແຕ່ງຕົວອອກຈາກບ້ານຈະໄປທ່ຽວຊົມອຸທຍານ ແຕ່ຄິດວ່າ "ເຮົາຈະໄປທຽວອຸທຍານເຮັດຫຍັງ ໄປເຝົ້າພຣະຜູ້ມີພຣະພາຄດີກວ່າ" ແລ້ວເປື້ອງເຄື່ອງປະດັບອອກ ເອົາຜ້າຫົ່ມຫໍ່ ໄວ້ມອບໃຫ້ສາວໃຊ້ດ້ວຍກ່າວວ່າ "ແມ່ສາວໃຊ້ ທ່ານຖືຫໍ່ ເຄື່ອງປະດັບນີ້ໄວ້" ຄັນແລ້ວນາງວິສາຂາມິຄາຣມາຕາກໍໄດ້ເຂົ້າໄປເຝົ້າພຣະຜູ້ມີພຣະພາຄເຖິງທີ່ປະທັບ ຄັນເຖິງແລ້ວໄດ້ຖວາຍອພິວາທພຣະຜູ້

ມີພຣະພາຄ ແລ້ວນັ່ງ ນະ ທີ່ສົມຄວຣ ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງຊີ້ແຈງນາງວິສາຂາມິຄາຣມາຕາ ຜູ້ນັ່ງ ນະ ທີ່ສົມຄວຣໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາ ລຳດັບນັ້ນ ນາງວິສາຂາມິຄາຣມາຕາຜູ້ຊຶ່ງພຣະ ຜູ້ມີພຣະພາຄຊົງຊີ້ແຈງໃຫ້ເຫັນແຈ້ງ ຊວນໃຫ້ຢາກຮັບເອົາໄປປະຕິບັດ ປຸກໃຈໃຫ້ອາຈຫານ ເກັ່ງກ້າ ປອບປະໂລມໃຈໃຫ້ສົດຊື່ນເບີກບານດ້ວຍທັມມີກຖາແລ້ວ ຈຶ່ງລຸກຈາກອາສນະ ຖວາຍ ອພິວາທພຣະຜູ້ມີພຣະພາຄ ທຳປຣະທັກສິນ(ວຽນໄປທາງຂວາ)ແລ້ວຈາກໄປ ຝ່າຍສາວໃຊ້ນັ້ນລືມຫໍ່ ເຄື່ອງປະດັບນັ້ນໄດ້ກັບໄປແລ້ວ ພິກສຸທັງຫລາຍພົບເຂົ້າ ຈຶ່ງນຳເຣື່ອງນີ້ໄປຊາບທູລພຣະຜູ້ມີພຣະ ພາຄໃຫ້ຊົງຊາບ ພຣະອົງຄ໌ຮັບສັ່ງວ່າ "ພິກສຸທັງຫລາຍ ຖ້າເຊັ່ນນັ້ນ ທ່ານທັງຫລາຍຈົ່ງຍົກໄປ ເກັບຮັກສາໄວ້ເຖີດ"

ຊົງອນຸຍາຕໃຫ້ເກັບຣັຕນະໄດ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸ ທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເກັບ ຫລືໃຊ້ໃຫ້ເກັບຣັຕນະ ຫລືຂອງທີ່ສົມມຸດ ວ່າເປັນຣັຕນະໃນວັດທີ່ຢູ່ແລ້ວຮັກສາໄວ້ດ້ວຍຕັ້ງໃຈວ່າ 'ເຈົ້າຂອງຈະຮັບຄືນໄປ" ແລ້ວຈຶ່ງຮັບສັ່ງ ໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດເກັບ ຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ຕ້ອງອາບັຕິ ປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນອາຣາມ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງນາງວິສາຂາ ຈົບ

ເຣື່ອງຄົນຮັບໃຊ້ຂອງອນາຖບິນທິກເສດຖີ

[໕໐໔] ສມັຍນັ້ນ ອນາຖບິນທິກຄຫບໍດີມີບ້ານພັກຄົນງານຢູ່ໃນແຄວ້ນກາສີ ຄຫບໍດີນັ້ນສັ່ງບຸຣຸສຄົນ ຮັບໃຊ້ໄວ້ວ່າ "ຖ້າພຣະຄຸນເຈົ້າທັງຫລາຍມາເຖິງ ທ່ານເພິງຈັດຕຽມພັຕຕາຫາຣ" ຄັນຕໍ່ມາ ພິກສຸ ຫລາຍຮູບທ່ຽວຈາຣິກໄປໃນແຄວ້ນກາສີ ຜ່ານໄປເຖິງບ້ານພັກຄົນງານຂອງທ່ານອນາຖບິນ ທິກຄຫບໍດີນັ້ນ ບຸຣຸສນັ້ນແລເຫັນພິກສຸທັງຫລາຍຍ່າງມາແຕ່ໄກ ຄັນເຫັນແລ້ວຈຶ່ງເຂົ້າໄປຫາພິກສຸ ເຫລົ່ານັ້ນເຖິງທີ່ຢູ່ ຄັນເຖິງແລ້ວໄດ້ຂາບອາຣາທນາດັ່ງນີ້ວ່າ "ພຣະຄຸນເຈົ້າຜູ້ຈະເຣີນທັງຫລາຍ ພຣະ

ຄຸນເຈົ້າທັງຫລາຍໄປຮດຮັບນິມົນຕ໌ເພື່ອສັນພັດຕາຫານຂອງຄຫບໍດີໃນມື້ອື່ນນີ້" ພິກສຸເຫລົ່ານັ້ນຮັບນິມົນຕ໌ໂດຍດຸສນີພາພ ຄັນລ່ວງ ຣາຕຣີນັ້ນທັງຣາຕຣີ ບຸຣຸສນັ້ນສັ່ງໃຫ້ຈັດຕຽມຂອງຄ້ຽວຂອງສັນອັນປານີຕ ແລ້ວສົ່ງຄົນໄປບອກເວລາ ຖອດແຫວນວາງໄວ້ ເອົາພັດຕາຫານປະເຄນພິກສຸເຫລົ່ານັ້ນ ພ້ອມທັງກ່າວວ່າ "ນິມົນຕ໌ພຣະຄຸນເຈົ້າທັງຫລາຍສັນແລ້ວຄ່ອຍກັບ ຜູ້ຂ້າຈະໄປເຮັດວຽກ" ລືມແຫວນໄວ້ໄປແລ້ວ ພິກສຸທັງຫລາຍພົບເຂົ້າຈຶ່ງກ່າວວ່າ "ຖ້າພວກເຮົາໄປ ແຫວນນີ້ຈະເສັຽໄປ" ຈຶ່ງຢູ່ໃນທີ່ນັ້ນເອງ ຄັນບຸຣຸສນັ້ນກັບມາຈາກເຮັດວຽກເຫັນພິກສຸເຫລົ່ານັ້ນ ຈຶ່ງໄດ້ກ່າວດັ່ງນີ້ວ່າ "ພຣະຄຸນເຈົ້າຜູ້ຈະເຣີນທັງຫລາຍ ເຫຕຸໃດພຣະຄຸນເຈົ້າທັງຫລາຍຈຶ່ງຍັງຢູ່ໃນທີ່ນີ້ລະ" ຄັນແລ້ວພິກສຸເຫລົ່ານັ້ນຈຶ່ງເລົ່າເຣື້ອງນັ້ນໃຫ້ບຸຣຸສນັ້ນຊາບ ຄັນໄປເຖິງກຸງສາວັຕຖີແລ້ວຈຶ່ງໄດ້ບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະໃນອາຣາມຫລືໃນທີ່ພັກແລ້ວຮັກສາໄວ້ດ້ວຍຕັ້ງໃຈວ່າ 'ເຈົ້າຂອງຈະຮັບຄືນໄປ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໐໕] ອີກຢ່າງນຶ່ງ ພິກສຸໃດເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ໃນອາຣາມຫລືໃນທີ່ພັກ ອີກຢ່າງນຶ່ງ ພິກສຸເພິງເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະໃນອາຣາມຫລືໃນທີ່ພັກແລ້ວຮັກສາໄວ້ດ້ວຍຕັ້ງໃຈວ່າ 'ເຈົ້າຂອງຈະຮັບຄືນໄປ' ນີ້ເປັນກາຣທຳທີ່ສົມຄວຣໃນເຣື້ອງນັ້ນ

ເຣື້ອງຄົນຮັບໃຊ້ຂອງອນາຖບິນທິກເສດຖີ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໗. ຣຕນວັຄ ໒. ຣຕນສິກຂາບົທ ສິກຂາບົທວິພັງຄ໌

ສິກຂາບົທວິພັງຄ໌

[໕໐໖] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຣັຕນະ ໄດ້ແກ່ ແກ້ວມຸກດາ ແກ້ວມະນີ ໄພທູຣຍ໌ ສັງຂ໌ ສີລາ ປຣະພາລເງິນ ທອງ ທັບທິມ ແກ້ວຕາແມວ ນີ້ຊື່ວ່າຣັຕນະ

ທີ່ຊື່ວ່າ ຂອງທີ່ສົມມຸດວ່າເປັນຣັຕນະ ໄດ້ແກ່ ເຄື່ອງອຸປໂພຄບໍຣິໂພຄຂອງມນຸສຍ໌ ນີ້ຊື່ວ່າຂອງທີ່ສົມມຸດວ່າເປັນຣັຕນະ

ຄຳວ່າ ເວັ້ນໄວ້ແຕ່ໃນອາຣາມຫລືໃນທີ່ພັກ ຄື ຍົກເວັ້ນແຕ່ໃນອາຣາມຫລືໃນທີ່ພັກທີ່ຊື່ວ່າ ໃນອາຣາມ ຄື ສຳລັບອາຣາມທີ່ມີຮົ້ວລ້ອມ ກຳຫນົດເອົາພາຍໃນອາຣາມສຳລັບອາຣາມທີ່ບໍ່ມີຮົ້ວລ້ອມ ກຳຫນົດເອົາອຸປຈາຣ

ທີ່ຊື່ວ່າ ໃນທີ່ພັກ ຄື ສຳລັບທີ່ພັກມີຮົ້ວລ້ອມ ກຳຫນົດເອົາພາຍໃນທີ່ພັກ ສຳລັບທີ່ພັກທີ່ບໍ່ມີຮົ້ວລ້ອມ ກຳຫນົດເອົາອຸປຈາຣ

ຄຳວ່າ ເກັບ ຄື ພິກສຸຖືເອົາເອງ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ໃຊ້ໃຫ້ເກັບ ຄື ພິກສຸໃຊ້ໃຫ້ຜູ້ອື່ນຖືເອົາ ຕ້ອງອາບັຕິປາຈິຕຕີຍ໌

ຄຳວ່າ ອີກຢ່າງນຶ່ງ ພິກສຸເພິງເກັບຫລືໃຊ້ໃຫ້ເກັບຣັຕນະຫລືຂອງທີ່ສົມມຸດວ່າເປັນຣັຕນະ ໃນອາຣາມ ຫລືໃນທີ່ພັກແລ້ວຮັກສາໄວ້ ຄວາມວ່າ ພິກສຸເພິງກຳຫນົດຫມາຍຮູປພັນ ຫລືຕຳຫນິແລ້ວເກັບຮັກສາໄວ້ ແລ້ວປະກາດວ່າ “ຜູ້ໃດຂອງຫາຍ ຜູ້ນັ້ນຈົ່ງມາຮັບເອົາໄປ” ຖ້າເຂົາມາໃນທີ່ນັ້ນເພິງຖາມເຂົາວ່າ “ສິ່ງຂອງຂອງທ່ານເປັນເຊັ່ນໃຣ” ຖ້າເຂົາບອກຮູປພັນຫລືຕຳຫນິ ຖືກຕ້ອງ ເພິງໃຫ້ຄືນ ຖ້າບອກບໍ່ຖືກຕ້ອງ ເພິງບອກເຂົາວ່າ “ທ່ານຈົ່ງຄົ້ນເບິ່ງເຖີດ” ເມື່ອຈະຈາກໄປຈາກອາວາສນັ້ນເພິງມອບໄວ້ແກ່ພິກສຸຜູ້ເຫມາະສົມໃນອາວາສນັ້ນແລ້ວຄ່ອຍຈາກໄປ ຖ້າບໍ່ມີພິກສຸທີ່ນ່າເຊື່ອຖື ເພິງມອບໄວ້ແກ່ຄຫບໍດີຜູ້ເຫມາະສົມໃນທີ່ນັ້ນແລ້ວຄ່ອຍຈາກໄປ

ຄຳວ່າ ນີ້ເປັນການທຳທີ່ສົມຄວຣໃນເຣື້ອງນັ້ນ ຄື ນີ້ເປັນຄວາມຖືກຕ້ອງໃນເຣື້ອງນັ້ນ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໐໗] ໑. ພິກສຸເກັບຫລືໃຊ້ໃຫ້ເກັບຣັຕນະ ຫລືຂອງທີ່ສົມມຸດວ່າເປັນຣັຕນະໃນອາຣາມຫລືໃນທີ່ພັກແລ້ວເກັບຮັກສາໄວ້ດ້ວຍຕັ້ງໃຈວ່າ "ເຈົ້າຂອງຈະຮັບຄືນໄປ"

໒. ພິກສຸຖືວິສາສະເກັບຂອງທີ່ສົມມຸດວ່າເປັນຣັຕນະ

໓. ພິກສຸຖືເອົາໄປເປັນຂອງຢືມ

໔. ພິກສຸເຂົ້າໃຈວ່າເປັນຂອງບັງສຸກຸລ

໕. ພິກສຸວິກົລຈິຕ

໖. ພິກສຸຕົ້ນບັນຍັດ

ຣຕນສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໓. ວິກາລຄາມປເວສນສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໓. ວິກາລຄາມປເວສນສິກຂາບົທ

ວ່າດ້ວຍກາຣເຂົ້າຫມູ່ບ້ານໃນເວລາວິກາລ

ເຣື້ອງພຣະສັພພັຄຄີຍ໌

[໕໐໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເຂົ້າຫມູ່ບ້ານໃນເວລາວິກາລ ນັ່ງໃນທີ່ຊຸມນຸມ ສົນທນາເດັຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ (໒) ໂຈຣກຖາ ເຣື້ອງໂຈຣ (໓) ມຫາມັຕຕກຖາ ເຣື້ອງມຫາອມາຕຍ໌ (໔) ເສນາກຖາ ເຣື້ອງກອງທັພ (໕) ພຍກຖາ ເຣື້ອງພັຍ (໖) ຍຸທທກຖາ ເຣື້ອງກາຣຣົບ (໗) ອັນນກຖາ ເຣື້ອງເຂົ້າ (໘) ປານກຖາ ເຣື້ອງນ້ຳ

(໙) ວັຕຖກຖາ ເລື່ອງຜ້າ (໑໐) ສຍນກຖາ ເລື່ອງທີ່ນອນ (໑໑) ມາລາກຖາ ເລື່ອງພວງດອກໄມ້ (໑໒) ຄັນທກຖາ ເລື່ອງຂອງຫອມ (໑໓) ຍາຕກຖາ ເລື່ອງຍາຕ (໑໔) ຍານກຖາ ເລື່ອງຍານ (໑໕) ຄາມກຖາ ເລື່ອງບ້ານ (໑໖) ນິຄົມກຖາ ເລື່ອງນິຄົມ (໑໗) ນຄົກຖາ ເລື່ອງເມືອງ (໑໘) ຊນປທກຖາ ເລື່ອງຊົນບົທ (໑໙) ອິຕຖີກຖາ ເລື່ອງສຕຣີ (໒໐) ປຸຣິສກຖາ ເລື່ອງບຸຣຸສ (໒໑) ສູຣກຖາ ເລື່ອງຄົນກລ້າຫາຍ (໒໒) ວິສິຂາກຖາ ເລື່ອງຕຣອກ (໒໓) ກຸມພັຕຖານກຖາ ເລື່ອງທ່ານ້ຳ (໒໔) ປຸພພເປຕກຖາ ເລື່ອງຄົນທີ່ລ່ວງລັບໄປແລ້ວ (໒໕) ນານັຕຕກຖາ ເລື່ອງເບັດເຕລັດ (໒໖) ໂລກັກຂາຍິກະ ເລື່ອງໂລກ (໒໗) ສມຸທັກຂາຍິກະ ເລື່ອງທະເລ (໒໘) ອິຕິພວາພວກຖາ ເລື່ອງຄວາມຈະເຣີນແລະຄວາມເສື່ອມ໑

ຄົນທັງຫລາຍພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງເຂົ້າຫມູ່ບ້ານໃນເວລາວິກາລ ນັ່ງໃນທີ່ຊຸມນຸມ ສົນທນາເດັຣະສານກຖາຕ່າງໆຄື (໑) ຣາຊກຖາ ເລື່ອງພຣະຣາຊາ (໒) ໂຈຣກຖາ ເລື່ອງໂຈຣ (໓) ມຫາມັຕຕກຖາ ເລື່ອງມຫາອມາຕຍ໌ (໔) ເສນາກຖາ ເລື່ອງກອງທັພ (໕) ພຍກຖາ ເລື່ອງພັຍ (໖) ຍຸທທກຖາ

ເຊີງອັນຖະ :

໑ ວິ. ມ. ໕/໒໕໐/໑໓-໑໔, ທີ. ສີ. ໙/໑໗/໘, ທີ. ປາ. ໑໑/໕໐/໓໐, ມ. ມ. ໑໓/໒໒໓/໑໙໗, ສໍ. ມ. ໑໙/໑໐໘໐/໓໖໕, ອງ. ທສກ. ໒໔/໖໙/໑໐໒, ຂຸ. ມ. ໒໙/໑໕໗/໓໐໖

ເລື່ອງການຣົບ (໗) ອັນນກຖາ ເລື່ອງເຂົ້າ (໘) ປານກຖາ ເລື່ອງນ້ຳ (໙) ວັຕຖກຖາ ເລື່ອງຜ້າ (໑໐) ສຍນກຖາ ເລື່ອງທີ່ນອນ (໑໑) ມາລາກຖາ ເລື່ອງພວງດອກໄມ້ (໑໒) ຄັນທກຖາ ເລື່ອງຂອງຫອມ (໑໓) ຍາຕກຖາ ເລື່ອງຍາຕ (໑໔) ຍານກຖາ ເລື່ອງຍານ (໑໕) ຄາມກຖາ ເລື່ອງຫມູ່ບ້ານ (໑໖) ນິຄົມກຖາ ເລື່ອງນິຄົມ (໑໗) ນຄົກຖາ ເລື່ອງເມືອງ (໑໘) ຊນປທກຖາ ເລື່ອງຊົນບົທ (໑໙) ອິຕຖີກຖາ ເລື່ອງສຕຣີ (໒໐) ປຸຣິສກຖາ ເລື່ອງບຸຣຸສ (໒໑) ສູຣກຖາ ເລື່ອງຄົນກ້າຫານ (໒໒) ວິສິຂາກຖາ ເລື່ອງຕຣອກ (໒໓) ກຸມພັຕຖານກຖາ ເລື່ອງທ່ານ້ຳ (໒໔) ປຸພພເປຕກຖາ ເລື່ອງຄົນທີ່ລ່ວງລັບໄປແລ້ວ (໒໕) ນານັຕຕກຖາ ເລື່ອງຍິບຍ່ອຍ (໒໖) ໂລກັກຂາຍິກ ເລື່ອງການຄາດກ່ຽວກັບໂລກ (໒໗) ສມຸທັກຂາຍິກ ເລື່ອງການຄາດເດົາກ່ຽວກັບທະເລ (໒໘) ອິຕິພວາພວກຖາ ເລື່ອງຄວາມຈະເຣີນແລະຄວາມເສື່ອມ ເຫມືອນພວກຄຣືຫັສຖ໌ທີ່ຍັງບໍຣິໂພຄການລະ”

ພິກສຸທັງຫລາຍໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນ

ຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງເຂົ້າໝູ່ບ້ານເວລາວິກາລ ນັ່ງໃນທີ່ຊຸມນຸມ ສົນທນາເດັຽຣະສານກຖາຕ່າງໆຄື ເຣື້ອງພຣະຣາຊາ ຯລຯ ເຣື້ອງຄວາມຈະເຣີນແລະຄວາມເສື່ອມລະ" ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານເຂົ້າບ້ານໃນເວລາວິກາລ ນັ່ງໃນທີ່ຊຸມນຸມສົນທນາເດັຽຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ ຯລຯ (໒໗) ອິຕິພວາພວກຖາ ເຣື້ອງຄວາມຈະເຣີນແລະຄວາມເສື່ອມ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳໜິວ່າ "ຯລຯ ໂມຄຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງເຂົ້າໝູ່ບ້ານໃນເວລາວິກາລແລ້ວ ນັ່ງໃນທີ່ຊຸມນຸມສົນທນາເດັຽຣະສານກຖາຕ່າງໆຄື (໑) ຣາຊກຖາ ເຣື້ອງພຣະຣາຊາ ຯລຯ (໒໗) ອິຕິພວາພວກຖາ ເຣື້ອງຄວາມຈະເຣີນແລະຄວາມເສື່ອມລະ ໂມຄຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໓. ວິກາລຄາມປເວສນສິກຂາບົທ ພຣະບັນຍັດ

ພຣະບັນຍັດ

ກໍ ພິກສຸໃດເຂົ້າໝູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕິຍ໌
ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຣື້ອງພິກສຸຫລາຍຮູບ

[໕໐໘] ສມັຍນັ້ນ ພິກສຸຫລາຍຮູບຍ່າງທາງໄປກຸງສາວັຕຖີ ແຄວ້ນໂກສົລ ເຂົ້າໄປໝູ່ບ້ານຕາແສງ

ນຶ່ງໃນເວລາເຢັນ ຄົນທັງຫລາຍເຫັນພິກສຸເຫລົ່ານັ້ນຈຶ່ງໄດ້ອາຣາທນາດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ນິມົນຕ໌ທ່ານທັງຫລາຍເຂົ້າໄປເຖີດ" ຄັ້ງນັ້ນ ພິກສຸເຫລົ່ານັ້ນມີຄວາມຢຳເກງວ່າ "ພຣະຜູ້ມີພຣະພາຄຊົງຫ້າມການເຂົ້າຫມູ່ບ້ານໃນເວລາວິການ" ຈຶ່ງບໍ່ຍອມເຂົ້າໄປ ພວກໂຈຣໄດ້ປຸ້ນພິກສຸເຫລົ່ານັ້ນ ຄັນພິກສຸເຫລົ່ານັ້ນໄປເຖິງກຸງສາວັດຖີ ໄດ້ແຈ້ງເຣື່ອງນັ້ນໃຫ້ພິກສຸທັງຫລາຍຊາບ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕໃຫ້ເຂົ້າຫມູ່ບ້ານ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ບອກລາແລ້ວເຂົ້າຫມູ່ບ້ານໃນເວລາວິການໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້ ອີກຢ່າງນຶ່ງ ພິກສຸໃດບໍ່ບອກລາແລ້ວເຂົ້າຫມູ່ບ້ານໃນເວລາວິການ ຕ້ອງອາບັຕິປາຈິຕຕີຍ໌

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງພິກສຸຫລາຍຮູບ ຈົບ

ເຣື່ອງພິກສຸຮູບນຶ່ງ

[໕໑໐] ສມັຍນັ້ນ ພິກສຸຮູບນຶ່ງຍ່າງທາງໄປກຸງສາວັດຖີ ແຄວ້ນໂກສົລ ເຂົ້າໄປຫມູ່ບ້ານຕາແສງນຶ່ງໃນເວລາເຢັນ ຄົນທັງຫລາຍເຫັນພິກສຸນັ້ນຈຶ່ງໄດ້ອາຣາທນາດັ່ງນີ້ວ່າ "ທ່ານຜູ້ຈະເຣີນ ນິມົນຕ໌ທ່ານທັງຫລາຍເຂົ້າໄປເຖີດ" ຄັ້ງນັ້ນ ພິກສຸນັ້ນມີຄວາມຢຳເກງວ່າ "ພຣະຜູ້ມີພຣະພາຄຊົງຫ້າມການເຂົ້າຫມູ່ບ້ານໃນເວລາວິການໂດຍບໍ່ໄດ້ບອກລາ" ຈຶ່ງບໍ່ຍອມເຂົ້າໄປ ພວກໂຈຣໄດ້ປຸ້ນພິກສຸນັ້ນ ຄັນພິກສຸນັ້ນໄປເຖິງກຸງສາວັດຖີ ໄດ້ແຈ້ງເຣື່ອງນັ້ນໃຫ້ພິກສຸທັງຫລາຍຊາບ ພິກສຸທັງຫລາຍຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື່ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິການໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດບໍ່ບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌ ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸຮູບນຶ່ງ ຈົບ

ເຣື້ອງພິກສຸຖືກງູກັດ

[໕໑໑] ສມັຍນັ້ນ ພິກສຸຮູບນຶ່ງຖືກງູກັດ ພິກສຸອີກຮູບນຶ່ງຈະເຂົ້າຫມູ່ບ້ານດ້ວຍຄິດວ່າ "ຈະໄປນຳໄຟມາ" ແຕ່ຄັນແລ້ວມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການບໍ່ບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິກາລ" ຈຶ່ງບໍ່ຍອມເຂົ້າໄປແລ້ວນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກະຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕເມື່ອມີທຸຣະຮີບດ່ວນເຊັ່ນນີ້ ບໍ່ຕ້ອງບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານໃນເວລາວິກາລ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໑໔] ອີກຢ່າງນຶ່ງ ພິກສຸໃດບໍ່ບອກລາພິກສຸທີ່ມີຢູ່ແລ້ວ ເຂົ້າຫມູ່ບ້ານໃນເວລາວິກາລ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ

ເຣື້ອງພິກສຸຖືກງູກັດ ຈົບ

ສິກຂາບົທວິພັງຄ໌

[໕໑໖] ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ພິກສຸທີ່ຊື່ວ່າ ມີຢູ່ ຄື ພິກສຸທີ່ຕນສາມາດຈະບອກລາແລ້ວເຂົ້າຫມູ່ບ້ານໄດ້
ພິກສຸທີ່ຊື່ວ່າ ບໍ່ມີຢູ່ ຄື ພິກສຸທີ່ຕນບໍ່ສາມາດຈະບອກລາແລ້ວເຂົ້າຫມູ່ບ້ານໄດ້
ທີ່ຊື່ວ່າ ເວລາວິກາລ ຫມາຍເອົາເວລາເມື່ອທ່ຽງວັນລ່ວງໄປແລ້ວຈົນເຖິງອຣຸນຂຶ້ນ
ຄຳວ່າ ເຂົ້າຫມູ່ບ້ານ ຄວາມວ່າ ເມື່ອພິກສຸກ້າວເລີຍເຂົ້າເຂຕຮົ້ວລ້ອມຂອງຫມູ່ບ້ານທີ່ມີຮົ້ວລ້ອມ ຕ້ອງອາບັຕິປາຈິຕຕີຍ໌ ເມື່ອພິກສຸກ້າວເຂົ້າເຂຕອຸປຈາຣຂອງຫມູ່ບ້ານທີ່ບໍ່ມີຮົ້ວລ້ອມ ຕ້ອງອາບັຕິປາຈິຕຕີຍ໌
ຄຳວ່າ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ ຄື ຍົກເວັ້ນແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ

ບົທພາຊນີຍ໌

ຕິກປາຈິຕຕີຍ໌

[໕໑໔] ເວລາວິກາລ ພິກສຸສຳຄັນວ່າເປັນເວລາວິກາລ ບໍ່ບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນເຊັ່ນນັ້ນ
ເວລາວິກາລ ພິກສຸບໍ່ແນ່ໃຈ ບໍ່ບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນທີ່ສົມຄວຣ
ເວລາວິກາລ ພິກສຸສຳຄັນວ່າເປັນກາລ ບໍ່ບອກລາພິກສຸທີ່ມີຢູ່ແລ້ວເຂົ້າຫມູ່ບ້ານ ຕ້ອງອາບັຕິປາຈິຕຕີຍ໌ ເວັ້ນໄວ້ແຕ່ມີເຫຕຸຈຳເປັນຮີບດ່ວນທີ່ສົມຄວຣ

ທຸກກຕ

ກາລ ພິກສຸສຳຄັນວ່າເປັນເວລາວິກາລ ຕ້ອງອາບັຕິທຸກກຕ
ກາລ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ
ກາລ ພິກສຸສຳຄັນວ່າເປັນກາລ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໑໕] ໑. ພິກສຸເຂົ້າບ້ານເມື່ອມີເຫຕຸຈຳເປັນຮີບດ່ວນທີ່ສົມຄວຣ
໒. ພິກສຸບອກລາພິກສຸທີ່ມີຢູ່ແລ້ວເຂົ້າໄປ
໓. ພິກສຸບໍ່ໄດ້ບອກລາເພາະພິກສຸບໍ່ມີແລ້ວເຂົ້າໄປ
໔. ພິກສຸໄປອາຣາມອື່ນ

໕. ພິກສຸໄປສຳນັກພິກສຸນີ
໖. ພິກສຸໄປສຳນັກເດັຽຣະຖີຍ໌
໗. ພິກສຸໄປໂຮງສັນ
໘. ພິກສຸຍ່າງຕາມທາງທີ່ຜ່ານຫມູ່ບ້ານ
໙. ພິກສຸເຂົ້າໄປໃນຄາວມີເຫຕຸຂັດຂ້ອງ
໑໐. ພິກສຸວິກົລຈິຕ
໑໑. ພິກສຸຕົ້ນບັນຍັດ

ວິກາລຄາມປເວສນສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໔. ສູຈິຊຣສິກຂາບົທ ນິທານ ວັຕຖຸ

໙. ຣຕນວັຄ

໔. ສູຈິຊຣສິກຂາບົທ
ວ່າດ້ວຍກາຣທຳກັບເຂັມດ້ວຍກະດູກເປັນຕົ້ນ

ເຣື້ອງພິກສຸຫລາຍຮູບ
[໕໑໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ນິໂຄຣທາຣາມ ເຂຕກຸງກບິລພັສດຸ໌ ແຄວັ້ນສັກກະ ຄັ້ງນັ້ນ ນາຍຊ່າງແກະສລັກງາຊ້າງຄົນນຶ່ງປວາຣນາພິກສຸທັ້ງຫລາຍໄວ້ວ່າ “ຜູ້ຂ້າຈະຖວາຍກັບເຂັມແກ່ພຣະຄຸນເຈົ້າຜູ້ຕ້ອງກາຣກັບເຂັມ” ຄັນແລ້ວພິກສຸເຫລົ່ານັ້ນຈຶ່ງອອກປາກຂໍກັບເຂັມເປັນອັນມາກ ພວກພິກສຸຜູ້ມີກັບເຂັມຂນາດນ້ອຍ ກໍອອກປາກຂໍກັບເຂັມຂນາດໃຫຍ່ ພວກພິກສຸຜູ້ມີກັບເຂັມຂນາດໃຫຍ່ ກໍອອກປາກຂໍກັບເຂັມຂນາດນ້ອຍ ນາຍຊ່າງມົວທຳກັບເຂັມເປັນອັນມາກໃຫ້ພິກສຸທັ້ງຫລາຍຈົນບໍ່ສາມາດທຳກາຣຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພກໍບໍ່ພໍ ທັ້ງບຸຕຣພັຣຍາກໍເລີຍລຳບາກໄປດ້ວຍ ຄົນທັ້ງຫລາຍຈຶ່ງຕຳຫນິ ປະນາມ ໂພນທະນາວ່າ “ຈັ່ງໃດພວກສມນະເຊື້ອສາຍສູາກຍບຸຕຣຈຶ່ງບໍ່ຮູ້ປະມານ ອອກປາກຂໍກັບເຂັມເປັນອັນມາກລະ ນາຍຊ່າງມົວທຳກັບ

ເຂັມເປັນອັນມາກໃຫ້ພິກສຸເຫລົ່ານີ້ຈົນບໍ່ສາມາດທຳການຄ້າຂາຍຢ່າງອື່ນ ຕົນເອງກໍຫາລ້ຽງຊີພກໍບໍ່ພໍ ທັງບຸຕຣພັຣຍາກໍເລີຍລຳບາກໄປດ້ວຍ"

ພວກພິກສຸໄດ້ຍິນຄົນເຫລົ່ານັ້ນຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍ ຈຶ່ງບໍ່ຮູ້ຈັກປະມານ ອອກປາກຂໍກັບເຂັມເປັນອັນມາກລະ" ຄັນພິກສຸທັງຫລາຍ ຕຳໜິພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸບໍ່ຮູ້ຈັກປະມານ ອອກປາກຂໍກັບເຂັມເປັນອັນມາກແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນ ຈຶ່ງບໍ່ຮູ້ຈັກປະມານອອກປາກຂໍກັບເຂັມເປັນອັນມາກລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[៥១៧] ກໍ ພິກສຸໃດທຳກັບເຂັມດ້ວຍກະດູກ ດ້ວຍງາ ຫລືດ້ວຍເຂົາ ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າເພທນກະ១

ເອື້ອງພິກສຸຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

[៥១៨] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມໝາຍນີ້

ທີ່ຊື່ວ່າ ກະດູກ ໄດ້ແກ່ ກະດູກຊນິດໃດຊນິດນຶ່ງ

ທີ່ຊື່ວ່າ ງາ ພຣະຜູ້ມີພຣະພາຄຕຣັສໝາຍເຖິງງາຊ້າງ

ທີ່ຊື່ວ່າ ເຂົາ ໄດ້ແກ່ ເຂົາຊນິດໃດຊນິດນຶ່ງ

ຄຳວ່າ ທຳ ຄື ພິກສຸທຳເອງ ຫລືໃຊ້ໃຫ້ທຳ ຕ້ອງອາບັຕິທຸກກົຕໃນຂນະທີ່ທຳ ຕ້ອງອາບັຕິ ປາຈິຕຕີຍ໌ເພາະໄດ້ມາ ຕ້ອງທຳລາຍແລ້ວສະແດງອາບັຕິ

ເຊີງອັນຖະ :

໑ ຄຳວ່າ "ເພທນກະ" ເປັນຊື່ສະເພາະອາບັຕິປາຈິຕຕີຍ໌ສິກຂາບົທນີ້ ແປວ່າ ມີການທຳລາຍ ຄືຕ້ອງທຳລາຍວັຕຖຸກ່ອນ ຈຶ່ງສະແດງອາບັຕິຕກ (ວິ. ອ. ໒/໕໑໗/໔໓໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໙. ຣຕນວັຄ ໔. ສູຈິຂຣສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໑໙] ພິກສຸທຳກັບເຂັມທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳກັບເຂັມທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸທຳກັບເຂັມທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳກັບເຂັມທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກົຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍຄແກ່ຜູ້ອື່ນ ຕ້ອງອາບັຕິທຸກກົຕ
ພິກສຸໄດ້ກັບເຂັມທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໒໐] ໑. ພິກສຸທຳລູກດຸມ

໒. ພິກສຸທຳຕະບັນໄຟ

໓. ພິກສຸທຳລູກຖວິນ (ຫ່ວງຮ້ອຍສາຍປຣະຄົດ)

໔. ພິກສຸທຳກລັກຍາຕາ

໕. ພິກສຸທຳໄມ້ປ້າຍຍາຕາ

ຝ. ພິກສຸທຳຝັກນິດ
ງ. ພິກສຸທຳກຣະບອກກອງນ້ຳ
ຈ. ພິກສຸວິກົລຈິຕ
ລ. ພິກສຸຕົ້ນບັນຍັດ

ສູຈິຂູຣສິກຂາບົທທີ ៤ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [៥. ປາຈິຕຕິຍກັນຫ໌] ລ. ຣຕນວັຄ ៥. ນັຍຈປີຖສິກຂາບົທ ນິທານ ວັຕຖຸ

ລ. ຣຕນວັຄ

៥. ນັຍຈປີຖສິກຂາບົທ

ວ່າດ້ວຍການທຳຕຽງແລະຕັ່ງ

ເຣື້ອງພຣະອຸປນັນທສູກຍບຸຕຣ

[៥៨១] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ຫຼືກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະອຸປນັນທສູກຍບຸຕຣນອນເທິງຕຽງສູງ ຄາວນັ້ນ ພຣະຜູ້ມີພຣະພາຄສເດັຈຈາຣິກຕາມເສນາສນະພ້ອມພິກສຸຫລາຍຮູບ ຜ່ານໄປທາງທີ່ຢູ່ຂອງທ່ານ ອຸປນັນທສູກບຸຕຣ ທ່ານໄດ້ເຫັນພຣະຜູ້ມີພຣະພາຄສເດັຈມາແຕ່ໄກ ຄັນເຫັນແລ້ວໄດ້ເຂົ້າໄປຂາບ ທູລພຣະຜູ້ມີພຣະພາຄດັ່ງນີ້ວ່າ "ຂໍເຊີນສເດັຈທອດພຣະເນຕຣຕຽງນອນຂອງຂ້າພຣະອົງຄ໌ເຖີດ ພຣະພຸທຫເຈົ້າຂ້າ" ຄັນແລ້ວ ພຣະຜູ້ມີພຣະພາຄໄດ້ສເດັຈກັບຈາກທີ່ນັ້ນແລ້ວຮັບສັ່ງກັບພິກສຸທັງ ຫລາຍວ່າ "ພິກສຸທັງຫລາຍ ພວກທ່ານເພິງຮູ້ຈັກໂມຂບຸຣຸສເພາະທີ່ຢູ່ອາສັຍ" ຄັ້ງນັ້ນ ພຣະຜູ້ມີ ພຣະພາຄ ໄດ້ຊົງຕຳຫນິທ່ານພຣະອຸປນັນທສູກຍບຸຕຣໂດຍປະການຕ່າງໆແລ້ວຕຣັສໂທສແຫ່ງ ຄວາມ
ເປັນຜູ້ລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໔໔] ກໍ ພິກສຸຜູ້ຈະທຳຕຽງຫລືຕັ່ງໃຫມ່ ເພິງເຮັດໃຫ້ມີຕີນພຽງ ໘ ນິ້ວ ໂດຍນິ້ວສຸຄຕ໑ ນັບແຕ່ແມ່ແຄ່ລົງມາ ເຮັດໃຫ້ເກີນກວ່າກຳຫນົດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າເສທນກະ໒

ເລື້ອງພຣະອຸປນັນທສາກຍບຸຕຣ ຈົບ

ເຊີງອັນຖະ :

໑ ໑ ນິ້ວສຸຄຕ ເທົ່າກັບ ໓ ນິ້ວຂອງຄົນປານກາງໃນບັດນີ້ (ສຸຄຕງຄລໍ ນາມ ອິທານິ ມຊຸຍິມສຸສ ປຸຣິສສຸສ ຕິນິ ອງຄຸລານິ -ກງຂາ. ຕີກາ ໒ລ໗)

໒ ຄຳວ່າ "ເສທນກະ" ເປັນຊື່ສະເພາະຂອງອາບັຕິປາຈິຕຕີຍ໌ສິກຂາບົທນີ້ ແປວ່າ ມີການຕັດອອກ ຄືຕ້ອງຕັດວັຕຖຸກ່ອນ ຈຶ່ງສະແດງອາບັຕິຕກ (ວິ. ອ. ໒/໕໔໔/໔໓ລ)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນທ໌] ລ. ຣຕນວັຄ ໕. ນັຢຈປີຖສິກຂາບົທ ບົທພາຊນີຍ໌

ສິກຂາບົທວິພັງຄ໌

[໕໔໓] ທີ່ຊື່ວ່າ ໃຫມ່ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງການທຳຂຶ້ນມາ(ໃຫມ່)
ທີ່ຊື່ວ່າ ຕຽງ ໄດ້ແກ່ ຕຽງ ໔ ຊນິດ ຄື (໑) ຕຽງມີແມ່ແຄ່ສອດເຂົ້າໃນຂາ໑ (໒) ຕຽງມີແມ່ແຄ່ຕິດຢູ່ກັບຂາ (໓) ຕຽງມີຂາດັ່ງກ້າມປູ (໔) ຕຽງມີຂາຈິດແມ່ແຄ່
ທີ່ຊື່ວ່າ ຕັ່ງ ມີ ໔ ຊນິດ ຄື (໑) ຕັ່ງມີແມ່ແຄ່ສອດເຂົ້າໃນຂາ (໒) ຕັ່ງມີແມ່ແຄ່ຕິດຢູ່ກັບຂາ (໓) ຕັ່ງມີຂາດັ່ງກ້າມປູ (໔) ຕັ່ງມີຂາຈດແມ່ແຄ່
ຄຳວ່າ ຜູ້ຈະທຳ ຄື ພິກສຸທຳເອງຫລືໃຊ້ຄົນອື່ນໃຫ້ທຳ
ຄຳວ່າ ເພິງເຮັດໃຫ້ມີຕີນພຽງ ໘ ນິ້ວ ໂດຍນິ້ວສຸຄຕ ນັບແຕ່ແມ່ແຄ່ລົງມາ ຄື ເວັ້ນຣະຍະໃຕ້ແມ່ແຄ່ລົງມາພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເກີນກຳຫນົດນັ້ນ ຕ້ອງອາບັຕິທຸກກຕ
ໃນຂນະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກແລ້ວສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໘໔] ພິກສຸທຳຕຽງຫລືຕັ່ງທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸທຳຕຽງຫລືຕັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :

໑ ຕຽງມີແມ່ແຄ່ສອດເຂົ້າໃນຂາ ເທົ່າກັບພາສາອັງກິສວ່າ “Long one - ຕຽງຍາວ” ຕຽງມີແມ່ແຄ່ຕິດຢູ່ກັບຂາ ຄື “One with slats - ຕຽງແຜ່ນໄມ້ຣະແນງ” ຕຽງມີຂາດັ່ງກ້າມປູ “One with curved legs - ຕຽງມີຂາໂຄ້ງ” ຕຽງມີຂາຈດແມ່ແຄ່ ຄື “One with removable legs - ຕຽງມີຂາຖອດໄດ້” (ດູ The Book of the Discipline, VoL. III, P. 91, PTS.)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໙. ຣຕນວັຄ ໕. ນັຍຈປີຖສີກຂາບົທ ອນາປັຕຕິວາຣ

ທຸກກຕ
ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ
ພິກສຸໄດ້ຕຽງຫລືຕັ່ງທີ່ຜູ້ອື່ນທຳເສັດແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໘໕] ໑. ພິກສຸທຳຕຽງຕັ່ງໄດ້ຂນາດ
໒. ພິກສຸທຳຕຽງຕັ່ງຕ່ຳກວ່າຂນາດ
໓. ພິກສຸໄດ້ຕຽງຕັ່ງທີ່ຜູ້ອື່ນທຳເກີນຂນາດມາຕັດໃຫ້ໄດ້ຂນາດກ່ອນແລ້ວໃຊ້
໔. ພິກສຸວິກົລຈິຕ
໕. ພິກສຸຕົ້ນບັນຍັດ

ມັຢຈປິຖສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໖. ຕູໂລນັທຫສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໖. ຕູໂລນັທຫສິກຂາບົທ

ວ່າດ້ວຍການທຳຕຽງຕັ່ງຫຸ້ມນຸ່ນ

ເຣື້ອງພຣະສັພພັຄຄີຍ໌

[໕໔໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນຫິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ໆ ຄົນທັງຫລາຍໄປທຽວຈາຣິກໄປຕາມວິຫາຣເຫັນ ຈຶ່ງຕຳຫນິປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ ເຫມືອນພວກຄຣືຫັສຖ໌ທີ່ບໍຣິໂພຄກາມລະ" ພິກສຸທັງຫລາຍໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ໃຫ້ທຳຕຽງແດ່ ຕັ່ງແດ່ຫຸ້ມນຸ່ນແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ໃຫ້ທຳຕຽງຫຸ້ມນຸ່ນແດ່ ຕັ່ງຫຸ້ມນຸ່ນແດ່ລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ທຳຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"

ເຊີງອັນຖະ :

*໑ ຕູໂລມຫົງ, ຕູລໍ ປກິຂິປິຕົອາ ອຸປຣິ ຈິມິລິກາຍ ໂອນຫົງ ທີ່ຊື່ວ່າຫຸ້ມນຸ່ນ ຄືໃສ່ນຸ່ນແລ້ວຫຸ້ມ **ດ້ານເທິງ**ດ້ວຍຜ້າຮອງພື້ນ (ວິ. /໕໖ລ)ອ. ໒/໕໔໖*

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ລ. ຣຕນວັຄ ໖. ຕູໂລນັທຫສິກຂາບົທ ບົທພາຊນີຍ໌

ພຣະບັນຍັດ

[໕໔໗] ກໍ ພິກສຸໃດທຳຕຽງ ຫລືຕັ່ງຫຸ້ມນຸ່ນ ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າອຸທຫາລນກະ໑

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໔໘] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຕຽງ ໄດ້ແກ່ ຕຽງ ໔ ຊນິດ ຄື (໑) ຕຽງມີແມ່ແຄຣ່ສອດເຂົ້າໃນຂາ

(໒) ຕຽງມີແມ່ແຄຣ່ຕິດຢູ່ກັບຂາ (໓) ຕຽງມີຂາດັ່ງກ້າມປູ (໔) ຕຽງມີຂາຈົດແມ່ແຄຣ່

ທີ່ຊື່ວ່າ ຕັ່ງ ໄດ້ແກ່ ຕັ່ງ ໔ ຊນິດ ຄື (໑) ຕັ່ງມີແມ່ແຄຣ່ສອດເຂົ້າໃນຂາ (໒) ຕັ່ງມີແມ່ແຄຣ່ຕິດຢູ່ກັບຂາ (໓) ຕັ່ງມີຂາດັ່ງກ້າມປູ (໔) ຕັ່ງມີຂາຈດແມ່ແຄຣ່

ທີ່ຊື່ວ່າ ນຸ່ນ ໄດ້ແກ່ ນຸ່ນ ໓ ຊນິດ ຄື (໑) ນຸ່ນຈາກຕົ້ນໄມ້ (໒) ນຸ່ນຈາກເຄືອໄມ້ (໓) ນຸ່ນຈາກຫຍ້າເລາ

ຄຳວ່າ ທຳ ຄື ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງອາບັຕິທຸກກຕ ໃນຂນະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຣື້ອເສັຽກ່ອນແລ້ວສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໔໙] ພິກສຸທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ເຊີງອັນຖະ :
໑ ຄຳວ່າ "ອຸທທາລນກະ" ເປັນຊື່ສະເພາະຂອງອາບັຕິປາຈິຕຕີຍ໌ສິກຂາບົທນີ້ ແປວ່າ ມີການຮື້ອອກ ຄື ຕ້ອງຮື້ອອກເສັຽກ່ອນຈຶ່ງສະແດງອາບັຕິຕກ

ພິກສຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກສຸໃຊ້ຜູ້ອື່ນໃຫ້ທຳຕຽງຫລືຕັ່ງຫຸ້ມນຸ່ນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ
ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ
ພິກສຸໄດ້ຕຽງຕັ່ງທີ່ຜູ້ອື່ນທຳສຳເຣັຈແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໖໐] ໑. ພິກສຸທຳສາຍຮັດເຂົ່າຫຸ້ມນຸ່ນ
໒. ພິກສຸທຳປຣະຄດແອວຫຸ້ມນຸ່ນ
໓. ພິກສຸທຳສາຍໂຍກບາຕຣຫຸ້ມນຸ່ນ
໔. ພິກສຸທຳຖົງບາຕຣຫຸ້ມນຸ່ນ
໕. ພິກສຸທຳຜ້າກອງນ້ຳຫຸ້ມນຸ່ນ
໖. ພິກສຸທຳໝອນຫຸ້ມນຸ່ນ
໗. ພິກສຸໄດ້ຕຽງຕັ່ງຫຸ້ມນຸ່ນທີ່ຜູ້ອື່ນທຳສຳເຣັຈແລ້ວມາທຳລາຍກ່ອນໃຊ້
໘. ພິກສຸວິກົລຈິຕ
໙. ພິກສຸຕົ້ນບັນຍັດ

ຕູໂລນັທທສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໘. ຣຕນວັຄ ໗. ນິສີທນສິກຂາບົທ ນິທານວັຕຖຸ

໘. ຣຕນວັຄ

໗. ນິສີທນສິກຂາບົທ

ວ່າດ້ວຍການທຳຜ້າຮອງນັ່ງ

ເຣື້ອງພຣະສັພພັຄຄີຍ໌

[໕໖໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າຮອງນັ່ງສຳລັບພິກສຸທັງຫລາຍ ພວກພິກສຸສັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າຮອງນັ່ງ" ຈຶ່ງໃຊ້ຜ້າຮອງນັ່ງບໍ່ໄດ້ຂນາດ ເມື່ອປູເທິງຕຽງແດ່ **ເທິງຕັ່ງ**ແດ່ ຈຶ່ງຫ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຊ້ຜ້າຮອງນັ່ງບໍ່ໄດ້ຂນາດລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ຜ້າຮອງນັ່ງບໍ່ໄດ້ຂນາດແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ຜ້າຮອງນັ່ງບໍ່ໄດ້ຂນາດລະ ໂມຂບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໘. ຣຕນວັຄ ໗. ນິສີທນສິກຂາບົທ ພຣະອນຸບັນຍັດ

ພຣະບັນຍັດ
ກໍ ພິກສຸຜູ້ຈະທຳຜ້າຮອງນັ່ງ ເພິງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງຄືບເຄິ່ງ ໂດຍຄືບສຸຄຕ໑ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າ ເສທນກະ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ເຣື້ອງພຣະອຸທາຍີ

[໕໓໔] ສມັຍນັ້ນ ທ່ານພຣະອຸທາຍີຮູບຮ່າງໃຫຍ່ ປູຜ້າຮອງນັ່ງເບື້ອງພຣະພັກຕຣ໌ພຣະຜູ້ມີພຣະພາຄແລ້ວນັ່ງດຶງຊາຍຜ້າອອກຮອບໆພຣະຜູ້ມີພຣະພາຄໄດ້ຕຣັສຖາມທ່ານພຣະອຸທາຍີດັ່ງນີ້ວ່າ "ອຸທາຍີເພາະເຫຕຸໃດ ທ່ານຈຶ່ງປູຜ້າຮອງນັ່ງແລ້ວດຶງຊາຍຜ້າອອກຮອບໆເຫມືອນຊ່າງທຳຫນັງເກົ່າລະ" ທ່ານພຣະອຸທາຍີຂາບທູລວ່າ "ຈິງດັ່ງນັ້ນ ພຣະພຸທທເຈົ້າຂ້າ ກໍພຣະຜູ້ມີພຣະພາຄຊົງອນຸຍາຕຜ້າຮອງນັ່ງສຳລັບພິກສຸເລັກເກີນໄປ"

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຣັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕຊາຍຜ້າຮອງນັ່ງເພີ້ມອີກ ໑ ຄືບ" ແລ້ວຈຶ່ງຣັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໓໓] ອີກຢ່າງນຶ່ງ ພິກສຸຜູ້ຈະທຳຜ້າຮອງນັ່ງ ເພິງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງຄືບເຄິ່ງ ຊາຍຄືບນຶ່ງ ໂດຍຄືບສຸຄຕ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າເສທນກະ

ເຣື້ອງພຣະອຸທາຍີ ຈົບ

ເຊີງອັນຖະ :

໑ ຄືບສຸຄຕ ເທົ່າກັບ ໓ ຄືບຂອງຄົນປານກາງໃນບັດນີ້ ຫລືເທົ່າກັບ ໑ ສອກຄືບຂອງຊ່າງໄມ້

(ວິ. ອ. ໔/໓໔໗-໙/໓໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໗. ນິສີທນສິກຂາບົທ ອນາປັຕຕິວາຣ

ສິກຂາບົທວິພັງຄ໌

[໕໓໔] ທີ່ຊື່ວ່າ ຜ້າຮອງນັ່ງ ພຣະຜູ້ມີພຣະພາຄຕຣັສຫມາຍເຖິງຜ້າຮອງນັ່ງທີ່ມີຊາຍ ຄຳວ່າ ຜູ້ຈະທຳ ຄື ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງໃຫ້ເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງຄືບເຄິ່ງ ຊາຍຄືບນຶ່ງ ໂດຍຄືບສຸຄຕ ພິກສຸທຳເອງຫລືໃຊ້ໃຫ້ຜູ້ອື່ນທຳເກີນຂນາດນັ້ນ ຕ້ອງອາບັຕິທຸກກຕເພາະທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດເສັຽກ່ອນແລ້ວສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໓໕] ພິກສຸທຳຜ້າຮອງນັ່ງ(ທີ່ເກີນຂນາດ)ທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳຜ້າຮອງນັ່ງທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸທຳຜ້າຮອງນັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳຜ້າຮອງນັ່ງທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳຜ້າຮອງນັ່ງ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ

ພິກສຸໄດ້ຜ້າຮອງນັ່ງທີ່ຜູ້ອື່ນທຳສຳເຣັຈແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໓໒] ໑. ພິກສຸທຳຜ້າຮອງນັ່ງໄດ້ຂນາດ

໔. ພິກສຸທຳຜ້າຮອງນັ່ງຕ່ຳກວ່າຂນາດ

໓. ພິກຂຸໄດ້ຜ້າຮອງນັ່ງທີ່ຜູ້ອື່ນທຳເກີນຂນາດມາຕັດແລ້ວໃຊ້
໔. ພິກຂຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອຫລືປອກໝອນ
໕. ພິກຂຸວິກົລຈິຕ
໖. ພິກຂຸຕົ້ນບັນຍັດ

ນິສີທນສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ໙. ຣຕນວັຄ ໗. ກັນທຸປຕິຈສາທິສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໗. ກັນທຸປຕິຈສາທິສິກຂາບົທ
ວ່າດ້ວຍການທຳຜ້າປິດຝີ

ເຣື້ອງພຣະສັພພັຄຄີຍ໌
[໕໓໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງອນຸຍາຕ ຜ້າປິດຝີສຳລັບພິກຂຸທັງຫລາຍ ພວກພິກຂຸສັພພັຄຄີຍ໌ຊາບວ່າ "ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າປິດຝີ" ຈຶ່ງໃຊ້ຜ້າປິດຝີບໍ່ໄດ້ຂນາດ ປ່ອຍຫ້ອຍຂ້າງໜ້າແດ່ ຂ້າງຫລັງແດ່ທຽວໄປ ບັນດາພິກຂຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກຂຸສັພພັຄຄີຍ໌ຈຶ່ງໃຊ້ຜ້າປິດຝີບໍ່ໄດ້ຂນາດລະ" ຄັນພິກຂຸທັງຫລາຍຕຳໜິພວກພິກຂຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກຂຸສັພພັຄຄີຍ໌ວ່າ "ພິກຂຸທັງຫລາຍ ຊາບວ່າ ພວກທ່ານໃຊ້ຜ້າປິດຝີບໍ່ໄດ້ຂນາດ ແມ່ນແທ້ບໍ" ພວກພິກຂຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງ

ຕໍາຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ຜ້າປິດຝີບໍ່ໄດ້ຂນາດລະ ໂມຂບຸຣຸສ ທັງຫລາຍ ການກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສຫລືເຮັດໃຫ້ຄົນ ທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງ ຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໙. ຣຕນວັຄ ໗. ກັນທຸປຕິຈສາທິສິກຂາບົທ ບົທພາຊນີຍ໌

ພຣະບັນຍັດ

[໕໓໗] ກໍ ພິກສຸຜູ້ທໍາຜ້າປິດຝີ ຕ້ອງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງ ໒ ຄືບ ໂດຍຄືບສຸຄຕ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ ທີ່ຊື່ວ່າເສທນກະ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໓໙] ທີ່ຊື່ວ່າ ຜ້າປິດຝີ ໄດ້ແກ່ ຜ້າທີ່ຊົງອນຸຍາຕສໍາລັບພິກສຸຜູ້ອາພາທ ຄື ເປັນໂຣຄຝີສຸກໃສ ໂຣຄມີນໍ້າຫນອງ ໂຣຄນໍ້າເຫລືອງ ຫລືໂຣຄຝີດາສ ໃຕ້ສາຍບືລົງໄປເຫນືອຫົວເຂົ່າຂຶ້ນມາ ເພື່ອ ໃຊ້ປິດແຜລ

ຄໍາວ່າ ຜູ້ຈະທໍາ ຄື ພິກສຸທໍາເອງຫລືໃຊ້ຜູ້ອື່ນໃຫ້ທໍາ ເພິງໃຫ້ເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນ ຄື ຍາວ ໔ ຄືບ ກວ້າງ ໒ ຄືບ ໂດຍຄືບສຸຄຕ ພິກສຸທໍາເອງຫລືໃຊ້ຜູ້ອື່ນໃຫ້ທໍາເກີນຂນາດນັ້ນ ຕ້ອງອາບັຕິທຸກກຕ ໃນຂນະທີ່ທໍາ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກເສັຽກ່ອນແລ້ວ ສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໔໐] ພິກສຸທໍາຜ້າປິດ(ເກີນຂນາດ)ຝີທີ່ຕົນທໍາຄ້າງໄວ້ຕໍ່ຈົນສໍາເຣັຈເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທໍາຜ້າປິດຝີທີ່ຕົນທໍາຄ້າງໄວ້ຕໍ່ຈົນສໍາເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸທໍາຜ້າປິດຝີທີ່ຜູ້ອື່ນທໍາຄ້າງໄວ້ຕໍ່ຈົນສໍາເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທໍາຜ້າປິດຝີທີ່ຜູ້ອື່ນທໍາຄ້າງໄວ້ທໍາຕໍ່ຈົນສໍາເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ທຸກກດ
ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກດ
ພິກສຸໄດ້ຜ້າປິດຝີທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກດ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໑] ໑. ພິກສຸທຳຜ້າປິດຝີໄດ້ຂນາດ
໒. ພິກສຸທຳຜ້າປິດຝີຕໍ່າກວ່າຂນາດ
໓. ພິກສຸໄດ້ຜ້າປິດຝີທີ່ຜູ້ອື່ນທຳໄວ້ເກີນຂນາດມາຕັດແລ້ວໃຊ້
໔. ພິກສຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອ ຫລືປອກຫມອນ
໕. ພິກສຸວິກົລຈິຕ
໖. ພິກສຸຕົ້ນບັນຍັດ

ກັນທຸປຕິຈສາທິສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນທ໌] ໙. ຣຕນວັຄ ໘. ວັສສິກສາຕິກາສິກຂາບົທ ນິທານວັຕຖຸ

໙. ຣຕນວັຄ

໘. ວັສສິກສາຕິກາສິກຂາບົທ
ວ່າດ້ວຍການທຳຜ້າອາບນໍ້າຝົນ

ເຣື້ອງພຣະສັພພັຄຄີຍ໌
[໕໔໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າອາບນໍ້າຝົນສຳລັບພິກສຸທັງຫລາຍ ພວກພິກສຸສັພພັຄຄີຍ໌ຊາບວ່າ “ພຣະຜູ້ມີພຣະພາຄຊົງອນຸຍາຕຜ້າອາບນໍ້າຝົນ” ຈຶ່ງໃຊ້ຜ້າອາບນໍ້າຝົນບໍ່ໄດ້ຂນາດ ປ່ອຍຫ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ທຽວໄປ ບັນດາພິກສຸຜູ້ມັກນ້ອຍ

ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງໃຊ້ຜ້າອາບນ້ຳຝົນບໍ່ໄດ້ຂນາດລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເອົາເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານໃຊ້ຜ້າອາບນ້ຳຝົນບໍ່ໄດ້ຂນາດ ແມ່ນແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງໃຊ້ຜ້າອາບນ້ຳຝົນບໍ່ໄດ້ຂນາດລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[៥๔៣] ກໍ ພິກສຸຜູ້ຈະທຳຜ້າອາບນ້ຳຝົນ ເພິ່ງເຮັດໃຫ້ໄດ້ຂນາດ ຂນາດໃນຂໍ້ນັ້ນຄື ຍາວ ៦ ຄືບ ກວ້າງ ໒ ຄືບເຄິ່ງ ໂດຍຄືບສຸຄຕ ເຮັດໃຫ້ເກີນຂນາດນັ້ນ ຕ້ອງອາບັຕິປາຈິຕຕີຍ໌ທີ່ຊື່ວ່າເສທນກະ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[៥๔๔] ທີ່ຊື່ວ່າ ຜ້າອາບນ້ຳຝົນ ໄດ້ແກ່ ຜ້າທີ່ຊົງອນຸຍາຕໄວ້ໃຫ້ໃຊ້ໄດ້ຕລອດ ๔ ເດືອນໃນຣະດູຝົນ

ຄຳວ່າ ຜູ້ຈະທຳ ຄື ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງໃຫ້ເຮັດໃຫ້ໄດ້ຂນາດ ຄືຍາວ ៦ ຄືບ ກວ້າງ ໒ ຄືບເຄິ່ງ ໂດຍຄືບສຸຄຕ ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເກີນຂນາດນັ້ນ ຕ້ອງອາບັຕິທຸກກຕໃນຂນະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກແລ້ວສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[៥๔៥] ພິກສຸທຳຜ້າອາບນ້ຳຝົນ(ເກີນຂນາດ)ທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິ

ປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າອາບນ້ຳຝົນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌
ພິກຂຸທຳຜ້າອາບນ້ຳຝົນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌
ພິກຂຸໃຊ້ຜູ້ອື່ນໃຫ້ທຳຜ້າອາບນ້ຳຝົນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໙. ຣຕນວັគ ໙. ວັສສິກສາຕິກາສິກຂາບົທ ອນາປັຕຕິວາຣ

ທຸກກຕ
ພິກຂຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳເພື່ອປະໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ
ພິກຂຸໄດ້ຜ້າອາບນ້ຳຝົນທີ່ຜູ້ອື່ນທຳໄວ້ມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
[໕໔໖] ໑. ພິກຂຸທຳຜ້າອາບນ້ຳຝົນໄດ້ຂນາດ
໒. ພິກຂຸທຳຜ້າອາບນ້ຳຝົນຕ່ຳກວ່າຂນາດ
໓. ພິກຂຸໄດ້ຜ້າອາບນ້ຳຝົນທີ່ຜູ້ອື່ນທຳເກີນຂນາດມາຕັດແລ້ວໃຊ້
໔. ພິກຂຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອຫລືປອກຫມອນ
໕. ພິກຂຸວິກລຈິຕ
໖. ພິກຂຸຕົ້ນບັນຍັດ

ວັສສິກສາຕິກາສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໙. ຣຕນວັគ ໑໐. ນັນທສິກຂາບົທ ນິທານວັຕຖຸ

໙. ຣຕນວັគ

໑໐. ນັນທສິກຂາບົທ

ວ່າດ້ວຍພຣະນັນທະ

ເຣື້ອງພຣະນັນທະ

[໕໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ທ່ານພຣະນັນທະ ໂອຣົສພຣະມາຕຸຈສາຂອງພຣະຜູ້ມີພຣະພາຄ ມີຮູບງາມ ໜ້າເບິ່ງ ໜ້າຊົມ ຮ່າງຕ່ຳກວ່າພຣະຜູ້ມີພຣະພາຄ ໔ ອົງຄຸລີ ທ່ານພຣະນັນທະນັ້ນຫົ່ມ ຈີວອນມີຂນາດເທົ່າຈີວອນພຣະສຸຄຕ ພິກສຸທັງຫລາຍຜູ້ເປັນພຣະເຖຣະໄດ້ເຫັນທ່ານພຣະນັນທະ ຍ່າງມາແຕ່ໄກ ຄັນເຫັນແລ້ວຈຶ່ງລຸກຂຶ້ນຈາກອາສນະດ້ວຍຄິດວ່າ "ພຣະຜູ້ມີພຣະພາຄສເດັຈມາ" ເມື່ອທ່ານພຣະນັນທະເຂົ້າມາໃກ້ ຈຶ່ງຈຳໄດ້ ແລ້ວພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດ ທ່ານພຣະນັນທະຈຶ່ງຫົ່ມຈີວອນມີຂນາດເທົ່າຈີວອນພຣະສຸຄຕລະ" ຄັນພິກສຸທັງຫລາຍຕຳໜິທ່ານ ພຣະນັນທະໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຣັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມທ່ານ ພຣະນັນທະວ່າ "ນັນທະ ຊາບວ່າ ທ່ານຫົ່ມຈີວອນມີຂນາດເທົ່າສຸຄຕຈີວອນແມ່ນແທ້ບໍ" ທ່ານ ພຣະນັນທະທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳໜິວ່າ "ຯລຯ ນັນທະ ຈັ່ງໃດທ່ານຈຶ່ງຫົ່ມຈີວອນມີຂນາດເທົ່າສຸຄຕຈີວອນລະ ນັນທະການກະທຳຢ່າງນີ້ ບໍ່ ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງ ດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕິຍກັນຫ໌] ຣ. ຣຕນວັຄ ໑໐. ນັນທສິກຂາບົທ ບົທ ພາຊນີຍ໌

ພຣະບັນຍັດ

[໕໔໘] ກໍ ພິກສຸທຳຈີວອນມີຂນາດເທົ່າກັບສຸຄຕຈີວອນ ຫລືໃຫຍ່ກວ່າ ຕ້ອງອາບັຕິປາຈິຕຕີຍ໌

ທີ່ຊື່ວ່າເສຫນກະ ຂນາດເທົ່າສຸຄຕຈີວອນຂອງສຸຄຕໃນຂໍ້ນັ້ນ ຄື ຍາວ ໙ ຄືບ ກວ້າງ ໖ ຄືບ ໂດຍຄືບສຸຄຕ ນີ້ເປັນຂນາດເທົ່າສຸຄຕຈີວອນຂອງພຣະສຸຄຕ

ເຣື້ອງພຣະນັນທະ ຈົບ

ສິກຂາບົທວິພັງຄ໌

[໕໔໙] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຂນາດເທົ່າສຸຄຕຈີວອນ ຄື ຍາວ ໙ ຄືບ ກວ້າງ ໖ ຄືບ ໂດຍຄືບສຸຄຕ

ຄຳວ່າ ທຳ ຄື ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ຕ້ອງອາບັຕິທຸກກຕ ໃນຂນະທີ່ທຳ ຕ້ອງອາບັຕິປາຈິຕຕີຍ໌ເພາະໄດ້ມາ ຕ້ອງຕັດອອກເສັຽກ່ອນແລ້ວສະແດງອາບັຕິ

ບົທພາຊນີຍ໌

ປາຈິຕຕີຍ໌

[໕໕໐] ພິກສຸທຳຈີວອນ(ເທົ່າສຸຄຕຈີວອນ)ທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳຈີວອນທີ່ຕົນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸທຳຈີວອນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈດ້ວຍຕົນເອງ ຕ້ອງອາບັຕິປາຈິຕຕີຍ໌

ພິກສຸໃຊ້ຜູ້ອື່ນໃຫ້ທຳຈີວອນທີ່ຜູ້ອື່ນທຳຄ້າງໄວ້ຕໍ່ຈົນສຳເຣັຈ ຕ້ອງອາບັຕິປາຈິຕຕີຍ໌

ພຣະວິນັຍປິດົກ ມຫາວິພັງຄ໌ [໕. ປາຈິຕຕີຍກັນຫ໌] ໙. ຣຕນວັຄ ຣວມສິກຂາບົທທີ່ມີໃນຣຕນວັຄ

ທຸກກຕ

ພິກສຸທຳເອງຫລືໃຊ້ຜູ້ອື່ນໃຫ້ທຳ ເພື່ອປໂຍດແກ່ຜູ້ອື່ນ ຕ້ອງອາບັຕິທຸກກຕ

ພິກສຸໄດ້ຈີວອນທີ່ຜູ້ອື່ນທຳສຳເຣັຈແລ້ວມາໃຊ້ສອຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໑] ໑. ພິກສຸທຳຈີວອນຕ່ຳກວ່າຂນາດ

໒. ພິກສຸໄດ້ຈີວອນທີ່ຜູ້ອື່ນທຳເສັດມາຕັດແລ້ວໃຊ້

໓. ພິກສຸທຳເປັນຜ້າເພດານ ຜ້າປູພື້ນ ຜ້າມ່ານ ເປືອກເສື່ອຫລືປອກຫມອນ

໔. ພິກສຸວິກົລຈິຕ

໕. ພິກສຸຕົ້ນບັນຍັດ

ນັນທສິກຂາບົທທີ ໑໐ ຈົບ

ຣຕນວັຄທີ ໙ ຈົບ

ຣວມສິກຂາບົທທີ່ມີໃນຣຕນວັຄ

ຣຕນວັຄມີ ໑໐ ສິກຂາບົທ ຄື

໑. ອັນເຕປຸຣສິກຂາບົທ ວ່າດ້ວຍການເຂົ້າເຂຕພຣະຣາຊຖານຊັ້ນໃນ

໒. ຣຕນສິກຂາບົທ ວ່າດ້ວຍການເກັບຣັຕນະທີ່ເຈົ້າຂອງລືມໄວ້

໓. ວິກາລຄາມປເວສນສິກຂາບົທ ວ່າດ້ວຍການເຂົ້າບ້ານໃນເວລາວິກາລ

໔. ສູຈິຊຣສິກຂາບົທ ວ່າດ້ວຍການທຳກັບເຂັມດ້ວຍກະດູກເປັນຕົ້ນ

໕. ມັຢຈປີຖສິກຂາບົທ ວ່າດ້ວຍການທຳຕຽງແລະຕັ່ງ

໖. ຕູໂລນັທທສິກຂາບົທ ວ່າດ້ວຍການທຳຕຽງແລະຕັ່ງຫຸ້ມນຸ່ນ

໗. ນິສີທນສິກຂາບົທ ວ່າດ້ວຍການທຳຜ້າຣອງນັ່ງ

໘. ກັນທຸປຕິຈສາທິສິກຂາບົທ ວ່າດ້ວຍການທຳຜ້າປິດຝີ

໙. ວັສສິກສາຕິກາສິກຂາບົທ ວ່າດ້ວຍການທຳຜ້າອາບນ້ຳຝົນ

໑໐. ນັນທສິກຂາບົທ ວ່າດ້ວຍທ່ານພຣະນັນທະ

ບົທສຣຸບ

ທ່ານທັງຫລາຍ ທັມຄືປາຈິຕຕີຢ໌ ໙໒ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຂ້າພະເຈົ້າຂໍຖາມທ່ານທັງຫລາຍ ໃນທັມຄືປາຈິຕຕີຢ໌ ໙໒ ສິກຂາບົທເຫລົ່ານີ້ວ່າ “ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື”

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໔ ວ່າ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ທ່ານທັງຫລາຍບໍຣິສຸດຫ໌ແລ້ວໃນທັມຄືປາຈິຕຕີຍ໌ ໙໔ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ຂຸທທກສິກຂາບົທ ຈົບບໍຣິບູຣນ໌
ປາຈິຕຕີຍກັນຫ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [ຝ. ປາຕິເທສນີຍກັນຫ໌] ໑. ປຖມປາຕິເທສນີຍສິກຂາບົທ ນິທານວັຕຖຸ

ຝ. ປາຕິເທສນີຍກັນຫ໌

ທ່ານທັງຫລາຍ ທັມຄືປາຕິເທສນີຍະ ໔ ສິກຂາບົທເຫລົ່ານີ້ມາເຖິງອາຣະທີ່ຍົກຂຶ້ນສະແດງເປັນຂໍ້ໆຕາມລຳດັບ

໑. ປຖມປາຕິເທສນີຍສິກຂາບົທ

ວ່າດ້ວຍການຮັບຂອງຄ້ຽວຂອງສັນຈາກມືພິກສຸນີຜູ້ບໍ່ແມ່ນຍາຕ

ເຣື້ອງພິກສຸນີຮູບນຶ່ງ

[໕໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພິກສຸນີຮູບນຶ່ງທ່ຽວບິນທບາຕໃນກຸງສາວັຕຖີ ເວລາກັບ ພົບພິກສຸຮູບນຶ່ງຈຶ່ງໄດ້ກ່າວດັ່ງນີ້ວ່າ "ພຣະຄຸນເຈົ້າ ນິມົນຕ໌ທ່ານຮັບພິກສາຫາຣເຖີດ" ພິກສຸນັ້ນຕອບວ່າ "ດີລະ ນ້ອງຍິງ" ແລ້ວຮັບພິກສາຫາຣທັງຫມົດ ເມື່ອໃກ້ເວລາສັນແລ້ວ ພິກສຸນີນັ້ນບໍ່ສາມາດທ່ຽວບິນທບາຕໄດ້ທັນ ຈຶ່ງບໍ່ໄດ້ສັນພັຕຕາຫາຣ ຕໍ່ມາ ແມ່ນໃນວັນທີ ໔ ພິກສຸນີນັ້ນ ຯລຯ ແມ່ນໃນວັນທີ ໓ ພິກສຸນີນັ້ນກໍທ່ຽວບິນທບາຕໃນກຸງສາວັຕຖີ ເວລາກັບ ພົບພິກສຸຮູບນັ້ນຈຶ່ງໄດ້ກ່າວດັ່ງນີ້ວ່າ "ພຣະຄຸນເຈົ້ານິມົນຕ໌ທ່ານຮັບພິກສາຫາຣເຖີດ" ພິກສຸນັ້ນຕອບວ່າ "ດີລະ ນ້ອງຍິງ" ແລ້ວຮັບພິກສາຫາຣທັງຫມົດ ເມື່ອໃກ້ເວລາສັນແລ້ວ ພິກສຸນີນັ້ນບໍ່ສາມາດທ່ຽວບິນທບາຕໄດ້ທັນ ຈຶ່ງບໍ່ໄດ້ສັນພັຕຕາຫາຣ

ຄັນໃນວັນທີ ໔ ພິກສຸນີນັ້ນຍ່າງຊອນເຊໄປຕາມຖນົນ ເສດຖີຄຫບໍດີນັ່ງຣົຖສວນທາງມາ ໄດ້ກ່າວກັບພິກສຸນີນັ້ນດັ່ງນີ້ວ່າ "ແມ່ເຈົ້າ ນິມົນຕ໌ທ່ານຫລີກທາງ" ທ່ານເມື່ອກຳລັງຫລີກ ລົ້ມລົງໃນທີ່ນັ້ນເອງ ເສດຖີຄຫບໍດີຂໍຂມາພິກສຸນີນັ້ນວ່າ "ແມ່ເຈົ້າ ທ່ານໂປຣດຍົກໂທສຜູ້ຂ້າເຮັດໃຫ້ທ່ານລົ້ມ" ພິກສຸນີຕອບວ່າ "ຄຫບໍດີ ທ່ານບໍ່ໄດ້ເຮັດໃຫ້ຂະນ້ອຍລົ້ມ ຂະນ້ອຍມີກຳລັງບໍ່ດີຕ່າງຫາກ" ເສດຖີຖາມວ່າ "ແມ່ເຈົ້າ ເພາະເຫຕຸໃດທ່ານຈຶ່ງມີກຳລັງບໍ່ດີ" ເທື່ອນັ້ນ ພິກສຸນີນັ້ນຈຶ່ງເລົ່າເຣື່ອງນັ້ນໃຫ້ເສດຖີຄຫບໍດີຊາບ ເສດຖີຄຫບໍດີພາພິກສຸນີນັ້ນໄປສັນທີ່ເຮືອນ ແລ້ວຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍ ຈຶ່ງຮັບອາມິສຈາກມືຂອງພິກສຸນີລະ ມາຕຸຄາມຫາລາພໄດ້ຍາກ" ພວກພິກສຸໄດ້ຍິນເສດຖີຄຫບໍດີຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງຮັບອາມິສຈາກມືຂອງພິກສຸນີລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸນັ້ນວ່າ "ພິກສຸ ຊາບວ່າທ່ານຮັບອາມິສຈາກມືຂອງພິກສຸນີ ແມ່ນແທ້ບໍ່" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະອົງຄ໌ຕຣັສຖາມວ່າ "ພິກສຸ ພິກສຸນີນັ້ນ ເປັນຍາຕຂອງທ່ານຫລືບໍ່ແມ່ນຍາຕ" ພິກສຸນັ້ນທູລຕອບວ່າ "ບໍ່ແມ່ນຍາຕ ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄຕຣັສວ່າ "ໂມຂບຸຣຸສ ພິກສຸຜູ້ ບໍ່ແມ່ນຍາຕຍ່ອມບໍ່ຮູ້ສິ່ງທີ່ເຫມາະສົມຫລືບໍ່ເຫມາະສົມ ຂອງທີ່ມີຢູ່ຫລືບໍ່ມີຢູ່ຂອງພິກສຸນີຜູ້ ບໍ່ແມ່ນຍາຕ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງຮັບອາມິສຈາກມືຂອງພິກສຸນີຜູ້ບໍ່ແມ່ນຍາຕລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໖. ປາຕິເທສນີຍກັນທ໌] ໑. ປຖມປາຕິເທສນີຍສິກຂາບົທ ສິກຂາບົທວິພັງຄ໌

ພຣະບັນຍັດ

[໕໕໓] ກໍ ພິກສຸໃດຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງຈາກມືຂອງພິກສຸນີຜູ້ບໍ່ແມ່ນຍາຕຜູ້ເຂົ້າໄປໃນບໍຣິເວນບ້ານ ຄ້ຽວຫລືສັນ ພິກສຸນັ້ນເພິງສະແດງຄືນວ່າ "ທ່ານ ຜູ້ຂ້າຕ້ອງທັມຄືປາຕິເທສນີຍະ ເປັນທັມທີ່ຫນ້າຕຳຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍສະແດງຄືນທັມນັ້ນ"

ເຣື້ອງພິກສຸນີຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໕໕໔] ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ທີ່ຊື່ວ່າ ຜູ້ບໍ່ແມ່ນຍາຕ ຄື ບໍ່ແມ່ນຄົນທີ່ກ່ຽວເນື່ອງກັນທາງມາຣດາຫລືທາງບິດາຕລອດເຈັດຊົ່ວຄົນ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ທີ່ຊື່ວ່າ ບໍຣິເວນບ້ານ ໄດ້ແກ່ ຖນົນ ຕຣອກຕັນ ທາງສີ່ແຍກ(ບ່ອນປະຫານນັກໂທດ) ເຮືອນ

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປລາ ຊີ້ນ

ພິກສຸຮັບປະເຄນໄວ້ດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະສັນ" ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຕິເທສນີຍະທຸກໆຄຳກືນ

ພຣະວິນັຍປິດົກ ມຫາວິພັງຄ໌ [໖. ປາຕິເທສນີຍກັນຫ໌] ໑. ປຖມປາຕິເທສນີຍສິກຂາບົທ ອນາປັຕຕິວາຣ

ບົທພາຊນີຍ໌

ຕິກປາຕິເທສນີຍະ

[໕໕໕] ພິກສຸນີບໍ່ແມ່ນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຮັບຂອງຄ້ຽວຫລືຂອງສັນ ດ້ວຍມືຕົນເອງຈາກມືຂອງພິກສຸນີຜູ້ບໍ່ແມ່ນຍາຕ ຜູ້ເຂົ້າໄປໃນບໍຣິເວນບ້ານ ແລ້ວຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ພິກສຸນີບໍ່ແມ່ນຍາຕ ພິກສຸບໍ່ແນ່ໃຈ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງຈາກມືຂອງພິກສຸນີຜູ້ບໍ່ແມ່ນຍາຕ ຜູ້ເຂົ້າໄປໃນບໍຣິເວນບ້ານ ແລ້ວຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ພິກສຸນີບໍ່ແມ່ນຍາຕ ພິກສຸສຳຄັນວ່າເປັນຍາຕ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງຈາກມືຂອງພິກສຸນີຜູ້ບໍ່ແມ່ນຍາຕ ຜູ້ເຂົ້າໄປໃນບໍຣິເວນບ້ານ ແລ້ວຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ທຸກກຕ

ພິກສຸຮັບຂອງເປັນຍາມກາລິກ ສັຕຕາຫກາລິກ ຍາວຊີວິກເພື່ອເປັນອາຫານ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ພິກສຸຮັບຂອງຄ້ຽວຫລືຂອງສັນຈາກມືຂອງພິກສຸນີຜູ້ອຸປສົມບົທໃນສົງຂ໌ຝ່າຍດຽວ ດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະສັນ" ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ພິກສຸນີເປັນຍາຕ ພິກສຸສຳຄັນວ່າບໍ່ແມ່ນຍາຕ ຕ້ອງອາບັຕິທຸກກຕ

ພິກສຸນີເປັນຍາຕ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ພິກສຸນີເປັນຍາຕ ພິກສຸສຳຄັນວ່າເປັນຍາຕ ບໍ່ຕ້ອງອາບັຕິ

ອນາປັຕຕິວານ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໕໖] ໑. ພິກສຸຮັບຂອງຄ້ຽວຫລືຂອງສັນຈາກມືຂອງພິກສຸນີທີ່ເປັນຍາຕ

໒. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີຜູ້ບໍ່ແມ່ນຍາຕສັ່ງໃຫ້ຖວາຍ ບໍ່ໄດ້ຖວາຍເອງ

໓. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີຖວາຍໂດຍວາງໄວ້

໔. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີຖວາຍໃນອາຣາມ

໕. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີຖວາຍໃນສຳນັກພິກສຸນີ

໖. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີຖວາຍໃນສຳນັກເດັຽຣະຖີຍ໌

໗. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີຖວາຍໃນໂຮງອາຫານ໑

໘. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ພິກສຸນີນຳອອກຈາກບ້ານແລ້ວຖວາຍ

໙. ພິກສຸຮັບຍາມກາລິກ ສັຕຕາຫກາລິກ ຍາວຊີວິກ ທີ່ພິກສຸນີຖວາຍດ້ວຍສັ່ງວ່າ ເມື່ອມີເຫຕຸຜົລນິມົນຕ໌ສັນໄດ້

໑໐. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ສິກຂມານາຖວາຍ

໑໑. ພິກສຸຮັບຂອງຄ້ຽວຫລືຂອງສັນທີ່ສາມເນຣີຖວາຍ

໑໔. ພິກສຸວິກົລຈິຕ
໑໕. ພິກສຸຕົ້ນບັນຍັດ

ປຖມປາຕິເທສນີຍສິກຂາບົທທີ ໑ ຈົບ

ເຊີງອັນຖະ :
໑ ປຕິກົກມນ ໂຮງອາຫາຣ (ປຕິກູກມນໍ ນິທາຣິຕ໌ວາຕິ ອາສນສາລໍ ທາຣິຕ໌ວາ - ວິ. ອ. ໒/໔໑໑/໑໕໓, ປຕິກູກມເນປິຕິ ອາສນສາລາຍມ໌ປິ - ວິ. ອ. ໒/໔໗໔/໑໙໗, ປຕິກູກມນນ໌ຕິ ອາສນສາລາ - ກງຂາ. ຕີກາ ໔໔໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໓. ປາຕິເທສນີຍກັນຫ໌] ໒. ທຸຕິຍປາຕິເທສນີຍສິກຂາບົທ ນິທານວັຕຖຸ

໒. ທຸຕິຍປາຕິເທສນີຍສິກຂາບົທ
ວ່າດ້ວຍການບໍ່ຫ້າມພິກສຸນີຜູ້ຄອຍບົງການ

ເຣື້ອງພິກສຸນີສັພພັຄຄີຍ໌
[໕໕໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເວຣຸວັນ ສຖານທີ່ໃຫ້ເຫຍື່ອກະແຕ ເຂຕກຸງຣາຊຄຶຫ໌ ຄັ້ງນັ້ນ ພິກສຸທັງຫລາຍຕ່າງຮັບນິມົນຕ໌ສັນໃນຕະກູນພວກພິກສຸນີສັພພັຄຄີຍ໌ມາຢືນບົງການເພື່ອພວກພິກສຸສັພພັຄຄີຍ໌ວ່າ "ພວກທ່ານຈົ່ງຖວາຍແກງທີ່ນີ້ ຈົ່ງຖວາຍເຂົ້າສຸກທີ່ນີ້" ພວກພິກສຸສັພພັຄຄີຍ໌ໄດ້ສັນຕາມຕ້ອງການ ພິກສຸເຫລົ່າອື່ນບໍ່ໄດ້ສັນຕາມທີ່ຄິດໄວ້ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງບໍ່ຫ້າມພວກພິກສຸນີຜູ້ຄອຍບົງການລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານບໍ່ຫ້າມພິກສຸນີຜູ້ຄອຍບົງການ ແມ່ນ

ແທ້ບໍ່" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕໍາຫນິວ່າ "ຯລຯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງບໍ່ຫ້າມພິກສຸນີຜູ້ຄອຍບົງກາຣ ລະ ໂມຂບຸຣຸສທັງຫລາຍ ກາຣກະທໍາຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

[໕໕໗] ກໍ ພິກສຸຮັບນິມົນຕ໌ສັນໃນຕະກູນ ຖ້າພິກສຸນີມາຢືນບົງກາຣໃນທີ່ນັ້ນວ່າ "ພວກທ່ານຈົ່ງຖວາຍແກງທີ່ນີ້ ຖວາຍເຂົ້າສຸກທີ່ນີ້" ພິກສຸເຫລົ່ານັ້ນເພິງໄລ່ພິກສຸນີນັ້ນອອກໄປດ້ວຍກ່າວວ່າ "ນ້ອງຍິງ ທ່ານຈົ່ງຫລີກໄປຕຣາບເທົ່າທີ່ພິກສຸທັງຫລາຍຍັງສັນຢູ່" ຖ້າບໍ່ມີພິກສຸແມ່ນຮູບນຶ່ງອ່າກ່າວເພື່ອຈະໄລ່ພິກສຸນີນັ້ນວ່າ "ນ້ອງຍິງ ທ່ານຈົ່ງຫລີກໄປຕຣາບເທົ່າທີ່ພິກສຸທັງຫລາຍຍັງສັນຢູ່" ພິກສຸເຫລົ່ານັ້ນເພິງສະແດງຄືນວ່າ "ທ່ານທັງຫລາຍ ພວກຜູ້ຂ້າຕ້ອງທັມຄືປາຕິເທສນີຍະ ເປັນທັມທີ່ຫນ້າຕໍາຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍສະແດງຄືນທັມນັ້ນ"

ເຣື້ອງພວກພິກສຸນີສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

[໕໕໘] ຄໍາວ່າ ກໍ ພິກສຸຮັບນິມົນຕ໌ສັນໃນຕະກູນ ຄວາມວ່າ ທີ່ຊື່ວ່າຕະກູນ ຫມາຍເຖິງຕະກູນ ໔ ໄດ້ແກ່ ຕະກູນກສັຕຣິຍ໌ ຕະກູນພຣາມນ໌ ຕະກູນແພສຍ໌ ຕະກູນສູທຣ

ຄໍາວ່າ ຮັບນິມົນຕ໌ສັນ ຄື ພິກສຸຮັບນິມົນຕ໌ສັນໂພຊນະ ໕ ຢ່າງໃດຢ່າງນຶ່ງ

ທີ່ຊື່ວ່າ ພິກສຸນີ ໄດ້ແກ່ ມາຕຸຄາມທີ່ອຸປສົມບົທໃນສົງຂ໌ ໒ ຝ່າຍ

ທີ່ຊື່ວ່າ ບົງກາຣ ຄື ພິກສຸນີຄອຍບົງກາຣວ່າ "ພວກທ່ານຈົ່ງຖວາຍແກງທີ່ນີ້ ຖວາຍເຂົ້າສຸກທີ່ນີ້" ຕາມຄວາມເປັນມິຕຣ ຕາມຄວາມເປັນເພື່ອນ ຕາມຄວາມໃກ້ຊິດ ຕາມທີ່ເປັນຜູ້ຮ່ວມພຣະອຸປັຊຍາຍ໌ ຕາມທີ່ເປັນຜູ້ຮ່ວມພຣະອາຈາຣຍ໌ກັນມາ ນີ້ຊື່ວ່າຜູ້ບົງກາຣ

ຄໍາວ່າ ພິກສຸເຫລົ່ານັ້ນ ໄດ້ແກ່ ພິກສຸຜູ້ກໍາລັງສັນ

ຄໍາວ່າ ພິກສຸນີນັ້ນ ໄດ້ແກ່ ພິກສຸນີຜູ້ບົງກາຣ

ພິກສຸເຫລົ່ານັ້ນເພິງໄລ່ພິກສຸນີນັ້ນໄປດ້ວຍກ່າວວ່າ "ນ້ອງຍິງ ທ່ານຈົ່ງຫລີກໄປຕຣາບເທົ່າທີ່ພິກສຸ

ທັງຫລາຍຍັງສັນຢູ່ ຖ້າບໍ່ມີພິກສຸແມ່ນຮູບນຶ່ງວ່າກ່າວ ພິກສຸຮັບມາດ້ວຍຄິດວ່າ "ຈະຄັ້ງວ ຈະສັນ" ຕ້ອງອາບັດທຸກກຕ ສັນ ຕ້ອງອາບັດປາຕິເທສນີຍະທຸກໆຄຳກືນ

ບົທພາຊນີຍ໌

ຕິກປາຕິເທສນີຍະ

[໕໖໐] ມາຕຸຄາມຜູ້ເປັນອຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ບໍ່ຫ້າມທ່ານຜູ້ບົງກາຣ ຕ້ອງອາບັດປາຕິເທສນີຍະ

ມາຕຸຄາມຜູ້ເປັນອຸປສັມບັນ ພິກສຸບໍ່ແນ່ໃຈ ບໍ່ຫ້າມທ່ານຜູ້ບົງກາຣ ຕ້ອງອາບັດປາຕິເທສນີຍະ

ມາຕຸຄາມຜູ້ເປັນອຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ບໍ່ຫ້າມທ່ານຜູ້ບົງກາຣ ຕ້ອງອາບັດປາຕິເທສນີຍະ

ທຸກກຕ

ມາຕຸຄາມຜູ້ອຸປສົມບົທໃນສົງຂ໌ຝ່າຍດຽວບົງກາຣ ພິກສຸບໍ່ຫ້າມ ຕ້ອງອາບັດທຸກກຕ

ມາຕຸຄາມຜູ້ເປັນອນຸປສັມບັນ ພິກສຸສຳຄັນວ່າເປັນອຸປສັມບັນ ຕ້ອງອາບັດທຸກກຕ

ມາຕຸຄາມຜູ້ເປັນອນຸປສັມບັນ ພິກສຸບໍ່ແນ່ໃຈ ຕ້ອງອາບັດທຸກກຕ

ມາຕຸຄາມຜູ້ເປັນອນຸປສັມບັນ ພິກສຸສຳຄັນວ່າເປັນອນຸປສັມບັນ ບໍ່ຕ້ອງອາບັດ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັດ ຄື

[໕໖໑] ໑. ພິກສຸຮັບແລ້ວສັນພັຕຕາຫາຣທີ່ພິກສຸນີໃຊ້ໃຫ້ຖວາຍຂອງຂອງຕົນ ແຕ່ບໍ່ໄດ້ຖວາຍດ້ວຍຕົນເອງ

໒. ພິກສຸຮັບແລ້ວສັນພັຕຕາຫາຣທີ່ພິກສຸນີຖວາຍຂອງຂອງຜູ້ອື່ນ ບໍ່ໄດ້ໃຊ້ໃຫ້ຖວາຍ

໓. ພິກສຸຮັບແລ້ວສັນພັຕຕາຫາຣທີ່ເຂົາຍັງບໍ່ຖວາຍ ແຕ່ພິກສຸນີໃຊ້ໃຫ້ຖວາຍ

໔. ພິກສຸຮັບແລ້ວສັນພັຕຕາຫາຣໃນທີ່ທີ່ເຂົາຍັງບໍ່ຖວາຍ ແຕ່ພິກສຸນີໃຊ້ໃຫ້ຖວາຍ

໕. ພິກສຸຮັບແລ້ວສັນພັຕຕາຫາຣທີ່ພິກສຸນີໃຊ້ໃຫ້ຖວາຍເທົ່າໆກັນທຸກຮູປ

໖. ພິກສຸຮັບແລ້ວສັນພັຕຕາຫາຣທີ່ສິກຂມານາບົງກາຣ

໗. ພິກສຸຮັບແລ້ວສັນພັຕຕາຫາຣທີ່ສາມເນຣີບົງກາຣ

໘. ພິກສຸຮັບແລ້ວສັນພັຕຕາຫາຣທຸກຢ່າງຍົກເວັ້ນໂພຊນະ ໕ ບໍ່ຕ້ອງອາບັດ

໙. ພິກສຸວິກົລຈິຕ
໑໐. ພິກສຸຕົ້ນບັນຍັດ

ທຸຕິຍປາຕິເທສນີຍສິກຂາບທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໖. ປາຕິເທສນີຍກັນທ໌] ໓. ຕຕິຍປາຕິເສນີຍສິກຂາບົທ ນິທານວັຕຖຸ

໓. ຕຕິຍປາຕິເທສນີຍສິກຂາບົທ

ວ່າດ້ວຍການຮັບຂອງຄ້ຽວຂອງສັນໃນທີ່ທີ່ບໍ່ໄດ້ຮັບນິມົນຕ໌ໄວ້ກ່ອນ

ເຣື້ອງຕະກູນນຶ່ງ

[໕໖໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ໃນກຸງສາວັຕຖີ ຕະກູນນຶ່ງທັງ ໔ ຝ່າຍ໑ ມີຄວາມເຫລື້ອມ ໃສ ຈະເຣີນດ້ວຍສັດທາ ແຕ່ຂາດແຄນຊັພຍ໌ ພວກເຂົາສລະຂອງຄ້ຽວ ຂອງບໍຣິໂພຄທັງຫມົດທີ່ ເກີດຂຶ້ນໃນຕະກູນນັ້ນຖວາຍແກ່ພິກສຸທັງຫລາຍຈົນບາງຄັ້ງເຖິງກັບບໍ່ໄດ້ກິນອາຫາຣ ຄົນທັງຫລາຍ ຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງຮັບພັຕຕາຫາຣໂດຍບໍ່ຮູ້ ຈັກປະມານລະ ຄົນເຫລົ່ານີ້ຖວາຍແກ່ພຣະສມນະເຊື້ອສາຍສາກຍບຸຕຣເຫລົ່ານີ້ຈົນບາງຄັ້ງຕົນເອງ ເຖິງກັບບໍ່ໄດ້ກິນອາຫາຣ" ພວກພິກສຸໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ຄັນແລ້ວ ຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກາຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງ ຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສົມມຸດຕະກູນທີ່ຈະເຣີນດ້ວຍສັດທາ ແຕ່ຂາດແຄນ ຊັພຍ໌ໃຫ້ເປັນຕະກູນເສຂະ ດ້ວຍຍັຕຕິທຸຕິຍກັມ ພິກສຸທັງຫລາຍເພິ່ງໃຫ້ເສຂສົມມຸດຢ່າງນີ້ ຄື ພິກສຸຜູ້ສລາດສາມາດເພິ່ງປະກາດໃຫ້ສົງຂ໌ຊາບດ້ວຍຍັຕຕິທຸຕິຍກັມອາຈາວ່າ

ເຊີງອັນຖະ :

໑ ຄຳວ່າ "ທັງ ໔ ຝ່າຍ" ຄືທັງອຸບາສົກແລະອຸບາສິກາເປັນຜູ້ເຫລື້ອມໃສໃນພຣະຣັຕນຕຣັຍ ເປັນ

ໂສດາບັນ (ວິ. ອ. ໒/໕໖໒/໔໔໔)

ພຣະວິນັຍປິດົກ ມຫາວິພັງຄ໌ [໖. ປາຕິເທສນີຍກັນທ໌] ໓. ຕຕິຍປາຕິເສນີຍສິກຂາບົທ ພຣະບັນຍັດ

ກົມອາຈາໃຫ້ເສຂສົມມຸດ

[໕໖໓] ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຕະກູນຊື່ນີ້ຈະເຣີນດ້ວຍສັດທາແຕ່ຂາດແຄນຊັພຍ໌ ຖ້າສົງຂ໌ພ້ອມກັນແລ້ວກໍເພິງໃຫ້ເສຂສົມມຸດແກ່ຕະກູນຊື່ນີ້ ນີ້ເປັນຍັຕຕິ

ທ່ານຜູ້ຈະເຣີນ ຂໍສົງຂ໌ຈົ່ງຟັງຂ້າພະເຈົ້າ ຕະກູນຊື່ນີ້ຈະເຣີນດ້ວຍສັດທາແຕ່ຂາດແຄນຊັພຍ໌ ສົງຂ໌ໃຫ້ເສຂສົມມຸດແກ່ຕະກູນຊື່ນີ້ ທ່ານຮູບໃດເຫັນດ້ວຍກັບກາຣໃຫ້ເສຂສົມມຸດແກ່ຕະກູນຊື່ນີ້ ທ່ານຮູບນັ້ນເພິງນິ່ງ ທ່ານຮູບໃດບໍ່ເຫັນດ້ວຍ ທ່ານຮູບນັ້ນເພິງທັກທ້ວງ ເສຂສົມມຸດສົງຂ໌ໃຫ້ແກ່ຕະກູນນີ້ແລ້ວ ສົງຂ໌ເຫັນດ້ວຍ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືເອົາຄວາມນິ່ງນັ້ນເປັນມຕິຢ່າງນີ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

ກໍພິກສຸໃດຮັບຂອງຄ້ຽວຫລືຂອງສັນໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະເຊັ່ນນັ້ນ ດ້ວຍມືຕົນເອງແລ້ວຄ້ຽວຫລືສັນ ພິກສຸນັ້ນເພິງສະແດງຄືນວ່າ "ທ່ານທັງຫລາຍ ຜູ້ຂ້າຕ້ອງທັມຄືປາຕິເທສນີຍະເປັນທັມທີ່ຫນ້າຕໍາຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍສະແດງຄືນທັມນັ້ນ"

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື່ອງຕະກູນນຶ່ງ ຈົບ

ເຣື້ອງພິກສຸຫລາຍຮູບ

[໕໖໔] ສມັຍນັ້ນ ມີມຫໍຣສົພໃນກຸງສາວັຕຖີ ຄົນທັງຫລາຍນິມົນຕ໌ພິກສຸໄປສັນ ແມ່ນຕະກູນນັ້ນກໍໄດ້ນິມົນຕ໌ພິກສຸເຊັ່ນກັນ ພິກສຸທັງຫລາຍມີຄວາມຢໍາເກງ ຈຶ່ງບໍ່ຮັບນິມົນຕ໌ດ້ວຍຄິດວ່າ "ພຣະຜູ້ມີພຣະພາຄຊົງຫ້າມກາຣຮັບຂອງຄ້ຽວຂອງສັນໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະດ້ວຍມືຂອງຕົນແລ້ວສັນ" ຄົນເຫລົ່ານັ້ນຈຶ່ງພາກັນຕໍາຫນິ ປະນາມ ໂພນທະນາວ່າ "ພວກເຮົາຈະມີຊີວິຕຢູ່ໄປເຮັດ

ຫຍັງ ເພາະພຣະຄຸນເຈົ້າທັງຫລາຍບໍ່ຮັບນິມົນຕ໌ພວກເຮົາ" ພວກພິກສຸໄດ້ຍິນຄົນເຫລົ່ານັ້ນຕຳຫນິ ປະນາມ ໂພນທະນາ ຄັນແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກາຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸທີ່ທາຍົກນິມົນຕ໌ແລ້ວຮັບຂອງຄ້ຽວຫລືຂອງສັນໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະດ້ວຍມືຕົນເອງແລ້ວຄ້ຽວສັນໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ອີກຢ່າງນຶ່ງ ພິກສຸໃດບໍ່ໄດ້ຮັບນິມົນຕ໌ໄວ້ກ່ອນ ຮັບຂອງຄ້ຽວຫລືຂອງສັນໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະເຊັ່ນນັ້ນ ດ້ວຍມືຕົນເອງແລ້ວຄ້ຽວຫລືສັນ ພິກສຸນັ້ນເພິ່ງສະແດງຄືນວ່າ "ທ່ານທັງຫລາຍຜູ້ຂ້າຕ້ອງທັມຄືປາຕິເທສນີຍະ ເປັນທັມທີ່ຫນ້າຕຳຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍສະແດງຄືນທັມນັ້ນ"

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພິກສຸຫລາຍຮູບ ຈົບ

ເຣື້ອງພິກສຸຮູບນຶ່ງ

[໕໖໕] ສມັຍນັ້ນ ພິກສຸຮູບນຶ່ງເປັນພຣະປະຈຳຕະກູນຂອງຕະກູນນັ້ນ ຄັນເວລາເຊົ້າ ທ່ານຄອງອັນຕຣວາສກຖືບາຕຣແລະຈີວອນເຂົ້າໄປເຖິງຕະກູນນັ້ນ ຄັນເຖິງແລ້ວຈຶ່ງນັ່ງເທິງອາສນະທີ່ເຂົາຈັດຖວາຍ ເທື່ອນັ້ນ ພິກສຸນັ້ນເປັນໄຂ້ ພວກຊາວບ້ານໄດ້ກ່າວອາຣາທນາພິກສຸນັ້ນດັ່ງນີ້ວ່າ "ພຣະຄຸນເຈົ້າ ນິມົນຕ໌ທ່ານສັນເຖີດ" ຄັ້ງນັ້ນ ພິກສຸນັ້ນມີຄວາມຢ້ານເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມພິກສຸທີ່ທາຍົກບໍ່ໄດ້ນິມົນຕ໌ໄວ້ກ່ອນຮັບຂອງຄ້ຽວຂອງສັນໃນຕະກູນທີ່ໄດ້ສົມມຸດເປັນເສຂະ" ຈຶ່ງບໍ່ຮັບ ພິກສຸນັ້ນບໍ່ສາມາດຫາບິນທບາຕສັນໄດ້ທັນ ຈຶ່ງບໍ່ໄດ້ສັນພັຕຕາຫາຣ ຄັນໄປວັດຈຶ່ງບອກເຣື້ອງນີ້ໃຫ້ພິກສຸທັງຫລາຍຊາບ ພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກາຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງ

ຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ຮັບຂອງຄ້ຽວຫລືຂອງສັນໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະດ້ວຍມືຕົນເອງແລ້ວຄ້ຽວສັນໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໖໖] ອີກຢ່າງນຶ່ງ ພິກສຸໃດບໍ່ໄດ້ຮັບນິມົນຕ໌ໄວ້ກ່ອນ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະເຊັ່ນນັ້ນດ້ວຍມືຕົນເອງແລ້ວຄ້ຽວຫລືສັນ ພິກສຸນັ້ນເພິງສະແດງຄືນວ່າ "ທ່ານທັງຫລາຍ ຜູ້ຂ້າຕ້ອງທັມຄືປາຕິເທສນີຍະ ເປັນທັມທີ່ຫນ້າຕຳຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍສະແດງຄືນທັມນັ້ນ"

ເຣື້ອງພິກສຸຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

[໕໖໗] ຄຳວ່າ ຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ຄວາມວ່າ ຕະກູນທີ່ຊື່ວ່າອັນສົງຄ໌ສົມມຸດວ່າເປັນເສຂະ ໄດ້ແກ່ ຕະກູນມີສັດທາແຕ່ຂາດແຄນຊັພຍ໌ ສົງຄ໌ຍ່ອມໃຫ້ສົມມຸດຕະກູນເຊັ່ນນີ້ເປັນເສຂະດ້ວຍຍັຕຕິທຸຕິຍກັມ

ຄຳວ່າ ອີກຢ່າງນຶ່ງ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ອີກຢ່າງນຶ່ງ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ฯລฯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະເຊັ່ນນັ້ນ ຄື ໃນຕະກູນທີ່ໄດ້ຮັບສົມມຸດເປັນເສຂະເຊັ່ນນີ້

ທີ່ຊື່ວ່າ ບໍ່ໄດ້ຮັບນິມົນຕ໌ໄວ້ ຄື ພິກສຸທີ່ເຂົາບໍ່ໄດ້ນິມົນຕ໌ເພື່ອສັນໃນວັນນີ້ຫລືມື້ອື່ນນີ້ ແຕ່ເຂົານິມົນຕ໌ ເມື່ອພິກສຸຍ່າງຜ່ານອຸປຈາຣເຮືອນເຂົ້າໄປແລ້ວ ນີ້ຊື່ວ່າບໍ່ໄດ້ຮັບນິມົນຕ໌ໄວ້

ທີ່ຊື່ວ່າ ໄດ້ຮັບນິມົນຕ໌ ຄື ພິກສຸທີ່ເຂົານິມົນຕ໌ເພື່ອສັນໃນວັນນີ້ ຫລືມື້ອື່ນນີ້ ຄືເຂົານິມົນຕ໌ຂນະທີ່ພິກສຸຍັງບໍ່ໄດ້ຍ່າງຜ່ານອຸປຈາຣເຂົ້າໄປ ນີ້ຊື່ວ່າໄດ້ຮັບນິມົນຕ໌ໄວ້

ທີ່ຊື່ວ່າ ບໍ່ເປັນໄຂ້ ຄື ພິກສຸທີ່ສາມາດໄປບິນທບາຕໄດ້

ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັຕຕາຫະກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ

ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປາ ຊີ້ນ
ພິກສຸບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ເປັນໄຂ້ ຮັບໄວ້ດ້ວຍຄິດວ່າ "ຈະຄ້ຽວ ຈະສັນ" ຕ້ອງອາບັຕິທຸກກຕ
ສັນ ຕ້ອງອາບັຕິປາຕິເທສນີຍະທຸກໆຄຳກືນ

ບົທພາຊນີຍ໌

ຕິກປາຕິເທສນີຍະ

[໕໓໗] ຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ພິກສຸສຳຄັນວ່າເປັນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງແລ້ວຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ພິກສຸບໍ່ແນ່ໃຈ ບໍ່ໄດ້ຮັບນິມົນຕ໌ໄວ້ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງແລ້ວຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ພິກສຸສຳຄັນວ່າບໍ່ແມ່ນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ບໍ່ໄດ້ຮັບນິມົນຕ໌ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງແລ້ວຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ທຸກກຕ

ພິກສຸຮັບຂອງທີ່ເປັນຍາມກາລິກ ສັຕຕາຫກາລິກ ຍາວຊີວິກ ເພື່ອເປັນອາຫານ ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິທຸກກຕທຸກໆຄຳກືນ

ບໍ່ແມ່ນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ພິກສຸສຳຄັນວ່າເປັນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ຕ້ອງອາບັຕິທຸກກຕ

ບໍ່ແມ່ນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ບໍ່ແມ່ນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ພິກສຸສຳຄັນວ່າບໍ່ແມ່ນຕະກູນທີ່ໄດ້ຮັບສົມມຸດເປັນເສຂະ ບໍ່ຕ້ອງອາບັຕິ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[໕໓໘] ໑. ພິກສຸຮັບນິມົນຕ໌ໄວ້

໒. ພິກສຸຜູ້ເປັນໄຂ້

໓. ພິກສຸສັນຂອງເປັນເດນຂອງພິກສຸຜູ້ຮັບນິມົນຕ໌ໄວ້ຫລືຂອງພິກສຸຜູ້ເປັນໄຂ້
໔. ພິກສຸສັນອາຫານທີ່ເຂົາຈັດໄວ້ເພື່ອພິກສຸອື່ນໆ
໕. ພິກສຸສັນອາຫານທີ່ເຂົານຳຈາກເຮືອນໄປຖວາຍ
໖. ພິກສຸສັນນິຕຍພັຕ
໗. ພິກສຸສັນສລາກພັຕ
໘. ພິກສຸສັນປັກຂິກພັຕ໑
໙. ພິກສຸສັນອຸໂປສຖິກພັຕ໒
໑໐. ພິກສຸສັນປາຕິປທິກພັຕ໓
໑໑. ພິກສຸສັນຍາມກາລິກ ສັຕຕາຫກາລິກ ຫລືຍາວຊີວິກ ທີ່ເຂົາຖວາຍບອກວ່າເມື່ອມີເຫຕຸຈຳເປັນກໍນິມົນຕ໌ສັນເຖີດ
໑໒. ພິກສຸວິກົລຈິຕ
໑໓. ພິກສຸຕົ້ນບັນຍັດ

ປາຕິເທສນີຍສິກຂາບົທທີ ໓ ຈົບ

ເຊີງອັນຖະ :

໑ ປັກຂິກພັຕ ຄືອາຫານທີ່ເຂົາຖວາຍ ໑໕ ວັນຄັ້ງນຶ່ງ

໒ ອຸໂປສຖິກພັຕ ຄືອາຫານທີ່ເຂົາຖວາຍໃນວັນອຸໂປສົຖ ຄືວັນພຣະນັ້ນເອງ

໓ ປາຕິປທິກພັຕ ຄືອາຫານທີ່ເຂົາຖວາຍໃນວັນຂຶ້ນ-ແຮມ ໑ ຄ່ຳ

ພຣະວິນັຍປິດົກ ມຫາວິພັງຄ໌ [໖. ປາຕິເທສນີຍກັນຫ໌] ໔. ຈຕຸຕຖປາຕິເທສນີຍສິກຂາບົທ ນິທານວັຕຖຸ

໔. ຈຕຸຕຖປາຕິເທສນີຍສິກຂາບົທ

ວ່າດ້ວຍການຮັບຂອງຄ້ຽວຂອງສັນຈາກທາຍົກທີ່ບໍ່ໄດ້ແຈ້ງໄວ້ກ່ອນ

ເຣື້ອງຄົນຮັບໃຊ້ຂອງເຈົ້າສູາກຍະ

[໕໗໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ນິໂຄຣທາຣາມ ເຂຕກຸງກບິລພັສດຸ໌

ແຄວັນສັກກະ ຄັ້ງນັ້ນ ພວກທາສຂອງເຈົ້າສູາກຍະກໍ່ກາຣຮ້າຍ ພວກເຈົ້າຍິງສູາກຍະປຣາຖນາຈະຈັດພັຕຕາຫາຣໄວ້ຖວາຍພິກສຸຜູ້ຢູ່ໃນເສນາສນະປ່າ ພວກທາສຂອງເຈົ້າສູາກຍະໄດ້ຟັງຂ່າວວ່າ ພວກເຈົ້າຍິງສູາກຍະປຣາຖນາຈະຈັດພັຕຕາຫາຣໄວ້ຖວາຍພິກສຸຜູ້ຢູ່ໃນເສນາສນະປ່າ ຈຶ່ງໄປດັກຊຸ່ມທີ່ຫົນທາງ ພວກເຈົ້າຍິງສູາກຍະນຳຂອງຄ້ຽວຂອງສັນອັນປານີຕໄປຍັງເສນາສນະປ່າ ພວກທາສຂອງເຈົ້າສູາກຍະຈຶ່ງອອກມາປຸ້ນແລະທຳຮ້າຍເຈົ້າຍິງສູາກຍະ ພວກເຈົ້າສູາກຍະອອກໄປຈັບພວກໂຈຣໄດ້ພ້ອມຂອງກາງແລ້ວຕຳໜິ ປະນາມໂພນທະນາວ່າ "ຈັ່ງໃດພຣະຄຸນເຈົ້າທັງຫລາຍຈຶ່ງບໍ່ບອກວ່າມີພວກໂຈຣຢູ່ໃນອາຣາມລະ" ພິກສຸທັງຫລາຍໄດ້ຍິນພວກເຈົ້າສູາກຍະຕຳໜິ ປະນາມ ໂພນທະນາ ຄັນແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເພາະເຫຕຸນັ້ນ ເຮົາຈະບັນຍັດສິກຂາບົທແກ່ພິກສຸທັງຫລາຍ ໂດຍອາສັຍອຳນາຈປໂຍດ ໑໐ ປະກາຣ ຄື

໑. ເພື່ອຄວາມຮັບວ່າດີແຫ່ງສົງຂ໌

ຯລຯ

໙. ເພື່ອຄວາມຕັ້ງໝັ້ນແຫ່ງສັທທັມ

໑໐. ເພື່ອເອື້ອເຟື້ອວິນັຍ໑

ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ເຊີງອັນຖະ :

໑ ເບິ່ງຂໍ້ ໕໘໘ ໜ້າ ໙໔ ໃນເຫລັ້ມນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໘. ປາຕິເທສນີຍກັນຫ໌] ໔. ຈຕຸຕຖປາຕິເທສນີຍສິກຂາບົທ ພຣະບັນຍັດ

ພຣະບັນຍັດ

ກໍ ພິກສຸໃດຢູ່ໃນເສນາສນະປ່າທີ່ຮູ້ກັນວ່າໜ້າຫວາດຣະແວງ ມີພັຍໜ້າຢ້ານເຊັ່ນນັ້ນບໍ່ໄດ້ຮັບແຈ້ງໄວ້ກ່ອນຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງໃນອາຣາມແລ້ວສັນ ພິກສຸນັ້ນເພິງສະແດງຄືນວ່າ

"ທ່ານທັງຫລາຍ ຜູ້ຂ້າຕ້ອງທັມຄືປາຕິເທສນີຍະ ເປັນທັມທີ່ຫນ້າຕຳຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍອສະແດງຄືນທັມນັ້ນ" ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງຄິນຮັບໃຊ້ຂອງເຈົ້າສູາກຍະ ຈົບ

ເຣື້ອງພິກສຸຜູ້ເປັນໄຂ້

[໕໗໑] ສມັຍນັ້ນ ພິກສຸຮູບນຶ່ງຜູ້ເປັນໄຂ້ຢູ່ໃນເສນາສນະປ່າ ພວກຊາວບ້ານນຳຂອງຄ້ຽວຂອງສັນໄປຖວາຍ ຄັນແລ້ວໄດ້ກ່າວອາຣາທນາພິກສຸນັ້ນດັ່ງນີ້ວ່າ "ນິມົນຕ໌ສັນເຖີດຂນ້ອຍ" ເທື່ອນັ້ນ ພິກສຸນັ້ນມີຄວາມຢຳເກງຢູ່ວ່າ "ພຣະຜູ້ມີພຣະພາຄຊົງຫ້າມການຮັບຂອງຄ້ຽວຂອງສັນໃນເສນາສນະປ່າດ້ວຍມືຕົນເອງແລ້ວຄ້ຽວສັນ" ຈຶ່ງບໍ່ຍອມຮັບ ທ່ານບໍ່ສາມາດທ່ຽວບິນທະບາຕໄດ້ທັນ ຈຶ່ງບໍ່ໄດ້ສັນພັຕຕາຫານ ທ່ານໄດ້ແຈ້ງເຣື້ອງນັ້ນໃຫ້ພິກສຸທັງຫລາຍຊາບ ຄັນແລ້ວພິກສຸທັງຫລາຍຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະພຸທທານຸຍາຕພິເສສ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ຮັບຂອງຄ້ຽວຂອງສັນໃນເສນາສນະປ່າດ້ວຍມືຕົນເອງແລ້ວຄ້ຽວສັນໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

[໕໗໔] ອີກຢ່າງນຶ່ງ ພິກສຸໃດບໍ່ເປັນໄຂ້ຢູ່ໃນເສນາສນະປ່າທີ່ຮູ້ກັນວ່າຫນ້າຫວາດຣະແວງ ມີພັຍຫນ້າຢ້ານເຊັ່ນນັ້ນ ບໍ່ໄດ້ຮັບແຈ້ງໄວ້ກ່ອນຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງໃນອາຣາມແລ້ວສັນ ພິກສຸນັ້ນພຶງສະແດງຄືນວ່າ "ທ່ານທັງຫລາຍ ຜູ້ຂ້າຕ້ອງທັມຄືປາຕິເທສນີຍະ ເປັນທັມທີ່ຫນ້າຕຳຫນິ ບໍ່ເປັນສັປປາຍະ ຜູ້ຂ້າຂໍອສະແດງຄືນທັມນັ້ນ"

ເຣື້ອງພິກສຸຜູ້ປັນໄຂ້ ຈົບ

ສິກຂາບົທວິພັງຄ໌

[໕໗໘] ຄຳວ່າ ເສນາສນະປ່າ ຄວາມວ່າ ເສນາສນະທີ່ຊື່ວ່າປ່າ ໄດ້ແກ່ ເສນາສນະ໑ ມີຣະຍະ ໕໐໐ ຊົ່ວທນູເປັນຢ່າງຕ່ຳ

ທີ່ຊື່ວ່າ ຫນ້າຫວາດຣະແວງ ຄື ໃນອາຣາມ ອຸປຈາຣແຫ່ງອາຣາມ ປາກົດທີ່ຢູ່ ປາກົດທີ່ກິນ ປາກົດທີ່ຢືນ ປາກົດທີ່ນັ່ງ ປາກົດທີ່ນອນຂອງພວກໂຈຣ

ທີ່ຊື່ວ່າ ມີພັຍຫນ້າຢ້ານ ຄື ໃນອາຣາມ ອຸປຈາຣແຫ່ງອາຣາມ ປາກົດມີມນຸສ຺ຍ໌ຖືກພວກໂຈຣຂ້າ ປາກົດມີມນຸສ຺ຍ໌ຖືກພວກໂຈຣປຸ້ນ ປາກົດມີມນຸສ຺ຍ໌ຖືກພວກໂຈຣທຸບຕີ

ຄຳວ່າ ກໍ. . . ໃດ ຄື ຜູ້ໃດ ຜູ້ເຊັ່ນໃດ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຕຣັສວ່າ ກໍ. . . ໃດ

ຄຳວ່າ ພິກສຸ ມີອທິບາຍວ່າ ຊື່ວ່າພິກສຸ ເພາະເປັນຜູ້ຂໍ ຯລຯ ນີ້ທີ່ພຣະຜູ້ມີພຣະພາຄຊົງປະສົງຄ໌ເອົາວ່າ ພິກສຸ ໃນຄວາມຫມາຍນີ້

ຄຳວ່າ ໃນເສນາສນະເຊັ່ນນັ້ນ ຄື ເສນາສນະເຊັ່ນນີ້

ທີ່ຊື່ວ່າ ບໍ່ໄດ້ຮັບແຈ້ງໄວ້ກ່ອນ ຄື ເຖິງຈະແຈ້ງແກ່ສຫທຣຣມິກທັງ ໕ ນີ້ຊື່ວ່າບໍ່ໄດ້ຮັບແຈ້ງໄວ້ ແຈ້ງ(ໃນທີ່ອື່ນ) ເວັ້ນອາຣາມ ອຸປຈາຣແຫ່ງອາຣາມ ນີ້ກໍຊື່ວ່າບໍ່ໄດ້ຮັບແຈ້ງໄວ້

ເຊີງອັນຖະ :

໑ ຫມາຍເຖິງເສນາສນະທີ່ຢູ່ຫ່າງຈາກຫມູ່ບ້ານປະມານ ໒໕ ເສັ້ນ (ດູ ເຊີງອັນຖະ ຂໍ້ ໕໓໓ ຫນ້າ ໒໔ ໃນເຫລັ້ມນີ້)

ທີ່ຊື່ວ່າ ຮັບແຈ້ງໄວ້ ຄື ຜູ້ໃດຜູ້ນຶ່ງຈະເປັນຍິງຫລືຊາຍກໍຕາມ ມາທີ່ອາຣາມຫລືອຸປຈາຣແຫ່ງອາຣາມ ແລ້ວບອກວ່າ "ພຣະຄຸນເຈົ້າ ທາຍົກທາຍິກາຈະນຳຂອງຄ້ຽວຫລືຂອງສັນມາຖວາຍພິກສຸຊື່ນີ້" ຖ້າທີ່ນັ້ນຫນ້າຫວາດຣະແວງ ພິກສຸເພິງບອກວ່າ "ຫນ້າຫວາດຣະແວງ" ຖ້າທີ່ນັ້ນມີພັຍຫນ້າຢ້ານ ພິກສຸເພິງບອກວ່າ "ມີພັຍຫນ້າຢ້ານ" ຖ້າເຂົາບອກວ່າ "ບໍ່ເປັນຫຍັງ ຂນ້ອຍ ເຂົາຈັກນຳມາເອງ" ພິກສຸຕ້ອງບອກພວກໂຈຣວ່າ "ພວກຊາວບ້ານຈະເຂົ້າມາທີ່ນີ້ ພວກທ່ານຈົ່ງຫລົບໄປ"

ເມື່ອພິກສຸໄດ້ຮັບແຈ້ງດ້ວຍເຂົ້າຕົ້ມແລ້ວ ເຂົານຳເຄື່ອງບໍຣິວາຣເຂົ້າຕົ້ມນັ້ນມາດ້ວຍ ນີ້ຊື່ວ່າໄດ້ຮັບແຈ້ງໄວ້

ເມື່ອພິກສຸໄດ້ຮັບແຈ້ງດ້ວຍພັຕຕາຫາຣແລ້ວ ເຂົານຳເຄື່ອງບໍຣິວາຣພັຕຕາຫາຣນັ້ນມາດ້ວຍ ນີ້ກໍຊື່ວ່າໄດ້ຮັບແຈ້ງໄວ້

ເມື່ອພິກສຸໄດ້ຮັບແຈ້ງດ້ວຍຂອງຄ້ຽວແລ້ວ ເຂົານຳເຄື່ອງບໍຣິວາຣຂອງຄ້ຽວນັ້ນມາດ້ວຍ ນີ້ກໍຊື່ວ່າໄດ້

ຮັບແຈ້ງໄວ້
ເມື່ອພິກສຸໄດ້ຮັບແຈ້ງສະເພາະຕະກູນ ພວກຄົນໃນຕະກູນນັ້ນນຳຂອງຄ້ຽວຂອງສັນມາຖວາຍ ນີ້ກໍຊື່ວ່າໄດ້ຮັບແຈ້ງໄວ້
ເມື່ອພິກສຸໄດ້ຮັບແຈ້ງສະເພາະຫມູ່ບ້ານ ພວກຄົນໃນຫມູ່ບ້ານນັ້ນນຳຂອງຄ້ຽວຂອງສັນມາຖວາຍ ນີ້ກໍຊື່ວ່າໄດ້ຮັບແຈ້ງໄວ້
ເມື່ອພິກສຸໄດ້ຮັບແຈ້ງສະເພາະສມາຄົມ ພວກຄົນໃນສມາຄົມນັ້ນນຳຂອງຄ້ຽວຂອງສັນມາຖວາຍ ນີ້ກໍຊື່ວ່າໄດ້ຮັບແຈ້ງໄວ້
ທີ່ຊື່ວ່າ ຂອງຄ້ຽວ ຄື ຍົກເວັ້ນໂພຊນະ ໕ ຍາມກາລິກ ສັດຕາຫກາລິກ ແລະຍາວຊີວິກ ນອກນັ້ນຊື່ວ່າຂອງຄ້ຽວ
ທີ່ຊື່ວ່າ ຂອງສັນ ໄດ້ແກ່ ໂພຊນະ ໕ ຄື ເຂົ້າສຸກ ຂນົມກຸມມາສ ເຂົ້າຕູ ປາ ຊີ້ນ
ທີ່ຊື່ວ່າ ໃນອາຮາມ ໄດ້ແກ່ ສຳລັບອາຮາມທີ່ມີຮົ້ວລ້ອມ ກຳຫນົດເອົາພາຍໃນອາຮາມ ສຳລັບອາຮາມທີ່ບໍ່ມີຮົ້ວລ້ອມ ກຳຫນົດເອົາອຸປຈາຣອາຮາມ
ທີ່ຊື່ວ່າ ບໍ່ເປັນໄຂ້ ຄື ພິກສຸຜູ້ສາມາດໄປບິນທບາຕສັນໄດ້
ທີ່ຊື່ວ່າ ຜູ້ເປັນໄຂ້ ຄື ພິກສຸຜູ້ບໍ່ສາມາດໄປບິນທບາຕໄດ້
ພິກສຸບໍ່ເປັນໄຂ້ບໍ່ໄດ້ຮັບແຈ້ງ ຮັບປະເຄນດ້ວຍຕັ້ງໃຈວ່າ "ຈະຄ້ຽວ ຈະສັນ" ຕ້ອງອາບັຕິທຸກກຕ ສັນ ຕ້ອງອາບັຕິປາຕິເທສນີຍະທຸກໆຄຳກືນ

ບົທພາຊນີຍ໌

ຕິກປາຕິເທສນີຍະ

[໕໗໔] ບໍ່ໄດ້ຮັບແຈ້ງໄວ້ ພິກສຸສຳຄັນວ່າບໍ່ໄດ້ຮັບແຈ້ງໄວ້ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງໃນອາຮາມ ຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ
ບໍ່ໄດ້ຮັບແຈ້ງໄວ້ ພິກສຸບໍ່ແນ່ໃຈ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງໃນອາຮາມ ຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ
ບໍ່ໄດ້ຮັບແຈ້ງໄວ້ ພິກສຸສຳຄັນວ່າບໍ່ໄດ້ຮັບແຈ້ງໄວ້ ບໍ່ເປັນໄຂ້ ຮັບຂອງຄ້ຽວຫລືຂອງສັນດ້ວຍມືຕົນເອງໃນອາຮາມ ຄ້ຽວຫລືສັນ ຕ້ອງອາບັຕິປາຕິເທສນີຍະ

ທຸກກຕ

ພິກສຸຮັບປະເຄນຍາມກາລິກ ສັດຕາຫກາລິກ ຍາວຊີວິກ ເພື່ອເປັນອາຫາຣ ຕ້ອງອາບັຕິທຸກກຕ ສັນ

ຕ້ອງອາບັຕິທຸກກຕຸທຸກໆຄຳກືນ

ໄດ້ຮັບແຈ້ງໄວ້ແລ້ວ ພິກສຸສຳຄັນວ່າບໍ່ໄດ້ຮັບແຈ້ງໄວ້ ຕ້ອງອາບັຕິທຸກກຕ

ໄດ້ຮັບແຈ້ງໄວ້ແລ້ວ ພິກສຸບໍ່ແນ່ໃຈ ຕ້ອງອາບັຕິທຸກກຕ

ໄດ້ຮັບແຈ້ງໄວ້ແລ້ວ ພິກສຸສຳຄັນວ່າໄດ້ຮັບແຈ້ງໄວ້ ບໍ່ຕ້ອງອາບັຕິ

ພຣະວິນັຍປິດົກ ມຫາວິພັງຄ໌ [໖. ປາຕິເທສນີຍກັນຫ໌] ບົທສຣຸປ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

[៥໗៥] ໑. ພິກສຸທີ່ໄດ້ຮັບແຈ້ງໄວ້ກ່ອນ

໒. ພິກສຸຜູ້ເປັນໄຂ້

໓. ພິກສຸທີ່ໄດ້ຮັບແຈ້ງໄວ້ຫລືພິກສຸສັ່ນຂອງເປັນເດນ ຂອງພິກສຸຜູ້ເປັນໄຂ້

໔. ພິກສຸຮັບຂອງນອກອາຣາມມາສັ່ນໃນອາຣາມ

៥. ພິກສຸສັ່ນຮາກໄມ້ ເປືອກໄມ້ ໃບໄມ້ ດອກໄມ້ ຫລືຜົລໄມ້ທີ່ເກີດໃນທີ່ນັ້ນ

໖. ພິກສຸສັ່ນຂອງເປັນຍາມກາລິກ ສັຕຕາຫກາລິກ ແລະຍາວຊີວິກ ເມື່ອມີເຫຕຸຈຳເປັນ

໗. ພິກສຸວິກົລຈິຕ

໘. ພິກສຸຕົ້ນບັນຍັດ

ປາຕິເທສນີຍະສິກຂາບົທທີ ໔ ຈົບ

ບົທສຣຸບ

ທ່ານທັງຫລາຍ ທັມຄືປາຕິເທສນີຍະ ໔ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຂ້າພະເຈົ້າຂໍຖາມທ່ານທັງຫລາຍ ໃນທັມຄືປາຕິເທສນີຍະ ໔ ສິກຂາບົທເຫລົ່ານັ້ນວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ ວ່າ "ທ່ານທັງຫລາຍບໍຣິສຸດທ໌ແລ້ວຫລື"

ທ່ານທັງຫລາຍບໍຣິສຸດທ໌ແລ້ວໃນທັມຄືປາຕິເທສນີຍະ ໔ ສິກຂາບົທນີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ປາຕິເທສນີຍກັນທ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໑. ປຣິມັນທູລວັຄ ສິກຂາບົທທີ ໑

໗. ເສຂິຍກັນທ໌

ທ່ານທັງຫລາຍ ທັມຄືເສຂິຍະທັງຫລາຍເຫລົ່ານີ້ມາເຖິງອາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ໆຕາມລຳດັບ

໑. ປຣິມັນທູລວັຄ

ຫມວດວ່າດ້ວຍການນຸ່ງຫົ່ມຮຽບຮ້ອຍ

ສິກຂາບົທທີ ໑

ເຣື້ອງພຣະສັພພັຄຄີຍ໌

[໕໗໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຄອງອັນຕຣວາສກຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງຄອງອັນຕຣວາສກຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ເຫມືອນພວກຄຣືຫັສຖ໌ຜູ້ບໍຣິໂພຄກາມລະ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຄອງອັນຕຣວາສກຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸສັພພັຄຄີຍ໌ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເຣື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງໃຫ້ປະຊຸມສົງຄ໌ ຕຣັສຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຄອງອັນຕຣວາສກຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້

ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງຄອງອັນຕຣວາສກຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືທຳຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

໑. ເພິງທຳຄວາມສຳນຶກວ່າ ເຮົາຈັກຄອງອັນຕຣວາສກໃຫ້ຮຽບຮ້ອຍ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງຄອງອັນຕຣວາສກໃຫ້ຮຽບຮ້ອຍ ຄືປົດບໍຣິເວນສາຍບື ບໍຣິເວນເຂົ່າ

ພິກສຸໃດບໍ່ເອື້ອເຟື້ອ ຄອງອັນຕຣວາສກຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ

໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້

໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໑. ປຣິມັນຫລວັຄ ສິກຂາບົທທີ ໒

ສິກຂາບົທທີ ໒

ເຣື້ອງພຣະສັພພັຄຄີຍ໌

[໕໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຄອງອຸຕຕຣາສົງຄ໌ຍ້ອຍຂ້າງຫນ້າແດ່ ຂ້າງຫລັງແດ່ ຯລຯ໑

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກຄອງອຸຕຕຣາສົງຄ໌ໃຫ້ຮຽບຮ້ອຍ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງຄອງອຸຕຕຣາສົງຄ໌ໃຫ້ຮຽບຮ້ອຍ ຄື ທຳຊາຍຈີວອນທັງສອງໃຫ້ສເມີກັນ
ພິກສຸໃດບໍ່ເອື້ອເຟື້ອ ຄອງອຸຕຕຣາສົງຄ໌ຍ້ອຍຂ້າງຫນ້າແດ່ ຍ້ອຍຂ້າງຫລັງແດ່ ຕ້ອງອາບັຕິທຸກກຏ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໔. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດ ຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ເຊີງອັນຖະ :

໑ ຂໍ້ຄວາມທີ່ຫາຍໄວ້ມີຄວາມເຕັມເຫມືອນປຣິມັນທລວັຄ ສິກຂາບົທທີ ໑ ຂໍ້ ໕໗໖ ປ່ຽນແຕ່ເນື້ອ ຄວາມສະເພາະຂອງແຕ່ລະສິກຂາບົທ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໑. ປຣິມັນທລວັຄ ສິກຂາບົທທີ ໓

ສິກຂາບົທທີ ໓

ເຣື້ອງພຣະສັພພັຄຄີຍ໌

[໕໗໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງເປີດກາຍໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໒. ເພິງສຳນຶກວ່າ ເຮົາຈັກປົກປິດກາຍໃຫ້ດີ ໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງປົກປິດກາຍໃຫ້ດີ ໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງເປີດກາຍໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ

໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້

໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໑. ປຣິມັນທລວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໕໗໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງເປີດກາຍໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກປົກປິດກາຍໃຫ້ດີ ນັ່ງໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງປົກປິດກາຍໃຫ້ດີນັ່ງໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງເປີດກາຍໃນບໍຣິເວນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໔. ພິກສຸບໍ່ມີສຕິ

໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້

໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ

໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໑. ປຣິມັນທລວັຄ ສິກຂາບົທທີ ໕

ສິກຂາບົທທີ ໕

ເຣື້ອງພຣະສັພພັຄຄີຍ໌

[໕໘໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງຄະນອງມືແດ່ ຄະນອງຕີນແດ່ ໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຮົາຈັກສຳຣວມດີ ໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງສຳຣວມດີ ໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຄະນອງມືແດ່ ຄະນອງຕີນແດ່ ໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ

໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້

໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ

໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຖ໌] ໑. ປຣິມັນທລວັຄ ສິກຂາບົທທີ ໖

ສິກຂາບົທທີ ໖

ເຣື້ອງພຣະສັພພັຄຄີຍ໌

[໕໗໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຄະນອງມືແດ່ ຄະນອງຕີນແດ່ ນັ່ງໃນບໍ ຣິເວນບ້ານ ຯລຯ

ພຣະບັນຍັດ

໖. ເພິງທຳຄວາມສຳນຶກວ່າ ເຮົາຈັກສຳຣວມດີ ນັ່ງໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງສຳຣວມດີ ນັ່ງໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຄະນອງມືແດ່ ຄະນອງຕີນແດ່ ນັ່ງໃນບໍຣິເວນບ້ານ ຕ້ອງອາບັຕິທຸກກາຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໑. ປຣິມັນທລວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເຣື້ອງພຣະສັພພັຄຄີຍ໌

[໕໗໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງເບິ່ງດູທີ່ນັ້ນໆໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກທອດຈັກສຸລົງ ໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງທອດຈັກສຸລົງ ເບິ່ງດູຊື່ອແອກ ໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງເບິ່ງດູທີ່ນັ້ນໆໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກາຕ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໑. ປຣິມັນຫລວັຄ ສິກຂາບົທທີ ໘

ສິກຂາບົທທີ ໘
ເຣື້ອງພຣະສັພພັຄຄີຍ໌
[໕໘໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ນັ່ງເບິ່ງດູທີ່ນັ້ນໆໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ
໘. ເພິງສຳນຶກວ່າ ເຮົາຈັກມີຈັກສຸທອດລົງ ນັ່ງໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌
ພິກຂຸເພິງມີຈັກສຸທອດລົງ ເບິ່ງດູຊົ່ວແອກ ນັ່ງໃນບໍຣິເວນບ້ານ
ພິກຂຸໃດບໍ່ເອື້ອເຟື້ອ ນັ່ງເບິ່ງດູທີ່ນັ້ນໆໃນບໍຣິເວນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິຎົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໑. ປຣິມັນຫລວັຄ ສິກຂາບົທທີ ໘

ສິກຂາບົທທີ ໘

ເອື້ອງພຣະສັພພັຄຄີຍ໌

[໕໗໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂດກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງເວິກຜ້າໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໘. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ເວິກຜ້າ ໄປໃນບໍຣິເວນບ້ານ

ເອື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງເວິກຜ້າ ໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ເວິກຜ້າຂຶ້ນຂ້າງດຽວຫລືທັງສອງຂ້າງ ໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກ ກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດຂ້ອງ ໖. ພິກສຸວິກລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໘ ຈົບ

ພຣະວິນັຍປິຎົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໑. ປຣິມັນຫລວັຄ ສິກຂາບົທທີ ໑໐

ສິກຂາບົທທີ ໑໐

ເຣື້ອງພຣະສັພພັຄຄີຍ໌

[໕໗໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງເວີກຜ້າໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງເວີກຜ້າໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງເວີກຜ້າໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງເວີກຜ້າຂຶ້ນຂ້າງດຽວຫລືທັງສອງຂ້າງໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ

ປຣິມັນທລວັຄທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໒. ອຸຊຊັຄຄິກວັຄ ສິກຂາບົທທີ ໑

໒. ອຸຊຊັຄຄິກວັຄ

ຫມວດວ່າດ້ວຍກາຣຫົວ

ສິກຂາບົທທີ ໑

ເຣື້ອງພຣະສັພພັຄຄີຍ໌

[໕໘໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຫົວດັ່ງໄປໃນບ່ອນບ້ານ ຯລຯ

ພຣະບັນຍັດ

໑. ເພິງທຳຄວາມສຳນືກວ່າ ເຮົາຈັກບໍ່ຫົວດັ່ງ ໄປໃນບ່ອນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງຫົວດັ່ງ ໄປໃນບ່ອນບ້ານ
ພິກສຸໃດບໍ່ເອື້ອເຟື້ອ ຫົວດັ່ງ ໄປໃນບ່ອນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸພຽງຍິ້ມແຍ້ມ ເມື່ອມີເຣື້ອງຂບຂັນ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໔. ອຸຊຊັຄຄິກວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໕໘໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງຫົວດັ່ງໃນບ່ອນບ້ານ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນືກວ່າ ເຮົາຈັກບໍ່ນັ່ງຫົວດັ່ງໃນບ່ອນບ້ານ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງຫົວດັ່ງໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງຫົວດັ່ງໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸພຽງຍິ້ມແຍ້ມ ເມື່ອມີເຣື່ອງຂບຂັນ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໒. ອຸຊຊັຄຄິວັຄ ສິກຂາບົທທີ ໓

ສິກຂາບົທທີ ໓

ເຣື່ອງພຣະສັພພັຄຄີຍ໌

[໕໘໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຕະໂກນສຽງດັ່ງໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໓. ເພິງທຳຄວາມສຳນຶກວ່າ ເຮົາຈັກເວົ້າສຽງເບົາ ໄປໃນບໍຣິເວນບ້ານ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງເວົ້າສຽງເບົາໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຕະໂກນສຽງດັ່ງໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໒. ອຸຊຊັຄຊິກວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໕໘໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງຕະໂກນສຽງດັ່ງໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກນັ່ງເອົ້າສຽງເບົາໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງນັ່ງເອົ້າສຽງເບົາໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງຕະໂກນສຽງດັ່ງໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໒. ອຸຊຸຊັຄຄິກວັຄ ສິກຂາບົທທີ ๕

ສິກຂາບົທທີ ๕
ເຣື້ອງພຣະສັພພັຄຄີຍ໌
[๕໙໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງໂຄ້ງກາຍໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ
๕. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຍ່າງໂຄ້ງກາຍໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌
ພິກສຸບໍ່ເພິງຍ່າງໂຄ້ງກາຍໄປ ເພິງຍ່າງປະຄອງກາຍ໑ ໄປໃນບໍຣິເວນບ້ານ
ພິກສຸໃດບໍ່ເອື້ອເຟື້ອ ຍ່າງໂຄ້ງກາຍໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ๕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ๕ ຈົບ

ເຊີງອັນຖະ :
໑ ປະຄອງກາຍ ຄືບໍ່ຍ່າງໄຫວກາຍ ຍ່າງກາຍຕຣົງ ໄປດ້ວຍອິຣິຍາບົຖສມ່ຳສເມີ (ວິ. ອ. ໒/ ๕໙໐/໔๕໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໔. ອຸຊຸຊັຄຊິກວັຄ ສິກຂາບົທທີ ໖

ສິກຂາບົທທີ ໖

ເລື້ອງພຣະສັພພັຄຄີຍ໌

[໕໙໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງໂຄ້ງກາຍໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໖. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງໂຄ້ງກາຍໃນບໍຣິເວນບ້ານ

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງໂຄ້ງກາຍ ເພິງນັ່ງປະຄອງກາຍ໑ ໃນບໍຣິເວນບ້ານ
ພິກສຸໃດບໍ່ເອື້ອເຟື້ອ ນັ່ງໂຄ້ງກາຍໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໖ ຈົບ

ເຊີງອັນຖະ :

໑ ນັ່ງປະຄອງກາຍ ຄືບໍ່ນັ່ງໄຫວກາຍ ນັ່ງກາຍຕຮງ ນັ່ງດ້ວຍອິຣິຍາບົຖສມ່ຳສເມີ (ວິ. ອ. ໔/໙໐/໔໕໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຖ໌] ໔. ອຸຊຊັຄຊິກວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເຣື້ອງພຣະສັພພັຄຄີຍ໌

[໕໘໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງແກວ່ງແຂນຫ້ອຍແຂນໄປໃນບໍຣິ ເວນບ້ານ ຯລຯ

ພຣະບັນຍັດ

໗. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ຍ່າງແກວ່ງແຂນໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງແກວ່ງແຂນໄປ ເພິ່ງຍ່າງປະຄອງແຂນ໑ ໄປໃນບໍຣິເວນບ້ານ
ພິກສຸໃດບໍ່ເອື້ອເຟື້ອ ແກວ່ງແຂນ ຍ່າງຫ້ອຍແຂນໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ເຊີງອັນຖະ :

໑ ຍ່າງປະຄອງແຂນ ຄືບໍ່ຍ່າງສັ່ນແຂນ (ວິ. ອ. ໒/໕໘໔/໔໕໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຖ໌] ໔. ອຸຊຊັຄຊິກວັຄ ສິກຂາບົທທີ ໘

ສິກຂາບົທທີ ໘

ເອື້ອງພຣະສັພພັຄຄີຍ໌

[໕໒໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງແກວ່ງແຂນ ຫ້ອຍແຂນໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງແກວ່ງແຂນໃນບໍຣິເວນບ້ານ

ເອື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງແກວ່ງແຂນ ເພິງນັ່ງປະຄອງແຂນໃນບໍຣິເວນບ້ານ
ພິກສຸໃດບໍ່ເອື້ອເຟື້ອ ນັ່ງແກວ່ງແຂນຫ້ອຍແຂນໃນບໍຣິເວນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໒. ອຸຊຊັຄຄິກວັຄ ສິກຂາບົທທີ ໘

ສິກຂາບົທທີ ໘

ເອື້ອງພຣະສັພພັຄຄີຍ໌

[໕໒໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງສັ່ນຫົວເຮັດຄໍພັບໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໙. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຍ່າງສັ່ນຫົວເຂົ້າໄປໃນບ່ຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງຍ່າງໂຄລງສີສະໄປ ເພິງຍ່າງປະຄອງສີສະ໑ ໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງສັ່ນຫົວເຂົ້າໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໙ ຈົບ

ເຊີງອັນຖະ :

໑ ປະຄອງສີສະ ຄືຕັ້ງສີສະຕຣງ ບໍ່ໄຫວເອນ (ວິ. ອ. ໒/໕໙໔/໔໕໐)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໒. ອຸຊຊັຄຊິກວັຄ ສິກຂາບົທທີ ໑໐

ສິກຂາບົທທີ ໑໐
ເຣື້ອງພຣະສັພພັຄຄີຍ໌

[៥໙៥] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງສັ່ນຫົວເຂົ້າໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງສັ່ນຫົວເຂົ້າໄປໃນບໍຣິເວນບ້ານ

ເລື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງໂຄລງສີສະ ເພິງນັ່ງປະຄອງສີສະໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງສັ່ນຫົວເຮັດຄໍພັບໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໔. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກິລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ

ອຸຊຊັຄຊິກວັຄທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໓. ຂັມພຸຕກວັຄ ສິກຂາບົທທີ ໑

໓. ຂັມພຸຕກວັຄ

ຫມວດວ່າດ້ວຍການຄ້ຳແອວ

ສິກຂາບົທທີ ໑

ເລື້ອງພຣະສັພພັຄຄີຍ໌

[໕໘໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງຄ້ຳແອວໄປໃນບໍຣິເວນບ້ານ ຯລ

ພຣະບັນຍັດ

໑. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຍ່າງຄ້ຳແອວໄປໃນບໍຣິເວນບ້ານ

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງຍ່າງຄ້ຳແອວໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງຄ້ຳແອວຂ້າງດຽວຫລືສອງຂ້າງໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກດ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໓. ຂັນພຕກວັຄ ສິກຂາບົທທີ ໒

ສິກຂາບົທທີ ໒

ເຣື້ອງພຣະສັພພັຄຄີຍ໌

[໕໙໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງຄ້ຳແອວໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໒. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງຄ້ຳແອວໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງຄ້ຳແອວໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງຄ້ຳແອວຂ້າງດຽວຫລືສອງຂ້າງໃນບໍຣິເວນບ້ານ ຕ້ອງອາບັຕິທຸກກດ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໓. ຂັມພກວັຄ ສິກຂາບົທທີ ໓

ສິກຂາບົທທີ ໓

ເຣື້ອງພຣະສັພພັຄຄີຍ໌

[໕໙໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງກຸມຫົວໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໓. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຍ່າງກຸມຫົວໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງຍ່າງກຸມຫົວໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງກຸມຫົວໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໓. ຂັນພຕາກວັຕ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໕໙໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງກຸມຫົວໃນບ່ອນບ້ານ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງກຸມຫົວໃນບ່ອນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງກຸມຫົວໃນບ່ອນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງກຸມຫົວໃນບ່ອນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໓. ຂັນພຕາກວັຕ ສິກຂາບົທທີ ໕

ສິກຂາບົທທີ ໕

ເຣື້ອງພຣະສັພພັຄຄີຍ໌

[໘໐໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງຢ່ອງໆໄປໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຍ່າງຢ່ອງໆໄປໃນບໍຣິເວນບ້ານ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງຍ່າງຢ່ອງໆໄປໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງຢ່ອງໆໄປໃນບໍຣິເວນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໓. ຂັນທົກວັຄ ສິກຂາບົທທີ ໖

ສິກຂາບົທທີ ໖

ເຣື້ອງພຣະສັພພັຄຄີຍ໌

[໘໐໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງຮັດເຂົ່າໃນບໍຣິເວນບ້ານ ຯລຯ

ພຣະບັນຍັດ

໖. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ນັ່ງຮັດເຂົ່າໃນບໍຣິເວນບ້ານ

ເລື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງນັ່ງຮັດເຂົ່າໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງຮັດເຂົ່າດ້ວຍມືຫລືດ້ວຍຜ້າໃນບໍຣິເວນບ້ານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຢູ່ໃນທີ່ພັກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຖ໌] ໓. ຂັມພຕກວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເລື່ອງພຣະສັພພັຄຄີຍ໌

[໖໐໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຮັບບິນທບາຕໂດຍບໍ່ໃຫ້ຄວາມສຳຄັນ ເຮັດຄືກັບຈະຖິ້ມ ຯລຯ

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກຮັບບິນທບາຕໂດຍເຄົາຣົພ

ເລື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງຮັບບິນທບາຕໂດຍເຄົາຣົພ

ພິກສຸໃດບໍ່ເອື້ອເຟື້ອ ຮັບບິນທບາຕໂດຍບໍ່ເຄົາຣົພ ເຮັດຄືກັບຈະຖິ້ມ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໓. ຂັນພຕກວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເຣື້ອງພຣະສັພພັຄຄີຍ໌

[໖໐໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ຮັບບິນທບາຕ ເບິ່ງດູບ່ອນອື່ນໆຢູ່ ເມື່ອເຂົາກຳລັງເຄັ່ງ(ບິນທບາຕ)ແດ່ ເສັດໄປແລ້ວແດ່ ກໍຍັງບໍ່ຮູ້ສຶກຕົວ ຯລຯ

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກໃຫ້ຄວາມສຳຄັນໃນບາຕຣຂນະຮັບບິນທບາຕ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກຂຸເພິງໃຫ້ຄວາມສຳຄັນໃນບາຕຣຂນະຮັບບິນທບາຕ

ພິກຂຸໃດບໍ່ເອື້ອເຟື້ອ ຮັບບິນທບາຕເບິ່ງດູບ່ອນອື່ນໆຢູ່ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຖ໌] ໓. ຂັນພຕກວັຄ ສິກຂາບົທທີ ໘

ສິກຂາບົທທີ ໘

ເຣື້ອງພຣະສັພພັຄຄີຍ໌

[໖໐໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເມື່ອຮັບບິນທບາຕ ຮັບເອົາແຕ່ແກງເທົ່ານັ້ນ ຯລຯ

ພຣະບັນຍັດ

໘. ເພິງທຳຄວາມສຳນຶກວ່າ ເຮົາຈັກຮັບບິນທບາຕພໍເຫມາະກັບແກງ໑

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ແກງ ໄດ້ແກ່ ແກງ ໒ ຊນິດ ຄື (໑) ແກງຖົ່ວຂຽວ (໒) ແກງຖົ່ວເຫລືອງ ທີ່ໃຊ້ມືຫຍິບໄດ້

ພິກສຸເພິງຮັບບິນທບາຕພໍເຫມາະກັບແກງ

ພິກສຸໃດບໍ່ເອື້ອເຟື້ອ ເລືອກຮັບສະເພາະແກງຫລາຍ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຮັບແກງຫລາຍຢ່າງ ໖. ພິກສຸຮັບຂອງຍາຕ ໗. ພິກສຸຮັບຂອງຜູ້ປວາຣນາ ໘. ພິກສຸຮັບເພື່ອຜູ້ອື່ນ ໙. ພິກສຸຈ່າຍມາດ້ວຍຊັພຍ໌ຂອງຕົນ ໑໐. ພິກສຸຜູ້ມີເຫຕຸຂັດຂ້ອງ ໑໑. ພິກສຸວິກົລຈິຕ ໑໒. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໘ ຈົບ

ເຊີງອັນຖະ :

໑ ປິນ຺ທ຺ບາຕ ຄື ພັຕຕາຫາຣທີ່ມີແກງຜສົມຢູ່ປະມານ ໑ ໃນ ໔ ສ່ວນ ຄື ປິນ຺ທ຺ບາຕ ໓ ສ່ວນ ແກງ ໑ ສ່ວນ ຊື່ວ່າ ປິນ຺ທ຺ບາຕພໍເຫມາະກັບແກງ (ວິ. ອ. ໒/ຝ໐໔/໔໕໑)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນ຺ທ໌] ໓. ຂັນພຕກວັຄ ສິກຂາບົທທີ ໑໐

ສິກຂາບົທທີ ໑໐
ເຣື້ອງພຣະສັພພັຄຄີຍ໌

[ຝ໐໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖປິນ຺ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຮັບປິນ຺ທ຺ບາຕລົ້ນຂອບປາກບາຕຣ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຈັກຮັບປິນ຺ທ຺ບາຕສເມີຂອບປາກບາຕຣ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງຮັບປິນ຺ທ຺ບາຕສເມີຂອບປາກບາຕຣ
ພິກສຸໃດບໍ່ເອື້ອເຟື້ອ ຮັບປິນ຺ທ຺ບາຕຈົນລົ້ນຂອບປາກບາຕຣ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ມີເຫຕຸຂັດຂ້ອງ ໕. ພິກສຸວິກົລຈິຕ ຝ. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ
ຂັນພກຕວັຄທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໔. ສັກກັຈຈວັຄ ສິກຂາບົທທີ ໑

໔. ສັກກັຈຈວັຄ

ຫມວດວ່າດ້ວຍຄວາມເຄົາຣົພ

ສິກຂາບົທທີ ໑

ເຣື້ອງພຣະສັພພັຄຄີຍ໌

[໕໐໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນບິນທບາຕໂດຍບໍ່ເຄົາຣົພ ເຮັດຄືບໍ່ຢາກຈະສັນ ຯລຯ

ພຣະບັນຍັດ

໑. ເພິງທຳຄວາມສຳນຶກວ່າ ເຮົາຈັກສັນບິນທບາຕໂດຍເຄົາຣົພ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງສັນບິນທບາຕໂດຍເຄົາຣົພ

ພິກສຸໃດບໍ່ເອື້ອເຟື້ອ ສັນບິນທບາຕໂດຍບໍ່ເຄົາຣົພ ເຮັດຄືບໍ່ຢາກຈະສັນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ສິກຂາບົທທີ ໒

ເຣື້ອງພຣະສັພພັຄຄີຍ໌

[໖໐໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນບິນທບາຕ ຫລຽວເບິ່ງໄປທີ່ນັ້ນໆ ເມື່ອເຂົາກຳລັງເຖັ່ງ(ບິນທບາຕ) ແລ້ວເສັດໄປແລ້ວ ກໍຍັງບໍ່ຮູ້ສຶກຕົວ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກໃຫ້ຄວາມສຳຄັນໃນບາຕຣຂນະສັນບິນທບາຕ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງໃຫ້ຄວາມສຳຄັນໃນບາຕຣ ຂນະສັນບິນທບາຕ

ພິກສຸໃດບໍ່ເອື້ອເຟື້ອ ສັນບິນທບາຕຫລຽວເບິ່ງໄປທີ່ອື່ນໆ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ສິກຂາບົທທີ ໓

ເຣື້ອງພຣະສັພພັຄຄີຍ໌

[໖໐໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນບິນທບາຕເຈາະລົງໃນທີ່ນັ້ນໆຯລຯ

ພຣະບັນຍັດ

໓. ເພິງທຳຄວາມສຳນຶກວ່າ ເຮົາຈັກສັນບິນທບາຕໄປຕາມລຳດັບ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິ່ງສັນບິນທູບາຕໄປຕາມລໍາດັບ

ພິກສຸໃດບໍ່ເອື້ອເຟື້ອ ສັນບິນທູບາຕເຈາະລົງໃນທີ່ນັ້ນໆ ຕ້ອງອາບັຕິທຸກກາຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ៣. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຕັກໃຫ້ຜູ້ອື່ນຈຶ່ງເອົາແຫວ່ງ ៦. ພິກສຸຕັກເຄິ່ງລົງໃນພາຊນະອື່ນຈຶ່ງເອົາແຫວ່ງ ៧. ພິກສຸຕັກແກງອ່ອມ ៨. ພິກສຸຜູ້ມີເຫຕຸຂັດຂ້ອງ ៩. ພິກສຸວິກົລຈິຕ ໑໐. ພິກສຸຕົ້ນບັນຍັດ

ສິກຂາບົທທີ ៣ ຈົບ

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[៦໐៩] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເມື່ອສັນບິນທູບາຕ ສັນສະເພາະແກງມາກ ຯລຯ

ພຣະບັນຍັດ

໔. ເພິ່ງທໍາຄວາມສໍານຶກວ່າ ເຮົາຈັກສັນບິນທູບາຕພໍເໝາະກັບແກງ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ແກງ ໄດ້ແກ່ ໒ ຊນິດ ຄື (໑) ແກງຖົ່ວຂຽວ (໒) ແກງຖົ່ວເຫລືອງທີ່ໃຊ້ມືຫຍິບໄດ້

ພິກສຸເພິ່ງສັນບິນທູບາຕພໍເໝາະກັບແກງ

ພິກສຸໃດບໍ່ເອື້ອເຟື້ອ ສັນສະເພາະແກງຫລາຍ ຕ້ອງອາບັຕິທຸກກາຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສັນແກງຫລາຍຢ່າງ ໖. ພິກສຸສັນຂອງຍາຕ ໗. ພິກສຸສັນຂອງຜູ້ປວາຣນາ ໘. ພິກສຸສັນເພື່ອຜູ້ອື່ນ ໙. ພິກສຸຈ່າຍມາດ້ວຍຊັພຍ໌ຂອງຕົນ ໑໐. ພິກສຸຜູ້ມີເຫຕຸຂັດຂ້ອງ ໑໑. ພິກສຸວິກົລຈິຕ ໑໒. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ສິກຂາບົທທີ ໕

ເຣື້ອງພຣະສັພພັຄຄີຍ໌

[໖໑໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນບິນທບາຕ ຫຍຸມລົງແຕ່ຍອດ ฯລฯ

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຣົາຈັກບໍ່ສັນບິນທບາຕຫຍຸມລົງແຕ່ຍອດ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນບິນທບາຕຫຍຸມລົງແຕ່ຍອດ

ພິກສຸໃດບໍ່ເອື້ອເຟື້ອ ສັນບິນທບາຕຫຍຸມລົງແຕ່ຍອດ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸກວາດຕະລ່ອມເຂົ້າທີ່ເຫລືອຮວມເປັນຄຳແລ້ວສັນ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕ ຈົບ

ສິກຂາບົທທີ ໖
ເຣື້ອງພຣະສັພພັຄຄີຍ໌

[໖໑໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ໃຊ້ເຂົ້າສຸກເຕັງແກງແດ່ ກັບເຂົ້າແດ່ ເພາະຢາກໄດ້ຫລາຍ ຯລຯ

ພຣະບັນຍັດ

໖. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ໃຊ້ເຂົ້າສຸກເຕັງແກງຫລືກັບເຂົ້າ ເພາະຢາກໄດ້ຫລາຍ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງໃຊ້ເຂົ້າສຸກກລບແກງຫລືກັບເຂົ້າ ເພາະຢາກໄດ້ມາກ
ພິກສຸໃດບໍ່ເອື້ອເຟື້ອ ໃຊ້ເຂົ້າສຸກກລບແກງຫລືກັບເຂົ້າ ເພາະຢາກໄດ້ມາກ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ເຈົ້າຂອງກລບໄວ້ຖວາຍ ໕. ພິກສຸບໍ່ໄດ້ມຸ່ງກລບເພາະໂລພມາກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໖ ຈົບ

ສິກຂາບົທທີ ໗
ເຣື້ອງພຣະສັພພັຄຄີຍ໌

[໖໑໒] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງນາຖບິນທິ ກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ອອກປາກຂໍແກງແດ່ ເຂົ້າສຸກແດ່ ມາສັນ

ສ່ວນຕົວ ພວກຊາວບ້ານຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສູາກຍບຸຕຣ ຈຶ່ງອອກປາກຂໍແກງແດ່ ເຂົ້າສຸກແດ່ ມາສັນສ່ວນຕົວລະ ພັຕຕາຫາຣທີ່ດີໃຜຈະບໍ່ພໍໃຈ ພັຕຕາຫາຣ ແຊບໃຜຈະບໍ່ຊອບລະ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາ ພິກສຸຜູ້ມັກນ້ອຍ ฯลฯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງ ອອກປາກຂໍແກງແດ່ ເຂົ້າສຸກແດ່ ມາສັນສ່ວນຕົວລະ" ຄັນພິກສຸທັງຫລາຍຕຳຫນິພວກພິກສຸ ສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເອື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເອື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກ ພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານຂໍແກງແດ່ ເຂົ້າສຸກແດ່ມາສັນສ່ວນຕົວ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄ ພຸທທເຈົ້າຊົງຕຳຫນິວ່າ "ฯลฯ ໂມຂບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງອອກປາກຂໍແກງແດ່ ເຂົ້າສຸກແດ່ ມາສັນສ່ວນຕົວລະ ໂມຂບຸຣຸສທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ฯลฯ" ແລ້ວຊົງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

໗. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ອອກປາກຂໍແກງ ຫລືເຂົ້າສຸກ ມາສັນສ່ວນຕົວ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເອື້ອງພຣະສັພພັຄຄີຍ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໔. ສັກກັຈຈວັຄ

ສິກຂາບົທທີ ໗

ເອື້ອງພິກສຸຜູ້ເປັນໄຂ້

[໖໑໓] ສມັຍນັ້ນ ພິກສຸທັງຫລາຍຜູ້ເປັນໄຂ້ ພວກພິກສຸຜູ້ມີຫນ້າທີ່ສອບຖາມອາກາຣໄຂ້ ໄດ້ກ່າວ ກັບພວກພິກສຸຜູ້ເປັນໄຂ້ດັ່ງນີ້ວ່າ "ທ່ານທັງຫລາຍສະບາຍດີຫລື ຍັງພໍເປັນຢູ່ໄດ້ຫລື" ພວກພິກສຸ

ຜູ້ເປັນໄຂ້ຕອບວ່າ "ເມື່ອກ່ອນພວກຜູ້ຂ້າອອກປາກຂໍແກງແດ່ ເຂົ້າສຸກແດ່ມາສັນສ່ອນຕົວ ດັ່ງນັ້ນ ຈຶ່ງມີຄວາມຜາສຸກ ແຕ່ດຽວນີ້ພວກຜູ້ຂ້າມີຄວາມຢ້ານເກງຢູ່ວ່າ 'ພຣະຜູ້ມີພຣະພາຄຊົງຫ້າມໄວ້' ຈຶ່ງບໍ່ອອກປາກຂໍ ດັ່ງນັ້ນຈຶ່ງບໍ່ມີຄວາມຜາສຸກ" ພວກພິກສຸໄດ້ນຳເອື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ຊົງອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ຂໍໄດ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເອື່ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ພິກສຸຜູ້ເປັນໄຂ້ອອກປາກຂໍແກງ ຫລືເຂົ້າສຸກມາສັນສ່ອນຕົວໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ເພິງທຳຄວາມສຳນຶກວ່າ ເຮົາບໍ່ເປັນໄຂ້ ຈັກບໍ່ອອກປາກຂໍແກງຫລືເຂົ້າສຸກມາສັນສ່ອນຕົວ

ເອື່ອງພຣະຜູ້ເປັນໄຂ້ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເປັນໄຂ້ ບໍ່ເພິງອອກປາກຂໍແກງຫລືເຂົ້າສຸກມາສັນສ່ອນຕົວ

ພິກສຸໃດບໍ່ເອື້ອເຟື້ອ ບໍ່ເປັນໄຂ້ ອອກປາກຂໍແກງຫລືເຂົ້າສຸກມາສັນສ່ອນຕົວ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຂໍຈາກຍາຕ ໖. ພິກສຸຂໍຈາກຄົນປວາຣນາ ໗. ພິກສຸຂໍເພື່ອຜູ້ອື່ນ ໘. ພິກສຸຈ່າຍມາດ້ວຍຊັພຍ໌ຂອງຕົນ ໙. ພິກສຸຜູ້ມີເຫຕຸຂັດຂ້ອງ ໑໐. ພິກສຸວິກົລຈິຕ ໑໑. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ສິກຂາບົທທີ ໘

ເຣື້ອງພຣະສັພພັຄຄີຍ໌

[ຝ໑໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫຼເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ຫຼິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ມຸ່ງຕຳໜິ ຈຶ່ງເບິ່ງດູບາຕຣຂອງພິກສຸເຫລົ່າອື່ນ ຯລຯ

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ມຸ່ງຕຳໜິ ເບິ່ງດູບາຕຣຂອງພິກສຸເຫລົ່າອື່ນ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງມຸ່ງຕຳໜິ ເບິ່ງດູບາຕຣຂອງພິກສຸເຫລົ່າອື່ນ

ພິກສຸໃດບໍ່ເອື້ອເຟື້ອ ມຸ່ງຕຳໜິ ເບິ່ງດູບາຕຣຂອງພິກສຸເຫລົ່າອື່ນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໔. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸແລດູດ້ວຍຕັ້ງໃຈວ່າຈະເຕີມຂອງສົ້ນໃຫ້ ຫລືສັ່ງໃຫ້ເຂົາເຕີມຖວາຍ ໕. ພິກສຸບໍ່ມຸ່ງຈະຕຳໜິ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ສິກຂາບົທທີ ໘

ເຣື້ອງພຣະສັພພັຄຄີຍ໌

[ຝ໑໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫຼເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ຫຼິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ທຳຄຳເຂົ້າໃຫຍ່ ຯລຯ

ພຣະບັນຍັດ

໘. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ທຳຄຳເຂົ້າໃຫ້ໃຫຍ່ເກີນ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງທຳຄຳເຂົ້າໃຫ້ໃຫຍ່ເກີນ

ພິກສຸໃດບໍ່ເອື້ອເຟື້ອ ທຳຄຳເຂົ້າໃຫ້ໃຫຍ່ເກີນ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສັນຂອງຄ້ຽວ ໖. ພິກສຸສັນຜົລໄມ້ຕ່າງໆ ໗. ພິກສຸສັນແກງອ່ອມ ໘. ພິກສຸຜູ້ມີເຫຕຸຂັດຂ້ອງ ໙. ພິກສຸວິກົລຈິຕ ໑໐. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໙ ຈົບ

ສິກຂາບົທທີ ໑໐

ເຣື້ອງພຣະສັພພັຄຄີຍ໌

[໖໑໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ທຳຄຳເຂົ້າຍາວ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຈະເຮັດຄຳເຂົ້າໃຫ້ກົມ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸເພິງທຳຄຳເຂົ້າໃຫ້ກົມ

ພິກສຸໃດບໍ່ເອື້ອເຟື້ອ ທຳຄຳເຂົ້າຍາວ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສັນຂອງຄ້ງວ ໖. ພິກສຸສັນຜົລໄມ້ຕ່າງໆ ໗. ພິກສຸສັນແກງອ່ອມ ໘. ພິກສຸຜູ້ມີເຫຕຸຂັດຂ້ອງ ໙. ພິກສຸວິກົລຈິຕ ໑໐. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ
ສັກັຈຈວັຄທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໕. ກພຊວັຄ ສິກຂາບົທທີ ໑

໕. ກພຊວັຄ
ຫມວດວ່າດ້ວຍຄໍາເຂົ້າ

ສິກຂາບົທທີ ໑

ເຣື້ອງພຣະສັພພັຄຄີຍ໌
[໖໑໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ ອ້າປາກຖ້າຄໍາເຂົ້າທີ່ຍັງບໍ່ເຖິງປາກ ຯລຯ

ພຣະບັນຍັດ
໑. ເພິງທໍາຄວາມສໍານຶກວ່າ ເຮົາຈັກບໍ່ອ້າປາກຖ້າຄໍາເຂົ້າທີ່ຍັງບໍ່ເຖິງປາກ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌
ພິກສຸບໍ່ເພິງອ້າປາກຣໍຄໍາເຂົ້າທີ່ຍັງບໍ່ເຖິງປາກ
ພິກສຸໃດບໍ່ເອື້ອເຟື້ອ ອ້າປາກຣໍຄໍາເຂົ້າທີ່ຍັງບໍ່ເຖິງປາກ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ກພຣວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື່ອງພຣະສັພພັຄຄີຍ໌

[໖໑໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຂນະກຳລັງສັນ ສອດມືທັງຫມົດເຂົ້າໃນປາກ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ຂນະກຳລັງສັນ ເຮົາຈັກບໍ່ສອດມືທັງຫມົດເຂົ້າໃນປາກ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸຂນະກຳລັງສັນ ບໍ່ເພິງສອດມືອທັງຫມົດເຂົ້າໃນປາກ

ພິກສຸໃດບໍ່ເອື້ອເຟື້ອ ຂນະກຳລັງສັນສອດມືອທັງຫມົດເຂົ້າໄປໃນປາກ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ກພຊວັຄ ສິກຂາບົທທີ ໓

ສິກຂາບົທທີ ໓

ເຣື່ອງພຣະສັພພັຄຄີຍ໌

[໖໑໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ເວົ້າຄຸຍທັງໆທີ່ໃນປາກມີຄຳເຂົ້າ ຯລຯ

ພຣະບັນຍັດ

໓. ເພິ່ງທຳຄວາມສຳນຶກວ່າ ຂນະທີ່ໃນປາກມີຄຳເຂົ້າ ເຮົາຈັກບໍ່ເວົ້າຄຸຍ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງເວົ້າຄຸຍ ຂນະທີ່ໃນປາກມີຄຳເຂົ້າ

ພິກສຸໃດບໍ່ເອື້ອເຟື້ອ ເວົ້າຄຸຍຂນະທີ່ໃນປາກມີຄຳເຂົ້າ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ກພຊວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໖໔໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນໂຍນຄຳເຂົ້າ ฯລฯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນໂຍນຄຳເຂົ້າ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນໂຍນຄຳເຂົ້າ

ພິກສຸໃດບໍ່ເອື້ອເຟື້ອ ສັນໂຍນຄຳເຂົ້າ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສັນຂອງຄ້ງວ ໖. ພິກສຸສັນຜົລໄມ້ ໗. ພິກສຸຜູ້ມີເຫຕຸຂັດຂ້ອງ ໘. ພິກສຸວິກົລຈິຕ ໙. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ກພຊວັຄ ສິກຂາບົທທີ ໕

ສິກຂາບົທທີ ໕

ເຣື້ອງພຣະສັພພັຄຄີຍ໌

[໖໔໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນກັດຄຳເຂົ້າ ฯລฯ

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນກັດຄຳເຂົ້າ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງສັນກັດຄຳເຂົ້າ

ພິກສຸໃດບໍ່ເອື້ອເຟື້ອ ສັນກັດຄຳເຂົ້າ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສັນອາຫາຣເປັນກ້ອນ ໖. ພິກສຸສັນຜົລໄມ້ຕ່າງໆ ໗. ພິກສຸສັນແກງອ່ອມ ໘. ພິກສຸຜູ້ມີເຫຕຸຂັດຂ້ອງ ໙. ພິກສຸວິກົລຈິຕ ໑໐. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ກພຣວັຄ ສິກຂາບົທທີ ໖

ສິກຂາບົທທີ ໖

ເຣື້ອງພຣະສັພພັຄຄີຍ໌

[໖໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນອາຫານເຮັດປາກປຸ້ງແກ້ມເປົ້າ ຯລຯ

ພຣະບັນຍັດ

໖. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນອາຫາຣເຮັດປາກປຸ້ງແກ້ມເປົ້າ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງສັນເຮັດປາກປຸ້ງແກ້ມເປົ້າ

ພິກສຸໃດບໍ່ເອື້ອເຟື້ອ ສັນເຮັດປາກປຸ້ງແກ້ມເປົ້າຂ້າງດຽວຫລືທັງສອງຂ້າງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສັນຜົລໄມ້ຕ່າງໆ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ກພຣວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເຣື່ອງພຣະສັພພັຄຄີຍ໌

[໖໔໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນສລັດມືອ ຯລຯ

ພຣະບັນຍັດ

໗. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນຊິດມືໄປມາ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງສັນ ຊິດມືໄປມາ

ພິກສຸໃດບໍ່ເອື້ອເຟື້ອ ສັນຊິດມືໄປມາ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸສລັດມືອຖິ້ມ ເສສອາຫາຣ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໕. ກພລວັຄ ສິກຂາບົທທີ ໘

ສິກຂາບົທທີ ໘
ເຣື້ອງພຣະສັພພັຄຄີຍ໌

[໖໘໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນທາວ່ານເມັດເຂົ້າ ຯລຯ

ພຣະບັນຍັດ

໘. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນທາວ່ານເມັດເຂົ້າ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນທາວ່ານເມັດເຂົ້າ
ພິກສຸໃດບໍ່ເອື້ອເຟື້ອ ສັນທາວ່ານເມັດເຂົ້າ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຖິ້ມເສສສຜງ ເມັດເຂົ້າຕິດໄປດ້ວຍ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໕. ກພລວັຄ ສິກຂາບົທທີ ໙

ສິກຂາບົທທີ ໙

ເຣື້ອງພຣະສັພພັຄຄີຍ໌

[໖໔໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນແລບລີ້ນ ຯລຯ

ພຣະບັນຍັດ

໙. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນແລບລີ້ນ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນແລບລີ້ນ

ພິກສຸໃດບໍ່ເອື້ອເຟື້ອ ສັນແລບລີ້ນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໕. ກພຊອັຄ ສິກຂາບົທທີ ໑໐

ສິກຂາບົທທີ ໑໐

ເຣື້ອງພຣະສັພພັຄຄີຍ໌

[໖໔໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນທຳສຽງດັ່ງຈັ໊ບໆ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນທຳສຽງດັ່ງຈັ໊ບໆ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນທຳສຽງດັ່ງຈັ໊ບໆ

ພິກສຸໃດບໍ່ເອື້ອເຟື້ອ ສັນທຳສຽງດັ່ງຈັ໊ບໆຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ

ກພຊອັຄທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໑

໖. ສຸຣຸສຸຣຸວັຄ

ຫມວດວ່າດ້ວຍການສັນດັງຊູ້ດໆ

ສິກຂາບົທທີ ໑

ເຣື້ອງພຣະຮູບນຶ່ງ

[໖໒໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ໂຂສິຕາຣາມ ເຂຕກຸງໂກສັມພີ ຄັ້ງນັ້ນ ພຣາມນ໌ຄົນນຶ່ງປຸງນ້ຳນົມຖວາຍສົງຂ໌ ພິກສຸທັງຫລາຍດື່ມນ້ຳນົມສຽງດັງຊູ້ດໆ ພິກສຸຜູ້ເຄີຍເປັນນັກຟ້ອນຮູບນຶ່ງກ່າວຢ່າງນີ້ວ່າ "ສົງຂ໌ນີ້ທັງຫມົດ ຄົງຈະຫນາວແລ້ວຕີບໍ່" ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງລໍ້ລຽນສົງຂ໌ລະ" ຄັນພິກສຸທັງຫລາຍຕຳຫນິພິກສຸນັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ຊົງປະຊຸມສົງຂ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຂ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸ

ນັ້ນວ່າ "ພິກສຸ ຊາບວ່າ ທ່ານລໍ້ລຽນສົງຊ໌ ແມ່ນແທ້ບໍ" ພິກສຸນັ້ນທູລຮັບວ່າ "ແມ່ນແທ້ພຣະພຸທຫ ເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳຫນິວ່າ "ຯລຯ ໂມຂບຸຣຸສ ຈັ່ງໃດທ່ານຈຶ່ງລໍ້ລຽນສົງຊ໌ ລະ ໂມຂບຸຣຸສ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດ ໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳຫນິແລ້ວຈຶ່ງຊົງສະ ແດງທັມມິກຖາ ແລ້ວຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ພິກສຸບໍ່ເພິງທຳກາຣລໍ້ລຽນ ປາຣົພພຣະພຸທຫ ພຣະທັມ ພຣະສົງຊ໌ ພິກສຸໃດເພິງທຳ ຕ້ອງອາບັຕິທຸກກຕ" ເທື່ອນັ້ນ ຄັນພຣະ ຜູ້ມີພຣະພາຄຊົງຕຳຫນິພິກສຸນັ້ນໂດຍປະກາຣຕ່າງໆແລ້ວ ຕຣັສໂທສແຫ່ງຄວາມເປັນຄົນລ້ຽງຍາກ ຯລຯ ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໑

ພຣະບັນຍັດ

໑. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນທຳສຽງດັງຊູ້ດໆ

ເຣື່ອງພຣະຮູບນຶ່ງ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນທຳສຽງດັງຊູ້ດໆ

ພິກສຸໃດບໍ່ເອື້ອເຟື້ອ ສັນທຳສຽງດັງຊູ້ດໆ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດຂ້ອງ ໖. ພິກສຸວິກລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໒

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໖໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນເລັ່ງມື ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນເລັ່ງມື

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສັນເລັ່ງມື

ພິກສຸໃດບໍ່ເອື້ອເຟື້ອ ສັນເລັ່ງມື ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໔. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໓

ສິກຂາບົທທີ ໓

ເຣື້ອງພຣະສັພພັຄຄີຍ໌

[໖໔໘] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນເລັ່ງບາຕຣ ຯລຯ

ພຣະບັນຍັດ

໓. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນເລັງບາຕຣ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງສັນເລັງບາຕຣ

ພິກສຸໃດບໍ່ເອື້ອເຟື້ອ ສັນເລັງບາຕຣ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸກວາດເຂົ້າສຸກທີ່ເຫລືອນ້ອຍຮວມກັນແລ້ວສັນ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໖໓໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສັນເລີຍຣິມຝີປາກ ຯລຯ

ພຣະບັນຍັດ

໔. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ສັນເລີຍຣິມຝີປາກ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌
ພິກສຸບໍ່ເພິງສັນເລີຍຮີມຝີປາກ
ພິກສຸໃດບໍ່ເອື້ອເຟື້ອ ສັນເລີຍຮີມຝີປາກ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ
ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໕

ສິກຂາບົທທີ ໕

ເຣື້ອງພຣະຫລາຍຮູບ
[໖໓໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ເພສກົຮາມຣິຄທາຍວັນ ເຂຕເມືອງສຸງສຸມາຣຄິຣະ ແຄວ້ນພັຄຄະ ຄັ້ງນັ້ນ ພິກສຸໃຊ້ມືເປື້ອນອາຫາຣຈັບພາຊນະນ້ຳດື່ມ ທີ່ປຣາສາທໂກກນທ ພວກຊາວບ້ານຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣຈຶ່ງໃຊ້ມືເປື້ອນອາຫາຣຈັບພາຊນະນ້ຳດື່ມ ເໝືອນຄຣືຫັສຖ໌ຜູ້ບໍຣິໂພຄກາມລະ" ພິກສຸທັງຫລາຍໄດ້ຍິນພວກຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ພາກັນຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸຈຶ່ງໃຊ້ມືເປື້ອນອາຫາຣຈັບພາຊນະນ້ຳດື່ມລະ" ຄັນພິກສຸທັງຫລາຍຕຳໜິພິກສຸເຫລົ່ານັ້ນໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ
ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸໃຊ້ມືເປື້ອນອາຫາຣຈັບພາຊນະນ້ຳດື່ມແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທ

ເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຊຼບຸຣຸສຼເຫລົ່ານັ້ນ ຈຶ່ງໃຊ້ມືເປື້ອນອາຫາຣຈັບພາຊນະນ້ຳດື່ມລະ ພິກສຸທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ"
ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຈັບພາຊນະນ້ຳດື່ມດ້ວຍມືເປື້ອນອາຫາຣ

ເຣື້ອງພຣະຫລາຍຮູບ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໕

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງຈັບພາຊນະນ້ຳດື່ມດ້ວຍມືເປື້ອນອາຫາຣ
ພິກສຸໃດບໍ່ເອື້ອເຟື້ອ ຈັບພາຊນະນ້ຳດື່ມດ້ວຍມືເປື້ອນອາຫາຣ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຮັບປະເຄນໄວ້ເພາະຄິດຈະລ້າງເອງຫລືໃຊ້ຜູ້ອື່ນລ້າງ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໖

ສິກຂາບົທທີ ໖
ເຣື້ອງພຣະຫລາຍຮູບ

[໖໓໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ເພສກຊານຣີຄຫາຍວັນ ເຂຕເມືອງ

ສຸງສຸມາຣຄິຣະ ແຄວ້ນພັຄຄະ ຄັ້ງນັ້ນ ພິກສຸທັງຫລາຍເທນ້ຳລ້າງບາຕຣທີ່ມີເມັດເຂົ້າ ໃນບໍຣິເວນບ້ານ ໃກ້ໂກກນທປຣາສາທ ພວກຊາວບ້ານພາກັນຕຳຫນິ ປະນາມ ໂພນທະນາ ວ່າ "ຈັ່ງໃດພຣະສມນະເຊື້ອສາຍສູາກຍບຸຕຣຈຶ່ງເທນ້ຳລ້າງບາຕຣທີ່ມີເມັດເຂົ້າໃນບໍຣິເວນບ້ານເຫມືອນຄຣືຫັສຖ໌ຜູ້ບໍຣິໂພຄກາມລະ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພິກສຸທັງຫລາຍຈຶ່ງເທນ້ຳລ້າງບາຕຣ ທີ່ມີເມັດເຂົ້າໃນບໍຣິເວນບ້ານລະ" ຄັນພິກສຸທັງຫລາຍຕຳຫນິພິກສຸເຫລົ່ານັ້ນໂດຍປະການຕ່າງໆແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ຊາບວ່າ ພວກພິກສຸເທນ້ຳລ້າງບາຕຣມີເມັດເຂົ້າໃນບໍຣິເວນບ້ານແມ່ນແທ້ບໍ" ພິກສຸທັງຫລາຍທູລຮັບວ່າ "ແມ່ນແທ້ພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ພິກສຸທັງຫລາຍ ຈັ່ງໃດໂມຂບຸຣຸສເຫລົ່ານັ້ນຈຶ່ງເທນ້ຳລ້າງບາຕຣທີ່ມີເມັດເຂົ້າໃນບໍຣິເວນບ້ານລະ ພິກສຸທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

໕໖. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ເທນ້ຳລ້າງບາຕຣທີ່ມີເມັດເຂົ້າໃນບໍຣິເວນບ້ານ

ເຣື່ອງພຣະຫລາຍຮູບ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໕໖. ສຸຣຸສຸຣຸວັຄ ສິກຂາບົທທີ ໕໖

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງເທນ້ຳລ້າງບາຕຣມີເມັດເຂົ້າໃນບໍຣິເວນບ້ານ

ພິກສຸໃດບໍ່ເອື້ອເຟື້ອ ເທນ້ຳລ້າງບາຕຣມີເມັດເຂົ້າໃນບໍຣິເວນບ້ານ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸເກັບເມັດເຂົ້າອອກ ແລ້ວເທນໍ້າລ້າງບາຕຣຫລືຂຍີ້ເມັດເຂົ້າໃຫ້ລະລາຍຫລືເທນໍ້າລ້າງບາຕຣໃນກຣະໂຖນນຳໄປເທຂ້າງນອກ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕໐ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໕. ສຸຣຸສຸຣຸວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເຣື່ອງພຣະສັພພັຄຄີຢ໌

[໕໓໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທຫເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຢ໌ສະແດງທັມແກ່ຄົນຜູ້ກັ້ງຮົ່ມ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຕຳໜິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຢ໌ຈຶ່ງສະແດງທັມແກ່ຄົນຜູ້ກັ້ງຮົ່ມລະ" ຄັນພິກສຸທັງຫລາຍຕຳໜິພວກພິກສຸສັພພັຄຄີຢ໌ໂດຍປະການຕ່າງໆ ແລ້ວຈຶ່ງນຳເຣື່ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຄ໌ບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື່ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຢ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານສະແດງທັມແກ່ຄົນຜູ້ກັ້ງຮົ່ມແມ່ນແທ້ບໍ" ພວກພິກສຸສັພພັຄຄີຢ໌ທູລຮັບວ່າ "ແມ່ນແທ້ພຣະພຸທຫເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທຫເຈົ້າຊົງຕຳໜິວ່າ "ຯລຯ ໂມຄບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງສະແດງທັມແກ່ຄົນຜູ້ກັ້ງຮົ່ມລະ ໂມຄບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນກັ້ງຮົ່ມ

ເລື້ອງພຣະສັພພັຄຄີຍ໌ ຈົບ

ເລື້ອງພິກສຸຫລາຍຮູບ

[໖໓໔] ສມັຍນັ້ນ ພິກສຸທັງຫລາຍຢຳເກງທີ່ຈະສະແດງທັມແກ່ຄົນໄຂ້ຜູ້ກັ້ງຮົ່ມ ພວກຊາວບ້ານຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພຣະສມນະເຊື້ອສາຍສາກຍບຸຕຣ ຈຶ່ງບໍ່ສະແດງທັມແກ່ຄົນໄຂ້ຜູ້ກັ້ງຮົ່ມລະ" ພວກພິກສຸໄດ້ຍິນຊາວບ້ານຕຳຫນິ ປະນາມໂພນທະນາ ຄັນແລ້ວພິກສຸເຫລົ່ານັ້ນຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ຝ. ສຸຣຸສຸຣຸວັຄ ສິກຂາບົທທີ ໗

ຊົງອນຸຍາຕໃຫ້ສະແດງທັມແກ່ຄົນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເລື້ອງນີ້ເປັນຕົ້ນເຫຕຸ ຮັບສັ່ງກັບພິກສຸທັງຫລາຍວ່າ "ພິກສຸທັງຫລາຍ ເຮົາອນຸຍາຕໃຫ້ສະແດງທັມແກ່ຄົນໄຂ້ຜູ້ກັ້ງຮົ່ມໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະອນຸບັນຍັດ

ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ກັ້ງຮົ່ມ

ເລື້ອງພິກສຸຫລາຍຮູບ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ຮົ່ມ ໄດ້ແກ່ ຮົ່ມ ໓ ຊນິດ ຄື (໑) ຮົ່ມຜ້າຂາວ (໔) ຮົ່ມເສື່ອລຳແພນ (໓) ຮົ່ມໃບໄມ້ທີ່ຍິບເປັນວົງຜູກຕິດກັບຊີ່

ທີ່ຊື່ວ່າ ທັມ ໄດ້ແກ່ ພຸທທພາສິຕ ສາວົກພາສິຕ ຣືສີພາສິຕ ເທວດາພາສິຕທີ່ປະກອບດ້ວຍອັນຖະທີ່ປະກອບດ້ວຍທັມ

ບົທວ່າ ສະແດງ ຄື ພິກສຸສະແດງເປັນບົທ ຕ້ອງອາບັຕິທຸກກຕທຸກໆບົທ ສະແດງເປັນອັກສຣ ຕ້ອງອາບັຕິທຸກກຕທຸກໆອັກສຣ

ພິກຂຸບໍ່ເພິງສະແດງທັມແກ່ຄົນບໍ່ເປັນໄຂ້ ຜູ້ກັ້ງຮົ່ມ
ພິກຂຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນບໍ່ເປັນໄຂ້ຜູ້ກັ້ງຮົ່ມ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ
ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໗

ສິກຂາບົທທີ ໗
ເຣື້ອງພຣະສັພພັຄຄີຍ໌
[໖໓໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ສະແດງທັມແກ່ຄົນຖືໄມ້ພລອງ ຯລຯ

ພຣະບັນຍັດ
໗. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືໄມ້ພລອງ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌
ທີ່ຊື່ວ່າ ໄມ້ພລອງ ໄດ້ແກ່ ໄມ້ພລອງຍາວ ໔ ສອກ ຂນາດສອກຂອງຄົນສັນຖານປານກາງ ຍາວກວ່ານັ້ນບໍ່ແມ່ນໄມ້ພລອງ ສັ້ນກວ່ານັ້ນ ກໍບໍ່ແມ່ນໄມ້ພລອງ
ພິກຂຸບໍ່ເພິງສະແດງທັມແກ່ຄົນບໍ່ເປັນໄຂ້ຜູ້ຖືໄມ້ພລອງ
ພິກຂຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືໄມ້ພລອງ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗໒ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໘

ສິກຂາບົທທີ ໘

ເຣື້ອງພຣະສັພພັຄຄີຍ໌

[໖໓໖] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນຖືສັ້ສຕຣາ ຯລຯ

ພຣະບັນຍັດ

໘. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືສັ້ສຕຣາ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ສັ້ສຕຣາ ໄດ້ແກ່ ເຄື່ອງປະຫາຣມີຄມຂ້າງດຽວ ມີຄົມ ໒ ຂ້າງ

ພິກສຸບໍ່ເພິງສະແດງທັມແກ່ຄນບໍ່ເປັນໄຂ້ຜູ້ຖືສັ້ສຕຣາ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນບໍ່ເປັນໄຂ້ຜູ້ຖືສັ້ສຕຣາ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໖. ສຸຣຸສຸຣຸວັຄ ສິກຂາບົທທີ ໑໐

ສິກຂາບົທທີ ໑໐
ເຣື້ອງພຣະສັພພັຄຄີຍ໌

[໖໘໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືອາວຸທ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືອາວຸທ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືອາວຸທ
ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຖືອາວຸທ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ

ສຸຣຸສຸຣຸວັຄທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໗. ປາທຸກາວັຄ ສິກຂາບົທທີ ໑

໗. ປາທຸກາວັຄ

ຫມວດວ່າດ້ວຍຂຽງຕີນ

ສິກຂາບົທທີ ໑

ເຣື້ອງພຣະສັພພັຄຄີຍ໌

[ຝັງງົກ] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນຜູ້ສວມຂຽງຕີນ ຯລຯ

ພຣະບັນຍັດ

໑. ເພິ່ງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ສວມຂຽງຕີນ໑

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິ່ງສະແດງທັມແກ່ຄນບໍ່ເປັນໄຂ້ຜູ້ສວມຂຽງຕີນ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ ຜູ້ຢຽບຂຽງຕີນ ສວມຂຽງຕີນຫລືສວມຂຽງ ຕີນຫຸ້ມສົ້ນ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑ ຈົບ

ເຊີງອັນຖະ :

*໑ ຂຽງ**ຕີນ** ຄືເກີບໄມ້ ສຳລັບສວມໃສ່ໃນບ້ານ, ເກີຽະ*

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໔

ສິກຂາບົທທີ ៤
ເຣື້ອງພຣະສັພພັຄຄີຍ໌

[៦៣៧] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນໃສ່ເກີບ ฯລฯ

ພຣະບັນຍັດ

៤. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ສວມໃສ່ເກີບ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ສວມເກີບ
ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ ທີ່ຢຽບ**ເທິງ**ເກີບ ສວມເກີບ ຫລືສວມເກີບ ຫຸ້ມສົ້ນ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
១. ພິກສຸບໍ່ຈິງໃຈ ២. ພິກສຸບໍ່ມີສຕິ ៣. ພິກສຸຜູ້ບໍ່ຮູ້ ៤. ພິກສຸຜູ້ເປັນໄຂ້ ៥. ພິກສຸຜູ້ມີ ເຫຕຸຂັດຂ້ອງ ៦. ພິກສຸວິກົລຈິຕ ៧. ພິກສຸຕົ້ນບັນຍັດ

ສິກຂາບົທທີ ៤ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [៧. ເສຂິຍກັນທ໌] ៧. ປາທຸກາວັຄ ສິກຂາບົທທີ ៣

ສິກຂາບົທທີ ៣
ເຣື້ອງພຣະສັພພັຄຄີຍ໌

[៦៤០] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນຢູ່ໃນຍານ ฯລฯ

ພຣະບັນຍັດ

໓. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຢູ່ໃນຍານ໑

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ຍານ ໄດ້ແກ່ ຄານຫາມ ຣົຖ ກວຽນ ຕຽງຫາມ ວອ ເປຫາມ

ພິກສຸບໍ່ເພິງສະແດງທັມແກ່ຄົນບໍ່ເປັນໄຂ້ຜູ້ຢູ່ໃນຍານ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນບໍ່ເປັນໄຂ້ຜູ້ຢູ່ໃນຍານ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໓ ຈົບ

ເຊີງອັນຖະ :

໑ ຜູ້ຢູ່ໃນຍານ ຫມາຍເອົາບຸຄຄົລຜູ້ນັ່ງເທິງຄານຫາມ ເທິງວໍ ຖືກອຸ້ມໄປ ຖືກແບກໃສ່ບ່າໄປ ນັ່ງເທິງຍານທີ່ບໍ່ໄດ້ທຽມມ້າ ຫລືແມ່ນນັ່ງເທິງລໍ້ທີ່ແຍກສ່ວນອອກມາ ຖືວ່ານັ່ງຢູ່ໃນຍານທັງສິ້ນ ແຕ່ຖ້າຢູ່ໃນຍານດ້ວຍກັນທັງພິກສຸຜູ້ສະແດງທັມແລະອຸບາສົກຜູ້ຮັບທັມເຫສູມາ ພິກສຸສະແດງທັມແກ່ຄົນທີ່ໄປໃນຍານດ້ວຍກັນໄດ້ ຖ້າພິກສຸຜູ້ສະແດງທັມນັ່ງຢູ່ຂ້າງຫນ້າໃນທີ່ສູງກວ່າຫລືສເມີກັນກັບອຸບາສົກຜູ້ຟັງ ບໍ່ຕ້ອງອາບັຕິ (ວິ. ອ. ໒/໖໔໐/໔໕໖)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໔

ສິກຂາບົທທີ ໔

ເຣື້ອງພຣະສັພພັຄຄີຍ໌

[໖໔໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ

ທຼີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນຜູ້ຢູ່ເທິງທີ່ນອນ ຯລຯ

ພຣະບັນຍັດ

໔. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຢູ່ບົນທີ່ນອນ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຢູ່ເທິງທີ່ນອນ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຢູ່ເທິງທີ່ນອນ ໂດຍທີ່ສຸດຜູ້ນອນບົນພື້ນດິນ ຕ້ອງອາບັຕິທຸກກົຕ

ອນາປັດຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີ ເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໕

ສິກຂາບົທທີ ໕

ເຣື້ອງພຣະສັພພັຄຄີຍ໌

[໖໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທຼີກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນທີ່ນັ່ງຮັດເຂົ່າ ຯລຯ

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງຮັດເຂົ່າ

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງຮັດເຂົ່າ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງຮັດເຂົ່າດ້ວຍມື ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໕ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໖

ສິກຂາບົທທີ ໖

ເລື້ອງພຣະສັພພັຄຄີຍ໌

[໖໔໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນຜູ້ໂພກສີສະ ຯລຯ

ພຣະບັນຍັດ

໖. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນບໍ່ເປັນໄຂ້ຜູ້ໂພກສີສະ

ເລື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ຜູ້ໂພກສີສະ ຄື ພັນບໍ່ໃຫ້ເຫັນປາຍຜົມ

ພິກສຸບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ໂພກສີສະ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ໂພກສີສະ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸໃຫ້ເຂົາເປີດປາຍນອຍຜົມແລ້ວຈຶ່ງສະແດງ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໖ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໗

ສິກຂາບົທທີ ໗

ເຣື້ອງພຣະສັພພັຄຄີຍ໌

[໖໔໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ສະແດງທັມແກ່ຄົນຜູ້ຄຸມສີສະ ຯລຯ

ພຣະບັນຍັດ

໗. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຄຸມສີສະ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ທີ່ຊື່ວ່າ ຄຸມສີສະ ຄື ທ່ານກ່າວເຖິງຜູ້ຫົ່ມຜ້າຄຸມຕລອດສີສະ

ພິກສຸບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຄຸມສີສະ

ພິກສຸໃດບໍ່ເອື້ອເຟື້ອ ສະແດງທັມແກ່ຄນບໍ່ເປັນໄຂ້ຜູ້ຄຸມສີສະ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸໃຫ້ເຂົາເປີດຜ້າຄຸມສີສະແລ້ວຈຶ່ງສະແດງ ໖. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໘

ສິກຂາບົທທີ ໘

ເຣື່ອງພຣະສັພພັຄຄີຍ໌

[໖໔໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງເທິງພື້ນດິນ ສະແດງທັມແກ່ຄົນຜູ້ນັ່ງເທິງອາສນະ ຯລຯ

ພຣະບັນຍັດ

໘. ເພິງທຳຄວາມສຳນຶກວ່າ ເຮົານັ່ງທີ່ພື້ນດິນຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງເທິງອາສນະ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸນັ່ງຢູ່ເທິງພື້ນດິນບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງເທິງອາສນະ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງເທິງພື້ນດິນສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງເທິງອາສນະ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໘ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໙

ສິກຂາບົທທີ ໙

ເຣື້ອງພຣະສັພພັຄຄີຍ໌

[໕໔໕] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ນັ່ງເທິງອາສນະຕ່ຳ ສະແດງທັມແກ່ຄົນຜູ້ນັ່ງເທິງອາສນະສູງ ບັນດາພິກສຸຜູ້ມັກນ້ອຍ ຯລຯ ຈຶ່ງພາກັນຕຳຫນິ ປະນາມ ໂພນທະນາວ່າ "ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງນັ່ງເທິງອາສນະຕ່ຳສະແດງທັມແກ່ຄົນຜູ້ນັ່ງເທິງອາສນະສູງລະ" ຄັນພິກສຸເຫລົ່ານັ້ນຕຳຫນິພວກພິກສຸສັພພັຄຄີຍ໌ ໂດຍປະການຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງປະຊຸມສົງຊ໌ສະແດງທັມມີກຖາ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຊ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ "ພິກສຸທັງຫລາຍ ຊາບວ່າ ພວກທ່ານນັ່ງເທິງອາສນະຕ່ຳສະແດງທັມແກ່ຄົນຜູ້ນັ່ງເທິງອາສນະສູງ ແມ່ນແທ້ບໍ" ພວກພິກສຸສັພພັຄຄີຍ໌ທູລຮັບວ່າ "ຈິງພຣະພຸທທເຈົ້າຂ້າ" ພຣະຜູ້ມີພຣະພາຄພຸທທເຈົ້າຊົງຕຳຫນິວ່າ "ຯລຯ ໂມຊບຸຣຸສທັງຫລາຍ ຈັ່ງໃດພວກທ່ານຈຶ່ງນັ່ງເທິງອາສນະຕ່ຳສະແດງທັມແກ່ຄົນຜູ້ນັ່ງເທິງອາສນະສູງລະ ໂມຊບຸຣຸສທັງຫລາຍ ການກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂຶ້ນໄດ້ເລີຍ ຯລຯ" ຄັນຊົງຕຳຫນິແລ້ວຊົງສະແດງທັມມີກຖາຮັບສັ່ງກັບພິກສຸທັງຫລາຍວ່າ

ເຣື້ອງພັຣຍາຂອງບຸຣຸສຈັນທາລ

[໕໔໗] "ພິກສຸທັງຫລາຍ ເຣື້ອງເຄີຍມີມາແລ້ວ ພັຣຍາຂອງບຸຣຸສຈັນທາລຄົນນຶ່ງໃນກຸງພາຣານສີມີຄັນພ໌ ຄັນແລ້ວນາງຈຶ່ງໄດ້ກ່າວກັບສາມີວ່າ "ນາຍ ຂະນ້ອຍກຳລັງຕັ້ງຄັນພ໌ ຢາກກິນຫມາກມ່ວງ" ສາມີຕອບວ່າ 'ຫມາກມ່ວງບໍ່ມີເພາະບໍ່ແມ່ນຣະດູຫມາກມ່ວງ' ນາງກ່າວວ່າ 'ຖ້າບໍ່ໄດ້ ຂະນ້ອຍຕ້ອງຕາຍ' ຄັ້ງນັ້ນ ມີຕົ້ນຫມາກມ່ວງຂອງຫລວງໃຫ້ຜົລທຸກຣະດູຢູ່ຕົ້ນນຶ່ງ ພິກສຸທັງຫລາຍ ຄັນແລ້ວບຸຣຸສຈັນທາລຈຶ່ງໄປເຖິງທີ່ຕົ້ນຫມາກມ່ວງ ຄັນເຖິງແລ້ວໄດ້ຂຶ້ນໄປແຝງກາຍຢູ່ເທິງຕົ້ນ ພໍດີພຣະຣາຊາສເດັຈໄປເຖິງທີ່ຕົ້ນຫມາກມ່ວງພ້ອມກັບພຣາມນ໌ປຸໂຣຫິຕ ຄັນເຖິງແລ້ວຈຶ່ງປະທັບນັ່ງເທິງອາສນະແລ້ວຊົງຮຽນມົນຕ໌ ພິກສຸທັງຫລາຍ ເທື່ອນັ້ນ ບຸຣຸສຈັນທາລໄດ້ມີຄວາມຄິດດັ່ງນີ້ວ່າ 'ພຣະຣາຊາອົງຄ໌ນີ້ປະທັບນັ່ງເທິງອາສນະສູງຮຽນມົນຕ໌ ຊື່ວ່າບໍ່ແມ່ນພຣະຣາຊາຜູ້ຊົງທັມ ພຣາມນ໌ຄົນນີ້ທີ່ນັ່ງເທິງອາສນະຕ່ຳສອນມົນຕ໌ແກ່ຜູ້ນັ່ງເທິງອາສນະສູງ ກໍຊື່ວ່າບໍ່ແມ່ນຜູ້ປະພຶດທັມ ແລະເຮົາຜູ້ທີ່

ລັກຫາມາກມ່ວງຂອງຫລວງເພາະພັຣຍາເປັນເຫຕຸ ກໍຊື່ວ່າບໍ່ແມ່ນຜູ້ປະພຶດທັມ ທີ່ແມ່ນແທ້ກາຣກະທຳດັ່ງນີ້ລ້ວນຕ່ຳທຣາມ' ຈຶ່ງໄຕ່ລຶງມາ ນະ ທີ່ນັ້ນກ່າວວ່າ 'ຄົນທັງ ໔ ຄື ພຣາມນ໌ຜູ້ສອນມົນຕ໌ ແລະພຣະຣາຊາຜູ້ຊົງຮຽນມົນຕ໌ໂດຍບໍ່ເຄົາຣົພທັມ ຍ່ອມບໍ່ຮູ້ອັນຖະແລະບໍ່ເຫັນທັມ ພຣາມນ໌ກ່າວວ່າ 'ເພາະເຮົາກິນເຂົ້າສາລີຜສົມແກງຊີ້ນທີ່ສະອາດ ສະນັ້ນຈຶ່ງບໍ່ປະພຶດທັມທີ່ພຣະອຣິຍເຈົ້າສັຣເສີນ' ບຸຣຸສຈັນທາລກ່າວວ່າ 'ເຮົາຕຳຫນິກາຣໄດ້ຊັພຍ໌ແລະກາຣໄດ້ກຽດຕິຍົດເພາະພຣືຕິກັມເຊັ່ນນັ້ນ ນັ້ນເປັນວິທີຊີວິຕອັນເປັນເຫຕຸໃຫ້ຕົກຕ່ຳແລະເປັນກາຣຄອງຊີພໂດຍມິຊອບ ກາຣຄອງຊີພຢ່າງນັ້ນບໍ່ມີປໂຍດ ທ່ານມຫາພຣາມນ໌ ທ່ານຮີບໄປເສັຽເຖີດ ແມ່ນຄົນເຫລົ່າອື່ນກໍຍັງຮູ້ຈັກຫຸງຫາກິນໄດ້ ຄວາມອາທຣຣມ໌ທີ່ທ່ານປະພຶດຢ່າໄດ້ທຳລາຍທ່ານເຫມືອນຫມໍ້ນ້ຳແຕກ'໑

ເຣື້ອງພັຣຍາຂອງບຸຣຸສຈັນທາລ ຈົບ

ເຊີງອັນຖະ :

໑ ອັນຖະກຖາອທິບາຍວ່າ "ຖ້າທ່ານບໍ່ຫນີໄປຈາກທີ່ນີ້ ຍັງຈະປະພຶດຄວາມບໍ່ຊອບທັມຢູ່ ທ່ານຜູ້ປະພຶດຄວາມບໍ່ຊອບທັມນັ້ນແຫລະຈະແຕກ ເຫມືອນກ້ອນຫີນ(ຫລົ່ນ)ທັບຫມໍ້ນ້ຳແຕກ (ວິ. ອ. ໔/໓໔໗/໔໕໗)

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໗. ປາທຸກາວັຄ ສິກຂາບົທທີ ໕

ຊົງຕຳຫນິແລ້ວບັນຍັດສິກຂາບົທ

ພິກສຸທັງຫລາຍ ແມ່ນໃນກາລນັ້ນ ພຣາມນ໌ນັ່ງເທິງອາສນະຕ່ຳ ສອນມົນຕ໌ພຣະຣາຊາຜູ້ປະທັບນັ່ງເທິງອາສນະສູງ ຍັງບໍ່ເປັນທີ່ພໍໃຈຂອງເຮົາ ຈັ່ງໃດບັດນີ້ ກາຣທີ່ພິກສຸນັ່ງເທິງອາສນະຕ່ຳສະແດງທັມແກ່ຄົນຜູ້ນັ່ງເທິງອາສນະສູງ ຈຶ່ງຈັກເປັນທີ່ພໍໃຈຂອງເຮົາລະ" ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍ ຍົກສິກຂາບົທນີ້ຂຶ້ນສະແດງດັ່ງນີ້

ພຣະບັນຍັດ

໕. ເພິງທຳຄວາມສຳນຶກວ່າ ເຮົານັ່ງເທິງອາສນະຕ່ຳ ຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງເທິງອາສນະສູງ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸນັ່ງເທິງອາສນະຕ່ຳ ບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງເທິງອາສນະສູງ

ພິກສຸໃດບໍ່ເອື້ອເຟື້ອ ນັ່ງເທິງອາສນະຕ່ຳ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງເທິງອາສນະສູງ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໙ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໑໐

ສິກຂາບົທທີ ໑໐

ເຣື້ອງພຣະສັພພັຄຄີຍ໌

[໖໔໗] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຢືນສະແດງທັມແກ່ຄົນຜູ້ນັ່ງຢູ່ ຯລຯ

ພຣະບັນຍັດ

໑໐. ເພິງທຳຄວາມສຳນຶກວ່າ ເຮົາຢືນຢູ່ຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງຢູ່

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸຢືນຢູ່ ບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງຢູ່

ພິກສຸໃດບໍ່ເອື້ອເຟື້ອ ຢືນຢູ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ນັ່ງຢູ່ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໐ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໑໑

ສິກຂາບົທທີ ໑໑

ເຣື້ອງພຣະສັພພັຄຄີຍ໌

[໖໔໙] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຍ່າງຢູ່ຂ້າງຫລັງ ສະແດງທັມແກ່ຄົນຜູ້ຍ່າງໄປຂ້າງຫນ້າ ຯລຯ

ພຣະບັນຍັດ

໑໑. ເພິງທຳຄວາມສຳນຶກວ່າ ເຮົາຍ່າງຢູ່ຂ້າງຫລັງ ຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຍ່າງໄປຂ້າງຫນ້າ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸຍ່າງຢູ່ຂ້າງຫລັງ ບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຍ່າງໄປຂ້າງຫນ້າ

ພິກສຸໃດບໍ່ເອື້ອເຟື້ອ ຍ່າງຢູ່ຂ້າງຫລັງ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຍ່າງໄປຂ້າງຫນ້າ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໑໑ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ໗. ປາທຸກາວັຄ ສິກຂາບົທທີ ໑໔

ສິກຂາບົທທີ ໑໔
ເຣື່ອງພຣະສັພພັຄຄີຍ໌

[໖໕໐] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກຂຸສັພພັຄຄີຍ໌ຍ່າງຢູ່ນອກທາງສະແດງທັມແກ່ຄົນຜູ້ຍ່າງໄປໃນທາງ ຯລຯ

ພຣະບັນຍັດ

໑໔. ເພິງທຳຄວາມສຳນຶກວ່າ ເຮົາຍ່າງໄປນອກທາງຈັກບໍ່ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຍ່າງໃນທາງ

ເຣື່ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກຂຸຍ່າງໄປນອກທາງ ບໍ່ເພິງສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຍ່າງໄປໃນທາງ
ພິກຂຸໃດບໍ່ເອື້ອເຟື້ອ ຍ່າງຢູ່ນອກທາງ ສະແດງທັມແກ່ຄົນທີ່ບໍ່ເປັນໄຂ້ຜູ້ຍ່າງໄປໃນທາງ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື
໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຜູ້ມີເຫຕຸຂັດຂ້ອງ ໖. ພິກຂຸວິກົລຈິຕ ໗. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໑໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນ຺ຫ໌] ໗. ປາທຸກາວັຄ ສິກຂາບົທທີ ໑໓

ສິກຂາບົທທີ ໑໓

ເຣື້ອງພຣະສັພພັຄຄີຍ໌

[໖໕໑] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຣາມຂອງອນາຖບິນທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຢືນຖ່າຍອຸຈຈາຣະແດ່ ຖ່າຍປັສສາວະແດ່ ຯລຯ

ພຣະບັນຍັດ

໑໓. ເພິງທຳຄວາມສຳນຶກວ່າ ເຮົາບໍ່ເປັນໄຂ້ ຈັກບໍ່ຢືນຖ່າຍອຸຈຈາຣະຫລືປັສສາວະ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເປັນໄຂ້ ບໍ່ເພິງຢືນຖ່າຍອຸຈຈາຣະຫລືປັສສາວະ

ພິກສຸໃດບໍ່ເອື້ອເຟື້ອ ບໍ່ເປັນໄຂ້ຢືນຖ່າຍອຸຈຈາຣະຫລືປັສສາວະ ຕ້ອງອາບັຕິທຸກກຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈິງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຜູ້ມີເຫຕຸຂັດຂ້ອງ ໖. ພິກສຸວິກົລຈິຕ ໗. ພິກສຸຕົ້ນບັນຍັດ

ສິກຂາບົທທີ ໑໓ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນ຺ຫ໌] ໗. ປາທຸກາວັຄ ສິກຂາບົທທີ ໑໔

ສິກຂາບົທທີ ໑໔

ເຣື້ອງພຣະສັພພັຄຄີຍ໌

[໒໕໔] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ ທິກເສດຖີ ເຂຕກຸງສາວັຕຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຖ່າຍອຸຈຈາຣະແດ່ ປັສສາວະແດ່ ບ້ວນ ນໍ້າລາຍແດ່ ລົງເທິງຂອງຂຽວ ຯລຯ

ພຣະບັນຍັດ

໑໔. ເພິ່ງທຳຄວາມສຳນຶກວ່າ ເຮົາບໍ່ເປັນໄຂ້ຈັກບໍ່ຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນໍ້າລາຍ ລົງ ເທິງຂອງຂຽວ

ເຣື້ອງພຣະສັພພັຄຄີຍ໌ ຈົບ

ສິກຂາບົທວິພັງຄ໌

ພິກສຸບໍ່ເປັນໄຂ້ບໍ່ເພິ່ງຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນໍ້າລາຍລົງເທິງຂອງຂຽວ

ພິກສຸໃດບໍ່ເອື້ອເຟື້ອ ບໍ່ເປັນໄຂ້ ຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນໍ້າລາຍລົງເທິງຂອງຂຽວ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກສຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກສຸບໍ່ຈົງໃຈ ໒. ພິກສຸບໍ່ມີສຕິ ໓. ພິກສຸຜູ້ບໍ່ຮູ້ ໔. ພິກສຸຜູ້ເປັນໄຂ້ ໕. ພິກສຸຖ່າຍລົງໃນທີ່ບໍ່ ມີຂອງຂຽວແຕ່ໄຫລໄປຮົດຂອງຂຽວ ໒. ພິກສຸຜູ້ມີເຫຕຸຂັດຂ້ອງ ໗. ພິກສຸວິກົລຈິຕ ໘. ພິກສຸຕົ້ນ ບັນຍັດ

ສິກຂາບົທທີ ໑໔ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນທ໌] ໗. ປາທຸກາວັຄ ສິກຂາບົທທີ ໑໕

ສິກຂາບົທທີ ໑໕

ເຣື້ອງພຣະສັພພັຄຄີຍ໌

[໒໕໓] ສມັຍນັ້ນ ພຣະຜູ້ມີພຣະພາຄພຸທທເຈົ້າປະທັບຢູ່ ນະ ພຣະເຊຕວັນ ອາຮາມຂອງອນາຖບິນ

ຫຼີກເສດຖີ ເຂດກຸງສາວັດຖີ ຄັ້ງນັ້ນ ພວກພິກສຸສັພພັຄຄີຍ໌ຖ່າຍອຸຈຈາຣະແດ່ ປັສສາວະແດ່ ບ້ວນນ້ຳລາຍແດ່ ລົງໃນນ້ຳ ພວກຊາວບ້ານຈຶ່ງພາກັນຕຳໜິ ປະນາມໂພນທະນາວ່າ “ຈັ່ງໃດພຣະສມນະເຊື້ອສາຍສູາກຍບຸຕຣຈຶ່ງຖ່າຍອຸຈຈາຣະແດ່ ປັສສາວະແດ່ ບ້ວນນ້ຳລາຍແດ່ລົງໃນນ້ຳ ເໝືອນພວກຄຣືຫັສຖ໌ຜູ້ບໍຣິໂພຄກາມລະ” ພວກພິກສຸໄດ້ຍິນຊາວບ້ານຕຳໜິ ປະນາມ ໂພນທະນາ ບັນດາພິກສຸຜູ້ມັກນ້ອຍ ສັນໂດສູ ຈຶ່ງພາກັນຕຳໜິ ປະນາມ ໂພນທະນາວ່າ “ຈັ່ງໃດພວກພິກສຸສັພພັຄຄີຍ໌ຈຶ່ງຖ່າຍອຸຈຈາຣະແດ່ ຖ່າຍປັສສາວະແດ່ ບ້ວນນ້ຳລາຍແດ່ ລົງໃນນ້ຳລະ” ຄັນພິກສຸທັງຫລາຍຕຳໜິ ພວກພິກສຸສັພພັຄຄີຍ໌ໂດຍປະກາຣຕ່າງໆແລ້ວຈຶ່ງນຳເຣື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງ ຊາບ

ຊົງສອບຖາມແລ້ວບັນຍັດສິກຂາບົທ

ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມສົງຄ໌ເພາະເຣື້ອງນີ້ເປັນຕົ້ນເຫຕຸ ຊົງສອບຖາມພວກພິກສຸສັພພັຄຄີຍ໌ວ່າ “ພິກສຸທັງຫລາຍ ຊາບວ່າ ພວກທ່ານຖ່າຍອຸຈຈາຣະແດ່ ປັສສາວະແດ່ ບ້ວນນ້ຳລາຍແດ່ ລົງໃນນ້ຳ ແມ່ນແທ້ບໍ່” ພວກພິກສຸສັພພັຄຄີຍ໌ທູລຮັບວ່າ “ຈິງພຣະພຸທຫູເຈົ້າຂ້າ” ພຣະຜູ້ມີພຣະພາຄພຸທຫູເຈົ້າຊົງຕຳໜິວ່າ “ຯລຯ ໂມຂະບຸຣຸສູທັງຫລາຍ ກາຣກະທຳຢ່າງນີ້ ບໍ່ໄດ້ເຮັດໃຫ້ຄົນທີ່ຍັງບໍ່ເຫລື້ອມໃສໃຫ້ເຫລື້ອມໃສ ຫລືເຮັດໃຫ້ຄົນທີ່ເຫລື້ອມໃສຢູ່ແລ້ວໃຫ້ເຫລື້ອມໃສຍິ່ງຂື້ນໄດ້ເລີຍ ຯລຯ” ແລ້ວຈຶ່ງຮັບສັ່ງໃຫ້ພິກສຸທັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ພຣະບັນຍັດ

໑໕. ເພິງທຳຄວາມສຳນຶກວ່າ ເຮົາຈັກບໍ່ຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນ້ຳລາຍ ລົງໃນນ້ຳ

ສິກຂາບົທນີ້ພຣະຜູ້ມີພຣະພາຄຊົງບັນຍັດໄວ້ແກ່ພິກສຸທັງຫລາຍຢ່າງນີ້

ເຣື້ອງພຣະສັພພັຄຄີຍ໌ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫຼ໌] ບົທສຣຸປ

ເລື້ອງພິກຂຸຜູ້ເປັນໄຂ້

[໖໕໔] ສມັຍນັ້ນ ພວກພິກຂຸຜູ້ເປັນໄຂ້ຢຳເກງຢູ່ທີ່ຈະຖ່າຍອຸຈຈາຣະແດ່ ປັສສາວະແດ່ ບ້ວນນ້ຳລາຍແດ່ ລົງໃນນ້ຳ ຈຶ່ງນຳເລື້ອງນີ້ໄປຂາບທູລພຣະຜູ້ມີພຣະພາຄໃຫ້ຊົງຊາບ

ຊົງອນຸຍາຕພິກຂຸຜູ້ເປັນໄຂ້

ລຳດັບນັ້ນ ພຣະຜູ້ມີພຣະພາຄຊົງສະແດງທັມມີກຖາເພາະເລື້ອງນີ້ເປັນຕົ້ນເຫຕຸ ແລ້ວຮັບສັ່ງກັບພິກຂຸທັງຫລາຍວ່າ "ພິກຂຸທັງຫລາຍ ເຮົາອນຸຍາຕໃຫ້ພິກຂຸຜູ້ເປັນໄຂ້ຖ່າຍອຸຈຈາຣະແດ່ ປັສສາວະແດ່ ບ້ວນນ້ຳລາຍແດ່ ລົງໃນນ້ຳໄດ້" ແລ້ວຈຶ່ງຮັບສັ່ງໃຫ້ພິກຂຸທັງຫລາຍຍົກສິກຂາບົທນີ້ຂື້ນສະແດງດັ່ງນີ້

ພຣະອນຸບັນຍັດ

ເພິງທຳຄວາມສຳນຶກວ່າ ເຮົາບໍ່ເປັນໄຂ້ ຈັກບໍ່ຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນ້ຳລາຍລົງໃນນ້ຳ

ເລື້ອງພິກຂຸຜູ້ເປັນໄຂ້ ຈົບ

ສິກຂາບົທວິພັງຄ໌

ພິກຂຸບໍ່ເປັນໄຂ້ ບໍ່ເພິງຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນ້ຳລາຍລົງໃນນ້ຳ

ພິກຂຸໃດບໍ່ເອື້ອເຟື້ອ ບໍ່ເປັນໄຂ້ ຖ່າຍອຸຈຈາຣະ ປັສສາວະ ຫລືບ້ວນນ້ຳລາຍລົງໃນນ້ຳ ຕ້ອງອາບັຕິທຸກກົຕ

ອນາປັຕຕິວາຣ

ພິກຂຸຕໍ່ໄປນີ້ບໍ່ຕ້ອງອາບັຕິ ຄື

໑. ພິກຂຸບໍ່ຈົງໃຈ ໒. ພິກຂຸບໍ່ມີສຕິ ໓. ພິກຂຸຜູ້ບໍ່ຮູ້ ໔. ພິກຂຸຜູ້ເປັນໄຂ້ ໕. ພິກຂຸຖ່າຍເທິງບົກແຕ່ໄຫລລົງນ້ຳ ໖. ພິກຂຸຜູ້ມີເຫຕຸຂັດຂ້ອງ ໗. ພິກຂຸວິກົລຈິຕ ໘. ພິກຂຸຈິຕປັ່ນປ່ວງ ໙. ພິກຂຸຖືກເວທນາບີບຄັ້ນ ໑໐. ພິກຂຸຕົ້ນບັນຍັດ

ສິກຂາບົທທີ ໑໕ ຈົບ

ປາທຸກາວັຄທີ ໗ ຈົບ

ພຣະວິນັຍປິດົກ ມຫາວິພັງຄ໌ [໗. ເສຂິຍກັນຫ໌] ບົທສຣຸປ

ບົທສຣຸບ

ທ່ານທັງຫລາຍ ທັມຄືເສຂິຍະທັງຫລາຍ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຂ້າພະເຈົ້າຂໍຖາມທ່ານທັງຫລາຍ ໃນທັມຄືເສຂິຍະເຫລົ່ານັ້ນວ່າ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ທ່ານທັງຫລາຍບໍຣິສຸດຫ໌ແລ້ວໃນທັມຄືເສຂິຍະເຫລົ່ານີ້ ເພາະສະນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ເສຂິຍະ ຈົບ

ເສຂິຍກັນຫ໌ ຈົບ

໗. ອທິກຣນສມຖະ

ທ່ານທັງຫລາຍ ທັມຄືອທິກຣນສມຖະ ໗ ເຫລົ່ານີ້ມາເຖິງວາຣະທີ່ຈະຍົກຂຶ້ນສະແດງເປັນຂໍ້ໆ ຕາມລຳດັບ (ທັມເປັນເຄື່ອງຣະງັບອທິກຣນ໌(ບັນຫາຂອງສົງຂ໌) ໗ ຢ່າງ ຄື)

[໖໕໕] ເພື່ອຣະງັບອທິກຣນ໌(ບັນຫາຂອງສົງຂ໌)ທີ່ເກີດຂຶ້ນແລ້ວໆ(໑) ເພິງໃຫ້ສັມມຸຂາວິນັຍ໑ (໒) ເພິງໃຫ້ສຕິວິນັຍ໒ (໓) ເພິງໃຫ້ອມູຬຫວິນັຍ໓ (໔) ເພິງໃຫ້ປະຕິຍານຕກຣນະ໔ (໕) ເພິງໃຫ້ເຍພຸຍຍສິກາ໕ (໖) ເພິງໃຫ້ຕັສສປາປິຍສິກາ໖ (໗) ເພິງໃຫ້ຕິນວັຕຖາຣກະ໗

ບົທສຣຸບ

ທ່ານທັງຫລາຍ ທັມຄືອທິກຣນສມຖະ ໗ ຢ່າງ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ ຂ້າພະເຈົ້າຂໍຖາມທ່ານທັງຫລາຍ ໃນທັມຄືທິກຣນສມຖະເຫລົ່ານັ້ນວ່າ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໒ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"
ຂ້າພະເຈົ້າຂໍຖາມເປັນຄັ້ງທີ ໓ "ທ່ານທັງຫລາຍບໍຣິສຸດຫ໌ແລ້ວຫລື"

ທ່ານທັງຫລາຍບໍຣິສຸດທ໌ແລ້ວໃນທັມຄືອທິກຣນສມຖະ ໗ ເຫລົ່ານີ້ ເພາະເຫຕຸນັ້ນຈຶ່ງນິ່ງ ຂ້າພະເຈົ້າຂໍຖືຄວາມນິ່ງນັ້ນເປັນມຕິຢ່າງນີ້

ອທິກຣນສມຖະ ຈົບ

ເຊີງອັນຖະ :

໑ ສັມມຸຂາວິນັຍ ຄືວິທີຕັດສິນທີ່ເພິງທຳໃນທີ່ພ້ອມຫນ້າສົງຊ໌ ທັມ ແລະວັຕຖຸ

໒ ສຕິວິນັຍ ຄືວິທີຕັດສິນທີ່ຍົກສຕິຂຶ້ນເປັນຫລັກ

໓ ອມູຣຫວິນັຍ ຄືວິທີຕັດສິນທີ່ໃຫ້ແກ່ພິກສຸຜູ້ຫາຍເຊົາຈາກການເປັນບ້າແລ້ວ

໔ ປະຕິຍານຕກຣນະ ຄືວິທີຕັດສິນໂດຍປັບໂທສຕາມຄຳສາຣພາບ

໕ ເຍພຸຍຍສິກາ ຄືວິທີຕັດສິນໂດຍອາສັຍສຽງສ່ວຍຫລາຍ

໖ ຕັສສປາປິຍສິກາ ຄືວິທີຕັດສິນໂດຍປັບໂທສແກ່ຜູ້ທຳຄວາມຜິດ

໗ ຕິນວັຕຖາຣກະ ຄືວິທີຕັດສິນໂດຍວິທີຍອມຄວາມ ຕາມສັພທ໌ແປວ່າ ຣະບຽບດັ່ງປິດບັງໄວ້ດ້ວຍຫຍ້າ (ນັຍ ວິ. ຈູ. ໖/໑໗໕-໒໑໓/໒໑໗-໒໔໑)

ຄຳນິຄົມ

ທ່ານທັງຫລາຍ ນິທານ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ປາຣາຊິກ ໔ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ສັງຂາທິເສສ ໑໓ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ອນິຍຕ ໒ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ນິສສັຄຄິຍປາຈິຕຕີຍ໌ ໓໐ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ປາຈິຕຕີຍ໌ ໙໒ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ປາຕິເທສນີຍະ ໔ ສິກຂາບົທ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ເສຂິຍະທັງຫລາຍ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ທັມ ຄື ອທິກຣນສມຖະ ໗ ຂ້າພະເຈົ້າຍົກຂຶ້ນສະແດງແລ້ວ

ສິກຂາບົທຂອງພຣະຜູ້ມີພຣະພາຄນັ້ນມີເທົ່ານີ້ ມາໃນສູຕຣ໑ ນັບເນື່ອງໃນສູຕຣ ມາສູ່ວາຣະທີ່ຈະ

ເພີງຍົກຂື້ນສະແດງເປັນຂໍ້ໆຕາມລໍາດັບທຸກເຄິ່ງເດືອນ ພວກເຮົາທັງຫມົດເພີງພ້ອມພຽງກັນ ຮ່ວມໃຈກັນ ບໍ່ວິວາທກັນ ສຶກສາໃນພຣະສູຕຣ ນັ້ນເທອຍ

ມຫາວິພັງຄ໌ ຈົບ

ເຊີງອັນຖະ :

໑ ຄໍາວ່າ "ພຣະສູຕຣ" ຫມາຍເຖິງພຣະປາຕິໂມກຂ໌ນັ້ນເອງ

ພຣະໄຕຣປິດົກເຫລັ້ມທີ ໐໔ ວິນັຍປິດົກທີ ໐໔ ມຫາວິພັງຄ໌ ພາຄ ໔ ຈົບ